# ປື້ມຄູ່ມື ການດຳເນີນຄະດີອາຍາ ຢູ່ ສປປ ລາວ

ໂດຍ ຄະນະຄົ້ນຄວ້າກົດໝາຍວ່າດ້ວຍການດຳເນີນຄະດີອາຍາ
ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ,
ກະຊວງຍຸຕິທຳ, ຄະນະນິຕິສາດ ແລະລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ກັບອົງການໄຈກາ (JICA) ປະເທດຍີ່ປຸ່ນ

ປີ 2015

# ປື້ມຄູ່ມື
# ການດຳເນີນຄະດີອາຍາ
# ຢູ່ ສປປ ລາວ



**ໂດຍ ຄະນະຄົ້ນຄວ້າກົດໝາຍວ່າດ້ວຍການດຳເນີນຄະດີອາຍາ**

**ໂຄງການພັດທະນາຊັບພະຍາກອນມະນຸດ ໃນຂົງເຂດຍຸຕິທຳ ແຫ່ງ ສປປ ລາວ**

JICA Project for Human Resource Development in the Legal Sector

ໂດຍການຮ່ວມມືລະຫວ່າງ ອົງການໄອຍະການປະຊາຊົນ, ສານປະຊາຊົນ,
ກະຊວງຍຸຕິທຳ, ຄະນະນິຕິສາດ ແລະລັດຖະສາດ ມະຫາວິທະຍາໄລແຫ່ງຊາດ
ກັບອົງການໄຈກາ (JICA) ປະເທດຍີ່ປຸ່ນ

ປີ 2015

## ຄົ້ນຄວ້າໂດຍ
## ກຸ່ມຂຽນປຶ້ມຄູ່ມືການດຳເນີນຄະດີອາຍາ

| | | |
|---|---|---|
| 1. | ທ່ານ ສຸພາສິດ ລໍວັນໄຊ | ອົງການໄອຍະການປະຊາຊົນ |
| 2. | ທ່ານ ຈັນທະບູນ ເພັງຄຳໃສ | ອົງການໄອຍະການປະຊາຊົນ |
| 3. | ທ່ານ ບຸນມາ ດວງມາລາສິນ | ອົງການໄອຍະການປະຊາຊົນ |
| 4. | ທ່ານ ສຸພາພອນ ອິນທະວົງ | ອົງການໄອຍະການປະຊາຊົນ |
| 5. | ທ່ານ ສົມໝາຍ ບຸດຕະວົງ | ສານປະຊາຊົນພາກກາງ |
| 6. | ທ່ານ ສີວັນ ບຸນທະລາ | ສານປະຊາຊົນພາກກາງ |
| 7. | ທ່ານ ສຸລິເດດ ສໍອິນໄຊ | ສານປະຊາຊົນສູງສຸດ |
| 8. | ທ່ານ ຣສ. ວຽງວິໄລ ທ່ຽງຈັນໄຊ | ມະຫາວິທະຍາໄລແຫ່ງຊາດ<br>ຄະນະນິຕິສາດ ແລະ ລັດຖະສາດ |
| 9. | ທ່ານ ແສງທະວີ ອິນທະວົງ | ມະຫາວິທະຍາໄລແຫ່ງຊາດ<br>ຄະນະນິຕິສາດ ແລະ ລັດຖະສາດ |
| 10. | ທ່ານ ນາງ ວິໄລ ລັງກາວົງ | ມະຫາວິທະຍາໄລແຫ່ງຊາດ<br>ຄະນະນິຕິສາດ ແລະ ລັດຖະສາດ |
| 11. | ທ່ານ ບຸນຄົງ ພັນວົງສາ | ກະຊວງຍຸຕິທຳ |
| 12. | ທ່ານ ນາງ ສີສຸດາ ໂສພາວັນດີ | ກະຊວງຍຸຕິທຳ |
| 13. | ທ່ານ ມິດລະຄອນ ສິງຄຳຈັນ | ກະຊວງຍຸຕິທຳ |
| 14. | ທ່ານ ນາງ ຫຼ້າຊ້ອຍ ແສງວົງເດືອນ | ກະຊວງຍຸຕິທຳ |
| 15. | ທ່ານ ອຸໄພວັນ ໄຊຍະວົງ | ກະຊວງຍຸຕິທຳ, ວິທະຍາໄລກົດໝາຍ |
| 16. | ທ່ານ ເພັດປະເສີດ ວັນນະພາ | ກະຊວງຍຸຕິທຳ, ວິທະຍາໄລກົດໝາຍ |

ອັກສອນຫຍໍ້:

- ລນ: ລັດຖະທຳມະນູນ
- ກດຍ: ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ
- ກປຊ: ກົດໝາຍວ່າດ້ວຍສານປະຊາຊົນ
- ກຍກ: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ
- ກທຄ: ກົດໝາຍວ່າດ້ວຍທະນາຍຄວາມ
- ກປດ: ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ
- ກອຍ: ກົດໝາຍອາຍາ
- ກປສ: ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ
- ກດພ: ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ
- ກພຍ: ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ
- ສ⁴: ສືບສວນ-ສອບສວນ

# ຄໍານໍາ

ປຶ້ມຄູ່ມື "ການດໍາເນີນຄະດີອາຍາ" ແມ່ນໝາກຜົນທາງດ້ານສະຕິປັນຍາແຫ່ງການປະກອບສ່ວນຢ່າງຕັ້ງໜ້າ ຂອງບັນດານັກວິຊາການລະດັບສູງຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທໍາ ແລະ ຄະນະນິຕິສາດ ແລະ ລັດຖະສາດມະຫາວິທະຍາໄລແຫ່ງຊາດລາວ ທີ່ໄດ້ເຄື່ອນໄຫວຄົ້ນຄວ້າທິດສະດີ ແລກປ່ຽນປະສົບການ, ຖອດຖອນບົດຮຽນກັບຫຼາຍພາກສ່ວນທັງສູນກາງ ແລະ ທ້ອງຖິ່ນລວມທັງການໄປທັດສະນະສຶກສາ ແລະ ຝຶກອົບຮົມຢູ່ຕ່າງປະເທດ.

ຄະນະຮັບຜິດຊອບຂຽນປຶ້ມເຫຼັ້ມນີ້ໄດ້ໃຊ້ເວລາເກືອບສີ່ປີຄືນັບແຕ່ ເດືອນກໍລະກົດ 2010 ເປັນຕົ້ນມາ, ເຂົ້າໃນການເຄື່ອນໄຫວຢ່າງຕໍ່ເນື່ອງ ແລະ ເປັນລະບົບໂດຍມີການມອບໝາຍໃຫ້ແຕ່ລະທ່ານຮັບຜິດ ຊອບເປັນແຕ່ລະບົດ ຈາກນັ້ນກໍນໍາມາແລກປ່ຽນປະກອບຄໍາຄິດຄໍາເຫັນນໍາກັນ, ແລກປ່ຽນກັບຜູ້ຊ່ຽວຊານຕ່າງປະເທດ, ທັດສະນະສຶກສາ, ຝຶກອົບຮົມວິທີການດ້ານຕ່າງໆເພື່ອເຮັດໃຫ້ປຶ້ມດໍາເນີນຄະດີອາຍາເຫຼັ້ມນີ້ ມີເນື້ອໃນທີ່ອຸດົມສົມບູນ, ເຂົ້າໃຈງ່າຍ, ມີຄວາມຊັດເຈນທາງກົດໝາຍ ແລະ ສາມາດນໍາໃຊ້ໄດ້ໃນພາກປະຕິບັດຕົວຈິງ.

ປຶ້ມເຫຼັ້ມນີ້ ປະກອບດ້ວຍເນື້ອໃນທາງດ້ານທິດສະດີທີ່ມີລັກສະນະວິທະຍາສາດກົດໝາຍ, ບົດຮຽນໃນພາກປະຕິບັດຕົວຈິງ, ບາງບົດຮຽນຂອງຕ່າງປະເທດ, ການຕີຄວາມທາງກົດໝາຍໃນການນໍາໃຊ້ກົດໝາຍຂອງການດໍາເນີນຄະດີອາຍາທັງນີ້ ກໍເພື່ອໃຫ້ພະນັກງານໃນຂົງເຂດທີ່ກ່ຽວຂ້ອງກັບວຽກງານຍຸຕິທໍາ ແລະ ການປະຕິບັດກົດໝາຍມີຄວາມສາມາດນໍາໃຊ້ ເປັນຄູ່ມືໃນການປະຕິບັດວຽກງານຕົວຈິງທີ່ຕົນເອງຮັບຜິດຊອບ. ປຶ້ມຄູ່ມືການດໍາເນີນຄະດີອາຍາຍັງປະກອບດ້ວຍຂໍ້ມູນທາງດ້ານທິດສະດີ ແລະ ພຶດຕິກໍາທີ່ເໝາະແກ່ການສຶກສາຄົ້ນຄວ້າຂອງຄູອາຈານ ແລະ ນັກສຶກສາຂອງສະຖາບັນການສຶກສາກົດໝາຍ. ນອກນີ້ ກໍຍັງຈະເປັນປະໂຫຍດສໍາລັບປະຊາຊົນທົ່ວໄປໃນການຊອກຮູ້ຮໍ່າຮຽນເພື່ອຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍໃນທົ່ວສັງຄົມນໍາອີກດ້ວຍ.

ເຖິງຢ່າງໃດກໍຕາມ, ຜົນງານອັນຊົງຄຸນຄ່າຂອງບັນດານັກວິຊາການເຫຼົ່ານີ້ ກໍບໍ່ອາດປາສະຈາກໄດ້ຂໍ້ຂາດຕົກບົກພ່ອງ ບໍ່ວ່າທາງດ້ານເນື້ອໃນ ຫຼື ຮູບແບບໃນການຂີດຂຽນກໍດີ, ຄະນະຮັບຜິດຊອບໂຄງການພ້ອມແລ້ວທີ່ຈະຮັບເອົາຄໍາຕໍາໜິຕິຊົມຈາກບັນດາທ່ານ ເພື່ອນໍາໄປປັບປຸງແກ້ໄຂໃນຕໍ່ໜ້າ. ພ້ອມນີ້, ພວກຂ້າພະເຈົ້າ ກໍຕ້ອງຂໍສະແດງຄວາມຂອບໃຈເປັນຢ່າງສູງ ມາຍັງລັດຖະບານ ແລະ ປະຊາຊົນຍີ່ປຸ່ນ, ອົງການໄຈກາ (JICA) ທີ່ໄດ້ໃຫ້ການສະໜັບສະໜູນໃນການປະຕິບັດໂຄງການຈົນປະສົບຜົນສໍາເລັດ, ຂໍຂອບໃຈໃນການເອົາໃຈໃສ່ຂອງບັນດາອາຈານ, ຜູ້ຊ່ຽວຊານຍີ່ປຸ່ນທີ່ໄດ້ໃຫ້ການແນະນໍາ ທີ່ເປັນປະໂຫຍດພ້ອມທັງເປັນກໍາລັງແຮງຊຸກຍູ້ຂະບວນການເຄື່ອນໄຫວດ້ານຕ່າງໆຂອງໂຄງການຢ່າງມີປະສິດທິຜົນ. ຂໍຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງຕໍ່ການນໍາຂອງອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທໍາ, ມະຫາວິທະຍາໄລແຫ່ງຊາດ ພ້ອມດ້ວຍພະນັກງານທຸກຄົນທີ່ເປັນກໍາລັງໃຈ ແລະ ອໍານວຍຄວາມສະດວກໃນການເຄື່ອນໄຫວວຽກງານຂອງສະມາຊິກຂຽນປຶ້ມ ຈົນເປັນຜົນສໍາເລັດຢ່າງຈົບງາມມານະທີ່ນີ້ດ້ວຍ.

ຄະນະຊີ້ນໍາໂຄງການ

ຮສ. ດຣ. ສາຍຂອງ ສາຍນາສິນ

# ຄຳອວຍພອນເນື່ອງໃນ ວາລະ-ໂອກາດ ການຈັດພິມ ປຶ້ມຄູ່ມືການດຳເນີນຄະດີອາຍາ

ຄະນະ ນິຕິສາດ-ນິຕິສາດປະລິນຍາໂທ ມະຫາວິທະຍາໄລ ເມໂຈ

ທ່ານ ສາດສະດາຈານ ຄາໂຕ້ ຄັດສືໂຍຊິ

ເນື່ອງໃນໂອກາດ ທີ່ປຶ້ມຄູ່ມືການດຳເນີນຄະດີອາຍາ ຊຶ່ງກໍແມ່ນໝາກຜົນໜຶ່ງແຫ່ງຄວາມພາກພຽນ ພະຍາຍາມຫຼາຍປີທີ່ຄະນະຜູ້ຂຽນປຶ້ມໄດ້ສຸມໃສ່ ໄດ້ຮັບການຈັດພິມຢ່າງເປັນທາງການ.ຂ້າພະເຈົ້າ ຈຶ່ງຂໍຖື ໂອກາດນີ້ ສະແດງຄວາມນັບຖືພ້ອມທັງຂໍສະແດງຄວາມຍິນດີຕໍ່ຄະນະຜູ້ຂຽນປຶ້ມມານະທີ່ນີ້ດ້ວຍ, ສຳລັບ ຂ້າພະເຈົ້າເອງ ກໍໄດ້ມີໂອກາດເຂົ້າຮ່ວມໃນໂຄງການນີ້ໂດຍຜ່ານອົງການຮ່ວມມືສາກົນຍີ່ປຸ່ນ (JICA)ໃນ ຖານະເປັນຄະນະແນະນຳຂຽນປຶ້ມ ຕັ້ງແຕ່ ປີ 2010 ເປັນຕົ້ນມາ. ສຳລັບວິທີການດຳເນີນວຽກງານທີ່ມີ ການ ແກ້ໄຂ ແລະປັບປຸງ ຮ່າງປຶ້ມຄູ່ມື ທີ່ຄະນະຜູ້ຂຽນປຶ້ມ ຂຽນຂຶ້ນ ໂດຍມີການຈັດປະຊຸມເປັນປະຈຳ ແລະ ມີການຈັດຕັ້ງການຄົ້ນຄວ້າເປັນໝູ່ຄະນະນັ້ນ ອາດຈະເປັນສິ່ງໃໝ່ສຳລັບສະມາຊິກຝ່າຍລາວ, ແຕ່ ວ່າການປະກອບຄຳຄິດ-ຄຳເຫັນໃນທີ່ປະຊຸມຄົ້ນຄວ້າຂອງບັນດາທ່ານນັ້ນມັນບໍ່ພຽງແຕ່ເປັນຜົນດີໃຫ້ແກ່ ການປັບປຸງເນື້ອໃນຂອງປຶ້ມໃຫ້ດີຂຶ້ນເທົ່ານັ້ນ, ແຕ່ມັນຍັງເປັນຜົນດີໃຫ້ແກ່ການເສີມສ້າງຄວາມອາດສາມາດ ຂອງບຸກຄະລາກອນຜູ້ໜຸ່ມນ້ອຍທີ່ເຮັດວຽກຢູ່ໃນຂົງເຂດຍຸຕິທຳອີກດ້ວຍ.

ໃນໄລຍະທ້າຍຂອງຊຸມປີ 1990, ປະເທດລາວໄດ້ມີການປັບປຸງບັນດາກົດໝາຍຕ່າງໆ ເພື່ອໃຫ້ ແທດເໝາະກັບກົນໄກເສດຖະກິດຕະຫຼາດ, ແຕ່ວ່າ ກົດໝາຍພື້ນຖານກໍຍັງບໍ່ທັນໄດ້ຮັບການປັບປຸງຢ່າງ ເຕັມເມັດເຕັມໜ່ວຍ ແລະ ກົດໝາຍທີ່ມີຢູ່ໃນຂະນະນັ້ນ ກໍຍັງບໍ່ທັນໄດ້ເປັນຮູບຮ່າງຢ່າງສົມບູນເທື່ອ, ອີກ ອັນໜຶ່ງ ຂັ້ນຕອນໃນການສ້າງນິຕິກຳກໍຍັງບໍ່ທັນມີປະສິດທິພາບ, ການຕີຄວາມໝາຍຂອງກົດໝາຍ-ການນຳ ໃຊ້ກົດໝາຍກໍເຊັ່ນກັນ ແມ່ນຍັງຢູ່ໃນສະພາບທີ່ຍັງຂາດຄວາມວ່ອງໄວ ແລະ ຄວາມເປັນເອກະພາບ. ນັ້ນກໍ ຍ້ອນວ່າ, ປະເທດລາວຍັງຂາດແຄນບຸກຄະລາກອນທາງດ້ານກົດໝາຍ ແລະ ບັນຫາໃຫຍ່ອີກອັນໜຶ່ງ ກໍຄື ການຂາດແຄນສະຖາບັນຄົ້ນຄ້ວາ-ສະຖາບັນສຶກສາດ້ານກົດໝາຍ, ລັດຖະບານຍີ່ປຸ່ນ. ເພື່ອຊ່ວຍເຫຼືອວຽກ ງານໃນຂົງເຂດດັ່ງກ່າວ ກໍໄດ້ສົ່ງຜູ້ຊ່ຽວຊານຍີ່ປຸ່ນໃນຂົງເຂດຂອງການປັບປຸງວຽກງານດ້ານກົດໝາຍມາປະ ຈຳຢູ່ລາວ ແລະ ກໍເລີ່ມໃຫ້ຄວາມຮ່ວມມືໃນການຮັບເອົາຜູ້ຝຶກອົບຮົມຕັ້ງແຕ່ປີ 1999 ເປັນຕົ້ນມາ ແລະ ໃນປີ 2003 ກໍໄດ້ມີການຈັດຕັ້ງ ໂຄງການຊ່ວຍເຫຼືອການປັບປຸງກົດໝາຍເຊິ່ງກໍປະກອບມີ ກະຊວງຍຸຕິທຳ, ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດເຂົ້າຮ່ວມ ພາຍຫຼັງທີ່ໄດ້ສຳເລັດການສຳ ຫຼວດ-ເກັບກຳຂໍ້ມູນໃນປີ 2009 ແລ້ວນັ້ນ, ໂຄງການພັດທະນາຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳກໍ ໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນ 7 ປີ 2010.

ໃນໄລຍະນັ້ນ, ກຸ່ມຄົ້ນຄ້ວາກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ວິເຄາະ-ຄົ້ນຄ້ວາ ແລະ ສ້າງ ເອກະສານກ່ຽວກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ) ໄດ້ຕັ້ງເປົ້າໝາຍໃນການສ້າງ ແລະ ຈັດພິມ ແຜນວາດຂັ້ນຕອນໃນການດຳເນີນຄະດີອາຍາ ເປັນເປົ້າໝາຍທຳອິດ ແລະກໍໄດ້ເລີ່ມຕົ້ນການເຄື່ອນໄຫວ, ໃນເດືອນ 3 ປີ 2012 ກໍສາມາດບັນລຸຕາມເປົ້າໝາຍທີ່ວາງໄວ້. ຫຼັງຈາກນັ້ນ ເມື່ອກົດໝາຍວ່າດ້ວຍການ ດຳເນີນຄະດີອາຍາ ດັ່ງກ່າວໄດ້ຮັບການປັບປຸງ ໃນເດືອນ 7 ປີດຽວກັນນັ້ນ (ສະພາຮັບຮອງ, ປະກາດໃຊ້ ໃນເດືອນ 8 ປີດຽວກັນ) ກຸ່ມຄົ້ນຄ້ວາກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ກໍໄດ້ສືບຕໍ່ຄົ້ນຄວ້າ ແລະ ປັບປຸງແຜນວາດດັ່ງກ່າວໃຫ້ສອດຄ່ອງກັບກົດໝາຍ ສະບັບປັບປຸງ ແລະ ກໍສາມາດສຳເລັດການສ້າງແຜນ

ວາດສະບັບປັບປຸງ ໃນເດືອນ 9 ປີ 2013. ຄຽງຄູ່ກັນນັ້ນ ກຸ່ມຄົ້ນຄ້ວາກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ກໍໄດ້ເຄື່ອນໄຫວຂຽນປຶ້ມຄູ່ມືອີກນຳ ໂດຍອີງໃສ່ເນື້ອໃນຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ ຊຶ່ງກາຍເປັນເນື້ອໃນຂອງປຶ້ມຄູ່ມືຫົວນີ້.

ໃນໄລຍະນີ້ ກໍສັງເກດເຫັນໄດ້ວ່າການປະກອບຄຳຄິດຄຳເຫັນບໍ່ວ່າຈະຢູ່ໃນກອງປະຊຸມຄົ້ນຄ້ວາ ຫຼືກອງປະຊຸມຝຶກອົບຮົມນັ້ນ ແມ່ນມີການພັດທະນາຂຶ້ນ ແລະ ຢູ່ໃນລະດັບສູງເມື່ອສົມທຽບກັບໄລຍະເລີ່ມຕົ້ນ. ສະມາຊິກກຸ່ມທຸກທ່ານກໍມີຄວາມເປັນເຈົ້າການສູງຂຶ້ນ. ເໜືອໄປກ່ວານັ້ນ, ກໍມີຄວາມເຂົ້າໃຈຕໍ່ກັບບັນຫາຕົ້ນຕໍໃນຂົງເຂດກົດໝາຍວ່າດ້ວຍການດຳເນີນຄະດີອາຍາຢ່າງເລິກເຊິ່ງຂຶ້ນກ່ວາເກົ່າ, ພ້ອມດຽວກັນນັ້ນຄວາມເປັນອັນໜຶ່ງອັນດຽວກັນ ແລະ ຄວາມໄວ້ເນື້ອເຊື່ອໃຈເຊິ່ງກັນ ແລະ ກັນຂອງສະມາຊິກກຸ່ມກໍ່ເພີ່ມທະວີຂຶ້ນກ່ວາເກົ່າ ແລະ ອັນທີ່ສຳຄັນກ່ວາໝູ່ໝົດ ແມ່ນເຮົາສາມາດເວົ້າໄດ້ວ່າຄວາມອາດສາມາດ, ສັກກາຍະພາບຂອງສະມາຊິກແຕ່ລະທ່ານນັ້ນ ໄດ້ເພີ່ມສູງຂຶ້ນທີ່ສາມາດເຫັນໄດ້ຢ່າງຈະແຈ້ງ. ເວົ້າສະເພາະກໍແມ່ນ ການຈັດວາງໂຄງຮ່າງສາລະບານ, ການຂຽນປະໂຫຍກທີ່ກະທັດຮັດແຕ່ສາມາດເຮັດໃຫ້ເຂົ້າໃຈງ່າຍ, ການນຳໃຊ້ແຜນວາດ, ຕາຕະລາງລະອຽດ, ຕາຕະລາງງ່າຍດາຍ ແລະ ແບບຟອມຕ່າງໆປະກອບເຂົ້າໃນບົດ, ມີຄວາມເປັນເອກະພາບກັນໃນດ້ານວິທີການ ການນຳໃຊ້ເອກະສານອ້າງອີງຕ່າງໆມີທັງການນຳໃຊ້ວິທີການຂຽນປຶ້ມແບບຍີ່ປຸ່ນ ແລະ ກໍມີທັງການນຳໃຊ້ວິທີການດັດປັບເນື້ອໃນໃຫ້ແທດເໝາະກັບກົດໝາຍ ແລະ ລະ ດັບຂອງຊັບພະຍາກອນມະນຸດຂອງລາວໄປພ້ອມດຽວກັນ. ສິ່ງທີ່ພົ້ນເດັ່ນອີກອັນໜຶ່ງກໍຄື ແຕ່ກ່ອນພວກເຮົາຈະເບິ່ງບັນຫາແຕ່ມຸມມອງທາງດ້ານກົດໝາຍໃດໜຶ່ງພຽງດ້ານດຽວ ແຕ່ປະຈຸບັນແມ່ນພວກເຮົາມີການສົມທຽບຈຸດແຕກຕ່າງ ກໍຄືຈຸດທີ່ຂັດກັນຂອງບາງມາດຕາກົດໝາຍ, ມີການເບິ່ງວ່າເປັນຫຍັງມາດຕາແຕ່ລະມາດຕາຈິ່ງ ມີຄວາມຈຳເປັນຊຶ່ງກໍຄືການເບິ່ງເລິກລົງໄປໃຫ້ເຖິງຈຸດປະສົງເປົ້າໝາຍຫຼັກຂອງການສ້າງກົດໝາຍ ແຕ່ລະມາດຕານັ້ນ (ບໍ່ສະເພາະແຕ່ຮູບການ) ຊຶ່ງມັນໄດ້ສະທ້ອນໃຫ້ເຫັນວ່າຄະນະຂຽນປຶ້ມໄດ້ພັດທະນາເຕັກນິກການເບິ່ງລວມທັງການຄົ້ນຄ້ວາບັນຫາໂດຍລົງເລິກເຖິງເນື້ອແທ້ ແລະ ກໍໄດ້ສະແດງອອກຢ່າງຈະ ແຈ້ງຢູ່ໃນເນື້ອໃນຂອງປຶ້ມຫົວນີ້.

ປຶ້ມຄູ່ມືນີ້ໃນຕໍ່ໜ້າ ແມ່ນຈະຖືກນຳໃຊ້ຢ່າງກ້ວາງຂວາງຢູ່ໃນລາວ ບໍ່ວ່າຈະເປັນໃນຂົງເຂດການສຶກສາ, ການຝຶກອົບຮົມ ຫຼື ການປະຕິບັດວຽກງານຕົວຈິງຢູ່ໃນຂົງເຂດວຽກງານຄະດີອາຍາ. ເມື່ອຄິດຄືນເຖິງຄວາມພຽນພະຍາຍາມເປັນເວລາຫຼາຍປີຂອງຄະນະຜູ້ຂຽນປຶ້ມ (ທັງຝ່າຍລາວ ແລະ ຝ່າຍຍີ່ປຸ່ນ) ແລ້ວການທີ່ພວກເຮົາສາມາດສຳເລັດເສັດສິ້ນພາລະກິດໃນການຂຽນປຶ້ມຫົວນີ້ຖືວ່າເປັນສິ່ງທີ່ມີຄວາມໝາຍເລິກເຊິ່ງທີ່ສຸດ. ແຕ່ເຖິງຢ່າງໃດກໍຕາມ, ປຶ້ມຫົວນີ້ ໃນເວລານີ້ກໍຍັງບໍ່ທັນຖືວ່າເປັນສະບັບທີ່ສົມບູນເທື່ອ, ຍັງຈຳເປັນຈະຕ້ອງໄດ້ມີການປັບປຸງໄປອີກເທື່ອລະກ້າວ. ຢູ່ໃນນັ້ນເວົ້າສະເພາະກໍແມ່ນ ຈະຕ້ອງໄດ້ມີການປັບປຸງເນື້ອໃນໃຫ້ສອດຄ່ອງຕາມມາດຕາກົດໝາຍ ເມື່ອເນື້ອໃນກົດໝາຍຫາກມີການປ່ຽນແປງໃນຕໍ່ໜ້າ, ຜ່ານປະສົບການ ການນຳໃຊ້ຕົວຈິງ ແລະ ຜ່ານການຄົ້ນຄ້ວາເພີ່ມຕື່ມເມື່ອເຫັນວ່າມີຄວາມຈຳເປັນກໍອາດມີການປັບປຸງອີກເຊັ່ນກັນ. ເພື່ອເຮັດໄດ້ແນວນັ້ນ ມັນຮຽກຮ້ອງໃຫ້ພວກເຮົາຕ້ອງມີການພັດທະນາຊັບພະຍາກອນມະນຸດຢ່າງຕໍ່ເນື່ອງ.ຍ້ອນຄວາມໝາຍແນວນັ້ນ,ປຶ້ມຄູ່ມືຫົວນີ້, ຈຶ່ງຖືວ່າເປັນບາດກ້າວທຳອິດທີ່ສຳຄັນອີກບາດກ້າວໜຶ່ງ ຊຶ່ງໃນຕໍ່ໜ້າ ຜູ້ອ່ານຈະນຳໃຊ້ປຶ້ມຄູ່ມືຫົວນີ້ໃນການຮຽນ ການຄົ້ນຄ້ວາກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ປະກອບສ່ວນເຂົ້າໃນການສ້າງຄວາມເຂັ້ມແຂງໃນວຽກງານໃນຂົງເຂດຄະດີອາຍາຂອງລາວ ແລະ ຂ້າພະເຈົ້າກໍຫວັງເປັນຢ່າງຍິ່ງວ່າ ປຶ້ມຫົວນີ້ຈະໄດ້ຮັບການພັດທະນາ ໃຫ້ແທດເໝາະກັບຍຸກສະໄໝ ແລະ ຄວາມຮຽກຮ້ອງຕ້ອງການຂອງສັງຄົມຕາມແຕ່ລະບາດກ້າວ.

# ຂໍສະແດງຄວາມຮູ້ບຸນຄຸນ ຕໍ່ບົດຮຽນອັນລ້ຳຄ່າ ແລະ ມິດຕະພາບທີ່ຍືນຍົງ

ມະຫາວິທະຍາໄລ ໂດຊິຊະ

ທ່ານ ສາດສະດາຈານ ຊູມິ ມິຊິໂອະ

ປຶ້ມຫົວນີ້, ແມ່ນປຶ້ມທີ່ຂຽນອະທິບາຍລະບົບໂຄງສ້າງຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງລາວແມ່ນຜົນງານການຂຽນຂອງບັນດາເພື່ອນມິດຂອງຂ້າພະເຈົ້າ ແລະ ຊຶ່ງພວກເຂົາກໍແມ່ນນັກບຸກຄະລາກອນຜູ້ໜຸ່ມນ້ອຍຂອງລາວ. ບັນຫາໃຈກາງຂອງການດຳເນີນຄະດີອາຍາແມ່ນການຮັບປະກັນຂັ້ນຕອນແລະການດຳເນີນການທີ່ຖືກຕ້ອງຕໍ່ກັບຜູ້ຖືກຫາ-ຈຳເລີຍ,ຄຽງຄູ່ກັບການຊອກຫາຄວາມຈິງ ແລະ ໃນການຄົ້ນຄ້ວາກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງລາວກໍແມ່ນ, ການຊອກຫາຄວາມດຸ່ນດ່ຽງລະຫວ່າງສິດຂອງຜູ້ຖືກຫາ-ສິດຂອງຈຳເລີຍວ່າໄດ້ຖືກປັບໃຫ້ມີຄວາມສົມດຸນກັນແນວໃດ, ໄດ້ມີການນຳໃຊ້ຫຼັກມູນ-ຫຼັກການໃດແລະລັກສະນະຄວາມແຕກຕ່າງສົມທຽບທີ່ພົ້ນເດັ່ນນັ້ນແມ່ນຫຍັງ. ປຶ້ມຫົວນີ້ແມ່ນຜົນສຳເລັດຈາກການລະດົມສະຕິປັນຍາຂອງບັນດານັກບຸກຄະລາກອນຜູ້ປະຕິບັດວຽກງານຕົວຈິງ ແລະນັກຄົ້ນຄ້ວາທີ່ມາຈາກຫຼາຍພາກສ່ວນທີ່ແຕກຕ່າງກັນ ໃຊ້ເວລາ 4 ປີຮ່ວມກັນຄົ້ນຄ້ວາບັນຫາຂ້າງເທິງດັ່ງທີ່ກ່າວມາ. ສະ ນັ້ນ, ໃນຈຸດນີ້ຈຶ່ງສາມາດເວົ້າໄດ້ວ່າ ປຶ້ມນີ້ບໍ່ແມ່ນປຶ້ມທີ່ພຽງແຕ່ອະທິບາຍມາດຕາຂອງກົດໝາຍເທົ່ານັ້ນ ແລະ ກໍເປັນເຫດຜົນອີກອັນໜຶ່ງທີ່ເອີ້ນປຶ້ມນີ້ວ່າເປັນປຶ້ມທີ່ວິພາກລະບົບໂຄງສ້າງຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ຄະນະຜູ້ຂຽນປຶ້ມ ຍາມໃດກໍມີສາຍຕາທີ່ໝັ້ນທ່ຽງ ແລະ ມີຫູທີ່ອ່ອນນ້ອມ ຕໍ່ກັບຄຳເຫັນຂອງບັນດາອາຈານຜູ້ຊີ້ນຳ. ໃນເວລາທີ່ຮຽນຮູ້ແນວຄວາມຄິດນິຕິສາດຍຸກໃໝ່ນັ້ນທຸກໆທ່ານກໍຍັງຮັກສາມູນເຊື້ອຄວາມທະນົງໃຈໃນຄວາມເປັນລາວຂອງຕົນ, ພ້ອມທັງໃຫ້ກຽດແລະມີຄວາມນັບຖືຕໍ່ຜູ້ອື່ນ. ພວກຂ້າພະເຈົ້າໄດ້ຮຽນຮູ້ຫຼາຍສິ່ງຫຼາຍຢ່າງຈາກບັນດາບຸກຄະລາກອນຝ່າຍລາວ ແລະ ກໍຮູ້ສຶກວ່າພວກຂ້າພະເຈົ້າໂຊກດີຫຼາຍທີ່ໄດ້ມີໂອກາດໃກ້ຊິດຕິດແທດ, ຮັດແໜ້ນສາຍສຳພັນ ແລະ ໄດ້ຮ່ວມເຮັດວຽກກັບສະມາຊິກຝ່າຍລາວທຸກໆທ່ານ.

ຂ້າພະເຈົ້າຫວັງເປັນຢ່າງຍິ່ງວ່າ ປຶ້ມຫົວນີ້ຈະສາມາດເຮັດໃຫ້ຜູ້ອ່ານມີຄວາມເຂົ້າໃຈເລິກເຊິ່ງຕໍ່ກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ສາມາດກາຍເປັນຜູ້ໜຶ່ງທີ່ປະກອບສ່ວນເຄື່ອນໄຫວສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານໃນຂົງເຂດອາຍາ ແລະ ວຽກງານການເສີມສ້າງລັດແຫ່ງກົດໝາຍໃນອະນາຄົດ.

# ແສງສະຫວ່າງຂອງວຽກງານເສີມສ້າງຄວາມເຂັ້ມແຂງຂອງການດຳເນີນຄະດີ

# ພາຍໃຕ້ຂັ້ນຕອນຂອງກົດໝາຍ

ທະນາຍຄວາມ ທ່ານ ອາຈານ ມິຢາເກະ ຊຸນຈິ

ຜ່ານການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຄັ້ງລ່າສຸດທີ່ຜ່ານມານີ້ກໍສາມາດເວົ້າໄດ້ວ່າ ປະເທດຂອງບັນດາທ່ານໄດ້ມາຊຶ່ງລະບົບກົດໝາຍທີ່ມີຄວາມສົມບູນ ແລະ ດີເລີດ. ສະນັ້ນ, ເພື່ອເປັນການ ເຊື່ອມຕໍ່ຈຸດພົ້ນເດັ່ນຂອງແນວຄວາມຄິດຂອງ ກົດໝາຍໃໝ່ພ້ອມທັງຮັກສາ ແລະ ສືບທອດເອກະລັກ ສະເພາະຂອງແນວຄວາມຄິດກົດໝາຍສະບັບເດີມນັ້ນ, ມັນຮຽກຮ້ອງໃຫ້ພວກເຮົາຮວບຮວມເອົານັກວິຊາ ການລະດັບແນວໜ້າຂອງປະເທດມາຮ່ວມກັນຄົ້ນຄ້ວາ ແລະ ຂຽນປຶ້ມຄູ່ມືຫົວນີ້ຂຶ້ນມາ ແລະ ຜູ່ທີ່ເຂົ້າ ຮ່ວມກໍລ້ວນແລ້ວແຕ່ແມ່ນຜູ່ທີ່ຢູ່ໃນໃຈກາງຂອງການເຄື່ອນໄຫວວຽກງານໃນຂົງເຂດຍຸຕິທຳຊຶ່ງກໍຄືຜູ່ ພິພາກສາ,ໄອຍະການ ແລະ ນັກຄົ້ນຄ້ວາ-ນັກວິຊາການດ້ານກົດໝາຍມາປະກອບເປັນຄະນະຜູ່ຂຽນປຶ້ມນີ້ ຂຶ້ນ, ຄະນະຂຽນປຶ້ມນີ້ທັງໄດ້ຂຽນປະຫວັດຄວາມເປັນມາຂອງກົດໝາຍວ່າດ້ວຍການດຳເນີນຄະດີໃນ ລະຍະສັງກາດໃໝ່,ຄົ້ນຄ້ວາກົດໝາຍແບບສົມທຽບ ແລະ ນອກນັ້ນກໍຍັງມີການຄົ້ນຄ້ວາຫຼາຍບັນຫາອື່ນໆ ອີກຫຼາຍດ້ານບໍ່ວ່າຈະເປັນສົນທິສັນຍາຂອງອົງການສະຫະປະຊາຊາດວ່າດ້ວຍສິດທິມະນຸດເປັນຕົ້ນທັງມີ ການນຳເຂົ້າແນວຄວາມຄິດຂອງກົດໝາຍສາກົນວ່າດ້ວຍສິດທິມະນຸດເຂົ້າຕື່ມອີກ ຊຶ່ງໝາກຜົນດັ່ງກ່າວ ພວກເຮົາສາມາດເວົ້າໄດ້ວ່າມັນແມ່ນອັນຍະມະນີແຫ່ງຄວາມອຸສາຫະພະຍາຍາມໃນການຄົ້ນຄ້ວາກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາບໍ່ວ່າຈະເປັນໃນຮູບແບບຂອງພາກລວມຂອງລະບົບກໍຄືການວິເຄາະບັນຫາ ໃນພາກສະເພາະຂອງແຕ່ລະຂົງເຂດມີທັງລັກສະນະກ້ວາງຂວາງ ແລະ ເລິກເຊິ່ງ. ຂ້າພະເຈົ້າໃນນາມທີ່ເປັນ ຜູ່ໜຶ່ງໃນສະມາຊິກຝ່າຍຍີ່ປຸ່ນກໍມີຄວາມຮູ້ສຶກພາກພູມໃຈຫຼາຍທີ່ໄດ້ມີໂອກາດໄດ້ເບິ່ງໄດ້ຊົມອັນຍະມະນີ ອັນລ້ຳຄ່າແຫ່ງຄວາມອຸສາຫະພະຍາຍາມໜ່ວຍນີ້. ສຸດທ້າຍນີ້ ຂ້າພະເຈົ້າຂໍສະແດງຄວາມນັບຖື ແລະ ຮັກແພງຕໍ່ຫົວໜ້າກຸ່ມ, ຄະນະຜູ່ຂຽນປຶ້ມທຸກໆທ່ານ ແລະ ຂໍມອບຄຳອວຍພອນແດ່ບັນດາທ່ານ

“ຂໍໃຫ້ແສງສະຫວ່າງ ຂອງວຽກງານເສີມສ້າງຄວາມເຂັ້ມແຂງຂອງວຽກງານການດຳເນີນຄະດີ ພາຍໃຕ້ຂັ້ນ ຕອນຂອງກົດໝາຍ ຈົ່ງສ່ອງໄປເຖິງທົ່ວທຸກຂົງເຂດຂອງສັງຄົມ”

# ສາລະບານ

**ພາກທີ I ຄວາມຮູ້ກ່ຽວກັບການດຳເນີນຄະດີອາຍາ**................................................ 1

**ບົດທີ 1 ຄວາມຮູ້ທົ່ວໄປກ່ຽວກັບການດຳເນີນຄະດີອາຍາ**........................................ 1

1. ຂະບວນວິວັດການດຳເນີນຄະດີອາຍາຢູ່ ສປປ ລາວ........................................... 1

2. ຄວາມຮູ້ທົ່ວໄປກ່ຽວກັບການດຳເນີນຄະດີອາຍາ................................................. 5

3. ຈຸດປະສົງຂອງການດຳເນີນຄະດີອາຍາ.............................................................. 7

4. ຂັ້ນຕອນຂອງການດຳເນີນຄະດີອາຍາ.............................................................. 10

5. ລະບົບຂອງການດຳເນີນຄະດີອາຍາ................................................................. 14

6. ຫຼັກການພື້ນຖານຂອງການດຳເນີນຄະດີອາຍາ................................................... 18

**ບົດທີ 2 ກົດໝາຍທີ່ກ່ຽວຂ້ອງກັບການດຳເນີນຄະດີອາຍາ**......................................... 23

1. ກົດໝາຍອື່ນທີ່ກ່ຽວຂ້ອງກັບການດຳເນີນຄະດີອາຍາ.......................................... 23

2. ຂອບເຂດການດຳເນີນຄະດີອາຍາ..................................................................... 31

**ບົດທີ 3 ອົງການທີ່ກ່ຽວຂ້ອງກັບການດຳເນີນຄະດີອາຍາ**......................................... 36

1. ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາ............................................ 36

2. ອົງການປົກປ້ອງສິດຂອງຜູ່ຖືກສົງໄສ, ຜູ່ຖືກຫາ ແລະ ຈຳເລີຍ ໃນການດຳເນີນຄະດີອາຍາ.......................................................................................................... 47

**ພາກທີ II ຫຼັກຖານໃນຄະດີອາຍາ**.............................................................................. 51

**ບົດທີ 1 ຫຼັກຖານ**.......................................................................................................... 51

1. ຄວາມຮູ້ທົ່ວໄປກ່ຽວກັບຫຼັກຖານໃນຄະດີອາຍາ................................................. 51

2. ຄວາມສຳຄັນຂອງຫຼັກຖານໃນຄະດີອາຍາ......................................................... 52

3. ປະເພດຂອງຫຼັກຖານໃນຄະດີອາຍາ.................................................................. 52

4. ຫຼັກຖານທາງກົງ ແລະ ຫຼັກຖານທາງອ້ອມ........................................................ 57

5. ຫຼັກຖານຜູກມັດ ແລະ ຫຼັກຖານແກ້ມັດ............................................................ 59

6. ຫຼັກຖານຕົ້ນຕໍ ແລະ ຫຼັກຖານສຳຮອງ.............................................................. 60

**ບົດທີ 2 ການປະກອບຫຼັກຖານໃນຄະດີອາຍາ**.......................................................... 61

1. ຄວາມໝາຍຂອງການປະກອບຫຼັກຖານໃນຄະດີອາຍາ......................................... 61

2. ສະພາບການທີ່ຕ້ອງຊອກຫາຄວາມຈິງໃນຄະດີອາຍາ.......................................... 61
3. ການບໍ່ຖືເປັນຫຼັກຖານໃນຄະດີອາຍາ................................................................ 62
4. ການປະກອບຫຼັກຖານໃນຄະດີອາຍາ.................................................................. 64
**ບົດທີ 3 ການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານໃນຄະດີອາຍາ**........................ 67
1. ຄວາມໝາຍຂອງການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ............................. 67
2. ຄວາມສຳຄັນຂອງການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ............................ 67
3. ອົງການທີ່ມີສິດອຳນາດໃນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ................. 69
**ພາກທີ III ການສືບສວນ-ສອບສວນ**.................................................................. 72
**ບົດທີ 1 ການສືບສວນ-ສອບສວນ**..................................................................... 72
1. ຄວາມຮູ້ກ່ຽວກັບການສືບສວນ-ສອບສວນ........................................................ 72
2. ການເປີດການສືບສວນ-ສອບສວນ.................................................................. 74
3. ສາເຫດ ແລະ ພື້ນຖານທີ່ພາໃຫ້ເປີດການສືບສວນ-ສອບສວນ.............................. 75
4. ຄຳສັ່ງເປີດການສືບສວນ-ສອບສວນ................................................................ 78
5. ການປ່ຽນແປງ ຫຼື ເພີ່ມເຕີມຄຳສັ່ງເປີດການສືບສວນ-ສອບສວນ........................... 83
6. ຄຳສັ່ງບໍ່ເປີດການສືບສວນ-ສອບສວນ............................................................ 84
**ບົດທີ 2 ການດຳເນີນການສືບສວນ-ສອບສວນ**.................................................... 87
1. ຄວາມຮູ້ກ່ຽວກັບວິທີການສືບສວນ-ສອບສວນ.................................................. 87
2. ມາດຕະການສະກັດກັ້ນ.................................................................................. 117
3. ການໂຈະການສືບສວນ-ສອບສວນ ແລະ ການຊັດມ້ຽນຄະດີ................................. 140
4. ການສິ້ນສຸດການສືບສວນ-ສອບສວນ.............................................................. 144
**ບົດທີ 3 ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ**........................................................................................................ 145
1. ຄວາມໝາຍ, ຈຸດປະສົງ ແລະ ເປົ້າໝາຍຂອງການຕິດຕາມກວດກາ....................... 145
2. ສິດ ແລະ ໜ້າທີ່ຂອງອົງການໄອຍະການໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ........................................................ 147
3. ການຕິດຕາມກວດກາການດຳເນີນຄະດີອາຍາຂອງອົງການສືບສວນ-ສອບສວນ........ 148
**ບົດທີ 4 ການປົກປ້ອງສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາ ໃນຂັ້ນຕອນການສືບ**

**ສວນ-ສອບສວນ**.................................................................................... 156
1. ຄວາມໝາຍສຳຄັນຂອງການປົກປ້ອງສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາໃນຂັ້ນຕອນການສືບສວນ-ສອບສວນ.................................................................................. 156
2. ການຮັບປະກັນສິດໃນການຕໍ່ສູ້ຄະດີຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາໃນຂັ້ນຕອນການສືບສວນ-ສອບສວນ.................................................................................. 158
3. ສິດໃນການຕໍ່ສູ້ຄະດີຂອງຜູ້ຖືກສົງໄສໃນຂັ້ນຕອນການສືບສວນ-ສອບສວນ.............. 159
4. ສິດໃນການຕໍ່ສູ້ຄະດີຂອງຜູ້ຖືກຫາໃນຂັ້ນຕອນການສືບສວນ-ສອບສວນ.................. 161
5. ໜ້າທີ່ຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນຂັ້ນຕອນການສືບສວນ-ສອບສວນ..... 167
**ພາກທີ IV ການສັ່ງຟ້ອງຂຶ້ນສານ**.................................................................... 173
**ບົດທີ 1 ຄວາມຮູ້ກ່ຽວກັບການສັ່ງຟ້ອງຜູ້ຖືກຫາຂຶ້ນສານ**......................................... 173
1. ຄວາມໝາຍສຳຄັນຂອງການສັ່ງຟ້ອງຜູ້ຖືກຫາຂຶ້ນສານ........................................ 173
2. ອົງການທີ່ມີສິດອຳນາດໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ.................................... 174
3. ການເກັບໂຮມຂອງກາງທີ່ເປັນຫຼັກຖານກ່ອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ.............. 175
4. ການຄົ້ນຄວ້າສຳນວນຄະດີອາຍາກ່ອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ..................... 176
**ບົດທີ 2 ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ**........................................................... 187
1. ຄວາມຮູ້ກ່ຽວກັບການສັ່ງຟ້ອງຜູ້ຖືກຫາຂຶ້ນສານ.................................................. 187
2. ການສົ່ງສຳນວນຄະດີ ແລະ ຂອງກາງໄປໃຫ້ສານ............................................ 205
3. ການປົກປ້ອງສິດຂອງຜູ້ຖືກຫາໃນຂັ້ນຕອນການສັ່ງຟ້ອງຂຶ້ນສານ.......................... 213
**ພາກທີ V ການດຳເນີນຄະດີຢູ່ສານຂັ້ນຕົ້ນ**........................................................ 215
**ບົດທີ 1 ສິດອຳນາດຂອງສານຕັດສິນຄະດີອາຍາເປັນຂັ້ນຕົ້ນ**.................................. 215
1. ຄວາມຮູ້ທົ່ວໄປກ່ຽວກັບສານ........................................................................ 215
2. ການຮັບເອົາຄະດີມາພິຈາລະນາ..................................................................... 218
3. ຄະນະສານອາຍາຂັ້ນຕົ້ນ............................................................................ 229
4. ສິດ ແລະ ໜ້າທີ່ຂອງຈ່າສານ........................................................................ 230
5. ມາດຕະການຕໍ່ຜູ້ລະເມີດລະບຽບການປະຊຸມສານ ແລະ ການເຂົ້າຮ່ວມຂອງທຸກໆພາກສ່ວນທີ່ກ່ຽວຂ້ອງ.................................................................................... 230
**ບົດທີ 2 ການເປີດປະຊຸມສານ**....................................................................... 237

1. ລະບຽບການປະຊຸມສານ............................................................................ 237
2. ການເປີດປະຊຸມສານ................................................................................ 238
3. ລະບຽບການໄຕ່ສວນຄະດີໃນທີ່ປະຊຸມສານຂັ້ນຕົ້ນ............................................. 241
4. ການໂຕ້ຖຽງໃນທີ່ປະຊຸມສານ.................................................................... 245
5. ການພິຈາລະນາຄະດີໃນຫ້ອງປະຊຸມລັບ ແລະ ການອ່ານຄຳຕັດສີນ........................ 251
**ພາກທີ VI ການພິຈາລະນາຄະດີອາຍາເປັນຂັ້ນອຸທອນ**........................................... 259
1. ຄວາມໝາຍຂອງການພິຈາລະນາຄະດີອາຍາເປັນຂັ້ນອຸທອນ................................ 259
2. ການຂໍອຸທອນ ຫຼື ສະເໜີຄັດຄ້ານ................................................................. 261
3. ລະບຽບການພິຈາລະນາຄະດີອາຍາໃນສານຂັ້ນອຸທອນ......................................... 263
4. ການປົກປ້ອງສິດຂອງຈຳເລີຍໃນສານຂັ້ນອຸທອນ................................................ 275
**ພາກທີ VII ການພິຈາລະນາຄະດີເປັນຂັ້ນລົບລ້າງ**............................................... 277
1. ຄວາມຮູ້ທົ່ວໄປກ່ຽວກັບສານຂັ້ນລົບລ້າງ........................................................... 277
2. ຂອບເຂດຂອງການພິພາກສາຄະດີຢູ່ສານຂັ້ນລົບລ້າງ........................................... 277
3. ຫຼັກການພິຈາລະນາຄະດີຂອງສານຂັ້ນລົບລ້າງ.................................................. 278
4. ການຂໍລົບລ້າງ ຫຼື ການສະເໜີຄັດຄ້ານ........................................................... 282
5. ສານທີ່ມີສິດອຳນາດໃນການພິຈາລະນາຄະດີເປັນຂັ້ນລົບລ້າງ............................... 282
6. ລະບຽບການຂໍລົບລ້າງ ແລະ ການພິຈາລະນາພິພາກສາເປັນຂັ້ນລົບລ້າງ................ 285
7. ຄວາມໝາຍຂອງສານຂັ້ນລົບລ້າງພິພາກສາແຕ່ທາງດ້ານກົດໝາຍ......................... 293
**ພາກທີ VIII ການປະຕິບັດຄຳຕົກລົງຂອງສານ**.................................................... 300
1. ຄວາມຮູ້ກ່ຽວກັບການປະຕິບັດຄຳຕົກລົງຂອງສານ.............................................. 300
2. ອົງການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ............................................................ 301
3. ຂັ້ນຕອນການຈັດຕັ້ງປະຕິບັດ......................................................................... 302
4. ການປ່ອຍຕົວນັກໂທດ................................................................................. 310
5. ການໂຈະ, ການປ່ຽນແປງ, ການຍົກເລີກ ແລະ ການລົບລ້າງການຈັດຕັ້ງປະຕິບັດຄຳ
ຕົກລົງຂອງສານ............................................................................................ 313

6. ມາດຕະການປົ່ນປົວ............................................................................ 315

7. ການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສີນຂອງສານ................................ 316

**ພາກທີ IX ການຮື້ຟື້ນຄະດີອາຍາ**........................................................................ 319

1. ຄວາມໝາຍຂອງການຮື້ຟື້ນຄະດີອາຍາ............................................................ 319

2. ຄວາມຈຳເປັນໃນການຮື້ຟື້ນ......................................................................... 319

3. ເງື່ອນໄຂການຂໍຮື້ຟື້ນ.................................................................................. 320

4. ຜູ່ມີສິດສະເໜີຂໍຮື້ຟື້ນ.................................................................................... 323

5. ອົງການພິຈາລະນາ ແລະ ລະບຽບການ............................................................ 324

# ພາກທີ I
# ຄວາມຮູ້ກ່ຽວກັບການດຳເນີນຄະດີອາຍາ
## ບົດທີ 1
## ຄວາມຮູ້ທົ່ວໄປກ່ຽວກັບການດຳເນີນຄະດີອາຍາ

### 1. ຂະບວນວິວັດການດຳເນີນຄະດີອາຍາຢູ່ ສປປ ລາວ

ການດຳເນີນຄະດີອາຍາ ຢູ່ ສປປ ລາວ ດຳເນີນໄປພາຍໃຕ້ລັດຖະທຳມະນູນ, ກົດໝາຍ ແລະ ການຈັດຕັ້ງອົງການຍຸຕິທຳທີ່ເຮັດໜ້າທີ່ປົກປ້ອງກົດໝາຍ ແລະ ຄວາມຍຸຕິທຳຂອງສັງຄົມໂດຍເລີ່ມແຕ່ປະເທດເຮົາໄດ້ສະຖາປະນາເປັນ ສປປ ລາວ ແຕ່ວັນທີ 2 ທັນວາ 1975 ເປັນຕົ້ນມາ. ການດຳເນີນຄະດີພາຍໃຕ້ຂະບວນການຍຸຕິທຳຄືດັ່ງທີ່ກ່າວມານັ້ນໄດ້ມີວິວັດທະນາການຕາມການປ່ຽນແປງຂອງກົດໝາຍ ແລະ ສະພາບຄວາມເປັນຈິງຂອງປະເທດເຮົາເປັນແຕ່ລະໄລຍະ ຊຶ່ງສາມາດສັງລວມໄດ້ໂດຍສັງເຂບຄື: ໄລຍະ I ແຕ່ປີ 1975 ຫາ ປີ 1990; ໄລຍະ II ແຕ່ປີ 1990 ຫາ ປີ 2004; ໄລຍະ III ແຕ່ປີ 2004 ຫາ ປີ 2012; ໄລຍະ IV ແຕ່ປີ 2012 ຫາ ປັດຈຸບັນ.

#### 1.1. ໄລຍະທີ I ແຕ່ປີ 1975 ຫາ 1990

ໄລຍະນີ້ເປັນບາດລ້ຽວໃໝ່ຂອງປະເທດເຮົາ ແລະ ເປັນຈຸດເລີ່ມຕົ້ນຂອງການປ່ຽນແປງໃໝ່ໃນລະບົບກົດໝາຍ ແລະ ການຈັດຕັ້ງຍຸຕິທຳ ຢູ່ ສປປ ລາວ. ເປັນທີ່ຊັດເຈນວ່າຕໍ່ໜ້າສະພາບຄືດັ່ງກ່າວບັນດາກົດໝາຍທີ່ນຳໃຊ້ໃນເມື່ອກ່ອນ ລ້ວນແຕ່ຖືກລົບລ້າງທັງໝົດ. ເພາະສະນັ້ນ, ເພື່ອຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມມີສະເຖຍລະພາບຂອງປະເທດຊາດພາຍຫຼັງການສະຖາປະນາລະບອບໃໝ່ນັ້ນ, ລັດຖະບານໄດ້ອອກຄຳສັ່ງ ສະບັບເລກທີ 53/ນຍ, ລົງວັນທີ 15 ຕຸລາ 1976 ກ່ຽວກັບການຈັບຕົວ, ການສືບສວນ ແລະ ຕັດສິນຜູ້ກະທຳຜິດ ເປັນບ່ອນອີງໃນການດຳເນີນຄະດີອາຍາ ແລະ ຕັດສິນຜູ້ກະທຳຜິດ. ການດຳເນີນຄະດີໃນເວລານີ້ ແມ່ນນຳໃຊ້ນະໂຍບາຍ "ສົມທົບການອະໄພຍະໂທດ ລົງໂທດສົມກັບການອົບຮົມດັດສ້າງເອົາການອົບຮົມດັດສ້າງສົມກັບການອອກແຮງງານເປັນພື້ນຖານ" ໃນນີ້ຈະເຫັນໄດ້ວ່າເປົ້າໝາຍຂອງການລົງໂທດ ແມ່ນທັງປາບປາມທັງອະໄພຍະໂທດ ຊຶ່ງມີຄວາມໝາຍວ່າມີຄວາມເດັດຂາດຕໍ່ພວກທີ່ດື້ດ້ານບໍ່ຍອມປ່ຽນແປງຂໍ້ຜິດພາດຂອງຕົນ, ແຕ່ກໍມີນະໂຍບາຍອັນຊັດເຈນດ້ວຍຮູບການອະໄພຍະໂທດຕໍ່ຜູ້ທີ່ຮູ້ສຶກກິນແໜງແຄງໃຈຕໍ່ການກະທຳຜິດ ແລະ ກັບເນື້ອກັບໂຕເປັນຄົນດີຂອງສັງຄົມໄດ້. ການລົງໂທດກໍຢູ່ບົນພື້ນຖານການສຶກສາທັດສະນະແຮງງານຕົ້ນຕໍກໍເພື່ອຢາກໃຫ້ທຸກຄົນຮັກການອອກແຮງງານ ແລະ ຮູ້ນຳໃຊ້ແຮງງານໃຫ້ເປັນປະໂຫຍດຕໍ່ສັງຄົມ ແລະ ຮູ້ຄຸນຄ່າຂອງແຮງງານ. ຮອດປີ 1989

ສະພາປະຊາຊົນສູງສຸດ (ສະພາແຫ່ງຊາດໃນປັດຈຸບັນ) ຊຸດທີ 2 ໄດ້ຮັບຮອງເອົາກົດໝາຍສະບັບທຳອິດຂອງ ສປປ ລາວ 4 ສະບັບ ຊຶ່ງໄດ້ແກ່: ກົດໝາຍອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍສານປະຊາຊົນ ຊຶ່ງເປັນການເປີດສັກກະລາດໃໝ່ໃຫ້ແກ່ການຄຸ້ມຄອງລັດດ້ວຍກົດໝາຍຢູ່ ສປປ ລາວ, ການດຳເນີນຄະດີອາຍາກໍໄດ້ເລີ່ມເຂົ້າສູ່ການປະຕິບັດຕາມລະບຽບກົດໝາຍຢ່າງເປັນຮູບປະທຳ.

### 1.2. ໄລຍະທີ II ແຕ່ປີ 1990 ຫາ 2004

ພາຍຫຼັງທີ່ໄດ້ຖືກຮັບຮອງຈາກສະພາແຫ່ງຊາດແລ້ວ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາແຫ່ງ ສປປ ລາວ ສະບັບທຳອິດໄດ້ປະກາດໃຊ້ຕາມດຳລັດຂອງປະທານປະເທດ ສະບັບເລກທີ 07/ປທປທ, ລົງວັນທີ 9 ມັງກອນ 1990, ກົດໝາຍສະບັບນີ້ໄດ້ກຳນົດໜ້າທີ່ ແລະ ຫຼັກການພື້ນຖານຂອງການດຳເນີນຄະດີອາຍາ, ສິດ ແລະ ພັນທະຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ, ບັນດາມາດຕະການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນລວມທັງບັນຫາທີ່ເປັນພື້ນຖານອື່ນໆໃນການດຳເນີນຄະດີອາຍາ. ນອກຈາກນີ້ຍັງໄດ້ກຳນົດຂັ້ນຕອນຕ່າງໆຂອງການດຳເນີນຄະດີອາຍາແຕ່ຂັ້ນສືບສວນ-ສອບສວນຂອງອົງການສືບສວນ-ສອບສວນ, ຂັ້ນຕອນສັ່ງຟ້ອງຂອງອົງການໄອຍະການປະຊາຊົນຈົນເຖິງຂັ້ນຕອນພິຈາລະນາຕັດສິນຂອງສານ, ສິດໃນການຕິດຕາມກວດກາຂອງອົງການໄອຍະການປະຊາຊົນ ແລະ ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ. ໄລຍະນີ້ການດຳເນີນຄະດີອາຍາຢູ່ພາຍໃຕ້ການຊີ້ນຳຂອງຄະນະປະຈຳສະພາແຫ່ງຊາດ, ຊຶ່ງແມ່ນຜູ້ຊີ້ນຳອົງການປົກປ້ອງກົດໝາຍເປັນຜູ້ຮັບຜິດຊອບ.[1] ສະຫຼຸບແລ້ວໄລຍະນີ້ເປັນໄລຍະທີ່ການຈັດຕັ້ງຍຸຕິທຳໄດ້ມີການປັບປຸງໃຫ້ເປັນລະບົບເພື່ອຮັບປະກັນການຈັດຕັ້ງ ແລະ ການເຄື່ອນໄຫວຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍໃຫ້ມີຜົນສັກສິດເທື່ອລະກ້າວ.

ໃນວັນທີ 15 ສິງຫາ 1991 ລັດຖະທຳມະນູນສະບັບທຳອິດ ແຫ່ງ ສປປ ລາວ ກໍໄດ້ຖືກຮັບຮອງ ແລະ ປະກາດໃຊ້ ອັນໄດ້ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ບົດບາດການນຳໃຊ້ກົດໝາຍໃນການຄຸ້ມຄອງລັດຄຸ້ມຄອງສັງຄົມໃນຂອບເຂດທົ່ວປະເທດ. ໝວດທີ VIII ຂອງລັດຖະທຳມະນູນສະບັບນີ້ໄດ້ກຳນົດວ່າ: "ສານປະຊາຊົນ ແມ່ນອົງການພິພາກສາຂອງລັດ ຊຶ່ງປະກອບດ້ວຍສານປະຊາຊົນສູງສຸດ, ສານປະຊາຊົນແຂວງ,

[1] ຜູ້ຊີ້ນຳອົງການປົກປ້ອງກົດໝາຍ ແມ່ນຄະນະປະຈຳສະພາແຫ່ງຊາດ ທີ່ໄດ້ຮັບມອບໝາຍຈາກປະທານສະພາແຫ່ງຊາດ ເພື່ອປະຕິບັດໜ້າທີ່ດັ່ງກ່າວ ມີໜ້າທີ່ໃນການຕິດຕາມກວດກາການປະຕິບັດໜ້າທີ່ ແລະ ການປະຕິບັດກົດໝາຍຂອງຕຳຫຼວດ, ອົງການໄອຍະການ ແລະ ສານປະຊາຊົນ ຕາມການຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຫຼື ຕາມປົກກະຕິໂດຍໜ້າທີ່.

ກຳແພງນະຄອນ, ສານປະຊາຊົນເມືອງ ແລະ ສານທະຫານ" (ມ 65 ລນ, 1991), ສ່ວນ "ອົງການໄອຍະການປະຊາຊົນ ປະກອບດ້ວຍ ອົງການອະທິໄອຍະການປະຊາຊົນ[2], ອົງການໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ເມືອງ ແລະ ອົງການໄອຍະການທະຫານ, ອົງການໄອຍະການປະຊາຊົນມີສິດ ແລະ ໜ້າທີ່ດັ່ງນີ້: 1. ກວດກາການເຄົາລົບລະບຽບກົດໝາຍຢ່າງຖືກຕ້ອງ ແລະ ເປັນເອກະພາບຢູ່ໃນທຸກກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການບໍລິຫານທ້ອງຖິ່ນ, ວິສາຫະກິດ, ລັດຖະກອນ ແລະ ພົນລະເມືອງ; 2. ປະຕິບັດສິດກ່າວຟ້ອງ" (ມ 72 ລນ, 1991). ຈົນເຖິງ ປີ 2003 ລັດຖະທຳມະນູນກໍໄດ້ມີການປັບປຸງ ແລະ ຮັບຮອງຕາມມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 25/ສພຊ, ລົງວັນທີ 6 ພຶດສະພາ 2003 ແລະ ມີຜົນບັງຄັບໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 32/ສປປ, ລົງວັນທີ 28 ພຶດສະພາ 2003, ຊຶ່ງໄດ້ສົ່ງຜົນໃຫ້ມີການປັບປຸງລະບົບກົດໝາຍ ແລະ ວຽກງານຍຸຕິທຳ ຢູ່ ສປປ ລາວ, ໃນນີ້ລວມທັງການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີອາຍາເພື່ອໃຫ້ມີຄວາມສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດສັງຄົມຂອງປະເທດເຮົາ ແລະ ເຮັດໃຫ້ການດຳເນີນຄະດີນັບມື້ນັບເປັນລະບົບຄົບຊຸດທັງມີມາດຕະຖານທີ່ດີຂຶ້ນ. ໝວດທີ IX ຂອງລັດຖະທຳມະນູນສະບັບນີ້ໄດ້ກຳນົດວ່າ: "ສານປະຊາຊົນ ແມ່ນອົງການພິພາກສາຂອງລັດຊຶ່ງປະກອບດ້ວຍ: ສານປະຊາຊົນສູງສຸດ, ສານອຸທອນ, ສານປະຊາຊົນແຂວງ, ນະຄອນ, ສານປະຊາຊົນເມືອງ ແລະ ສານທະຫານ". (ມ 79 ລນ, 2003), ຄຽງຄູ່ກັບສານ "ອົງການໄອຍະການປະຊາຊົນແມ່ນອົງການຕິດຕາມກວດກາການປະຕິບັດກົດໝາຍ ຊຶ່ງປະກອບດ້ວຍ: ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນຂັ້ນອຸທອນ, ອົງການໄອຍະການປະຊາຊົນແຂວງ, ນະຄອນ, ອົງການໄອຍະການປະຊາຊົນເມືອງ ແລະ ອົງການໄອຍະການທະຫານ, ອົງການໄອຍະການປະຊາຊົນມີສິດ ແລະ ໜ້າທີ່ດັ່ງນີ້: 1. ຕິດຕາມກວດກາການເຄົາລົບລະບຽບກົດໝາຍຢ່າງຖືກຕ້ອງ ແລະ ເປັນເອກະພາບຢູ່ໃນທຸກກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ລັດຖະກອນ ແລະ ພົນລະເມືອງ; 2. ປະຕິບັດສິດກ່າວຟ້ອງ". (ມ 86 ລນ, 2003). ໄປພ້ອມໆກັບການປັບປຸງລັດຖະທຳມະນູນ, ບັນດາກົດໝາຍຕ່າງໆກໍໄດ້ມີການປັບປຸງ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາກໍເປັນໜຶ່ງໃນບັນດາກົດໝາຍທີ່ໄດ້ຮັບການປັບປຸງໃນປີ 2004.

---

[2] ອົງການອະທິໄອຍະການປະຊາຊົນ ແມ່ນອົງການໄອຍະການປະຊາຊົນສູງສຸດ

**1.3. ໄລຍະທີ III ແຕ່ປີ 2004 ຫາ 2012**

ເພື່ອໃຫ້ສອດຄ່ອງກັບລັດຖະທຳມະນູນ ສະບັບປັບປຸງ ປີ 2003, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ປັບປຸງບາງເນື້ອໃນເພີ່ມເຕີມ ແລະໄດ້ຮັບຮອງເອົາໃນວັນທີ 15 ພຶດສະພາ 2004. ກົດໝາຍສະບັບນີ້ໄດ້ກຳນົດໃຫ້ອົງການສືບສວນ-ສອບສວນປະກອບດ້ວຍ 5 ອົງການ ຊຶ່ງໄດ້ແກ່ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ພາສີ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້, ແລະ ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ອື່ນທີ່ກົດໝາຍໄດ້ກຳນົດໄວ້ (ມ 23 ກດຍ, 2004), ໄດ້ແບ່ງມາດຕະການສືບສວນ-ສອບສວນອອກເປັນ 8 ມາດຕະການ (ມ 42 ກດຍ, 2004) ແລະ 7 ມາດຕະການສະກັດກັ້ນ (ມ 59 ກດຍ, 2004) ໄດ້ກຳນົດຫຼັກການຂອງການດຳເນີນຄະດີອາຍາ 14 ຫຼັກການ, ກຳນົດໃຫ້ມີການພິຈາລະນາຄະດີຢູ່ສານແຕ່ລະຂັ້ນຕາມລັດຖະທຳມະນູນ ປີ 2003, ກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ (ປີ 2011) ໄດ້ວາງນະໂຍບາຍຕໍ່ການປັບປຸງ ແລະ ພັດທະນາອົງການຕຸລາການໃນໄລຍະໃໝ່ ຊຶ່ງຕ້ອງເພີ່ມທະວີຄວາມເຂັ້ມແຂງທາງດ້ານການຈັດຕັ້ງ ແລະ ບຸກຄະລາກອນທີ່ມີຄຸນສົມບັດ ແລະ ຄວາມສາມາດໃນການເຄື່ອນໄຫວວຽກງານຍຸຕິທຳຄື "ອົງການຕຸລາການປະກອບດ້ວຍສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ, ສືບຕໍ່ປັບປຸງດ້ານການຈັດຕັ້ງໃຫ້ເຂັ້ມແຂງປະກອບດ້ວຍບຸກຄະລາກອນທີ່ໜັກແໜ້ນທາງດ້ານການເມືອງ, ວິຊາການ, ພື້ນຖານວັດຖຸເຕັກນິກທີ່ທັນສະໄໝເພື່ອຮັບປະກັນການປະຕິບັດໜ້າທີ່ປົກປ້ອງກົດໝາຍໃຫ້ມີຄວາມສັກສິດ, ເຂັ້ມງວດ ແລະ ຍຸຕິທຳ. ສູ້ຊົນສ້າງຕັ້ງສານປົກຄອງ, ສານແຮງງານ ແລະ ສານເດັກໃຫ້ເປັນລະບົບຄົບຊຸດ, ເອົາໃຈໃສ່ເປັນພິເສດໃນການປັບປຸງສານປະຊາຊົນເຂດ, ອົງການໄອຍະການປະຊາຊົນເຂດ ແລະ ພາກໃຫ້ສາມາດປະຕິບັດໜ້າທີ່ໄດ້ຕາມກົດໝາຍກຳນົດໄວ້."[3]

ເພື່ອຕອບສະໜອງແນວທາງນະໂຍບາຍຂອງພັກຕາມມະຕິກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກ ແລະ ເຮັດໃຫ້ການດຳເນີນຄະດີອາຍາມີຄວາມຖືກຕ້ອງສອດຄ່ອງກັບຄວາມຕ້ອງການຕົວຈິງຂອງປະເທດເຮົາ, ພາກພື້ນ ແລະ ສາກົນນັ້ນ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງໄດ້ຖືກຮັບຮອງໃນປີ 2012 ຊຶ່ງໄດ້ວາງພື້ນຖານທີ່ຊັດເຈນກວ່າເກົ່າໃນການດຳເນີນຄະດີອາຍາໃນຍຸກປັດຈຸບັນ.

---

[3] ເອກະສານກອງປະຊຸມໃຫຍ່ຄັ້ງທີ IX ຂອງພັກປະຊາຊົນປະຕິວັດລາວ, ໂຮງພິມແຫ່ງລັດ: ນະຄອນຫຼວງວຽງຈັນ, 2011, ໜ້າ 88-89.

### 1.4. ໄລຍະທີ IV ແຕ່ປີ 2012 ຫາ ປັດຈຸບັນ

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງໄດ້ຖືກຮັບຮອງຢ່າງເປັນເອກະສັນຢູ່ໃນກອງປະຊຸມສະພາແຫ່ງຊາດຄັ້ງວັນທີ 10 ກໍລະກົດ 2012 ແລະ ປະກາດໃຊ້ຕາມລັດຖະດຳລັດ ສະບັບເລກທີ 236/ປປທ, ລົງວັນທີ 1 ສິງຫາ 2012 ຂອງປະທານປະເທດແຫ່ງ ສປປ ລາວ. ກົດໝາຍສະບັບໃໝ່ນີ້ໄດ້ກຳນົດບັນດາຫຼັກການພື້ນຖານຂອງການດຳເນີນຄະດີອາຍາ ໃຫ້ຊັດເຈນຂຶ້ນກວ່າເກົ່າ, ຊຶ່ງໄດ້ບັນຍັດໄວ້ໃນມາດຕາ 10 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ[4]. ການສັ່ງຟ້ອງຂອງຫົວໜ້າອົງການໄອຍະການ ນອກຈາກການສັ່ງຟ້ອງຕາມສິດຂອງອົງການໄອຍະການໂດຍທົ່ວໄປແລ້ວຍັງໄດ້ມີການກຳນົດໃຫ້ຊັດເຈນຕື່ມກ່ຽວກັບການສັ່ງຟ້ອງຂຶ້ນສານໂດຍກົງຂອງຫົວໜ້າອົງການໄອຍະການ (ມ 157-159 ກດຍ), ໄດ້ກຳນົດໃຫ້ສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດມີບົດບາດໃນການພິພາກສາເປັນຂັ້ນລົບລ້າງ, ກຳນົດສິດ ແລະ ໜ້າທີ່ຂອງສານປະຊາຊົນເຂດ ແລະ ອົງການໄອຍະການປະຊາຊົນເຂດໃນການດຳເນີນຄະດີອາຍາ, ມີພາລະບົດບາດຕັດສິນຄະດີອາຍາທີ່ມີໂທດຕັດອິດສະລະພາບ ແຕ່ 3 ປີລົງມາ ແລະ ມູນຄ່າຄວາມເສັຍຫາຍທາງແພ່ງບໍ່ເກີນ 300 ລ້ານກີບ, ຊຶ່ງນັບໄດ້ວ່າເປັນການປ່ຽນແປງຄັ້ງໃຫຍ່ໃນລະບົບສານປະຊາຊົນ ແລະ ອົງການໄອຍະການປະຊາຊົນໃນການດຳເນີນຄະດີ.

ນອກຈາກການປ່ຽນແປງແຕ່ລະໄລຍະຕາມເງື່ອນໄຂ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງຂະບວນການຍຸຕິທຳແລ້ວການສ້າງບຸກຄະລາກອນທາງກົດໝາຍ, ໂດຍສະເພາະຜູ້ທີ່ເຮັດໜ້າທີ່ເປັນເຈົ້າໜ້າທີ່, ພະນັກງານໄອຍະການ, ຜູ້ພິພາກສາສານອາຍາ ແລະ ການຈັດຕັ້ງອົງການທີ່ກ່ຽວຂ້ອງຍັງໄດ້ຮັບການປັບປຸງຍົກລະດັບທາງດ້ານຄຸນສົມບັດ ແລະ ວິຊາສະເພາະ ເພື່ອຮັບປະກັນການເຄື່ອນໄຫວວຽກງານຕາມກົດໝາຍ ແລະ ຄວາມຍຸຕິທຳຢ່າງມີປະສິດທິຜົນ.

## 2. ຄວາມຮູ້ທົ່ວໄປກ່ຽວກັບການດຳເນີນຄະດີອາຍາ

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ກຳນົດຄວາມໝາຍຂອງການດຳເນີນຄະດີອາຍາໄວ້ວ່າ: “ການດຳເນີນຄະດີອາຍາ ແມ່ນການເຄື່ອນໄຫວຂອງອົງການສືບສວນ-ສອບສວນ, ອົງການໄອຍະການ, ສານ ແລະ ຜູ້ເຂົ້າຮ່ວມອື່ນເພື່ອຊອກໃຫ້ເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນ ແລະ ຮອບຄອບ, ນຳເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ, ຜູ້ກະທຳຜິດຕ້ອງຖືກລົງໂທດຕາມກົດໝາຍ, ຜູ້ບໍ່ໄດ້ກະທຳຜິດຈະບໍ່ຖືກລົງໂທດ” (ມ 2 ກດຍ).

[4] ເບິ່ງລາຍລະອຽດໃນຂໍ້ 6 ຂອງພາກທີ I ບົດທີ 1

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແມ່ນກົດໝາຍທີ່ກຳນົດວິທີການດຳເນີນຄະດີອາຍາຂອງອົງການທີ່ມີສິດອຳນາດ ເຊັ່ນ ກຳນົດວິທີການດຳເນີນຄະດີອາຍາຂອງອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານ, ກຳນົດສິດ ແລະ ໜ້າທີ່ຂອງອົງການດັ່ງກ່າວ, ການນຳໃຊ້ມາດຕະການຕ່າງໆເພື່ອບັງຄັບໃຊ້ກັບກົດໝາຍອາຍາ. ກົດໝາຍວ່າດ້ວຍການດຳເນີນຄະດີອາຍາມີຄວາມສຳຄັນທີ່ສຸດຕໍ່ກັບກົດໝາຍອາຍາ ເພາະວ່າການທີ່ຈະນຳເອົາບຸກຄົນໃດບຸກຄົນໜຶ່ງມາລົງໂທດທາງອາຍາໄດ້ນັ້ນ ຈະຕ້ອງໄດ້ດຳເນີນໃຫ້ເປັນໄປຕາມຫຼັກການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ[5].

ກົດໝາຍອາຍາ ແມ່ນກົດໝາຍທີ່ບັນຍັດວ່າການກະທຳ ຫຼື ການເມີນເສີຍຢ່າງໃດຢ່າງໜຶ່ງເປັນການກະທຳຜິດ ແລະ ກຳນົດໂທດທີ່ຈະລົງໃສ່ຜູ້ກະທຳຜິດໄວ້ ຫຼື ຈະເວົ້າໃນຄວາມໝາຍໜຶ່ງອີກກໍໝາຍຄວາມວ່າກົດໝາຍອາຍາ ແມ່ນກົດໝາຍທີ່ບັນຍັດຫ້າມການກະທຳຢ່າງໃດຢ່າງໜຶ່ງ ຫຼື ບັງຄັບໃຫ້ກະທຳຢ່າງໃດຢ່າງໜຶ່ງໂດຍທີ່ຜູ້ລະເມີດ ຫຼື ຜູ້ບໍ່ປະຕິບັດຕາມຈະຕ້ອງໄດ້ຮັບການລົງໂທດ ຫຼື ຈະຖືກມາດຕະການບັງຄັບອື່ນໆຂອງສານ.

ການກະທຳທີ່ກຳນົດເປັນການກະທຳຜິດມີຫຼາຍສະຖານ ເຊັ່ນ ການຄາດຕະກຳ (ມ 88 ກອຍ), ການທຳຮ້າຍຮ່າງກາຍ (ມ 90 ກອຍ), ການປຸ້ນຊັບຂອງພົນລະເມືອງ (ມ 118 ກອຍ), ການລັກຊັບ, ການຍາດຊິງຊັບຂອງພົນລະເມືອງ (ມ 119 ກອຍ), ການສໍ້ໂກງຊັບຂອງພົນລະເມືອງ (ມ 120 ກອຍ), ການຍັກຍອກຊັບຂອງພົນລະເມືອງ (ມ 121 ກອຍ) ແລະຄວາມຜິດໃນສະຖານອື່ນໆ.

ສ່ວນການເມີນເສີຍທີ່ເປັນການກະທຳຜິດມີຫຼາຍສະຖານ ເຊັ່ນ ການບໍ່ໃຫ້ການຊ່ວຍເຫຼືອຜູ້ອື່ນໃນເວລາຕົກຢູ່ໃນໄພອັນຕະລາຍ (ມ 93 ກອຍ), ການປະລະໜ້າທີ່ (ມ 155 ກອຍ), ການບໍ່ປະຕິບັດຕາມຄຳຕັດສິນ ຫຼື ຄຳສັ່ງຂອງສານ (ມ 173 ກອຍ) ແລະ ອື່ນໆເປັນຕົ້ນ ຊຶ່ງຜູ້ກະທຳຜິດຈະຕ້ອງໄດ້ຮັບໂທດຕາມທີ່ໄດ້ກຳນົດໄວ້ໃນມາດຕາເຫຼົ່ານີ້ ຈຶ່ງເປັນບົດບັນຍັດທີ່ບັງຄັບໃຫ້ຕ້ອງກະທຳ.

ຈາກການກຳນົດຂອງກົດໝາຍດັ່ງກ່າວ ຈຶ່ງໃຫ້ຄວາມໝາຍຂອງການດຳເນີນຄະດີອາຍາໄວ້ວ່າ ການດຳເນີນຄະດີອາຍາແມ່ນການເຄື່ອນໄຫວຂອງອົງການທີ່ມີສິດໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາເພື່ອຊອກໃຫ້ເຫັນການກະທຳຜິດ ແລະ ນຳເອົາຜູ້ກະທຳຜິດມາລົງໂທດຕາມກົດໝາຍ ພ້ອມກັນນັ້ນກໍຕ້ອງໄດ້ປົກປ້ອງສິດ ແລະເສລີພາບຂອງບຸກຄົນໂດຍສະເພາະແມ່ນຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ. ໃນເວລາດຳເນີນຄະດີນັ້ນ ອົງການດຳເນີນຄະດີບໍ່ຄວນລ່ວງລະເມີດສິດ ແລະ ເສລີພາບດັ່ງກ່າວໂດຍບໍ່ມີ

---

[5] ຄະນິດ ນະ ນະຄອນ, ກົດໝາຍວິທີພິຈາລະນາຄວາມອາຍາ, ພິມຄັ້ງທີ 7 ປັບປຸງໃໝ່ ແລະ ແກ້ໄຂເພີ່ມເຕີມ, ສຳນັກພິມວິນຍູຊົນຈຳກັດ, ພສ 2549, ໜ້າ 39-40

ເຫດຜົນພຽງພໍ ໂດຍຖືວ່າບຸກຄົນເຫຼົ່ານັ້ນເປັນຜູ້ບໍລິສຸດຈົນກວ່າຈະມີຄໍາຕັດສິນ ຫຼື ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຈະຕ້ອງປະຕິບັດຕໍ່ຜູ້ນັ້ນຄືກັນກັບນັກໂທດແມ່ນບໍ່ໄດ້ (ມ 15 ກດຍ). ດັ່ງນັ້ນ, ການດໍາເນີນຄະດີອາຍາຂອງອົງການທີ່ມີສິດໜ້າທີ່ຈໍາເປັນຈະຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ ໝາຍຄວາມວ່າຕ້ອງນໍາໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນຕ່າງໆຕາມທີ່ໄດ້ບັນຍັດໄວ້ໃນກົດໝາຍເພື່ອຊອກໃຫ້ເຫັນການກະທໍາຜິດ ແລະ ຜູ້ກະທໍາຜິດທີ່ແທ້ຈິງ ພ້ອມກັນນັ້ນກໍຕ້ອງໄດ້ປົກປ້ອງສິດ ແລະ ເສລີພາບຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈໍາເລີຍໄປພ້ອມໆກັນ.

ດັ່ງນັ້ນ, ການດໍາເນີນຄະດີອາຍາຈຶ່ງມີຄວາມແຕກຕ່າງກັບການດໍາເນີນຄະດີແພ່ງດັ່ງນີ້:

ການດໍາເນີນຄະດີແພ່ງ, ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ສະບັບປັບປຸງ ປີ 2012 ໄດ້ກໍານົດໄວ້ວ່າ: "ການດໍາເນີນຄະດີແພ່ງແມ່ນການເຄື່ອນໄຫວຂອງສານ ແລະ ຂອງຜູ້ເຂົ້າຮ່ວມໃນການດໍາເນີນຄະດີເພື່ອພິຈາລະນາແກ້ໄຂການຮ້ອງຟ້ອງ ແລະ ການຮ້ອງຂໍທາງແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຂໍ້ຂັດແຍ່ງອື່ນໆຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ" (ມ 2 ກດພ). ຈາກບົດບັນຍັດດັ່ງກ່າວ ຈຶ່ງເວົ້າໄດ້ວ່າກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງແມ່ນກົດໝາຍທີ່ກໍານົດວິທີການເຄື່ອນໄຫວຂອງສານເພື່ອແກ້ໄຂຂໍ້ຂັດແຍ່ງທາງແພ່ງ, ການຄ້າ, ຄອບຄົວ, ເດັກ ແລະ ອື່ນໆ ລະຫວ່າງບຸກຄົນກັບບຸກຄົນ ຫຼື ບຸກຄົນກັບນິຕິບຸກຄົນ ຫຼື ລະຫວ່າງນິຕິບຸກຄົນດ້ວຍກັນທີ່ເປັນຄູ່ຄວາມ ຊຶ່ງເອີ້ນວ່າໂຈດ ແລະ ຈໍາເລີຍ.

ການດໍາເນີນຄະດີແພ່ງ ຈຶ່ງມີລັກສະນະເປັນການແກ້ໄຂຂໍ້ຂັດແຍ່ງຂອງຄູ່ຄວາມເອງ ໝາຍຄວາມວ່າຄູ່ຄວາມເປັນຜູ້ເລີ່ມຕົ້ນໃນການດໍາເນີນຄະດີ ແລະ ການຢຸດເຊົາການດໍາເນີນຄະດີແພ່ງນັ້ນ, ຄູ່ຄວາມເປັນຜູ້ກໍານົດເນື້ອໃນຂອງການດໍາເນີນຄະດີຢູ່ໃນຄໍາຮ້ອງທັງນີ້ເພື່ອປົກປ້ອງບໍ່ພຽງແຕ່ສິດໃນກໍາມະສິດໃນຊັບສິ່ງຂອງ ແລະ ຊັບສິນທາງປັນຍາຂອງຕົນເທົ່ານັ້ນ ແຕ່ຍັງປົກປ້ອງກຽດສັກສີ, ຊື່ສຽງຂອງຕົນ, ຄອບຄົວ ແລະ ອື່ນໆອີກດ້ວຍ[6].

### 3. ຈຸດປະສົງຂອງການດໍາເນີນຄະດີອາຍາ

ໃນການເຄື່ອນໄຫວດໍາເນີນຄະດີອາຍາຂອງອົງການທີ່ມີສິດໜ້າທີ່ນັ້ນມີຈຸດປະສົງດັ່ງນີ້:

#### 3.1. ການດໍາເນີນຄະດີອາຍາເພື່ອຊອກໃຫ້ເຫັນການກະທໍາຜິດ

ກົດໝາຍອາຍາ ແມ່ນກົດໝາຍທີ່ກໍານົດການກະທໍາຜິດ, ກໍານົດການລົງໂທດ ແລະ ມາດຕະການຕ່າງໆທາງອາຍາໄວ້ ເມື່ອມີການກະທໍາຜິດທາງອາຍາເກີດຂຶ້ນຈະຕ້ອງຊອກໃຫ້ເຫັນວ່າການກະທໍາຜິດ, ຜູ້ກະທໍາຜິດ ແລະ ອື່ນໆ ມີຄືແນວໃດ. ໃນທາງປະຕິບັດທີ່ຈະຊອກ

---

[6] ເກດ ກຽດຕິສັກ, ການດໍາເນີນຄະດີແພ່ງ, ສະບັບປັບປຸງ, 2006, ໜ້າ 8

ໃຫ້ເຫັນການກະທຳຜິດເປັນຄືແນວໃດນັ້ນຈະຕ້ອງອີງໃສ່ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ນອກຈາກກົດໝາຍອາຍາແລ້ວຍັງມີກົດໝາຍອື່ນໆທີ່ກຳນົດຄວາມຜິດ ແລະ ໂທດທາງອາຍາ.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມີຈຸດປະສົງຢ່າງໜຶ່ງກໍຄືຊອກຫາຕົວຜູ້ກະທຳຜິດມາລົງໂທດຕາມກົດໝາຍ, ໝາຍຄວາມວ່າເມື່ອມີການກະທຳຜິດເກີດຂຶ້ນອົງການທີ່ມີສິດອຳນາດ ເຊັ່ນ ອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານຈະຕ້ອງໄດ້ນຳໃຊ້ທຸກມາດຕະການທີ່ເຫັນວ່າຈຳເປັນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍເພື່ອຊອກໃຫ້ເຫັນການກະທຳຜິດ ແລະ ຜູ້ກະທຳຜິດນັ້ນມາລົງໂທດ ແລະ ຫຼີກເວັ້ນຜູ້ບໍ່ໄດ້ກະທຳຜິດຖືກລົງໂທດ[7].

ໃນການດຳເນີນຄະດີອາຍາເພື່ອຊອກໃຫ້ເຫັນຄວາມຈິງອີກຢ່າງໜຶ່ງນັ້ນກໍຄືອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາຕ້ອງຊອກໃຫ້ເຫັນຜູ້ກະທຳຜິດຢ່າງຖືກຕ້ອງ ແລະ ເປັນຈິງ ພ້ອມກັນນັ້ນກໍຕ້ອງຮັບປະກັນຄວາມຍຸຕິທຳໃຫ້ແກ່ຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ ທັງນີ້ກໍເພື່ອສະກັດກັ້ນການກະທຳຜິດຕໍ່ກົດໝາຍອາຍາ (ມ 2 ກດຍ) ແລະ ປົກປ້ອງສິດຜົນປະໂຫຍດຂອງລັດ, ຂອງລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ (ມ 1 ກດຍ).

**3.2. ການດຳເນີນຄະດີອາຍາເພື່ອປົກປ້ອງສິດ ແລະ ເສລີພາບຂອງບຸກຄົນ**

ການດຳເນີນຄະດີອາຍານອກຈາກການຊອກໃຫ້ເຫັນຄວາມເປັນຈິງໃນຄະດີແລ້ວ ຈຸດປະສົງອີກຢ່າງໜຶ່ງກໍຄືການດຳເນີນຄະດີອາຍາກໍເພື່ອເປັນການປົກປ້ອງສິດ ແລະ ເສລີພາບຂອງບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີນັ້ນເອງ.

ແນວຄວາມຄິດໃນການປົກປ້ອງສິດ ແລະ ເສລີພາບຂອງບຸກຄົນໂດຍສະເພາະຜູ້ຖືກຫາ ຫຼື ຈຳເລີຍນີ້ໄດ້ຮັບການຮັບຮອງໄວ້ໃນຖະແຫຼງການສາກົນວ່າດ້ວຍສິດທິມະນຸດປີ 1948 (Universal Declaration of Human Rights, 1948) ໃນມາດຕາ 5 ວ່າ: "ບຸກຄົນໃດຈະຖືກທໍລະມານ ຫຼື ໄດ້ຮັບການປະຕິບັດ ຫຼື ລົງໂທດຢ່າງທາລຸນໂຫດຮ້າຍໄຮ້ມະນຸດສະທຳ ຫຼື ຕ່ຳຊ້າບໍ່ໄດ້" ແລະ ໃນມາດຕາ 9 ໄດ້ກຳນົດໄວ້ວ່າ "ບຸກຄົນໃດຈະຖືກຈັບກຸມຄຸມຂັງ ຫຼື ເນລະເທດໂດຍພະລະການບໍ່ໄດ້".

---

[7] ແສງທະວີ ອິນທະວົງ, ການເອົາຕົວບຸກຄົນໄວ້ໃນອຳນາດລັດໃນຊັ້ນກ່ອນການພິຈາລະນາຂອງສານ: ສຶກສາປຽບທຽບຕາມກົດໝາຍໄທ-ລາວ, ວິທະຍານິພົນນິຕິສາດມະຫາບັນດິດຄະນະນິຕິສາດມະຫາວິທະຍາໄລທຳມະສາດ, ພສ. 2548, ໜ້າ 2-3

ສ່ວນສົນທິສັນຍາສາກົນວ່າດ້ວຍສິດທິທາງພົນລະເມືອງ ແລະ ທາງການເມືອງ ປີ 1966 (International Covenant on Civil and Political Rights, 1966) ໄດ້ກຳນົດກ່ຽວກັບການຄຸ້ມຄອງສິດ ແລະ ເສລີພາບຂອງບຸກຄົນໄວ້ດັ່ງນີ້:

ມາດຕາ 9 ໄດ້ບັນຍັດໄວ້ວ່າ: "ທຸກຄົນມີສິດໃນເສລີພາບ ແລະ ຄວາມໝັ້ນຄົງຂອງຕົນ, ບຸກຄົນໃດຈະຖືກຈັບກຸມ ຫຼື ຄຸມຂັງໂດຍພະລະການບໍ່ໄດ້, ບຸກຄົນໃດຈະຖືກຕັດສິດເສລີພາບຂອງຕົນບໍ່ໄດ້ ຍົກເວັ້ນສາເຫດ ແລະ ອີງຕາມຂະບວນການທີ່ບັນຍັດໄວ້ໃນກົດໝາຍ", "ບຸກຄົນທີ່ຖືກຈັບຕົວ ຫຼື ຄຸມຂັງ ຈະຕ້ອງໄດ້ຮັບການແຈ້ງເຖິງເຫດຜົນໃນການຖືກຈັບຕົວ ແລະ ແຈ້ງຂໍ້ກ່າວຫາຕໍ່ຜູ່ກ່ຽວໂດຍໄວ". ໃນມາດຕາ 10 ໄດ້ບັນຍັດວ່າ: "ບຸກຄົນທີ່ຖືກຈຳກັດອິດສະລະພາບຕ້ອງໄດ້ຮັບການປະຕິບັດຢ່າງມີມະນຸດສະທຳ ແລະ ໄດ້ຮັບການເຄົາລົບໃນສັກສີແຫ່ງຄວາມເປັນມະນຸດ" ແລະ ສົນທິສັນຍາສາກົນອື່ນໆກ່ຽວກັບການຄຸ້ມຄອງສິດ ແລະ ເສລີພາບມະນຸດກໍໄດ້ບັນຍັດໄວ້ລັກສະນະດຽວກັນ.

ນອກຈາກນັ້ນລັດຖະທຳມະນູນແຫ່ງ ສປປ ລາວ ກໍໄດ້ບັນຍັດສິດຂອງພົນລະເມືອງໄວ້ໃນມາດຕາ 41 ວ່າ: "ພົນລະເມືອງລາວມີສິດຮ້ອງທຸກ, ຮ້ອງຟ້ອງ ແລະ ສະເໜີຄວາມເຫັນຕໍ່ອົງການທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມ ຫຼື ສິດ ແລະ ຜົນປະໂຫຍດສະເພາະຂອງຕົນ.

ຄຳຮ້ອງທຸກ, ຄຳຮ້ອງຟ້ອງ ແລະ ຄວາມເຫັນຂອງພົນລະເມືອງຕ້ອງໄດ້ຮັບການພິຈາລະນາ ແລະ ແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ" ແລະ ມາດຕາ 42 ໄດ້ກຳນົດວ່າ: "ພົນລະເມືອງລາວມີສິດໂດຍບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຮ່າງກາຍ, ກຽດສັກສີ ແລະ ເຄຫະສະຖານ. ພົນລະເມືອງລາວຈະບໍ່ຖືກຈັບຕົວ ຫຼື ກວດຄົ້ນເຄຫະສະຖານ ຖ້າຫາກບໍ່ມີຄຳສັ່ງຂອງໄອຍະການ ຫຼື ສານປະຊາຊົນ ເວັ້ນເສັຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ".

ການດຳເນີນຄະດີອາຍາເພື່ອຊອກໃຫ້ເຫັນການກະທຳຜິດນັ້ນ ບາງຄັ້ງກໍເຫັນວ່າມີຄວາມຈຳເປັນຈະຕ້ອງໄດ້ໃຊ້ມາດຕະການສະກັດກັ້ນທາງອາຍາ ເຊັ່ນ ການພາຕົວ, ການກັກຕົວ, ການຈັບຕົວ, ການກັກຂັງພາງ, ປ່ອຍຕົວພາງ , ຄຸມຕົວຢູ່ກັບທີ່ ແລະ ງົດໜ້າທີ່ຕຳແໜ່ງ (ມ 136 ກດຍ). ເຖິງຢ່າງໃດກໍຕາມ, ເມື່ອມີການນຳໃຊ້ມາດຕະການບັງຄັບທາງກົດໝາຍຕໍ່ກັບຜູ່ໃດຜູ່ໜຶ່ງແລ້ວ ຈຶ່ງຈຳເປັນຈະຕ້ອງໄດ້ມີການປົກປ້ອງສິດ ແລະ ເສລີພາບຂອງບຸກຄົນເຫຼົ່ານັ້ນເຊັ່ນກັນ ທັງນີ້ເນື່ອງມາຈາກແນວຄວາມຄິດທີ່ວ່າການດຳເນີນຄະດີອາຍາໃຫ້ສັນນິຖານໄວ້ກ່ອນວ່າຜູ່ຖືກຫາ ຫຼື ຈຳເລີຍ ຍັງເປັນຜູ່ບໍລິສຸດຈົນກວ່າຈະມີຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດວ່າເປັນຜູ່ກະທຳຜິດ ຈະຕ້ອງປະຕິບັດຕໍ່ບຸກຄົນຜູ່ນັ້ນຢ່າງເໝາະສົມ ແລະ ຈະປະຕິບັດຕໍ່ຜູ່ນັ້ນຄືກັນກັບນັກໂທດແມ່ນບໍ່ໄດ້ (ມ 11 ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ ແລະ ມ 15 ກດຍ). ການຈັບກຸມ ຫຼື ກັກຂັງຜູ່ຖືກຫາ ຫຼື ຈຳ

ເລີຍຈະຕ້ອງເປັນໄປຕາມບົດບັນຍັດຂອງກົດໝາຍ, ໝາຍຄວາມວ່າອົງການທີ່ມີສິດໜ້າທີ່ໃນການດໍາເນີນຄະດີອາຍາຕ້ອງຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ເຊັ່ນ ນໍາໃຊ້ວິທີການ ແລະ ມາດຕະການຕາມທີ່ໄດ້ກໍານົດໄວ້ໃນກົດໝາຍເທົ່ານັ້ນທັງນີ້ກໍເພື່ອເຮັດໃຫ້ເກີດຄວາມຍຸຕິທໍາແກ່ຜູ້ຖືກດໍາເນີນຄະດີ ແລະ ສັງຄົມ (ມ 1 ກດຍ).

ດັ່ງນັ້ນ, ຫຼັກການສໍາຄັນຂອງການດໍາເນີນຄະດີອາຍາ ຈະຕ້ອງຍຶດໝັ້ນແນວຄວາມຄິດໃນການປົກປ້ອງສິດ ແລະ ເສລີພາບຂອງປະຊາຊົນຄຽງຄູ່ກັບຫຼັກການປ້ອງກັນ ແລະ ປາບປາມອາຊະຍາກໍາ ທັງນີ້ກໍເພື່ອຮັບປະກັນບໍ່ໃຫ້ມີການລ່ວງລະເມີດສິດ ແລະ ເສລີພາບຂອງຜູ້ເຂົ້າຮ່ວມໃນການດໍາເນີນຄະດີ.

## 4. ຂັ້ນຕອນຂອງການດໍາເນີນຄະດີອາຍາ

ໃນການດໍາເນີນຄະດີອາຍາຊຶ່ງຖືເປັນຂະບວນການ ເພື່ອຊອກໃຫ້ເຫັນການກະທໍາຜິດ ແລະ ນໍາເອົາຜູ້ກະທໍາຜິດ ມາລົງໂທດຕາມກົດໝາຍນັ້ນໄດ້ແຍກອອກເປັນ 3 ຂັ້ນຕອນຄື ການດໍາເນີນຄະດີອາຍາໃນຂັ້ນຕອນຂອງການສືບສວນ-ສອບສວນ, ການດໍາເນີນຄະດີອາຍາໃນຂັ້ນຕອນຂອງການສັ່ງຟ້ອງ ແລະ ການດໍາເນີນຄະດີອາຍາໃນຂັ້ນຕອນຂອງການພິຈາລະນາຕັດສິນດັ່ງນີ້:

### 4.1. ການດໍາເນີນຄະດີອາຍາໃນຂັ້ນຕອນຂອງການສືບສວນ-ສອບສວນ

ການດໍາເນີນຄະດີອາຍາໃນຂັ້ນຕອນຂອງການສືບສວນ-ສອບສວນ ເປັນຂັ້ນຕອນຢູ່ໃນຄວາມຮັບຜິດຊອບຂອງອົງການສືບສວນ-ສອບສວນ ຊຶ່ງເປັນຂັ້ນຕອນຊອກໃຫ້ເຫັນການກະທໍາຜິດ ແລະ ຜູ້ກະທໍາຜິດທີ່ແທ້ຈິງມາລົງໂທດຕາມກົດໝາຍນັ້ນ ຈະເລີ່ມຕົ້ນດ້ວຍການອອກຄໍາສັ່ງເປີດການສືບສວນ-ສອບສວນ, ດໍາເນີນການສືບສວນ-ສອບສວນດ້ວຍການນໍາໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນຕ່າງໆຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ສະຫຼຸບສໍານວນຄະດີສົ່ງໃຫ້ອົງການໄອຍະການ ທັງໝົດເຫຼົ່ານີ້ເປັນການດໍາເນີນຄະດີອາຍາໃນຂັ້ນຕອນຂອງການສືບສວນ-ສອບສວນ.

### 4.2. ການດໍາເນີນຄະດີອາຍາໃນຂັ້ນຕອນຂອງການສັ່ງຟ້ອງ

ການດໍາເນີນຄະດີອາຍາໃນຂັ້ນຕອນຂອງການສັ່ງຟ້ອງ ເປັນການດໍາເນີນຄະດີອາຍາທີ່ຢູ່ໃນຄວາມຮັບຜິດຊອບຂອງອົງການໄອຍະການ ໝາຍຄວາມວ່າພາຍຫຼັງທີ່ອົງການສືບສວນ-ສອບສວນໄດ້ສະຫຼຸບສໍານວນຄະດີສົ່ງໄປຫາອົງການໄອຍະການແລ້ວ, ໃນເວລານັ້ນເປັນສິດອໍານາດຂອງອົງການໄອຍະການໃນການພິຈາລະນາສັ່ງຟ້ອງ ຫຼື ບໍ່ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ຫຼື ຖ້າຫາກອົງການໄອຍະການເຫັນວ່າມີຄວາມຈໍາເປັນຈະຕ້ອງໄດ້ດໍາເນີນການສືບສວນ-ສອບສວນເພີ່ມເຕີມ, ອົງການໄອຍະການອາດຈະສົ່ງປະເດັນໄປໃຫ້ອົງການສືບສວນ-ສອບສວນເພື່ອສືບສວນ-ສອບສວນເພີ່ມເຕີມຕາມປະເດັນດັ່ງກ່າວ.

ເຖິງຢ່າງໃດກໍຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາຈະບັນຍັດກ່ຽວກັບການສືບສວນ-ສອບສວນໃຫ້ເປັນສິດອຳນາດຂອງອົງການສືບສວນ-ສອບສວນ ແລະ ການສັ່ງຟ້ອງເປັນສິດອຳນາດຂອງອົງການໄອຍະການກໍຕາມ ແຕ່ການດຳເນີນຄະດີອາຍາ ຊຶ່ງເລີ່ມຕົ້ນຈາກການສືບສວນ-ສອບສວນໄປຈົນຮອດການສັ່ງຟ້ອງຜູ້ກະທຳຜິດຂຶ້ນສານ ເປັນການດຳເນີນຄະດີກ່ອນການສັ່ງຟ້ອງນັ້ນເອງ ເນື່ອງຈາກວ່າໃນການເລີ່ມຕົ້ນຂອງການດຳເນີນຄະດີອາຍາ ບໍ່ວ່າຈະເປັນການອອກຄຳສັ່ງເປີດການສືບສວນ-ສອບສວນ, ການດຳເນີນການສືບສວນ-ສອບສວນ ແລະ ການນຳໃຊ້ມາດຕະການຕ່າງໆທາງດ້ານກົດໝາຍ ເຊັ່ນ ວິທີການການສືບສວນ-ສອບສວນ ຫຼື ມາດຕະການສະກັດກັ້ນກໍຕ້ອງຢູ່ພາຍໃຕ້ການຕິດຕາມກວດກາ ແລະ ຢູ່ໃນຄວາມຮັບຜິດຊອບຂອງອົງການໄອຍະການ ໝາຍຄວາມວ່າອົງການສືບສວນ-ສອບສວນອອກຄຳສັ່ງເປີດການສືບສວນ-ສອບສວນ, ດຳເນີນການສືບສວນ-ສອບສວນ ແລະ ອື່ນໆກໍຕ້ອງໄດ້ລາຍງານໃຫ້ຫົວໜ້າອົງການໄອຍະການຊາບ ຫຼື ແມ່ນແຕ່ຈະຕໍ່ໄລຍະເວລາຂອງການສືບສວນ-ສອບສວນ ຫຼື ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງກໍຕ້ອງໄດ້ຂໍອະນຸຍາດຈາກຫົວໜ້າອົງການໄອຍະການເສັຍກ່ອນ. ດັ່ງນັ້ນ, ການດຳເນີນຄະດີອາຍາໃນຂັ້ນຕອນຂອງການສືບສວນ-ສອບສວນ ແລະ ການດຳເນີນຄະດີອາຍາໃນຂັ້ນຕອນຂອງການສັ່ງຟ້ອງເປັນຂັ້ນຕອນຄວາມຮັບຜິດຊອບຂອງອົງການໄອຍະການນັ້ນເອງ.

## ແຜນວາດທີ່ໄດ້ສະແດງໃຫ້ເຫັນການດຳເນີນຄະດີອາຍາ
## ໃນຂັ້ນຕອນຂອງອົງການສືບສວນ-ສອບສວນ ແລະ ອົງການໄອຍະການ

| ການດຳເນີນຄະດີໃນຂັ້ນຕອນຂອງອົງການສືບສວນ-ສອບສວນ |
|---|

- ອອກຄຳສັ່ງເປີດການ ສ[4] (ມ 84 ແລະ ມ 91 ກດຍ) ຫຼື ອອກຄຳສັ່ງບໍ່ເປີດການ ສ[4] (ມ 93 ກດຍ)
- ດຳເນີນການ ສ[4] ໂດຍການນຳໃຊ້ວິທີການ ສ[4] (ມ 113-ມ 134 ກດຍ) ແລະ ມາດຕະການສະກັດກັ້ນ (ມ 135 -145 ກດຍ)
- ໂຈະການດຳເນີນຄະດີ (ມ 146 ກດຍ) ຫຼື ຊັດມ້ຽນຄະດີ (ມ 148 ກດຍ)
- ສະຫຼຸບການ ສ[4] ສົ່ງໃຫ້ອົງການໄອຍະການ (ມ 150 ກດຍ)

| ການດຳເນີນຄະດີໃນຂັ້ນຕອນຂອງອົງການໄອຍະການ |
|---|

- ປ່ຽນແປງ, ເພີ່ມເຕີມ, ຍົກເລີກ ຫຼື ລົບລ້າງມາດຕະການສະກັດກັ້ນ (ມ 152 ຂໍ້ 4 ກດຍ)
- ສົ່ງສຳນວນຄືນໃຫ້ອົງການ ສ[4] (ມ 152 ຂໍ້ 1 ກດຍ)
- ໂຈະການດຳເນີນຄະດີ (ມ 152 ຂໍ້ 2 ກດຍ)
- ຊັດມ້ຽນຄະດີ (ມ 152 ຂໍ້ 3 ກດຍ)
- ບໍ່ສົ່ງໃຫ້ສານກໍລະນີເດັກກະທຳຜິດ (ມ 155 ກດຍ)
- ສັ່ງຟ້ອງຂຶ້ນສານ (ມ 152 ຂໍ້ 5 ແລະ ມ 154 ກດຍ)

### 4.3. ການດຳເນີນຄະດີອາຍາໃນຂັ້ນຕອນຂອງການພິຈາລະນາຕັດສີນ

ການດຳເນີນຄະດີອາຍາໃນຂັ້ນຕອນຂອງການພິຈາລະນາຕັດສີນ ເປັນການດຳເນີນຄະດີອາຍາຢູ່ໃນຂັ້ນຕອນຂອງສານ, ຕາມກົດໝາຍຂອງ ສປປ ລາວ ໄດ້ກຳນົດໃຫ້ມີແຕ່ສານເທົ່ານັ້ນຈຶ່ງມີສິດອຳນາດໃນການພິຈາລະນາພິພາກສາຄະດີອາຍາໄດ້(ມ 17 ກດຍ ແລະ ມ 2 ກປຊ). ການດຳເນີນຄະດີອາຍາຂອງສານຈະດຳເນີນໄດ້ກໍຕໍ່ເມື່ອມີຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການເທົ່ານັ້ນ ຖ້າບໍ່ມີຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການແລ້ວ ສານຈະນຳເອົາຄະດີອາຍາອອກມາພິຈາລະນາໂດຍລຳພັງໃຈແມ່ນບໍ່ໄດ້ (ມ 164 ກດຍ). ດັ່ງນັ້ນ, ພາຍຫຼັງທີ່ຫົວໜ້າອົງການໄອຍະການໄດ້ສັ່ງຟ້ອງຈຳເລີຍຂຶ້ນສານແລ້ວ ຈຶ່ງເປັນສິດອຳນາດຂອງສານໃນການຄົ້ນຄວ້າ ແລະ ການນຳເອົາຄະດີອອກພິຈາລະນາຕັດສີນ (ມ 167 ກດຍ).

## ແຜນວາດທີ່ໄດ້ສະແດງໃຫ້ເຫັນ
## ການດຳເນີນຄະດີອາຍາໃນຂັ້ນຕອນຂອງການພິຈາລະນາຕັດສິນ

**ການດຳເນີນຄະດີຢູ່ສານຂັ້ນຕົ້ນ**

- ພິຈາລະນາຕັດສິນພາຍໃນ 30 ວັນ (ມ 165 ວັກ 1 ກດຍ) ຫຼື ພາຍໃນ 48 ຊົ່ວໂມງ ນັບແຕ່ໄດ້ຮັບຄຳສັ່ງຟ້ອງ (ມ 165 ວັກ 2 ກດຍ);
- ຄົ້ນຄວ້າສຳນວນຄະດີ (ມ 167 ກດຍ);
- ສົ່ງສຳນວນຄະດີຄືນໃຫ້ອົງການໄອຍະການເພື່ອ ສ4 ຫຼື ສັ່ງຟ້ອງເພີ່ມເຕີມ (ມ 167 ວັກ 1 ຂໍ້ 1, 2 ກດຍ);
- ຕົກລົງເວລາ ແລະ ກຳນົດຄະດີອອກພິຈາລະນາ (ມ 167 ວັກ 1 ຂໍ້ 3 ແລະ ມ 169 ກດຍ);
- ເປີດປະຊຸມສານ (ມ 185-188 ກດຍ) ແລະ ດຳເນີນການໄຕ່ສວນ (ມ 192-ມ 199 ກດຍ) ຫຼື ອາດຈະມີການໂຈະ ຫຼື ເລື່ອນການໄຕ່ສວນ (ມ 181 ກດຍ);
- ໂຕ້ຖຽງໃນທີ່ປະຊຸມສານ (ມ 202 ກດຍ);
- ພິຈາລະນາຄະດີໃນຫ້ອງປະຊຸມລັບ (ມ 204 ກດຍ);
- ອ່ານຄຳຕັດສິນໃນທີ່ປະຊຸມສານ (ມ 206 ກດຍ).

**ການດຳເນີນຄະດີຢູ່ສານຂັ້ນອຸທອນ**

- ພິຈາລະນາພິພາກສາພາຍໃນກຳນົດ 45 ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ (ມ 216 ກດຍ);
- ດຳເນີນຄືກັນກັບສານຂັ້ນຕົ້ນ (ມ 167, ມ 170-ມ 207 ກດຍ).

**ການດຳເນີນຄະດີຢູ່ສານຂັ້ນລົບລ້າງ**

- ພິຈາລະນາພິພາກສາຄະດີພາຍໃນກຳນົດ 30 ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ (ມ 228 ກດຍ)

## 5. ລະບົບຂອງການດຳເນີນຄະດີອາຍາ

ໂດຍທົ່ວໄປແລ້ວລະບົບການດຳເນີນຄະດີອາຍາມີສອງລະບົບຄື ການດຳເນີນຄະດີອາຍາໃນລະບົບໄຕ່ສວນ ແລະ ການດຳເນີນຄະດີອາຍາໃນລະບົບກ່າວຫາ ຊຶ່ງເປັນລະບົບການດຳເນີນຄະດີອາຍາທີ່ມີມາ ແລະ ເກົ່າແກ່ພໍສົມຄວນ ແລະ ແຕ່ລະລະບົບມີເນື້ອໃນ, ຫຼັກການ ແລະ ມີຄວາມເປັນມາແຕກຕ່າງກັນ, ເຖິງຢ່າງໃດກໍຕາມໃນປັດຈຸບັນນີ້ການດຳເນີນຄະດີອາຍາໃນລະບົບໄຕ່ສວນ ແລະ ການດຳເນີນຄະດີອາຍາໃນລະບົບກ່າວຫາບໍ່ໄດ້ເປັນການດຳເນີນຄະດີອາຍາສະເພາະຂອງປະເທດໃດປະທດໜຶ່ງ ແຕ່ໄດ້ມີການພັດທະນາ ແລະ ໄດ້ມີການປະສົມປະສານການດຳເນີນຄະດີອາຍາຂອງສອງລະບົບນີ້ເຂົ້າດ້ວຍກັນ ຊຶ່ງການດຳເນີນຄະດີອາຍາແຕ່ລະລະບົບມີເນື້ອໃນດັ່ງນີ້:

### 5.1. ການດຳເນີນຄະດີອາຍາໃນລະບົບໄຕ່ສວນ

ການດຳເນີນຄະດີອາຍາໃນລະບົບໄຕ່ສວນ ແມ່ນການດຳເນີນຄະດີອາຍາຂອງບັນດາປະເທດທີ່ໃຊ້ລະບົບປະມວນ ຫຼື ເປັນກົດໝາຍທີ່ບັນຍັດເປັນລາຍລັກອັກສອນ (Civil Law) ໂດຍສະເພາະແມ່ນບັນດາປະເທດໃນພາກພື້ນເອີຣົບ ຊຶ່ງໄດ້ຮັບອິດທິພົນມາຈາກກົດໝາຍໂຣມັນ. ການດຳເນີນຄະດີອາຍາໃນລະບົບໄຕ່ສວນນີ້ ກົດໝາຍຈະບັນຍັດໃຫ້ສານເປັນອົງການທີ່ມີບົດບາດໃນການດຳເນີນຄະດີອາຍາ ໝາຍຄວາມວ່າສານນອກຈາກຈະໃຫ້ຄວາມສຳຄັນໃນການປົກປ້ອງສິດ ແລະ ເສລີພາບຂອງຜູ້ຖືກຫາ ຫຼື ຈຳເລີຍ ແລະ ຜູ້ເຂົ້າຮ່ວມອື່ນໆໃນການດຳເນີນຄະດີອາຍາແລ້ວ ຍັງເປັນຜູ້ມີບົດບາດ ແລະ ມີສ່ວນສຳຄັນໃນການຊອກຫາພະຍານຫຼັກຖານ ແລະ ຊອກຫາຄວາມເປັນຈິງໃນຄະດີອີກດ້ວຍ.

ໃນເມື່ອກ່ອນການດຳເນີນຄະດີອາຍາໃນລະບົບໄຕ່ສວນ ບໍ່ໄດ້ມີການແຍກການດຳເນີນຄະດີກ່ອນການສັ່ງຟ້ອງ ແລະ ພາຍຫຼັງການສັ່ງຟ້ອງອອກຈາກກັນແຕ່ຢ່າງໃດ, ການດຳເນີນການສືບສວນ-ສອບສວນ, ການສັ່ງຟ້ອງ ແລະ ການພິຈາລະນາພິພາກສາຄະດີເປັນຂັ້ນຕອນດຽວກັນ ແລະ ອຳນາດດັ່ງກ່າວຕົກຢູ່ໃນມືຂອງສານ ຫຼື ຜູ້ພິພາກສາແຕ່ພຽງຜູ້ດຽວ ໝາຍຄວາມວ່າຜູ້ພິພາກສາເຮັດໜ້າທີ່ສືບສວນ-ສອບສວນ, ໜ້າທີ່ສັ່ງຟ້ອງຜູ້ຖືກຫາ ແລະ ທັງເຮັດໜ້າທີ່ພິພາກສາຄະດີ. ການດຳເນີນຄະດີໃນລະບົບນີ້ ຈຶ່ງເປັນການດຳເນີນຄະດີລະຫວ່າງຜູ້ດຳເນີນຄະດີກັບຜູ້ຖືກດຳເນີນຄະດີ. ດັ່ງນັ້ນ, ຜູ້ຖືກດຳເນີນຄະດີ ນອກຈາກຈະເປັນຜູ້ຖືກໄຕ່ສວນແລ້ວແມ່ນບໍ່ມີສິດຫຍັງເລີຍໃນການຕໍ່ສູ້ຄະດີ. ພາຍຫຼັງມາຈຶ່ງໄດ້ມີການພັດທະນາມາເລື້ອຍໆ ແລະ ໃນທີ່ສຸດກໍໄດ້ມີການແຍກຜູ້ທີ່ມີໜ້າທີ່ສັ່ງຟ້ອງກໍຄືໄອຍະການ ແລະ ຜູ້ພິຈາລະນາພິພາກສາຄະດີກໍຄືສານ ຫຼື ຜູ້ພິພາກສາອອກຈາກກັນ[8].

---

[8] ຄະນິດ ນະ ນະຄອນ, ກົດໝາຍວິທີພິຈາລະນາຄວາມອາຍາ ສະບັບປັບປຸງໃໝ່ ແລະ ແກ້ໄຂເພີ່ມເຕີມ, ພິມຄັ້ງທີ 7, ສຳນັກພິມວິນຍູຊົນຈຳກັດ, ພສ. 2549, ໜ້າ 56

ເຖິງຢ່າງໃດກໍຕາມເຖິງວ່າຈະມີການແຍກຜູ່ທີ່ມີໜ້າທີ່ສັ່ງຟ້ອງ ແລະ ຜູ່ມີໜ້າທີ່ພິພາກສາຄະດີອອກຈາກກັນ ແຕ່ການດໍາເນີນອາຍາໃນລະບົບໄຕ່ສວນນີ້ສານຍັງເປັນຜູ່ເຮັດບົດບາດຫຼັກ ແລະ ເປັນເຈົ້າການໃນການນໍາພາການໄຕ່ສວນ ແລະ ຊອກຫາຫຼັກຖານ, ການທີ່ຈະໄດ້ຄວາມຈິງ ຫຼື ໄດ້ຕົວຜູ່ກະທໍາຜິດຕົວຈິງມາລົງໂທດຕາມກົດໝາຍ ຫຼື ບໍ່ນັ້ນຂຶ້ນຢູ່ກັບການເຮັດບົດບາດ ແລະ ໜ້າທີ່ຂອງສານເປັນສໍາຄັນ, ສ່ວນອົງການໄອຍະການ, ທະນາຍຄວາມ, ຈໍາເລີຍ ແລະ ຜູ່ເຂົ້າຮ່ວມອື່ນໆນັ້ນເປັນພຽງຜູ່ຊ່ວຍສານໃນການຊອກຫາຄວາມເປັນຈິງເທົ່ານັ້ນ.

ການພິສູດໃຫ້ເຫັນການກະທໍາຜິດ ແລະ ຜູ່ກະທໍາຜິດຕົວຈິງໃນການດໍາເນີນຄະດີອາຍາໃນລະບົບນີ້ຈຶ່ງຢູ່ບົນພື້ນຖານແນວຄວາມຄິດທີ່ວ່າຜູ່ພິພາກສາ ຫຼື ສານຈະເປັນຜູ່ພິສູດໃຫ້ໄດ້ວ່າຈໍາເລີຍເປັນຜູ່ກະທໍາຜິດ ຫຼື ເປັນຜູ່ບໍລິສຸດດ້ວຍການຫາຫຼັກຖານມາຜູກມັດເພື່ອມາຢັ້ງຢືນການກະທໍາຜິດ ແລະ ຫາຫຼັກຖານແກ້ມັດເພື່ອມາພິສູດຄວາມບໍລິສຸດຂອງຈໍາເລີຍໄປພ້ອມໆກັນ.

**ແຜນວາດທີ່ສະແດງໃຫ້ເຫັນນິຕິສໍາພັນລະຫວ່າງອົງການດໍາເນີນຄະດີ ແລະ ຜູ່ເຂົ້າຮ່ວມໃນລະບົບໄຕ່ສວນ**




### 5.2. ການດໍາເນີນຄະດີອາຍາໃນລະບົບກ່າວຫາ

ການດໍາເນີນຄະດີອາຍາໃນລະບົບກ່າວຫາ (Adversarial system) ແມ່ນການດໍາເນີນຄະດີອາຍາ ໂດຍທີ່ຝ່າຍໜຶ່ງເປັນຜູ່ກ່າວຫາວ່າອີກຝ່າຍໜຶ່ງເປັນຜູ່ກະທໍາຜິດທາງອາຍາ ຊຶ່ງຝ່າຍທີ່ກ່າວຫານີ້ເອີ້ນວ່າ ໄອຍະການ ແລະ ຝ່າຍທີ່ຖືກກ່າວຫານີ້ເອີ້ນວ່າ ຜູ່ຖືກຫາ ຫຼື ຈໍາເລີຍ ຊຶ່ງເປັນການດໍາເນີນຄະດີອາຍາຂອງບັນດາປະເທດທີ່ໃຊ້ລະບົບຄອມມອນລໍ ຫຼື ລະບົບຄໍາພິພາກສາ (Common Law) ໂດຍສະເພາະ ແມ່ນລະບົບຂອງປະເທດອັງກິດ ແລະ ປະເທດ

ສະຫະລັດອາເມລິກາເປັນຕົ້ນແບບ ຊຶ່ງໄດ້ຮັບອິດທິພົນມາຈາກລະບົບແອັງໂກລ-ແຊັກຊອນ (Anglo-Saxon).

ການດຳເນີນຄະດີອາຍາໃນລະບົບດັ່ງກ່າວສານບໍ່ມີສິດ ແລະ ໜ້າທີ່ໃນການຊອກຂໍ້ມູນຫຼັກຖານ, ສ່ວນການຊອກຫາຂໍ້ມູນຫຼັກຖານແມ່ນສິດ ແລະ ໜ້າທີ່ຂອງໂຈດ ແລະ ຈຳເລີຍ ຫຼື ທະນາຍຄວາມຂອງຈຳເລີຍ. ສານ ຫຼື ຜູ້ພິພາກສາຈະເຮັດໜ້າທີ່ເປັນກາງ ຫຼື ເປັນກຳມະການ ເປັນຜູ້ຄວບຄຸມລະບຽບການໃນການດຳເນີນຄະດີໃນທີ່ປະຊຸມສານ ເພື່ອໃຫ້ການດຳເນີນຄະດີອາຍາເປັນໄປຕາມລະບຽບກົດໝາຍ ແລະ ເປັນຜູ້ຊັ່ງຊາ ຕີລາຄາຂໍ້ມູນຫຼັກຖານຕ່າງໆທີ່ໂຈດ ແລະ ຈຳເລີຍໄດ້ນຳສະເໜີ. ສະນັ້ນ, ໃນການຊອກຫາຂໍ້ມູນຫຼັກຖານເພື່ອມາຜູກມັດຈຳເລີຍນັ້ນ ຈຶ່ງແມ່ນໜ້າທີ່ຂອງອົງການໄອຍະການ, ສ່ວນບົດບາດໃນການຫາຂໍ້ມູນຫຼັກຖານເພື່ອມາແກ້ມັດ ຫຼື ລົບລ້າງຂໍ້ມູນຫຼັກຖານຂອງໄອຍະການ ຢັ້ງຢືນວ່າຕົນເປັນຜູ້ບໍລິສຸດນັ້ນ ຈຶ່ງເປັນໜ້າທີ່ຂອງທະນາຍຄວາມຂອງຈຳເລີຍ ຫຼື ຈຳເລີຍນັ້ນເອງ, ໝາຍຄວາມວ່າການດຳເນີນຄະດີອາຍາໃນລະບົບນີ້ເປັນການຕໍ່ສູ້ກັນລະຫວ່າງໂຈດ ແລະ ຈຳເລີຍ (Accusatorial system) ຕໍ່ໜ້າສານ ຫຼື ຜູ້ພິພາກສາ.

ປະເດັນຕົ້ນຕໍຂອງການດຳເນີນຄະດີໃນລະບົບນີ້ ກໍຄືການໃຫ້ສິດແກ່ຜູ້ຖືກດຳເນີນຄະດີໄດ້ຢ່າງເຕັມສ່ວນ ແລະ ຖືວ່າທັງໂຈດ ແລະ ຈຳເລີຍມີຄວາມສະເໝີພາບກັນໃນການຕໍ່ສູ້ຄະດີຕາມຫຼັກການອາວຸດເທົ່າທຽມກັນ (Equal Arm). ໃນປະເທດສະຫະລັດອາເມລິກາເມື່ອມີການແຍກໄອຍະການອອກໃຫ້ເປັນໂຈດໃນການສັ່ງຟ້ອງ ຈຶ່ງເປັນໜ້າທີ່ຂອງໂຈດທີ່ຈະຕ້ອງໄດ້ຊອກຫາຫຼັກຖານມາເອົາຜິດກັບຈຳເລີຍ ສ່ວນຈຳເລີຍຈຶ່ງມີສິດບໍ່ໃຫ້ການ. ດັ່ງນັ້ນ, ການດຳເນີນຄະດີໃນລະບົບນີ້ຜູ້ຖືກຫາ ຫຼື ຈຳເລີຍຈຶ່ງມີສິດມິດງຽບ ຫຼື ບໍ່ໃຫ້ການໃດໆກໍໄດ້ (Right to silent) ແລະ ຜູ້ດຳເນີນຄະດີບໍ່ມີສິດຈະບັງຄັບໃຫ້ຜູ້ຖືກຫາ ຫຼື ຈຳເລີຍຕ້ອງເວົ້າຄວາມຈິງ ໝາຍຄວາມວ່າຜູ້ຖືກຫາ ຫຼື ຈຳເລີຍຫາກໃຫ້ການເທັດຈະບໍ່ຖືກດຳເນີນຄະດີອາຍາຕໍ່ກັບຄຳໃຫ້ການເທັດຂອງຕົນນັ້ນ.

ດັ່ງນັ້ນ, ການດຳເນີນຄະດີອາຍາໃນລະບົບດັ່ງກ່າວ ບົດບາດໃນການຄົ້ນຫາຄວາມຈິງຈຶ່ງແມ່ນໜ້າທີ່ຂອງໂຈດ ແລະ ຈຳເລີຍ ສ່ວນບົດບາດໃນການຄວບຄຸມກະຕິກາເພື່ອເຮັດໃຫ້ການດຳເນີນຄະດີອາຍາເປັນໄປຕາມກົດໝາຍຈຶ່ງແມ່ນສານນັ້ນເອງ.

**ແຜນວາດທີ່ສະແດງໃຫ້ເຫັນນິຕິສຳພັນລະຫວ່າງອົງການດຳເນີນຄະດີ ແລະ ຜູ້ເຂົ້າຮ່ວມໃນລະບົບກ່າວຫາ**




**5.3. ການດຳເນີນຄະດີອາຍາຕາມກົດໝາຍຂອງ ສປປ ລາວ**

ກ່ອນປະກາດໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີອາຍາປີ 1990, ກ່ຽວກັບການດຳເນີນການສືບສວນ-ສອບສວນ, ການສັ່ງຟ້ອງ ແລະ ການຕັດສິນຜູ້ກະທຳຜິດທາງອາຍານັ້ນສ່ວນຫຼາຍໃນທາງປະຕິບັດນັ້ນໄດ້ເນັ້ນໜັກໄປໃນລະບົບໄຕ່ສວນເປັນສ່ວນໃຫຍ່ ຊຶ່ງຈະເຫັນໄດ້ຈາກການກຳນົດໃນຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 53/ນຍ, ລົງວັນທີ 15/10/1976 ກ່ຽວກັບການຈັບຕົວ, ການສືບສວນ ແລະ ການຕັດສິນຜູ້ກະທຳຜິດຈຸດປະສົງຕົ້ນຕໍກໍເພື່ອປາບປາມ ແລະ ລົງໂທດຜູ້ທີ່ທໍລະຍົດຕໍ່ປະເທດຊາດ, ຕໍ່ການປະຕິວັດ ແລະ ການກະທຳຜິດອື່ນຕໍ່ຄວາມບໍ່ສະຫງົບພາຍໃນປະເທດ.

ພາຍຫຼັງ ສປປ ລາວ ປະກາດໃຊ້ກົດໝາຍໂດຍສະເພາະແມ່ນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ມີການປັບປຸງມາຈົນມາຮອດປັດຈຸບັນ ແຕ່ການດຳເນີນຄະດີອາຍາຂອງລາວກໍຍັງເນັ້ນໜັກໄປໃນລະບົບໄຕ່ສວນຢູ່ ດັ່ງຈະເຫັນໄດ້ຈາກການກຳນົດໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ເລີ່ມຕັ້ງແຕ່ເປີດປະຊຸມສານໄປຈົນຮອດສານລົງຄຳຕັດສິນ, ບົດບາດສຳຄັນໃນການນຳພາການໄຕ່ສວນລວມທັງການຄວບຄຸມການໄຕ່ສວນໃນທີ່ປະຊຸມສານເປັນສິດອຳນາດຂອງປະທານຄະນະສານ (ມ 192 ກດຍ) ໃນທີ່ປະຊຸມສານປະທານຄະນະສານເປັນຜູ້ໄຕ່ສວນ ແລະ ສອບຖາມຜູ້ເຂົ້າຮ່ວມໃນການດຳເນີນຄະດີກ່ອນສ່ວນຜູ້ອື່ນໆ ເຊັ່ນ ຄະນະສານ, ພະນັກງານໄອຍະການ, ທະນາຍ

ຄວາມ ຫຼື ຜູ້ປົກປ້ອງອື່ນຈະສອບຖາມໄດ້ ຈະຕ້ອງໄດ້ຮັບອະນຸຍາດຈາກປະທານຄະນະສານເສັຍກ່ອນ (ມ 194 ກດຍ). ການໄຕ່ສວນຈຳເລີຍ (ມ 195 ກດຍ), ການໄຕ່ສວນພະຍານ (ມ 197 ກດຍ) ຫຼື ແມ່ນແຕ່ການໄຕ່ສວນຜູ້ເຂົ້າຮ່ວມໃນການດຳເນີນຄະດີບໍ່ວ່າຈະເປັນການໄຕ່ສວນຜູ້ຖືກເສັຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນກໍຍັງແມ່ນສິດອຳນາດຂອງຄະນະສານນັ້ນເອງ (ມ 196 ກດຍ).

ນອກຈາກນັ້ນ, ສິ່ງທີ່ສະແດງໃຫ້ເຫັນການດຳເນີນຄະດີອາຍາຂອງລາວເນັ້ນໜັກໄປໃນລະບົບໄຕ່ສວນອີກຢ່າງໜຶ່ງ ກໍຄືການສັ່ງຟ້ອງຜູ້ຖືກຫາຂອງຫົວໜ້າອົງການໄອຍະການຕໍ່ສານນັ້ນ ຫົວໜ້າອົງການໄອຍະການຕ້ອງສົ່ງທັງສຳນວນຄະດີ ແລະ ຂອງກາງໃຫ້ສານພິຈາລະນາ (ມ 154 ວັກທ້າຍ ກດຍ) ຊຶ່ງສະແດງໃຫ້ເຫັນຄວາມຕໍ່ເນື່ອງຂອງສຳນວນຄະດີລະຫວ່າງອົງການໄອຍະການໄປຫາສານ. ນອກຈາກນັ້ນເຖິງແມ່ນວ່າຈຳເລີຍຈະເສັຍຊີວິດໃນເວລາດຳເນີນຄະດີຢູ່ສານກໍຕາມ, ສານກໍສາມາດສືບຕໍ່ດຳເນີນຄະດີຈົນສິ້ນສຸດຂະບວນການໄດ້ເຊັ່ນກັນ ທັງນີ້ກໍເນື່ອງຈາກວ່າການພິຈາລະນາຄະດີ ເພື່ອຊອກຫາໃຫ້ເຫັນຄວາມຈິງຂອງສານນັ້ນເອງ (ມ 6 ວັກ 1 ຂໍ້ 8 ກດຍ).

ເຖິງຢ່າງໃດກໍຕາມ ໃນປັດຈຸບັນການດຳເນີນຄະດີອາຍາຂອງລາວຈະເນັ້ນໜັກໄປໃນການດຳເນີນຄະດີໃນລະບົບໄຕ່ສວນກໍຕາມ ແຕ່ກໍໄດ້ນຳເອົາການດຳເນີນຄະດີໃນລະບົບກ່າວຫາມາໃຊ້ບາງກໍລະນີ ເຊັ່ນ ກົດໝາຍກຳນົດໃຫ້ສານໃຫ້ເວລາແກ່ການໂຕ້ຖຽງ ແລະ ສ້າງເງື່ອນໄຂໃຫ້ຜູ້ເຂົ້າຮ່ວມໄດ້ສະເໜີຄຳເຫັນຂອງຕົນ ໃນນີ້ໂຈດ, ຈຳເລີຍ, ທະນາຍຄວາມ ຫຼື ຜູ້ປົກປ້ອງ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາອື່ນໆໄດ້ມີການຊີ້ແຈງ, ໂຕ້ຖຽງກ່ຽວກັບການກະທຳຜິດ ແລະ ຄວາມຮັບຜິດຊອບທາງອາຍາຂອງຈຳເລີຍ ໂດຍອົງການໄອຍະການເປັນໂຈດ ແລະ ໃຫ້ຈຳເລີຍ ຫຼື ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນແກ້ຂໍ້ກ່າວຫາຕາມລະບຽບການໂຕ້ຖຽງໃນທີ່ປະຊຸມສານ (ມ 201 ແລະ ມ 202 ກດຍ).

**6. ຫຼັກການພື້ນຖານຂອງການດຳເນີນຄະດີອາຍາ**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ກຳນົດຫຼັກການພື້ນຖານຂອງການດຳເນີນຄະດີອາຍາໄວ້ 16 ຫຼັກການດັ່ງນີ້:

**6.1. ຫຼັກການນິຕິທຳ**

ຫຼັກການນິຕິທຳ ເປັນຫຼັກການທີ່ກຳນົດໃຫ້ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາ ເຊັ່ນ ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ, ຜູ້ພິພາກສາ ແລະ ຜູ້ເຂົ້າຮ່ວມອື່ນໆ ຕ້ອງເຄົາລົບ ແລະ ປະຕິບັດຕາມກົດໝາຍຢ່າງເຄັ່ງຄັດ ແລະ ປະຕິບັດຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຂອງສານຢ່າງເຂັ້ມງວດ (ມ 11 ກດຍ).

### 6.2. ຫຼັກການບໍ່ໃຫ້ລ່ວງລະເມີດສິດ ແລະ ເສລີພາບຂອງພົນລະເມືອງ

ຫຼັກການດັ່ງກ່າວ ນີ້ເປັນຫຼັກການຂອງການດຳເນີນຄະດີອາຍາ ຊຶ່ງກຳນົດໃຫ້ອົງການທີ່ມີສິດອຳນາດໃນການດຳເນີນຄະດີນຳໃຊ້ມາດຕະການທາງກົດໝາຍ ໂດຍສະເພາະແມ່ນການນຳໃຊ້ມາດຕະການສະກັດກັ້ນຈະຕ້ອງເປັນໄປຕາມລະບຽບກົດໝາຍ. ໃນກໍລະນີຫາກການນຳໃຊ້ມາດຕະການດັ່ງກ່າວບໍ່ເປັນໄປຕາມລະບຽບກົດໝາຍ ຈະຕ້ອງໄດ້ຮັບຜິດຊອບຕໍ່ການລະເມີດດັ່ງກ່າວ (ມ 12 ກດຍ). ຫຼັກການດັ່ງກ່າວກໍເພື່ອຮັບປະກັນບໍ່ໃຫ້ສິດຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍຖືກລ່ວງລະເມີດຈາກການໃຊ້ອຳນາດຂອງລັດໃນທາງທີ່ບໍ່ຖືກຕ້ອງ ຊຶ່ງເປັນສິດທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງລັດຖະທຳມະນູນ ແລະ ມາດຕາ 9 ຂອງສົນທິສັນຍາສາກົນວ່າດ້ວຍສິດທິທາງພົນລະເມືອງ ແລະ ທາງການເມືອງ ປີ 1966. ດ້ວຍເຫດນັ້ນ, ກ່ອນທີ່ເຈົ້າໜ້າທີ່ສືບສວນ-ສອບສວນຈະນຳໃຊ້ມາດຕະການສະກັດກັ້ນ ໂດຍສະເພາະການຈັບຕົວ ຫຼື ກັກຂັງ ຈະຕ້ອງໄດ້ຮັບອະນຸຍາດຈາກຫົວໜ້າອົງການໄອຍະການ ຫຼື ສານເສຍກ່ອນ.

### 6.3. ຫຼັກການຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ

ຫຼັກການນີ້ກໍເປັນຫຼັກການທີ່ກຳນົດໃຫ້ສານຈະຕ້ອງປະຕິບັດຕໍ່ຜູ້ຖືກຫາ ຫຼື ຈຳເລີຍ ແລະ ຜູ້ເຂົ້າຮ່ວມອື່ນໆດ້ວຍຄວາມສະເໝີພາບກັນໂດຍບໍ່ມີການຈຳແນກເພດ, ເຊື້ອຊາດ, ສັນຊາດ, ຊົນເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ. ດັ່ງນັ້ນ, ສານຈະຕ້ອງໄດ້ສ້າງເງື່ອນໄຂໃຫ້ປະຊາຊົນໄດ້ປະຕິບັດສິດດັ່ງກ່າວເພື່ອໃຫ້ການດຳເນີນຄະດີຖືກຕ້ອງ, ພາວະວິໄສ ແລະ ເປັນທຳ (ມ 13 ກດຍ).

### 6.4. ຫຼັກການຮັບປະກັນສິດໃນການຕໍ່ສູ້ຄະດີ

ຫຼັກການນີ້ກໍເປັນອີກຫຼັກການໜຶ່ງ ທີ່ກຳນົດໃຫ້ອົງການທີ່ມີສິດອຳນາດໃນການດຳເນີນຄະດີ ເຊັ່ນ ອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານ ຕ້ອງຮັບປະກັນສິດໃນການຕໍ່ສູ້ຄະດີໃຫ້ແກ່ຜູ້ຖືກຫາ ຫຼື ຈຳເລີຍ, ອາດຈະຕໍ່ສູ້ດ້ວຍຕົນເອງ ຫຼື ເອົາທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນເພື່ອໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍໃນການຕໍ່ສູ້ຄະດີດັ່ງກ່າວ. ການຮັບປະກັນສິດໃນການຕໍ່ສູ້ຄະດີນີ້ກົດໝາຍໄດ້ບັນຍັດຄວບຄຸມໄປເຖິງຜູ້ຖືກສົງໄສເຊັ່ນກັນໝາຍຄວາມວ່າຜູ້ຖືກສົງໄສກໍມີສິດມີທະນາຍຄວາມໃນການຕໍ່ສູ້ຄະດີເຊັ່ນກັນ (ມ 14 ກດຍ).

### 6.5. ຫຼັກການສັນນິຖານວ່າເປັນຜູ່ບໍລິສຸດ

ໃນເວລາດຳເນີນຄະດີອົງການທີ່ມີສິດອຳນາດຕ້ອງໄດ້ສັນນິຖານວ່າຜູ່ຖືກຫາ ຫຼື ຈຳເລີຍເປັນຜູ່ບໍລິສຸດຈົນກວ່າຈະມີຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ. ດັ່ງນັ້ນ, ອົງການດັ່ງກ່າວຈະຕ້ອງໄດ້ປະຕິບັດຕໍ່ຜູ່ຖືກຫາ ຫຼື ຈຳເລີຍຢ່າງເໝາະສົມ, ຈະປະຕິບັດຄືກັນກັບນັກໂທດແມ່ນບໍ່ໄດ້ (ມ 15 ກດຍ). ຫຼັກການດັ່ງກ່າວກຳນົດໃຫ້ອົງການດຳເນີນຄະດີອາຍາໃນເວລາກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານນັ້ນຖ້າຍັງສົງໄສວ່າຜູ່ຖືກຫາ ຫຼື ຈຳເລີຍເປັນຜູ່ກະທຳຜິດ ຫຼື ບໍ່ ກໍຕ້ອງປ່ອຍຕົວ ຫຼື ພິພາກສາໃຫ້ຈຳເລີຍພົ້ນຂໍ້ກ່າວຫາໄປ (ມ 44 ກດຍ) ເພາະວ່າກ່ອນທີ່ສານຈະພິພາກສາລົງໂທດຜູ່ໃດຜູ່ໜຶ່ງຈະຕ້ອງພິສູດຄວາມຜິດຂອງຜູ່ນັ້ນຈົນປາສະຈາກຂໍ້ສົງໄສໃດໆ.

### 6.6. ຫຼັກການພິຈາລະນາຄ່າເສັຍຫາຍໃນຄະດີອາຍາ

ຫຼັກການນີ້ເປັນຫຼັກການທີ່ກຳນົດໃຫ້ສານຕ້ອງດຳເນີນຄະດີອາຍາໂດຍໄວ ແລະ ຈະຕ້ອງພິຈາລະນາຄ່າເສັຍຫາຍໄປພ້ອມໆກັນກັບການດຳເນີນຄະດີທາງອາຍາ ໝາຍຄວາມວ່າໃນກໍລະນີທີ່ສານຫາກບໍ່ສາມາດກຳນົດມູນຄ່າຄວາມເສັຍຫາຍທາງແພ່ງໄດ້ ເຊັ່ນ ຜູ່ຖືກເສັຍຫາຍຍັງຈະຕ້ອງໄດ້ສືບຕໍ່ປິ່ນປົວຈາກຄະດີອຸບປະຕິເຫດ ຫຼື ຄະດີອື່ນ, ສານຈະຕ້ອງພິຈາລະນາຕັດສິນລົງໂທດທາງອາຍາໄປກ່ອນ, ສ່ວນຄ່າເສັຍຫາຍທາງແພ່ງນັ້ນ ໃຫ້ຄູ່ກໍລະນີໄປຮ້ອງຟ້ອງຕາມລະບຽບການຮ້ອງຟ້ອງທາງແພ່ງຕ່າງຫາກ.

ໃນກໍລະນີຈຳເລີຍຫາກເສັຍຊີວິດໃນລະຫວ່າງການດຳເນີນຄະດີຢູ່ສານນັ້ນ ສານຈະຕ້ອງໄດ້ພິຈາລະນາຄະດີດັ່ງກ່າວໃຫ້ສິ້ນສຸດຂະບວນການຕາມລະບຽບກົດໝາຍ (ມ16 ກດຍ).

### 6.7. ຫຼັກການສິດອຳນາດໃນການຕັດສິນຄະດີຂອງສານ

ຫຼັກການດັ່ງກ່າວເປັນຫຼັກການທີ່ກຳນົດໃຫ້ມີແຕ່ສານເທົ່ານັ້ນ ຈຶ່ງມີສິດອຳນາດໃນການພິຈາລະນາພິພາກສາຄະດີອາຍາໄດ້, ສ່ວນອົງການອື່ນໆບໍ່ມີສິດອຳນາດໃນການພິຈາລະນາພິພາກສາຄະດີອາຍາຢ່າງເດັດເຂດ (ມ 17 ກດຍ).

### 6.8. ຫຼັກການພິຈາລະນາຄະດີເປັນໝູ່ຄະນະ

ຫຼັກການນີ້ເປັນຫຼັກການພິຈາລະນາຂອງສານ ຊຶ່ງເລີ່ມຕັ້ງແຕ່ການໄຕ່ສວນໄປຈົນຮອດມີຄຳພິພາກສານັ້ນ, ບໍ່ວ່າຈະແມ່ນສານຂັ້ນຕົ້ນ, ຂັ້ນອຸທອນ ຫຼື ຂັ້ນລົບລ້າງກໍຕ້ອງພິຈາລະນາເປັນໝູ່ຄະນະ ຊຶ່ງປະກອບດ້ວຍຜູ່ພິພາກສາສາມທ່ານສະເໝີ (ມ 18 ກດຍ).

**6.9. ຫຼັກການຄວາມເປັນເອກະລາດຂອງຜູ້ພິພາກສາ**

ຫຼັກການດັ່ງກ່າວເປັນຫຼັກການທີ່ກຳນົດໃນການພິຈາລະນາຕັດສິນຄະດີອາຍາ ສານ ຫຼື ຜູ້ພິພາກສາຕ້ອງຢຶດຖືຕາມຫຼັກການຂອງກົດໝາຍຢ່າງເຄັ່ງຄັດໂດຍບໍ່ມີການແຊກແຊງ ຈາກອົງການ ຫຼື ບຸກຄົນອື່ນແຕ່ຢ່າງໃດ (ມ 19 ກດຍ).

**6.10. ຫຼັກການພາສາທີ່ໃຊ້ໃນການດຳເນີນຄະດີ**

ໃນການດຳເນີນຄະດີອາຍາຕ້ອງໄດ້ນຳໃຊ້ພາສາລາວ ທີ່ເປັນພາສາທາງການເທົ່ານັ້ນ ສຳລັບຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີທີ່ບໍ່ຮູ້ພາສາລາວກໍມີສິດໃຊ້ພາສາຕົນເອງ ແຕ່ຕ້ອງໄດ້ແປເປັນພາສາລາວໂດຍຜ່ານຜູ້ແປພາສາ (ມ 20 ກດຍ). ຫຼັກການດັ່ງກ່າວມີຄວາມໝາຍວ່າໃນການດຳເນີນຄະດີອາຍາໃນຂອບເຂດຂອງ ສປປ ລາວ ຕ້ອງໃຊ້ພາສາລາວ, ໃນກໍລະນີຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາຜູ້ໃດຜູ້ໜຶ່ງທີ່ບໍ່ຮູ້ພາສາລາວ ກໍມີສິດໃຊ້ພາສາຂອງຕົນໄດ້ແຕ່ຕ້ອງມີຜູ້ແປພາສາດັ່ງກ່າວມາເປັນພາສາລາວ[9].

**6.11. ຫຼັກການການໄຕ່ສວນຄະດີໃນທີ່ປະຊຸມສານຢ່າງເປີດເຜີຍ**

ຫຼັກການດັ່ງກ່າວເປັນຫຼັກການການໄຕ່ສວນຄະດີຂອງສານ ໂດຍຫຼັກການແລ້ວສານ ຫຼື ຜູ້ພິພາກສາຈະຕ້ອງໄດ້ດຳເນີນການໄຕ່ສວນຄະດີຢ່າງເປີດເຜີຍ ຍົກເວັ້ນບາງກໍລະນີທີ່ຕິດພັນກັບຄວາມໝັ້ນຄົງຂອງຊາດ, ເດັກກະທຳຜິດ ຫຼື ຕໍ່ສາຍຜົວເມັຍ, ຮີດຄອງປະເພນີ ແຕ່ຖືວ່າເປັນຂໍ້ຍົກເວັ້ນຂອງກົດໝາຍ, ສ່ວນການອ່ານຄຳຕັດສິນນັ້ນຈະຕ້ອງດຳເນີນຢ່າງເປີດເຜີຍສະເໝີ (ມ 21 ກດຍ). ຫຼັກການນີ້ເພື່ອໃຫ້ປະຊາຊົນ ແລະ ຜູ້ເຂົ້າຮ່ວມອື່ນໄດ້ກວດກາການພິຈາລະນາຄະດີຂອງສານວ່າດຳເນີນໄປຢ່າງຖືກຕ້ອງ ຫຼື ບໍ່, ເພື່ອຮັບປະກັນຄວາມເປັນທຳໃຫ້ແກ່ທຸກຝ່າຍໃນການດຳເນີນຄະດີ.

**6.12. ຫຼັກການຂໍຖອນຕົວ ແລະ ການຄ້ານຕົວ**

ຫຼັກການນີ້ເປັນຫຼັກການທີ່ກຳນົດໃຫ້ອົງການທີ່ມີສິດໜ້າທີ່ ໃນການດຳເນີນຄະດີອາຍາ ແລະ ຜູ້ເຂົ້າຮ່ວມອື່ນໆທີ່ເປັນຍາດພີ່ນ້ອງ, ມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງໃນຄະດີຈະຕ້ອງໄດ້ຖອນຕົວອອກຈາກການດຳເນີນຄະດີນັ້ນ. ຖ້າຫາກບໍ່ຍອມຖອນຕົວຄູ່ຄວາມອີກຝ່າຍກໍມີສິດຄ້ານຕົວບຸກຄົນດັ່ງກ່າວອອກຈາກການດຳເນີນຄະດີໄດ້ (ມ 22 ກດຍ).

**6.13. ຫຼັກການບໍ່ອະນຸຍາດໃຫ້ເຂົ້າຮ່ວມພິຈາລະນາຄະດີດຽວກັນ**

ຫຼັກການດັ່ງກ່າວເປັນຫຼັກການດຳເນີນຄະດີອາຍາຂອງສານ ຫຼື ຜູ້ພິພາກສາບໍ່ວ່າຈະຢູ່ໃນສານຂັ້ນຕົ້ນ, ຂັ້ນອຸທອນ ຫຼື ຂັ້ນລົບລ້າງກໍຕາມຈະບໍ່ອະນຸຍາດໃຫ້ສານ ຫຼື ຜູ້ພິພາກສາທີ່ໄດ້ເຂົ້າຮ່ວມໃນການດຳເນີນຄະດີຄັ້ງໜຶ່ງໃນຄະດີໃດໜຶ່ງແລ້ວໃຫ້ເຂົ້າຮ່ວມພິຈາລະນາຄະດີ

---

[9] ວຽງວິໄລ ທ່ຽງຈັນໄຊ, ການດຳເນີນຄະດີອາຍາ (ສະບັບປັບປຸງ), 2005, ໜ້າ 15

ດຽວກັນນີ້ເປັນຄັ້ງທີສອງເວັ້ນເສັຍກໍລະນີທີ່ໄດ້ກໍານົດໄວ້ໃນກົດໝາຍເທົ່ານັ້ນ ແຕ່ຖືວ່າເປັນຂໍ້ຍົກເວັ້ນຂອງກົດໝາຍ (ມ 23 ກດຍ).

**6.14. ຫຼັກການດໍາເນີນຄະດີຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ**

ຫຼັກການດັ່ງກ່າວນີ້ເປັນຫຼັກການທີ່ກໍານົດໃຫ້ອົງການທີ່ມີສິດໜ້າທີ່ໃນການດໍາເນີນຄະດີໃນການນໍາໃຊ້ມາດຕະການຕ່າງໆ ຕ້ອງເປັນໄປຕາມທີ່ໄດ້ກໍານົດໄວ້ໃນກົດໝາຍເທົ່ານັ້ນ ທັງນີ້ເພື່ອເຮັດໃຫ້ການດໍາເນີນຄະດີອາຍາໄດ້ເປັນໄປຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ, ຊອກໃຫ້ເຫັນທັງຫຼັກຖານຜູກມັດ, ຫຼັກຖານແກ້ມັດ ແລະ ສາເຫດທີ່ພາໃຫ້ຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາໄປພ້ອມໆກັນ.

ໃນການຊອກຫາຫຼັກຖານ ຫ້າມໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານຜູ່ຖືກສົງໄສ, ຜູ່ຖືກຫາ ຫຼື ຈໍາເລີຍ ແລະ ຜູ່ເຂົ້າຮ່ວມອື່ນໆ ໃນການດໍາເນີນຄະດີອາຍາ (ມ 24 ກດຍ).

**6.15. ຫຼັກການຮັບປະກັນສິດໃນການຮ້ອງຟ້ອງ**

ຫຼັກການຮັບປະກັນສິດໃນການຮ້ອງຟ້ອງ ແມ່ນຫຼັກການທີ່ກໍານົດໃຫ້ບຸກຄົນ ຫຼື ການຈັດຕັ້ງມີສິດຮ້ອງຟ້ອງຕໍ່ອົງການທີ່ມີສິດອໍານາດໃນການດໍາເນີນຄະດີ ເຊັ່ນ ອົງການສືບສວນ-ສອບສວນ, ອົງການໄອຍະການ ຫຼື ສານຕໍ່ກັບການປະຕິບັດໜ້າທີ່ໂດຍບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງກັບກົດໝາຍ (ມ 25 ກດຍ). ຫຼັກການຮັບປະກັນສິດໃນການຮ້ອງຟ້ອງເປັນການຮັບປະກັນເລື່ອງສິດທິມະນຸດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ກ່ຽວກັບການສັນນິຖານວ່າເປັນຜູ່ບໍລິສຸດ ແລະ ຮັບປະກັນບໍ່ໃຫ້ມີການລະເມີດສິດຂອງຄົນອື່ນໂດຍບໍ່ຖືກຕ້ອງ ຈຶ່ງມີການກໍານົດໃຫ້ມີການຮ້ອງຟ້ອງຕໍ່ອົງການຂອງລັດກ່ຽວກັບການກະທໍາທີ່ບໍ່ຖືກຕ້ອງຂອງບຸກຄົນອື່ນ ເພື່ອໃຫ້ຟື້ນຟູຄືນສິດທີ່ຖືກລະເມີດນັ້ນ.

**6.16. ຫຼັກການປະສານສົມທົບ**

ຫຼັກການນີ້ ເປັນຫຼັກການທີ່ກໍານົດໃຫ້ອົງການທີ່ມີສິດ ໜ້າທີ່ໃນການດໍາເນີນຄະດີຕ້ອງໄດ້ປະສານສົມທົບ ແລະ ຮ່ວມມືກັບອົງການຈັດຕັ້ງອື່ນ ເຊັ່ນ ອົງການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ແລະ ອົງການຈັດຕັ້ງອື່ນໆ ທັງນີ້ກໍເພື່ອເປັນການຮ່ວມມືກັນໃນການສະກັດກັ້ນ ແລະ ຕ້ານອາຊະຍາກໍາ (ມ 26 ກດຍ).

# ບົດທີ 2
# ກົດໝາຍທີ່ກ່ຽວຂ້ອງກັບການດຳເນີນຄະດີອາຍາ

## 1. ກົດໝາຍອື່ນທີ່ກ່ຽວຂ້ອງກັບການດຳເນີນຄະດີອາຍາ

ໃນການດຳເນີນຄະດີອາຍາ ນອກຈາກກົດໝາຍອາຍາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາແລ້ວ ຍັງມີກົດໝາຍອື່ນທີ່ກ່ຽວຂ້ອງ ເຊັ່ນ ລັດຖະທຳມະນູນ, ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍທະນາຍຄວາມ, ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ, ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ລາຍລະອຽດມີດັ່ງລຸ່ມນີ້:

### 1.1. ລັດຖະທຳມະນູນ ແຫ່ງ ສປປ ລາວ

ລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2003 ແມ່ນກົດໝາຍພື້ນຖານຂອງບັນດາຂະແໜງກົດໝາຍຕ່າງໆ ເປັນກົດໝາຍສູງສຸດຂອງ ສປປ ລາວ ທີ່ສະແດງເຖິງເຈດຈຳນົງຊົນຊັ້ນປົກຄອງ ຊຶ່ງໄດ້ກຳນົດລະບອບການເມືອງ, ເສດຖະກິດ-ສັງຄົມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການຕ່າງປະເທດ, ກຳນົດສິດ ແລະ ພັນທະພື້ນຖານຂອງພົນລະເມືອງ, ຫຼັກການການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົງຈັກລັດໃນໄລຍະໃໝ່. ລັດຖະທຳມະນູນ ແມ່ນນິຕິກຳທີ່ເປັນພື້ນຖານໃຫ້ແກ່ການກໍ່ສ້າງລະບົບກົດໝາຍແຫ່ງ ສປປ ລາວ. ສະນັ້ນ, ທຸກນິຕິກຳທີ່ສ້າງຂຶ້ນຕ້ອງສອດຄ່ອງກັບລັດຖະທຳມະນູນ ແລະ ສົນທິສັນຍາທີ່ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນລັດພາຄີ.

ເນື້ອໃນຂອງລັດຖະທຳມະນູນ ໄດ້ກຳນົດເຖິງບັນຫາສິດທິມະນຸດ (ມ 34 ຫາ ມ 51 ລນ) ຊຶ່ງໄດ້ຖືກຜັນຂະຫຍາຍອອກໃນສິດ ແລະ ພັນທະພື້ນຖານຂອງພົນລະເມືອງ ແລະ ບາງມາດຕາໄດ້ກຳນົດເປັນຫຼັກການລວມຂອງການດຳເນີນຄະດີອາຍາ ຊຶ່ງພົວພັນເຖິງສິດທີ່ຖືກຕ້ອງຕາມກົດໝາຍຂອງພົນລະເມືອງທີ່ຖືກລະເມີດທາງອາຍາ ຜູ່ກ່ຽວສາມາດຮ້ອງທຸກ, ຮ້ອງຟ້ອງ ແລະ ສະເໜີຄວາມເຫັນຕໍ່ອົງການທີ່ກ່ຽວຂ້ອງກ່ຽວກັບບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດລວມ ຫຼື ສິດ ແລະ ຜົນປະໂຫຍດສະເພາະຂອງຕົນ. ອົງການທີ່ກ່ຽວຂ້ອງຕ້ອງໄດ້ພິຈາລະນາ ແລະ ແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 41 ລນ). ຊາວຕ່າງດ້າວ ແລະ ຜູ່ບໍ່ມີສັນຊາດກໍມີສິດໄດ້ຮັບການປົກປ້ອງສິດ ແລະ ເສລີພາບຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຂອງ ສປປ ລາວ (ມ 50 ລນ). ສິດຂອງພົນລະເມືອງລາວ ໂດຍບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຮ່າງກາຍ, ກຽດສັກສີ ແລະ ເຄຫະສະຖານ. ພົນລະເມືອງລາວຈະບໍ່ຖືກຈັບຕົວ ຫຼື ກວດຄົ້ນເຄຫະສະຖານຖ້າຫາກບໍ່ມີຄຳສັ່ງຂອງໄອຍະການ ຫຼື ສານປະຊາຊົນເວັ້ນເສັຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 42 ລນ).

ອົງການໄອຍະການປະຊາຊົນ ມີສິດຕິດຕາມກວດກາການເຄົາລົບລະບຽບກົດໝາຍຢ່າງຖືກຕ້ອງ ແລະ ເປັນເອກະພາບຢູ່ໃນທຸກກະຊວງ, ອົງການທຽບເທົ່າກະຊວງ, ອົງການທີ່ຂຶ້ນກັບລັດຖະບານ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ລັດຖະກອນ ແລະ ພົນລະເມືອງ; ປະຕິບັດສິດກ່າວຟ້ອງ (ມ 86 ລນ ).

ລັດຖະທຳມະນູນ ໄດ້ກຳນົດໄວ້ວ່າສານປະຊາຊົນຈະຕັດສີນເປັນໝູ່ຄະນະ, ໃນເວລາພິຈາລະນາຕັດສີນ ຜູ້ພິພາກສາຕ້ອງເປັນເອກະລາດ ແລະ ມີແຕ່ປະຕິບັດຕາມກົດໝາຍເທົ່ານັ້ນ (ມ 82 ລນ).

ນອກຈາກນັ້ນຍັງໄດ້ກຳນົດເຖິງການເຂົ້າຮ່ວມຂອງທະນາຍຄວາມ ແລະ ການຊ່ວຍເຫຼືອລູກຄວາມທາງດ້ານກົດໝາຍຄື ການໄຕ່ສວນຄະດີໃນທີ່ປະຊຸມສານຕ້ອງດຳເນີນຢ່າງເປີດເຜີຍ ເວັ້ນເສຍແຕ່ກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ. ຜູ້ຖືກຫາມີສິດຕໍ່ສູ້ຄະດີທີ່ຕົນຖືກກ່າວຟ້ອງ, ທະນາຍຄວາມມີສິດຊ່ວຍເຫຼືອທາງດ້ານກົດໝາຍແກ່ຜູ້ຖືກກ່າວຟ້ອງ (ມ 83 ລນ). ສຳລັບຜູ້ຕາງໜ້າບັນດາອົງການຈັດຕັ້ງມີສິດເຂົ້າຮ່ວມໃນການດຳເນີນຄະດີຢູ່ສານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 84 ລນ).

ບັນດາມາດຕາຕ່າງໆຂ້າງເທິງນັ້ນ ໄດ້ຜັນຂະຫຍາຍອອກເປັນເນື້ອໃນລະອຽດໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍອາຍາ, ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍອົງການໄອຍະການປະຊົນ, ກົດໝາຍວ່າດ້ວຍທະນາຍຄວາມ ແລະ ກົດໝາຍອື່ນໆ.

**1.2. ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມີຄວາມສຳຄັນໃນການກຳນົດຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆກ່ຽວກັບການດຳເນີນຄະດີອາຍາເພື່ອໃຫ້ດຳເນີນໄປຢ່າງຖືກຕ້ອງ, ຍຸຕິທຳ, ຈຳກັດ, ສະກັດກັ້ນການກະທຳຜິດທັງນີ້ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ສຶກສາອົບຮົມພົນລະເມືອງໃຫ້ເຄົາລົບ ແລະ ປະຕິບັດກົດໝາຍແນໃສ່ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ ພ້ອມທັງສ້າງເງື່ອນໄຂໃຫ້ປະຊາຊົນໄດ້ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ (ມ 1 ກດຍ).

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາເປັນກົດໝາຍທີ່ກຳນົດກ່ຽວກັບວິທີການ ຫຼື ຫຼັກການ, ລະບຽບການ ແລະ ມາດຕະການຕ່າງໆເພື່ອເຮັດໃຫ້ກົດໝາຍອາຍາໄດ້ຖືກຈັດຕັ້ງປະຕິບັດ ຫຼື ດຳເນີນການກ່ຽວກັບການກະທຳຜິດທາງອາຍາ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາມີຄວາມສຳຄັນຕໍ່ກັບກົດໝາຍອາຍາຫຼາຍທີ່ສຸດ ເພາະວ່າກົດໝາຍອາຍາຈະຖືກ

ຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງໄດ້ນັ້ນ ຕ້ອງອີງໃສ່ກົດໝາຍວ່າດ້ວຍການດຳເນີນຄະດີອາຍາເປັນຕົ້ນຕໍ ແລະ ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາຕ້ອງດຳເນີນຄະດີຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາກຳນົດໄວ້ເທົ່ານັ້ນ.

ທັງໝົດທີ່ກ່າວມານັ້ນໄດ້ກາຍເປັນບ່ອນອີງໃຫ້ອົງການມີສິດດຳເນີນຄະດີອາຍາໄດ້ນຳໃຊ້ເພື່ອຊອກໃຫ້ເຫັນການກະທຳຜິດບົນພື້ນຖານຊອກຫາຄວາມຈິງ ແລະ ເຄົາລົບຄວາມເປັນມະນຸດຂອງຜູ້ກະທຳຜິດ, ຊຶ່ງການວາງໂທດຕ້ອງມີຄວາມເໝາະສົມ ແລະ ສອດຄ່ອງກັບລະດັບຂອງການກະທຳຜິດ.

**1.3. ກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກຳນົດໂທດທາງອາຍາ**

ກົດໝາຍອາຍາ ສະບັບປັບປຸງ ປີ 2005 ມີໜ້າທີ່ປົກປັກຮັກສາລະບອບການເມືອງ, ເສດຖະກິດ ແລະ ສັງຄົມຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ກຳມະສິດຂອງລັດ, ຂອງລວມໝູ່ ແລະ ຂອງບຸກຄົນ, ຊີວິດ, ສຸຂະພາບ, ສິດ ແລະ ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ຕ້ານ ແລະ ສະກັດກັ້ນການກະທຳຜິດ ແລະ ສຶກສາອົບຮົມພົນລະເມືອງທຸກຄົນໃຫ້ມີຄວາມຕື່ນຕົວເຄົາລົບກົດໝາຍ. ກົດໝາຍອາຍາຍັງໄດ້ກຳນົດວ່າ ການກະທຳອັນໃດທີ່ເປັນອັນຕະລາຍຕໍ່ສັງຄົມ ແມ່ນເປັນການກະທຳຜິດທາງອາຍາແລ້ວຈຶ່ງກຳນົດໂທດໃສ່ຜູ້ກະທຳຜິດ (ມ 1 ກອຍ).

ກົດໝາຍອາຍາມີຄວາມສຳຄັນໃນການກຳນົດ ແລະ ໄຈ້ແຍກສະຖານຕ່າງໆຂອງການກະທຳຜິດທາງອາຍາ ຊຶ່ງການກະທຳທາງອາຍາແມ່ນການກະທຳ ຫຼື ການເມີນເສີຍຂອງບຸກຄົນທີ່ເປັນອັນຕະລາຍຕໍ່ລະບອບການເມືອງ, ເສດຖະກິດ ຫຼື ສັງຄົມ, ຕໍ່ກຳມະສິດຂອງລັດ, ຂອງລວມໝູ່ ແລະ ຂອງບຸກຄົນ, ຊີວິດ, ສຸຂະພາບ, ກຽດສັກສີ, ສິດ, ເສລີພາບຂອງພົນລະເມືອງ, ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

ກົດໝາຍອາຍາກໍມີສາຍພົວພັນກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເຊັ່ນດຽວກັນ ເພາະວ່າກົດໝາຍອາຍາແມ່ນກົດໝາຍທີ່ກຳນົດຈຸດສິ້ນສຸດຂອງການດຳເນີນຄະດີອາຍາ. ສ່ວນກົດໝາຍວ່າດ້ວຍການດຳເນີນຄະດີອາຍາເປັນກົດໝາຍທີ່ກຳນົດຫຼັກການ, ຂັ້ນຕອນ, ວິທີການ ແລະ ມາດຕະການສະກັດກັ້ນໃນການດຳເນີນຄະດີ ເພື່ອໃຫ້ໄດ້ມາຊຶ່ງຫຼັກຖານຜູກມັດ ແລະ ແກ້ມັດດ້ວຍວິທີການທີ່ຖືກຕ້ອງຕາມກົດໝາຍ. ສະນັ້ນ, ຖ້າບໍ່ມີກົດໝາຍອາຍາ ກໍເປັນການຍາກທີ່ຈະຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ໂດຍພື້ນຖານແລ້ວ ກົດໝາຍທີ່ກຳນົດໂທດທາງອາຍາ ແມ່ນກົດໝາຍອາຍາ ເຖິງຢ່າງໃດກໍຕາມຍັງມີກົດໝາຍອື່ນທີ່ກຳນົດທາງອາຍາ ເຊັ່ນ ກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍສ່ວຍສາອາກອນ, ກົດໝາຍວ່າດ້ວຍຊັບສິນທາງປັນຍາ, ກົດໝາຍວ່າດ້ວຍການຕ້ານ

ການສໍ້ລາດບັງຫຼວງ, ກົດໝາຍວ່າດ້ວຍພັນທະປ້ອງກັນຊາດ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ກົດໝາຍອື່ນໆ.

### 1.4. ກົດໝາຍວ່າດ້ວຍສານປະຊາຊົນ

ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009 ໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມ, ກວດກາຂອງສານປະຊາຊົນ ແນໃສ່ຮັບປະກັນການປະຕິບັດໜ້າທີ່ຂອງສານໃຫ້ມີຄຸນນະພາບ, ປະສິດທິພາບ, ປະສິດທິຜົນ ແລະ ເຮັດໃຫ້ການດຳເນີນຄະດີເປັນຕົ້ນການພິຈາລະນາຕັດສິນ ແລະ ພິພາກສາຄະດີໃຫ້ພາວະວິໄສ, ມີຄວາມຖືກຕ້ອງ, ໂປ່ງໃສ, ຍຸຕິທຳເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ຄວາມ, ປະກອບສ່ວນເຮັດໃຫ້ສັງຄົມມີຄວາມສະຫງົບ, ເສດຖະກິດ-ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງ (ມ 1 ກປຊ).

ກົດໝາຍສະບັບນີ້ມີສາຍກ່ຽວພັນກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເພາະມັນໄດ້ກຳນົດພາລະບົດບາດ, ສິດ, ຂອບເຂດຄວາມຮັບຜິດຊອບຂອງອົງການດຳເນີນຄະດີອາຍາ ໃນພາກສ່ວນຂອງສານປະຊາຊົນໃນແຕ່ລະຂັ້ນ ຊຶ່ງເປັນພາກສ່ວນທີ່ສຳຄັນ ແລະ ເປັນອົງການດຽວທີ່ມີສິດອຳນາດໃນການພິຈາລະນາຕັດສິນຄະດີໃຫ້ຖືກຕ້ອງ ແລະ ໃຫ້ສອດຄ່ອງກັບຫຼັກການຕ່າງໆຂອງການດຳເນີນຄະດີອາຍາ ທັງຮັບປະກັນຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ, ຮັບປະກັນຄວາມເປັນເອກະລາດຂອງສານໃນເວລາພິຈາລະນາໄຕ່ສວນຄະດີໃນທີ່ປະຊຸມສານ, ຮັບປະກັນການພິຈາລະນະຄະດີເປັນໝູ່ຄະນະ ແລະ ຮັບປະກັນການຈັດຕັ້ງປະຕິບັດບັນດາຫຼັກການທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດຂັ້ນຕອນ ແລະ ວິທີການພິຈາລະນາຕັດສິນຄະດີ ຊຶ່ງເປັນຫຼັກການທີ່ສຳຄັນທັງເປັນບ່ອນອີງໃຫ້ສານປະຊາຊົນແຕ່ລະຂັ້ນ, ຍ້ອນວ່າຜູ່ພິພາກສາເປັນຜູ່ທີ່ມີບົດບາດເປັນກຳມະການຕັດສິນ ແລະ ເປັນອົງການທີ່ໄດ້ຮັບຄວາມໄວ້ວາງໃຈຈາກປະຊາຊົນໃນການມອບຄວາມຍຸຕິທຳໃຫ້ສັງຄົມ, ຜູ່ພິພາກສາເຄື່ອນໄຫວບົນພື້ນຖານຄວາມເປັນເອກະລາດ ແລະ ບົນພື້ນຖານຫຼັກການທີ່ກົດໝາຍໄດ້ກຳນົດໄວ້. ຖ້າບໍ່ມີກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ກໍເປັນການຍາກໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ.

### 1.5. ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ

ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບ ປີ 2009 ແມ່ນກົດໝາຍທີ່ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຕິດຕາມ, ກວດກາຂອງອົງການໄອຍະການປະຊາຊົນ ເພື່ອຮັບປະກັນການປະຕິບັດໜ້າທີ່

ວຽກງານໄອຍະການໃຫ້ມີປະສິດທິພາບສູງ, ປົກປ້ອງຜົນປະໂຫຍດຂອງລັດ, ສັງຄົມ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ແນໃສ່ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ, ເພີ່ມທະວີນິຕິທຳ, ສ້າງລັດແຫ່ງກົດໝາຍເທື່ອລະກ້າວ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ (ມ 1 ກຍກ).

ກົດໝາຍສະບັບນີ້ ມີສາຍກ່ຽວພັນກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເພາະມັນໄດ້ກຳນົດພາລະບົດບາດ, ສິດ, ໜ້າທີ່ ແລະ ຂອບເຂດຂອງອົງການໄອຍະການໃນຖານະເປັນອົງການໜຶ່ງ ຊຶ່ງນອນຢູ່ໃນອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາ ມີບົດບາດໃນການຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃນຂອບເຂດທົ່ວປະເທດ ທັງມີໜ້າທີ່ໃນການຊອກຫາຄວາມຈິງວ່າຜູ້ຖືກຫາເປັນຜູ້ກະທຳຜິດແທ້ ຫຼື ບໍ່ ແລະ ປະຕິ ບັດຫຼັກການເຄົາລົບສິດທິມະນຸດຕໍ່ຜູ້ຖືກດຳເນີນຄະດີ, ຊຶ່ງບົດບາດໜຶ່ງທີ່ສຳຄັນກໍຄືການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ເພື່ອຮັບປະກັນໃຫ້ຜູ້ກະທຳຜິດໄດ້ຮັບການລົງໂທດຕາມກົດໝາຍ ແລະ ບໍ່ໃຫ້ຜູ້ບໍ່ໄດ້ກະທຳຜິດຖືກລົງໂທດ; ຮັບປະກັນຄວາມສັກສິດຂອງກົດໝາຍ ແລະ ຮັບປະກັນການຕິດຕາມກວດກາການປະຕິບັດກົດໝາຍຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ. ຖ້າປາສະຈາກກົດໝາຍວ່າດ້ວຍການດຳເນີນຄະດີອາຍາແລ້ວອົງການໄອຍະການປະຊາຊົນກໍພົບຄວາມຫຍຸ້ງຍາກໃນການເຄື່ອນໄຫວເພື່ອຊອກຫາຄວາມຈິງ ແລະ ພິສູດການກະທຳຜິດ ຫຼື ຄວາມບໍລິສຸດຂອງຜູ້ຖືກຫາໄດ້.

### 1.6. ກົດໝາຍວ່າດ້ວຍທະນາຍຄວາມ

ກົດໝາຍວ່າດ້ວຍທະນາຍຄວາມ ສະບັບ ປີ 2011 ມີຄວາມສຳຄັນເພາະເປັນກົດໝາຍທີ່ກຳນົດຫຼັກການ, ລະບຽບການ, ມາດຕະການກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງທະນາຍຄວາມເພື່ອໃຫ້ມີຄວາມຖືກຕ້ອງ, ເປັນທຳ ແລະ ມີປະສິດທິຜົນ, ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລູກຄວາມ, ສະໜອງຫຼັກຖານໃຫ້ແກ່ການແກ້ໄຂຄະດີ ແລະ ສ້າງຄວາມເຂັ້ມແຂງແກ່ຂະບວນການຍຸຕິທຳ, ຕ້ານການລ່ວງລະເມີດສິດອັນຊອບທຳຂອງປະຊາຊົນ, ສ້າງເງື່ອນໄຂໃນການເຂົ້າເຖິງຂະບວນການຍຸຕິທຳ, ສ້າງຄວາມເຊື່ອໝັ້ນແກ່ປະຊາຊົນ ແລະ ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທຳ (ມ 1 ກທຄ). ທະນາຍຄວາມແມ່ນບຸກຄົນທີ່ໄດ້ຮັບອະນຸຍາດຈາກລັດໃຫ້ເຄື່ອນໄຫວອາຊີບອິດສະລະ ແລະ ໃຫ້ການບໍລິການທາງດ້ານກົດໝາຍແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ສັງຄົມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລູກຄວາມ (ມ 2 ກທຄ).

ສະນັ້ນ, ການເຂົ້າຮ່ວມຂອງທະນາຍຄວາມໃນການດຳເນີນຄະດີອາຍາ ຖືເປັນຫຼັກການໜຶ່ງໃນການປະຕິບັດສິດໃນການຕໍ່ສູ້ຄະດີຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ ເພື່ອເຮັດໜ້າທີ່ເປັນຜູ້ຕ່າງໜ້າໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພວກກ່ຽວ ຊຶ່ງໄດ້ກຳນົດໄວ້ໃນສົນທິສັນຍາສາກົນວ່າດ້ວຍສິດທາງດ້ານການເມືອງ ແລະ ສິດຂອງພົນລະເມືອງທີ່ລັດຖະບານແຫ່ງ ສປປ ລາວ ໄດ້ໃຫ້ສັດຕະຍາບັນ ປີ 2009, ມາດຕາ 14 ວັກ 3 ຂໍ້ (ງ) ໄດ້ລະບຸໄວ້ວ່າ: “ທຸກຄົນທີ່ຖືກກ່າວຫາທາງອາຍາ ມີສິດເຂົ້າຮ່ວມໃນການຕັດສິນຄະດີ ແລະ ມີສິດຕໍ່ສູ້ຄະດີດ້ວຍຕົນເອງ ຫຼື ການຊ່ວຍເຫຼືອຂອງທະນາຍຄວາມຕາມທີ່ຜູ້ກ່ຽວເລືອກ ຖ້າຜູ້ກ່ຽວບໍ່ມີທະນາຍຄວາມ ຜູ້ກ່ຽວຈະໄດ້ຮັບແຈ້ງວ່າຕົນມີສິດເອົາທະນາຍຄວາມໄດ້ ແລະ ຖ້າມີຄວາມຈຳເປັນໃນການຕັດສິນ ຜູ້ກ່ຽວຈະໄດ້ຮັບການຊ່ວຍເຫຼືອຈາກທະນາຍຄວາມທີ່ສານສົ່ງມາໃຫ້ໂດຍບໍ່ຕ້ອງເສຍຄ່າຖ້າຜູ້ກ່ຽວບໍ່ສາມາດເສຍໄດ້”.

ກົດໝາຍວ່າດ້ວຍທະນາຍຄວາມ ມີສາຍກ່ຽວພັນກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເພາະກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ກຳນົດບົດບາດ, ຂອບເຂດການເຄື່ອນໄຫວ, ສິດ, ໜ້າທີ່ ແລະ ລະບຽບການເຂົ້າຮ່ວມຂອງທະນາຍຄວາມ ໃນແຕ່ລະຂັ້ນຕອນຂອງການດຳເນີນຄະດີ (ມ 71 ກດຍ ແລະ ມ 19 ກທຄ) ເພື່ອຮັບປະກັນໃຫ້ແກ່ການປະຕິບັດຫຼັກການຂອງການດຳເນີນຄະດີອາຍາ ກໍຄືການປະຕິບັດສິດໃນການຕໍ່ສູ້ຄະດີຂອງຄູ່ຄວາມ. ພ້ອມກັນນັ້ນ, ທະນາຍຄວາມເຂົ້າຮ່ວມນຳໃນເວລາດຳເນີນຄະດີອາຍາ (ມ 63 ກດຍ) ນັບແຕ່ວັນທີ່ຕົນໄດ້ຮັບການແຕ່ງຕັ້ງ ຫຼື ການສະເໜີຢ່າງເປັນລາຍລັກອັກສອນຂອງລູກຄວາມ ຫຼື ສະມາຊິກຄອບຄົວ ຫຼື ການຈັດຕັ້ງຂອງຜູ້ກ່ຽວເປັນຕົ້ນໄປ (ມ 18 ກທຄ).

ສະນັ້ນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເປັນກົດໝາຍທີ່ຮັບປະກັນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະນາຍຄວາມທີ່ກຳນົດບົດບາດ, ໜ້າທີ່ຂອງທະນາຍຄວາມໃນການເຂົ້າຮ່ວມທຸກຂັ້ນຕອນຂອງການດຳເນີນຄະດີອາຍາ ເພື່ອເຄື່ອນໄຫວຢ່າງເປັນເອກະລາດໃນການປົກປ້ອງສິດຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍໃຫ້ຖືກຕ້ອງ ແລະ ເປັນທຳ. ຖ້າປາສະຈາກກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ກໍເປັນການຍາກໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະນາຍຄວາມ.

### 1.7. ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ

ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ສະບັບ ປີ 2004 ເປັນກົດໝາຍທີ່ຮອງຮັບ ແລະ ຍົກສູງຖານະບົດບາດຂອງແມ່ຍິງ; ກຳນົດເນື້ອໃນພື້ນຖານ, ມາດຕະການຂອງການພັດທະນາ ແລະ ປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງແມ່ຍິງ, ຄວາມຮັບຜິດຊອບຂອງລັດ, ສັງຄົມ ແລະ ຄອບຄົວຕໍ່ແມ່ຍິງ ເພື່ອແນໃສ່ສົ່ງເສີມຄວາມຮູ້ຄວາມສາມາດ, ຄຸນສົມບັດສິນທຳປະຕິວັດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ລົບລ້າງທຸກຮູບການຈຳ

ແນກຕໍ່ແມ່ຍິງ, ສະກັດກັ້ນ ແລະ ຕ້ານການຄ້າແມ່ຍິງ ແລະ ເດັກນ້ອຍ, ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ, ສ້າງເງື່ອນໄຂໃຫ້ແມ່ຍິງໄດ້ເຂົ້າຮ່ວມ ແລະ ເປັນກຳລັງແຮງ ໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ (ມ 1 ກພຍ).

ກົດໝາຍສະບັບນີ້ ໄດ້ກຳນົດບາງມາດຕາທີ່ກ່ຽວພັນກັບການດຳເນີນຄະດີອາຍາເປັນຕົ້ນແມ່ນສິດໃນການຮ້ອງຂໍ, ຮ້ອງຟ້ອງ; ສິດ ແລະ ຜົນປະໂຫຍດຂອງແມ່ຍິງໃນກົດໝາຍອາຍາ; ສິດຂອງຜູ້ຖືກເຄາະຮ້າຍ; ແລະ ການດຳເນີນຄະດີຕໍ່ຜູ້ກະທຳຜິດ.

ໃນກໍລະນີທີ່ບຸກຄົນ ຫຼື ການຈັດຕັ້ງຫາກໄດ້ຈຳກັດ, ຂັດຂວາງ ຫຼື ລະເມີດສິດສະເໝີພາບທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ຫຼື ຄອບຄົວແລ້ວ ແມ່ຍິງມີສິດສະເໜີຄວາມເຫັນ, ຮ້ອງຂໍ, ຮ້ອງຟ້ອງຕໍ່ອົງການທີ່ກ່ຽວຂ້ອງເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ (ມ 18 ກພຍ). ສິດ ແລະ ຜົນປະໂຫຍດຂອງແມ່ຍິງໃນກົດໝາຍອາຍາ ມີດັ່ງນີ້ ແມ່ຍິງກະທຳຜິດໃນເວລາຖືພາຈະໄດ້ຮັບການຫຼຸດຜ່ອນໂທດ; ແມ່ຍິງຖືພາ ຫຼື ມີລູກນ້ອຍອາຍຸບໍ່ທັນເຖິງແປດປີ ພາຍຫຼັງທີ່ໄດ້ປະຕິບັດໂທດຕັດອິດສະລະພາບແລ້ວ ຈະບໍ່ຖືກໂທດຈຳກັດທີ່ຢູ່ ຊຶ່ງເປັນໂທດເພີ່ມ; ແມ່ຍິງກະທຳຜິດໃນເວລາຖືພາຈະບໍ່ຖືກລົງໂທດຕັດອິດສະລະພາບຕະຫຼອດຊີວິດ ຫຼື ປະຫານຊີວິດ. ແມ່ຍິງທີ່ຖືກລົງໂທດປະຫານຊີວິດຈະຖືກໂຈະການປະຕິບັດໂທດດັ່ງກ່າວໄວ້ຊົ່ວຄາວຖ້າຜູ້ກ່ຽວຫາກຖືພາ, ຊຶ່ງລາຍລະອຽດຈະມີລະບຽບການສະເພາະຕ່າງຫາກ (ມ 21 ກພຍ). ນອກຈາກນັ້ນ, ກົດໝາຍສະບັບນີ້ຍັງກຳນົດກ່ຽວກັບສິດຂອງຜູ້ຖືກເຄາະຮ້າຍຈາກການຄ້າແມ່ຍິງ (ມ 25 ກພຍ), ການຄ້າແມ່ຍິງ ແລະ ເດັກນ້ອຍ (ມ 49 ກພຍ), ການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍໃນຄອບຄົວ (ມ 29 ຫາ ມ 38 ກພຍ). ພ້ອມກັນນັ້ນຍັງໄດ້ກຳນົດການລົງໂທດຕໍ່ຜູ້ລະເມີດ ແລະ ການກະທຳຜິດຕໍ່ແມ່ຍິງ ແລະ ເດັກນ້ອຍ (ມ 48 ຫາ ມ 52 ກພຍ).

ເພື່ອບັນລຸຈຸດປະສົງດັ່ງກ່າວນັ້ນ ຄອບຄົວ, ສະຫະພັນແມ່ຍິງ, ສັງຄົມ ແລະ ລັດຖະບານຕ້ອງມີສ່ວນຮ່ວມໃນວຽກງານການປົກປ້ອງ ແລະ ຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ມີສາຍພົວພັນກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເພາະກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດສິດ, ໜ້າທີ່, ການເຄື່ອນໄຫວ ຂອງອົງການທີ່ກ່ຽວຂ້ອງໃນການດຳເນີນຕໍ່ບຸກຄົນທີ່ໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ, ກຳນົດຫຼັກການ, ວິທີການແກ້ໄຂບົນພື້ນຖານຄວາມສາມັກຄີປອງດອງເຊັ່ນ ນຳໃຊ້ຮູບການໄກ່ເກ່ຍ ແລະ ການດຳເນີນຄະດີໂດຍອົງການມີສິດອຳນາດ (ກໍລະນີທີ່ກະທຳຜິດຮ້າຍແຮງ), ລວມເຖິງການນຳໃຊ້ມາດຕະການສະກັດກັ້ນຕ່າງໆ ແລະ ການວາງໂທດ ຊຶ່ງເປັນຫຼັກການລວມຂອງການແກ້ໄຂຄະດີທີ່ກະທຳຜິດຕໍ່ແມ່ຍິງ ແລະ ເດັກນ້ອຍ. ສັງ

ລວມແລ້ວ, ຖ້າປາສະຈາກກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ກໍເປັນການຍາກໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການພັດທະນາ ແລະ ປົກປ້ອງແມ່ຍິງ ແລະ ເດັກນ້ອຍ.

### 1.8. ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ

ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ສະບັບ ປີ 2007 ໄດ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຄຸ້ມຄອງ, ການຕິດຕາມ, ກວດກາການຈັດຕັ້ງປະຕິບັດການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກບັນດາເຜົ່າລວມທັງມາດຕະການຕໍ່ຜູ້ກະທຳຜິດຕໍ່ເດັກ ແນໃສ່ເຮັດໃຫ້ເດັກມີຄວາມສົມບູນທາງດ້ານຮ່າງກາຍ, ຈິດໃຈ ແລະ ມັນສະໝອງ, ມີຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ສາມາດດຳລົງຊີວິດໃນສັງຄົມຢ່າງມີຄຸນນະພາບ ແລະ ກາຍເປັນຜູ້ສືບທອດທີ່ດີຂອງຊາດ (ມ 1 ກປດ). ສິ່ງທີ່ສຳຄັນກົດໝາຍສະບັບນີ້ໄດ້ກຳນົດວ່າ ຖ້າເດັກທີ່ມີອາຍຸຕໍ່າກວ່າ 15 ປີ ໃນເວລາກະທຳຜິດຈະບໍ່ຖືວ່າເປັນຜູ້ກະທຳຜິດທາງອາຍາ ຊຶ່ງໄດ້ກາຍເປັນຫຼັກການໜຶ່ງຂອງວຽກງານຍຸຕິທຳສຳລັບເດັກ. ສະນັ້ນ, ອົງການ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງຕ້ອງໄດ້ເຄົາລົບສິດຂອງເດັກທີ່ເປັນຜູ້ຖືກຫາ ຫຼື ຈຳເລີຍ ໝາຍຄວາມວ່າ ເດັກກະທຳຜິດກົດໝາຍໃຫ້ສາມາດນຳໃຊ້ຂະບວນການຍຸຕິທຳສຳລັບເດັກສະເພາະ, ຄະດີເດັກທີ່ບໍ່ຮ້າຍແຮງກະທຳຜິດໃນສະຖານລະຫຸໂທດ, ໂທສານຸໂທດທີ່ບໍ່ເປັນອັນຕະລາຍຮ້າຍແຮງ ຊຶ່ງກົດໝາຍກຳນົດໂທດຕັດອິດສາລະພາບຕໍ່າກວ່າສາມປີລົງມາ ຕ້ອງໄດ້ແກ້ໄຂໂດຍບໍ່ຜ່ານການດຳເນີນຄະດີຂອງສານ (ມ 52 ກປດ), ແຕ່ບໍ່ໝາຍຄວາມວ່າເດັກກະທຳຜິດຈະບໍ່ໄດ້ມີການແກ້ໄຂແນວໃດເລີຍ, ກົງກັນຂ້າມເດັກທີ່ກະທຳຜິດຍິ່ງຕ້ອງໄດ້ຮັບການເອົາໃຈໃສ່ຈາກຄອບຄົວ, ຊຸມຊົນ, ສັງຄົມ ແລະ ການຈັດຕັ້ງໃນການຕິດຕາມ, ຕັກເຕືອນ, ສຶກສາອົບຮົມ, ໃຫ້ຄຳປຶກສາ ແລະ ອື່ນໆ ເພື່ອໃຫ້ເດັກມີການປ່ຽນແປງແນວຄິດ ແລະ ພຶດຕິກຳ ສາມາດກັບຄືນເປັນຄົນດີໃນສັງຄົມ, ຊຶ່ງກົດໝາຍສະບັບນີ້ໄດ້ອະນຸຍາດໃຫ້ອົງການທີ່ກ່ຽວຂ້ອງທີ່ບໍ່ແມ່ນສານເດັກເປັນຜູ້ພິຈາລະນາແກ້ໄຂວ່າຄະດີ ຫຼື ການກະທຳຂອງເດັກທີ່ບໍ່ເປັນອັນຕະລາຍຮ້າຍແຮງດັ່ງທີ່ໄດ້ສະເໜີໄປນັ້ນ ສົມຄວນຈະສົ່ງໃຫ້ພາກສ່ວນໃດແກ້ໄຂ ເຊັ່ນ ໜ່ວຍໄກ່ເກ່ຍຄະດີເດັກຂັ້ນບ້ານ, ຫ້ອງການຍຸຕິທຳເມືອງ, ເທດສະບານ; ອົງການສືບສວນ-ສອບສວນ ແລະ ອົງການໄອຍະການປະຊາຊົນ (ມ 53 ກປດ), ຊຶ່ງອົງການທີ່ກ່ຽວຂ້ອງສາມາດນຳໃຊ້ວິທີການຕາມທີ່ໄດ້ກຳນົດໄວ້ໃນມາດຕາ 54 ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ.

ທັງໝົດທີ່ກ່າວມານັ້ນຈະເຫັນໄດ້ວ່າ ເດັກກະທຳຜິດທາງອາຍາຄວນໄດ້ຮັບການແກ້ໄຂຕາມລະບົບຍຸຕິທຳສຳລັບເດັກ. ເຖິງແມ່ນວ່າຈະມີກົດໝາຍເດັກສະເພາະແລ້ວກໍຕາມ ແຕ່ກົດໝາຍດັ່ງກ່າວກໍມີສາຍກ່ຽວພັນກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອາຍາ ເພາະບັນດາກົດໝາຍເຫຼົ່ານັ້ນ ໄດ້ກຳນົດອົງການທີ່ກ່ຽວຂ້ອງໃນການດຳເນີນຄະ

ດີເດັກ, ກຳນົດຫຼັກການຂອງການດຳເນີນການສືບສວນ-ສອບຖາມເດັກ, ລວມເຖິງການນຳໃຊ້ມາດຕະການສະກັດກັ້ນຕ່າງໆ ແລະ ການວາງໂທດ ຊຶ່ງເປັນຫຼັກການລວມຂອງການແກ້ໄຂຄະດີເດັກ. ບັນດາເນື້ອໃນເຫຼົ່ານັ້ນໄດ້ຖືກຜັນຂະຫຍາຍອອກເປັນຫຼັກການສະເພາະໃນກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ. ດ້ວຍເຫດນັ້ນ, ຈຶ່ງເວົ້າໄດ້ວ່າຖ້າບໍ່ມີກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກກໍເປັນການຍາກໃນການຜັນຂະຫຍາຍເນື້ອໃນສົນທິສັນຍາສາກົນ ແລະ ຍາກໃນການຈັດຕັ້ງປະຕິບັດບັນດາຫຼັກການພື້ນຖານຂອງວຽກງານຍຸຕິທຳສຳລັບເດັກ. ຄຽງຄູ່ກັນນັ້ນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອາຍາ ກໍເປັນກົດໝາຍທີ່ຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກໃນພາກຕົວຈິງ.

**2. ຂອບເຂດການດຳເນີນຄະດີອາຍາ**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ນຳໃຊ້ສຳລັບອົງການສືບສວນ-ສອບສວນ, ອົງການໄອຍະການ, ສານ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ (ມ 8 ກດຍ), ຊຶ່ງອົງການດັ່ງກ່າວ ສາມາດດຳເນີນຄະດີອາຍາຕໍ່ບຸກຄົນທີ່ກະທຳຜິດໃນສະຖານຕ່າງໆໃນດິນແດນ ສປປ ລາວ ເທົ່ານັ້ນ. ສະນັ້ນ, ເຫັນໄດ້ວ່າການດຳເນີນຄະດີອາຍາມີຂອບເຂດຈຳກັດທີ່ບໍ່ສາມາດນຳໃຊ້ວິທີການສືບສວນ-ສວບສວນ ແລະ ມາດຕະການສະກັດກັ້ນຕ່າງໆຕໍ່ການກະທຳຜິດຢູ່ນອກດິນແດນ ສປປ ລາວໄດ້. ເຖິງແນວໃດກໍຕາມການກຳນົດຂອບເຂດການດຳເນີນຄະດີອາຍາໄວ້ຄືແນວນັ້ນ ກໍບໍ່ຖືວ່າແມ່ນຄວາມບົກຜ່ອງໃນການຮ່າງກົດໝາຍຂອງ ສປປ ລາວ, ຍ້ອນວ່າຂອບເຂດການນຳໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອາຍາຂອງຫຼາຍປະເທດກໍກຳນົດຂອບເຂດຈຳກັດໄວ້ຄ້າຍຄືກັນ ເຊັ່ນ ການນຳໃຊ້ກົດໝາຍວ່າດ້ວຍການດຳເນີນຄະດີອາຍາມີຂອບເຂດສັ້ນກວ່າການນຳໃຊ້ກົດໝາຍອາຍານັ້ນ ກໍເພື່ອຈຸດປະສົງທີ່ບໍ່ອະນຸຍາດໃຫ້ອົງການດຳເນີນຄະດີອາຍາຂອງປະເທດໃດໜຶ່ງ ມີສິດເຂົ້າມາດຳເນີນການສືບສວນ-ສວບສວນດ້ວຍຕົນເອງ ຫຼື ເຂົ້າມາແຊກແຊງຂະບວນການຍຸຕິທຳຂອງປະເທດໃດໜຶ່ງໄດ້ເພາະຖືວ່າເປັນການລະເມີດອະທິປະໄຕຂອງປະເທດອື່ນ.

ສັງລວມແລ້ວ ທັງສອງກົດໝາຍມີສາຍພົວພັນກັນຢ່າງສະນິດແໜ້ນທີ່ປຽບເໝືອນກົງລໍ້ສອງກົງທີ່ເຄື່ອນໄຫວເກື້ອໜູນກັນຈະຂາດກົງລໍ້ກົງໃດກົງໜຶ່ງບໍ່ໄດ້, ແຕ່ທັງສອງກົດໝາຍກໍມີຈຸດທີ່ແຕກຕ່າງກັນ ເຊັ່ນ ກົດໝາຍອາຍາເປັນກົດໝາຍທີ່ກຳນົດໂທດທາງອາຍາເປັນກົດໝາຍທີ່ກຳນົດຈຸດສິ້ນສຸດຂອງຄະດີ. ສ່ວນກົດໝາຍວ່າດ້ວຍການດຳເນີນຄະດີອາຍາທີ່ເປັນກົດໝາຍກຳນົດຫຼັກການ, ຂັ້ນຕອນ, ວິທີການສືບສວນ-ສວບສວນ ແລະ ມາດຕະການສະກັດກັ້ນຕ່າງໆໃນການດຳເນີນຄະດີອາຍາ. ສະນັ້ນ, ກົດໝາຍອາຍາຈະຖືກຈັດຕັ້ງປະຕິບັດໃນພາກຕົວຈິງໄດ້ກໍຕໍ່ເມື່ອມີກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

### 2.1. ການດຳເນີນຄະດີອາຍາໃນດິນແດນ ສປປ ລາວ

ກໍລະນີບຸກຄົນຜູ້ໃດໜຶ່ງຫາກໄດ້ກະທຳຜິດທາງອາຍາຢູ່ໃນດິນແດນ ສປປ ລາວ ກໍຈະໄດ້ຮັບຜິດຊອບຕາມກົດໝາຍອາຍາ ຫຼື ກົດໝາຍອື່ນ ຂອງ ສປປ ລາວ ທີ່ໄດ້ກຳນົດໂທດທາງອາຍາ (ມ 3 ວັກ1 ກອຍ) ເຫັນວ່າການນຳໃຊ້ກົດໝາຍໃນດິນແດນ ສປປ ລາວ ບໍ່ມີບັນຫາປານໃດ ເພາະບຸກຄົນໃດໄດ້ລະເມີດກົດໝາຍອາຍາກໍຈະຖືກດຳເນີນຄະດີຕາມກົດໝາຍຂອງ ສປປ ລາວ, ຊຶ່ງອົງການທີ່ມີສິດອຳນາດໃນການດຳເນີນຄະດີຈະປະຕິບັດຕາມຂັ້ນຕອນທີ່ກົດໝາຍກຳນົດໄວ້ ເພື່ອຊອກຫາຄວາມຈິງວ່າບຸກຄົນນັ້ນໄດ້ກະທຳຜິດ ຫຼື ເປັນຜູ້ບໍລິສຸດ. ເຖິງຢ່າງໃດກໍຕາມການດຳເນີນຄະດີອາຍາໃນດິນແດນ ສປປ ລາວ ບາງກໍລະນີກໍມີຂອບເຂດຈຳກັດໃນການນຳໃຊ້ເຊັ່ນ:

#### 2.1.1. ບຸກຄົນທີ່ໄດ້ຮັບອະພິສິດຕາມກົດໝາຍພາຍໃນ

ອີງຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເມື່ອມີການກະທຳຜິດຂອງສະມາຊິກສະພາແຫ່ງຊາດ, ຜູ້ພິພາກສາ ແລະ ພິກຊຸ, ສາມະເນນ ສາມາດດຳເນີນຄະດີອາຍາໄດ້ ແຕ່ຕ້ອງໄດ້ປະຕິບັດຕາມວິທີການ ແລະ ຂັ້ນຕອນທີ່ກົດໝາຍກຳນົດໄວ້ເຊັ່ນ:

ສະມາຊິກສະພາແຫ່ງຊາດເປັນບຸກຄົນທີ່ໄດ້ຮັບບຸລິມະສິດຕາມກົດໝາຍ ຍ້ອນວ່າສະມາຊິກສະພາແຫ່ງຊາດ ເປັນຕົວແທນແຫ່ງມານະຈິດ, ສິດ, ຜົນປະໂຫຍດ ແລະ ຄວາມມຸ່ງມາດປາດຖະໜາຂອງປະຊາຊົນບັນດາເຜົ່າ ຊຶ່ງແມ່ນພົນລະເມືອງລາວເປັນຜູ້ເລືອກຕັ້ງ ແລະຢູ່ໃຕ້ການກວດກາຂອງປະຊາຊົນ, ປະຕິບັດສິດ ແລະ ໜ້າທີ່ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ແລະ 20 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ.

ເພື່ອອຳນວຍຄວາມສະດວກແກ່ສະມາຊິກສະພາແຫ່ງຊາດ ໄດ້ປະຕິບັດໜ້າທີ່ຂອງຕົນນັ້ນ ກົດໝາຍຈຶ່ງໃຫ້ອະພິສິດ ເຊັ່ນ ສະມາຊິກສະພາແຫ່ງຊາດຈະບໍ່ຖືກດຳເນີນຄະດີ ຫຼື ຖືກກັກຂັງໂດຍພາລະການ ຖ້າຫາກບໍ່ໄດ້ຮັບຄວາມເຫັນດີຈາກສະພາແຫ່ງຊາດ (ມ 64 ລນ); ຖ້າຫາກວ່າມີຄວາມຈຳເປັນຕ້ອງໄດ້ຈັບຕົວສະມາຊິກສະພາແຫ່ງຊາດ ໃນກໍລະນີທີ່ມີການກະທຳຜິດເຊິ່ງໜ້າ ຫຼື ກໍລະນີທີ່ຮີບດ່ວນນັ້ນ ອົງການທີ່ໄດ້ກັກຂັງສະມາຊິກສະພາແຫ່ງຊາດຕ້ອງລາຍງານທັນທີໃຫ້ຄະນະປະຈຳສະພາແຫ່ງຊາດ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ. ໃນໄລຍະການສືບສວນ-ສອບສວນນັ້ນ ສະມາຊິກສະພາແຫ່ງຊາດຜູ້ຖືກດຳເນີນຄະດີ ຍັງມີສິດເຂົ້າຮ່ວມກອງປະຊຸມສະພາແຫ່ງຊາດໄດ້ (ມ 24 ກົດໝາຍວ່າດ້ວຍສະພາແຫ່ງຊາດ).

ຜູ້ພິພາກສາກໍເປັນຜູ້ທີ່ມີອະພິສິດຕາມກົດໝາຍ ເພາະແມ່ນຜູ້ທີ່ມີມາດຕະຖານ ແລະໄດ້ຮັບການແຕ່ງຕັ້ງຈາກຄະນະປະຈຳສະພາແຫ່ງຊາດໃຫ້ມີສິດດຳເນີນ, ຕັດສິນ ແລະ ພິ

ພາກສາຄະດີ, ມີແຕ່ຜູ້ພິພາກສາທີ່ໄດ້ຮັບການແຕ່ງຕັ້ງຕາມກົດໝາຍເທົ່ານັ້ນຈຶ່ງສາມາດປະກອບເຂົ້າເປັນຄະນະສານຕັດສິນ (ມ 45 ກປຊ) ເພື່ອອຳນວຍຄວາມສະດວກແກ່ຜູ້ພິພາກສາໄດ້ປະຕິບັດໜ້າທີ່ຂອງຕົນນັ້ນກົດໝາຍຈຶ່ງໃຫ້ອະພິສິດ ເຊັ່ນ ໃນກໍລະນີຜູ້ພິພາກສາໄດ້ກະທຳຜິດທາງອາຍາຈະບໍ່ຖືກດຳເນີນຄະດີໂດຍພາລະການ, ຜູ້ພິພາກສາຈະຖືກຈັບຕົວ ຫຼື ຖືກດຳເນີນຄະດີໄດ້ ກໍຕໍ່ເມື່ອຫາກໄດ້ຮັບຄຳເຫັນດີຈາກຄະນະປະຈຳສະພາແຫ່ງຊາດເສຍກ່ອນ. ໃນກໍລະນີທີ່ໄດ້ຈັບຕົວຜູ້ພິພາກສາໃນການກະທຳຜິດເຊິ່ງໜ້າ ແລະ ຮີບດ່ວນຕ້ອງລາຍງານຕໍ່ຄະນະປະຈຳສະພາແຫ່ງຊາດໃນທັນທີ ເພື່ອຂໍຄວາມເຫັນກ່ຽວກັບການດຳເນີນຄະດີໃນຂັ້ນຕໍ່ໄປ. ນອກຈາກນີ້ ການຈັບຕົວຜູ້ພິພາກສາຂອງສານປະຊາຊົນພາກ, ສານປະຊາຊົນແຂວງ, ນະຄອນ, ສານເດັກ ແລະ ສານປະຊາຊົນເຂດນັ້ນ ຕ້ອງລາຍງານໃຫ້ປະທານສານປະຊາຊົນສູງສຸດຊາບນຳ (ມ 48 ວັກ 3 ກປຊ). ສຳລັບຜູ້ພິພາກສາຂອງສານທະຫານນັ້ນຕ້ອງລາຍງານໃຫ້ປະທານສານປະຊາຊົນສູງສຸດ ແລະ ລັດຖະມົນຕີວ່າການກະຊວງປ້ອງກັນປະເທດ[10].

ພິກຂຸ ຫຼື ສາມະເນນ ແມ່ນບຸກຄົນທີ່ໄດ້ຢູ່ໃນສິນທຳ, ຕັດຈາກກິເລດທາງໂລກ ຊຶ່ງເປັນບຸກຄົນຢູ່ໃນອົງການສາສະໜາທີ່ປະຊາຊົນລາວບັນດາເຜົ່າໃຫ້ຄວາມເຄົາລົບນັບຖື. ສະນັ້ນ, ກ່ອນຈະຈັບຕົວພິກຂຸ ຫຼື ສາມະເນນຕ້ອງແຈ້ງໃຫ້ເຈົ້າອະທິການວັດ ຫຼື ຜູ້ຕາງໜ້າຊາບເພື່ອປົງສິກຂາບົດເສຍກ່ອນ ເພື່ອບໍ່ໃຫ້ອົງການສາສະໜາເກີດຄວາມເຊື່ອມເສຍສັດທາ. ໃນກໍລະນີຈັບນັກບວດຂອງສາສະໜາອື່ນ ກໍຕ້ອງແຈ້ງໃຫ້ຫົວໜ້າຮັບຜິດຊອບຂອງອົງການສາສະໜານັ້ນຊາບ (ມ 139 ວັກ 4 ກດຍ).

### 2.1.2. ບຸກຄົນທີ່ໄດ້ຮັບອະພິສິດຕາມສົນທິສັນຍາສາກົນ

ກໍລະນີການກະທຳຜິດຂອງນັກການທູດ ຫຼື ບຸກຄົນທີ່ໄດ້ຮັບອະພິສິດທາງການທູດຕາມສັນຍາລະຫວ່າງຊາດຫາກໄດ້ກະທຳຜິດໃນດິນແດນ ສປປ ລາວ. ຕາມຫຼັກການແລ້ວເມື່ອມີການລະເມີດກົດໝາຍອາຍາຂອງບຸກຄົນໃດໜຶ່ງ ຈະເປັນສາເຫດໃຫ້ມີການດຳເນີນຄະດີອາຍາເກີດຂຶ້ນ ແຕ່ໃນກໍລະນີການກະທຳຜິດຂອງນັກການທູດຖືເປັນກໍລະນີພິເສດ ຊຶ່ງອົງການດຳເນີນຄະດີອາຍາຂອງ ສປປ ລາວ ບໍ່ສາມາດນຳໃຊ້ວິທີການ ຫຼື ມາດຕະການສະກັດກັ້ນຕ່າງໆທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້, ຍ້ອນວ່ານັກການທູດແມ່ນບຸກຄົນທີ່ໄດ້ຮັບອະພິສິດທາງການທູດ ຊຶ່ງເປັນສິດທີ່ລ່ວງລະເມີດບໍ່ໄດ້. ຜູ້ກ່ຽວຈະໄດ້ຮັບການແກ້ໄຂທາງການທູດຕາມລະບຽບການສະເພາະ (ມ 3 ວັກ 2 ກອຍ). ໝາຍຄວາມວ່າຜູ້ກ່ຽວຈະໄດ້ຮັບການຄຸ້ມກັນຈາກການຕ້ອງຄະດີອາຍາຢ່າງສົມບູນ ແລະ ເຕັມສ່ວນ. ແຕ່ການຄຸ້ມ

---

[10] ມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 0132/ ຄປຈ, ລົງວັນທີ 4 ທັນວາ 2013 ວ່າດ້ວຍລະບຽບລັດຖະກອນຕຸລາການ, ມາດຕາ 37

ກັນຈາກການຕ້ອງຄະດີເປັນການປະຕິບັດພິເສດຕໍ່ນັກການທູດ ທັງນີ້ເພື່ອໃຫ້ເຂົາເຈົ້າໄດ້ປະຕິບັດໜ້າທີ່ໄດ້ຢ່າງສະດວກສະບາຍ. ຍ້ອນການປະຕິບັດພິເສດຄືແນວນັ້ນ ນັກການທູດຜູ້ນັ້ນຈຶ່ງຫຼຸດພົ້ນຈາກການຈັດຕັ້ງປະຕິບັດ ຫຼື ຖືກລົງໂທດຕາມກົດໝາຍຂອງລັດທີ່ຮັບ[11]. ສົນທິສັນຍາແຫ່ງກຸງວຽນ ປີ 1961, ມ 31 ວັກ 3 ໄດ້ລະບຸໄວ້ວ່ານັກການທູດໄດ້ຮັບການຄຸ້ມກັນຈາກການຖືກດຳເນີນຄະດີອາຍາຂອງລັດທີ່ຮັບ. ຂໍ້ກຳນົດນີ້ໝາຍຄວາມວ່າສານຂອງລັດທີ່ຮັບບໍ່ມີສິດອຳນາດໃດໆໃນການພິຈາລະນາຕັດສິນການກະທຳຜິດຂອງນັກການທູດ ບໍ່ວ່າການກະທຳຜິດນັ້ນຈະໃນສະຖານໂທສານຸໂທດ ຫຼື ຄະຣຸໂທດ. ຂໍ້ຕົກລົງແຫ່ງກຸງວຽນວ່າດ້ວຍການພົວພັນກ່ຽວກັບກົງສຸນ ປີ 1967, ມ 43 ຂໍ້ 1 ໄດ້ກຳນົດວ່ານັກການທູດບໍ່ສາມາດຖືກຮ້ອງຟ້ອງໄດ້. ດັ່ງນັ້ນ, ລັດທີ່ຮັບບໍ່ມີສິດນຳຕົວນັກການທູດໄປຂຶ້ນສານ.

### 2.2. ການຮ່ວມມືສາກົນກ່ຽວກັບການດຳເນີນຄະດີອາຍານອກດິນແດນ ສປປ ລາວ

ຄືດັ່ງໄດ້ສະເໜີໄປຂ້າງເທິງນັ້ນແລ້ວວ່າ ຂອບເຂດການດຳເນີນຄະດີອາຍາມີຂອບເຂດຈຳກັດ ຊຶ່ງບໍ່ສາມາດນຳໃຊ້ໄດ້ໃນກໍລະນີທີ່ພົນລະເມືອງລາວໄດ້ກະທຳຜິດທາງອາຍາຢູ່ນອກດິນແດນ ເພາະກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ບໍ່ອະນຸຍາດໃຫ້ອົງການດຳເນີນຄະດີອາຍາ ຂອງ ສປປ ລາວ ມີສິດເຂົ້າໄປດຳເນີນການສືບສວນ-ສອບສວນ ຫຼື ເຂົ້າໄປແຊກແຊງຂະບວນການຍຸຕິທຳຂອງປະເທດອື່ນໄດ້ ແຕ່ທັງສອງລັດຕ້ອງອີງໃສ່ຫຼັກການໃນການຮ່ວມມືສາກົນກ່ຽວກັບການດຳເນີນຄະດີອາຍາ ບົນພື້ນຖານເຄົາລົບເອກະລາດ, ອະທິປະໄຕ, ຜືນແຜ່ນດິນອັນຄົບຖ້ວນຂອງກັນ, ບໍ່ແຊກແຊງເຂົ້າວຽກງານພາຍໃນຂອງກັນ, ຮ່ວມມື, ຊ່ວຍເຫຼືອຊຶ່ງກັນ ແລະ ກັນທາງດ້ານຍຸຕິທຳ; ເຄົາລົບ ແລະ ປະຕິບັດສັນຍາ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີເປັນຕົ້ນແມ່ນສົນທິສັນຍາວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ ໃນເວລາດຽວກັນກໍບໍ່ສາມາດປະປ່ອຍຜູ້ກະທຳຜິດໄປ ໂດຍບໍ່ໄດ້ຮັບຜິດຊອບທາງອາຍາ, ອີກດ້ານໜຶ່ງ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງຫຼາຍປະເທດກໍບໍ່ອະນຸຍາດໃຫ້ມີການຕັດສິນລັບຫຼັງຜູ້ທີ່ຖືກຫາ ຊຶ່ງຕ່າງຈາກການດຳເນີນຄະດີແພ່ງ. ສະນັ້ນ, ວິທີທີ່ດີທີ່ສຸດລະຫວ່າງປະເທດ ຫຼື ຫຼາຍປະເທດ ຈຶ່ງຖືເອົາການຮ່ວມມືລະຫວ່າງປະເທດ ຊຶ່ງປະເທດທີ່ຖືກເສັຍຫາຍສາມາດຮ້ອງຂໍໃຫ້ປະເທດທີ່ຜູ້ກະທຳຜິດເອົາຕົວລີ້ຊ່ອນ ໃຫ້ການຮ່ວມມືທຳການຈັບກຸມຜູ້ກ່ຽວ ແລ້ວນຳຕົວຜູ້ກ່ຽວມາດຳເນີນຄະດີອາຍາຕາມກົດໝາຍຂອງປະເທດທີ່ຖືກເສັຍຫາຍ. ການສົ່ງຜູ້ຮ້າຍຂ້າມແດນເປັນການຮ່ວມມືຊຶ່ງກັນ ແລະ ກັນທາງດ້ານກົດໝາຍໃນເລື່ອງອາຍາ ແມ່ນການສົ່ງມອບຜູ້ຖືກຫາ ຫຼື ຜູ້ກະທຳຜິດທີ່ຕ້ອງການຕົວໂດຍລັດທີ່ຖືກຮ້ອງຂໍໃຫ້ແກ່ລັດທີ່ຮ້ອງຂໍ ເພື່ອນຳໄປດຳເນີນຄະດີອາຍາ ຫຼື ປະຕິບັດໂທດຢູ່ໃນລັດທີ່ຮ້ອງຂໍ ຊຶ່ງ

---

[11] ບຸນເກີດ ສັງສົມສັກ, ຫຼັກການການທູດ, ປີ 2006, ໜ້າ 356

ອາດຈະເກີດມາຈາກສົນທິສັນຍາແບບທະວິພາຄີ (Bilateral Treaty) ຫຼື ແບບພະຫຸພາຄີ (Multilateral Treaty) ຫຼື ບໍ່ມີສັນຍາພົວພັນໂດຍອີງໃສ່ຫຼັກການເພິ່ງພາອາໄສກັນ (Reciprocity) ຫຼື ຜ່ານການອີງການຕຳຫຼວດອາຊະຍາກຳລະຫວ່າງປະເທດ (The International Criminal Police Organization-INTERPOL) ຫຼື ຜ່ານຕຳຫຼວດອາຊຽນ (The Association of National Police Forces of the ASEAN Region-ASEANAPOL). ສະນັ້ນ, ຈຶ່ງສະຫຼຸບໄດ້ວ່າການສົ່ງຜູ້ຮ້າຍຂ້າມແດນນັ້ນສາມາດປະຕິບັດໄດ້ໃນຂອບເຂດ: (1) ສົນທິສັນຍາສາກົນລະຫວ່າງລັດ; (2) ກົດໝາຍພາຍໃນຂອງແຕ່ລະລັດ.

# ບົດທີ 3
# ອົງການທີ່ກ່ຽວຂ້ອງກັບການດຳເນີນຄະດີອາຍາ

## 1. ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາ

ອົງການທີ່ມີສິດອຳນາດໃນການດຳເນີນຄະດີອາຍາປະກອບດ້ວຍ ອົງການສືບສວນ -ສອບສວນ; ອົງການໄອຍະການ ແລະ ສານ (ມ 45 ກດຍ), ຊຶ່ງມີລາຍລະອຽດດັ່ງນີ້:

### 1.1. ອົງການສືບສວນ-ສອບສວນ

ອົງການສືບສວນ-ສອບສວນ ແມ່ນອົງການຈັດຕັ້ງຂອງລັດທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ, ກະຊວງປ້ອງກັນປະເທດ, ກະຊວງການເງິນ, ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງຢູ່ພາຍໃຕ້ການຕິດຕາມກວດກາຂອງອົງການໄອຍະການປະຊາຊົນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ອົງການສືບສວນ-ສອບສວນມີໜ້າທີ່ໃນການຈັດຕັ້ງປະຕິບັດກົດໝາຍໂດຍສະເພາະແມ່ນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເພື່ອຊອກໃຫ້ເຫັນການກະທຳຜິດ ແລະ ການລະເມີດກົດໝາຍ, ຮັບປະກັນໃນການດຳເນີນຄະດີອາຍາໃຫ້ຖືກຕ້ອງ, ຍຸຕິທຳ ແລະ ເປັນທຳ. ການເຄື່ອນໄຫວຂອງອົງການດັ່ງກ່າວເພື່ອຊອກໃຫ້ເຫັນການກະທຳຜິດນັ້ນຕ້ອງດຳເນີນຢູ່ບົນພື້ນຖານການເຄົາລົບ ແລະ ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ. ອົງການສືບສວນ-ສອບສວນມີຄື ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ, ອົງການສືບສວນ -ສອບສວນຂອງເຈົ້າໜ້າທີ່ພາສີ, ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້, ອົງການສືບສວນ-ສອບສວນຂອງຕ້ານການສໍ້ລາດບັງຫຼວງ ແລະ ອົງການສືບສວນ-ສອບສວນຂອງພາກສ່ວນອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ, ລາຍລະອຽດຂອງແຕ່ລະອົງການສືບສວນ-ສອບສວນມີດັ່ງນີ້:

**1.1.1.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດມີສິດ ແລະ ໜ້າທີ່ດຳເນີນການສືບສວນ-ສວບສວນກ່ຽວກັບທຸກການກະທຳຜິດທີ່ຢູ່ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ (ມ 76 ກດຍ).

**ກ.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດຂັ້ນສູນກາງ ຕັ້ງຢູ່ກະຊວງປ້ອງກັນຄວາມສະຫງົບຄື: ກົມສືບສວນ-ສອບສວນ (ກົມຕຳຫຼວດສືບສວນ-ສອບສວນ) ແມ່ນອົງການຈັດຕັ້ງສູງສຸດຂອງອົງການສືບສວນ-ສອບສວນ ມີພາລະບົດບາດໃນການຊີ້ນຳ-ນຳພາການເຄື່ອນໄຫວວຽກງານ ຂອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດຂັ້ນທ້ອງຖິ່ນ ແລະ ດຳເນີນວຽກງານວິຊາສະເພາະຂອງຕົນ. ນອກຈາກການປະຕິບັດສິດ ແລະ ໜ້າທີ່ຕາມທີ່ກຳນົດໄວ້ໃນກົດໝາຍແລ້ວ ຍັງເຮັດໜ້າທີ່ນຳພາວຽກງານວິຊາສະເພາະສືບສວນ

-ສອບສວນຕາມສາຍຕັ້ງ ຂອງເຈົ້າໜ້າທີ່ຕຳຫຼວດສືບສວນ-ສອບສວນໃນຂອບເຂດທົ່ວປະເທດ. ພ້ອມກັນນັ້ນຍັງປະຕິບັດໜ້າທີ່ວິຊາສະເພາະຂອງຕົນ ເຊັ່ນ ອອກຄຳສັ່ງເປີດການສືບສວນ-ສອບສວນຄະດີອາຍາທີ່ສຳຄັນຄືການກະບົດ, ການທຳລະຍົດຕໍ່ຊາດ. ໃນເມື່ອໄດ້ຮັບການລາຍງານ ຫຼື ກັກຕົວຜູ້ກະທຳຜິດໃນສະຖານກະບົດ, ເຈົ້າໜ້າທີ່ຕຳຫຼວດຂັ້ນສູນກາງຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນ ຈາກນັ້ນກໍຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການປະຊາຊົນຊາບໃນທັນໃດ.

**ຂ.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດແຂວງ, ນະຄອນແມ່ນຕັ້ງເປັນກອງຄະດີ ຊຶ່ງຂຶ້ນກັບກອງບັນຊາການ ປກສ ແຂວງ, ນະຄອນມີພາລະບົດບາດດຳເນີນຄະດີອາຍາພາຍໃນແຂວງ, ນະຄອນທີ່ຢູ່ໃນຂອບເຂດທີ່ຕົນເອງຮັບຜິດຊອບເພື່ອປະກອບຫຼັກຖານໃນຄະດີອາຍາໃຫ້ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ. ໃນການດຳເນີນຄະດີອາຍາໃດໜຶ່ງທີ່ຢູ່ໃນຂອບເຂດຕົນເອງຮັບຜິດຊອບນັ້ນ ອົງການສືບສວນ-ສອບສວນດັ່ງກ່າວມີສິດອອກຄຳສັ່ງເປີດການສືບສວນ-ສອບສວນ ແລະ ດຳເນີນການສືບສວນ-ສອບສວນທຸກຄະດີອາຍາທີ່ເຫັນວ່າມີຄວາມຈຳເປັນ ແລະ ຢູ່ໃນຂອບເຂດສິດອຳນາດຂອງຕົນຕາມກົດໝາຍເພື່ອໃຫ້ສຳເລັດໃນການດຳເນີນຄະດີ (ມ 83 ກດຍ).

**ຕົວຢ່າງ:** ຄະດີຄາດຕະກຳໄດ້ເກີດຂຶ້ນຢູ່ແຂວງເຊກອງ ກໍແມ່ນເຈົ້າໜ້າທີ່ຕຳຫຼວດອົງການສືບສວນ-ສອບສວນແຂວງເຊກອງ ເປັນອົງການທີ່ມີສິດໜ້າທີ່ເປີດການສືບສວນ-ສອບສວນ ແລະ ດຳເນີນການສືບສວນ-ສອບສວນເຫດທີ່ເກີດຂຶ້ນຢູ່ໃນຂອບເຂດຂອງຕົນ.

**ຄ.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດເມືອງ ແມ່ນຕັ້ງເປັນກອງຄະດີເມືອງຊຶ່ງຂຶ້ນກັບກອງບັນຊາການ ປກສ ເມືອງ ມີພາລະບົດບາດໃນການດຳເນີນຄະດີອາຍາທີ່ເກີດຂຶ້ນຢູ່ໃນຂອບເຂດເມືອງທີ່ຕົນຮັບຜິດຊອບ ເພື່ອປະກອບຫຼັກຖານໃນຄະດີອາຍາໃຫ້ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

**1.1.2.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານມີສິດ ແລະ ໜ້າທີ່ດຳເນີນການສືບສວນ-ສອບສວນກ່ຽວກັບການກະທຳຜິດຂອງທະຫານໃນເວລາເຄື່ອນໄຫວປະຕິບັດໜ້າທີ່ລັດຖະການ, ການກະທຳຜິດທີ່ເກີດຂຶ້ນຢູ່ບ່ອນຕັ້ງທັບ, ຄ້າຍ, ກົມກອງທະຫານ, ໂຮງຈັກ, ໂຮງງານ ຫຼື ສະຖານທີ່ຫວງຫ້າມຂອງກອງທັບ (ມ 77 ກດຍ).

**ກ.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານຂັ້ນສູນກາງ ຕັ້ງຢູ່ກະຊວງປ້ອງປະເທດແມ່ນການຈັດຕັ້ງໜຶ່ງຂອງກະຊວງປ້ອງປະເທດ ຊຶ່ງນອນຢູ່ໃນລະບົບອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ ແລະ ດຳເນີນການສືບສວນ-ສອບສວນຄະດີຢູ່ໃນຂອບເຂດສິດໜ້າທີ່ຂອງຕົນພ້ອມທັງປະຕິບັດສິດ ແລະ ໜ້າທີ່ໃນການຊີ້ນຳ-ນຳພາການຈັດຕັ້ງປະຕິບັດວຽກງານສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານຂັ້ນທ້ອງຖິ່ນໃນທົ່ວປະເທດ.

**ຂ.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ ເປັນອົງການສືບສວນ-ສອບສວນທີ່ຕັ້ງຢູ່ກອງບັນຊາການທະຫານແຂວງ, ນະຄອນ, ກອງພົນ, ກອງພັນໃຫຍ່ ແລະ ທຽບເທົ່າທີ່ຂຶ້ນກັບກະຊວງປ້ອງກັນປະເທດ ມີພາລະບົດບາດ ໃນການອອກຄຳສັ່ງເປີດການສືບສວນ-ສອບສວນ ແລະ ດຳເນີນການສືບສວນ-ສອບສວນຄະດີອາຍາ ທີ່ຜູ້ກະທຳຜິດທີ່ກ່ຽວຂ້ອງໃນຂົງເຂດວຽກງານທະຫານ ແລະ ໃນຂອບເຂດທີ່ຕັ້ງທັບຂອງທະຫານ (ມ 20 ກຍກ ແລະ ລາຍລະອຽດໄດ້ກຳນົດໃນກົດໝາຍວ່າດ້ວຍອົງການໄອຍະການທະຫານ).

**ຕົວຢ່າງ:** ຢູ່ໃນກອງພົນແຫ່ງໜຶ່ງມີນາຍທະຫານພ້ອມພັກພວກຈຳນວນໜຶ່ງໄດ້ຍັກຍອກເອົາອາວຸດ ຫຼື ວັດຖຸຈຳນວນໜຶ່ງທີ່ລັດຖະບານປະກອບໃຫ້ມາເປັນຂອງຕົນເອງ ຕໍ່ກັບການກະທຳດັ່ງກ່າວນີ້ ເຈົ້າໜ້າທີ່ສືບສວນ-ສອບສວນຂອງກອງພົນຕ້ອງໄດ້ອອກຄຳສັ່ງເປີດການສືບສວນ-ສອບສວນຕໍ່ເຫດການດັ່ງກ່າວ ພ້ອມແຈ້ງໃຫ້ຫົວໜ້າອົງການໄອຍະການທະຫານຂັ້ນຂອງຕົນຮັບຊາບໃນເວລາອັນຄວນ.

**1.1.3.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ພາສີມີສິດ ແລະ ໜ້າທີ່ດຳເນີນການສືບສວນ-ສອບສວນກ່ຽວກັບການລະເມີດລະບຽບການ ກ່ຽວກັບລະບອບພາສີອາກອນຂອງລັດທີ່ໄດ້ກຳນົດໃນກົດໝາຍອາຍາ, ກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ (ມ 78 ກດຍ). ອົງການດັ່ງກ່າວມີໜ້າທີ່ດຳເນີນການກວດສອບຄືນຫຼັງການແຈ້ງພາສີ, ການກວດກາ ແລະ ສະກັດກັ້ນການລັກລອບໜີພາສີ, ດຳເນີນ ແລະ ການແກ້ໄຂຄະດີທາງພາສີຕາມມາດຕາ 75 ຂໍ້ 9 ແລະ ຂໍ້ 11 ຂອງກົດໝາຍວ່າດ້ວຍພາສີ.

**ກ.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ພາສີຂັ້ນສູນກາງ ແມ່ນການຈັດຕັ້ງໜຶ່ງທີ່ຕັ້ງຢູ່ກະຊວງການເງິນ ແລະ ນອນຢູ່ໃນລະບົບອົງການສືບສວນ-ສອບສວນມີພາລະບົດບາດໃນການຊີ້ນຳ-ນຳພາວຽກງານການສືບສວນ-ສອບສວນ ກ່ຽວກັບການກະທຳຜິດຕໍ່ລະບອບພາສີ-ອາກອນຂອງລັດໃນຂອບເຂດທົ່ວປະເທດ ທີ່ສ້າງຄວາມເສັຍຫາຍເປັນຈຳນວນຫຼວງຫຼາຍແກ່ປະເທດຊາດ. ອົງການດັ່ງກ່າວມີສິດ ແລະ ໜ້າທີ່ຕາມໄດ້ກຳນົດໄວ້ໃນກົດໝາຍ.

**ຂ.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ພາສີຂັ້ນເຂດປັດຈຸບັນມີ 5 ເຂດໃນທົ່ວປະເທດ ຊຶ່ງແມ່ນອົງການຈັດຕັ້ງຂອງກະຊວງການເງິນນອນຢູ່ໃນລະບົບອົງການສືບສວນ-ສອບສວນທີ່ປະຈຳຢູ່ພະແນກການເງິນແຂວງ, ນະຄອນທີ່ຕົນຄຸ້ມຄອງ ໝາຍຄວາມວ່າອົງການດັ່ງກ່າວ ມີສິດອອກຄຳສັ່ງເປີດການສືບສວນ-ສອບສວນຕໍ່ທຸກການກະທຳຜິດໃນຂອບເຂດວຽກງານພາສີ-ອາກອນທີ່ຕົນເອງຮັບຜິດຊອບ.

**ຕົວຢ່າງ** : ການຂາຍສິນຄ້າທີ່ເກືອດຫ້າມຢູ່ແຂວງຊຽງຂວາງແມ່ນສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ພາສີຂອງແຂວງນັ້ນເປັນຜູ້ດຳເນີນການເປີດການສືບສວນ-ສອບສວນ ແລະ ດຳເນີນຄະດີອາຍາຕາມສິດໜ້າທີ່ຂອງຕົນ. ນອກຈາກນີ້, ອົງການດັ່ງກ່າວຍັງປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**1.1.4.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ມີສິດ ແລະ ໜ້າທີ່ກວດກາ, ສືບສວນ-ສອບສວນກ່ຽວກັບການລະເມີດກົດໝາຍປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນທຳມະຊາດໃນຂອບເຂດທົ່ວປະເທດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ, ກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ (ມ 79 ກດຍ).

**ກ.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຂັ້ນສູນກາງ ແມ່ນຕັ້ງຢູ່ກະຊວງກະສິກຳ-ປ່າໄມ້ທີ່ນອນຢູ່ໃນລະບົບອົງການສືບສວນ-ສອບສວນ, ມີພາລະບົດບາດຊີ້ນຳ-ນຳພາວຽກງານການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຂັ້ນທ້ອງຖິ່ນພ້ອມທັງປະຕິບັດສິດ ແລະ ໜ້າທີ່ທາງດ້ານວິຊາສະເພາະໃນການສືບສວນ -ສອບສວນຄະດີອາຍາທີ່ເນື່ອງມາຈາກການຕັດໄມ້ທຳລາຍປ່າ ແລະ ຊັບພະຍາກອນທຳມະຊາດໃນຂອບເຂດທົ່ວປະເທດທີ່ສ້າງຄວາມເສັຍຫາຍອັນໃຫຍ່ຫຼວງ ໃຫ້ແກ່ເສດຖະກິດຂອງຊາດໂດຍການເປີດການສືບສວນ-ສອບສວນ ແລະ ດຳເນີນການສືບສວນ-ສອບສວນເພື່ອປະກອບຫຼັກຖານໃນການດຳເນີນຄະດີໃຫ້ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

**ຕົວຢ່າງ:** ການຕັດໄມ້ທຳລາຍປ່າໄມ້ໃນເຂດຫວງຫ້າມ ທີ່ພາໃຫ້ເກີດຄວາມເສັຍຫາຍຢ່າງຫຼວງຫຼາຍຕໍ່ການກະທຳດັ່ງກ່າວ ແມ່ນອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ຈະເປັນຜູ້ອອກຄຳສັ່ງເປີດການສືບສວນ-ສອບສວນ ແລະ ດຳເນີນຄະດີຕາມລະບຽບກົດໝາຍ.

**ຂ.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ແຂວງ, ນະຄອນ ທີ່ຂຶ້ນກັບພະແນກກະສິກຳປ່າໄມ້ແຂວງ, ນະຄອນ ແມ່ນການຈັດຕັ້ງໜຶ່ງທີ່ນອນຢູ່ໃນລະບົບອົງການສືບສວນ-ສອບສວນ ມີພາລະບົດບາດຊີ້ນຳ-ນຳພາວຽກງານດັ່ງກ່າວໃນຂອບເຂດແຂວງ, ນະຄອນທີ່ຕົນຮັບຜິດຊອບ ແລະ ດຳເນີນວຽກງານວິຊາສະເພາະຂອງຕົນໃນການເປີດການສືບສວນ-ສອບສວນຕໍ່ເຫດການທີ່ເປັນການທຳລາຍປ່າໄມ້ ແລະ ຊັບພະຍາກອນທຳມະຊາດ ຊຶ່ງນອນຢູ່ໃນຂອບເຂດສິດໜ້າທີ່ທີ່ຕົນເອງຮັບຜິດຊອບ.

**ຕົວຢ່າງ** : ການຕັດໄມ້ທຳລາຍປ່າ ຫຼື ການຂຸດຄົ້ນຊັບພະຍາກອນທຳມະຊາດໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງທີ່ເກີດຂຶ້ນຢູ່ແຂວງໄຊຍະບູລີ ກໍຕ້ອງແມ່ນເຈົ້າໜ້າທີ່ສືບສວນ-ສອບສວນຂອງແຂວງດັ່ງກ່າວ ເປັນຜູ້ອອກຄຳສັ່ງເປີດການສືບສວນ-ສອບສວນ ແລະ ດຳເນີນຄະດີຕາມກົດໝາຍ.

ຄ. ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ເມືອງ ແມ່ນອົງການຈັດຕັ້ງໜຶ່ງທີ່ປະຈຳຢູ່ແຕ່ລະເມືອງ ແລະ ນອນຢູ່ໃນລະບົບຂອງອົງການສືບສວນ-ສອບສວນ ມີພາລະບົດບາດໃນການເປີດການສືບສວນ-ສອບສວນ ແລະ ດຳເນີນການສືບສວນ-ສອບສວນຕໍ່ເຫດການທີ່ເປັນການກະທຳຜິດທາງອາຍາໃນສະຖານການທຳລາຍປ່າໄມ້ ແລະ ຊັບພະຍາກອນທຳມະຊາດໃນຂອບເຂດເມືອງທີ່ຕົນຄຸ້ມຄອງ.

**1.1.5.** ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ ແມ່ນອົງການສືບສວນ-ສວບສວນ ທີ່ດຳເນີນການສືບສວນ-ສວບສວນຄະດີທີ່ກ່ຽວຂ້ອງກັບການກະທຳຜິດຂອງພະນັກງານທີ່ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງຕາມມາດຕາ 11 ຂອງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ມາດຕາ 80 ຂອງກົດໝາຍອາຍາ.

ອົງການຕ້ານການສໍ້ລາດບັງຫຼວງ ແມ່ນອົງການລັດຊຶ່ງມີພາລະບົດບາດສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງໃນຂອບເຂດທົ່ວປະເທດໂດຍມອບໃຫ້ອົງການກວດກາແຫ່ງລັດຢູ່ໃນຂັ້ນສູນກາງ ແລະ ອົງການກວດກາແຫ່ງລັດຢູ່ຂັ້ນແຂວງເປັນຜູ້ຈັດຕັ້ງປະຕິບັດ.

ອົງການຕ້ານການສໍ້ລາດບັງຫຼວງມີຖານະເປັນອົງການສືບສວນ-ສອບສວນ ແລະ ປະຕິບັດພາລະບົດບາດຂອງຕົນຢ່າງເປັນເອກະລາດຕາມມາດ 37 ຂອງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ, ສ່ວນການດຳເນີນຄະດີແມ່ນກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ.

**1.1.6.** ອົງການສືບສວນ-ສອບສວນຂອງພາກສ່ວນອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 46 ກດຍ) ມີສິດ ແລະ ໜ້າທີ່ດຳເນີນການສືບສວນ-ສອບສວນກ່ຽວກັບການກະທຳຜິດທີ່ກ່ຽວຂ້ອງໃນພາກສ່ວນຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ (ມ 81 ກດຍ).

ບັນດາອົງການສືບສວນ-ສອບສວນທີ່ກ່າວມາເທິງນີ້ລ້ວນແຕ່ໄດ້ປະຕິບັດສິດ ແລະ ໜ້າທີ່ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ອົງການສືບສວນ-ສອບສວນແຕ່ລະຂັ້ນ ມີສິດແຕກຕ່າງກັນທາງດ້ານພື້ນທີ່ໃນການດຳເນີນການສືບສວນ-ສອບສວນ ເຊັ່ນ ອົງການສືບສວນ-ສອບສວນຂັ້ນເມືອງມີສິດ ແລະ ໜ້າທີ່ດຳເນີນການສືບສວນ-ສອບສວນຄະດີອາຍາ ທີ່ເກີດຂຶ້ນພາຍໃນຂອບເຂດເມືອງຂອງຕົນ. ອົງການສືບສວນ-ສອບສວນຂັ້ນແຂວງມີສິດ ແລະ ໜ້າທີ່ດຳເນີນການສືບສວນ-ສອບສວນຄະດີອາຍາທີ່ເກີດຂຶ້ນພາຍໃນຂອບເຂດແຂວງ, ນະຄອນຂອງຕົນ. ອົງການສືບສວນ-ສອບສວນຂັ້ນສູນກາງທີ່ມີສິດ ແລະ ໜ້າທີ່ດຳເນີນການສືບສວນ-ສອບສວນຄະດີອາຍາ ຊຶ່ງໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ (ມ 83 ກດຍ).

ນອກຈາກນັ້ນ, ບັນດາອົງການສືບສວນ-ສອບສວນທີ່ກ່າວມານັ້ນມີສິດ ແລະ ໜ້າທີ່ໃນການຮັບ ແລະ ບັນທຶກການແຈ້ງຄວາມກ່ຽວກັບການກະທຳຜິດ, ລາຍງານໃຫ້ຫົວໜ້າອົງການໄອຍະການຊາບຢ່າງທັນການກ່ຽວກັບການກະທຳຜິດ, ສາມາດອອກຄຳສັ່ງເປີດການສືບສວນ-ສອບສວນຄະດີທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເມື່ອມີສາເຫດໃດໜຶ່ງທີ່ກຳນົດໄວ້ໃນກົດໝາຍ ແລະ ສົ່ງສຳເນົາຄຳສັ່ງນັ້ນລາຍງານໃຫ້ຫົວໜ້າອົງການໄອຍະການຊາບໃນທັນໃດ, ດຳເນີນການສືບສວນ-ສອບສວນ ແລະ ນຳໃຊ້ມາດຕະການສະກັດກັ້ນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ລວມທັງການປ່ອຍຕົວຜູ້ຖືກສົງໄສທີ່ໄດ້ຖືກກັກຕົວ ແລະ ລາຍງານເປັນລາຍລັກອັກສອນໃຫ້ຫົວໜ້າອົງການໄອຍະການຊາບ, ຂໍອຸທອນຄຳສັ່ງຂອງຫົວໜ້າອົງການໄອຍະການຂັ້ນຂອງຕົນ ຂຶ້ນຫາຫົວໜ້າອົງການໄອຍະການຂັ້ນເທິງ, ປະສານສົມທົບກັບອົງການອື່ນທີ່ກ່ຽວຂ້ອງ. ພາຍຫຼັງທີ່ໄດ້ສະຫຼຸບການສືບສວນ-ສອບສວນແລ້ວຕ້ອງປະກອບສຳນວນຄະດີພ້ອມດ້ວຍຂອງກາງ ສົ່ງໃຫ້ຫົວໜ້າອົງການໄອຍະການ (ມ 47 ກດຍ).

ຜູ້ມີສິດໃນການດຳເນີນຄະດີອາຍາມີຫົວໜ້າ, ຮອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ຜູ້ຊ່ວຍເຈົ້າໜ້າທີ່ສືບສວນ-ສອບສວນ (ມ 52 ຂໍ້ 1 ກດຍ).

ສຳລັບຂັ້ນຕອນ, ບັນດາຫຼັກການ, ວິທີການ ແລະ ການນຳໃຊ້ມາດຕະການສະກັດກັ້ນຂອງອົງການສືບສວນ-ສອບສວນໄດ້ກຳນົດໄວ້ລະອຽດໃນພາກທີ III.

**1.2. ອົງການໄອຍະການປະຊາຊົນ**

ອົງການໄອຍະການປະຊາຊົນ ແມ່ນອົງການລັດທີ່ເຮັດໜ້າທີ່ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃນຂອບເຂດທົ່ວປະເທດ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ (ມ 2 ກຍກ).

ລະບົບການຈັດຕັ້ງຂອງອົງການໄອຍະການປະຊາຊົນ (ມ 11 ກຍກ ແລະ ມ 48 ກດຍ) ປະກອບດ້ວຍ ອົງການໄອຍະການປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນພາກ, ອົງການໄອຍະການປະຊາຊົນແຂວງ, ນະຄອນ, ອົງການໄອຍະການປະຊາຊົນເຂດ ແລະ ອົງການໄອຍະການທະຫານ (ມ 21 ວັກ 2 ກຍກ, ໂຄງປະກອບການຈັດຕັ້ງ, ບຸກຄະລາກອນ, ສິດ ແລະ ໜ້າທີ່ຂອງອົງການໄອຍະການທະຫານໄດ້ກຳນົດໄວ້ໃນນິຕິກຳສະເພາະ).

ອົງການໄອຍະການປະຊາຊົນສູງສຸດ ແມ່ນ ອົງການຕິດຕາມກວດກາສູງສຸດ ຂອງລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ຊີ້ນຳ, ນຳພາ ອົງການໄອຍະການປະຊາຊົນຂັ້ນລຸ່ມ ແລະ ອົງການໄອຍະການທະຫານ ໃນການຕິດຕາມກວດກາການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນທົ່ວປະເທດ (ມ 12 ກຍກ).

ອົງການໄອຍະການປະຊາຊົນພາກ ແມ່ນອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ຕິດຕາມກວດກາການປະຕິບັດກົດໝາຍ ໃຫ້ຖືກຕ້ອງ ແລະ ເປັນເອກະພາບ ໃນຂອບເຂດພາກທີ່ຕົນຮັບຜິດຊອບ. ອົງການໄອຍະການປະຊາຊົນພາກຕັ້ງຂຶ້ນຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງ ສປປ ລາວ (ມ 14 ກຍກ).

ອົງການໄອຍະການປະຊາຊົນແຂວງ, ນະຄອນ ແມ່ນອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບ ຢູ່ໃນຂອບເຂດແຂວງ, ນະຄອນ ແລະ ສັ່ງຟ້ອງຜູ່ຖືກຫາຂຶ້ນ ສານ (ມ 16 ກຍກ).

ອົງການໄອຍະການປະຊາຊົນເຂດ ແມ່ນອົງການໜຶ່ງໃນລະບົບອົງການໄອຍະການປະຊາຊົນ, ມີພາລະບົດບາດ ຕິດຕາມກວດກາການປະຕິບັດກົດໝາຍໃຫ້ຖືກຕ້ອງ ແລະ ເປັນເອກະພາບຢູ່ໃນຂອບເຂດເມືອງ ທີ່ຂຶ້ນກັບເຂດຂອງຕົນ ແລະ ສັ່ງຟ້ອງຜູ່ຖືກຫາຂຶ້ນສານ. ອົງການໄອຍະການປະຊາຊົນເຂດສ້າງຕັ້ງຂຶ້ນໂດຍເອົາເມືອງໃດໜຶ່ງ ຫຼື ຫຼາຍເມືອງ ມາໂຮມເຂົ້າກັນເປັນເຂດໜຶ່ງຕາມ ສະພາບພູມສາດ, ການຂະຫຍາຍຕົວທາງດ້ານເສດຖະ ກິດ-ສັງຄົມ ຫຼື ມີຄະດີເກີດຂຶ້ນຫຼາຍ. (ເບິ່ງແຜນວາດ 1: ກົງຈັກການຈັດຕັ້ງຂອງອົງການໄອຍະການປະຊາຊົນ ຢູ່ ສປປ ລາວ).

ສໍາລັບເມືອງທີ່ຢູ່ພາຍໃນເຂດ ຊຶ່ງບໍ່ມີອົງການໄອຍະການປະຊາຊົນເຂດຕັ້ງຢູ່ນັ້ນ ໃຫ້ມີພະນັກງານໄອຍະການປະຊາຊົນ ໜຶ່ງ ຫາ ສອງຄົນ ປະຈໍາຢູ່ ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນເຂດ ຕາມທີ່ກົດໝາຍໄດ້ກໍານົດໄວ້.

ໃນກໍລະນີທີ່ ອົງການໄອຍະການປະຊາຊົນເຂດໃດໜຶ່ງ ຫາກບໍ່ທັນສາມາດເຄື່ອນໄຫວໄດ້ ຕາມພາລະບົດບາດນັ້ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມີສິດຕົກລົງ ມອບສິດ ແລະ ໜ້າທີ່ ໃຫ້ອົງການໄອຍະການປະຊາຊົນເຂດທີ່ຢູ່ໃກ້ຄຽງ ຮັບຜິດຊອບວຽກງານແທນຊົ່ວຄາວ(ມ 18 ກຍກ).

ໃນການດໍາເນີນຄະດີອາຍາອົງການໄອຍະການປະຊາຊົນມີສິດ ແລະ ໜ້າທີ່ ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ, ດໍາເນີນການສືບສວນ-ສອບສວນຄະດີໃດໜຶ່ງເປັນບາງສ່ວນ ຫຼື ທັງໝົດ, ສັ່ງຟ້ອງຜູ່ຖືກຫາຂຶ້ນສານ, ຕິດຕາມກວດກາການປະຕິບັດກົດໝາຍໃນການດໍາເນີນຄະດີຢູ່ສານ, ຕິດຕາມກວດກາການປະຕິບັດຄໍາສັ່ງ, ຄໍາຊີ້ຂາດ, ຄໍາຕັດສິນ, ຄໍາພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ, ຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ, ຄ້າຍດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການບັງຄັບອື່ນຂອງສານ, ຕິດຕາມກວດກາການຄົ້ນຄວ້າ, ການສະເໜີ ແລະ ການຈັດຕັ້ງປະຕິບັດການໃຫ້ອະໄພຍະໂທດຕາມລັດຖະດໍາ

ລັດຂອງປະຫານປະເທດ, ປະສານສົມທົບກັບອົງການສືບສວນ-ສອບສວນ ແລະ ອົງການອື່ນ ທີ່ກ່ຽວຂ້ອງ ດຳເນີນການ ສະກັດກັ້ນ, ຕ້ານອາຊະຍາກຳ ຫຼື ການກະທຳຜິດ ແລະ ການລະ ເມີດກົດໝາຍອື່ນ ພ້ອມທັງລົບລ້າງບັນດາສາເຫດ ແລະ ເງື່ອນໄຂ ທີ່ພາໃຫ້ການກະທຳຜິດ ເກີດຂຶ້ນ, ຮື້ຟື້ນຄະດີ ຕາມກົດໝາຍ ໃນກໍລະນີທີ່ມີຫຼັກຖານໃໝ່, ປະຕິບັດສິດ ແລະ ໜ້າ ທີ່ອື່ນ ຕາມທີ່ກົດໝາຍໄດ້ກຳນົດໄວ້ (ມ 10 ກຍກ).

ຜູ້ມີສິດໃນການດຳເນີນຄະດີອາຍາ ພາກສ່ວນອົງການໄອຍະການມີຫົວໜ້າ, ຮອງຫົວ ໜ້າອົງການໄອຍະການ, ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ (ມ 52 ຂໍ້ 2 ກດຍ), ບຸກຄົນດັ່ງກ່າວໃນຖານະທີ່ເປັນບຸກຄະລາກອນຢູ່ພາຍໃຕ້ການຄຸ້ມຄອງຂອງ ອົງການໄອຍະການ ຊຶ່ງເປັນອົງການເອກະລາດ ທີ່ບໍ່ຖືກແຊກແຊງຈາກໜ່ວຍງານອື່ນ. ພະ ນັກງານໄອຍະການມີບົດບາດທີ່ສຳຄັນໃນການຊອກຫາຄວາມຈິງ ເພື່ອຊອກໃຫ້ເຫັນການກະ ທຳຜິດຢ່າງຮີບດ່ວນ, ຄົບຖ້ວນ ແລະ ຮອບຄອບ, ນຳເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ ບໍ່ປະປ່ອຍໃຫ້ຜູ້ກະທຳຜິດຫຼົບຫຼີກ ຈາກການລົງໂທດ ແລະ ຫຼີກເວັ້ນການລົງໂທດຜູ້ບໍ່ໄດ້ກະທຳຜິດ (ມ 2 ກດຍ). ເນື້ອແທ້ການ ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ກໍແມ່ນການອອກຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງ ການໄອຍະການປະຊາຊົນ ທີ່ບົ່ງຂໍ້ກ່າວຫາໃສ່ຜູ້ຖືກຫາ ພ້ອມທັງສິ່ງສຳນວນຄະດີ, ຜູ້ຖືກຫາ ແລະ ຂອງກາງໃຫ້ສານພິຈາລະນາຕັດສິນ (ມ 44 ກຍກ ແລະ ມ 154 ກດຍ).

ສຳລັບຂັ້ນຕອນ, ຫຼັກການ, ວິທີການໃນການດຳເນີນຄະດີອາຍາຂອງອົງການໄອຍະ ການປະຊາຊົນ ໄດ້ກຳນົດລະອຽດໄວ້ໃນພາກທີ IV.

## ແຜນວາດ 1: ກົງຈັກການຈັດຕັ້ງຂອງອົງການໄອຍະການປະຊາຊົນ ຢູ່ ສ ປປ ລາວ



## 1.3. ສານປະຊາຊົນ

ສານປະຊາຊົນ ແມ່ນອົງການພິພາກສາຂອງລັດ (ມ 79 ລນ), ເປັນອົງການຕຸລາການທີ່ເຮັດໜ້າທີ່ພິຈາລະນາຕັດສິນຄະດີ. ຢູ່ ສປປ ລາວ ມີແຕ່ສານເທົ່ານັ້ນຈຶ່ງມີສິດອຳນາດພິຈາລະນາຕັດສິນຄະດີບົນພື້ນຖານຫຼັກຖານ, ການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ (ມ 2 ກປຊ).

ລະບົບການຈັດຕັ້ງຂອງສານປະຊາຊົນ ປະກອບດ້ວຍ ສານປະຊາຊົນສູງສຸດ, ສານປະຊາຊົນພາກ, ສານປະຊາຊົນແຂວງ, ນະຄອນ, ສານປະຊາຊົນເຂດ ແລະ ສານທະຫານ (ມ 19 ກປຊ ແລະ ມ 50 ກດຍ). ໃນກໍລະນີທີ່ຈຳເປັນອາດຈະສ້າງຕັ້ງສານສະເພາະຕາມຂະແໜງການຂຶ້ນກໍໄດ້ ໂດຍການຕົກລົງຂອງຄະນະປະຈຳສະພາແຫ່ງຊາດ (ມ 79 ວັກ 2 ລນ).

ສານປະຊາຊົນສູງສຸດ ຕັ້ງຢູ່ນະຄອນຫຼວງວຽງຈັນ ແມ່ນອົງການພິພາກສາສູງສຸດຂອງ ສປປ ລາວ, ມີພາລະບົດບາດດຳເນີນການພິພາກສາຄະດີ, ຄຸ້ມຄອງທາງດ້ານການຈັດຕັ້ງ, ບໍລິຫານ, ກວດກາທາງດ້ານວິຊາສະເພາະ, ຊີ້ນຳການເຄື່ອນໄຫວ, ການປະຕິບັດໜ້າທີ່ຂອງສານປະຊາຊົນທ້ອງຖິ່ນ ແລະ ສານທະຫານໃນທົ່ວປະເທດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 20 ກປຊ).

ສານປະຊາຊົນພາກ ແມ່ນສານໜຶ່ງໃນລະບົບສານປະຊາຊົນ, ມີພາລະບົດບາດດຳເນີນການພິພາກສາຄະດີ ເປັນຂັ້ນອຸທອນຄະດີທີ່ສານປະຊາຊົນແຂວງ, ນະຄອນ, ສານເດັກໄດ້ຕັດສິນເປັນຂັ້ນຕົ້ນ ຊຶ່ງຖືກຂໍອຸທອນ ຫຼື ສະເໜີຄັດຄ້ານຈາກຫົວໜ້າອົງການໄອຍະການ, ເປັນຂັ້ນລົບລ້າງຄະດີທີ່ສານປະຊາຊົນແຂວງ, ນະຄອນ ໄດ້ພິພາກສາເປັນຂັ້ນອຸທອນ ຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການ. ສານປະຊາຊົນພາກຕັ້ງຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້ຂອງ ສປປ ລາວ. ບັນດາແຂວງ, ນະຄອນທີ່ຂຶ້ນກັບສານປະຊາຊົນພາກ ແລະ ບ່ອນສ້າງຕັ້ງສານປະຊາຊົນພາກນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ (ມ 22 ກປຊ).

ສານປະຊາຊົນແຂວງ, ນະຄອນ ແມ່ນສານໜຶ່ງໃນລະບົບສານປະຊາຊົນ, ມີພາລະບົດບາດດຳເນີນການຕັດສິນຄະດີເປັນຂັ້ນຕົ້ນ, ຄະດີທີ່ບໍ່ຂຶ້ນກັບສິດອຳນາດຂອງສານປະຊາຊົນເຂດ ແລະ ພິພາກສາເປັນຂັ້ນອຸທອນຄະດີທີ່ສານປະຊາຊົນເຂດໄດ້ຕັດສິນເປັນຂັ້ນຕົ້ນແລ້ວ (ມ 24 ກປຊ ).

ໃນແຕ່ລະແຂວງ, ນະຄອນ ມີການສ້າງຕັ້ງສານປະຊາຊົນແຂວງ, ນະຄອນ ແລະ ສານເດັກ. ສຳລັບສານເດັກນັ້ນ ຖືກສ້າງຕັ້ງຂຶ້ນຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ.

ສານປະຊາຊົນແຂວງ, ນະຄອນ, ສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ ໄດ້ແບ່ງອອກເປັນຫົກຄະນະສານຄື ຄະນະສານອາຍາ, ຄະນະສານແພ່ງ, ຄະນະສານແຮງງານ, ຄະນະສານການຄ້າ, ຄະນະສານຄອບຄົວ ແລະ ຄະນະສານເດັກ.

ສານປະຊາຊົນເຂດ ແມ່ນສານໜຶ່ງໃນລະບົບສານປະຊາຊົນ, ມີພາລະບົດບາດດໍາເນີນການພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນ ທີ່ຢູ່ໃນຂອບເຂດສິດອໍານາດຂອງຕົນ. ຖືກສ້າງຕັ້ງຂຶ້ນໂດຍເອົາເມືອງ, ເທດສະບານໃດໜຶ່ງ ຫຼື ຫຼາຍເມືອງ, ເທດສະບານມາໂຮມເຂົ້າກັນເປັນເຂດໜຶ່ງຕາມສະພາບພູມສາດ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຫຼື ມີຄະດີເກີດຂຶ້ນຫຼາຍ (ມ 26 ກປຊ). ສານປະຊາຊົນເຂດແບ່ງອອກເປັນສາມຄະນະສານເຊັ່ນ ຄະນະສານອາຍາ, ຄະນະສານແພ່ງ ແລະ ຄະນະສານຄອບຄົວ (ເບິ່ງຕາມແຜນວາດ 2 ລະບົບການຈັດຕັ້ງຂອງສານຢູ່ ສປປ ລາວ).

ສານປະຊາຊົນເຂດມີສິດ ແລະ ໜ້າທີ່ສຶກສາອົບຮົມ, ໄກ່ເກ່ຍຄູ່ຄວາມໃນຄະດີເປັນຕົ້ນຕໍ, ພິຈາລະນາຕັດສິນຄະດີເປັນຂັ້ນຕົ້ນ ເຊັ່ນ ຄະດີທີ່ມີມູນຄ່າບໍ່ເກີນ 300,000,000 ກີບ ແລະ ຄະດີກ່ຽວກັບສາຍຜົວເມຍ, ສິນສົມສ້າງ, ໜີ້ສິນ ແລະ ລູກຂອງຜົວເມຍ, ຄະດີອາຍາທີ່ກົດໝາຍກໍານົດໂທດຕັດອິດສະລະພາບສູງສຸດບໍ່ເກີນສາມປີ ຍົກເວັ້ນຄະດີເດັກກະທໍາຜິດ ແລະ ຄະດີອື່ນທີ່ໄດ້ກໍານົດໄວ້ໃນກົດໝາຍ (ມ 27 ຂໍ້ 1, 2 ກປຊ).

ສານປະຊາຊົນ ມີສິດ ແລະ ໜ້າທີ່ໃນການພິຈາລະນາຕັດສິນຄະດີອາຍາພ້ອມດ້ວຍການໃຊ້ແທນຄ່າເສັຍຫາຍ (ມ 16 ກດອ), ນໍາໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນໃນກໍລະນີທີ່ສໍານວນຄະດີມາຮອດສານ. ສຶກສາອົບຮົມຄູ່ຄວາມ ແລະ ໄກ່ເກ່ຍບັນຫາທາງແພ່ງໃນຄະດີອາຍາ (ມ 51 ກດອ).

ຜູ້ມີສິດໃນການດໍາເນີນຄະດີອາຍາໃນພາກສ່ວນຂອງສານປະຊາຊົນມີ ປະທານ, ຮອງປະທານສານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ (ມ 52 ຂໍ້ 3 ກດອ). ບຸກຄົນທີ່ກ່າວມານັ້ນ ໃນຖານະທີ່ເປັນບຸກຄະລາກອນປົກປ້ອງກົດໝາຍທີ່ຂຶ້ນກັບສານປະຊາຊົນ ຊຶ່ງເປັນອົງການໜຶ່ງທີ່ເຄື່ອນໄຫວເປັນເອກະລາດ ໂດຍປາສະຈາກການແຊກແຊງຈາກພາຍນອກ. ບົດບາດໜຶ່ງທີ່ສໍາຄັນຂອງຜູ້ພິພາກສາ ແມ່ນເປັນກໍາມະການຕັດສິນຄະດີ, ເປັນຜູ້ທີ່ໃຫ້ຄວາມເປັນທໍາແກ່ຄູ່ຄວາມບົນພື້ນຖານການກວດກາ ແລະ ຊັ່ງຊາ ຕີລາຄາຂໍ້ມູນຫຼັກຖານທີ່ເກັບໂຮມມາໄດ້. ສະນັ້ນ, ການດໍາເນີນຄະດີຢູ່ສານ ຜູ້ພິພາກສາຕ້ອງໄດ້ເຄົາລົບ ແລະປະຕິບັດຕາມແປດຫຼັກການພື້ນຖານຂອງການດໍາເນີນຄະດີອາຍາຢ່າງເຂັ້ມງວດ(ມ 8 ກປຊ).

**ແຜນວາດ 2: ລະບົບການຈັດຕັ້ງຂອງສານປະຊາຊົນ ຢູ່ ສປປ ລາວ**




**2. ອົງການປົກປ້ອງສິດຂອງຜູ່ຖືກສົງໄສ, ຜູ່ຖືກຫາ ແລະ ຈຳເລີຍ ໃນການດຳເນີນຄະດີອາຍາ**

ການປົກປ້ອງສິດຂອງຜູ່ຖືກສົງໄສ, ຜູ່ຖືກຫາ, ແລະ ຈຳເລີຍ ໄດ້ກຳນົດໄວ້ຄຽງຄູ່ກັບການຮັບປະກັນສິດໃນການຕໍ່ສູ້ຄະດີທີ່ຜູ່ຖືກຫາ ຫຼື ຜູ່ຖືກກ່າວຟ້ອງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພວກກ່ຽວ. ໃນການຕໍ່ສູ້ຄະດີນັ້ນພວກກ່ຽວຈະຕໍ່ສູ້ດ້ວຍຕົນເອງ ຫຼື ຈະແຕ່ງຕັ້ງຜູ່ຕາງໜ້າເປັນຕົ້ນແມ່ນທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນ ເພື່ອຊ່ວຍເຫຼືອດ້ານກົດໝາຍທຳການຕໍ່ສູ້ແທນຕົນກໍໄດ້.

ໃນນັ້ນ ອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານ ຕ້ອງຮັບປະກັນສິດໃນການຕໍ່ສູ້ຄະດີຂອງຜູ່ຖືກສົງໄສ, ຜູ່ຖືກຫາ ແລະ ຈຳເລີຍ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພວກກ່ຽວ. ຜູ່ຖືກສົງໄສ, ຜູ່ຖືກຫາ ແລະ ຈຳເລີຍ ມີສິດໂຕ້ແຍ່ງ,

ໂຕ້ຖຽງ, ສະເໜີຫຼັກຖານເພື່ອປົກປ້ອງຕົນເອງ, ຈະບໍ່ຖືກບັງຄັບໃຫ້ຊອກຫາຫຼັກຖານມາຢັ້ງຢືນຄວາມບໍລິສຸດຂອງຕົນ ແລະ ຕ້ອງຮັບປະກັນຫຼັກການຖືຄວາມບໍລິສຸດຂອງພວກກ່ຽວໃນເວລາທີ່ຍັງບໍ່ທັນມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດວ່າເປັນຜູ້ກະທຳຜິດ ໃຫ້ຖືວ່າຜູ້ກ່ຽວຍັງເປັນຜູ້ບໍລິສຸດຢູ່. ອົງການປົກປ້ອງສິດຂອງຜູ້ຖືກສົງໄສ, ຜູ້ຖືກຫາ ແລະ ຈຳເລີຍ ໃນເວລາດຳເນີນຄະດີອາຍາປະກອບດ້ວຍອົງການດັ່ງນີ້:

### 2.1. ສະພາທະນາຍຄວາມ

ສະພາທະນາຍຄວາມ ແມ່ນການຈັດຕັ້ງສັງຄົມວິຊາຊີບຂອງທະນາຍຄວາມ ຢູ່ ສປປ ລາວ ທີ່ສ້າງຕັ້ງຂຶ້ນເພື່ອສົ່ງເສີມວິຊາຊີບທະນາຍຄວາມ, ເຕົ້າໂຮມຄວາມສາມັກຄີ ແລະ ປົກປ້ອງກຽດຊື່ສຽງຂອງທະນາຍຄວາມ ແນໃສ່ຮັບປະກັນການບໍລິການທາງດ້ານກົດໝາຍແກ່ສັງຄົມຢ່າງຍຸຕິທຳ, ທົ່ວເຖິງ, ມີປະສິດທິພາບ ແລະ ປະກອບສ່ວນເຂົ້າໃນການສ້າງລັດແຫ່ງກົດໝາຍ (ມ 29 ກທຄ).

ສະພາທະນາຍຄວາມ ໝາຍເຖິງການຈັດຕັ້ງສັງຄົມວິຊາຊີບຂອງທະນາຍຄວາມ ທີ່ມີຄວາມເປັນເອກະລາດທາງດ້ານຈັດຕັ້ງ ແລະ ການເງິນ (ມ 3 ຂໍ້ 1 ກທຄ). ສະນັ້ນ, ສະມາຊິກສະພາທະນາຍຄວາມ ແມ່ນທະນາຍຄວາມທຸກຄົນທີ່ໄດ້ຂຶ້ນທະບຽນເປັນສະມາຊິກນຳສະພາທະນາຍຄວາມຕາມລະບຽບການ ແລະ ຢູ່ພາຍໃຕ້ການຄຸ້ມຄອງຂອງສະພາທະນາຍຄວາມ (ມ 31 ກທຄ). ໃນຖານະທີ່ເປັນບຸກຄະລາກອນທີ່ຂຶ້ນກັບສະພາທະນາຍຄວາມ ເພື່ອໃຫ້ບໍລິການທາງດ້ານກົດໝາຍແກ່ລູກຄວາມນັ້ນ ສະມາຊິກທະນາຍຄວາມຕ້ອງໄດ້ປະບັດສິດ ແລະ ພັນທະຂອງຕົນໃນການປົກປ້ອງລູກຄວາມຕົນຢ່າງສຸດກຳລັງສຸດປາຍ. ຫຼັງຈາກໄດ້ຮັບການຕົກລົງວ່າຄວາມ ຫຼື ໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປຕະຫຼອດໄລຍະທີ່ເຄື່ອນໄຫວເປັນຜູ້ປົກປ້ອງນັ້ນທະນາຍຄວາມມີສິດໄດ້ຮັບການປົກປ້ອງຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດຊື່ສຽງ, ຊັບສິນສ່ວນຕົວ ຫຼື ຂອງຄອບຄົວຕາມລະບຽບກົດໝາຍ (ມ 6 ກທຄ). ທະນາຍຄວາມທີ່ໄດ້ຮັບການແຕ່ງຕັ້ງມີສິດເຄື່ອນໄຫວເຂົ້າຮ່ວມໃນການດຳເນີນຄະດີອາຍາເພື່ອໃຫ້ການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກຄວາມຕາມຂອບເຂດສິດ, ໜ້າທີ່ທີ່ໄດ້ກຳນົດໄວ້ໃນກົດໝາຍ. ທະນາຍຄວາມມີສິດເຄື່ອນໄຫວເປັນເອກະລາດໃນການໃຫ້ບໍລິການທາງດ້ານກົດໝາຍແກ່ລູກຄວາມບົນພື້ນຖານລະບຽບກົດໝາຍ ແລະ ຈັນຍາບັນຂອງທະນາຍຄວາມ ໂດຍປາສະຈາກການແຊກແຊງ ແລະ ກີດຂວາງຈາກອົງການຈັດຕັ້ງ, ລູກຄວາມ ຫຼື ບຸກຄົນອື່ນ.

### 2.2. ອົງການຈັດຕັ້ງ

ອົງການຈັດຕັ້ງ ແມ່ນອົງການໜຶ່ງທີ່ໄດ້ຮັບການສ້າງຕັ້ງຂຶ້ນ ພາຍໃຕ້ກົດລະບຽບຢູ່ ສປປ ລາວ. ອົງການຈັດຕັ້ງໃນທີ່ນີ້ ໝາຍເຖິງອົງການຈັດຕັ້ງລັດ, ອົງການຈັດຕັ້ງມະຫາຊົນ

ແລະ ອົງການຈັດຕັ້ງສັງຄົມທີ່ບຸກຄົນສັງກັດຢູ່. ອົງການຈັດຕັ້ງການເມືອງສັງກັດລັດມີແນວລາວສ້າງຊາດ, ສະຫະພັນແມ່ຍິງລາວ, ສະຫະພັນກຳມະບານລາວ ແລະ ອົງການຈັດຕັ້ງຊາວໜຸ່ມປະຊາຊົນປະຕິວັດລາວ. ອົງການຈັດຕັ້ງທີ່ກ່າວມານີ້ແມ່ນຂຶ້ນກັບລັດ.[12] ຜູ້ຕາງໜ້າບັນດາອົງການຈັດຕັ້ງສັງຄົມ ມີສິດເຂົ້າຮ່ວມໃນການດຳເນີນຄະດີຢູ່ສານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 84 ລນ) ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງໃນຂັ້ນຕອນຂອງການດຳເນີນຄະດີອາຍາ (ມ 71 ກດຍ).

ໃນການດຳເນີນຄະດີອາຍາ ກົດໝາຍກໍບໍ່ໄດ້ກຳນົດໃຫ້ຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ ມີທະນາຍຄວາມເຂົ້າຮ່ວມເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນສະເໝີໄປ, ແຕ່ກົດໝາຍໃຫ້ສິດພວກກ່ຽວຕໍ່ສູ້ຄະດີດ້ວຍຕົນເອງ ຫຼື ສະເໜີເອົາຜູ້ຕາງໜ້າ ຫຼື ຜູ້ປົກປ້ອງອື່ນ ຕໍ່ສູ້ຄະດີແທນຕົນກໍໄດ້ (ມ 71 ກດຍ ຍົກເວັ້ນຂໍ້ 11).

ບົດຮຽນຈາກຫຼາຍປະເທດທີ່ກຳລັງພັດທະນາລະບົບກົດໝາຍ ແລະ ຊັບພະຍາກອນມະນຸດໃນຂົງເຂດຍຸຕິທຳຕ່າງກໍພົບພໍ້ກັບບັນຫາທີ່ຄ້າຍຄືກັນເປັນຕົ້ນ ບັນຫາການຈັດວາງ, ຊັບຊ້ອນບຸກຄະລາກອນ ແລະ ບັນຫາການຂາດເຂີນພະນັກງານປົກປ້ອງກົດໝາຍທີ່ບັນຈຸໃນໜ່ວຍງານຕ່າງໆເວົ້າລວມ, ເວົ້າສະເພາະແມ່ນການຂາດເຂີນທະນາຍຄວາມລວມ ທັງທະນາຍຄວາມທີ່ສາມາດວ່າຄວາມຢູ່ໃນສານໄດ້ ມີຈຳນວນຈຳກັດທຽບໃສ່ຈຳນວນຄະດີທີ່ເກີດຂຶ້ນຕົວຈິງ. ອີງໃສ່ສະພາບການຂາດເຂີນທະນາຍຄວາມຄືແນວນີ້ ຖ້າຜູ້ຖືກຫາ ຫຼື ຈຳເລີຍຈະຕໍ່ສູ້ດ້ວຍຕົນເອງກໍເປັນການຍາກ ຍ້ອນລະດັບຄວາມຮູ້ຂອງບຸກຄົນດັ່ງກ່າວບໍ່ເທົ່າທຽມກັນເຊັ່ນ ພວກກ່ຽວອາດມີຄວາມຢ້ານກົວໃນເວລາໃຫ້ການ ຫຼື ເວລາຂຶ້ນສານ, ບາງຄົນມີຄວາມລຳບາກໃນການອະທິບາຍເຫດການທີ່ເກີດຂຶ້ນຂອງຄະດີ, ບາງຄົນມີບັນຫາດ້ານການອ່ານ, ການຂຽນ, ຖ້າຢາກນຳໃຊ້ສິດໃນການຕໍ່ສູ້ຄະດີດ້ວຍຕົນເອງກໍຍິ່ງເປັນການຍາກ. ດ້ວຍເຫດນັ້ນ, ຫຼາຍປະເທດໃນນັ້ນລວມ ທັງ ສປປ ລາວ ເຮົາຈຶ່ງມີຄວາມຈຳເປັນຕ້ອງໄດ້ນຳໃຊ້ຄົນທີ່ມີຄວາມຮູ້ ຄວາມສາມາດທາງດ້ານກົດໝາຍ ຫຼື ມີວິຊາສະເພາະໃດໜຶ່ງຈາກຫຼາຍພາກສ່ວນເຂົ້າມາມີບົດບາດເປັນຜູ້ປົກປ້ອງ ໝາຍເຖິງເປັນຜູ້ຕາງໜ້າອົງການຈັດຕັ້ງເພື່ອເຮັດໜ້າທີ່ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ (ມ 71 ກດຍ). ເນື້ອໃນກົດໝາຍມາດຕານີ້ ໄດ້ອະນຸຍາດໃຫ້ຜູ້ປົກປ້ອງເຂົ້າຮ່ວມໃນການດຳເນີນຄະດີ, ກຳນົດສິດ ແລະ ໜ້າທີ່ຂອງຜູ້ປົກປ້ອງເທົ່າທຽມກັບທະນາຍຄວາມ (ຍົກເວັ້ນ ມ 71 ຂໍ້ 11

[12] ຈອມຄຳ ບຸບຜາລີວັນ ແລະ ຄະນະ, ປຶ້ມແບບຮຽນກົດໝາຍແພ່ງ (ນະຄອນຫຼວງວຽງຈັນ: ໂຮງພິມປານຄຳ, ປີ 2007), ໜ້າ 43.

ກດຍ) ຄື: "ທະນາຍຄວາມ ແມ່ນບຸກຄົນທີ່ໄດ້ຮັບການແຕ່ງຕັ້ງໃນກໍລະນີການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດປະຫານຊີວິດ ແລະ ການກະທຳຜິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ" ຊຶ່ງເປັນຈຸດທີ່ຍົກໃຫ້ເຫັນບົດບາດຂອງທະນາຍຄວາມມີຄວາມແຕກຕ່າງຈາກຜູ້ປົກປ້ອງອື່ນ.

# ພາກທີ II
# ຫຼັກຖານໃນຄະດີອາຍາ
# ບົດທີ 1
# ຫຼັກຖານ

## 1. ຄວາມຮູ້ທົ່ວໄປກ່ຽວກັບຫຼັກຖານໃນຄະດີອາຍາ

ໃນການດຳເນີນຄະດີອາຍາ ຕາມຫຼັກການແລ້ວຈະຕ້ອງສັນນິຖານໄວ້ກ່ອນວ່າຜູ້ຖືກສົງໄສ, ຜູ້ຖືກຫາ ແລະ ຈຳເລີຍ ເປັນຜູ້ບໍລິສຸດ (ມ 15 ກດຍ) ຈົນກວ່າຈະພິສູດຫຼັກຖານໃຫ້ສານເຫັນຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສວ່າຈຳເລີຍເປັນຜູ້ກະທຳຜິດໂດຍບໍ່ມີຂໍ້ສົງໄສອັນໃດອີກ, ແຕ່ຖ້າວ່າສານຫາກຍັງມີຂໍ້ສົງໄສຕໍ່ຫຼັກຖານທີ່ໂຈດອ້າງວ່າຈຳເລີຍເປັນຜູ້ກະທຳຜິດນັ້ນ ສານຈະຕ້ອງພິຈາລະນາຕັດສິນໃຫ້ຈຳເລີຍພົ້ນຂໍ້ກ່າວຫາ. ສະນັ້ນ, ເມື່ອມີຄະດີອາຍາເກີດຂຶ້ນ ສິ່ງທີ່ສຳຄັນທີ່ສຸດຂອງຄະດີກໍຄືຫຼັກຖານ ເພາະຈະພິສູດວ່າຈຳເລີຍມີຄວາມຜິດ ຫຼື ເປັນຜູ້ບໍລິສຸດນັ້ນ ຕ້ອງອີງໃສ່ຫຼັກຖານ ຊຶ່ງເປັນຂໍ້ມູນທີ່ມີສ່ວນກ່ຽວຂ້ອງກັບຄະດີຕັ້ງແຕ່ເລີ່ມຕົ້ນມີການສືບສວນ-ສອບສວນຈົນຮອດການພິຈາລະນາຕັດສິນຂອງສານ.

ໃນຂັ້ນຕອນຂອງການສືບສວນ-ສອບສວນ ແມ່ນເປັນໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນທີ່ຈະຕ້ອງຊອກຫາຫຼັກຖານມາປະກອບເຂົ້າໃນສຳນວນຄະດີ ເພື່ອຈະພິສູດໃຫ້ເຫັນວ່າຜູ້ຖືກກ່າວຫາມີຄວາມຮັບຜິດຊອບທາງອາຍາ ຫຼື ບໍ່.

ສະນັ້ນ, ຫຼັກຖານຕ່າງໆທີ່ກ່ຽວຂ້ອງກັບຄະດີທຸກປະເພດ ບໍ່ວ່າຈະເປັນຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ ແລະ ຫຼັກຖານທາງດ້ານບຸກຄົນ ເຈົ້າໜ້າທີ່ສືບສວນ-ສອບສວນສາມາດທີ່ຈະລວບລວມໄວ້ໄດ້ທັງໝົດ, ນອກຈາກນີ້, ໃນຂັ້ນສືບສວນ-ສອບສວນ ຝ່າຍຜູ້ເສຍຫາຍ ຫຼື ຜູ້ທີ່ແຈ້ງຄວາມໃຫ້ດຳເນີນຄະດີກໍສາມາດນຳເອົາຫຼັກຖານຕ່າງໆມອບໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນ ກໍເກັບໂຮມເຂົ້າໄວ້ໃນສຳນວນຄະດີ, ພ້ອມກັນນັ້ນ ໃນຂັ້ນຕອນການສືບສວນ-ສອບສວນ ຜູ້ຖືກຫາເອງກໍສາມາດນຳເອົາຫຼັກຖານຂອງຕົນ ມອບໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ເຊັ່ນດຽວກັນ. ຈາກນັ້ນ, ຫົວໜ້າອົງການສືບສວນ-ສອບສວນ ຈຶ່ງສະຫຼຸບ ແລະ ປະກອບສຳນວນຄະດີອາຍາສົ່ງໃຫ້ອົງການໄອຍະການເພື່ອກວດກາ ແລະ ຄົ້ນຄວ້າພິຈາລະນາ.

## 2. ຄວາມສຳຄັນຂອງຫຼັກຖານໃນຄະດີອາຍາ

ໃນການດຳເນີນຄະດີອາຍາ ອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານ ຕ້ອງອີງໃສ່ຫຼັກຖານເປັນພື້ນຖານໃນການກຳນົດເຫດການຂອງຄະດີ (ພຶດຕິກຳ, ວັນເວລາ, ສະຖານທີ່, ພາຫະນະ, ອຸປະກອນ, ວິທີການ ແລະ ສະພາບການອື່ນ) ມາຢັ້ງຢືນເຖິງຄວາມຜິດຂອງຜູ້ຖືກຫາ ຫຼື ຈຳເລີຍ (ເຈດຕະນາ ຫຼື ບໍ່ລະມັດລະວັງ); ເຫດຜົນຂອງການກະທຳຜິດ, ລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຂອງການກະທຳຜິດ, ລະດັບຄວາມເສັຍຫາຍທີ່ເນື່ອງມາຈາກການກະທຳຜິດ ແລະ ສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ ຫຼື ສາເຫດທີ່ພາໃຫ້ຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາ. ສະນັ້ນ, ໃນການດຳເນີນຄະດີອາຍາບໍ່ໃຫ້ຖືເອົາການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍເປັນຕົ້ນຕໍ ແຕ່ຕ້ອງຊອກຫາຫຼັກຖານອື່ນມາຢັ້ງຢືນໃນການກ່າວຫາ ຫຼື ການກະທຳຜິດຂອງຜູ້ກ່ຽວຕື່ມອີກ. ດັ່ງນັ້ນ, ຫຼັກຖານຈຶ່ງມີຄວາມສຳຄັນ ແລະ ເປັນຜົນປະໂຫຍດໃຫ້ແກ່ອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານ ເພື່ອໃຊ້ເປັນບ່ອນອີງໃນການພິຈາລະນາ ຫຼື ຕັດສິນຄະດີໃຫ້ຖືກຕ້ອງຕາມກົດໝາຍ ແລະ ມີຄວາມຍຸຕິທຳ.

## 3. ປະເພດຂອງຫຼັກຖານໃນຄະດີອາຍາ

ຫຼັກຖານໃນຄະດີອາຍາ ປະກອບດ້ວຍ:

1) ຫຼັກຖານທາງດ້ານວັດຖຸ;
2) ຫຼັກຖານທາງດ້ານເອກະສານ;
3) ຫຼັກຖານທາງດ້ານບຸກຄົນ.

ຫຼັກຖານທີ່ກ່າວມາຂ້າງເທິງນີ້ ມີທັງຫຼັກຖານຜູກມັດ ຊຶ່ງເປັນຫຼັກຖານທີ່ຢັ້ງຢືນວ່າຜູ້ຖືກຫາ ຫຼື ຈຳເລີຍເປັນຜູ້ກະທຳຜິດ ແລະ ມີທັງຫຼັກຖານແກ້ມັດ ຊຶ່ງເປັນຫຼັກຖານທີ່ຢັ້ງຢືນວ່າຜູ້ຖືກຫາ ຫຼື ຈຳເລີຍ ເປັນຜູ້ບໍລິສຸດ. ເຖິງຢ່າງໃດກໍຕາມ ການດຳເນີນຄະດີອາຍາ ຕ້ອງຊອກຫາຫຼັກຖານຜູກມັດ ແລະ ຫຼັກຖານແກ້ມັດໄປພ້ອມກັນ (ມ 28 ກດຍ).

### 3.1. ຫຼັກຖານທາງດ້ານວັດຖຸ

ຫຼັກຖານທາງດ້ານວັດຖຸ ແມ່ນຮ່ອງຮອຍຂອງວັດຖຸ, ວັດຖຸທີ່ໄດ້ໃຊ້ ຫຼື ຈະໃຊ້ເປັນເຄື່ອງມືໃນການກະທຳຜິດ ເຊັ່ນ ປືນ, ມີດ, ຮອຍມື, ຄາບເລືອດ ແລະ ວັດຖຸອື່ນທີ່ມີຄວາມສຳຄັນສຳລັບຄະດີ (ມ 29 ກດຍ) ຫຼື ເວົ້າອີກຢ່າງໜຶ່ງ ຫຼັກຖານທາງດ້ານວັດຖຸ ແມ່ນໝາຍເຖິງວັດຖຸສິ່ງຂອງທີ່ອ້າງເປັນຫຼັກຖານໃນຄະດີອາຍາ ຊຶ່ງມີຈຸດປະສົງທີ່ຈະໃຫ້ເຫັນຮູບຮ່າງລັກສະນະຂອງວັດຖຸສິ່ງຂອງນັ້ນ ຫຼື ໃຫ້ອົງການດຳເນີນຄະດີກວດກາເບິ່ງເພື່ອເປັນປະໂຫຍດໃນຄະດີທີ່ຕົນດຳເນີນ ຊຶ່ງຄູ່ຄວາມນຳມາໃຫ້ອົງການດຳເນີນຄະດີກວດກາເບິ່ງວັດຖຸສິ່ງຂອງນັ້ນ ເຊັ່ນ ມີດທີ່ໃຊ້ແທງທຳຮ້າຍຮ່າງກາຍ ຫຼື ສະຖານທີ່ເກີດເຫດ ຊຶ່ງສານສາມາດກວດກາເບິ່ງໄດ້.

### 3.2. ຫຼັກຖານທາງດ້ານເອກະສານ

ຫຼັກຖານທາງດ້ານເອກະສານ ແມ່ນຫຼັກຖານທີ່ໄດ້ມາຈາກຈົດໝາຍ, ບົດບັນທຶກການສືບສວນ-ສອບສວນ, ບົດບັນທຶກການເຄື່ອນໄຫວຂອງສານ, ບັນຊີ, ແຜນວາດ, ຮູບພາບ ແລະ ເອກະສານອື່ນໆທີ່ພົວພັນກັບການກະທຳຜິດ (ມ 32 ກດຍ) ຫຼື ເວົ້າອີກຢ່າງໜຶ່ງຫຼັກຖານທາງດ້ານເອກະສານ ແມ່ນໝາຍເຖິງໜັງສືເປັນລາຍລັກອັກສອນທີ່ໄດ້ຂີດຂຽນ, ພິມ ຫຼື ຈາລຶກໄວ້ເປັນການຖາວອນ ແລະ ອ່ານໄດ້ເນື້ອຄວາມ ຫຼື ຮູບຮອຍ ຫຼື ວັດຖຸທີ່ມີຂໍ້ຄວາມປະກົດເປັນລາຍລັກອັກສອນ ຫຼື ປະກົດເປັນເຄື່ອງໝາຍທີ່ສາມາດໃຊ້ແທນລາຍລັກອັກສອນໄດ້ ໂດຍມີຈຸດປະສົງທີ່ຈະໃຫ້ຂໍ້ຄວາມ ຫຼື ເຄື່ອງໝາຍດັ່ງກ່າວນັ້ນເປັນຫຼັກຖານໃນຄະດີອາຍາ ຊຶ່ງອົງການດຳເນີນຄະດີສາມາດກວດກາເບິ່ງຈາກໜັງສື ຫຼື ຕົວເລກທີ່ສື່ຄວາມໝາຍໃດໜຶ່ງ.

ຫຼັກຖາຫນທາງດ້ານເອກະສານ ແມ່ນຫຼັກຖານທີ່ໄດ້ມາຈາກບົດບັນທຶກຂອງຜູ້ດຳເນີນຄະດີ ເຊັ່ນ ບົດບັນທຶກການຈັບຕົວ, ການກວດຄົ້ນ, ການຍຶດ ຫຼື ອາຍັດຊັບ, ການຊັນນະສູດສະຖານທີ່ເກີດເຫດ, ການພິສູດຫຼັກຖານ, ການເອົາຄຳໃຫ້ການ, ການສອບຖາມຊ້ອງໜ້າ, ການຢັ້ງຢືນ ແລະ ການທົດສອບຂໍ້ມູນຄືນໃໝ່ຂອງຜູ້ດຳເນີນຄະດີ, ບົດບັນທຶກການປະຊຸມສານ ແລະ ບົດບັນທຶກອື່ນ ລວມທັງຈົດໝາຍ, ບັນຊີ, ແຜນວາດ, ຮູບພາບ ແລະ ເອກະສານອື່ນທີ່ພົວພັນກັບການກະທຳຜິດທີ່ໄດ້ມາຢ່າງຖືກຕ້ອງ (ມ 33 ກດຍ).

### 3.3. ຫຼັກຖານທາງດ້ານບຸກຄົນ

ຫຼັກຖານທາງດ້ານບຸກຄົນ ແມ່ນຫຼັກຖານທີ່ໄດ້ມາຈາກຄຳໃຫ້ການຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ, ພະຍານ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ, ການຊີ້ຕົວ, ການຢັ້ງຢືນ, ຄຳເຫັນຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານທີ່ພົວພັນກັບການກະທຳຜິດ (ມ 34 ກດຍ).

ຄຳໃຫ້ການຂອງຜູ້ຖືກສົງໄສໃນຄະດີອາຍາ ແມ່ນເປັນຫຼັກຖານທາງດ້ານບຸກຄົນ ໂດຍເປັນການໃຫ້ຂໍ້ມູນທາງປາກເປົ່າ ຫຼື ເປັນລາຍລັກອັກສອນ ຕໍ່ການສອບຖາມຂອງຜູ້ດຳເນີນຄະດີອາຍາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂໍ້ 1 ແລະ 2 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ມ 35 ກດຍ).

ຄຳໃຫ້ການຂອງຜູ້ຖືກຫາ ຫຼື ຈຳເລີຍໃນຄະດີອາຍາ ແມ່ນເປັນຫຼັກຖານທາງດ້ານບຸກຄົນໂດຍເປັນການໃຫ້ຂໍ້ມູນຂອງຜູ້ຖືກຫາ ຫຼື ຈຳເລີຍ ຕໍ່ການສອບຖາມຂອງຜູ້ດຳເນີນຄະດີອາຍາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍ ຕໍ່ການກະທຳຜິດຈະຖືເປັນຫຼັກຖານໃນຄະດີໄດ້ ກໍຕໍ່ເມື່ອຄຳຮັບສາລະພາບນັ້ນ ໄດ້ຮັບການຢັ້ງຢືນດ້ວຍຫຼັກຖານຜູກມັດທີ່ໜັກແໜ້ນ.

ຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍ ທີ່ໄດ້ມາດ້ວຍການຕົວະຍົວະຫຼອກລວງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ຫຼື ການກະທຳອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ ຈະໃຊ້ເປັນຫຼັກຖານໃນຄະດີບໍ່ໄດ້.

ໃນກໍລະນີທີ່ຜູ້ຖືກຫາ ຫຼື ຈຳເລີຍ ຫາກບໍ່ໃຫ້ການ ຜູ້ດຳເນີນຄະດີອາຍາຕ້ອງເຮັດບັນທຶກໄວ້ (ມ 36 ກດຍ).

ຄຳໃຫ້ການຂອງຜູ້ຖືກເສຍຫາຍໃນຄະດີອາຍາ ແມ່ນເປັນຫຼັກຖານທາງດ້ານບຸກຄົນ ໂດຍເປັນການໃຫ້ຂໍ້ມູນກ່ຽວກັບຄວາມເສຍຫາຍ ຕໍ່ການສອບຖາມຂອງຜູ້ດຳເນີນຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ. ໃນເວລາດຳເນີນການສືບສວນ-ສອບສວນ ຫຼື ການໄຕ່ສວນຄະດີໃນທີ່ປະຊຸມສານ, ຜູ້ຖືກເສຍຫາຍອາດຈະຖືກສອບຖາມກ່ຽວກັບສະພາບການທີ່ມີຄວາມໝາຍສຳຄັນ ສຳລັບການປະກອບຫຼັກຖານໃນຄະດີ ພ້ອມທັງສາຍພົວພັນລະຫວ່າງຜູ່ກ່ຽວກັບຜູ້ຖືກຫາ ຫຼື ຈຳເລີຍ (ມ 37 ກດຍ).

ຄຳໃຫ້ການຂອງໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງໃນຄະດີອາຍາ ແມ່ນ ເປັນຫຼັກຖານທາງດ້ານບຸກຄົນ ໂດຍເປັນການໃຫ້ຂໍ້ມູນກ່ຽວກັບຄວາມເສຍຫາຍ ແລະ ໃຊ້ແທນຄ່າເສຍຫາຍ ຕໍ່ການສອບຖາມຂອງຜູ້ດຳເນີນຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໃນເວລາດຳເນີນການສືບສວນ-ສອບສວນ ຫຼື ການໄຕ່ສວນຄະດີໃນທີ່ປະຊຸມສານ (ມ 38 ກດຍ).

ຄຳໃຫ້ການຂອງພະຍານໃນຄະດີອາຍາ ແມ່ນເປັນຫຼັກຖານທາງດ້ານບຸກຄົນໂດຍເປັນການໃຫ້ຂໍ້ມູນກ່ຽວກັບເຫດການທີ່ໄດ້ຮູ້, ໄດ້ເຫັນ, ໄດ້ຍິນ ຫຼື ໄດ້ຍິນຈາກບຸກຄົນອື່ນຕໍ່ການສອບຖາມຂອງຜູ້ດຳເນີນຄະດີອາຍາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 52 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໃນເວລາດຳເນີນການສືບສວນ-ສອບສວນ ຫຼື ການໄຕ່ສວນຄະດີໃນທີ່ປະຊຸມສານ, ພ້ອມກັນນັ້ນ ພະຍານອາດຈະຖືກສອບຖາມກ່ຽວກັບສະພາບການ ຫຼື ເຫດການຂອງຄະດີທີ່ຜູ່ກ່ຽວໄດ້ຮູ້, ໄດ້ເຫັນດ້ວຍຕົນເອງ ລວມທັງສາຍພົວພັນລະຫວ່າງຜູ່ກ່ຽວກັບຜູ້ຖືກສົງໄສ, ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ຫຼື ຜູ້ຮັບຜິດຊອບທາງແພ່ງ ແລະ ພະຍານຄົນອື່ນ (ມ 39 ກດຍ).

ຄຳໃຫ້ການຂອງພະຍານໃນຄະດີອາຍາ ສາມາດແຍກອອກເປັນສອງປະເພດຄື ຄຳໃຫ້ການຂອງພະຍານຕົ້ນຕໍ ແລະ ຄຳໃຫ້ການຂອງພະຍານບອກເລົ່າ.

**ກ. ຄຳໃຫ້ການຂອງພະຍານຕົ້ນຕໍ**

ຄຳໃຫ້ການຂອງພະຍານຕົ້ນຕໍ ແມ່ນໝາຍເຖິງພະຍານບຸກຄົນທີ່ຮູ້ເຫັນເອງ ໂດຍເປັນພະຍານກ່ຽວກັບຂໍ້ເທັດຈິງ ຊຶ່ງເປັນພະຍານບຸກຄົນທີ່ໄດ້ຮູ້, ໄດ້ເຫັນ, ໄດ້ຍິນມາດ້ວຍຕົນເອງ.

ໃນກໍລະນີທີ່ພະຍານ ໄດ້ເຫັນການກະທຳຄວາມຜິດມາດ້ວຍຕົນເອງ ເຊັ່ນ ໃນຄະດີກ່ຽວກັບການກະທຳຜິດໃນສະຖານຄາດຕະກຳ ພະຍານໄດ້ເຫັນ ທ້າວ ກ ໃຊ້ປືນຍິງ ທ້າວ ຂ ເຖິງຂັ້ນເສຍຊີວິດ.

ໃນກໍລະນີທີ່ພະຍານໄດ້ຍິນ ການກະທຳຄວາມຜິດມາດ້ວຍຕົນເອງ ເຊັ່ນ ໃນຄະດີກ່ຽວກັບການກະທຳຜິດໃນສະຖານປຸ້ນຊັບ, ກໍລະນີທີ່ພະຍານຈື່ສຽງຂອງຈຳເລີຍໄດ້ເປັນຢ່າງດີ ເນື່ອງຈາກວ່າຈຳເລີຍເຄີຍໄປມາຫາສູ່ທີ່ເຮືອນຂອງພະຍານ ແລະ ຜູ້ຖືກເສຍຫາຍເປັນປະຈຳ.

ພ້ອມກັນນັ້ນ ຜູ້ຖືກເສັຍຫາຍ ແລະ ພະຍານ ກໍໄດ້ໃຫ້ການຢັ້ງຢືນວ່າຈື່ສຽງຂອງຈຳເລີຍເປັນຢ່າງດີ ເພາະວ່າການທີ່ຄົນເຮົາຫາກໄດ້ເວົ້າໄດ້ລົມກັນຢູ່ເລື້ອຍໆ ກໍຈະສ້າງຄວາມຄຸ້ນເຄີຍໃນນ້ຳສຽງຂອງກັນ ແລະ ກັນ. ດ້ວຍເຫດນັ້ນ, ຈຶ່ງເປັນສາເຫດໃຫ້ເຊື່ອຖືໄດ້ວ່າພະຍານ ແລະ ຜູ້ຖືກເສັຍຫາຍຈື່ສຽງຂອງຈຳເລີຍໄດ້, ເຖິງວ່າຄະດີດັ່ງກ່າວມີພະຍານໄດ້ຍິນແຕ່ສຽງ ບໍ່ໄດ້ເຫັນຈຳເລີຍກໍຕາມ ແຕ່ກໍຈື່ຈຳສຽງໄດ້. ສະນັ້ນ, ສຽງຈຶ່ງໃຊ້ເປັນຫຼັກຖານຕົ້ນຕໍ.

**ຂ. ຄຳໃຫ້ການຂອງພະຍານບອກເລົ່າ**

ຄຳໃຫ້ການຂອງພະຍານບອກເລົ່າ ໝາຍເຖິງພະຍານບຸກຄົນທີ່ບໍ່ໄດ້ຮູ້ເຫັນ ຫຼື ໄດ້ຍິນມາດ້ວຍຕົນເອງ, ແຕ່ຫາກໄດ້ຮູ້ ຫຼື ຮັບຟັງຂໍ້ຄວາມຈິງຕ່າງໆມາຈາກຜູ້ອື່ນອີກຕໍ່ໜຶ່ງ ເຊັ່ນ ທ້າວ ກ ໄດ້ເຫັນ ທ້າວ ຂ ໃຊ້ປືນຍິງ ທ້າວ ຄ ຈົນເຖິງຂັ້ນເສຍຊີວິດ, ທ້າວ ກ ໄດ້ມາບອກນາຍບ້ານວ່າໄດ້ເຫັນ ທ້າວ ຂ ໃຊ້ປືນຍິງ ທ້າວ ຄ ຈົນເຖິງຂັ້ນເສຍຊີວິດ, ນາຍບ້ານມາໃຫ້ການກ່ຽວກັບເລື່ອງທີ່ ທ້າວ ກ ໄດ້ເລົ່າໃຫ້ຟັງ, ໃນກໍລະນີນີ້ ຄຳໃຫ້ການຂອງນາຍບ້ານຖືເປັນຄຳໃຫ້ການຂອງພະຍານບອກເລົ່າ.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ກໍໄດ້ບັນຍັດກ່ຽວກັບພະຍານບອກເລົ່າໄວ້ໂດຍໄດ້ລະບຸວ່າຄຳໃຫ້ການຂອງພະຍານ ແມ່ນ ການໃຫ້ຂໍ້ມູນກ່ຽວກັບເຫດການທີ່ໄດ້ຮູ້, ໄດ້ເຫັນ, ໄດ້ຍິນ ຫຼື ໄດ້ຍິນຈາກບຸກຄົນອື່ນ (ມ 39 ກດຍ) ແຕ່ໃນພາກປະຕິບັດຕົວຈິງແລ້ວ ພະຍານບອກເລົ່າ ສານຈະບໍ່ຖືເປັນພະຍານຕົ້ນຕໍ ເພາະເປັນພະຍານທີ່ມີນ້ຳໜັກໜ້ອຍທີ່ສຸດ, ແຕ່ບາງກໍລະນີພະຍານບອກເລົ່າກໍເປັນສິ່ງທີ່ຈຳເປັນຢ່າງຍິ່ງທີ່ຄູ່ຄວາມຈະຕ້ອງນຳມາປະກອບກັບພະຍານອື່ນ ເພື່ອໃຫ້ຄຳເວົ້າຂອງພະຍານນັ້ນໄດ້ເຊື່ອມໂຍງມີນ້ຳໜັກເພີ່ມຂຶ້ນເພື່ອເຮັດໃຫ້ສານເຊື່ອຖືໄດ້, ເຖິງຢ່າງໃດກໍຕາມ ພະຍານບອກເລົ່າທີ່ອາດຈະໜ້າເຊື່ອຖືໄດ້ຕ້ອງເປັນພະຍານທີ່ໃກ້ຄຽງທີ່ສຸດທີ່ເຊື່ອມໂຍງກັບພະຍານຕົ້ນຕໍໄດ້, ແຕ່ຖ້າເປັນ

ພະຍານບອກເລົ່າທີ່ບອກເລົ່າຕໍ່ໆກັນມາຫຼາຍຄົນ ແມ່ນບໍ່ຄວນໃຫ້ເປັນພະຍານບອກເລົ່າ ເພາະບໍ່ມີນໍ້າໜັກພໍທີ່ຈະໃຫ້ຄວາມເຊື່ອຖືໄດ້.

ພະຍານບອກເລົ່າທີ່ຄວນໃຫ້ນໍ້າໜັກ ຫຼື ໃຫ້ຄວາມສຳຄັນໃນຄະດີອາຍານັ້ນແມ່ນພະຍານທີ່ບອກເລົ່າມີໄລຍະໃກ້ຄຽງທີ່ສຸດກັບເຫດການທີ່ເກີດຂຶ້ນ ຫຼື ພະຍານບອກເລົ່າທີ່ໄດ້ຮັບຟັງຄຳເວົ້າຂອງຜູ້ຖືກທຳຮ້າຍກ່ອນເສັຍຊີວິດ ໃນສະຖານຄາດຕະກຳ ຫຼື ຄຳເວົ້າຂອງຜູ້ຖືກເສັຍຫາຍໃນສະຖານຂົ່ມຂືນທຳຊຳເລົາ.

**ຕົວຢ່າງ 1:** ການກະທຳຜິດໃນສະຖານຄາດຕະກຳ

ເຖິງແມ່ນວ່າຈະບໍ່ມີພະຍານຕົ້ນຕໍຮູ້ເຫັນວ່າ ທ້າວ ກ ໃຊ້ປືນຍິງ ທ້າວ ຂ ເຖິງຂັ້ນເສັຍຊີວິດ, ແຕ່ປະກົດວ່າ ທ້າວ ຄ ແລະ ທ້າວ ງ (ພະຍານ) ໄດ້ຍິນສຽງປືນຢູ່ປະຕູຮົ້ວເຮືອນດັງຂຶ້ນໜຶ່ງນັດ ກ່ອນທີ່ໄປເຖິງ ທ້າວ ຂ, ພະຍານທັງສອງຄົນໄດ້ຍິນສຽງ ທ້າວ ຂ ຮ້ອງເຖິງສອງຄັ້ງໂດຍລະບຸຊື່ວ່າຈຳເລີຍເປັນຄົນຍິງ ແລະ ເມື່ອໄປເຖິງ, ທ້າວ ຂ ຍັງບອກໃຫ້ພະຍານທັງສອງຊາບອີກວ່າ "ທ້າວ ກ (ຈຳເລີຍ) ເປັນຄົນຍິງຕົນ", ຫຼັງຈາກນັ້ນອີກ 5 ນາທີ ທ້າວ ຂ ຈຶ່ງໄດ້ເສັຍຊີວິດ, ໃນກໍລະນີນີ້ ທ້າວ ຄ ແລະ ທ້າວ ງ ເປັນພະຍານບອກເລົ່າທີ່ມີນໍ້າໜັກ ແລະ ໜ້າເຊື່ອຖື ໄດ້.

**ຕົວຢ່າງ 2:** ການກະທຳຜິດໃນສະຖານຂົ່ມຂືນທຳຊຳເລົາ

ນາງ ກ ເປັນນ້ອງເມັຍຂອງ ທ້າວ ຂ ໂດຍໄດ້ຢູ່ເຮືອນຫຼັງດຽວກັນ, ທີ່ຜ່ານມາພວກກ່ຽວກໍບໍ່ເຄີຍມີບັນຫາຜິດຖຽງກັນ, ຢູ່ມາມື້ໜຶ່ງ ນາງ ກ ໄດ້ຖືກ ທ້າວ ຂ ຂົ່ມຂືນທຳຊຳເລົາຢູ່ທີ່ເຮືອນຂອງຕົນເອງ ເພາະໃນເວລານັ້ນ ພໍ່ແມ່ຂອງຜູ້ກ່ຽວບໍ່ໄດ້ຢູ່ເຮືອນ, ຈາກນັ້ນປະມານ 5 ນາທີ ພໍ່ແມ່ຜູ້ກ່ຽວຈຶ່ງໄດ້ມາຮອດເຮືອນ ແລ້ວ ນາງ ກ ກໍໄດ້ເລົ່າເຫດການທີ່ເກີດຂຶ້ນໃຫ້ພໍ່ແມ່ຟັງໃນທັນທີ, ໃນກໍລະນີນີ້ ຄຳໃຫ້ການຂອງພໍ່ແມ່ຂອງ ນາງ ກ ແມ່ນ ເປັນພະຍານບອກເລົ່າທີ່ມີນໍ້າໜັກ ແລະ ໜ້າເຊື່ອຖືໄດ້.

ຄຳເຫັນຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ທີ່ພົວພັນກັບການກະທຳຜິດ ແມ່ນ ເປັນຫຼັກຖານທາງດ້ານບຸກຄົນ ໂດຍພາຍຫຼັງໄດ້ສຳເລັດການພິສູດແລ້ວ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານຕ້ອງເຮັດບົດສະຫຼຸບລາຍງານຜົນການພິສູດຂອງຕົນເປັນລາຍລັກອັກສອນ ແລະ ມີຄວາມຮັບຜິດຊອບຕໍ່ບົດສະຫຼຸບຂອງຕົນ.

ໃນກໍລະນີທີ່ການພິສູດຫາກໄດ້ດຳເນີນດ້ວຍຄະນະຜູ້ຊ່ຽວຊານ ຫຼື ຄະນະຜູ້ຊຳນານງານນັ້ນບົດສະຫຼຸບລາຍງານຜົນຂອງການພິສູດຕ້ອງໄດ້ເຊັນໂດຍຄະນະຜູ້ຊ່ຽວຊານ ຫຼື ຄະນະຜູ້ຊຳນານງານທັງໝົດທີ່ໄດ້ເຂົ້າຮ່ວມ.

ໃນກໍລະນີທີ່ຄຳເຫັນຂອງຄະນະຜູ້ຊ່ຽວຊານ ຫຼື ຄະນະຜູ້ຊຳນານງານຫາກບໍ່ເປັນເອກະພາບກັນນັ້ນຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານທີ່ບໍ່ເຫັນດີກັບບົດສະຫຼຸບລາຍງານຜົນຂອງການພິສູດນັ້ນມີສິດລົງຄຳເຫັນຂອງຕົນໃສ່ບົດສະຫຼຸບດັ່ງກ່າວ.

ໃນກໍລະນີທີ່ອົງການສືບສວນ-ສອບສວນ, ອົງການໄອຍະການ ຫຼື ສານຫາກບໍ່ມີຄວາມໝັ້ນໃຈກ່ຽວກັບຜົນຂອງການພິສູດນັ້ນຕ້ອງໃຫ້ເຫດຜົນຂອງຕົນຢ່າງລະອຽດ ແລະ ຖ້າຫາກວ່າທີ່ຄຳເຫັນຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານນັ້ນຫາກບໍ່ຈະແຈ້ງ ຫຼື ບໍ່ຄົບຖ້ວນ ກໍສະເໜີໃຫ້ທຳການພິສູດຄືນໃໝ່ໂດຍເພີ່ມຈຳນວນຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານເຂົ້າຕື່ມ ຫຼື ໃຫ້ຄະນະຜູ້ຊ່ຽວຊານ ຫຼື ຄະນະຜູ້ຊຳນານງານທຳການພິສູດຄືນໃໝ່ ຫຼື ແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານຄະນະໃໝ່ທຳການພິສູດກໍໄດ້ (ມ 40 ກດຍ).

**4. ຫຼັກຖານທາງກົງ ແລະ ຫຼັກຖານທາງອ້ອມ**

ຫຼັກຖານທາງກົງ ໝາຍເຖິງຫຼັກຖານກ່ຽວກັບຄວາມຈິງທີ່ຜ່ານຂະບວນການພິສູດແລ້ວຊຶ່ງໄດ້ລະບຸວ່າຄວາມຈິງນັ້ນວ່າມີແທ້ ໂດຍບໍ່ໄດ້ໄປຄົ້ນຫາເຫດຜົນສັນນິຖານຢ່າງໃດຕໍ່ໄປອີກ, ອາດເປັນບຸກຄົນທີ່ຮູ້ເຫັນຄວາມຈິງ ຫຼື ເຫດການ, ເອກະສານ ຫຼື ວັດຖຸທີ່ຈະຕ້ອງນຳມາເພື່ອພິສູດ, ເວົ້າອີກຢ່າງໜຶ່ງວ່າ ຫຼັກຖານໂດຍກົງ ໝາຍເຖິງຫຼັກຖານທີ່ນຳມາພິສູດຄວາມຈິງ ຊຶ່ງເປັນປະເດັນຂໍ້ຂັດແຍ່ງໃນຄະດີໂດຍກົງ. ສະນັ້ນ, ຖ້າສານເຊື່ອຖືຫຼັກຖານໂດຍກົງສານກໍສາມາດສະຫຼຸບໄດ້ວ່າຂໍ້ຄວາມຈິງທີ່ຂັດແຍ່ງກັນເປັນດັ່ງທີ່ໄດ້ພິສູດຫຼັກຖານແລ້ວ ໂດຍບໍ່ຕ້ອງໄປຄົ້ນຫາເຫດຜົນສັນນິຖານຫຍັງອີກ ເຊັ່ນ ປະເດັນຂໍ້ຂັດແຍາງໃນຄະດີມີຢູ່ວ່າ ທ້າວ ກ ໃຊ້ມີດແທງ ທ້າວ ຂ ຫຼື ບໍ່, ພະຍານທີ່ເຫັນ ທ້າວ ກ ໃຊ້ມີດແທງ ທ້າວ ຂ ເປັນຫຼັກຖານໂດຍກົງ, ຖ້າສານເຊື່ອໝັ້ນວ່າພະຍານຄົນນັ້ນເວົ້າຄວາມຈິງ ສານສາມາດສະຫຼຸບໄດ້ເລີຍວ່າ ທ້າວ ກ ໃຊ້ມີດແທງ ທ້າວ ຂ.

ຫຼັກຖານທາງອ້ອມ ໝາຍເຖິງຫຼັກຖານທີ່ບໍ່ສາມາດພິສູດໃຫ້ເຫັນຄວາມຈິງທີ່ເປັນປະເດັນໂດຍກົງໃນຄະດີ ຫຼື ເວົ້າອີກຢ່າງໜຶ່ງວ່າ ຫຼັກຖານທາງອ້ອມ ໝາຍເຖິງຫຼັກຖານທີ່ຄວນຈະພິສູດຄວາມຈິງ ຊຶ່ງບໍ່ໄດ້ເປັນປະເດັນຂໍ້ຂັດແຍ່ງໃນຄະດີໂດຍກົງ, ແຕ່ຖ້າຕ້ອງການພິສູດຄວາມຈິງອື່ນທີ່ຊີ້ໃຫ້ເຫັນວ່າຄວາມຈິງທີ່ເປັນປະເດັນຂໍ້ຂັດແຍ່ງ ຊຶ່ງອາດຈະເກີດຂຶ້ນ ຫຼື ບໍ່ເກີດຂຶ້ນ ເຊັ່ນ ການກະທຳຜິດໃນສະຖານທຳຮ້າຍຮ່າງກາຍ. ທ້າວ ກ ໃຊ້ມີດແທງ ທ້າວ ຂ ຫຼື ບໍ່, ທ້າວ ຄ ເປັນພະຍານທີ່ໄດ້ໃຫ້ການວ່າເວລາເກີດເຫດໄດ້ເຫັນ ທ້າວ ກ ແລ່ນຜ່ານໄປໂດຍມືຂອງຜູ້ກ່ຽວຖືມີດຊຶ່ງມີເລືອດ ແລະ ໄດ້ຍິນສຽງຮ້ອງຂອງ ທ້າວ ຂ. ສະນັ້ນ, ເຖິງສານຈະເຊື່ອວ່າ ທ້າວ ຄ ເວົ້າຄວາມຈິງ ແຕ່ສານກໍ່ຍັງບໍ່ສາມາດສະຫຼຸບທັນທີວ່າ ທ້າວ ກ ໄດ້ໃຊ້ມີດແທງ ທ້າວ ຂ ແທ້ ເພາະວ່າອາດຈະມີຄວາມເປັນໄປໄດ້ວ່າ ທ້າວ ກ ບໍ່ໄດ້ກະທຳ, ເຖິງວ່າຄວາມໜ້າເຊື່ອຖືຈະມີໜ້ອຍທີ່ເຫັນວ່າ ທ້າວ ກ ຖືມີດແລ່ນມາໃນຂະນະນັ້ນ ແຕ່ບໍ່ໄດ້ແທງ

ທ້າວ ຂ, ສ່ວນ ທ້າວ ຄ ເປັນພຽງພະຍານທີ່ຊີ້ບອກວ່າ ທ້າວ ກ ອາດຈະເປັນຄົນແທງ ທ້າວ ຂ ເທົ່ານັ້ນ, ສານຈະຕ້ອງພິຈາລະນາຫຼັກຖານນີ້ລວມກັບຫຼັກຖານອື່ນໆອີກວ່າພຽງພໍ ຫຼື ບໍ່ ທີ່ຈະສະຫຼຸບໄດ້ວ່າ ທ້າວ ກ ໄດ້ໃຊ້ມີດແທງ ທ້າວ ຂ.

**ຕົວຢ່າງ:** ການກະທຳຜິດໃນສະຖານຄາດຕະກຳ

ທ້າວ ກ ໄດ້ເອົາປືນຍິງ ທ້າວ ຂ ຈົນເຖິງຂັ້ນເສຍຊີວິດ, ພະຍານທີ່ເຫັນ ທ້າວ ກ ຍົກປືນຂຶ້ນຍິງໃສ່ ທ້າວ ຂ ແລະ ຖືກ ທ້າວ ຂ ເສຍຊີວິດນັ້ນ ແມ່ນ ເປັນຫຼັກຖານໂດຍກົງ ເພາະເປັນພະຍານທີ່ຮູ້ເຫັນຂໍ້ຄວາມຈິງທີ່ຈະຕ້ອງນຳມາພິຈາລະນາ, ແຕ່ຖ້າພະຍານທີ່ບໍ່ໄດ້ເຫັນ ທ້າວ ກ ຍິງ ທ້າວ ຂ ໂດຍກົງ ຊຶ່ງພຽງແຕ່ໄດ້ຍິນສຽງປືນແລ້ວໃນຂະນະນັ້ນໄດ້ເຫັນ ທ້າວ ກ ຖືປືນແລ່ນໜີດ້ວຍຄວາມຟ້າວຟັ່ງ ແລະ ເປັນໜ້າສົງໄສຜ່ານຕົນໄປ ໃນກໍລະນີນີ້ ແມ່ນ ເປັນຫຼັກຖານທາງອ້ອມ ເພາະພະຍານໄດ້ຊີ້ໃຫ້ເຫັນວ່າ ທ້າວ ກ ເປັນຄົນຂ້າ ທ້າວ ຂ ໂດຍໃຊ້ປືນຍິງ ຊຶ່ງເປັນການຊີ້ບອກວ່າການຄາດຕະກຳທີ່ເກີດຂຶ້ນນັ້ນ ທ້າວ ກ ອາດຈະເປັນຜູ້ກະທຳຜິດ, ແຕ່ຍັງມີບັນຫາສົງໄສວ່າ ທ້າວ ກ ເປັນຜູ້ກະທຳຜິດແທ້ ຫຼື ບໍ່, ຈຶ່ງບໍ່ສາມາດທີ່ຈະໃຊ້ເປັນຫຼັກຖານໂດຍກົງໄດ້ເພາະບໍ່ໄດ້ເຫັນປະເດັນທີ່ສຳຄັນຂອງເຫດການຕົວຈິງ.

ໃນຄະດີອາຍາສານຈະໃຫ້ຄວາມສຳຄັນ ຫຼື ເຊື່ອຖືຫຼັກຖານທາງກົງຫຼາຍກວ່າຫຼັກຖານທາງອ້ອມ ເພາະສາມາດພິສູດໄດ້ວ່າຈຳເລີຍເປັນຜູ້ມີຄວາມຜິດ ຫຼື ບໍລິສຸດ ແລະ ເປັນຫຼັກຖານທີ່ຈຳເປັນທີ່ສຸດທີ່ຄູ່ຄວາມຈະຕ້ອງນຳສະເໜີຫຼັກຖານໂດຍກົງ ໃນກໍລະນີທີ່ໂຈດຈະພິສູດຄວາມຜິດຂອງຈຳເລີຍຕ້ອງມີຫຼັກຖານໂດຍກົງ ຈຶ່ງຈະມີນ້ຳໜັກຢ່າງໜັກແໜ້ນ. ສຳລັບຫຼັກຖານທາງອ້ອມ ຖ້າມີເຫດຜົນພຽງພໍສານກໍຕ້ອງໃຫ້ຄວາມສຳຄັນ ຫຼື ເຊື່ອຖືເຊັ່ນດຽວກັນ, ເພາະວ່າເຖິງຈະບໍ່ໄດ້ເຫັນໃນເວລາທີ່ເກີດເຫດ ແຕ່ໄດ້ເຫັນໃນເວລາໃກ້ຄຽງກັບການເກີດເຫດຄວນທີ່ຈະເຊື່ອຖືໄດ້ ສິ່ງທີ່ສຳຄັນທີ່ສຸດຫຼັກຖານທາງອ້ອມໃນຄະດີອາຍາສານຈະເຊື່ອຖືໄດ້ຈະຕ້ອງຊີ້ບອກຢ່າງແນ່ນອນ ແລະ ຊັດເຈນ ຊຶ່ງບໍ່ມີທາງທີ່ຈະຊີ້ບອກວ່າຄວາມຈິງເປັນຢ່າງອື່ນໄດ້. ການພິຈາລະນາຫຼັກຖານໂດຍອ້ອມທີ່ມີເຫດຜົນມີຄວາມສຳຄັນທີ່ສຸດ ເພາະວ່າບາງຄະດີຫຼັກຖານໂດຍກົງກໍບໍ່ສາມາດພິສູດຄວາມຈິງໄດ້, ແຕ່ໃນບາງຄະດີຫຼັກຖານທາງອ້ອມອາດພິສູດຄວາມຜິດຂອງຈຳເລີຍໄດ້ຢ່າງຊັດເຈນ ເຊັ່ນ ການກະທຳຄວາມຜິດໃນສະຖານປຸ້ນຊັບ, ໃນຄະດີນີ້ ແມ່ນ ບໍ່ມີຫຼັກຖານໂດຍກົງ ໝາຍຄວາມວ່າບໍ່ມີໃຜເຫັນ ທ້າວ ກ ເປັນຜູ້ເຂົ້າຮ່ວມໃນການປຸ້ນຊັບ, ແຕ່ໃນຕົວຈິງຜູ້ຖືກເສຍຫາຍໄດ້ຍິງຕໍ່ສູ້ກັບພວກທີ່ມາປຸ້ນ ແລະ ຕຳຫຼວດກໍໄດ້ຕິດຕາມຈັບ ທ້າວ ກ ໄດ້ ໂດຍໄດ້ພົບບາດແຜຮອຍລູກປືນ ແລະ ມີເລືອດໄຫຼຢູ່, ຊຶ່ງທາງຜູ້ຊ່ຽວຊານກໍໄດ້ພິສູດວ່າເລືອດຂອງ ທ້າວ ກ ນັ້ນເປັນໝວດເລືອດປະເພດດຽວກັບເລືອດທີ່ຍ້ອຍຢູ່ຕາມສະຖານທີ່ ຊຶ່ງຜູ້ຖືກເສຍຫາຍໃຫ້ການວ່າໄດ້ຍິງປືນຖືກຜູ້ທີ່ມາປຸ້ນໃນສະຖານທີ່ນີ້, ຂໍ້ຄວາມຈິງໄດ້ຊີ້ບອກໂດຍມີຫຼັກຖານຢ່າງຊັດເຈນວ່າ ທ້າວ ກ ເປັນຜູ້ເຂົ້າຮ່ວມໃນການປຸ້ນຄັ້ງ

ນີ້, ໃນກໍລະນີນີ້ ຫຼັກຖານທາງອ້ອມມີນ້ຳໜັກທີ່ສຸດ ແລະ ສານຈະຕ້ອງລົງໂທດຈຳເລີຍໃນການຮ່ວມມືກະທຳຜິດໃນສະຖານປຸ້ນຊັບໄດ້.

**5. ຫຼັກຖານຜູກມັດ ແລະ ຫຼັກຖານແກ້ມັດ**

ຫຼັກຖານຜູກມັດ ໝາຍເຖິງຫຼັກຖານທີ່ຢັ້ງຢືນວ່າຜູ້ຖືກຫາ ຫຼື ຈຳເລີຍ ໄດ້ກະທຳຜິດ (ມ 3 ຂໍ້ 17 ກດຍ) ຫຼື ເວົ້າອີກຢ່າງໜຶ່ງວ່າ ຫຼັກຖານຜູກມັດ ແມ່ນ ຫຼັກຖານທີ່ເປັນພື້ນຖານໃຫ້ແກ່ການກ່າວຫາ ຫຼື ຢັ້ງຢືນເຖິງຄວາມຖືກຕ້ອງຂອງການກ່າວຫາ ຫຼື ຢັ້ງຢືນເພີ່ມຄວາມຮັບຜິດຊອບທາງອາຍາ ເຊັ່ນ ບົດບັນທຶກການກວດຄົ້ນ, ບົດບັນທຶກການຢັ້ງຢືນຕ່າງໆທີ່ຢັ້ງຢືນວ່າເປັນຂອງຜູ້ຖືກຫາແທ້ ຂອງກາງທີ່ຢູ່ໃນການຄອບຄອງຂອງຜູ້ກ່ຽວ ໂດຍແມ່ນເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ ແລະ ຜູ້ຖືກເສຍຫາຍເປັນຜູ້ເກັບໂຮມມາໂດຍຜ່ານຂະບວນການຕ່າງໆເພື່ອນຳມາເປັນຫຼັກຖານຜູກມັດ ຫຼື ຢັ້ງຢືນວ່າການກະທຳຜິດດັ່ງກ່າວວ່າເກີດຈາກພຶດຕິກຳຂອງຜູ້ຖືກຫາແທ້.

**ຕົວຢ່າງ:** ທ້າວ ກ ມີຄວາມຄຽດແຄ້ນ ນາງ ຂ ມື້ໜຶ່ງ ທ້າວ ກ ໄດ້ໄປເຫັນ ນາງ ຂ ຢູ່ເຮືອນຄົນດຽວ ທ້າວ ກ ຈຶ່ງເອົາມີດທີ່ໄດ້ກະກຽມມາເຂົ້າໄປແທງທ້ອງສີ່ບາດເຮັດໃຫ້ ນາງ ຂ ເສຍຊີວິດຄາທີ່, ໃນເວລາທີ່ແທງນັ້ນເລືອດຂອງ ນາງ ຂ ໄດ້ຟົ້ງໃສ່ເສື້ອຂອງ ທ້າວ ກ ແລະ ທ້າວ ກ ກໍໄດ້ໜີໄປພ້ອມທັງໄດ້ແກ້ເສື້ອ ແລະ ມີດທີ່ໃຊ້ກໍ່ເຫດນັ້ນຖິ້ມລົງຖັງຂີ້ເຫຍື້ອໃນເຮືອນຂອງຕົນ. ຈາກນັ້ນເຈົ້າໜ້າທີ່ໄດ້ລົງໄປສະຖານທີ່ເກີດເຫດຈຶ່ງຮູ້ແຫຼ່ງຂ່າວວ່າ ທ້າວ ກ ຕົກເປັນຜູ້ຖືກສົງໄສຈຶ່ງໄດ້ນຳ ທ້າວ ກ ມາໃຫ້ການ, ແຕ່ ທ້າວ ກ ກໍປະຕິເສດວ່າບໍ່ຮູ້ ແລະ ບໍ່ໄດ້ກະທຳຜິດ. ດັ່ງນັ້ນ, ເຈົ້າໜ້າທີ່ໄດ້ໄປກວດຄົ້ນເຮືອນຂອງຜູ້ກ່ຽວຈຶ່ງໄດ້ພົບເຫັນມີດ ແລະ ເສື້ອທີ່ເປື້ອນດ້ວຍຄາບເລືອດ ຈາກນັ້ນເຈົ້າໜ້າທີ່ຈຶ່ງເອົາມີດ ແລະ ເສື້ອດັ່ງກ່າວໄປພິສູດວ່າເລືອດທີ່ຕິດໃນເສື້ອນັ້ນແມ່ນເປັນເລືອດ ນາງ ຂ ແລະ ລາຍມືໃນດ້າມມີດກໍເປັນລາຍມື ຂອງ ທ້າວ ກ. ສະນັ້ນ, ເສື້ອ, ຄາບເລືອດ ແລະ ມີດເປັນຫຼັກຖານຜູກມັດວ່າ ທ້າວ ກ ເປັນຜູ້ກະທຳຜິດ.

ຫຼັກຖານແກ້ມັດ ໝາຍເຖິງຫຼັກຖານທີ່ຢັ້ງຢືນວ່າຜູ້ຖືກຫາ ຫຼື ຈຳເລີຍບໍ່ໄດ້ກະທຳຜິດ (ມ 3 ຂໍ້ 18 ກດຍ) ຫຼື ເວົ້າອີກຢ່າງໜຶ່ງວ່າຫຼັກຖານແກ້ມັດ ແມ່ນ ຫຼັກຖານທີ່ຢັ້ງຢືນເຖິງຄວາມບໍລິສຸດຂອງຜູ້ຖືກຫາ ຫຼື ຈຳເລີຍ ຫຼື ເປັນພື້ນຖານໃຫ້ແກ່ການພົ້ນຂໍ້ກ່າວຫາ ເຊັ່ນ ບົດບັນທຶກຄຳໃຫ້ການຂອງພະຍານທີ່ຢັ້ງຢືນໃຫ້ຮູ້ວ່າຜູ້ຖືກຫາ ຫຼື ຈຳເລີຍບໍ່ຢູ່ໃນເຫດການໃນເວລາເຫດການຂອງການກະທຳຜິດເກີດຂຶ້ນ, ບົດສະຫຼຸບຂອງແພດທີ່ຢັ້ງຢືນວ່າຜູ້ຖືກຫາ ຫຼື ຈຳເລີຍ ບໍ່ມີສະຕິສຳປະຊັນຍະໃນເວລາກະທຳຜິດ.

**ຕົວຢ່າງ:** ມື້ໜຶ່ງ ນາງ ກ ໄດ້ໄປຫຼິ້ນບຸນວັດບ້ານຂອງຕົນ ເມື່ອຮອດເວລາ 22 ໂມງ ນາງ ກ ກໍໄດ້ກັບມາເຮືອນໃນໄລຍະເວລາທີ່ ນາງ ກ ຍ່າງມາເຮືອນນັ້ນໄດ້ມີກຸ່ມຊາວໜຸ່ມຫຼາຍຄົນ

ນັ່ງຢູ່ຂ້າງທາງໄດ້ດຶງເອົາ ນາງ ກ ເຂົ້າໄປຂົ່ມຂືນທຳຊຳເລົາຈົນສຳເລັດ ຈາກນັ້ນ ທ້າວ ຂ ໄດ້ມາພົບເຫັນຈຶ່ງໄດ້ຊ່ວຍ ນາງ ກ ແລະ ແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດ. ຜ່ານການສືບສວນ-ສອບສວນ ນາງ ກ ໃຫ້ ການວ່າຜູ້ທີ່ຂົ່ມຂືນທຳຊຳເລົາຕົນແມ່ນ ທ້າວ ຄ ຈາກນັ້ນເຈົ້າໜ້າທີ່ຈຶ່ງໄດ້ກັກຕົວ ທ້າວ ຄ. ຜ່ານການເອົາຄຳໃຫ້ການຂອງ ທ້າວ ຄ ຜູ້ກ່ຽວປະຕິເສດວ່າຕົນບໍ່ໄດ້ຂົ່ມຂືນທຳຊຳເລົາ ນາງ ກ ແລະ ໃນໄລຍະເວລາທີ່ເກີດເຫດຜູ້ກ່ຽວນັ່ງດື່ມເບຍ ແລະ ຟ້ອນລຳວົງກັບໝູ່ຢູ່ງານບຸນ. ສະນັ້ນ, ເຈົ້າໜ້າທີ່ຕຳຫຼວດຈຶ່ງນຳເອົານ້ຳເຊື້ອຂອງ ທ້າວ ຄ ໄປກວດພິສູດ, ຜົນຂອງການກວດພິສູດຂອງແພດໄດ້ຢັ້ງຢືນວ່ານ້ຳເຊື້ອຂອງ ທ້າວ ຄ ບໍ່ກົງກັບນ້ຳເຊື້ອທີ່ຢູ່ໃນປາກຊ່ອງຄອດຂອງ ນາງ ກ. ສະນັ້ນ, ຜົນຂອງການກວດພິສູດດັ່ງກ່າວຈຶ່ງເປັນຫຼັກຖານແກ້ມັດໃຫ້ ທ້າວ ຄ ພົ້ນຈາກຂໍ້ກ່າວຫາ.

### 6. ຫຼັກຖານຕົ້ນຕໍ ແລະ ຫຼັກຖານສຳຮອງ

ຫຼັກຖານຕົ້ນຕໍ ໝາຍເຖິງຫຼັກຖານທີ່ເກັບໂຮມມາໄດ້ເພື່ອພິສູດຄວາມຈິງໄດ້ຢ່າງຊັດເຈນ ຫຼື ມີນ້ຳໜັກທີ່ໜ້າເຊື່ອຖືໄດ້ດີກວ່າຫຼັກຖານອື່ນໆຊຶ່ງເປັນຫຼັກຖານທີ່ບົ່ງບອກຄວາມຈິງໃດໜຶ່ງທີ່ຄູ່ຄວາມຝ່າຍໃດຝ່າຍໜຶ່ງໃນຄະດີທີ່ຈະຕ້ອງນຳມາອ້າງ.

ສ່ວນຫຼັກຖານສຳຮອງ ໝາຍເຖິງຫຼັກຖານທີ່ບົ່ງບອກວ່າຄວາມຈິງນັ້ນໄດ້ມີຢູ່ແລ້ວ ຫຼື ເວົ້າອີກຢ່າງໜຶ່ງວ່າຫຼັກຖານສຳຮອງ ໝາຍເຖິງຫຼັກຖານທີ່ມີຄວາມສຳຄັນຫຼຸດລົງມາ, ແຕ່ບໍ່ສາມາດທີ່ຈະພິສູດຄວາມຈິງໃຫ້ມີນ້ຳໜັກທີ່ໜ້າເຊື່ອຖືໄດ້ເທົ່າກັບຫຼັກຖານຕົ້ນຕໍ.

**ຕົວຢ່າງ:** ໃນຄະດີອາຍາ ມີດທີ່ນຳໃຊ້ເຂົ້າໃນການກະທຳຜິດເປັນຫຼັກຖານທາງດ້ານວັດຖຸຫາກນຳຂຶ້ນມາສະເໜີຕໍ່ຜູ້ດຳເນີນຄະດີເພື່ອໃຫ້ກວດກາເບິ່ງວ່າເປັນຫຼັກຖານຕົ້ນຕໍ ຫຼື ບໍ່, ແຕ່ຖ້າຫາກຄູ່ຄວາມບໍ່ສາມາດນຳມີດມາສະເໜີຜູ້ດຳເນີນຄະດີກວດກາເບິ່ງໄດ້ ຫາກມີພຽງພະຍານທີ່ເຄີຍເຫັນມີດນັ້ນມາໃຫ້ການແທນ. ດ້ວຍເຫດນັ້ນ, ພະຍານຊຶ່ງຖືເປັນຫຼັກຖານທາງດ້ານບຸກຄົນໃນລັກສະນະນີ້ແມ່ນເປັນພຽງຫຼັກຖານສຳຮອງ.

ສະນັ້ນ, ຖ້າມີຫຼັກຖານຕົ້ນຕໍແລ້ວກໍບໍ່ຄວນຈະເລືອກເອົາຫຼັກຖານສຳຮອງຕື່ມອີກ ເຊັ່ນມີເອກະສານຕົ້ນສະບັບ ຊຶ່ງຖືເປັນຫຼັກຖານທາງດ້ານວັດຖຸແລ້ວກໍບໍ່ຄວນທີ່ຈະນຳເອົາພະຍານບອກເລົ່າ ຫຼື ເອກະສານສະບັບສຳເນົາ ຫຼື ຄຳບອກເລົ່າກ່ຽວກັບວັດຖຸມາສະເໜີ ເພາະຈະເຮັດໃຫ້ການພິຈາລະນາຫຼັກຖານໃນຄະດີອາຍາບໍ່ມີຄວາມຊັດເຈນ ແລະ ອາດເກີດຄວາມສົງໄສໃນການວິນິດໄສຄະດີໄດ້. ໃນຂັ້ນຕອນສືບສວນ-ສອບສວນຕ້ອງນຳຫຼັກຖານຕົ້ນຕໍເຂົ້າມາປະກອບໃນສຳນວນຄະດີ ຖ້າຫາກນຳຫຼັກຖານສຳຮອງເຂົ້າໄວ້ໃນສຳນວນຄະດີອາຍາແລ້ວຫົວໜ້າອົງການໄອຍະການ ຕ້ອງອອກຄຳສັ່ງສອບສວນເພີ່ມເຕີມ ເພື່ອໃຫ້ໄດ້ຫຼັກຖານຕົ້ນຕໍຈຶ່ງຈະສາມາດສັ່ງຟ້ອງຄະດີຂຶ້ນສານໄດ້.

# ບົດທີ 2
# ການປະກອບຫຼັກຖານໃນຄະດີອາຍາ

## 1. ຄວາມໝາຍຂອງການປະກອບຫຼັກຖານໃນຄະດີອາຍາ

ການປະກອບຫຼັກຖານໃນຄະດີອາຍາ ແມ່ນການເຄື່ອນໄຫວຂອງອົງການດຳເນີນຄະດີອາຍາຢ່າງເປັນລະບົບແນໃສ່ເກັບໂຮມ, ບັນທຶກ, ກວດກາ ແລະ ຊັ່ງຊາ ຕີລາຄາຂໍ້ມູນຫຼັກຖານໃດໜຶ່ງຂອງເຫດການເພື່ອຮັບປະກັນການດຳເນີນ ແລະ ແກ້ໄຂຄະດີຢ່າງຖືກຕ້ອງ.

ການປະກອບຫຼັກຖານ ເປັນວຽກງານໃຈກາງໃນການດຳເນີນຄະດີອາຍາ ເພາະມັນຊີ້ໃຫ້ເຫັນເຫດການຂອງຄະດີ, ຢັ້ງຢືນອົງປະກອບຂອງການກະທຳຜິດເພື່ອຕັ້ງຂໍ້ກ່າວຫາ, ສັ່ງຟ້ອງຂຶ້ນສານ ແລະ ພິຈາລະນາວ່າບຸກຄົນໃດໜຶ່ງເປັນຜູ້ກະທຳຜິດໂດຍອີງໃສ່ຫຼັກຖານຢ່າງໜັກແໜ້ນ, ຖືກຕ້ອງ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

## 2. ສະພາບການທີ່ຕ້ອງຊອກຫາຄວາມຈິງໃນຄະດີອາຍາ

ສານຈະພິຈາລະນາວິນິດໄສວ່າຈຳເລີຍເປັນຜູ່ກະທຳຜິດ ແລະ ມີຄວາມຮັບຜິດຊອບທາງອາຍາໃນສະຖານໃດໜຶ່ງຕາມທີ່ກົດໝາຍອາຍາໄດ້ກຳນົດໄວ້ນັ້ນ ແມ່ນ ຕ້ອງມີຫຼັກຖານຢ່າງຄົບຖ້ວນໂດຍສະເພາະຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ ແລະ ຫຼັກຖານທາງດ້ານບຸກຄົນທີ່ກ່ຽວຂ້ອງກັບການພິສູດຫາຄວາມຈິງ ເພື່ອໃຫ້ສານໄດ້ລົງຄຳຊີ້ຂາດກ່ຽວກັບຂໍ້ເທັດຈິງ. ໃນການປະກອບຫຼັກຖານຕ່າງໆບໍ່ວ່າຈະເປັນຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ ແລະ ຫຼັກຖານທາງດ້ານບຸກຄົນຕ້ອງເປັນຫຼັກຖານທີ່ໜັກແໜ້ນ, ໜ້າເຊື່ອຖືໄດ້ ແລະ ເປັນຫຼັກຖານທີ່ໄດ້ມາຢ່າງຖືກຕ້ອງຕາມລະບຽບກົດໝາຍ. ສະນັ້ນ, ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງ ສປປ ລາວ ກໍໄດ້ກຳນົດກ່ຽວກັບສະພາບການທີ່ຕ້ອງຊອກຫາຄວາມຈິງໄວ້ວ່າໃນເວລາການດຳເນີນການສືບສວນ-ສອບສວນ, ການສັ່ງຟ້ອງ ແລະ ການຕັດສີນຄະດີ ອົງການດຳເນີນຄະດີອາຍາຕ້ອງຊອກຫາຄວາມຈິງກ່ຽວກັບສະພາບການດັ່ງນີ້:

1) ເຫດການຂອງຄະດີ (ພຶດຕິກຳ, ວັນເວລາ, ສະຖານທີ່, ພາຫະນະ, ອຸປະກອນ, ວິທີການ ແລະ ສະພາບການອື່ນ);

2) ຄວາມຜິດຂອງຜູ່ຖືກຫາ ຫຼື ຈຳເລີຍ (ເຈດຕະນາ ຫຼື ບໍ່ລະມັດລະວັງ) ແລະ ເຫດຜົນໃນການກະທຳຜິດ;

3) ລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຂອງການກະທຳຜິດ ພ້ອມທັງບຸກຄະລິກກະພາບຂອງຜູ່ຖືກຫາ ຫຼື ຈຳເລີຍ;

4) ລັກສະນະ ແລະ ລະດັບຄວາມເສັຍຫາຍທີ່ເນື່ອງມາຈາກການກະທຳຜິດ;

5) ສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ ຫຼື ສາເຫດທີ່ພາໃຫ້ມີຄວາມຮັບຜິດຊອບທາງອາຍາ;

6) ສາເຫດທີ່ພາໃຫ້ຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາ (ມ 41 ກດຍ).

ໃນການປະກອບຫຼັກຖານໃນຄະດີອາຍາ ແມ່ນມີຄວາມຈຳເປັນທີ່ສຸດທີ່ຈະຕ້ອງຄົ້ນຄວ້າເຖິງສະພາບການທີ່ຈະຕ້ອງຊອກຫາຄວາມຈິງ ເນື່ອງຈາກວ່າບຸກຄົນຜູ້ໃດຈະມີຄວາມຮັບຜິດຊອບທາງອາຍາ ແລະ ຈະຖືກລົງໂທດທາງອາຍາໄດ້ກໍຕໍ່ເມື່ອບຸກຄົນຜູ້ນັ້ນຫາກມີການກະທຳໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງທີ່ເປັນອັນຕະລາຍຕໍ່ສັງຄົມຊຶ່ງໄດ້ກຳນົດໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນຂອງ ສປປ ລາວ ທີ່ໄດ້ກຳນົດໂທດທາງອາຍາ ແລະ ໃນເມື່ອມີຄຳຕັດສິນຂອງສານເທົ່ານັ້ນ (ມ 2 ກອຍ) ພ້ອມກັນນັ້ນ ການກະທຳດັ່ງກ່າວກໍຕ້ອງມີສີ່ອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນ ຫຼື ໝາຍເຖິງອົງປະກອບທາງດ້ານວັດຖຸກຳ, ອົງປະກອບທາງດ້ານພາວະວິໄສ, ອົງປະກອບທາງດ້ານອັດຕະວິໄສ ແລະ ອົງປະກອບທາງດ້ານເຈົ້າກຳ. ໝາຍຄວາມວ່າຖ້າຫາກຂາດອົງປະກອບໃດໜຶ່ງຂອງການກະທຳຜິດທາງອາຍາກໍຈະບໍ່ມີຄວາມຮັບຜິດຊອບທາງອາຍາ.

### 3. ການບໍ່ຖືເປັນຫຼັກຖານໃນຄະດີອາຍາ

ຫຼັກຖານທີ່ຈະພິສູດວ່າຜູ້ຖືກຫາ ຫຼື ຈຳເລີຍ ເປັນຜູ້ກະທຳຜິດ ຫຼື ບໍ່ ແມ່ນ ຕ້ອງເປັນຫຼັກຖານທີ່ໄດ້ມາດ້ວຍຄວາມຖືກຕ້ອງຕາມກົດໝາຍ, ຖ້າຫາກວ່າຫຼັກຖານໃດທີ່ໄດ້ມາໂດຍລະເມີດລະບຽບກົດໝາຍ ແມ່ນ ຈະບໍ່ຖືວ່າເປັນຫຼັກຖານໃນຄະດີອາຍາໄດ້. ໝາຍຄວາມວ່າຂໍ້ມູນທີ່ບໍ່ຖືວ່າເປັນຫຼັກຖານໄດ້ນັ້ນຈະບໍ່ມີຜົນທາງດ້ານກົດໝາຍ ແລະ ບໍ່ສາມາດໃຊ້ເປັນພື້ນຖານໃນການດຳເນີນຄະດີອາຍາ (ມ 42 ກດຍ).

ຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍທີ່ໄດ້ມາດ້ວຍການຕົວະຍົວະຫຼອກລວງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ຫຼື ການກະທຳອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍຈະໃຊ້ເປັນຫຼັກຖານໃນຄະດີອາຍາບໍ່ໄດ້ (ມ 36 ວັກ 3 ກດຍ), ໝາຍຄວາມວ່າ ຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍຕ້ອງແມ່ນການຮັບສາລະພາບທີ່ເກີດຈາກຄວາມຈິງໃຈ ຫຼື ບໍລິສຸດໃຈຂອງຜູ້ກ່ຽວຕໍ່ກັບການກະທຳຜິດນັ້ນ. ດ້ວຍເຫດນີ້ ຄຳຮັບສາລະພາບຕາມທີ່ກ່າວມານີ້ ແມ່ນ ມີຄວາມສຳຄັນທີ່ສຸດໃນການປະກອບຫຼັກຖານໃນຄະດີອາຍາໂດຍສະເພາະຜູ້ດຳເນີນຄະດີອາຍາຕ້ອງມີຄວາມເປັນກາງ ຫຼື ມີຄວາມບໍລິສຸດຕໍ່ໜ້າທີ່ວຽກງານໂດຍປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

**ຕົວຢ່າງ:** ການກະທຳຜິດໃນສະຖານຄາດຕະກຳ

ຜູ້ດຳເນີນຄະດີແນະນຳຜູ້ໃຫ້ການວ່າ "ຖ້າຮັບສາລະພາບວ່າເປັນຜູ້ທີ່ຄາດຕະກຳຜູ້ຖືກເຄາະຮ້າຍແລ້ວຈະບໍ່ມີການດຳເນີນຄະດີອາຍາຕໍ່ໄປອີກ" ຄຳແນະນຳດັ່ງກ່າວຖືວ່າເປັນການ

ຕົວະຍົວະ ຫຼອກລວງຜູ້ຖືກຫາຈະໃຊ້ເປັນຫຼັກຖານໃນຄະດີອາຍາບໍ່ໄດ້ ເນື່ອງຈາກວ່າ ເປັນການລະເມີດຕໍ່ລະບຽບກົດໝາຍ, ແຕ່ຖ້າເຈົ້າໜ້າທີ່ຫາກແນະນຳຜູ້ຖືກຫາວ່າຖ້າຈິງໃຈຮັບສາລະພາບ ແລະ ເປີດເຜີຍການກະທຳຜິດຂອງຕົນ ແລະ ການກະທຳຜິດຂອງຜູ້ອື່ນແມ່ນຈະເປັນສາເຫດພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ, ຕໍ່ກັບຄຳແນະນຳດັ່ງກ່າວແມ່ນຖືວ່າບໍ່ເປັນການຕົວະຍົວະ ຫຼອກລວງຜູ້ຖືກຫາເພາະວ່າກົດໝາຍອາຍາກໍໄດ້ບັນຍັດໄວ້ໃນມາດຕາ 40 ວັກ 1 ຂໍ້ 8.

ໃນທາງກົງກັນຂ້າມ ຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍຕໍ່ການກະທຳຜິດຈະຖືເປັນຫຼັກຖານໃນຄະດີອາຍາໄດ້ນັ້ນກໍຕໍ່ເມື່ອຄຳຮັບສາລະພາບດັ່ງກ່າວ ໄດ້ຮັບການຢັ້ງຢືນດ້ວຍຫຼັກຖານຜູກມັດທີ່ໜັກແໜ້ນ (ມ 36 ວັກ 2 ກດຍ), ໝາຍຄວາມວ່າຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍຕໍ່ການກະທຳຜິດນັ້ນ ແມ່ນ ເປັນຫຼັກຖານທາງດ້ານບຸກຄົນ ຊຶ່ງເປັນພຽງສ່ວນໜຶ່ງຂອງຫຼັກຖານໃນຄະດີອາຍາ, ໃນກໍລະນີນີ້ ຖືວ່າຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍຕໍ່ການກະທຳຜິດໂດຍບໍ່ມີການຕົວະຍົວະ ຫຼອກລວງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ແຕ່ຖ້າບໍ່ມີຫຼັກຖານອື່ນ ເຊັ່ນ ຫຼັກຖານທາງດ້ານວັດຖຸ ຫຼື ຫຼັກຖານທາງດ້ານເອກະສານມາຢັ້ງຢືນຢ່າງໜັກແໜ້ນວ່າຜູ້ຖືກຫາ ຫຼື ຈຳເລີຍ ເປັນຜູ່ກະທຳຜິດຢ່າງແທ້ຈິງນັ້ນ ຄຳຮັບສາລະພາບດັ່ງກ່າວກໍຈະບໍ່ຖືວ່າເປັນຫຼັກຖານໃນຄະດີອາຍາໄດ້.

**ຕົວຢ່າງ:** ການລະເມີດກົດຈະລາຈອນທີ່ໃຫ້ເກີດອຸບປະຕິເຫດ.

ທ້າວ ກ ຮັບສາລະພາບວ່າໃນວັນທີ 19 ກັນຍາ 2013 ເວລາ 09:00 ໂມງໄດ້ຂັບລົດກະບະວີໂກອອກຈາກງານແຕ່ງດອງດ້ວຍຄວາມມຶນເມົາ ຈາກນັ້ນເວລາປະມານ 14:00 ໂມງຜູ່ກ່ຽວໄດ້ຂັບລົດໄປຕຳເອົາລົດຈັກຈຶ່ງເຮັດໃຫ້ຜູ່ຂັບຂີ່ລົດຈັກເສຍຊີວິດຄາທີ່, ຈາກນັ້ນຜູ່ກ່ຽວກໍໄດ້ຂັບລົດໜີອອກຈາກອຸບປະຕິເຫດ.

ຜ່ານການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນ ເຫັນວ່າຄຳຮັບສາລະພາບຂອງ ທ້າວ ກ ບໍ່ຖືກກັບຄວາມເປັນຈິງໂດຍມີພະຍານຢັ້ງຢືນວ່າໃນວັນທີ່ເກີດເຫດ ທ້າວ ກ ໄດ້ເອົາລົດຈັກໄປສ້ອມແປງທີ່ຮ້ານຂອງ ທ້າວ ຂ ພ້ອມກັນນັ້ນ ເຈົ້າໜ້າທີ່ກໍໄດ້ທົດສອບໃຫ້ຜູ້ກ່ຽວຂັບລົດກະບະຄັນດັ່ງກ່າວ ແຕ່ຜູ່ກ່ຽວບໍ່ສາມາດຂັບໄດ້ ເພາະວ່າຂັບລົດໃຫຍ່ບໍ່ເປັນ.

ໃນຕົວຢ່າງທີ່ກ່າວມາຂ້າງເທິງນັ້ນ ແມ່ນ ການຮັບສາລະພາບທີ່ບໍ່ເປັນຄວາມຈິງ ເນື່ອງຈາກວ່າບໍ່ມີຫຼັກຖານອື່ນມາປະກອບ, ຕໍ່ການຮັບສາລະພາບນັ້ນຈຶ່ງບໍ່ຖືເປັນຫຼັກຖານໃນຄະດີອາຍາໄດ້.

## 4. ການປະກອບຫຼັກຖານໃນຄະດີອາຍາ

ການປະກອບຫຼັກຖານໃສ່ສຳນວນຄະດີອາຍາ ແມ່ນ ລະບົບການເຄື່ອນໄຫວຂອງຜູ້ດຳເນີນຄະດີອາຍາໃນການບັນທຶກ, ກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານເພື່ອແນໃສ່ໃຫ້ມີຄວາມຮັບປະກັນໃນການແກ້ໄຂຄະດີທີ່ສົມເຫດສົມຜົນ, ຖືກຕ້ອງຕາມກົດໝາຍ ແລະ ສອດຄ່ອງກັບສະພາວະຄວາມເປັນຈິງຂອງເຫດການຄະດີ.

**ຕົວຢ່າງ:** ໃນເວລາເອົາຄຳໃຫ້ການຕ້ອງເຮັດບົດບັນທຶກການສືບສວນ-ສອບສວນໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

ສະຫຼຸບແລ້ວ ຫຼັກຖານໃນຄະດີອາຍາ ແມ່ນຂໍ້ມູນຕ່າງໆທີ່ກ່ຽວພັນກັບເຫດການຂອງຄະດີຊຶ່ງຖືກເກັບໂຮມໄວ້ໃນສຳນວນຄະດີ, ສ່ວນວັດຖຸທີ່ເປັນເປົ້າໝາຍຂອງການກະທຳຜິດ ຫຼື ນຳໃຊ້ເຂົ້າໃນການກະທຳຜິດຊຶ່ງເປັນພຽງແຫຼ່ງຂ່າວ ຫຼື ທີ່ມາຂອງຫຼັກຖານສາມາດນຳມາປະກອບເປັນຫຼັກຖານໄດ້.

ການປະກອບຫຼັກຖານໃນຄະດີອາຍາປະກອບດ້ວຍວິທີການດັ່ງນີ້:

1) ການເກັບໂຮມຫຼັກຖານ;

2) ການບັນທຶກຫຼັກຖານ;

3) ການກວດກາຫຼັກຖານ.

### 4.1. ການເກັບໂຮມຫຼັກຖານໃນຄະດີອາຍາ

ການເກັບໂຮມຫຼັກຖານ ແມ່ນ ການຊອກຮູ້ ແລະ ເກັບກຳຫຼັກຖານແຕ່ລະຢ່າງໂດຍເຈົ້າໜ້າທີ່ອົງການສືບສວນ-ສອບສວນ ແລະ ພະນັກງານໄອຍະການ, ການເກັບໂຮມຫຼັກຖານເຮັດຂຶ້ນດ້ວຍວິທີການທີ່ກຳນົດໄວ້ໃນມາດຕາ 43 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ຊຶ່ງອົງການດຳເນີນຄະດີອາຍາມີສິດ ແລະ ໜ້າທີ່ ດັ່ງນີ້:

1) ເອົາຄຳໃຫ້ການຂອງຜູ້ຖືກສົງໄສ, ຜູ້ຖືກຫາ, ຈຳເລີຍ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ ແລະ ພະຍານ;

2) ຊັນນະສູດສະຖານທີ່ເກີດເຫດ, ກວດຄົ້ນເຄຫະສະຖານ, ຍານພາຫະນະ ແລະ ຕົວ ບຸກຄົນທົດສອບຂໍ້ມູນຄືນໃໝ່, ຍຶດ ຫຼື ອາຍັດຊັບ;

3) ຮຽກບຸກຄົນທີ່ຮູ້ເຫັນເຫດການມາໃຫ້ການເປັນພະຍານ, ສອບຖາມຊ້ອງໜ້າ, ຊີ້ຕົວ ແລະ ຢັ້ງຢືນ;

4) ແຕ່ງຕັ້ງຜູ້ຊ່ຽວຊານ, ຜູ້ຊຳນານງານເພື່ອໃຫ້ຄຳເຫັນ;

5) ທວງເອົາເອກະສານ ຫຼື ວັດຖຸສິ່ງຂອງ ທີ່ເປັນຫຼັກຖານໃນຄະດີອາຍາຈາກບຸກຄົນ ຫຼື ການຈັດຕັ້ງ;

6) ໃຫ້ພິສູດຫຼັກຖານ;

7) ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນ ຄະດີອາຍາ.

ບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງຕ້ອງປະຕິບັດຕາມໝາຍຮຽກ, ໝາຍເຊີນ, ການທວງ ຫຼື ການແຕ່ງຕັ້ງຂອງອົງການດຳເນີນຄະດີອາຍາ.

ບຸກຄົນ ແລະ ການຈັດຕັ້ງສາມາດເກັບໂຮມຫຼັກຖານໃນຄະດີອາຍາແລ້ວມອບໃຫ້ອົງການໃນການດຳເນີນຄະດີອາຍາ (ມ 43 ກດຍ).

### 4.2. ການບັນທຶກຫຼັກຖານໃນຄະດີອາຍາ

ການບັນທຶກຫຼັກຖານ ແມ່ນການຈັດສັນຂໍ້ມູນຕ່າງໆທີ່ເກັບໂຮມມາໄດ້ນັ້ນເຂົ້າໃນສຳນວນຄະດີຕາມລະບຽບການທີ່ກຳນົດໄວ້ໃນກົດໝາຍ ເຊັ່ນ ການເຮັດບົດບັນທຶກການຈັບຕົວ, ການກວດຄົ້ນ, ການຍຶດ ຫຼື ອາຍັດຊັບ, ການຊັນນະສູດສະຖານທີ່ເກີດເຫດ, ການພິສູດຫຼັກຖານ, ການເອົາຄຳໃຫ້ການ, ການສອບຖາມຊ້ອງໜ້າ, ການຢັ້ງຢືນ ແລະ ການທົດສອບຂໍ້ມູນຄືນໃໝ່ຂອງຜູ້ດຳເນີນຄະດີ, ບົດບັນທຶກການປະຊຸມສານ ແລະ ບົດບັນທຶກອື່ນລວມທັງຈົດໝາຍ, ບັນຊີ, ແຜນວາດ, ຮູບພາບ ແລະ ເອກະສານອື່ນທີ່ພົວພັນກັບການກະທຳຜິດທີ່ໄດ້ມາຢ່າງຖືກຕ້ອງນັ້ນຖືເປັນຫຼັກຖານໃນຄະດີອາຍາ (ມ 33 ກດຍ), ໝາຍຄວາມວ່າການບັນທຶກຫຼັກຖານ ແມ່ນ ການຈັດຫຼັກຖານເຂົ້າໃນລະບົບສາລະບານຂອງສຳນວນຄະດີທີ່ກຳລັງທຳການສືບສວນ-ສອບສວນຢູ່ ສິ່ງສຳຄັນການບັນທຶກຕ້ອງໃຫ້ມີລັກສະນະກະທັດຮັດຄົບຖ້ວນ, ມີເນື້ອໃນໜັກແໜ້ນ ແລະ ຈະແຈ້ງ. ໃນການເຄື່ອນໄຫວວຽກງານດຳເນີນຄະດີຕົວຈິງເຈົ້າໜ້າທີ່ຄວນບັນທຶກເອົາແຕ່ສິ່ງທີ່ເປັນປະໂຫຍດ ແລະ ປະຕິບັດຕາມແຜນການສືບສວນ-ສອບສວນທີ່ຕົນໄດ້ວາງອອກ. ຫຼັກຖານແຕ່ລະຢ່າງທີ່ໄດ້ເກັບໂຮມມານັ້ນຕ້ອງໄດ້ຄັດຈ້ອນຈົດເຂົ້າສຳນວນຄະດີທີ່ກ່ຽວຂ້ອງດ້ວຍການສ້າງສາລະບານ ແລະ ໝາຍເລກລຳດັບຕາມຄວາມສຳຄັນຂອງແຕ່ລະຫຼັກຖານເພື່ອຄວາມສະດວກໃນການຄຸ້ມຄອງ ແລະ ການກວດກາ.

### 4.3. ການກວດກາຫຼັກຖານໃນຄະດີອາຍາ

ການກວດກາຫຼັກຖານ ແມ່ນການກວດຄືນບັນດາຫຼັກຖານທັງໝົດທີ່ເກັບໂຮມມາໄດ້ໃນໄລຍະໃດໜຶ່ງຂອງການເຄື່ອນໄຫວປະຕິບັດແຜນການສືບສວນ-ສອບສວນ ທີ່ຕົນໄດ້ວາງອອກ ເພື່ອຈະຮູ້ໄດ້ວ່າຕົນໄດ້ເກັບໂຮມຫຼັກຖານໃນແຕ່ລະໄລຍະນັ້ນຄົບຖ້ວນແລ້ວ ຫຼື ບໍ່ ແລະພໍທີ່ຈະສາມາດຢັ້ງຢືນຂໍ້ກ່າວຫາໄດ້ໜັກແໜ້ນ ຫຼື ບໍ່, ຖ້າຫາກເຫັນວ່າການເກັບໂຮມຫຼັກຖານຍັງບໍ່ທັນສາມາດຢັ້ງຢືນເຖິງຂໍ້ກ່າວຫາດັ່ງກ່າວນັ້ນໄດ້ ຜູ້ດຳເນີນຄະດີກໍຕ້ອງວາງແຜນເກັບໂຮມຫຼັກຖານອື່ນຕໍ່ໄປຈົນກວ່າຈະຄົບຖ້ວນພຽງພໍເພື່ອຢັ້ງຢືນຂໍ້ກ່າວຫາໄດ້. ສະນັ້ນ, ການກວດກາຫຼັກຖານຈຶ່ງເປັນບ່ອນອີງໃຫ້ແກ່ການໃສ່ຂໍ້ກ່າວຫາຜູ້ກະທຳຜິດໄດ້ຢ່າງຖືກຕ້ອງ ຫຼື ໃຫ້ຜູ້ກະທຳຜິດພົ້ນຂໍ້ກ່າວຫາ, ເປັນບ່ອນອີງໃຫ້ແກ່ການນຳໃຊ້ວິທີການສືບສວນ-ສອບສວນ ຫຼື

ນຳໃຊ້ມາດຕະການສະກັດກັ້ນໃນການດຳເນີນຄະດີຕໍ່ໄປ, ເປັນບ່ອນອີງໃຫ້ແກ່ການວາງໂທດໃສ່ຜູ່ກະທຳຜິດ ແລະ ສອດຄ່ອງກັບຈຸດປະສົງຂອງການລົງໂທດຕາມກົດໝາຍ, ເປັນບ່ອນອີງໃຫ້ແກ່ການສືບສວນ-ສອບສວນເພີ່ມເຕີມ.

# ບົດທີ 3
# ການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານໃນຄະດີອາຍາ

## 1. ຄວາມໝາຍຂອງການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ

ການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ ແມ່ນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານທີ່ເກັບໂຮມມາໄດ້ນັ້ນວ່າມີຄວາມຖືກຕ້ອງທາງດ້ານກົດໝາຍ, ຖືກຕ້ອງຕາມຄວາມເປັນຈິງ, ມີຄວາມຄົບຖ້ວນ, ມີການພົວພັນກັບຄະດີນັ້ນແນວໃດ. ນອກຈາກນັ້ນ ການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານຍັງສາມາດເປັນຂໍ້ມູນໃຫ້ອົງການດຳເນີນຄະດີໃຊ້ເປັນບ່ອນອີງໃນການດຳເນີນຄະດີອາຍາ.

ໃນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານນັ້ນອົງການດຳເນີນຄະດີອາຍາ ເຊັ່ນອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານຈະຕ້ອງໄດ້ກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສດ້ວຍຄວາມໝັ້ນໃຈຂອງຕົນເອງ.

ນອກຈາກນັ້ນ ການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ ຖ້າຫາກອົງການດຳເນີນຄະດີອາຍາຍັງມີຄວາມສົງໄສວ່າຜູ້ຖືກຫາ ຫຼື ຈຳເລີຍອາດຈະເປັນຜູ້ກະທຳຜິດ ຫຼື ບໍ່ເປັນຜູ້ກະທຳຜິດທີ່ເນື່ອງມາຈາກການບໍ່ມີຫຼັກຖານໜັກແໜ້ນ ແລະ ບໍ່ພຽງພໍ, ຖ້າຜູ້ຖືກຫາ ຫຼື ຈຳເລີຍຖືກກັກຂັງເພື່ອດຳເນີນຄະດີອາຍາໃນຂໍ້ກ່າວຫາໃດໜຶ່ງ ອົງການດຳເນີນຄະດີອາຍາກໍຕ້ອງໄດ້ປ່ອຍຕົວຜູ້ຖືກຫາ ຫຼື ຈຳເລີຍ ຫຼື ພິຈາລະນາຕັດສິນໃຫ້ຜູ້ກ່ຽວພົ້ນຂໍ້ກ່າວຫາ.

ການດຳເນີນຄະດີອາຍາໃນກໍລະນີທີ່ຜູ້ຖືກຫາ ຫຼື ຈຳເລີຍຫາກໃຫ້ການຮັບສາລະພາບວ່າຕົນເອງໄດ້ກະທຳຜິດ, ຄຳຮັບສາລະພາບນັ້ນຈະບໍ່ຖືວ່າເປັນຫຼັກຖານຕົ້ນຕໍທີ່ຈະມາຢັ້ງຢືນວ່າຜູ້ກ່ຽວໄດ້ກະທຳຜິດທາງອາຍາ ໝາຍຄວາມວ່າອົງການດຳເນີນຄະດີອາຍາຕ້ອງໄດ້ຊອກຫາຫຼັກຖານອື່ນເພື່ອມາຢັ້ງຢືນຄວາມຜິດຂອງຜູ້ກ່ຽວຕື່ມອີກ.

ເຖິງຢ່າງໃດກໍຕາມ ເຖິງວ່າຜູ້ຖືກຫາ ຫຼື ຈຳເລີຍຈະປະຕິເສດຂໍ້ກ່າວຫາ ຫຼື ບໍ່ຮັບສາລະພາບກ່ຽວກັບການກະທຳຜິດຂອງຕົນແຕ່ຖ້າມີຫຼັກຖານອື່ນທີ່ໜັກແໜ້ນ ແລະ ຄົບຖ້ວນມາຢັ້ງຢືນການກະທຳຜິດຂອງຜູ້ກ່ຽວແລ້ວກໍຖືວ່າຜູ້ກ່ຽວໄດ້ກະທຳຜິດທາງອາຍາ (ມ 44 ກດຍ).

## 2. ຄວາມສຳຄັນຂອງການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ

ການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານມີຄວາມສຳຄັນໃນການພິຈາລະນາຕັດສິນຄະດີໃຫ້ຖືກຕ້ອງຕາມຄວາມເປັນຈິງ ແລະ ສອດຄ່ອງກັບກົດໝາຍພ້ອມທັງໃຫ້ຄວາມເປັນທຳແກ່ຄູ່ຄວາມ. ຕາມກົດໝາຍແລ້ວເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ ແລະ ຜູ້ພິພາກສາຕ້ອງໄດ້ທຳການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານດ້ວຍຄວາມໝັ້ນໃຈ

ຂອງຕົນບົນພື້ນຖານການພິຈາລະນາເຫດການຂອງຄະດີຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ.

ການດຳເນີນຄະດີອາຍາຢ່າງຮອບດ້ານ ໝາຍຄວາມວ່າກ່ອນຈະຮູ້ວ່າຜູ້ໃດຜູ້ໜຶ່ງໄດ້ກະທຳຜິດຕ້ອງໄດ້ຄົ້ນຄວ້າຫຼັກຖານ, ຊອກຫາຂໍ້ມູນມາຢັ້ງຢືນວ່າຜູ້ກ່ຽວໄດ້ກະທຳຜິດແທ້ ຫຼື ບໍ່, ຈາກນັ້ນຈະຕ້ອງເບິ່ງສາເຫດທີ່ພາໃຫ້ເພີ່ມ ຫຼື ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ ແລະ ມີເງື່ອນໄຂໃຫ້ນຳໃຊ້ມາດຕະການສະກັດກັ້ນໄດ້ ຫຼື ບໍ່, ເຊັ່ນ ການກະທຳຜິດດ້ວຍຄວາມຈຳເປັນ ຫຼື ຖືກບັງຄັບ ຫຼື ກະທຳຜິດໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ ຫຼື ຜູ້ກະທຳຜິດເຖິງກະສຽນອາຍຸທາງອາຍາ ຫຼື ບໍ່.

ການດຳເນີນຄະດີອາຍາຢ່າງຄົບຖ້ວນໝາຍຄວາມວ່າ ຂໍ້ມູນຫຼັກຖານທີ່ເກັບໂຮມມາໄດ້ຈາກການດຳເນີນຄະດີຂອງອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານຕ້ອງໄດ້ຄົ້ນຄວ້າພິຈາລະນາທຸກບັນຫາຢ່າງລະອຽດຈຶ່ງນຳມາຊັ່ງຊາ ຕີລາຄາ ແລ້ວສະຫຼຸບ, ໝາຍຄວາມວ່າການດຳເນີນຄະດີອາຍາ ນອກຈາກການຊອກຫາຫຼັກຖານທີ່ຊີ້ໃຫ້ເຫັນສີ່ອົງປະກອບຂອງການກະທຳຜິດທາງອາຍາແລ້ວ ຍັງຕ້ອງຊອກຫາສາເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາຕື່ມອີກ ແລະ ບໍ່ໃຫ້ເລືອກເອົາບັນຫາໃດໜຶ່ງມາພິຈາລະນາສະເພາະຊຶ່ງຈະເຮັດໃຫ້ການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານນັ້ນບໍ່ເປັນໄປຕາມຄວາມຈິງ.

ການດຳເນີນຄະດີອາຍາຢ່າງພາວະວິໄສໝາຍຄວາມວ່າ ໃນການຄົ້ນຄວ້າຊັ່ງຊາ ຕີລາຄາຫຼັກຖານນັ້ນຕ້ອງຢືນຢູ່ບົນຫຼັກການຂອງການປະຕິບັດຕາມກົດໝາຍຢ່າງເຂັ້ມງວດ ແລະ ຄວາມຍຸຕິທຳ ຂໍ້ມູນຫຼັກຖານຕ້ອງໄດ້ມາຈາກເຫດການຕົວຈິງ ແລະ ບໍ່ສ້າງຂຶ້ນມາເອງ.

ນອກຈາກນັ້ນ ການດຳເນີນຄະດີອາຍາຕ້ອງດຳເນີນດ້ວຍຄວາມໝັ້ນໃຈຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ ຫຼື ຜູ້ພິພາກສາ ໃນການຊັ່ງຊາ ຕີລາຄາຫຼັກຖານນັ້ນຕ້ອງຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງກ່ຽວກັບເຫດການ ແລະ ສະພາບການຂອງຄະດີ, ໂດຍຖືເອົາການປະຕິບັດຕາມກົດໝາຍເປັນຕົ້ນຕໍ ແລະ ຂໍ້ມູນຕົວຈິງທີ່ເກັບໂຮມມາໄດ້ເທົ່ານັ້ນໂດຍບໍ່ມີການແຊກແຊງຈາກພາຍນອກ, ບໍ່ເຂົ້າຂ້າງອອກຂາ, ບໍ່ເຫັນແກ່ຍາດຕິພີ່ນ້ອງຈຸ້ມເຈື້ອເຊື້ອສາຍ, ບໍ່ຟັງເຫດຜົນຂອງຝ່າຍໃດຝ່າຍໜຶ່ງ ໝາຍຄວາມວ່າຕ້ອງຖືເອົາຕາມຄວາມຮູ້ຄວາມຄິດ ແລະ ຄວາມເຂົ້າໃຈຂອງຕົນບົນພື້ນຖານຂອງວິທີການທີ່ກົດໝາຍບັນຍັດໄວ້. ສະນັ້ນ, ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງຕ້ອງຢືນຢູ່ບົນຄວາມຮັບຜິດຊອບຕໍ່ໜ້າທີ່ຂອງຕົນ. ຢາກມີຄວາມໝັ້ນໃຈຄືແນວນັ້ນເຈົ້າໜ້າທີ່ຜູ້ປະຕິບັດຕ້ອງເຂົ້າໃຈເນື້ອໃນຂອງກົດໝາຍຢ່າງເລິກເຊິ່ງ ແລະ ກຳແໜ້ນສະພາບຂອງຄະດີ ພ້ອມທັງຍຶດໝັ້ນໃນຫຼັກການແຫ່ງ ຄວາມຍຸຕິທຳ.

## 3. ອົງການທີ່ມີສິດອຳນາດໃນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ

ອົງການທີ່ມີອຳນາດໃນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານມີຄື:

- ອົງການສືບສວນ-ສອບສວນ;
- ອົງການໄອຍະການ;
- ສານ.

### 3.1. ອົງການສືບສວນ-ສອບສວນ

ອົງການສືບສວນ-ສອບສວນ ແມ່ນອົງການດຳເນີນຄະດີອາຍາຊຶ່ງມີສິດໜ້າທີ່ເຄື່ອນໄຫວເກັບໂຮມເອົາຂໍ້ມູນຫຼັກຖານທີ່ໄດ້ມາຈາກເຫດການຂອງການກະທຳຜິດ ຕາມຄຳສັ່ງເປີດການສືບສວນ-ສອບສວນ ຕາມຂັ້ນຕອນຂອງກົດໝາຍ, ນຳໃຊ້ວິທີການ ແລະ ມາດຕະການຕາມທີ່ກົດໝາຍໄດ້ກຳນົດໄວ້. ເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງທຳການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານຕ່າງໆທີ່ໄດ້ມາດ້ວຍຮູບການ ແລະ ວິທີການທີ່ຖືກຕ້ອງຕາມກົດໝາຍດ້ວຍຄວາມໝັ້ນໃຈຂອງຕົນເອງບົນພື້ນຖານຂອງການພິຈາລະນາຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ. ໃນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານນັ້ນຫາກເຫັນວ່າບໍ່ມີຫຼັກຖານຮັດກຸມໜັກແໜ້ນພຽງພໍ ຫຼື ມີຄວາມສົງໄສວ່າຜູ້ຖືກຫາອາດຈະເປັນຜູ້ກະທຳຜິດ ຫຼື ບໍ່ເປັນຜູ້ກະທຳຜິດແລ້ວ ຜູ່ດຳເນີນຄະດີກໍຕ້ອງປ່ອຍຕົວຜູ່ກ່ຽວ ຫຼື ໃຫ້ຜູ່ກ່ຽວພົ້ນຂໍ້ກ່າວຫາ (ມ 44 ວັກ 3 ກດຍ). ຖ້າວ່າເຈົ້າໜ້າທີ່ສືບສວນ-ສອບສວນຫາກທຳການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານຕ່າງໆແລ້ວເຫັນວ່າມີເຫດຜົນໜັກແໜ້ນ ຮັດກຸມພຽງພໍ ພ້ອມທັງຢັ້ງຢືນໄດ້ວ່າຜູ້ຖືກຫາມີຄວາມຜິດຕາມຂໍ້ກ່າວຫາແທ້ ເຈົ້າໜ້າທີ່ສືບສວນ-ສອບສວນ ກໍສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີພ້ອມດ້ວຍຂອງກາງສົ່ງໃຫ້ຫົວໜ້າອົງການໄອຍະການ (ມ 47 ວັກ 1 ຂໍ້ 8 ກດຍ).

ສະນັ້ນ, ອົງການສືບສວນ-ສອບສວນຕ້ອງເກັບໂຮມຫຼັກຖານເພື່ອຈຸດປະສົງທີ່ຈະຕ້ອງການຮູ້ຄວາມຈິງ ແລະ ພຶດຕິກຳກ່ຽວກັບຄວາມຜິດທີ່ຖືກກ່າວຫາເພື່ອຈະຮູ້ຕົວຜູ່ກະທຳຜິດ ແລະ ພິສູດໃຫ້ເຫັນຄວາມຜິດພ້ອມກັນນັ້ນການເກັບໂຮມຫຼັກຖານກໍແມ່ນເພື່ອຈຸດປະສົງທີ່ຈະຕ້ອງການຮູ້ຄວາມຈິງ ແລະ ພຶດຕິກຳທີ່ຈະພິສູດເຖິງຄວາມບໍລິສຸດຂອງຜູ້ຖືກຫາອີກດ້ວຍ. ດ້ວຍເຫດນັ້ນ, ອົງການສືບສວນ-ສອບສວນຈະຕ້ອງໄດ້ລວບລວມຫຼັກຖານຜູກມັດ ແລະ ແກ້ມັດເພື່ອກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ, ຖ້າມີຫຼັກຖານຜູກມັດຢ່າງໜັກ ແໜ້ນວ່າຜູ້ຖືກຫາໄດ້ກະທຳຜິດ ອົງການສືບສວນ-ສອບສວນກໍຕ້ອງສະຫຼຸບ ແລະ ປະກອບສຳນວນຄະດີອາຍາສົ່ງໃຫ້ອົງການໄອຍະການເພື່ອສັ່ງຟ້ອງຂຶ້ນສານ (ມ 53 ວັກ 1 ຂໍ້ 9 ກດຍ). ກົງກັນຂ້າມຖ້າຫາກມີຫຼັກຖານແກ້ມັດວ່າຜູ້ຖືກຫາເປັນຜູ້ບໍລິສຸດ ອົງການສືບສວນ -ສອບສວນຕ້ອງອອກຄຳສັ່ງຊັດມ້ຽນຄະດີອາຍານັ້ນ (ມ 53 ວັກ 1 ຂໍ້ 4 ກດຍ).

### 3.2. ອົງການໄອຍະການ

ໃນເມື່ອອົງການໄອຍະການໄດ້ຮັບບົດສະຫຼຸບການສືບສວນ-ສອບສວນ ພ້ອມດ້ວຍຂອງກາງ ແລະ ຂໍ້ມູນຫຼັກຖານຕ່າງໆທີ່ຜ່ານການກວດກາ ແລະ ຊັ່ງຊາ ຕີລາຄາຂອງອົງການສືບສວນ-ສອບສວນທີ່ໄດ້ມາຕາມຂັ້ນຕອນຂອງກົດໝາຍແລ້ວ ອົງການໄອຍະການກໍຈະທຳການກວດກາຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ດ້ວຍຄວາມໝັ້ນໃຈຂອງຕົນເພື່ອກວດເບິ່ງວ່າມີຫຼັກຖານ ຫຼື ຂອງກາງອັນໃດແດ່, ຫຼັກຖານທາງດ້ານວັດຖຸທີ່ນຳໃຊ້ເຂົ້າໃນການກະທຳຜິດນັ້ນມີຈຳນວນເທົ່າໃດ, ມີນໍ້າໜັກ, ຂະໜາດ, ປະລິມານເທົ່າໃດ, ຫຼັກຖານເຫຼົ່ານັ້ນມັນສອດຄ່ອງກັບເຫດການ ແລະ ຄວາມເປັນຈິງຄືແນວໃດ, ໃນການເຄື່ອນໄຫວເກັບໂຮມຫຼັກຖານຂອງອົງການສືບສວນ-ສອບສວນນັ້ນ ແມ່ນໄດ້ມາຕາມຂັ້ນຕອນຕ່າງໆທີ່ກົດໝາຍໄດ້ກຳນົດໄວ້ ຫຼື ບໍ່, ມີອັນໃດເປັນຫຼັກຖານຜູກມັດ ແລະ ອັນໃດເປັນຫຼັກຖານແກ້ມັດ. ອົງການໄອຍະການຈະຕ້ອງທຳການກວດກາ ແລະ ຊັ່ງຊາ ຕີລາຄາວ່າຫຼັກຖານເຫຼົ່ານັ້ນໃຊ້ໄດ້ທາງດ້ານກົດໝາຍ ຫຼື ບໍ່, ມີການກ່ຽວພັນກັບຄະດີອາຍານັ້ນແນວໃດ ແລະ ໄດ້ມາຄົບຖ້ວນພຽງພໍ ຫຼື ຍັງ. ໃນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານຂອງພະນັກງານໄອຍະການນັ້ນ ຖ້າຍັງມີຄວາມສົງໄສວ່າຜູ່ຖືກຫາອາດຈະເປັນຜູ່ກະທຳຜິດ ຫຼື ບໍ່ເປັນຜູ່ກະທຳຜິດແລ້ວຫົວໜ້າອົງການໄອຍະການກໍຕ້ອງຊັດມ້ຽນຄະດີ, ຖ້າຫາກຜູ່ຖືກຫາຍັງຖືກກັກຂັງຫົວໜ້າອົງການໄອຍະການກໍຕ້ອງອອກຄຳສັ່ງປ່ອຍຕົວທັນໃດ. ຖ້າຫາກວ່າຫຼັກຖານທີ່ໄດ້ມານັ້ນຍັງບໍ່ທັນຄົບຖ້ວນ ແລະ ພຽງພໍທີ່ຈະສັ່ງຟ້ອງຂຶ້ນສານໄດ້, ຫົວໜ້າອົງການໄອຍະການຕ້ອງໄດ້ສົ່ງປະເດັນການສືບສວນ-ສອບສວນເພີ່ມເຕີມພ້ອມດ້ວຍສຳນວນຄະດີຄືນ ໃຫ້ອົງການສືບສວນ-ສອບສວນເພື່ອເກັບກຳຂໍ້ມູນຫຼັກຖານເພີ່ມເຕີມ. ກົງກັນຂ້າມຖ້າອົງການໄອຍະການໄດ້ກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານຫາກເຫັນວ່າຄົບຖ້ວນ ແລະ ພຽງພໍທີ່ຈະສັ່ງຟ້ອງຜູ່ຖືກຫາຂຶ້ນສານໄດ້, ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງຟ້ອງຂຶ້ນສານ (152 ກດຍ).

### 3.3. ສານ

ສານ ເປັນອົງການທີ່ຕ້ອງໃຊ້ດຸນພິນິດໃນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານຢ່າງລະອຽດ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສທີ່ສຸດເພາະວ່າເປັນອົງການສຸດທ້າຍຂອງຂະບວນການຍຸຕິທຳທີ່ຈະລົງໂທດ ຫຼື ບໍ່ລົງໂທດຈຳເລີຍ. ສະນັ້ນ, ການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານຈຶ່ງຂຶ້ນກັບຄວາມໝັ້ນໃຈຂອງຜູ່ພິພາກສາວ່າຈຳເລີຍໄດ້ກະທຳຜິດຕາມທີ່ອົງການໄອຍະການໄດ້ສັ່ງຟ້ອງມານັ້ນ ຫຼື ບໍ່. ຖ້າຜູ່ພິພາກສາຫາກບໍ່ໝັ້ນໃຈວ່າຈຳເລີຍເປັນຜູ່ກະທຳຜິດ ຫຼື ຍັງມີຄວາມສົງໄສວ່າຈຳເລີຍອາດຈະເປັນຜູ່ກະທຳຜິດ ຫຼື ບໍ່ກະທຳຜິດ, ຜູ່ພິພາກສາຈະຕ້ອງພິຈາລະນາຕັດສິນໃຫ້ຈຳເລີຍພົ້ນຂໍ້ກ່າວຫາ. ພ້ອມກັນນັ້ນ ໃນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານຢູ່ໃນຂັ້ນຕອນຂອງສານເປັນຂັ້ນຕອນທີ່ມີຄວາມສຳຄັນຊຶ່ງ

ຜູ້ພິພາກສາຈະຕ້ອງໄດ້ກວດກາເບິ່ງຢ່າງລະອຽດວ່າ ຫຼັກຖານຕ່າງໆທີ່ອີງການສືບສວນ-ສອບສວນໄດ້ເກັບໂຮມມາ ແລະ ການສັ່ງຟ້ອງມານັ້ນຖືກຕ້ອງກັບຄວາມຈິງ ແລະ ສອດຄ່ອງກັບເຫດການທີ່ຜູ້ກະທຳຜິດໄດ້ກໍ່ຂຶ້ນ ແລະ ຖືກຕ້ອງກັບກົດໝາຍ ຫຼື ບໍ່, ທັງນີ້ກໍເພື່ອເຮັດໃຫ້ການພິຈາລະນາຕັດສິນຄະດີຂອງສານມີຄວາມຖືກຕ້ອງ ແລະ ເປັນທຳຊຶ່ງຜູ້ພິພາກສາຈະຕ້ອງໄດ້ກວດກາເບິ່ງເອກະສານຕ່າງໆ ເຊັ່ນ ບົດສະຫຼຸບການສືບສວນ-ສອບສວນ, ຈົດໝາຍບັນທຶກຄຳໃຫ້ການ, ແຜນວາດ ແລະ ຮູບພາບຕ່າງໆທີ່ພົວພັນກັບການກະທຳຜິດນັ້ນໄດ້ເຮັດຂຶ້ນມາຖືກຕ້ອງຕາມກົດໝາຍ ຫຼື ບໍ່, ຫຼັກຖານທີ່ເປັນເອກະສານເຫຼົ່ານັ້ນຕ້ອງພົວພັນກັບຫຼັກຖານທາງດ້ານວັດຖຸເພື່ອຈະໄດ້ນຳໃຊ້ເປັນບ່ອນອີງໃນການພິຈາລະນາຕັດສິນຄະດີ. ໃນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານນັ້ນຜູ້ພິພາກສາຕ້ອງໄດ້ພິຈາລະນາຢ່າງລະອຽດຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສດ້ວຍຄວາມໝັ້ນໃຈຂອງຕົນບໍ່ວ່າຈະເປັນຄຳໃຫ້ການ ຫຼື ຄຳເຫັນຂອງຜູ້ຊ່ຽວຊານ, ການຢັ້ງຢືນການຊີ້ຕົວ, ການພິສູດຮ່ອງຮອຍ, ຄາບເລືອດ ແລະ ອື່ນໆທັງໝົດທີ່ເປັນຫຼັກຖານຜູກມັດ ແລະ ຫຼັກຖານແກ້ມັດເຫຼົ່ານັ້ນແມ່ນຕ້ອງສອດຄ່ອງກັບເຫດການ ແລະຄວາມເປັນຈິງຂອງຄະດີ.

ໃນການພິຈາລະນາຕັດສິນຄະດີຂອງສານ ຜູ້ພິພາກສາຈະບໍ່ໄດ້ອີງໃສ່ບັນດາຂໍ້ມູນຫຼັກຖານທີ່ອີງການສືບສວນ-ສອບສວນ ແລະ ອົງການໄອຍະການໄດ້ສະເໜີຂຶ້ນມາເທົ່ານັ້ນ ສານຍັງອີງໃສ່ຂໍ້ມູນຫຼັກຖານຂອງຈຳເລີຍ, ທະນາຍຄວາມ, ຜູ້ເຂົ້າຮ່ວມອື່ນໆ ແລະ ຜົນຂອງການໄຕ່ສວນໃນທີ່ປະຊຸມສານຕື່ມອີກເພື່ອເປັນບ່ອນອີງໃຫ້ແກ່ການພິຈາລະນາວ່າ ຈຳເລີຍໄດ້ກະທຳຜິດ ຫຼື ບໍ່ກະທຳຜິດ ລວມທັງເຫດການອື່ນໆທີ່ເປັນປະໂຫຍດໃຫ້ແກ່ການຕັດສິນຄະດີໃຫ້ຖືກຕ້ອງ.

# ພາກທີ III

# ການສືບສວນ-ສອບສວນ

## ບົດທີ 1

## ການສືບສວນ-ສອບສວນ

### 1. ຄວາມຮູ້ກ່ຽວກັບການສືບສວນ-ສອບສວນ

ການສືບສວນ-ສອບສວນຄະດີອາຍາ ແມ່ນການເຄື່ອນໄຫວເກັບໂຮມຂໍ້ມູນຫຼັກຖານໃນຄະດີອາຍາ ໂດຍເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ ແລະ ຜູ້ເຂົ້າຮ່ວມອື່ນບົນພື້ນຖານການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ເພື່ອຊອກໃຫ້ເຫັນຄວາມຈິງໂດຍມີເປົ້າໝາຍແນໃສ່ໃຫ້ເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນ ແລະ ຮອບຄອບ, ນຳເອົາຜູ້ຖືກຫາມາດຳເນີນການສືບສວນ-ສອບສວນ ເພື່ອຮັບປະກັນການສັ່ງຟ້ອງຂຶ້ນສານຢ່າງຖືກຕ້ອງຕາມກົດໝາຍ, ຜູ້ກະທຳຜິດຕ້ອງຖືກລົງໂທດຕາມກົດໝາຍ, ຜູ້ບໍລິສຸດຈະບໍ່ຖືກລົງໂທດ.

ການສືບສວນ-ສອບສວນ ເປັນບາດກ້າວໜຶ່ງທີ່ມີຄວາມສຳຄັນໃນການດຳເນີນຄະດີອາຍາ ແລະ ເປັນການເຄື່ອນໄຫວຂອງອົງການທີ່ຮັບຜິດຊອບໃນການດຳເນີນຄະດີ, ຈຸດປະສົງຂອງການສືບສວນ-ສອບສວນ ກໍເພື່ອໃຫ້ໄດ້ຂໍ້ມູນຫຼັກຖານມາປະກອບເຂົ້າໃນສຳນວນຄະດີອາຍາ, ເຮັດໃຫ້ການສັ່ງຟ້ອງ ຫຼື ການພິຈາລະນາຕັດສິນຄະດີຂອງສານຖືກຕ້ອງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ໃນເມື່ອອົງການສືບສວນ-ສອບສວນໄດ້ຮັບການແຈ້ງຄວາມຈາກບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການກະທຳຜິດທາງອາຍາໃນສະຖານໃດໜຶ່ງແລ້ວ ກໍຕ້ອງດຳເນີນການເຄື່ອນໄຫວສືບສວນ-ສອບສວນຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຕາມທີ່ກຳນົດໄວ້ໃນກົດໝາຍ (ມ 95 ກດຍ) ເພື່ອປະກອບຫຼັກຖານໃນຄະດີຢ່າງຮີບດ່ວນ ແລະ ຖ້າມີຄວາມຈຳເປັນເຈົ້າໜ້າທີ່ດັ່ງກ່າວກໍມີສິດນຳໃຊ້ມາດຕະການສະກັດກັ້ນຕ່າງໆໄດ້ຕາມເງື່ອນໄຂທີ່ເໝາະສົມ.

#### 1.1. ຄວາມໝາຍຂອງການສືບສວນ

ການສືບສວນ ແມ່ນການຊອກຫາຄວາມຈິງ ແລະ ຊອກຫາຂໍ້ມູນຫຼັກຖານໂດຍການສອບຖາມ ຫຼື ຈາກການກວດກາສະຖານທີ່ເກີດເຫດ, ໃນການຊອກຫາຄວາມຈິງ ແລະ ການຊອກຫາຂໍ້ມູນຫຼັກຖານດັ່ງກ່າວນັ້ນອາດນຳໃຊ້ສາຍລັບ ສືບຖາມ, ສັງເກດການສະຖານທີ່À¡©̂ À¹©, §º¡»Ë́½¹¸©¢º¤º¾§½¨¾¡º--Áì½ º̂-Å, §¢¦¾´¾©À£º-Ä¹¸Ä©ÉÈ-Í õÍ ñÀ¹©¡¾-êÀ¯ñ²©ªò¿¢º¤¡¾-¡½ê¿°©ê¾¤º¾¨¾.

### 1.2. ຄວາມໝາຍຂອງການສອບສວນ

ການສອບສວນ ແມ່ນການເຄື່ອນໄຫວເກັບໂຮມຂໍ້ມູນຫຼັກຖານທຸກຢ່າງທີ່ພົວພັນກັບເຫດການກະທຳຜິດທາງອາຍາທີ່ໄດ້ເກີດຂຶ້ນແລ້ວນັ້ນເຂົ້າມາສູ່ສຳນວນຄະດີ ໂດຍໄດ້ມາຈາກເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ໄດ້ຈາກບົດບັນທຶກຕ່າງໆໃນການເຄື່ອນໄຫວທັງໝົດຂອງເຈົ້າໜ້າທີ່ຜູ້ມີສິດ ແລະ ໜ້າທີ່ໃນການສອບສວນເພື່ອຊອກຮູ້ສະພາບຄວາມເປັນຈິງຂອງພຶດຕິກຳ ຫຼື ເຫດການນັ້ນໂດຍພິສູດຈາກຂໍ້ມູນຫຼັກຖານຕ່າງໆທີ່ໄດ້ມາວ່າມີຄວາມຜິດທາງອາຍາ ຫຼື ບໍ່. ເຈົ້າໜ້າທີ່ຜູ້ມີສິດ, ໜ້າທີ່ໃນການສືບສວນ-ສອບສວນໝາຍເຖິງພະນັກງານໄອຍະການ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນຂອງອົງການສືບສວນ-ສອບສວນຂະແໜງການຕ່າງໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 46 ກດຍ).

### 1.3. ຄວາມສຳຄັນຂອງການສືບສວນ-ສອບສວນ

ການສືບສວນ-ສອບສວນໃນຄະດີອາຍາເປັນວຽກງານທີ່ຈຳເປັນ ແລະ ມີຄວາມສຳຄັນທີ່ສຸດໃນການດຳເນີນຄະດີອາຍາ ເພາະວ່າມີແຕ່ການສືບສວນ-ສອບສວນເທົ່ານັ້ນຈຶ່ງຮັບປະກັນຄຸນຄ່າຂອງຫຼັກຖານໄດ້, ຈະຊ່ວຍໃຫ້ການສັ່ງຟ້ອງ ແລະ ການພິຈາລະນາຕັດສີນຄະດີຢ່າງຖືກຕ້ອງ ແລະ ຮັບປະກັນຄວາມຍຸຕິທຳໃນສັງຄົມ. ກົງກັນຂ້າມຖ້າຫາກຂໍ້ມູນຫຼັກຖານທີ່ໄດ້ມາໂດຍບໍ່ຜ່ານການສືບສວນ-ສອບສວນ ສານກໍຈະບໍ່ສາມາດໃຊ້ເປັນບ່ອນອີງເພື່ອພິຈາລະນາຄະດີ. ສະນັ້ນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາຈຶ່ງໄດ້ກຳນົດຫຼັກການ, ວິທີການ, ມາດຕະການຕ່າງໆຂອງການດຳເນີນຄະດີອາຍາເພື່ອແນໃສ່ການແກ້ໄຂຄະດີອາຍາຢ່າງຖືກຕ້ອງ, ຍຸຕິທຳ, ຈຳກັດ ແລະ ສະກັດກັ້ນການກະທຳຜິດເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ບໍ່ປະປ່ອຍໃຫ້ຜູ້ກະທຳຜິດຫຼົບຫຼີກຈາກການລົງໂທດໄປໄດ້ ແລະ ຫຼີກເວັ້ນການລົງໂທດໃສ່ຜູ້ບໍລິສຸດ.

### 1.4. ຈຸດປະສົງຂອງການສືບສວນ-ສອບສວນ

ຈຸດປະສົງຂອງການສືບສວນ-ສອບສວນຄະດີອາຍາ ກໍເພື່ອຊອກໃຫ້ໄດ້ຂໍ້ມູນຫຼັກຖານຜູກມັດມາຢັ້ງຢືນຄວາມຜິດ ຫຼື ຫຼັກຖານແກ້ມັດມາຢັ້ງຢືນຄວາມບໍລິສຸດຂອງຜູ້ຖືກຫາໃນຄະດີອາຍາ, ຊອກໃຫ້ເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນ, ຮອບດ້ານ ແລະ ນຳເອົາຜູ້ຖືກຫາມາສັ່ງຟ້ອງຂຶ້ນສານຕາມກົດໝາຍ ທັງຮັບປະກັນການປະຕິບັດກົດ ໝາຍຢ່າງຖືກຕ້ອງ ແລະ ຍຸຕິທຳ, ຊຶ່ງຈຸດປະສົງຂອງການສືບສວນ-ສອບສວນຄະດີອາຍາສາມາດສະຫຼຸບລວມໄດ້ດັ່ງນີ້:

1) ຄົ້ນພົບການກະທຳຜິດ ແລະ ຄົ້ນພົບຜູ້ກະທຳຜິດ;
2) ກຳນົດຄວາມຮັບຜິດຊອບຂອງຜູ້ຖືກຫາຢ່າງຖືກຕ້ອງ, ທັນການ ແລະ ເປັນທຳ;
3) ເພື່ອພິສູດຄວາມຜິດ ແລະ ຄວາມບໍລິສຸດຂອງຜູ້ຖືກຫາ;

4) ຜູ້ບໍລິສຸດຈະບໍ່ຖືກລົງໂທດ;

5) ຜູ້ກະທຳຜິດຈະຕ້ອງຖືກລົງໂທດຕາມກົດໝາຍ;

6) ຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;

7) ຕ້ານ, ສະກັດກັ້ນ ແລະ ປາບປາມອາຊະຍາກຳ.

**2. ການເປີດການສືບສວນ-ສອບສວນ**

**2.1. ນິຍາມ**

ການເປີດການສືບສວນ-ສອບສວນຄະດີອາຍາ ແມ່ນການອອກຄຳສັ່ງຢ່າງເປັນລາຍລັກອັກສອນໂດຍຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການເພື່ອນຳເອົາເຫດການອັນແນ່ນອນໃດໜຶ່ງມາທຳການສືບສວນ-ສອບສວນ ໂດຍຜ່ານວິທີການສືບສວນ-ສອບສວນ ແລະ ການນຳໃຊ້ມາດຕະການສະກັດກັ້ດຢ່າງຖືກຕ້ອງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**2.2. ຄວາມໝາຍສຳຄັນຂອງການເປີດການສືບສວນ-ສອບສວນ**

ການເປີດການສືບສວນ-ສອບສວນ ແມ່ນມີຄວາມສຳຄັນ ແລະ ຈຳເປັນທີ່ສຸດເພາະເປັນການເລີ່ມຕົ້ນຂອງການດຳເນີນຄະດີອາຍາ, ຄຳສັ່ງເປີດການສືບສວນ-ສອບສວນເປັນບ່ອນອີງພື້ນຖານ ແລະ ຮັບປະກັນການເຄື່ອນໄຫວສືບສວນ-ສອບສວນຄືສາມາດນຳໃຊ້ວິທີການສືບສວນ-ສອບສວນ ແລະ ສາມາດນຳໃຊ້ມາດຕະການຕ່າງໆໄດ້ຕາມຂັ້ນຕອນຂອງກົດໝາຍ. ດັ່ງນັ້ນ, ການເປີດການສືບສວນ-ສອບສວນ ຈຶ່ງມີຄວາມໝາຍສຳຄັນຄືດັ່ງນີ້:

1) ເປັນພື້ນຖານອັນຈຳເປັນໃຫ້ແກ່ການຫັນປ່ຽນເຫດການຂອງການກະທຳຜິດອັນແນ່ນອນໃດໜຶ່ງມາເປັນຄະດີອາຍາ;

2) ການອະນຸຍາດໃຫ້ມີການເຂົ້າຮ່ວມໃນຄະດີຂອງຜູ້ປົກປ້ອງ ຫຼື ທະນາຍຄວາມ;

3) ການປ່ຽນແປງຖານະຂອງຜູ້ຖືກສົງໄສມາເປັນຜູ້ຖືກຫາໃນຄະດີອາຍາ;

4) ການຮັບຮູ້ຜູ້ເຂົ້າຮ່ວມອື່ນໆໃນຄະດີ ເຊັ່ນ ໃນຖານະຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ພະຍານ ແລະ ບຸກຄົນອື່ນໆ;

5) ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນໄດ້ຢ່າງເປັນທາງການ ແລະ ຕາມຄວາມເໝາະສົມ;

6) ການຄຸ້ມຄອງສິດອຳນາດຂອງອົງການຮັບຜິດຊອບດຳເນີນຄະດີດ້ວຍກົດໝາຍ;

7) ການເປີດຊ່ອງທາງໃຫ້ແກ່ຂັ້ນຕອນອື່ນໆຂອງການດຳເນີນຄະດີໄດ້ຕາມລຳດັບ.

## 3. ສາເຫດ ແລະ ພື້ນຖານທີ່ພາໃຫ້ເປີດການສືບສວນ-ສອບສວນ

### 3.1. ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ

ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ ແມ່ນແຫຼ່ງຂ່າວອັນແນ່ນອນໃດໜຶ່ງທີ່ບົ່ງບອກໃຫ້ຮູ້ວ່າໄດ້ມີເຫດການຂອງການກະທຳຜິດເກີດຂຶ້ນ. ເນື່ອງຈາກວ່າ ການກະທຳຜິດແມ່ນປະກົດການໜຶ່ງຂອງສັງຄົມທີ່ບໍ່ອາດຫຼີກເວັ້ນໄດ້, ການຕ້ານກັບການກະທຳຜິດຈຶ່ງບໍ່ແມ່ນສະເພາະແຕ່ໜ້າທີ່ຂອງອົງການທີ່ຮັບຜິດຊອບ ໃນການດຳເນີນຄະດີອາຍາແຕ່ຜູ້ດຽວ, ແຕ່ຫາກຍັງແມ່ນພັນທະຂອງພົນລະເມືອງທຸກຄົນໃນທົ່ວສັງຄົມ. ສະນັ້ນ, ພົນລະເມືອງທຸກຄົນຕ້ອງໃຫ້ຄວາມຮ່ວມມືຊ່ວຍເຫຼືອອົງການສືບສວນ-ສອບສວນໃນການກຳຈັດ, ຕ້ານ ແລະ ສະກັດກັ້ນອາຊະຍາກຳ, ຊຶ່ງສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນມີສາມສາເຫດຄື ມີຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມຂອງບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການກະທຳຜິດ, ມີການເຂົ້າມອບຕົວຂອງຜູ້ກະທຳຜິດ ແລະ ພົບເຫັນຮ່ອງຮອຍຂອງການກະທຳຜິດໂດຍອົງການສືບສວນ-ສອບສວນ ຫຼື ອົງການໄອຍະການ (ມ 86 ກດຍ).

#### 3.1.1. ການຮ້ອງຟ້ອງ ຫຼື ການແຈ້ງຄວາມ

#### ກ. ຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ

ຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມກ່ຽວກັບການກະທຳຜິດທາງອາຍາສາມາດແຈ້ງທາງປາກເປົ່າ ຫຼື ເຮັດເປັນລາຍລັກອັກສອນ ແລະ ໃຫ້ຍື່ນ ຫຼື ແຈ້ງຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການ ຊຶ່ງອົງການດັ່ງກ່າວຕ້ອງຮັບ ແລະ ພິຈາລະນາຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍ. ສຳລັບຄຳຮ້ອງຟ້ອງຂອງອົງການຈັດຕັ້ງ ຕ້ອງເຮັດເປັນລາຍລັກອັກສອນ.

ໃນກໍລະນີຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມຫາກເຮັດໂດຍທາງປາກເປົ່າ ເຈົ້າໜ້າທີ່ຜູ້ຮັບຄຳຮ້ອງຟ້ອງຕ້ອງເຮັດບົດບັນທຶກເອົາຂໍ້ມູນກ່ຽວກັບປະຫວັດ, ສຳເນົາບັດປະຈຳຕົວ ຫຼື ສຳມະໂນຄົວຂອງຜູ້ຮ້ອງຟ້ອງ, ເນື້ອໃນຂອງຄຳຮ້ອງຟ້ອງແລ້ວໃຫ້ເຈົ້າໜ້າທີ່ ແລະ ຜູ້ຮ້ອງຟ້ອງລົງລາຍເຊັນ, ບົດບັນທຶກດັ່ງກ່າວຕ້ອງເຮັດເປັນສອງສະບັບຄື ສະບັບໜຶ່ງມອບໃຫ້ຜູ້ຮ້ອງຟ້ອງ, ສ່ວນອີກໜຶ່ງສະບັບໃຫ້ເກັບໄວ້ໃນສຳນວນຄະດີ. ເຈົ້າໜ້າທີ່ຜູ້ຮັບຄຳຮ້ອງຟ້ອງຕ້ອງແຈ້ງໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງຊາບກ່ຽວກັບຄວາມຮັບຜິດຊອບຕາມກົດໝາຍໃນກໍລະນີທີ່ຄຳຮ້ອງຟ້ອງຫາກບໍ່ມີມູນຄວາມຈິງ ຫຼື ເປັນການເທັດ (ມ 87 ກດຍ).

**ຕົວຢ່າງ 1:** ໃນວັນທີ 3 ມີນາ 2013 ທ້າວ ກ ໄດ້ຖືກ ທ້າວ ຂ ທຳຮ້າຍຮ່າງກາຍຊຶ່ງເຮັດໃຫ້ ທ້າວ ກ ໄດ້ຮັບບາດເຈັບໜັກຕໍ່ການກະທຳຂອງ ທ້າວ ຂ ນັ້ນເຮັດໃຫ້ ທ້າວ ກ ຕ້ອງໄດ້ຂຽນຄຳຮ້ອງຟ້ອງຍື່ນຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການເພື່ອໃຫ້ອົງການ

ດັ່ງກ່າວດຳເນີນຄະດີຕໍ່ ທ້າວ ຂ ທັງຮັບຜິດຊອບຕໍ່ການປິ່ນປົວ, ຄ່າປ່ວຍການ, ຄ່າປົວແປງຈິດໃຈ ແລະ ຖືກລົງໂທດຕາມກົດໝາຍ.

**ຕົວຢ່າງ 2:** ທ້າວ ກ ໄດ້ຖືກຄົນຮ້າຍມາງັດເຮືອນຂອງຜູ່ກ່ຽວຢູ່ບ້ານໂພນໄຊ, ເມືອງໄຊເຊດຖາ, ນະຄອນຫຼວງວຽງຈັນ (ບໍ່ຮູ້ຄົນຮ້າຍ) ໃນວັນທີ 22 ພຶດສະພາ 2013 ເວລາປະມານ 23.00 ໂມງມີເຄື່ອງເສັຍຈຳນວນໜຶ່ງ, ຈາກນັ້ນໃນເວລາ 24.00 ໂມງ, ທ້າວ ກ ໄດ້ຮູ້ວ່າເຮືອນຂອງຕົນຖືກງັດຈຶ່ງໄປແຈ້ງຄວາມຕໍ່ເຈົ້າໜ້າທີ່ກອງຄະດີປະຈຳເມືອງດັ່ງກ່າວ.

**ຂ. ຄວາມແຕກຕ່າງລະຫວ່າງການຮ້ອງຟ້ອງ ແລະ ການແຈ້ງຄວາມ**

ການຮ້ອງຟ້ອງ ແມ່ນການຂຽນຄຳຮ້ອງຟ້ອງທີ່ເປັນລາຍລັກອັກສອນຂອງພົນລະເມືອງ ອົງການຈັດຕັ້ງທີ່ຮ້ອງຟ້ອງບຸກຄົນ ຫຼື ອົງການຈັດຕັ້ງທີ່ຕົນຮູ້ວ່າຜູ່ກ່ຽວໄດ້ມີການລະເມີດຕໍ່ສິດ, ເສລີພາບ, ຄວາມສະຫງົບຂອງຊາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມຍືນຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການໂດຍມີຈຸດປະສົງເພື່ອໃຫ້ດຳເນີນຄະດີອາຍາຕາມກົດໝາຍ.

ສຳລັບການແຈ້ງຄວາມ ແມ່ນການແຈ້ງທາງປາກເປົ່າຂອງບຸກຄົນທີ່ສົງໄສວ່າມີເຫດການກະທຳຜິດທາງອາຍາເກີດຂຶ້ນຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການໂດຍມີຈຸດປະສົງເພື່ອໃຫ້ຮັບຊາບເຫດການດັ່ງກ່າວ ແລະ ໃຫ້ເປັນໜ້າທີ່ຂອງອົງການ ແລະ ຜູ່ຮັບແຈ້ງຄວາມຈະເປັນຜູ່ດຳເນີນການຕາມຂັ້ນຕອນຂອງກົດໝາຍ.

**ຄ. ກຳນົດເວລາໃນການພິຈາລະນາຄຳຮ້ອງຟ້ອງ ຫຼື ແຈ້ງຄວາມ**

ອົງການສືບສວນ-ສອບສວນ, ອົງການໄອຍະການຕ້ອງໄດ້ພິຈາລະນາຄຳຮ້ອງຟ້ອງ ຫຼື ແຈ້ງຄວາມບໍ່ໃຫ້ເກີນກຳນົດຫ້າວັນນັບແຕ່ໄດ້ຮັບຄຳຮ້ອງຟ້ອງ ຫຼື ແຈ້ງຄວາມເປັນຕົ້ນໄປ. ໃນກໍລະນີມີຄວາມຫຍຸ້ງຍາກສັບສົນນັ້ນກຳນົດເວລາດັ່ງກ່າວແມ່ນບໍ່ໃຫ້ເກີນສິບວັນ ແລະ ຕ້ອງລົງຄຳເຫັນໃດໜຶ່ງດັ່ງນີ້ (ມ 90 ກດຍ).

1) ອອກຄຳສັ່ງເປີດການສືບສວນ-ສອບສວນ;

2) ອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ;

3) ສົ່ງຄຳຮ້ອງຟ້ອງ ຫຼື ແຈ້ງຄວາມໄປໃຫ້ອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງພິຈາລະນາ.

ໃນການພິຈາລະນາຄຳຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນກ່ອນຈະອອກ ຫຼື ບໍ່ອອກຄຳສັ່ງເປີດການສືບສວນ-ສອບສວນ ເຈົ້າໜ້າທີ່ຜູ່ດຳເນີນສາມາດທວງເອົາຂໍ້ມູນຫຼັກຖານເບື້ອງຕົ້ນ ແລະ ຟັງຄຳອະທິບາຍທີ່ຈຳເປັນກໍໄດ້.

**3.1.2. ການເຂົ້າມອບຕົວຂອງຜູ້ກະທຳຜິດ**

ການເຂົ້າມອບຕົວ ແມ່ນການທີ່ຜູ້ກະທຳຜິດເຂົ້າສະເໜີຕົວດ້ວຍຄວາມສະໝັກໃຈ ເພື່ອລາຍງານກ່ຽວກັບການກະທຳຜິດຂອງຕົນຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການ.

ເຈົ້າໜ້າທີ່ຜູ້ຮັບການເຂົ້າມອບຕົວນັ້ນຕ້ອງເຮັດບົດບັນທຶກກ່ຽວກັບຊີວະປະຫວັດ ແລະ ເອົາຄຳໃຫ້ການຂອງຜູ້ເຂົ້າມອບຕົວ. ໃນກໍລະນີທີ່ຜູ້ກະທຳຜິດຫາກເຂົ້າມອບຕົວຕໍ່ອົງການອື່ນທີ່ບໍ່ແມ່ນອົງການດຳເນີນຄະດີ ອົງການນັ້ນຕ້ອງນຳສົ່ງຜູ້ເຂົ້າມອບຕົວໃຫ້ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການທີ່ກ່ຽວຂ້ອງບ່ອນໃກ້ຄຽງໃນທັນໃດ (ມ 88 ກດຍ).

**3.1.3. ການພົບເຫັນຮ່ອງຮອຍຂອງການກະທຳຜິດ**

ຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການທີ່ພົບເຫັນຮ່ອງຮອຍຂອງການກະທຳຜິດຕ້ອງເຮັດບົດບັນທຶກກ່ຽວກັບສະພາບທີ່ພົບເຫັນ ແລະ ເກັບກຳຂໍ້ມູນໃນເບື້ອງຕົ້ນເພື່ອໃຊ້ເປັນພື້ນຖານໃຫ້ແກ່ການເປີດການສືບສວນ-ສອບສວນ (ມ 89 ກດຍ).

**ຕົວຢ່າງ:** ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ລົງກວດກາສະຖານທີ່ເກີດເຫດໃນຄະດີຄາດຕະກຳ ແລະ ໄດ້ພົບເຫັນມີດທີ່ເປື້ອນຄາບເລືອດ ແລະ ລາຍນິ້ວມືຕິດຢູ່ຊຶ່ງຕົກເຮັ່ຍຢູ່ບໍລິເວນນັ້ນຈຶ່ງເປັນສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ ເພື່ອຊອກຫາຕົວຜູ້ກະທຳຜິດມາລົງໂທດ.

**3.2. ພື້ນຖານທີ່ພາໃຫ້ເປີດການສືບສວນ-ສອບສວນ**

ພື້ນຖານທີ່ພາໃຫ້ເປີດການສືບສວນ-ສອບສວນ ແມ່ນບັນດາເຄື່ອງໝາຍທາງດ້ານພາວະວິໄສ ແລະ ອັດຕະວິໄສຂອງເຫດການທີ່ຊີ້ໃຫ້ເຫັນອົງປະກອບຂອງການກະທຳຜິດທາງອາຍາສ່ວນໃດສ່ວນໜຶ່ງ. ຜ່ານການຄົ້ນຄວ້າເນື້ອໃນຂອງສາເຫດແລ້ວ ຖ້າຫາກເຫັນວ່າມີພື້ນຖານທີ່ພາໃຫ້ເປີດການສືບສວນ-ສອບສວນນັ້ນ ກໍຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນ, ຊຶ່ງສາເຫດດັ່ງກ່າວອາດໄດ້ມາຈາກການຮ້ອງຟ້ອງ ຫຼື ແຈ້ງຄວາມ ຫຼື ພົບເຫັນຮ່ອງຮອຍຂອງການກະທຳຜິດ ຫຼື ການເຂົ້າມອບຕົວຂອງຜູ້ກະທຳຜິດນັ້ນ ແລະ ຕ້ອງມີເຄື່ອງໝາຍຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນຄືດັ່ງນີ້:

1) ແມ່ນການກະທຳຜິດທີ່ເປັນອັນຕະລາຍຕໍ່ສັງຄົມ;

2) ໄດ້ຖືກຮັບຮູ້ວ່າເປັນການກະທຳຜິດໂດຍກົດໝາຍອາຍາ;

3) ເກີດຈາກຄວາມຜິດຂອງບຸກຄົນໃດໜຶ່ງ.

ໃນກໍລະນີທີ່ບໍ່ສາມາດກຳນົດເຄື່ອງໝາຍຂອງການກະທຳຜິດໄດ້ ຊຶ່ງອາດຈະເປັນຍ້ອນສາເຫດການຮ້ອງຟ້ອງນັ້ນເປັນຂໍ້ຂັດແຍ່ງທາງແພ່ງ ຫຼື ບັນຫາອື່ນໆທີ່ບໍ່ແມ່ນການກະທຳຜິດ

ທາງອາຍາ, ເຫດການດັ່ງກ່າວເປັນສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປ, ໃນກໍລະນີດັ່ງກ່າວນີ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງຕ້ອງອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ, ຄຳສັ່ງດັ່ງກ່າວນີ້ຕ້ອງແຈ້ງໃຫ້ຜູ້ມາແຈ້ງຄວາມ ຫຼື ມາຮ້ອງຟ້ອງນັ້ນຊາບ ພ້ອມທັງສຳເນົາຄຳສັ່ງດັ່ງກ່າວໃຫ້ຫົວໜ້າອົງການໄອຍະການຮັບຊາບພາຍໃນຊາວສີ່ຊົ່ວໂມງ.

ຄູ່ຄວາມມີສິດຂໍອຸທອນຄຳສັ່ງບໍ່ເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການສືບສວນ-ສອບສວນຕໍ່ຫົວໜ້າອົງການໄອຍະການຂັ້ນດຽວກັນ ແລະ ຄູ່ຄວາມມີສິດຂໍອຸທອນຄຳສັ່ງບໍ່ເປີດການສືບສວນ-ສອບສວນຂອງຫົວໜ້າອົງການໄອຍະການ ຕໍ່ຫົວໜ້າອົງການໄອຍະການຂັ້ນເທິງຖັດນັ້ນໄດ້ພາຍໃນກຳນົດເຈັດວັນນັບແຕ່ວັນຮັບຊາບຄຳສັ່ງເປັນຕົ້ນໄປ. ຫົວໜ້າອົງການໄອຍະການຕ້ອງ ພິຈາລະນາຄຳຮ້ອງຂໍອຸທອນຄຳສັ່ງບໍ່ເປີດການສືບສວນ-ສອບສວນພາຍໃນກຳນົດຫ້າວັນ (ມ 93 ວັກ 2 ກດຍ).

**4. ຄຳສັ່ງເປີດການສືບສວນ-ສອບສວນ**

ຄຳສັ່ງເປີດການສືບສວນ-ສອບສວນ ແມ່ນເປັນການເລີ່ມຕົ້ນດຳເນີນຄະດີອາຍາ ຊຶ່ງສາມາດນຳໃຊ້ວິທີການສືບສວນ-ສອບສວນ ແລະ ການນຳໃຊ້ມາດຕະການສະກັດກັ້ນຕ່າງໆໄດ້ຕາມກົດໝາຍ, ເວັ້ນເສັຍແຕ່ກໍລະນີການກະທຳຜິດທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບສູງສຸດບໍ່ເກີນສາມປີ ແລະ ຖ້າຫາກມີຫຼັກຖານຄົບຖ້ວນເປັນການກະທຳຜິດເຊິ່ງໜ້າ, ມີການຮັບສາລະພາບຂອງຜູ້ຖືກຫາກໍສາມາດສັ່ງຟ້ອງຂຶ້ນສານໂດຍກົງ ໂດຍບໍ່ຕ້ອງມີຄຳສັ່ງເປີດການສືບສວນ-ສອບສວນ (ມ 157-159 ກດຍ).

ໃນກໍລະນີທີ່ມີຂໍ້ມູນໜັກແໜ້ນກ່ຽວກັບການກະທຳຜິດ ຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງເປີດການສືບສວນ-ສອບສວນໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ. ເນື້ອໃນຂອງຄຳສັ່ງເປີດການສືບສວນ-ສອບສວນນັ້ນຕ້ອງບອກວັນ, ເວລາ ແລະ ສະຖານທີ່ອອກຄຳສັ່ງ, ຊື່ ແລະ ນາມສະກຸນ, ໜ້າທີ່, ຕຳແໜ່ງຂອງຜູ້ອອກຄຳສັ່ງ, ເຫດຜົນ ແລະ ພື້ນຖານທີ່ພາໃຫ້ເປີດການສືບສວນ-ສອບສວນ, ສະຖານການກະທຳຜິດ ແລະ ມາດຕາທີ່ກ່ຽວຂ້ອງກັບກົດໝາຍອາຍາ.

ໃນກໍລະນີ ທີ່ຫົວໜ້າອົງການສືບສວນ-ສອບສວນເປັນຜູ້ອອກຄຳສັ່ງເປີດການສືບສວນ-ສອບສວນຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການຊາບໃນທັນໃດ ພ້ອມທັງມອບໝາຍໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນດຳເນີນການສືບສວນ-ສອບສວນ ໃນກໍລະນີ ທີ່ຫົວໜ້າອົງການໄອຍະການອອກຄຳສັ່ງເປີດການສືບສວນ-ສອບສວນ ກໍອາດຈະມອບໝາຍໃຫ້ພະນັກງານໄອຍະການ ຫຼື ສົ່ງຄຳສັ່ງເປີດການສືບສວນ-ສອບສວນໃຫ້ຫົວໜ້າອົງການສືບສວນ-ສອບສວນເພື່ອມອບໝາຍໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ ດຳເນີນການສືບສວນ-ສອບສວນຕາມກົດໝາຍ (ມ 91 ວັກ 2 ກດຍ).

ຖ້າສາເຫດຂອງການເປີດການສືບສວນ-ສອບສວນ ຫາກປະກອບດ້ວຍເຄື່ອງໝາຍຂອງການກະທຳຜິດຢ່າງຄົບຖ້ວນນັ້ນສາມາດກຳນົດການກະທຳຜິດໄດ້ຢ່າງຊັດເຈນ ເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງຂໍຄຳສັ່ງເປີດການສືບສວນ-ສອບສວນ ຈາກຫົວໜ້າອົງການສືບສວນ-ສອບສວນຢ່າງຮີບດ່ວນໃນສອງກໍລະນີດັ່ງນີ້:

1) ຄຳສັ່ງເປີດການສືບສວນ-ສອບສວນໃສ່ເຫດການຂອງການກະທຳຜິດໃນກໍລະນີທີ່ພົບເຫັນຮ່ອງຮອຍຂອງການກະທຳຜິດ, ແຕ່ບໍ່ທັນສາມາດຮູ້ວ່າບຸກຄົນໃດເປັນຜູ້ກະທຳຜິດ;

2) ຄຳສັ່ງເປີດການສືບສວນ-ສອບສວນໃສ່ບຸກຄົນທີ່ຮູ້ວ່າໄດ້ກະທຳຜິດ. ການອອກຄຳສັ່ງດັ່ງກ່າວຈະເຮັດໃຫ້ການຊອກຫາຄວາມຜິດ ແລະ ຜູ້ກະທຳຜິດມາດຳເນີນຄະດີອາຍາໄດ້ທັນເວລາ ແລະ ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ (ມ 91 ກດຍ).

**ຕົວຢ່າງ: ແບບພິມຄຳສັ່ງເປີດການສືບສວນ-ສອບສວນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

| | |
|---|---|
| ແຂວງ................. | ເລກທີ ..... / ປກສ....... |
| ກອງບັນຊາການ ປກສ ແຂວງ | ລົງວັນທີ .................. |

**ຄຳສັ່ງເປີດການສືບສວນ-ສອບສວນ**

- ອີງຕາມ ມາດຕາ 86, 91 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ສະບັບປັບປຸງ ປີ 2012;
- ອີງຕາມ ການແຈ້ງຄວາມຂອງ ທ້າວ/ນາງ............................, ອາຍຸ........ປີ, ສັນຊາດ..........., ອາຊີບ................, ຢູ່ບ້ານ...................., ໜ່ວຍ........., ເມືອງ...................., ແຂວງ..........................;

ໃນວັນທີ....ເດືອນ.....ປີ...., ເວລາ.....ໂມງ, ໄດ້ມີທ້າວ/ນາງ................., ອາຍຸ....ປີ, ອາຊີບ..............ຢູ່ບ້ານ............., ໜ່ວຍ........, ເມືອງ................, ແຂວງ.................. ໄດ້......................................, ເມື່ອເຈົ້າໜ້າທີ່ພະແນກສືບສວນ-ສອບສວນກອງບັນ

ຊາການ ປກສ ແຂວງ..........................ໄດ້ຄົ້ນຄວ້າການແຈ້ງຄວາມ, ຂໍ້ມູນຫຼັກຖານຕ່າງໆ ແລ້ວເຫັນວ່າ ມີຫຼັກຖານໜັກແໜ້ນພຽງພໍໃນການອອກຄໍາສັ່ງເປີດການສືບສວນ-ສອບສວນ, ໃນສະຖານການກະທໍາຜິດ.............ຕາມທີ່ບົ່ງໄວ້ໃນມາດຕາ...........ຂອງກົດໝາຍອາຍາ.

ດັ່ງນັ້ນ, ກອງບັນຊາການ ປກສ ແຂວງ.........................., ຈຶ່ງອອກຄໍາສັ່ງດັ່ງກ່າວ, ນັບແຕ່ເວລາ........................, ໂມງ ຂອງວັນທີ....ເດືອນ....ປີ.......ເປັນຕົ້ນໄປ.

ຄໍາສັ່ງສະບັບນີ້ມີຜົນບັງຄັບປະຕິບັດໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຊັນ ແລະ ຊື່ແຈ້ງພະນັກງານຜູ່ປະຕິບັດຄໍາສັ່ງ** **ຫົວໜ້າກອງບັນຊາການ ປກສ ແຂວງ**

**ເຊັນ ແລະ ປະທັບຕາ**

ໃນກໍລະນີການກະທໍາຜິດໃນສະຖານລະຫຸໂທດ ຫຼື ໂທສານຸໂທດທີ່ກົດໝາຍໄດ້ກໍານົດໂທດຕັດອິດສະລະພາບສູງສຸດບໍ່ເກີນສາມປີ ຖ້າຫາກມີຫຼັກຖານຄົບຖ້ວນແລ້ວຫົວໜ້າອົງການສືບສວນ-ສອບສວນຕ້ອງສະຫຼຸບແລ້ວສົ່ງສໍານວນຄະດີພ້ອມດ້ວຍຂອງກາງ ແລະ ຜູ່ຖືກຫາໃຫ້ອົງການໄອຍະການເພື່ອສັ່ງຟ້ອງຂຶ້ນສານໂດຍກົງ ໂດຍບໍ່ຕ້ອງເປີດການສືບສວນ-ສອບສວນກໍໄດ້.

ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການຕ້ອງປ່ຽນແປງ ຫຼື ເພີ່ມເຕີມຄໍາສັ່ງເປີດການສືບສວນ-ສອບສວນທີ່ໄດ້ອອກໄປແລ້ວນັ້ນ ຖ້າເຫັນວ່າຄໍາສັ່ງດັ່ງກ່າວຫາກບໍ່ຖືກຕ້ອງກັບພຶດຕິກໍາຕົວຈິງ ຫຼື ຫາກຍັງຍັງມີຂໍ້ກ່າວຫາອື່ນຕື່ອີກ.

ໃນກໍລະນີທີ່ອົງການສືບສວນ-ສອບສວນຫາກໄດ້ປ່ຽນແປງ ຫຼື ເພີ່ມເຕີມຄໍາສັ່ງເປີດການສືບສວນ-ສອບສວນຂອງຕົນ ຕ້ອງລາຍງານຄໍາສັ່ງດັ່ງກ່າວໃຫ້ຫົວໜ້າອົງການໄອຍະການເພື່ອຕິດຕາມກວດກາພາຍໃນກໍານົດຊາວສີ່ຊົ່ວໂມງນັບແຕ່ວັນໄດ້ປ່ຽນແປງ ຫຼື ເພີ່ມເຕີມເປັນຕົ້ນໄປ.

ໃນກໍລະນີທີ່ຫົວໜ້າອົງການໄອຍະການຫາກໄດ້ປ່ຽນແປງ ຫຼື ເພີ່ມເຕີມຄໍາສັ່ງເປີດການສືບສວນ-ສອບສວນຂອງຫົວໜ້າອົງການສືບສວນ-ສອບສວນນັ້ນ ຕ້ອງສົ່ງຄໍາສັ່ງດັ່ງກ່າວໄປໃຫ້ອົງການສືບສວນ-ສອບສວນ ພາຍໃນກໍານົດຊາວສີ່ຊົ່ວໂມງນັບແຕ່ວັນໄດ້ປ່ຽນແປງ ຫຼື ເພີ່ມເຕີມເປັນຕົ້ນໄປ.

ໃນກໍລະນີທີ່ຫົວໜ້າອົງການໄອຍະການຫາກໄດ້ປ່ຽນແປງ ຫຼື ເພີ່ມເຕີມຄໍາສັ່ງເປີດການສືບສວນ-ສອບສວນຂອງຕົນຕ້ອງລາຍງານຄໍາສັ່ງດັ່ງກ່າວ ຕໍ່ອົງການໄອຍະການຂັ້ນເທິງຖັດນັ້ນພາຍໃນກໍານົດຊາວສີ່ຊົ່ວໂມງນັບແຕ່ວັນໄດ້ປ່ຽນແປງ ຫຼື ເພີ່ມເຕີມເປັນຕົ້ນໄປ (ມ 91 ກດຍ).

**4.1. ກຳນົດເວລາການສືບສວນ-ສອບສວນ**

ພາຍຫຼັງທີ່ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການໄດ້ອອກຄຳສັ່ງເປີດການສືບສວນ-ສອບສວນແລ້ວເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການທີ່ກ່ຽວຂ້ອງຕ້ອງດຳເນີນການສືບສວນ-ສອບສວນ, ສະຫຼຸບຜົນການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີພ້ອມດ້ວຍຂອງກາງສົ່ງໃຫ້ອົງການໄອຍະການພາຍໃນກຳນົດເວລາດັ່ງນີ້:

**4.1.1. ການກະທຳຜິດໃນສະຖານໂທສານຸໂທດ**

ສຳລັບການກະທຳຜິດໃນສະຖານໂທສານຸໂທດ ກຳນົດເວລາດຳເນີນການສືບສວນ-ສອບສວນ ແມ່ນ ສອງເດືອນນັບແຕ່ວັນອອກຄຳສັ່ງເປີດການສືບສວນ-ສອບສວນເປັນຕົ້ນໄປ, ແຕ່ຖ້າເຫັນວ່າມີຄວາມຈຳເປັນຈະຕ້ອງໄດ້ສືບຕໍ່ດຳເນີນການສືບສວນ-ສອບສວນຫົວໜ້າອົງການໄອຍະການ ອາດຈະຕໍ່ກຳນົດເວລາໃນການສືບສວນ-ສອບສວນໄດ້ອີກເທື່ອລະສອງເດືອນ, ແຕ່ລວມທັງໝົດແມ່ນບໍ່ໃຫ້ເກີນຫົກເດືອນ.

**4.1.2. ການກະທຳຜິດໃນສະຖານຄະຣຸໂທດ**

ສຳລັບການກະທຳຜິດໃນສະຖານຄະຣຸໂທດນັ້ນ ກຳນົດເວລາດຳເນີນການສືບສວນ-ສອບສວນ ແມ່ນ ສາມເດືອນນັບແຕ່ວັນອອກຄຳສັ່ງເປີດການສືບສວນ-ສອບສວນເປັນຕົ້ນໄປ, ຖ້າເຫັນວ່າມີຄວາມຈຳເປັນຈະຕ້ອງໄດ້ສືບຕໍ່ດຳເນີນການສືບສວນ-ສອບສວນຫົວໜ້າອົງການໄອຍະການ ອາດຈະຕໍ່ກຳນົດເວລາໃນການສືບສວນ-ສອບສວນໄດ້ອີກເທື່ອລະສາມເດືອນ, ແຕ່ລວມທັງໝົດບໍ່ໃຫ້ເກີນໜຶ່ງປີຕາມການສະເໜີຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການ, ການສະເໜີຂໍຕໍ່ກຳນົດເວລາແຕ່ລະເທື່ອໃຫ້ດຳເນີນສິບຫ້າວັນກ່ອນໝົດກຳນົດເວລາການສືບສວນ-ສອບສວນ.

ໃນກໍລະນີທີ່ມີການສົ່ງສຳນວນຄະດີຄືນ ໃຫ້ອົງການສືບສວນ-ສອບສວນຈະເປັນການກະທຳຜິດໃນສະຖານໂທສານຸໂທດ ຫຼື ການກະທຳຜິດໃນສະຖານຄະຣຸໂທດກໍຕາມ, ກຳນົດເວລາດຳເນີນການສືບສວນ-ສອບສວນເພີ່ມເຕີມນັ້ນ ແມ່ນບໍ່ໃຫ້ເກີນສອງເດືອນນັບແຕ່ວັນທີ່ອົງການສືບສວນ-ສອບສວນໄດ້ຮັບສຳນວນຄະດີເປັນຕົ້ນໄປ.

ໃນກໍລະນີທີ່ມີການສືບຕໍ່ດຳເນີນການສືບສວນ-ສອບສວນຄືນຄະດີທີ່ຖືກໂຈະ ຫຼື ຊັດມ້ຽນໄວ້ນັ້ນກຳນົດເວລາຂອງການສືບສວນ-ສອບສວນໃຫ້ດຳເນີນ ແລະ ຈັດຕັ້ງປະຕິບັດຕາມທີ່ໄດ້ກ່າວໄວ້ໃນຂໍ້ 4.1.1 ແລະ ຂໍ້ 4.1.2 ຂ້າງເທິງນັ້ນ.

ໃນການອະນຸຍາດ ຫຼື ບໍ່ອະນຸຍາດໃຫ້ຕໍ່ກຳນົດເວລາການສືບສວນ-ສອບສວນນັ້ນຫົວໜ້າອົງການໄອຍະການ ຕ້ອງອອກຄຳສັ່ງເປັນລາຍລັກອັກສອນພ້ອມດ້ວຍເຫດຜົນພາຍໃນສີ່ສິບແປດຊົ່ວໂມງນັບແຕ່ເວລາໄດ້ຮັບຄຳຮ້ອງຂໍເປັນຕົ້ນໄປ (ມ 110 ກດຍ).

**ຕົວຢ່າງ: ແບບພິມຄໍາສັ່ງຕໍ່ກໍານົດເວລາການສືບສວນ-ສອບສວນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ.................... ເລກທີ.../ປກສ ..........

ອົງການໄອຍະການປະຊາຊົນແຂວງ ລົງວັນທີ ....................

**ຄໍາສັ່ງຕໍ່ກໍານົດເວລາການສືບສວນ-ສອບສວນ**

- ອີງຕາມ ມາດຕາ 110 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ, ສະບັບປັບປຸງ ປີ 2012;
- ອີງຕາມ ການສະເໜີຂອງອົງການສືບສວນ-ສອບສວນ, ສະບັບເລກທີ........, ລົງວັນທີ......../......../.........

ຫົວໜ້າອົງການໄອຍະການປະຊາຊົນແຂວງ......................., ໄດ້ຄົ້ນຄວ້າໃບສະເໜີ, ບົດລາຍງານຂອງເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ສໍານວນຄະດີເລກທີ.........../ປກສ, ລົງວັນທີ......../......../........, ຕາມຄໍາສັ່ງເປີດການສືບສວນ-ສອບສວນ, ສະບັບເລກທີ......., ລົງວັນທີ......../......./........ ຢ່າງລະອຽດທີ່ຖ້ວນແລ້ວເຫັນວ່າມີຄວາມຈໍາເປັນຕ້ອງສືບຕໍ່ດໍາເນີນການສືບສວນ-ສອບສວນຄະດີດັ່ງກ່າວໃຫ້ສໍາເລັດ.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນແຂວງ................, ຈຶ່ງໄດ້ອອກຄໍາສັ່ງຕໍ່ກໍານົດເວລາການສືບສວນ-ສອບສວນຕື່ມອີກ 60 ວັນນັບແຕ່ວັນທີ......../......../........ຫາວັນທີ......../......../........

ຄໍາສັ່ງສະບັບນີ້ມີຜົນບັງຄັບປະຕິບັດໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

**ເຊັນ ແລະປະທັບຕາ**

### 4.2. ການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ-ສອບສວນ

ເມື່ອທີວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ແລະ ອົງການທີ່ມີສິດ ແລະ ໜ້າທີ່ດຳເນີນຄະດີ ໄດ້ອອກຄຳສັ່ງເປີດການສືບສວນ-ສອບສວນແລ້ວ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຜູ່ຖືກແຕ່ງຕັ້ງ (ມີຄຳແນະນຳ ຫຼື ຄຳຕົກລົງ) ໃຫ້ຮັບຜິດຊອບໃນການດຳເນີນຄະດີນັ້ນຕ້ອງຮີບຮ້ອນດຳເນີນການໂດຍນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນຕາມທີ່ກຳນົດໄວ້ໃນມາດຕາ 95 ແລະ ມາດຕາ 113-136 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

ໃນເວລາດຳເນີນການສືບສວນ-ສອບສວນ, ການເກັບກຳຂໍ້ມູນຫຼັກຖານຢ່າງຄົບຖ້ວນແລ້ວ ຖ້າເຫັນວ່າເປັນການກະທຳຜິດທີ່ຮ້າຍແຮງ ມີເງື່ອນໄຂຈະນຳໃຊ້ມາດຕະການສະກັດກັ້ນ ເຊັ່ນ ມາດຕະການກັກຕົວ (ມ138 ກດຍ) ເຈົ້າໜ້າທີ່ຜູ່ຮັບຜິດຊອບກໍຕ້ອງລາຍງານຜົນຂອງການສືບສວນ-ສອບສວນໃຫ້ຫົວໜ້າອົງການສືບສວນ-ສອບສວນ ເພື່ອຂໍຄຳສັ່ງກັກຕົວ ພາຍຫຼັງມີຄຳສັ່ງກັກຕົວແລ້ວເຈົ້າໜ້າທີ່ກ່ຽວຂ້ອງກໍຕ້ອງໄດ້ຮີບຮ້ອນເອົາຄຳໃຫ້ການ, ສະຫຼຸບຜົນການສືບສວນ-ສອບສວນຜ່ານຫົວໜ້າອົງການສືບສວນ-ສອບສວນ ເພື່ອສະເໜີຂໍຄຳສັ່ງກັກຂັງພາງ ຈາກຫົວໜ້າອົງການໄອຍະການ, ຖ້າຫາກບໍ່ມີຄຳສັ່ງກັກຂັງພາງຈາກຫົວໜ້າອົງການໄອຍະການແລ້ວກໍບໍ່ສາມາດທີ່ຈະກັກຂັງຜູ່ຖືກຫາໄດ້ ຫຼື ຖ້າຫາກກັກຂັງກໍເປັນການກັກຂັງທີ່ບໍ່ຖືກຕ້ອງຕາມກົດໝາຍ.

ໃນກໍລະນີທີ່ເຫັນວ່າມີເງື່ອນໄຂຕ້ອງນຳໃຊ້ມາດຕະການຈັບຕົວຜູ່ຖືກຫາ ເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງປະກອບເອກະສານ ເຊັ່ນ ບົດສະຫຼຸບການສືບສວນ-ສອບສວນ ໂດຍອ້າງເຫດຜົນຂໍ້ມູນຫຼັກຖານຕ່າງໆທີ່ເປັນພື້ນຖານໃນການຈັບຕົວ ໂດຍຜ່ານຫົວໜ້າອົງການສືບສວນ-ສອບສວນແລ້ວ ສະເໜີຂໍຄຳສັ່ງຈັບຕົວຈາກຫົວໜ້າອົງການໄອຍະການ (ມ139 ກດຍ), ເວັ້ນເສັຍແຕ່ການຈັບຕົວໃນກໍລະນີການກະທຳຜິດເຊິ່ງໜ້າ ແລະ ຮີບດ່ວນ (ມ 140 ກດຍ).

## 5. ການປ່ຽນແປງ ຫຼື ເພີ່ມເຕີມຄຳສັ່ງເປີດການສືບສວນ-ສອບສວນ

ໃນເວລາດຳເນີນການສືບສວນ-ສອບສວນ ຖ້າເຫັນວ່າຂໍ້ກ່າວຫາຕາມທີ່ໄດ້ກຳນົດໄວ້ໃນຄຳສັ່ງເປີດການສືບສວນ-ສອບສວນໃສ່ຜູ່ຖືກຫາ ບໍ່ຖືກຕາມສະຖານການກະທຳຜິດທີ່ຜູ່ກ່ຽວໄດ້ກະທຳ ຫຼື ຍັງມີການກະທຳຜິດໃນສະຖານອື່ນອີກທີ່ຍັງບໍ່ທັນໄດ້ກຳນົດໄວ້ໃນຄຳສັ່ງເປີດການສືບສວນ-ສອບສວນ. ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງປ່ຽນແປງ ຫຼື ເພີ່ມເຕີມຄຳສັ່ງເປີດການສືບສວນ-ສອບສວນຂອງຕົນ.

ພາຍໃນກຳນົດເວລາຊາວສີ່ຊົ່ວໂມງ ພາຍຫຼັງອອກຄຳສັ່ງເປີດການສືບສວນ-ສອບສວນໃສ່ຜູ່ຖືກຫາແລ້ວ ອົງການສືບສວນ-ສອບສວນຕ້ອງສົ່ງຄຳສັ່ງພ້ອມດ້ວຍເອກະສານທີ່

ພາໃຫ້ມີການປ່ຽນແປງ ຫຼື ເພີ່ມເຕີມຄຳສັ່ງເປີດການສືບສວນ-ສອບສວນລາຍງານຕໍ່ຫົວໜ້າອົງການໄອຍະການຂັ້ນດຽວກັບເພື່ອພິຈາລະນາຕົກລົງເຫັນດີ ຫຼື ບໍ່ເຫັນດີ ແລ້ວສົ່ງໃຫ້ຫົວໜ້າອົງການສືບສວນ-ສອບສວນພາຍໃນກຳນົດຊາວສີ່ຊົ່ວໂມງ (ມ 85 ກດຍ).

## 6. ຄຳສັ່ງບໍ່ເປີດການສືບສວນ-ສອບສວນ

ຄຳສັ່ງບໍ່ເປີດການສືບສວນ-ສອບສວນ ແມ່ນ ເອກະສານທາງລັດຖະການ ຫຼື ນິຕິກຳທີ່ອອກໂດຍຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ, ຊຶ່ງມີຜົນທາງດ້ານກົດໝາຍຄື ເຮັດໃຫ້ເຫດການດັ່ງກ່າວບໍ່ໄດ້ເຂົ້າສູ່ການພິຈາລະນາໃນຂະບວນການຍຸຕິທຳທາງອາຍາ, ເນື່ອງຈາກວ່າບໍ່ມີຂໍ້ມູນຫຼັກຖານໜັກແໜ້ນ ຫຼື ມີສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປ. ດັ່ງນັ້ນ, ຈຶ່ງເປັນສາເຫດໃຫ້ຫົວໜ້າອົງການດັ່ງກ່າວອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ.

### 6.1. ສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນ

ສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມີສອງກໍລະນີຄື: ບໍ່ມີຂໍ້ມູນຫຼັກຖານໜັກແໜ້ນ ແລະ ມີສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປ (ມ 92 ກດຍ), ສຳລັບສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປມີດັ່ງນີ້:

1) ຂາດເຫດການຂອງການກະທຳຜິດທາງອາຍາ;

2) ຂາດອົງປະກອບຂອງການກະທຳຜິດທາງອາຍາ;

3) ໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ;

4) ມີການນິລະໂທດກຳ;

5) ມີການຕົກລົງໄກ່ເກັ່ຍກັນ ໃນຄະດີທີ່ການກະທຳຜິດບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມລະຫວ່າງຜູ້ຖືກເສຍຫາຍກັບຜູ້ຖືກຫາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;

6) ຂາດການຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຫຼື ຜູ້ຖືກເສຍຫາຍຖອນຄຳຮ້ອງຟ້ອງໃນກໍລະນີການກະທຳຜິດທີ່ຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;

7) ມີການກະທຳຜິດທີ່ມີຜົນເສຍຫາຍທາງດ້ານວັດຖຸຕ່ຳກວ່າມູນຄ່າຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;

8) ຜູ້ກະທຳຜິດໄດ້ເສຍຊີວິດ, ຍົກເວັ້ນກໍລະນີການເສຍຊີວິດໃນເວລາດຳເນີນຄະດີຢູ່ສານ;

9) ມີຄຳສັ່ງຊັດມ້ຽນ ຫຼື ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວກ່ຽວກັບຄະດີດຽວກັນ.

ສຳລັບເດັກອາຍຸຕ່ຳກວ່າສິບຫ້າປີມີພຶດຕິກຳທີ່ເປັນອັນຕະລາຍຕໍ່ສັງຄົມນັ້ນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ (ມ 6 ກດຍ).

**6.2. ຄຳສັ່ງບໍ່ເປີດການສືບສວນ-ສອບສວນ**

ໃນກໍລະນີທີ່ມີສາເຫດໃດໜຶ່ງດັ່ງທີ່ກ່າວມາໃນຂ້າງເທິງນັ້ນ ທີ່ວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນ ພ້ອມທັງແຈ້ງຄຳສັ່ງດັ່ງກ່າວໃຫ້ບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນຊາບ. ຄູ່ຄວາມມີສິດຂໍອຸທອນຄຳສັ່ງບໍ່ເປີດການສືບສວນ-ສອບສວນ ຂອງຫົວໜ້າອົງການສືບສວນ-ສອບສວນຕໍ່ຫົວໜ້າອົງການໄອຍະການຂັ້ນດຽວກັນ ແລະ ຄູ່ຄວາມມີສິດຂໍອຸທອນຄຳສັ່ງບໍ່ເປີດການສືບສວນ-ສອບສວນຂອງຫົວໜ້າອົງການໄອຍະການ ຕໍ່ຫົວໜ້າອົງການໄອຍະການຂັ້ນເທິງຖັດນັ້ນໄດ້ພາຍໃນກຳນົດເຈັດວັນນັບແຕ່ວັນຮັບຊາບຄຳສັ່ງເປັນຕົ້ນໄປ, ຫົວໜ້າອົງການໄອຍະການທີ່ໄດ້ຮັບຄຳຮ້ອງຂໍອຸທອນນັ້ນ ຕ້ອງໄດ້ພິຈາລະນາຄຳຮ້ອງຂໍອຸທອນຄຳສັ່ງບໍ່ເປີດການສືບສວນ-ສອບສວນພາຍໃນກຳນົດຫ້າວັນ (ມ 93 ກດຍ).

**ຕົວຢ່າງ** 1: ທ້າວ ກ ໄດ້ໄປແຈ້ງຄວາມຕໍ່ເຈົ້າໜ້າທີ່ອົງການສືບສວນ-ສອບສວນກອງບັນຊາການ ປກສ ແຂວງໃນວັນທີ 12 ເມສາ 2013 ມີຄົນຮ້າຍບໍ່ຊາບຊື່ມາງັດປະຕູເຮືອນແລ້ວລັກເອົາເງິນ ຈຳນວນ 1.000 ໂດລາ ແລະ ສົງໄສວ່າແມ່ນ ທ້າວ ຂ ທີ່ຢູ່ເຮືອນໃກ້ກັນກັບເຮືອນຂອງຕົນເປັນຜູ້ລົງມືກະທຳຜິດ ຍ້ອນວ່າເຫັນຜູ້ກ່ຽວຊື້ລົດຈັກໃໝ່ 1 ຄັນ, ຢູ່ຮ້ານຂາຍລົດຈັກຂອງ ທ້າວ ຄ ໃນລາຄາ 10.000.000 ກີບ, ຊຶ່ງຕົນໄດ້ໄປສອບຖາມ ແລະ ໄດ້ຄຳຕອບຈາກຮ້ານຂາຍລົດຈັກດັ່ງກ່າວວ່າໃນຈຳນວນເງິນທີ່ຈ່າຍຄ່າຊື້ລົດຈັກນັ້ນ, ທ້າວ ຂ ໄດ້ຈ່າຍເປັນເງິນໂດລາຈຳນວນ 1.000 ໂດລາ. ດັ່ງນັ້ນ, ຕົນຈຶ່ງແຈ້ງຄວາມຕໍ່ເຈົ້າໜ້າທີ່ຕຳຫຼວດເພື່ອດຳເນີນຄະດີຕໍ່ຜູ້ກ່ຽວ.

ຜ່ານການເກັບກຳຂໍ້ມູນຢູ່ສະຖານທີ່ເກີດເຫດໄດ້ພົບເຫັນຮ່ອຍງັດແງະ, ຮ່ອຍນິ້ວມື ແລະ ວັດຖຸທີ່ຄົນຮ້າຍເອົາມາງັດແງະປະວາງໄວ້. ຜ່ານການເກັບໂຮມຂໍ້ມູນຫຼັກຖານ ແລະ ຮອຍນິ້ວມືຂອງຄົນຮ້າຍປຽບທຽບກັບຮອຍນິ້ວມືຂອງ ທ້າວ ຂ ແລ້ວເຈົ້າໜ້າທີ່ສະຫຼຸບໄດ້ວ່າບໍ່ແມ່ນຮອຍນິ້ວມືຂອງ ທ້າວ ຂ. ສະນັ້ນ, ຈຶ່ງບໍ່ມີຫຼັກຖານໜັກແໜ້ນ ແລະ ບໍ່ສາມາດອອກຄຳສັ່ງເປີດການສືບສວນ-ສອບສວນຕໍ່ ທ້າວ ຂ ໄດ້.

**ຕົວຢ່າງ 2:** ທ້າວ ກ ໄດ້ໄປງັດແງະເຮືອນ ທ້າວ ຂ ແລ້ວເອົາເງິນຈຳນວນ 7.000.000 ກີບເພື່ອຈະໄປຊື້ເຄື່ອງນຸ່ງຫົ່ມ ແຕ່ໃນເວລາງັດແງະໄດ້ມີເຈົ້າຂອງເຮືອນມາພົບ ແລະ ນຳຕົວສົ່ງໃຫ້ເຈົ້າໜ້າທີ່ເພື່ອດຳເນີນຄະດີຕາມກົດໝາຍ, ແຕ່ຜູ້ກ່ຽວມີອາຍຸໄດ້ພຽງ 14 ປີຕາມປຶ້ມ

ສຳມະໂນຄົວ. ສະນັ້ນ, ຈຶ່ງບໍ່ສາມາດອອກຄຳສັ່ງເປີດການສືບສວນ-ສອບສວນໄດ້, ເນື່ອງຈາກວ່າຂາດອົງປະກອບຂອງການກະທຳຜິດທາງອາຍາ.

**ຕົວຢ່າງ : ແບບພິມຄຳສັ່ງບໍ່ເປີດການສືບສວນ-ສອບສວນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ................ ເລກທີ......./ປກສ.........

ກອງບັນຊາການ ປກສ ແຂວງ ລົງວັນທີ......................

**ຄຳສັ່ງບໍ່ເປີດການສືບສວນ-ສອບສວນ**

- ອີງຕາມ ມາດຕາ 6, 86, 92, 93 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ;
- ອີງຕາມ ການແຈ້ງຄວາມຂອງ ທ້າວ/ນາງ................................ອາຍຸ........ປີ, ສັນຊາດ........, ອາຊີບ................, ຢູ່ບ້ານ........................, ໜ່ວຍ.........., ເມືອງ................, ແຂວງ...................................................................

ໃນວັນທີ ......../......../........, ເວລາ........ໂມງ, ໄດ້ມີ ທ້າວ/ນາງ........................ອາຍຸ........ປີ, ອາຊີບ........ຢູ່ບ້ານ........, ໜ່ວຍ........ເມືອງ........, ແຂວງ........................ໄດ້........................................................................................................

ເມື່ອເຈົ້າໜ້າທີ່ພະແນກສືບສວນ-ສອບສວນແຂວງ..............., ໄດ້ຄົ້ນຄວ້າການແຈ້ງຄວາມຂໍ້ມູນຫຼັກຖານຕ່າງໆແລ້ວເຫັນວ່າມີຫຼັກຖານໜັກແໜ້ນພຽງພໍໃນການອອກຄຳສັ່ງເປີດການສືບສວນ-ສອບສວນ, ໃນສະຖານການກະທຳຜິດ................................ຕາມທີ່ບົ່ງໄວ້ໃນມາດຕາ................ຂອງກົດໝາຍອາຍາ. ແຕ່ອີງໃສ່ມາດຕາ 6 ຂໍ້ 2 ແລ້ວແມ່ນຂາດອົງປະກອບຂອງການກະທຳຜິດທາງອາຍາຄື............................................................

ດັ່ງນັ້ນ, ກອງບັນຊາການ ປກສ ແຂວງ................ ຈຶ່ງບໍ່ອອກຄຳສັ່ງເປີດການສືບສວນ-ສອບສວນນັບແຕ່ເວລາ........ໂມງ ຂອງວັນທີ......../......../.........

ຄຳສັ່ງສະບັບນີ້ມີຜົນບັງຄັບປະຕິບັດໄດ້ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ເຊັນ ແລະ ຊື່ແຈ້ງພະນັກງານຜູ້ປະຕິບັດຄຳສັ່ງ** **ຫົວໜ້າກອງບັນຊາການ ປກສ ແຂວງ**

**ເຊັນ ແລະ ປະທັບຕາ**

# ບົດທີ 2
# ການດຳເນີນການສືບສວນ-ສອບສວນ

## 1. ຄວາມຮູ້ກ່ຽວກັບວິທີການສືບສວນ-ສອບສວນ

ວິທີການສືບສວນ-ສອບສວນ ແມ່ນຮູບການ ແລະ ວິທີການທີ່ອົງການດຳເນີນຄະດີອາຍານຳໃຊ້ປະກອບຂໍ້ມູນຫຼັກຖານເພື່ອຊອກໃຫ້ເຫັນການກະທຳຜິດທາງອາຍາ, ນຳເອົາຜູ້ກະທຳຜິດມາລົງໂທດຕາມກົດໝາຍ ແລະ ບໍ່ໃຫ້ຜູ້ບໍ່ໄດ້ກະທຳຜິດຖືກລົງໂທດ. ວິທີການສືບສວນ-ສອບສວນມີແປດວິທີການ ເຊັ່ນ ການເອົາຄຳໃຫ້ການ, ການສອບຖາມຊ້ອງໜ້າ, ການຊັນນະສູດສະຖານທີ່ເກີດເຫດ, ການຊັນນະສູດຊາກສົບ, ການກວດຄົ້ນເຄຫະສະຖານ, ຍານພາຫະນະ ຫຼື ຕົວບຸກຄົນ, ການຍຶດ ຫຼື ອາຍັດຊັບ, ການທົດສອບຂໍ້ມູນຄືນໃໝ່, ການຍັ້ງຢືນ ແລະ ການຊີ້ຕົວ.

ອົງການສືບສວນ-ສອບສວນສາມາດນຳໃຊ້ເຈັດວິທີການສືບສວນ-ສອບສວນໃນຂອບເຂດສິດໜ້າທີ່ຂອງຕົນ ໂດຍບໍ່ຕ້ອງຂໍຄຳສັ່ງຈາກຫົວໜ້າອົງການໄອຍະການ ຫຼື ສານ, ສ່ວນການກວດຄົ້ນເຄຫະສະຖານໃນກໍລະນີທົ່ວໄປຫົວໜ້າອົງການສືບສວນ-ສອບສວນຕ້ອງໄດ້ຂໍຄຳສັ່ງກວດຄົ້ນຈາກຫົວໜ້າອົງການໄອຍະການ ຫຼື ສານ ເພາະວ່າການກວດຄົ້ນເຄຫະສະຖານເປັນການແຕະຕ້ອງເຖິງສິດ, ເສລີພາບຂອງບຸກຄົນໃນການປົກປັກຮັກສາເຄຫະສະຖານຂອງຕົນເອງ, ຍົກເວັ້ນໃນກໍລະນີການກະທຳຜິດເຊິ່ງໜ້າ ແລະ ຮີບດ່ວນ. ສຳລັບອົງການໄອຍະການ ແລະ ສານກໍສາມາດນຳໃຊ້ວິທີການສືບສວນ-ສອບສວນຕາມທີ່ກົດໝາຍໄດ້ກຳນົດໄວ້.

### 1.1. ການເອົາຄຳໃຫ້ການ

ການເອົາຄຳໃຫ້ການໃນຂັ້ນຕອນການສືບສວນ-ສອບສວນ ແມ່ນ ການສອບຖາມຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ ເຊັ່ນ ຜູ້ຖືກສົງໄສ, ຜູ້ຖືກຫາ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ພະຍານ (ມ 35-39 ກດຍ) ເພື່ອເອົາຂໍ້ມູນທີ່ກ່ຽວຂ້ອງກັບຄະດີອາຍາໂດຍໃຫ້ບຸກຄົນດັ່ງກ່າວລາຍງານກ່ຽວກັບເຫດການຂອງການກະທຳຜິດຢ່າງລະອຽດດ້ວຍວິທີການໃຫ້ຜູ້ກ່ຽວເລົ່າຄືນເຫດການ ແລະ ມີການຕັ້ງຄຳຖາມເພື່ອເຈາະຈີ້ມບັນຫາ ເພື່ອໃຫ້ໄດ້ຄວາມກະຈ່າງແຈ້ງກ່ຽວກັບເຫດການທີ່ເກີດຂຶ້ນຕໍ່ການສອບຖາມຂອງຜູ້ດຳເນີນຄະດີອາຍາ ເຊັ່ນ ຫົວໜ້າ, ຮອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ຜູ້ຊ່ວຍເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າ, ຮອງຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ, ປະ

ທານ, ຮອງປະທານສານ, ຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ (ມ 52 ກດຍ).

ອົງການສືບສວນ-ສອບສວນມີສິດເອົາຄຳໃຫ້ການໄດ້ໃນເວລາທີ່ອົງການສືບສວນ-ສອບສວນດຳເນີນຄະດີອາຍາ;

ອົງການໄອຍະການມີສິດເອົາຄຳໃຫ້ການໄດ້ພາຍຫຼັງທີ່ໄດ້ຮັບສຳນວນຄະດີອາຍາຈາກອົງການສືບສວນ-ສອບສວນ ຫຼື ໃນກໍລະນີທີ່ອົງການໄອຍະການດຳເນີນຄະດີອາຍາດ້ວຍຕົນເອງ;

ສານມີສິດເອົາຄຳໃຫ້ການໄດ້ພາຍຫຼັງທີ່ໄດ້ຮັບສຳນວນຄະດີອາຍາທີ່ອົງການໄອຍະການໄດ້ສັ່ງຟ້ອງແລ້ວ;

ການເອົາຄຳໃຫ້ການຂອງສາມອົງການທີ່ກ່າວມານັ້ນກໍແມ່ນເພື່ອຈຸດປະສົງປະກອບຂໍ້ມູນຫຼັກຖານໃຫ້ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ;

ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ ຫຼື ຜູ້ພິພາກສາທີ່ຈະເອົາຄຳໃຫ້ການນອກຈາກຈະມີຄວາມຮູ້ ແລະ ເຂົ້າໃຈກ່ຽວກັບກົດໝາຍແລ້ວຕ້ອງຮູ້ຫຼັກການຈິດຕະວິທະຍາ, ມີສິລະປະ, ມີໄຫວພິບໃນການເອົາຄຳໃຫ້ການ, ການສອບຖາມ, ການຕັ້ງຄຳຖາມ, ໃຫ້ເຂົ້າໃຈສະເໝີວ່າການເອົາຄຳໃຫ້ການແມ່ນການຊອກຫາຄວາມຈິງ ແລະ ໃຫ້ໄດ້ມາຊຶ່ງຄຳຮັບສາລະພາບໂດຍວິທີການ ແລະ ຮູບການທີ່ຖືກຕ້ອງຕາມກົດໝາຍປາສະຈາກການເອົາຄຳໃຫ້ການດ້ວຍການບັງຄັບ, ນາບຂູ່, ຕົວະຍົວະ ຫຼອກລວງ ຊຶ່ງເປັນການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍ.

### 1.1.1. ການເອົາຄຳໃຫ້ການຜູ້ຖືກຫາ

ການເອົາຄຳໃຫ້ການຜູ້ຖືກຫາ ແມ່ນການສອບຖາມເອົາຂໍ້ມູນກ່ຽວກັບການກະທຳຜິດນຳຜູ້ຖືກຫາໂດຍຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ, ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການ;

ໂດຍອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ຕາມມາດຕາ 84 ວັກ 3 ໄດ້ກຳນົດວ່າສຳເນົາຄຳສັ່ງເປີດການສືບສວນ-ສອບສວນພ້ອມດ້ວຍບົດສະຫຼຸບເຫດການທີ່ເປັນພື້ນຖານໃຫ້ແກ່ການອອກຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນຕ້ອງສົ່ງໃຫ້ຫົວໜ້າອົງການໄອຍະການຂັ້ນດຽວກັນຊາບພາຍໃນຊາວສີ່ຊົ່ວໂມງນັບແຕ່ເວລາອອກຄຳສັ່ງເປັນຕົ້ນໄປ. ພາຍໃນກຳນົດເວລາສີ່ສິບແປດຊົ່ວໂມງພາຍຫຼັງທີ່ໄດ້ຮັບສຳເນົາຄຳສັ່ງດັ່ງກ່າວແລ້ວຫົວໜ້າອົງການໄອຍະການຕ້ອງຕົກລົງເຫັນດີ ຫຼື ບໍ່ເຫັນດີໃນການອອກຄຳສັ່ງດັ່ງກ່າວແລ້ວສົ່ງໃຫ້ຫົວໜ້າອົງການສືບສວນ-ສອບສວນຊາບ ແລະ ປະຕິບັດໃນທັນໃດ, ຈາກເນື້ອໃນທີ່ກ່າວມານັ້ນ ຈຶ່ງເຫັນໄດ້ວ່າການເອົາຄຳໃຫ້ການ

ຕ້ອງເຮັດໃນທັນໃດພາຍຫຼັງທີ່ໄດ້ຮັບຄຳເຫັນດີເປັນລາຍລັກອັກສອນຈາກຫົວໜ້າອົງການໄອຍະການກ່ຽວກັບການອອກຄຳສັ່ງເປີດການສືບສວນ-ສອບສວນ, ຖ້າຫາກວ່າການເອົາຄຳໃຫ້ການຂອງຜູ້ຖືກຫາຫາກບໍ່ສາມາດດຳເນີນໃນທັນໃດໄດ້ກໍຕ້ອງເຮັດບົດບັນທຶກພ້ອມດ້ວຍເຫດຜົນ (ມ 116 ກດຍ) ເຊັ່ນ ການເຈັບເປັນຂອງຜູ້ຖືກຫາຢ່າງກະທັນຫັນ ແລະ ອື່ນໆ;

ການເອົາຄຳໃຫ້ການໄດ້ດຳເນີນຂຶ້ນໃນເວລາທີ່ຜູ້ຖືກຮ້ອງຟ້ອງເຂົ້າພົບເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການ ຫຼື ໃນເວລາທີ່ຜູ້ກະທຳຜິດເຂົ້າມອບຕົວຕໍ່ເຈົ້າໜ້າທີ່, ຊຶ່ງພາຍຫຼັງທີ່ໄດ້ເອົາຄຳໃຫ້ການຜູ້ຖືກສົງໄສແລ້ວ, ເຈົ້າໜ້າທີ່ອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງໄດ້ພິຈາລະນາຄົ້ນຄວ້າຢ່າງທັນການ, ຖ້າເຫັນວ່າມີຂໍ້ມູນຫຼັກຖານໜັກແໜ້ນວ່າຜູ້ກ່ຽວໄດ້ກະທຳຜິດທາງອາຍາຊຶ່ງກົດໝາຍກຳນົດໂທດຕັດອິດສະລະພາບ, ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການອາດຈະອອກຄຳສັ່ງກັກຕົວຜູ້ກ່ຽວໄວ້ໄດ້ພາຍໃນສີ່ສິບແປດຊົ່ວໂມງ ເພື່ອດຳເນີນການສືບສວນ-ສອບສວນ ແຕ່ຫົວໜ້າອົງການສືບສວນ-ສອບສວນຕ້ອງລາຍງານເປັນລາຍລັກອັກສອນໃຫ້ຫົວໜ້າອົງການໄອຍະການຊາບພາຍໃນຊາວສີ່ຊົ່ວໂມງ (ມ 138 ກດຍ);

ກ່ອນຈະເອົາຄຳໃຫ້ການຂອງຜູ້ຖືກຫາຕ້ອງແຈ້ງຂໍ້ກ່າວຫາຕາມຄຳສັ່ງເປີດການສືບສວນ-ສອບສວນໃຫ້ຜູ້ກ່ຽວຮັບຊາບເພື່ອເປັນການປົກປ້ອງສິດ ແລະ ເສລີພາບຂອງບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີອາຍາໂດຍສະເພາະຜູ້ຖືກຫາ, ເຈົ້າໜ້າທີ່ທີ່ເອົາຄຳໃຫ້ການຕ້ອງໄດ້ອະທິບາຍສິດ ແລະ ພັນທະຜູ້ຖືກຫານັ້ນຊາບດັ່ງນີ້:

**ກ. ສິດຂອງຜູ້ຖືກຫາ**

1) ຮັບຊາບ ແລະ ແກ້ຂໍ້ກ່າວຫາ;

2) ໄດ້ຮັບການອະທິບາຍກ່ຽວກັບສິດ ແລະ ພັນທະຂອງຕົນໃນການຕໍ່ສູ້ຄະດີ;

3) ໃຫ້ການ ແລະ ສະເໜີຫຼັກຖານ;

4) ສະເໜີປະກັນຕົວ ແລະ ຍື່ນຄຳຮ້ອງຂໍອື່ນ;

5) ໄດ້ຮັບເອກະສານກ່ຽວກັບການເປີດການສືບສວນ-ສອບສວນ, ບົດບັນທຶກຄຳໃຫ້ການຂອງຕົນ, ຄຳສັ່ງກ່ຽວກັບການນຳໃຊ້, ປ່ຽນແປງ ຫຼື ລົບລ້າງມາດຕະການສະກັດກັ້ນ, ຄຳສັ່ງໂຈະ, ບົດສະຫຼຸບຜົນຂອງການສືບສວນ-ສອບສວນ, ຄຳສັ່ງຊັດມ້ຽນ, ເອກະສານ ແລະ ຄຳສັ່ງອື່ນກ່ຽວກັບການດຳເນີນຄະດີ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

6) ເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ;

7) ເອົາ ແລະ ພົບທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນການຕໍ່ສູ້ຄະດີ;

8) ສະເໜີຄ້ານຕົວຜູ້ດຳເນີນຄະດີອາຍາ ເຊັ່ນ ຫົວໜ້າ, ຮອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ຜູ້ຊ່ວຍເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າ, ຮອງຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ແລະ ຜູ້ຊ່ວຍພະນັກງານໄອຍະການ (ມ 52 ຂໍ້ 1 ແລະ 2 ກດຍ), ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ;

9) ຮ້ອງຟ້ອງຕໍ່ການກະທຳ ຫຼື ການອອກຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການທີ່ເຫັນວ່າບໍ່ຖືກຕ້ອງ;

10) ຂໍອຸທອນ, ຂໍລົບລ້າງ ຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ.

**ຂ. ພັນທະຂອງຜູ້ຖືກຫາ**

1) ເຂົ້າມາສະເໜີຕົວຕາມໝາຍຮຽກ, ຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ;

2) ປະຕິບັດລະບຽບການສືບສວນ-ສອບສວນ.

ກ່ອນຈະເອົາຄຳໃຫ້ການຖ້າວ່າມີຜູ້ປົກປ້ອງອື່ນ ຫຼື ຜູ້ແປພາສາເຂົ້າຮ່ວມກໍຕ້ອງແຈ້ງສິດ ແລະ ພັນທະໃຫ້ພວກກ່ຽວຊາບເຊັ່ນດຽວກັນ (ມ 116 ກດຍ).

ກໍລະນີທີ່ມີຜູ້ຖືກຫາຫຼາຍຄົນກ່ອນຈະເອົາຄຳໃຫ້ການ, ເຈົ້າໜ້າທີ່ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດພ້ອມນັ້ນກໍຕ້ອງໄດ້ອະທິບາຍໃຫ້ຜູ້ຖືກຫາເຂົ້າໃຈແຈ້ງກ່ຽວກັບຈຸດປະສົງຂອງການເອົາຄຳໃຫ້ການ, ຄວາມຈຳເປັນທີ່ຕ້ອງເອົາຄຳໃຫ້ການຜູ້ຖືກຫາເທື່ອລະຄົນທັງນີ້ກໍເພື່ອຫຼີກເວັ້ນການປຶກສາຫາລືກັນລະຫວ່າງຜູ້ຖືກຫາດ້ວຍກັນ ຫຼື ການໄດ້ຍິນຄຳໃຫ້ການຂອງຜູ້ຖືກຫາທີ່ກຳລັງໃຫ້ການຢູ່ນັ້ນເພື່ອຈະເຮັດໄດ້ຄືແນວນັ້ນເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງໄດ້ເອົາຄຳໃຫ້ການເທື່ອລະຄົນ.

ການເອົາຄຳໃຫ້ການຕ້ອງເຮັດບົດບັນທຶກຄຳໃຫ້ການກໍຄືບົດບັນທຶກການສືບສວນ-ສອບສວນໂດຍມີເນື້ອໃນບົດບັນທຶກຢ່າງຖືກຕ້ອງ (ມ 100 ກດຍ), ການເອົາຄຳໃຫ້ການນັ້ນຜູ້ຖືກຫາຈະຂຽນຄຳໃຫ້ການດ້ວຍຕົນເອງກໍໄດ້ດ້ວຍເນື້ອໃນຄວາມຈິງທີ່ເກີດຂຶ້ນ ຫຼື ຕາມຄຳຖາມຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ໃນການເອົາຄຳໃຫ້ການແຕ່ລະເທື່ອນັ້ນບໍ່ໃຫ້ເກີນສີ່ຊົ່ວໂມງ ແລະ ບໍ່ອະນຸຍາດໃຫ້ສອບສວນໃນເວລາກາງຄືນເວັ້ນເສຍກໍລະນີຈຳເປັນ ຫຼື ຮີບດ່ວນແຕ່ຕ້ອງໄດ້ຂຽນເຫດຜົນໄວ້ໃນບົດບັນທຶກການເອົາຄຳໃຫ້ການ, ໃນກໍລະນີຜູ້ຖືກຫາຫາກບໍ່ໃຫ້ການຜູ້ດຳເນີນຄະດີອາຍາຕ້ອງບັນທຶກໄວ້.

ການເອົາຄຳໃຫ້ການບໍ່ອະນຸຍາດໃຫ້ດຳເນີນດ້ວຍການໃຊ້ຄວາມຮຸນແຮງ, ຕົວະຍົວະ, ບັງຄັບ, ນາບຂູ່, ທຸບຕີ ຫຼື ທໍລະມານ, ຖ້າຫາກລະເມີດກໍຈະຖືກດຳເນີນຄະດີອາຍາ ແລະ ຕ້ອງໄດ້ໃຊ້ແທນຄ່າເສັຍຫາຍຕາມລະບຽບກົດໝາຍທີ່ເນື່ອງມາຈາກການລະເມີດນັ້ນ.

ການເອົາຄຳໃຫ້ການຂອງຜູ້ຖືກຫາຕ້ອງດຳເນີນຢູ່ບ່ອນເຮັດວຽກຂອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການ, ເວັ້ນເສັຍແຕ່ກໍລະນີທີ່ຈຳເປັນກໍອາດຈະເອົາຄຳໃຫ້ການຂອງຜູ້ຖືກຫາຢູ່ສະຖານທີ່ອື່ນກໍໄດ້ ເຊັ່ນ ຢູ່ໂຮງໝໍ ຫຼື ສະຖານທີ່ປິ່ນປົວ ຫຼື ຢູ່ກັບສະຖານທີ່ເກີດເຫດ.

ຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍຕໍ່ການກະທຳຜິດຈະຖືເປັນຫຼັກຖານໃນຄະດີໄດ້ກໍຕໍ່ເມື່ອຄຳໃຫ້ການຮັບສາລະພາບນັ້ນໄດ້ຮັບການຢັ້ງຢືນດ້ວຍຫຼັກຖານຜູກມັດທີ່ໜັກແໜ້ນຊຶ່ງແມ່ນຫຼັກຖານທີ່ເປັນພື້ນຖານຢັ້ງຢືນໄດ້ວ່າຜູ້ຖືກຫາ ຫຼື ຈຳເລີຍໄດ້ກະທຳຜິດ.

ຄຳໃຫ້ການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍທີ່ໄດ້ມາດ້ວຍການຕົວະຍົວະຫຼອກລວງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ຫຼື ການກະທຳອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍຈະໃຊ້ເປັນຫຼັກຖານໃນຄະດີບໍ່ໄດ້. ຄຳໃຫ້ການຮັບສາລະພາບຂອງພວກກ່ຽວຈະບໍ່ມີຜົນທາງດ້ານກົດໝາຍ ແລະ ບໍ່ສາມາດນຳໃຊ້ເປັນພື້ນຖານໃນການດຳເນີນຄະດີອາຍາໄດ້.

ໃນການດຳເນີນຄະດີອາຍາບໍ່ໃຫ້ຖືເອົາການຮັບສາລະພາບຂອງຜູ້ຖືກຫາ ຫຼື ຈຳເລີຍເປັນຕົ້ນຕໍແຕ່ຕ້ອງຊອກຫາຫຼັກຖານມາຢັ້ງຢືນການກ່າວຫາ ຫຼື ການກະທຳຜິດຂອງຜູ້ກ່ຽວຕື່ມອີກ ເຖິງວ່າຜູ້ຖືກຫາ ຫຼື ຈຳເລີຍປະຕິເສດກ່ຽວກັບການກະທຳຜິດຂອງຕົນແຕ່ຖ້າມີຫຼັກຖານໜັກແໜ້ນ, ຮັດກຸມກໍໃຫ້ຖືວ່າຜູ້ກ່ຽວເປັນຜູ້ກະທຳຜິດ (ມ 44 ກດຍ).

### 1.1.2. ການເອົາຄຳໃຫ້ການຜູ້ຖືກເສັຍຫາຍ, ໂຈດທາງແພ່ງ

ການເອົາຄຳໃຫ້ການຜູ້ຖືກເສັຍຫາຍ ແມ່ນການເອົາຂໍ້ມູນກ່ຽວກັບເຫດການ ແລະ ຄວາມເສັຍຫາຍຕໍ່ການສອບຖາມຂອງຜູ້ດຳເນີນຄະດີຄື ຫົວໜ້າ, ຮອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ຜູ້ຊ່ວຍ, ຫົວໜ້າ, ຮອງຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ແລະ ຜູ້ຊ່ວຍ, ປະທານ, ຮອງປະທານສານ, ຜູ້ພິພາກສາ, ຜູ້ຊ່ວຍ ແລະ ຈ່າສານ (ມ 37, 38 ກດຍ), ຂໍ້ມູນທີ່ຕ້ອງໄດ້ບັນທຶກເອົານັ້ນແມ່ນຂໍ້ມູນກ່ຽວກັບຄວາມເສັຍຫາຍທາງດ້ານສຸຂະພາບ ຫຼື ຊີວິດ, ວັດຖຸ ຫຼື ຈິດໃຈ ຊຶ່ງໄດ້ຮັບຜົນກະທົບເນື່ອງມາຈາກເຫດການກະທຳຜິດທາງອາຍາ.

ກ່ອນຈະເອົາຄຳໃຫ້ການນັ້ນຕ້ອງໄດ້ແຈ້ງສິດ ແລະ ພັນທະໃຫ້ຜູ້ຖືກເສັຍຫາຍ ແລະ ໂຈດທາງແພ່ງຮັບຊາບ (ມ 67 ກດຍ) ດັ່ງນີ້:

**ກ. ສິດຂອງຜູ້ຖືກເສຍຫາຍ ແລະ ໂຈດທາງແພ່ງ**

1) ໃຫ້ການກ່ຽວກັບຄະດີ;

2) ສະເໜີຫຼັກຖານ;

3) ຍື່ນຄຳຮ້ອງຂໍ;

4) ໄດ້ຮັບການທົດແທນຄ່າເສຍຫາຍ;

5) ເບິ່ງເອກະສານຢູ່ໃນສຳນວນຄະດີ, ອັດສຳເນົາ ຫຼື ກ່າຍເອົາເນື້ອໃນທີ່ຈຳເປັນອອກຈາກສຳນວນຄະດີ ຫຼັງຈາກສິ້ນສຸດການສືບສວນ-ສອບສວນ;

6) ເຂົ້າຮ່ວມການໄຕ່ສວນຄະດີໃນທີ່ປະຊຸມສານ;

7) ສະເໜີຄ້ານຕົວຜູ້ດຳເນີນຄະດີອາຍາຕາມທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ແລະ ຜູ້ແປພາສາ;

8) ຮ້ອງຟ້ອງຕໍ່ການກະທຳ ຫຼື ຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ຫຼື ສານທີ່ຕົນເຫັນວ່າບໍ່ຖືກຕ້ອງ;

9) ຂໍອຸທອນ, ຂໍລົບລ້າງຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ, ຄຳຕົກລົງຂອງສານ;

10) ຕົກລົງໄກ່ເກ່ຍກັບຜູ້ຖືກຫາ ຫຼື ຈຳເລີຍໃນຄະດີທີ່ການກະທຳຜິດບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ;

11) ເອົາທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນການຕໍ່ສູ້ຄະດີ;

12) ຖອນຄຳຮ້ອງຟ້ອງ.

ໃນກໍລະນີທີ່ຜູ້ຖືກເສຍຫາຍຫາກໄດ້ເສຍຊີວິດ ຍາດພີ່ນ້ອງທີ່ໃກ້ຊິດຂອງຜູ້ກ່ຽວຈະເປັນຜູ້ໃຊ້ສິດແທນຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້.

**ຂ. ພັນທະຂອງຜູ້ຖືກເສຍຫາຍ ແລະ ໂຈດທາງແພ່ງ**

1) ເຂົ້າມາສະເໜີຕົວຕາມໝາຍຮຽກ, ຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ສານ;

2) ຮັບຜິດຊອບຕໍ່ການປະຕິເສດບໍ່ຍອມໃຫ້ການ ຫຼື ຕໍ່ຄຳໃຫ້ການເທັດຂອງຕົນ.

ຜູ້ດຳເນີນຄະດີຕ້ອງບອກໃຫ້ພວກກ່ຽວຮູ້ເຖິງຄວາມຮັບຜິດຊອບຕໍ່ການປະຕິເສດບໍ່ຍອມໃຫ້ການ ຫຼື ຕໍ່ຄຳໃຫ້ການບໍ່ຖືກຕ້ອງຕາມຄວາມຈິງ ຊຶ່ງຈະມີຄວາມຮັບຜິດຊອບທາງອາຍາໃນສະຖານການໃຫ້ການເທັດ (ມ 164 ກອຍ).

ການເອົາຄຳໃຫ້ການໂຈດທາງແພ່ງ ແມ່ນ ການເອົາຂໍ້ມູນນຳບຸກຄົນທີ່ຮ້ອງຟ້ອງທາງແພ່ງຕໍ່ຜູ້ຖືກຫາ ຫຼື ຈຳເລີຍ ຫຼື ຕໍ່ຜູ້ຮັບຜິດຊອບທາງແພ່ງເພື່ອໃຫ້ໃຊ້ແທນແກ່ຕົນ, ໂດຍໃຫ້ຖາມຄວາມຕ້ອງການທີ່ແທ້ຈິງ ແລະ ໃຫ້ສອດຄ່ອງກັບຄວາມເສັຍຫາຍຕົວຈິງ.

### 1.1.3. ການເອົາຄຳໃຫ້ການເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ, ຕາບອດ, ປາກກືກ, ປັນຍາອ່ອນ, ເສັຍຈິດ

ການເອົາຄຳໃຫ້ການຂອງເດັກທີ່ມີອາຍຸຕ່ຳກວ່າສິບແປດປີ, ຄົນຫູໜວກ, ຕາບອດ, ປາກກືກ ແລະ ຄົນປັນຍາອ່ອນ, ເສັຍຈິດ ແມ່ນ ການເອົາຂໍ້ມູນ ຫຼື ເອົາຄຳໃຫ້ການເພື່ອຊອກຫາຂໍ້ມູນ, ຊຶ່ງບຸກຄົນທີ່ກ່າວມານັ້ນໄດ້ເຫັນ, ໄດ້ຍິນ, ໄດ້ຟັງກ່ຽວກັບເຫດການທີ່ເກີດຂຶ້ນນັ້ນ, ແຕ່ເນື່ອງຈາກວ່າບຸກຄົນດັ່ງກ່າວເປັນບຸກຄົນທີ່ມີຄວາມສາມາດທາງດ້ານການປະພຶດບໍ່ເຕັມສ່ວນການເອົາຄຳໃຫ້ການຈຶ່ງມີຄວາມຈຳເປັນຕ້ອງເຊີນພໍ່ແມ່, ຜູ້ປົກຄອງ, ຄູ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຕາມກົດໝາຍເຂົ້າຮ່ວມນຳ. ສະນັ້ນ, ຈຶ່ງເວົ້າໄດ້ວ່າຄຳໃຫ້ການຂອງພວກກ່ຽວນັ້ນແມ່ນໃຊ້ເປັນພຽງຂໍ້ມູນເທົ່ານັ້ນແຕ່ບໍ່ໃຫ້ຖືວ່າໃຫ້ການໃນຖານະເປັນພະຍານ (ມ 70 ກດຍ).

**ກ. ການສຳພາດເດັກທີ່ເປັນຜູ້ຖືກເຄາະຮ້າຍ ຫຼື ເປັນພະຍານ**

ຄະດີທີ່ມີເດັກເປັນຜູ້ຖືກເຄາະຮ້າຍ ຫຼື ເປັນພະຍານຕ້ອງແມ່ນເຈົ້າໜ້າທີ່ຂອງອົງການສືບສວນ-ສອບສວນ ແລະ ພະນັກງານໄອຍະການທີ່ໄດ້ຜ່ານການຝຶກອົບຮົມສະເພາະເປັນຜູ້ສຳພາດໂດຍປະສານສົມທົບກັບນັກສັງຄົມສົງເຄາະ;

ໃນການສຳພາດນັ້ນອົງການສືບສວນ-ສອບສວນ ແລະ ອົງການໄອຍະການຕ້ອງປະຕິບັດດັ່ງນີ້:

1) ມີວິທີການທີ່ນິ້ມນວນ ແລະ ເປັນມິດຕໍ່ເດັກທີ່ເປັນຜູ້ຖືກເຄາະຮ້າຍ ຫຼື ເປັນພະຍານ;

2) ໃຫ້ພໍ່, ແມ່, ຜູ້ປົກຄອງ ຫຼື ຜູ້ປົກປ້ອງເຂົ້າຮ່ວມກັບເດັກທຸກຄັ້ງໃນເວລາສຳພາດ;

3) ໃຫ້ມີຫ້ອງສຳພາດເດັກສະເພາະໂດຍປາສະຈາກການລົບກວນ;

4) ຖາມເດັກດ້ວຍຄຳເວົ້າທີ່ເຂົ້າໃຈງ່າຍ ແລະ ເໝາະສົມກັບອາຍຸ ແລະ ຄວາມສາມາດຂອງເດັກໃນການຈຳແນກຄວາມຖືກຜິດ;

5) ມີວິທີການທີ່ເໝາະສົມເພື່ອບໍ່ໃຫ້ເດັກມີການຕິດຕໍ່ພົວພັນກັບຜູ້ຖືກຫາ ຫຼື ຈຳເລີຍໃນໄລຍະເວລາທີ່ສຳພາດ.

**ຂ. ຫຼັກການສືບສວນ-ສອບຖາມເດັກກະທຳຜິດ**

ໃນການດຳເນີນຄະດີອາຍາຕໍ່ເດັກອົງການສືບສວນ-ສອບສວນຕ້ອງນຳໃຊ້ວິທີການສືບສວນ-ສອບຖາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ຕ້ອງປະຕິບັດຕາມຫຼັກການດັ່ງນີ້:

1) ການສືບສວນ-ສອບຖາມເດັກຕ້ອງດຳເນີນໄປຢ່າງນິ້ມນວນ ແລະ ເໝາະສົມຕໍ່ເດັກໂດຍອີງຕາມໄວອາຍຸ ແລະ ຄວາມສາມາດຂອງເດັກໃນການຈຳແນກຄວາມຖືກຜິດ;

2) ພໍ່ແມ່, ຜູ່ປົກຄອງ ຫຼື ຜູ່ປົກປ້ອງອື່ນຕ້ອງເຂົ້າຮ່ວມຕະຫຼອດການສືບສວນ-ສອບຖາມ ແລະ ການເອົາຄຳໃຫ້ການຂອງເດັກ, ພໍ່ແມ່, ຜູ່ປົກຄອງ ຫຼື ຜູ່ປົກປ້ອງອື່ນບໍ່ມີສິດໃຫ້ການແທນເດັກແຕ່ມີສິດສະເໜີບັນຫາທີ່ຕົນເຫັນວ່າບໍ່ເໝາະສົມ;

3) ການເອົາຄຳໃຫ້ການຂອງເດັກຕ້ອງດຳເນີນຢູ່ໃນຫ້ອງສະເພາະດ້ວຍວິທີການເປີດເຜີຍໂດຍປາສະຈາກການບັງຄັບ ຫຼື ການນາບຂູ່ເດັກ, ຫຼີກລ້ຽງການໃຊ້ຄຳເວົ້າທີ່ເປັນການແຕະຕ້ອງເຖິງກຽດສັກສີ ແລະ ຈິດໃຈຂອງເດັກ;

4) ການສືບສວນ-ສອບຖາມເດັກແຕ່ລະຄັ້ງບໍ່ໃຫ້ໃຊ້ເວລາເກີນເກົ້າສິບນາທີ;

5) ການສືບສວນ-ສອບຖາມໃນຄະດີເດັກຕ້ອງໃຫ້ສຳເລັດພາຍໃນສາມສິບວັນ ແລະ ສາມາດຕໍ່ໄດ້ເທື່ອລະສາມສິບວັນໂດຍການຕົກລົງຂອງຫົວໜ້າອົງການໄອຍະການ (ມ 59 ກປດ).

**1.1.4. ການເອົາຄຳໃຫ້ການຂອງພະຍານ**

ການເອົາຄຳໃຫ້ການຂອງພະຍານ ແມ່ນການເອົາຄຳໃຫ້ການຂອງຜູ່ທີ່ໄດ້ຮູ້ເຫັນເຫດການ ຫຼື ສະພາບຂອງຄະດີທີ່ເກີດຂຶ້ນ, ກ່ອນຈະເອົາຄຳໃຫ້ການຂອງພະຍານເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງໄດ້ແຈ້ງໃຫ້ຜູ່ກ່ຽວຊາບກ່ຽວກັບສິດ ແລະ ພັນທະດັ່ງນີ້:

**ກ. ສິດຂອງພະຍານ**

1) ໃຫ້ການ;

2) ເບິ່ງບົດບັນທຶກຄຳໃຫ້ການຂອງຕົນໃນຂັ້ນສືບສວນ-ສອບສວນ;

3) ສະເໜີປັບປຸງແປງ ຫຼື ເພີ່ມເຕີມບົດບັນທຶກຄຳໃຫ້ການຂອງຕົນ;

4) ຮ້ອງຟ້ອງຕໍ່ການກະທຳ ຫຼື ການອອກຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ຫຼື ສານທີ່ຕົນເຫັນວ່າບໍ່ຖືກຕ້ອງ;

5) ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ຊັບສິນ ຫຼື ຈິດໃຈຍ້ອນການໃຫ້ການຂອງຕົນ;

**ຂ. ພັນທະຂອງພະຍານ**

ພະຍານມີພັນທະຄືກັນກັບພັນທະຂອງຜູ້ຖືກເສຍຫາຍ ແລະ ໂຈດທາງແພ່ງ (ມ 67 ວັກທ້າຍ ກດຍ).

ຕາມມາດຕາ 70 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດວ່າພະຍານ ແມ່ນ ບຸກຄົນທີ່ໄດ້ຮູ້ເຫດການຂອງການກະທຳຜິດ ຫຼື ສະພາບຂອງຄະດີ. ສະນັ້ນ, ພັນທະຂອງພະຍານທີ່ປະຕິເສດບໍ່ຍອມໃຫ້ການ ຫຼື ໃຫ້ການເທັດຈະມີຄວາມຮັບຜິດຊອບທາງອາຍາ, ສ່ວນການປະຕິເສດ ຫຼື ບໍ່ຮັບສາລະພາບກ່ຽວກັບການກະທຳຜິດຂອງຜູ້ຖືກຫາຈະບໍ່ມີຜົນສະທ້ອນ (ມ 164 ກອຍ) ເພາະວ່າຖ້າມີຫຼັກຖານທີ່ໜັກແໜ້ນແລ້ວກໍຈະຖືວ່າເປັນຜູ້ກະທຳຜິດ (ມ 44 ກດຍ).

ການເອົາຄຳໃຫ້ການພະຍານຫຼາຍຄົນໃຫ້ດຳເນີນໄປເທື່ອລະຄົນ ແລະ ໃຫ້ແຍກພວກກ່ຽວຢູ່ແຕ່ລະບ່ອນພ້ອມທັງບໍ່ອະນຸຍາດໃຫ້ພວກກ່ຽວສົນທະນາກັນ;

**1.1.5. ການເອົາຄຳໃຫ້ການຂອງບຸກຄົນທີ່ບໍ່ຮູ້ພາສາລາວ**

ການດຳເນີນຄະດີອາຍາຕ້ອງໃຊ້ພາສາລາວ. ຜູ້ເຂົ້າຮ່ວມໃນການດຳເນີນຄະດີທີ່ບໍ່ຮູ້ພາສາລາວມີສິດນຳໃຊ້ພາສາຕົນເອງ ຫຼື ພາສາອື່ນໂດຍຜ່ານການແປພາສາ. ບຸກຄົນທີ່ກ່າວມານັ້ນອາດແມ່ນພົນລະເມືອງລາວ, ຊົນເຜົ່າ, ຄົນບໍ່ມີສັນຊາດ, ຄົນຕ່າງດ້າວ ແລະ ຄົນຕ່າງປະເທດທີ່ບໍ່ຮູ້ພາສາລາວການເອົາຄຳໃຫ້ການຂອງພວກກ່ຽວຕ້ອງມີຜູ້ແປພາສາ. ດັ່ງນັ້ນ, ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງໄດ້ສະເໜີແຕ່ງຕັ້ງຜູ້ແປພາສາເຂົ້າຮ່ວມໃນການເອົາຄຳໃຫ້ການເພື່ອແປພາສານັ້ນມາເປັນພາສາລາວ (ມ 20 ກດຍ).

**1.1.6. ບົດບັນທຶກການສືບສວນ-ສອບສວນ**

ໃນການດຳເນີນການສືບສວນ-ສອບສວນຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອະຍະການຕ້ອງເຮັດບົດບັນທຶກຢ່າງຖືກຕ້ອງ;

ເນື້ອໃນບົດບັນທຶກຄຳໃຫ້ການມີດັ່ງນີ້:

1) ວັນທີ, ເດືອນ, ປີ ແລະ ສະຖານທີ່ດຳເນີນການສືບສວນ-ສອບສວນ, ເວລາເລີ່ມຕົ້ນ ແລະ ສິ້ນສຸດການສືບສວນ-ສອບສວນ;

2) ຊື່ ແລະ ນາມສະກຸນ, ຕຳແໜ່ງ, ໜ້າທີ່, ບ່ອນປະຈຳການຂອງເຈົ້າໜ້າທີ່ ແລະ ຜູ້ບັນທຶກໃນກໍລະນີທີ່ເຈົ້າໜ້າທີ່ເຂົ້າຮ່ວມຫຼາຍຄົນກໍຕ້ອງບອກຊື່ ແລະ ນາມສະກຸນ, ຕຳແໜ່ງ, ໜ້າທີ່ ແລະ ບ່ອນປະຈຳການຂອງແຕ່ລະຄົນ;

3) ຊື່ ແລະ ນາມສະກຸນ, ອາຍຸ, ສັນຊາດ, ອາຊີບ, ທີ່ຢູ່ຂອງຜູ້ເຂົ້າຮ່ວມໃນການດໍາເນີນຄະດີແຕ່ລະຄົນ, ສໍາລັບຜູ້ຖືກສົງໄສ, ຜູ້ຖືກຫາ, ຈໍາເລີຍ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງນັ້ນໃຫ້ເອົາຊີວະປະຫວັດຂອງແຕ່ລະຄົນ;

4) ຂໍ້ກ່າວຫາ;

5) ເນື້ອໃນຂອງການສືບສວນ-ສອບສວນ (ຄໍາໃຫ້ການ, ຜົນການສອບຖາມຊ້ອງໜ້າ, ການຊັນນະສູດ, ການທົດສອບຂໍ້ມູນຄືນໃໝ່, ການຊີ້ຕົວ, ການຢັ້ງຢືນ, ການກວດຄົ້ນ ແລະ ການຍຶດ ຫຼື ອາຍັດຊັບ);

6) ຮູບຖ່າຍ, ພາບ ຫຼື ສຽງບັນທຶກ, ຮອຍມື, ຮອຍຕີນ, ຄາບເລືອດ ແລະ ວັດຖຸອື່ນຖ້າຫາກມີ.

ພາຍຫຼັງທີ່ໄດ້ເຮັດບົດບັນທຶກການສືບສວນ-ສອບສວນແລ້ວຕ້ອງໃຫ້ຜູ້ກ່ຽວອ່ານເອງ ຫຼື ອ່ານໃຫ້ຜູ້ກ່ຽວຟັງພ້ອມທັງຖາມຄໍາເຫັນຂອງຜູ້ກ່ຽວແລ້ວຈຶ່ງລົງລາຍເຊັນ ແລະ ແປະໂປ້ມືໃສ່;

ຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການບໍ່ອະນຸຍາດໃຫ້ເພີ່ມເຕີມ, ຕັດອອກ ຫຼື ປ່ຽນແປງບົດບັນທຶກ;

ຖ້າຫາກມີການຂີດຂ້າ ຫຼື ເພີ່ມເຕີມບົດບັນທຶກການສືບສວນ-ສອບສວນແລ້ວໃຫ້ລົງລາຍເຊັນຢັ້ງຢືນ, ສ່ວນຜູ້ຖືກຫານັ້ນຍັງຕ້ອງແປະໂປ້ມືໃສ່ຕໍ່ໜ້າແຖວບ່ອນມີການຂີດຂ້າ ຫຼື ເພີ່ມເຕີມນັ້ນ;

ຖ້າບົດບັນທຶກການສືບສວນ-ສອບສວນຫາກມີຫຼາຍກວ່າໜຶ່ງໜ້າເຈັ້ຍໃຫ້ຜູ້ຖືກສອບສວນເຊັນ ແລະ ແປະໂປ້ມືຢັ້ງຢືນໃນແຕ່ລະໜ້າເຈັ້ຍ;

ໃນກໍລະນີທີ່ຜູ້ເຂົ້າຮ່ວມຫາກບໍ່ຍອມລົງລາຍເຊັນ ແລະ ແປະໂປ້ມືໃສ່ບົດບັນທຶກການສືບສວນ-ສອບສວນໃຫ້ໝາຍເຫດໄວ້ໃນຕອນທ້າຍຂອງບົດບັນທຶກແລ້ວລົງລາຍເຊັນຢັ້ງຢືນໄວ້;

ບົດບັນທຶກການສືບສວນ-ສອບສວນໃຫ້ເຮັດເປັນສາມສະບັບ, ສະບັບໜຶ່ງປະກອບໃສ່ສໍານວນຄະດີ, ອີກໜຶ່ງສະບັບໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນທີ່ກ່ຽວຂ້ອງເກັບມ້ຽນໄວ້ ແລະ ໜຶ່ງສະບັບມອບໃຫ້ຜູ້ໃຫ້ການ;

**ຕົວຢ່າງ: ແບບພິມບົດບັນທຶກຄຳໃຫ້ການຜູ້ຖືກຫາ ຢູ່ຂັ້ນອົງການສືບສວນ-ສອບສວນ ນະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກອງບັນຊາການ ປກສ.................

ກອງ/ໜ່ວຍງານ ສືບສວນ-ສອບສວນຄະດີອາຍາ

**ຈົດໝາຍບັນທຶກຄຳໃຫ້ການ**

– ທີ່ທຳການສອບສວນ ປກສ......................ວັນທີ...../...../......ເວລາ......ໂມງ.....ນາທີ;

– ພະນັກງານສອບສວນ ທ່ານ ............................., ຊັ້ນ........., ໜ້າທີ່ຮັບຜິດຊອບ ................, ສັງກັດຢູ່ ປກສ........................., ພ້ອມດ້ວຍ ທ່ານ...................... ......................., ຊັ້ນ............................., ໜ້າທີ່ຮັບຜິດຊອບ......................... ............, ສັງກັດຢູ່ ປກສ........................

– ຊື່ ແລະ ນາມສະກຸນ ຜູ້ໃຫ້ການ ທ້າວ ຫຼື ນາງ..............................., ວັນທີ, ເດືອນ, ປີເກີດ......................., ອາຍຸ............ປີ, ອາຊີບ.....................ເຊື້ອຊາດ................., ສັນຊາດ..............., ສາສະໜາ..........., ລະດັບວັດທະນະທຳ............, ລະດັບວິຊາສະເພາະ .............., ເລກບັດປະຈຳຕົວ................., ໜັງສືຜ່ານແດນເລກທີ..........................., ເບີໂທຕິດຕໍ່..........................., ບ້ານເກີດ........................, ເມືອງ.................... ແຂວງ /ນະຄອນ..............;

ປັດຈຸບັນພັກເຊົາຢູ່ບ້ານ.................., ໜ່ວຍ..........., ເມືອງ................. ແຂວງ/ນະຄອນ.......................;

– ຊື່ ແລະ ນາມສະກຸນ ພໍ່ຕົວ ຫຼື ພໍ່ນ້າ................................................, ອາຍຸ ...........ປີ, ອາຊີບ..........................., ຢູ່ບ້ານ................., ໜ່ວຍ.............., ເມືອງ .....................ແຂວງ/ນະຄອນ..................;

– ຊື່ ແລະ ນາມສະກຸນ ແມ່ຄີງ ຫຼື ແມ່ນ້ຳ..............................................., ອາຍຸ ............ປີ, ອາຊີບ............................, ຢູ່ບ້ານ................., ໜ່ວຍ............., ເມືອງ .....................ແຂວງ/ນະຄອນ..................;

– ຊື່ ແລະ ນາມສະກຸນຜົວ ຫຼື ເມັຍ.............................. , ອາຍຸ............ປີ, ອາຊີບ ................, ຢູ່ບ້ານ.................., ໜ່ວຍ.............., ເມືອງ...................ແຂວງ/ ນະຄອນ..................;

– ວັນທີ, ເດືອນ, ປີ ກັກຕົວ............................., ສະຖານການກະທຳຜິດ............. ;

– ຜ່ານມາເຄີຍຕ້ອງໂທດ...............ຄັ້ງ, ຂໍ້ຫາຫຍັງ, ດົນປານໃດ, ຖືກສານຕັດສິນ ຫຼື ບໍ່ .........................................................................................................................

– ອ້າຍເອື້ອຍນ້ອງຄີງມີຈັກຄົນ..............., ຊື່ຫຍັງ, ອາຊີບຫຍັງ, ຢູ່ໃສ ...... .............................................................................................................................

– ຂ້າພະເຈົ້າເອງຂໍໃຫ້ການຕາມຄວາມເປັນຈິງ ຕໍ່ເຈົ້າໜ້າທີ່ວ່າ.................................. ............................................................................................................................. ...................................ສິ້ນສຸດຄຳໃຫ້ການເວລາ.................ໂມງ............ນາທີ, ໂດຍເຈົ້າໜ້າທີ່ພວກເຮົາບໍ່ໄດ້ບັງຄັບ, ນາບຂູ່ ແລະ ທຸບຕີທໍລະມານ ແຕ່ປະການໃດ. ທຸກຄຳເວົ້າລ້ວນແຕ່ໄດ້ອ່ານໃຫ້ຟັງ, ເຫັນວ່າຖືກຕ້ອງຕາມຄວາມຈິງ ຈຶ່ງໄດ້ລົງລາຍເຊັນໄວ້ ເພື່ອເປັນຫຼັກຖານ.

| **ພະນັກງານສອບສວນ** | **ພະນັກງານເຂົ້າຮ່ວມ** | **ຜູ່ບັນທຶກ** | **ຜູ່ໃຫ້ການ** |
|---|---|---|---|
| | | | **ເຊັນ ແລະ ແປະໂປ້** |

**ຕົວຢ່າງ: ແບບພິມບົດບັນທຶກຄຳໃຫ້ການຜູ້ຖືກຫາ ຢູ່ຂັ້ນອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ.............................. ເລກທີ………/ອຍກ…….

ອົງການໄອຍະການປະຊາຊົນ ລົງວັນທີ……/……/……..

## ບົດບັນທຶກຄຳໃຫ້ການຜູ້ຖືກຫາ
## ໃຫ້ການຄັ້ງທີ .........

ທີ່............................ວັນທີ...../...../......ເວລາ.......ໂມງ, ຕອນ .................... ທ່ານ ............................ ພະນັກງານໄອຍະການ, ຕຳແໜ່ງ ................................ ຂອງອົງການໄອຍະການປະຊາຊົນ................

ນັ່ງພ້ອມດ້ວຍທ່ານ ........................ ພະນັກງານ..............ຕຳແໜ່ງ.............. ເປັນຜູ້ເຂົ້າຮ່ວມ ແລະ ທ່ານ..........ພະນັກງານ ....................ຕຳແໜ່ງ.................... ເປັນຜູ້ບັນທຶກເອົາຄຳໃຫ້ການຂອງ ທ້າວ ຫຼື ນາງ .................................., ອາຍຸ ....... ປີ, ອາຊີບ ......................, ສັນຊາດ............, ເຊື້ອຊາດ................,ຢູ່ບ້ານ .................., ໜ່ວຍ ..........., ເມືອງ .........................., ແຂວງ ......................, ໃນຖານະເປັນຜູ້ຖືກຫາໃນຄະດີອາຍາສະບັບເລກທີ .............../ອຍກ......., ລົງວັນທີ ......................, ເບີໂທລະສັບ: ....................

ເນື້ອໃນຄຳໃຫ້ການລະອຽດ

ຖາມ/ຕອບ: ..............................................................................................
.......................................................................................................................

ຖາມ/ຕອບ: ..............................................................................................
.......................................................................................................................

ການເອົາຄຳໃຫ້ການຜູ້ຖືກຫາໄດ້ສິ້ນສຸດລົງໃນເວລາ ........... ໂມງ, ຕອນ....... ຂອງວັນທີ......../....../........ແລະ ໄດ້ອ່ານບົດບັນທຶກຄຳໃຫ້ການສະບັບນີ້ໃຫ້ຜູ້ຖືກຫາ ແລະ ຜູ້ເຂົ້າຮ່ວມຟັງແລ້ວເຫັນວ່າຖືກຕ້ອງໂດຍປາສະຈາກການບັງຄັບ, ນາບຂູ່, ທຸບຕີທໍລະມານ ແລະ ຕົວະຍົວະ ຫຼອກລວງ ຈຶ່ງພ້ອມກັນລົງລາຍເຊັນ ແລະ ແປະໂປ້ມືໄວ້ເປັນຫຼັກຖານ.

**ພະນັກງານໄອຍະການ ຜູ້ເຂົ້າຮ່ວມ ຜູ້ບັນທຶກ ຜູ້ໃຫ້ການ**

### 1.2. ການສອບຖາມຊ້ອງໜ້າ

ການເອົາຄຳໃຫ້ການຊ້ອງໜ້າ ແມ່ນການເອົາຄຳໃຫ້ການຂອງຜູ້ຖືກສອບຖາມທີ່ເຄີຍໄດ້ໃຫ້ການມາກ່ອນແລ້ວແຕ່ຄຳໃຫ້ການນັ້ນມີລັກສະນະຂັດແຍ່ງກັນ[13];

ເມື່ອຄຳໃຫ້ການຫາກບໍ່ກົງກັນຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ, ພະນັກງານໄອຍະການມີສິດທຳການສອບຖາມຊ້ອງໜ້າລະຫວ່າງຜູ້ໃຫ້ການດ້ວຍກັນແຕ່ການສອບຖາມຊ້ອງໜ້າແຕ່ລະເທື່ອນັ້ນບໍ່ໃຫ້ເກີນສອງຄົນ;

ກ່ອນທຳການສອບຖາມຊ້ອງໜ້າຕ້ອງແຈ້ງໃຫ້ຜູ້ເຂົ້າຮ່ວມນັ້ນຊາບກ່ຽວກັບຄວາມຮັບຜິດຊອບໃນການປະຕິເສດ ຫຼື ການໃຫ້ການເທັດ, ການແຈ້ງສິດ ແລະ ພັນທະຕ້ອງບົ່ງໄວ້ໃນບົດບັນທຶກການສອບຖາມຊ້ອງໜ້າ;

ກ່ອນເລີ່ມຕົ້ນການຊ້ອງໜ້າຕ້ອງສອບຖາມກ່ຽວກັບສາຍພົວພັນລະຫວ່າງຜູ້ເຂົ້າຮ່ວມການສອບຖາມຊ້ອງໜ້າດ້ວຍກັນ ແລະ ຕ້ອງແຈ້ງບັນຫາທີ່ຕ້ອງການຄວາມກະຈ່າງແຈ້ງໃຫ້ກັນຊາບ;

ພາຍຫຼັງທີ່ໄດ້ຮັບຟັງຄຳໃຫ້ການແລ້ວອາດຈະສືບຕໍ່ສອບຖາມຜູ້ເຂົ້າຮ່ວມແຕ່ລະຄົນ ແລະ ບັນທຶກໄວ້ໃນບົດບັນທຶກຕາມທີ່ກຳນົດໄວ້ໃນມາດຕາ 100 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012;

ການສອບຖາມຊ້ອງໜ້ານີ້ເປັນການສ້າງເງື່ອນໄຂໃຫ້ອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານໄດ້ຢ່າງລະອຽດ, ຖືກຕ້ອງກັບຄວາມເປັນຈິງຂອງເຫດການໃນຄະດີພ້ອມກັນນັ້ນກໍຍັງສ້າງເງື່ອນໄຂໃຫ້ແກ່ການຕີລາຄາທັດສະນະຂອງຜູ້ໃຫ້ການອີກດ້ວຍ.

ການສອບຖາມຊ້ອງໜ້າຕ້ອງປະຕິບັດບົນພື້ນຖານຄວາມສະເໝີພາບຂອງພົນລະເມືອງທຸກຄົນຕໍ່ໜ້າກົດໝາຍ ແລະ ສານໂດຍບໍ່ຈຳແນກເພດ, ເຊື້ອຊາດ, ສັນຊາດ, ເຜົ່າ,

[13] ວຽງວິໄລ ທ່ຽງຈັນໄຊ, ການດຳເນີນຄະດີອາຍາ (ສະບັບປັບປຸງ), ພິມຄັ້ງທີ II, ປີ 2005. ໜ້າ 73

ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລໍາເນົາ ແລະ ອື່ນໆ;

ອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ສານຕ້ອງສ້າງເງື່ອນໄຂໃຫ້ຜູ້ຖືກສົງໄສ, ຜູ້ຖືກຫາ, ຈໍາເລີຍ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງໄດ້ນໍາໃຊ້ສິດຕາມກົດໝາຍເພື່ອຮັບປະກັນໃນການດໍາເນີນຄະດີອາຍາຖືກຕ້ອງຕາມຄວາມເປັນຈິງ ແລະ ພາວະວິໄສ (ມ 13 ກດຍ);

**ກ. ການສອບຖາມຊ້ອງໜ້າໃນກໍລະນີທີ່ຄໍາໃຫ້ການບໍ່ກົງກັນລະຫວ່າງບຸກຄົນດັ່ງນີ້:**

- ຜູ້ຖືກຫາກັບຜູ້ຖືກຫາດ້ວຍກັນ;
- ຜູ້ຖືກຫາກັບຜູ້ຖືກເສຍຫາຍ;
- ພະຍານກັບພະຍານດ້ວຍກັນ;
- ພະຍານກັບຜູ້ຖືກເສຍຫາຍ;
- ຜູ້ຖືກເສຍຫາຍກັບຜູ້ຖືກເສຍຫາຍດ້ວຍກັນ;

**ຂ. ການຊ້ອງໜ້າທີ່ບໍ່ຈໍາເປັນເຮັດຂຶ້ນລະຫວ່າງບຸກຄົນດັ່ງນີ້:**

- ໂຈດທາງແພ່ງກັບຜູ້ຮັບຜິດຊອບທາງແພ່ງ;
- ຜູ້ຖືກເສຍຫາຍກັບຜູ້ຮັບຜິດຊອບທາງແພ່ງ;

### 1.3. ການຊັນນະສູດສະຖານທີ່ເກີດເຫດ

ການຊັນນະສູດສະຖານທີ່ເກີດເຫດ ແມ່ນການຊອກຫາຮ່ອງຮອຍຂອງການກະທໍາຜິດ ແລະ ຫຼັກຖານຕ່າງໆເປັນຕົ້ນແມ່ນຫຼັກຖານທາງດ້ານວັດຖຸເພື່ອແນໃສ່ເຮັດໃຫ້ສະພາບຂອງການກະທໍາຜິດໄດ້ແຈ້ງຂາວຂຶ້ນ, ການຊັນນະສູດສະຖານທີ່ເກີດເຫດຈະເຮັດຂຶ້ນກ່ອນ ຫຼື ຫຼັງການເປີດການສືບສວນ-ສອບສວນກໍໄດ້, ຕົວຢ່າງ ໃນກໍລະນີທີ່ເຈົ້າໜ້າທີ່ໄດ້ຮັບລາຍງານກ່ຽວກັບອຸບປະຕິເຫດ ຫຼື ມີການແຈ້ງກ່ຽວກັບການຄາດຕະກໍາ (ຂ້າກັນຕາຍ)[14].

ຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການຕ້ອງໄດ້ທໍາການຊັນນະສູດສະຖານທີ່ເກີດເຫດເກັບກໍາເອົາວັດຖຸສິ່ງຂອງ, ເອກະສານ ແລະ ອື່ນໆທີ່ພົວພັນກັບການກະທໍາຜິດ;

ການຊັນນະສູດສະຖານທີ່ເກີດເຫດຕ້ອງໄດ້ດໍາເນີນຕອນກາງເວັນໂດຍເລີ່ມແຕ່ຫົກໂມງເຊົ້າຫາສິບແປດໂມງແລງເວັ້ນເສຍແຕ່ໃນກໍລະນີທີ່ຈໍາເປັນ ແລະ ຮີບດ່ວນເທົ່ານັ້ນ, ກໍລະນີທີ່ຮອດສິບແປດໂມງແລ້ວແຕ່ການຊັນນະສູດສະຖານທີ່ເກີດເຫດນັ້ນຫາກຍັງບໍ່ທັນສໍາເລັດກໍໃຫ້ສືບຕໍ່ໄປຈົນກວ່າສໍາເລັດ;

---

[14] ວຽງວິໄລ ທ່ຽງຈັນໄຊ, ການດໍາເນີນຄະດີອາຍາ, ພິມຄັ້ງທີ II, ປີ 2005, ໜ້າ 73

ໃນເວລາຊັນນະສູດສະຖານທີ່ເກີດເຫດນັ້ນຕ້ອງໃຫ້ມີພະຍານຢ່າງໜ້ອຍສອງຄົນເຂົ້າຮ່ວມນຳໃນກໍລະນີທີ່ມີຄວາມຈຳເປັນຕ້ອງເຊີນພະນັກງານໄອຍະການເພື່ອເຂົ້າຮ່ວມຕິດຕາມກວດກາ ແລະ ຜູ່ຕາງໜ້າອົງການປົກຄອງບ້ານເຂົ້າຮ່ວມນຳອີກດ້ວຍ (ມ 129 ກດຍ) ເຊັ່ນ ຄະດີຄາດຕະກຳ, ການລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດມີຜູ່ເສັຍຊີວິດຫຼາຍຄົນ, ໄຟໄໝ້ ແລະ ອື່ນໆ. ໃນການຊັນນະສູດສະຖານທີ່ເກີດເຫດປະຕິບັດຕາມສອງບາດກ້າວດັ່ງນີ້:

**ກ. ບາດກ້າວປ້ອງກັນສະຖານທີ່ເກີດເຫດ**

ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການເມື່ອໄດ້ຮັບແຈ້ງເຫດການກ່ຽວກັບການກະທຳຜິດທາງອາຍາແລ້ວຕ້ອງໄດ້ຖືອຸປະກອນ ແລະ ຫີບເຕັກນິກລົງໄປຍັງສະຖານທີ່ເກີດເຫດໂດຍດ່ວນເພື່ອສະກັດກັ້ນເຫດການທີ່ເກີດຂຶ້ນໄດ້ທັນກັບເວລາກ່ອນເຫດການດັ່ງກ່າວຈະລຸກລາມອອກໄປຊຶ່ງຈະພາໃຫ້ເກີດຄວາມເສັຍຫາຍຢ່າງຮ້າຍແຮງ ເຊັ່ນ ການຜິດຖຽງກັນກ່ອນທີ່ຈະເກີດເຫດການທຳຮ້າຍຮ່າງກາຍກັນຈົນເຖິງຂັ້ນເສັຍຊີວິດ ຫຼື ເກີດໄຟໄໝ້ເຫຼົ່ານີ້ເປັນຕົ້ນ.

ໃນກໍລະນີສະຖານທີ່ເກີດເຫດເປັນອາຄານ, ໃນເຮືອນ ຫຼື ຫ້ອງໃຫ້ກັນສະຖານທີ່ເກີດເຫດໂດຍການອັດປະຕູທາງເຂົ້າທຸກດ້ານ ຫຼື ອາດໃຊ້ເຊືອກກັນພື້ນທີ່ຊຶ່ງເປັນບໍລິເວນທີ່ເກີດເຫດ ເຊັ່ນ ພົບສົບຄົນຕາຍຢູ່ໃນຫ້ອງໃຫຍ່ອາດໃຊ້ໂຊຟາ, ໂຕະຕັ່ງ, ເຊືອກລ້ອມບໍລິເວນທີ່ພົບສົບນັ້ນກໍໄດ້.

ໃນກໍລະນີສະຖານທີ່ເກີດເຫດຢູ່ນອກອາຄານ ເຊັ່ນ ທາງຍ່າງ, ຖະໜົນບໍລິເວນເດີ່ນຫຍ້າ ຫຼື ໃນສວນສາທາລະນະໃຫ້ກັນພື້ນທີ່ບໍລິເວນເກີດເຫດໂດຍໃຊ້ເຊືອກອ້ອມບໍລິເວນທີ່ເກີດເຫດໄວ້, ຄວນກັນພື້ນທີ່ໃຫ້ກວ້າງຂວາງກວ່າບໍລິເວນທີ່ເກີດເຫດຕົວຈິງ, ເພາະຫຼັກຖານອາດຕົກຢູ່ຫ່າງຈາກຈຸດທີ່ເກີດເຫດ ເຊັ່ນ ລູກປືນ, ກະສອບລູກປືນ, ຫົວລູກປືນ, ຊິ້ນສ່ວນລະເບີດ ຫຼື ຊິ້ນສ່ວນລົດຍົນທີ່ຖືກຕຳກັນ.

ຫ້າມບຸກຄົນທີ່ບໍ່ມີໜ້າທີ່ກ່ຽວຂ້ອງເຂົ້າໃນສະຖານທີ່ເກີດເຫດ, ການອະນຸຍາດໃຫ້ເຂົ້າສະຖານທີ່ເກີດເຫດນັ້ນຄວນຈຳກັດໃຫ້ສະເພາະບຸກຄົນທີ່ມີໜ້າທີ່ກວດກາສະຖານທີ່ເກີດເຫດໂດຍສະເພາະເທົ່ານັ້ນ ແລະ ໃຫ້ມີຈຳນວນໜ້ອຍທີ່ສຸດ.

ໃນກໍລະນີພົບເຫັນຜູ່ໄດ້ຮັບບາດເຈັບໃນສະຖານທີ່ເກີດເຫດໃຫ້ຟ້າວນຳສົ່ງໄປໂຮງໝໍທີ່ຢູ່ໃກ້ຄຽງໂດຍດ່ວນເຖິງວ່າບາງຄັ້ງຫຼັກຖານອາດຖືກທຳລາຍ ຫຼື ເສັຍຫາຍໄປກໍຕາມໃຫ້ຖືວ່າຊີວິດຂອງຄົນມີຄວາມໝາຍສຳຄັນກວ່າ, ສ່ວນຜູ່ໄດ້ຮັບບາດເຈັບເລັກນ້ອຍໃຫ້ບັນທຶກສະພາບຜູ່ໄດ້ຮັບບາດເຈັບໄວ້ກ່ອນແລ້ວຈຶ່ງນຳສົ່ງໂຮງໝໍນຳຫຼັງ.

ຖ້າພົບເຫັນອາວຸດໃນສະຖານທີ່ເກີດເຫດຕ້ອງໄດ້ປ້ອງກັນ ແລະ ຮັກສາໃຫ້ຢູ່ໃນສະພາບເດີມ, ບໍ່ຄວນແຕະຕ້ອງ ແລະ ເຄື່ອນຍ້າຍຈາກສະພາບເດີມຈົນກວ່າຈະໄດ້ມີການກວດສອບຢ່າງລະອຽດຈາກຜູ່ຊ່ຽວຊານກ່ອນ, ແຕ່ກໍມີຂໍ້ຍົກເວັ້ນ ເຊັ່ນ ກະສອບລູກປືນຕົກໃນທີ່ສາທາລະນະທີ່ງ່າຍຕໍ່ການສູນເສັຍ ຫຼື ອາວຸດປືນຢູ່ໃນພື້ນທີ່ຊຶ່ງອາດຈະຕົກຢູ່ໃນບໍລິເວນດັ່ງກ່າວຕະຫຼອດຮອດລາຍນີ້ວມືຕິດຢູ່ປືນອາດສູນຫາຍຈຶ່ງຈໍາເປັນຕ້ອງເຄື່ອນຍ້າຍໃນກໍລະນີດັ່ງກ່າວຕ້ອງເຮັດບົດບັນທຶກສະພາບຂອງວັດຖຸດັ່ງກ່າວພ້ອມທັງແຕ້ມແຜນວາດ ຫຼື ຖ່າຍຮູບໃນທຸກມູມຂອງວັດຖຸດັ່ງກ່າວນັ້ນ.

**ຂ. ບາດກ້າວການເກັບກໍາຂໍ້ມູນຫຼັກຖານໃນເວລາຊັນນະສູດສະຖານທີ່ເກີດເຫດ**

ກ່ອນຈະເຂົ້າສະຖານທີ່ເກີດເຫດເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການ ແລະ ບຸກຄົນທີ່ກ່ຽວຂ້ອງໃນການກວດກາສະຖານທີ່ເກີດເຫດນັ້ນຕ້ອງມີຄວາມລະມັດລະວັງ ແລະ ປ້ອງກັນວັດຖຸສິ່ງຂອງຕ່າງໆເພື່ອບໍ່ໃຫ້ຮ່ອງຮອຍຫຼັກຖານຖືກທໍາລາຍ;

ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການຫາກພົບເຫັນວັດຖຸສິ່ງຂອງໃດໜຶ່ງໃນເວລາກວດກາສະຖານທີ່ເກີດເຫດນັ້ນກ່ອນຈະຈັບແຕ່ລະຢ່າງຂຶ້ນມາຕ້ອງໃສ່ຖົງມືປ້ອງກັນ ໂດຍສະເພາະແມ່ນຫຼັກຖານທາງດ້ານວັດຖຸທຸກອັນທີ່ເຫັນວ່າມີສ່ວນພົວພັນກັບການກະທໍາຜິດນັ້ນຕ້ອງຖ່າຍຮູບໄວ້ໃນໄລຍະໄກ ແລະ ໄລຍະໃກ້ເພື່ອຢັ້ງຢືນຕໍາແໜ່ງທີ່ພົບເຫັນ, ການຖ່າຍຮູບແຕ່ລະຄັ້ງຕ້ອງມີໄມ້ບັນທັດ ຫຼື ໄມ້ແມັດວາງກໍາກັບເພື່ອໃຫ້ຮູ້ຂະໜາດ ແລະ ລວງຍາວຂອງວັດຖຸນັ້ນ;

ຂອງກາງທີ່ເປັນວັດຖຸສິ່ງຂອງຕ້ອງໄດ້ຫຸ້ມຫໍ່, ຜູກມັດຕິດຄັ່ງ ແລະ ປະທັບຕາເກັບຮັກສາໄວ້ໃນສະຖານທີ່ທີ່ຮັບປະກັນ;

ຂອງກາງທີ່ເປັນເງິນກີບ, ເງິນຕາຕ່າງປະເທດ, ແຊັກ ຫຼື ພັນທະບັດອື່ນໆລວມທັງວັດຖຸມີຄ່ານັ້ນຕ້ອງນໍາໄປເກັບຮັກສາຝາກໄວ້ນໍາທະນາຄານ;

ຂອງກາງທີ່ເປັນສິ່ງບູດເໜົ່າ ຫຼື ເຊື່ອມຄຸນໄວນັ້ນຈະຕ້ອງຂາຍເພື່ອເອົາເງິນມາຝາກໄວ້ນໍາທະນາຄານ;

ການປົກປັກຮັກສາຂອງກາງແມ່ນສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ພະນັກງານໄອຍະການ. ບຸກຄົນຜູ່ໃດທີ່ມີໜ້າທີ່ຮັບຜິດຊອບ, ປົກປັກຮັກສາຊັບ ຫຼື ວັດຖຸສິ່ງຂອງທີ່ເປັນຂອງກາງນັ້ນຫາກໄດ້ຂາຍ, ຊຸກເຊື່ອງ, ເຈືອດຈໍາ, ນໍາໃຊ້, ສັບປ່ຽນ ຫຼື ໄດ້ເຮັດໃຫ້ຂອງກາງເສັຍຫາຍ ຫຼື ອື່ນໆໂດຍບໍ່ຖືກຕ້ອງຕາມກົດໝາຍຈະມີຄວາມຮັບຜິດຊອບທາງອາຍາ (ມ 168 ກອຍ).

### 1.4. ການຊັນນະສູດຊາກສົບ

ການຊັນນະສູດຊາກສົບ ແມ່ນການພິສູດ, ການຊອກຫາ ແລະ ການຄົ້ນຫາສາເຫດຂອງການເສັຍຊີວິດຂອງບຸກຄົນໃດໜຶ່ງໂດຍບໍ່ຮູ້ສາເຫດທີ່ແນ່ນອນຂອງການເສັຍຊີວິດ. ການຊັນນະສູດຊາກສົບຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການຕ້ອງເຮັດຂຶ້ນຢູ່ສະຖານທີ່ເກີດເຫດໂດຍໃຫ້ມີພະຍານຢ່າງໜ້ອຍສອງຄົນ, ນິຕິແພດ, ຜູ່ຊ່ຽວຊານ ຫຼື ຜູ່ຊໍານານງານທີ່ກ່ຽວຂ້ອງເຂົ້າຮ່ວມນໍາໃນກໍລະນີຈໍາເປັນກໍຕ້ອງເຊີນຜູ່ຕາງໜ້າອົງການປົກຄອງບ້ານບ່ອນເກີດເຫດເຂົ້າຮ່ວມນໍາອີກດ້ວຍ;

ກໍລະນີການຊັນນະສູດຫາກມີຄວາມຈໍາເປັນຕ້ອງຜ່າຊາກສົບເພື່ອພິສູດ ຫຼື ການຊັນນະສູດຊາກສົບທີ່ຝັງແລ້ວຕ້ອງມີຄໍາສັ່ງຈາກຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ, ມີນິຕິແພດເຂົ້າຮ່ວມ ແລະ ແຈ້ງໃຫ້ຄອບຄົວ ຫຼື ຍາດພີ່ນ້ອງຂອງຜູ່ຕາຍຊາບ, ໃນກໍລະນີຈໍາເປັນຕ້ອງເຊີນຜູ່ຊ່ຽວຊານ ຫຼື ຜູ່ຊໍານານງານ ແລະ ພະຍານເຂົ້າຮ່ວມນໍາ, ການຊັນນະສູດຊາກສົບຕ້ອງສະເໜີໃຫ້ຫົວໜ້າອົງການໄອຍະການຊາບເພື່ອເຂົ້າຮ່ວມ ແລະ ຕິດຕາມກວດກາ, ການຊັນນະສູດຊາກສົບສາມາດເຮັດຂຶ້ນໄດ້ໃນກໍລະນີການກວດກາຊາກສົບ ຫຼື ຜ່າສົບ ຫຼື ບາງກໍລະນີທັງກວດກາຊາກສົບ ແລະ ຜ່າສົບ;

ໃນການຊັນນະສູດຊາກສົບຫາກ ແມ່ນການຕາຍເປັນຜົນຈາກການກະທໍາຜິດທາງອາຍາ ຫຼື ການຕາຍໂດຍຜິດທໍາມະຊາດຈະຕ້ອງທໍາການພິສູດຕາມກໍລະນີດັ່ງນີ້:

**ກ. ການຕາຍຜິດທໍາມະຊາດໝາຍເຖິງ**

- ຂ້າຕົວຕາຍ;
- ຖືກຜູ່ອື່ນເຮັດໃຫ້ຕາຍ;
- ຖືກສັດທໍາຮ້າຍໃຫ້ຕາຍ;
- ຕາຍໂດຍອຸບປະຕິເຫດ;
- ຕາຍໂດຍບໍ່ຮູ້ສາເຫດ.

**ຂ. ການຊັນນະສູດຊາກສົບກໍລະນີປົກກະຕິ**

- ກໍລະນີການຕາຍໂດຍຜິດທໍາມະຊາດທີ່ເປັນຜົນມາຈາກການກະທໍາຜິດທາງອາຍາ;

**ຄ. ການຊັນນະສູດຊາກສົບກໍລະນີພິເສດ**

- ກໍລະນີການຕາຍໂດຍການຖືກວິສາມັນຄາດຕະກໍາໃນເວລາເຈົ້າໜ້າທີ່ປະຕິບັດໜ້າທີ່;

– ກໍລະນີການຕາຍຢູ່ໃນລະຫວ່າງການຄວບຄຸມຂອງເຈົ້າໜ້າທີ່ໃນເວລາປະຕິບັດໜ້າທີ່;

**1.5. ການກວດຄົ້ນ**

ການກວດຄົ້ນ ແມ່ນການນໍາໃຊ້ວິທີການສືບສວນ-ສອບສວນຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາເພື່ອຊອກຫາວັດຖຸສິ່ງຂອງທີ່ມີໄວ້ໃນຄອບຄອງ ຫຼື ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍ ຫຼື ມີການສົງໄສວ່າໄດ້ໃຊ້ ຫຼື ຕັ້ງໃຈຈະໃຊ້ເຂົ້າໃນການກະທໍາຜິດທາງອາຍາ;

ເພື່ອຊອກຫາຜູ້ຖືກສົງໄສ ຫຼື ຜູ້ຖືກຫາທີ່ເອົາຕົວລີ້ຊ່ອນຢູ່ເຄຫະສະຖານ ຫຼື ຍານພາຫະນະ.

**ກ. ການກວດຄົ້ນເຄຫະສະຖານ**

ເຄຫະສະຖານແມ່ນເຮືອນ ແລະ ສິ່ງຕ່າງໆທີ່ຕັ້ງຢູ່ໃນບໍລິເວນເດີ່ນບ້ານ, ເຮືອ ແລະ ແພທີ່ໃຊ້ເປັນບ່ອນຢູ່ປະຈໍາຂອງຄອບຄົວ, ສໍານັກງານ, ເຮືອນພັກ, ໂຮງແຮມ, ໂຮງງານ ແລະ ເຄຫະສະຖານອື່ນ;

ສາສະໜາສະຖານ ແມ່ນກຸຕິວິຫານ, ສິມ, ໂບດ, ທໍ ແລະ ສິ່ງຕ່າງໆທີ່ຕັ້ງຢູ່ບໍລິເວນສາສະໜາສະຖານ;

ການກວດຄົ້ນຈະດໍາເນີນໄດ້ກໍຕໍ່ເມື່ອຫາກມີຄໍາສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານເທົ່ານັ້ນເວັ້ນເສັຍແຕ່ກໍລະນີການກະທໍາຜິດເຊິ່ງໜ້າ ຫຼື ຮີບດ່ວນແຕ່ກໍຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການຊາບພາຍໃນກໍານົດຊາວສີ່ຊົ່ວໂມງພາຍຫຼັງທີ່ການກວດຄົ້ນໄດ້ສິ້ນສຸດລົງແລ້ວ;

ຄໍາສັ່ງກວດຄົ້ນມີຜົນບັງຄັບນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ຕ້ອງຈັດຕັ້ງປະຕິບັດພາຍໃນກໍານົດຊາວສີ່ຊົ່ວໂມງ;

ກ່ອນ ແລະ ຫຼັງການກວດຄົ້ນນັ້ນບຸກຄົນທີ່ເຂົ້າຮ່ວມໃນການກວດຄົ້ນຕ້ອງສະແດງຄວາມບໍລິສຸດຂອງຕົນຕໍ່ເຈົ້າຂອງສະຖານທີ່, ເຈົ້າຂອງຍານພາຫະນະ ຫຼື ຕໍ່ບຸກຄົນທີ່ຖືກກວດຄົ້ນ;

**ຂ. ຜູ້ມີສິດອອກຄໍາສັ່ງກວດຄົ້ນເຄຫະສະຖານ**

ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012 ການກວດຄົ້ນເຄຫະສະຖານຈະກະທໍາບໍ່ໄດ້ຖ້າຫາກບໍ່ມີຄໍາສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານຍ້ອນວ່າການກວດຄົ້ນເຄຫະສະຖານເປັນການແຕະຕ້ອງເຖິງສິດ ແລະ ເສລີພາບຂອງພົນລະເມືອງໃນການປົກປັກຮັກສາເຄຫະສະຖານຂອງຕົນເພື່ອຮັບປະກັນສິດ ແລະ ເສລີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສິດຂອງຫົວໜ້າອົງການໄອຍະການໃນການຕິດ

ຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນແຕ່ບາງກໍລະນີກໍອາດຈະບໍ່ມີຄໍາສັ່ງເປັນລາຍລັກອັກສອນຈາກພາກສ່ວນທີ່ກ່າວມາຂ້າງເທິງນັ້ນກໍໄດ້ ເຊັ່ນ ກໍລະນີທີ່ເປັນການກະທໍາຜິດເຊິ່ງໜ້າ ແລະ ຮີບດ່ວນ.

**ຕົວຢ່າງ: ແບບພິມຄໍາສັ່ງກວດຄົ້ນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ............... ເລກທີ........./ອຍກ.........

ອົງການໄອຍະການປະຊາຊົນ ລົງວັນທີ....../....../.........

**ຄໍາສັ່ງກວດຄົ້ນ....................**

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງ ປີ 2009) ມາດຕາ 42 ຂໍ້ 5;
- ອີງຕາມ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ (ສະບັບປັບປຸງ ປີ 2012) ມາດຕາ 122 ແລະ 123;
- ອີງຕາມ ບົດລາຍງານຂໍຄໍາສັ່ງກວດຄົ້ນ..............ຂອງ.............................. ສະບັບເລກທີ......./........, ລົງວັນທີ ...../......./.........ຕາມຂາເຂົ້າເລກທີ ......... /ອຍກ ........, ລົງວັນທີ ....../....../..........

ຜ່ານການຄົ້ນຄວ້າບົດລາຍງານຄະດີຂອງເຈົ້າໜ້າທີ່ຢ່າງລະອຽດຖີ່ຖ້ວນແລ້ວເຫັນວ່າມີຄວາມຈໍາເປັນຕ້ອງໄດ້ໃຫ້................................................. ທໍາການກວດຄົ້ນ ....................... ຂອງ ທ້າວ ຫຼື ນາງ.........................., ອາຍຸ .......... ປີ, ອາຊີບ ......................., ເຊື້ອຊາດ ........., ສັນຊາດ ................ ຕັ້ງຢູ່ບ້ານ ............, ໜ່ວຍ ..............., ເຮືອນເລກທີ..................., ເມືອງ ...............ແຂວງ/ນະຄອນ.................... ຈໍານວນ ............ ຫຼັງ ເພື່ອກວດຄົ້ນ........................ ທີ່ພົວພັນເຖິງການກະທໍາຜິດ.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນ.......................... ຈຶ່ງອອກຄຳສັ່ງກວດຄົ້ນ................ ດັ່ງກ່າວຕາມກົດໝາຍ ໃຫ້ຫົວໜ້າ ປກສ ..........................

ຜ່ານການຈັດຕັ້ງປະຕິບັດໄດ້ຮັບຜົນປະການໃດໃຫ້ລາຍງານຫົວໜ້າອົງການໄອຍະການປະຊາຊົນ.................. ຊາບເປັນລາຍລັກອັກສອນພາຍໃນກຳນົດ ຊາວສີ່ ຊົ່ວໂມງ.

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

**ຄ. ການກວດຄົ້ນເຄຫະສະຖານໂດຍບໍ່ຕ້ອງມີຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານ**

- ເມື່ອມີສຽງຮ້ອງຂໍການຊ່ວຍເຫຼືອຈາກຂ້າງໃນເຄຫະສະຖານ;
- ເມື່ອເຫັນການກະທຳຜິດເຊິ່ງໜ້າກຳລັງກະທຳໃນເຄຫະສະຖານ;
- ເມື່ອບຸກຄົນທີ່ໄດ້ກະທຳຜິດເຊິ່ງໜ້າໃນເວລາຖືກໄລ່ຈັບຕົວໄດ້ໜີເຂົ້າໄປ ຫຼື ເຊື່ອໝັ້ນວ່າບຸກຄົນດັ່ງກ່າວໄດ້ເຂົ້າໄປລີ້ຊ່ອນຕົວໃນເຄຫະສະຖານຫຼັງດັ່ງກ່າວນັ້ນ;
- ເມື່ອມີຄວາມເຊື່ອໝັ້ນຢ່າງໜັກແໜ້ນວ່າສິ່ງຂອງທີ່ໄດ້ມາຈາກການກະທຳຜິດນັ້ນໄດ້ຖືກຊຸກເຊື່ອງຢູ່ໃນສະຖານທີ່ດັ່ງກ່າວຖ້າມີການຊັກຊ້າຈະຖືກຍົກຍ້າຍໄປກ່ອນ.

**໑. ວິທີການກວດຄົ້ນເຄຫະສະຖານໂດຍມີຄຳສັ່ງກວດຄົ້ນ**

ເມື່ອຜູ້ມີສິດໃນການກວດຄົ້ນເຄຫະສະຖານພາຍຫຼັງໄດ້ຮັບຄຳສັ່ງກວດຄົ້ນຈາກຫົວໜ້າອົງການໄອຍະການ ຫຼື ສານແລ້ວຕ້ອງໄປຍັງສະຖານທີ່ທີ່ຈະທຳການກວດຄົ້ນ.

ການກວດຄົ້ນເຄຫະສະຖານຕ້ອງເຮັດຊ້ອງໜ້າອົງການປົກຄອງບ້ານ, ເຈົ້າຂອງເຮືອນ ຫຼື ສະມາຊິກໃນຄອບຄົວທີ່ມີອາຍຸກະສຽນແຕ່ສິບແປດປີຂຶ້ນໄປ ແລະ ພະຍານຢ່າງໜ້ອຍສອງຄົນ, ກໍລະນີມີການກວດຄົ້ນສຳນັກງານ, ເຮືອນພັກ, ໂຮງແຮມ, ໂຮງງານ, ອົງການ ແລະ ວິສາຫະກິດຕ້ອງເຮັດຊ້ອງໜ້າຜູ້ຕາງໜ້າທີ່ກ່ຽວຂ້ອງ.

ການກວດຄົ້ນສາສະໜາສະຖານຕ້ອງມີການເຂົ້າຮ່ວມຂອງເຈົ້າອະທິການວັດ, ຄຸນພໍ່, ຜູ້ຮັບຜິດຊອບ ຫຼື ຜູ້ຕາງໜ້າອົງການສາສະໜາທີ່ກ່ຽວຂ້ອງ.

ການກວດຄົ້ນເຄຫະສະຖານ ຫຼື ສາສະໜາສະຖານສິ່ງສຳຄັນບໍ່ຕ້ອງສ້າງຄວາມເສັຍຫາຍຖ້າມີຄວາມຈຳເປັນກໍຕ້ອງໃຫ້ມີຄວາມເສັຍຫາຍໜ້ອຍ ແລະ ເບົາບາງທີ່ສຸດ.

ການກວດຄົ້ນເຄຫະສະຖານ ຫຼື ສາສະໜາສະຖານໃຫ້ດຳເນີນໃນເວລາກາງເວັນແຕ່ຫົກໂມງເຊົ້າຫາສິບແປດໂມງແລງ, ໃນກໍລະນີການກວດຄົ້ນຫາກດຳເນີນມາແລ້ວເມື່ອຮອດສິບແປດໂມງແຕ່ການກວດຄົ້ນຍັງບໍ່ທັນສິ້ນສຸດນັ້ນກໍໃຫ້ສືບຕໍ່ຈົນກ່ວາຈະສຳເລັດ.

ກ່ອນການກວດຄົ້ນຜູ້ມີສິດໃນການກວດຄົ້ນຕ້ອງໄດ້ອ່ານຄໍາສັ່ງກວດຄົ້ນໃຫ້ຜູ້ເປັນເຈົ້າຂອງເຮືອນຊາບພ້ອມທັງໃຫ້ຜູ້ເປັນເຈົ້າຂອງເຮືອນນໍາເອົາວັດຖຸສິ່ງຂອງຕ່າງໆທີ່ເປັນປະໂຫຍດໃນຄະດີອອກມາມອບໃຫ້ໂດຍຄວາມສະໝັກໃຈ, ແຕ່ຖ້າຫາກເຈົ້າຂອງເຮືອນຫາກບໍ່ນໍາອອກມາມອບໃຫ້ ຫຼື ມອບບໍ່ໝົດຊຶ່ງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານໄອຍະການຜູ້ມີສິດກວດຄົ້ນເຊື່ອໝັ້ນວ່າຍັງຄົງຄ້າງຢູ່ຈຶ່ງເຂົ້າທໍາການກວດຄົ້ນ, ຊຶ່ງກ່ອນຈະເຂົ້າທໍາການກວດຄົ້ນຜູ້ທີ່ມີສິດໃນການກວດຄົ້ນແຕ່ລະຄົນຕ້ອງໄດ້ສະແດງຄວາມບໍລິສຸດຂອງຕົນຕໍ່ເຈົ້າຂອງເຮືອນກ່ອນແລ້ວຈຶ່ງເຂົ້າທໍາການກວດຄົ້ນ.

ໃນເວລາທໍາການກວດຄົ້ນເຈົ້າໜ້າທີ່ທີ່ທໍາການກວດຄົ້ນມີສິດບໍ່ອະນຸຍາດໃຫ້ມີການຕິດຕໍ່ພົວພັນລະຫວ່າງບຸກຄົນພາຍໃນ ແລະ ພາຍນອກຈົນກ່ວາການກວດຄົ້ນຈະສໍາເລັດ.

ວັດຖຸສິ່ງຂອງ ແລະ ເອກະສານຕ່າງໆທີ່ກວດຄົ້ນໄດ້ຊຶ່ງເປັນຂອງກາງທີ່ເປັນປະໂຫຍດ ແລະ ພົວພັນກັບການກະທໍາຜິດ ຫຼື ເປັນສິ່ງທີ່ຜິດກົດໝາຍຕ້ອງໄດ້ເຮັດບັນຊີຢ່າງລະອຽດບອກປະເພດ, ລັກສະນະ ແລະ ຈໍານວນຢ່າງລະອຽດ, ໃນບາງກໍລະນີກໍຕ້ອງເຊີນເອົາຜູ້ຊ່ຽວຊານເພື່ອພິສູດວັດຖຸສິ່ງຂອງດັ່ງກ່າວໃນແຕ່ລະອັນ ແລະ ຕ້ອງໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມຮັບຮູ້ນໍາ.

ພາຍຫຼັງສໍາເລັດການກວດຄົ້ນແລ້ວຕ້ອງໄດ້ເຮັດຈົດໝາຍບັນທຶກໃນການກວດຄົ້ນຢ່າງຄັກແນ່ ແລະ ໃຫ້ຜູ້ເຂົ້າຮ່ວມໃນການກວດຄົ້ນແຕ່ລະຄົນເຊັນຮັບຮູ້ນໍາກັນ, ຈົດໝາຍບັນທຶກການກວດຄົ້ນຕ້ອງເຮັດເປັນສາມສະບັບ, ໜຶ່ງສະບັບໃຫ້ເຈົ້າໜ້າທີ່ເກັບຮັກສາໄວ້ໃນສໍານວນຄະດີ, ສ່ວນອີກໜຶ່ງສະບັບມອບໃຫ້ເຈົ້າຂອງເຄຫະສະຖານເກັບຮັກສາໄວ້ເປັນຫຼັກຖານ ແລະ ອີກໜຶ່ງສະບັບມອບໃຫ້ອົງການປົກຄອງບ້ານ.

ຜູ້ມີສິດກວດຄົ້ນແຕ່ລະຄົນກ່ອນຈະອອກຈາກສະຖານທີ່ກວດຄົ້ນຕ້ອງໄດ້ສະແດງຄວາມບໍລິສຸດອີກຄັ້ງໜຶ່ງຕໍ່ເຈົ້າຂອງເຄຫະສະຖານ ຫຼື ສາສະໜາສະຖານ.

**ຈ. ຜູ້ມີສິດເຂົ້າຮ່ວມໃນການກວດຄົ້ນເຄຫະສະຖານ**

- ເຈົ້າໜ້າທີ່ສືບສວນ-ສອບສວນ;
- ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການ;
- ອົງການປົກຄອງບ້ານບ່ອນສະຖານທີ່ກວດຄົ້ນ;
- ເຈົ້າຂອງເຄຫະສະຖານ ຫຼື ສາສະໜາສະຖານ;

ພະຍານທີ່ມີອາຍຸສິບແປດປີຂຶ້ນໄປຢ່າງໜ້ອຍສອງຄົນ;

**ຕົວຢ່າງ: ແບບພິມບົດບັນທຶກການກວດຄົ້ນຂອງອົງການໄອຍະການ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ................. ເລກທີ........./ອຍກ.........

ອົງການໄອຍະການປະຊາຊົນ ລົງວັນທີ....../....../........

## ບົດບັນທຶກ

## ການກວດຄົ້ນ...................

– ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງປີ 2012) ມາດຕາ125;

– ອີງຕາມ ຄຳສັ່ງກວດຄົ້ນຂອງຫົວໜ້າອົງການໄອຍະການປະຊາຊົນ ສະບັບເລກທີ ...../ອຍກ ........, ລົງວັນທີ ...../....../.......

ວັນທີ......../......../...........ເວລາ............ໂມງ, ຕອນ................ພະນັກງານໄອຍະການຂອງອົງການໄອຍະການປະຊາຊົນ...........ພ້ອມດ້ວຍຄະນະໄດ້ທຳການກວດຄົ້ນ ................................... ...............ຂອງ ທ້າວ ຫຼື ນາງ........................., ອາຍຸ .......... ປີ, ອາຊີບ ......................., ເຊື້ອຊາດ ........, ສັນຊາດ ................ ຕັ້ງຢູ່ບ້ານ ............, ໜ່ວຍ..............., ເຮືອນເລກທີ...................., ເມືອງ.................., ນະຄອນຫຼວງວຽງຈັນ.

ຄະນະກຳມະການກວດຄົ້ນປະກອບມີ:

1. ທ່ານ..........................ໜ້າທີ່ຮັບຜິດຊອບ................................ເປັນຫົວໜ້າ;
2. ທ່ານ..........................ໜ້າທີ່ຮັບຜິດຊອບ................................ເປັນຄະນະ;
3. ທ່ານ..........................ໜ້າທີ່ຮັບຜິດຊອບ................................ເປັນຄະນະ;
4. ທ່ານ..........................ໜ້າທີ່ຮັບຜິດຊອບ..............................ເປັນຜູ້ບັນທຶກ;
5. ທ່ານ........................ໜ້າທີ່ຮັບຜິດຊອບ..........ຕາງໜ້າອົງການປົກຄອງບ້ານ;
6. ທ່ານ.......................ໜ້າທີ່ຮັບຜິດຊອບ.................................ເປັນພະຍານ;
7. ທ່ານ..........................ໜ້າທີ່ຮັບຜິດຊອບ..............................ເປັນພະຍານ;

ກ່ອນທຳການກວດຄົ້ນໄດ້ອ່ານຄຳສັ່ງກວດຄົ້ນ..................ຂອງຫົວໜ້າອົງການໄອຍະການປະຊາຊົນ...................ສະບັບເລກທີ........./ອຍກ........, ລົງວັນທີ................. ພ້ອມທັງສະແດງຄວາມບໍລິສຸດໃຈຂອງບັນດາຜູ່ເຂົ້າຮ່ວມການກວດຄົ້ນຕໍ່....................... ............ແລ້ວ ຈຶ່ງໄດ້ເຂົ້າທຳການກວດຄົ້ນ.....................ດັ່ງກ່າວໂດຍຊ້ອງໜ້າຜູ່ເປັນ ..................................

ພາຍຫຼັງທຳການກວດຄົ້ນແລ້ວໄດ້ພົບເຫັນວັດຖຸສິ່ງຂອງທີ່ຜິດກົດໝາຍດັ່ງນີ້:

1............................................................................................................

2............................................................................................................

3............................................................................................................

ການກວດຄົ້ນ..................ດັ່ງກ່າວໄດ້ສິ້ນສຸດລົງເວລາ....................ຕອນ......... ຂອງວັນທີ.........................ຄະນະກຳມະການກວດຄົ້ນໄດ້ສະແດງຄວາມບໍລິສຸດໃຈອີກເທື່ອໜຶ່ງຕໍ່ເຈົ້າຂອງ.............., ການກວດຄົ້ນບໍ່ໄດ້ໃຊ້ຄວາມຮຸນແຮງ, ການບັງຄັບ, ທຸບຕີ ຫຼື ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ, ບົດບັນທຶກກວດຄົ້ນດັ່ງກ່າວນີ້ໄດ້ເຮັດເປັນ 3 ສະບັບ ແລະ ໄດ້ອ່ານຊ້ອງໜ້າຜູ່ເຂົ້າຮ່ວມການກວດຄົ້ນແລ້ວເຫັນວ່າຖືກຕ້ອງຈຶ່ງພ້ອມກັນລົງລາຍເຊັນ, ແປະໂປ້ມືໄວ້ເປັນຫຼັກຖານ.

ສະຖານທີ່ກວດຄົ້ນ (ກວດຄົ້ນ)..............................ວັນທີ......................

| ເຈົ້າໜ້າທີ່ກວດຄົ້ນ | ພະຍານ | ເຈົ້າຂອງສະຖານທີ່ກວດຄົ້ນ | ຜູ່ບັນທຶກ |
|---|---|---|---|
| 1........................ | 1.................... | 1.................................. | |
| 2....................... | 2.................. | 2................................ | |
| 3....................... | 3.................... | 3................................ | |

**ອົງການປົກຄອງບ້ານບ່ອນກວດຄົ້ນ**

<u>ໝາຍເຫດ</u>

1 ສະບັບໄວ້ສຳນວນຄະດີ.

1 ສະບັບມອບໃຫ້ເຈົ້າຂອງເຄຫະສະຖານ.

1 ສະບັບໃຫ້ອົງການປົກຄອງບ້ານ.

## 1.6. ການກວດຄົ້ນຍານພາຫະນະ ແລະ ຕົວບຸກຄົນ

### 1.6.1. ການກວດຄົ້ນຍານພາຫະນະ

ການກວດຄົ້ນຍານພາຫະນະ ເຊັ່ນ ລົດ, ເຮືອ ຫຼື ຍານພາຫະນະອື່ນທີ່ຖືກສົງໄສວ່າໄດ້ມີການຊຸກເຊື່ອງສິ່ງທີ່ຜິດກົດໝາຍ ຫຼື ຜູ່ກະທຳຜິດນັ້ນຈະດຳເນີນເວລາໃດກໍໄດ້ແຕ່ຕ້ອງດຳເນີນຊ້ອງໜ້າເຈົ້າຂອງຍານພາຫະນະນັ້ນ ໂດຍໄດ້ແຍກແຕ່ລະພາຫະນະດັ່ງນີ້:

**ກ. ຍານພາຫະນະທາງບົກ**

ຍານພາຫະນະທາງບົກ ແມ່ນສິ່ງທີ່ເຄື່ອນຍ້າຍດ້ວຍຕີນ ຫຼື ລໍ້ໂດຍແຮງຄົນ ຫຼື ແຮງສັດ ຫຼື ດ້ວຍແຮງກົນຈັກ ເຊັ່ນ ລໍ້ຍູ້ດ້ວຍແຮງຄົນ, ກຽນທີ່ລາກແກ່ດ້ວຍສັດ, ລົດຖີບດ້ວຍແຮງຄົນ, ລົດຈັກ, ສາມລໍ້ລົດຈັກ, ລົດຕຸກໆ ແລະ ລົດໃຫຍ່ສີ່ລໍ້ຂຶ້ນໄປ, ລົດລາງ, ລົດໄຟ ແລະ ອື່ນໆ.

**ຂ. ຍານພາຫະນະທາງນໍ້າ**

ຍານພາຫະນະທາງນໍ້າ ແມ່ນສິ່ງທີ່ເຄື່ອນຍ້າຍຕາມເສັ້ນທາງນໍ້າດ້ວຍແຮງນໍ້າ, ດ້ວຍແຮງລົມ, ດ້ວຍແຮງຄົນ ແລະ ດ້ວຍເຄື່ອງຈັກ ເຊັ່ນ ແພ, ເຮືອພາຍ, ເຮືອບັກຂ້າມນໍ້າ, ເຮືອໃບ, ເຮືອຈັກຫາງຍາວ, ເຮືອສຳເພົາ, ເຮືອກຳປັ່ນ, ເຮືອດຳນໍ້າ ແລະ ອື່ນໆ.

**ຄ. ຍານພາຫະນະທາງອາກາດ**

ຍານພາຫະນະທາງອາກາດ ແມ່ນສິ່ງທີ່ເຄື່ອນຍ້າຍຕາມເສັ້ນທາງອາກາດ ເຊັ່ນ ເຄື່ອງບິນບັງຄັບດ້ວຍຣີໂມດຄອນໂທຣນ, ບອນລູນ, ເຄື່ອງບິນດ້ວຍແຮງຈັກນັບແຕ່ເຮລີກົບເຕີຂຶ້ນໄປຮອດຍານອາວະກາດ.

### 1.6.2. ການກວດຄົ້ນຕົວບຸກຄົນ

ການກວດຄົ້ນຕົວບຸກຄົນນີ້ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ບັນຍັດຄຸ້ມຄອງສິດ ແລະ ເສລີພາບຂອງພົນລະເມືອງ ຊຶ່ງພົນລະເມືອງມີສິດໂດຍບໍ່ມີໃຜຈະລ່ວງລະເມີດໄດ້ທາງດ້ານຮ່າງກາຍ, ກຽດສັກສີ, ຖ້າຫາກບໍ່ມີຄຳສັ່ງຂອງຫົວໜ້າອົງການໄອຍະການ ຫຼື ສານເວັ້ນເສັຍແຕ່ໃນກໍລະນີທີ່ໄດ້ກຳນົດໄວ້ໃນກົດໝາຍ.

ການກວດຄົ້ນຕົວບຸກຄົນເປັນການກະທົບຕໍ່ສິດ ແລະ ເສລີພາບຂອງບຸກຄົນ. ສະນັ້ນ, ເຈົ້າໜ້າທີ່ຜູ່ຈັດຕັ້ງປະຕິບັດກົດໝາຍຕ້ອງຄຳນຶງ ແລະ ຈຳແນກປະເພດຂອງບຸກຄົນນັ້ນເສັຍກ່ອນວ່າຢູ່ໃນຖານະໃດ, ສາມາດລົບກວນສິດ ແລະ ເສລີພາບໄດ້ໜ້ອຍຫຼາຍປານໃດ, ຖານະດັ່ງກ່າວນີ້ບໍ່ໄດ້ໝາຍເຖິງຖານະທາງດ້ານເສດຖະກິດ ຫຼື ຖານະສັງຄົມແຕ່ຫາກເປັນຖານະທາງກົດໝາຍ ເຊັ່ນ ບຸກຄົນທີ່ຕົກເປັນຜູ່ຖືກສົງໄສ, ຜູ່ຖືກຫາ, ຈຳເລີຍ ຫຼື ນັກໂທດ ຫຼື ບຸກຄົນອື່ນໆທີ່ບໍ່ມີສ່ວນກ່ຽວຂ້ອງກັບການກະທຳຜິດຊຶ່ງໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງຈາກກົດໝາຍແຕກຕ່າງກັນ.

ບໍ່ວ່າຈະເປັນການກວດຄົ້ນໃນກໍລະນີໃດກໍຕາມຜູ່ຖືກກວດຄົ້ນຫາກແມ່ນເພດຍິງຜູ່ທໍາການກວດຄົ້ນຕ້ອງເປັນເພດດຽວກັນ ແລະ ຕ້ອງທໍາການກວດຄົ້ນໃນທີ່ລັບ ຫຼື ທີ່ກໍາບັງ, ການກວດຄົ້ນຕົວບຸກຄົນນັ້ນໃນທາງກົດໝາຍແລ້ວສາມາດແບ່ງອອກເປັນສອງປະເພດຄື ການກວດຄົ້ນບຸກຄົນທີ່ກ່ຽວຂ້ອງກັບການກະທໍາຜິດ ແລະ ການກວດຄົ້ນບຸກຄົນອື່ນທີ່ບໍ່ກ່ຽວຂ້ອງກັບການກະທໍາຜິດ ຊຶ່ງມີລາຍລະອຽດດັ່ງນີ້:

**ກ. ການກວດຄົ້ນບຸກຄົນທີ່ກ່ຽວຂ້ອງກັບການກະທໍາຜິດ**

ການກວດຄົ້ນຕົວບຸກຄົນທີ່ກ່ຽວຂ້ອງກັບການກະທໍາຜິດ ເຊັ່ນ ຜູ່ຖືກສົງໄສ, ຜູ່ຖືກຫາ, ຈໍາເລີຍ ຊຶ່ງເປັນການກວດຄົ້ນທີ່ຕໍ່ເນື່ອງພາຍຫຼັງການຈັບຕົວ ຫຼື ຫຼັງການກັກຕົວ ຫຼື ຫຼັງຈາກການກັກຂັງພາງ, ການກວດຄົ້ນລັກສະນະນີ້ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ແລະ ກົດໝາຍຫຼາຍປະເທດໄດ້ໃຫ້ສິດອໍານາດແກ່ເຈົ້າໜ້າທີ່ດໍາເນີນການໄດ້ໂດຍບໍ່ຈໍາເປັນທີ່ຕ້ອງມີຄໍາສັ່ງກວດຄົ້ນຂອງຫົວໜ້າອົງການໄອຍະການ ຫຼື ສານຕື່ມອີກກໍໄດ້ ເນື່ອງຈາກວ່າເມື່ອບຸກຄົນໃດໄດ້ຖືກຈັບຕົວ ແລະ ຕົກເປັນຜູ່ຖືກຫາແລ້ວອາດຈະອ້າງສິດ ແລະ ບໍ່ຍອມໃຫ້ກວດຄົ້ນນັ້ນບໍ່ໄດ້, ເພື່ອເປັນປະໂຫຍດໃນການດໍາເນີນຄະດີນັ້ນຜູ່ຖືກຫາອາດຈະຖືກກວດຄົ້ນຕົວໄດ້ຕະຫຼອດຮອດການຖ່າຍຮູບ, ການຈໍາລອງເຫດການຄື ພິມລາຍມື, ນິ້ວມື, ກວດສຸຂະພາບຈິດ, ກວດເລືອດ, ກວດຫາສານມືນເມົາ, ສານເສບຕິດ ຫຼື ສານພິດອື່ນໆ ແລະ ກວດກາຮ່ອງຮອຍຕ່າງໆຕາມຮ່າງກາຍໄດ້.

ວັດຖຸສິ່ງຂອງທີ່ໄດ້ມາຈາກການກວດຄົ້ນ ຊຶ່ງຈະໄດ້ເປັນຂໍ້ມູນຫຼັກຖານໃນການດໍາເນີນຄະດີນັ້ນເອີ້ນວ່າຂອງກາງໃນຄະດີ, ຫາກເປັນວັດຖຸສິ່ງຂອງກໍຕ້ອງບອກຕໍາໜິ, ຍີ່ຫໍ້, ຮູບຊົງ, ຂະໜາດແລ້ວຫຸ້ມຫໍ່ຕິດຄັ່ງ, ປະທັບຕາໄວ້ເປັນຢ່າງດີ, ຫາກເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ຫຼື ແຊັກ ຫຼື ພັນທະບັດອື່ນ ຫຼື ວັດຖຸມີຄ່າຕ້ອງນໍາເອົາໄປຝາກໄວ້ໃນທະນາຄານທີ່ໃກ້ຄຽງ, ໃນເມື່ອການດໍາເນີນຄະດີໄດ້ສິ້ນສຸດລົງແລ້ວກໍໃຫ້ປະຕິບັດຕາມຄໍາຕັດສິນ ຫຼື ຄໍາພິພາກສາຂອງສານ.

**ຂ. ການກວດຄົ້ນຕົວບຸກຄົນອື່ນ**

ການກວດຄົ້ນຕົວບຸກຄົນອື່ນໝາຍຄວາມວ່າແມ່ນບຸກຄົນທີ່ບໍ່ມີສ່ວນກ່ຽວຂ້ອງກັບການກະທໍາຜິດ ເຊັ່ນ ຜູ່ຖືກເສັຍຫາຍ, ພະຍານ ຫຼື ບຸກຄົນອື່ນໆແມ່ນມີຖານະທາງກົດໝາຍ ຫຼື ໄດ້ຮັບສິດຄຸ້ມຄອງຕາມກົດໝາຍແຕກຕ່າງກັນກັບບຸກຄົນທີ່ກ່ຽວຂ້ອງກັບການກະທໍາຜິດ ເຊັ່ນ ບຸກຄົນທີ່ຖືກຈັບຕົວມາ ຫຼື ຜູ່ທີ່ຖືກກັກຕົວ ຫຼື ຖືກກັກຂັງ ຫຼື ຖືກດັດສ້າງ ຫຼື ຖືກປະຕິບັດໂທດຢູ່ນັ້ນຖ້າຫາກເຈົ້າໜ້າທີ່ຈະເຂົ້າກວດຄົ້ນ ຫຼື ເຂົ້າໄປລ່ວງເກີນສິດ ແລະ ເສລີພາບຂອງບຸກຄົນອື່ນນີ້ຈຶ່ງຕ້ອງຢູ່ໃນຂອບເຂດຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 124 ອະນຸຍາດໃຫ້ເນື່ອງຈາກບຸກຄົນອື່ນເປັນຜູ່ໃຫ້

ຄວາມຮ່ວມມືໃນການດຳເນີນຄະດີ, ເຈົ້າໜ້າທີ່ຈຶ່ງຕ້ອງເຄົາລົບສິດຂອງບຸກຄົນດັ່ງກ່າວ. ດັ່ງນັ້ນ, ຈະກວດຄົ້ນຕົວບຸກຄົນອື່ນໄດ້ກໍຈຳເປັນຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານເສຍກ່ອນ, ທັງນີ້ກໍເພື່ອປ້ອງກັນບໍ່ໃຫ້ເກີດມີການສວຍໂອກາດ ຫຼື ບໍ່ໃຫ້ມີການກະທຳຜິດກົດໝາຍເກີດຂຶ້ນເວັ້ນເສຍແຕ່ໃນກໍລະນີມີຄວາມຈຳເປັນ ແລະ ຮີບດ່ວນ (ມ 121 ກດຍ) ແຕ່ກໍຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການຮັບຊາບພາຍໃນກຳນົດເວລາຊາວສີ່ຊົ່ວໂມງພາຍຫຼັງທີ່ການກວດຄົ້ນໄດ້ສິ້ນສຸດ.

**1.7. ການຍຶດ ຫຼື ການອາຍັດຊັບ, ວັດຖຸສິ່ງຂອງ**

ການຍຶດຊັບ ແມ່ນການຍຶດວັດຖຸສິ່ງຂອງທີ່ສາມາດເຄື່ອນທີ່ໄດ້ (ສັງຫາລິມະຊັບ) ເຊັ່ນ ລົດ, ເຮືອ, ແພ, ງົວ, ຄວາຍ ແລະ ອື່ນໆ;

ການອາຍັດຊັບໝາຍເຖິງການອອກຄຳສັ່ງຂອງຫົວໜ້າອົງການໄອຍະການ, ສານປະຊາຊົນກ່ຽວກັບຊັບຄົງທີ່, ຊັບເຄື່ອນທີ່ລວມທັງບັນຊີເງິນຝາກເພື່ອບໍ່ໃຫ້ມີການຊື້, ຂາຍ, ມອບ, ແລກປ່ຽນ, ຊວດຈຳ, ຄ້ຳປະກັນ, ຕໍ່ເຕີມ, ທຳລາຍ ຫຼື ປ່ຽນແປງຊັບດັ່ງກ່າວ (ມ 3 ກປສ);

ຈຸດປະສົງຂອງການຍຶດຊັບ ແລະ ການອາຍັດຊັບ ແມ່ນການເກັບໂຮມຫຼັກຖານໃນຄະດີເພື່ອສ້າງເງື່ອນໄຂໃຫ້ແກ່ການປະກອບຫຼັກຖານໃນຄະດີ, ຮັບປະກັນການໃຊ້ແທນຄ່າເສັຍຫາຍທາງແພ່ງທີ່ເກີດຈາກການກະທຳຜິດທີ່ກ່ຽວຂ້ອງ, ສະກັດກັ້ນການຄອບຄອງວັດຖຸສິ່ງຂອງໂດຍບໍ່ຖືກຕ້ອງຕາມກົດໝາຍ ເຊັ່ນ ອາວຸດເສິກ, ວັດຖຸລະເບີດ ແລະ ອື່ນໆ;

ໃນກໍລະນີທີ່ໄດ້ຮູ້ແຈ້ງກ່ຽວກັບປະເພດ, ຈຳນວນ ແລະ ສະຖານທີ່ເກັບມ້ຽນຊັບ, ວັດຖຸສິ່ງຂອງທີ່ພົວພັນກັບການກະທຳຜິດ ແລະ ຈະນຳໃຊ້ເປັນປະໂຫຍດໃນການດຳເນີນຄະດີ ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງນັ້ນ.

## 1.8. ການທົດສອບຂໍ້ມູນຄືນໃໝ່

ການທົດສອບຂໍ້ມູນຄືນໃໝ່ ແມ່ນ ການປະກອບຄືນຂັ້ນຕອນໃດໜຶ່ງຂອງເຫດການຄະດີຕາມຂໍ້ມູນທີ່ໄດ້ມາເພື່ອກວດກາ ແລະ ຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນນັ້ນ. ການທົດສອບຂໍ້ມູນຄືນໃໝ່ຕ້ອງບໍ່ໃຫ້ເປັນອັນຕະລາຍຕໍ່ຊີວິດ ຫຼື ສິ່ງແວດລ້ອມທັງບໍ່ແຕະຕ້ອງເຖິງກຽດສັກສີຂອງບຸກຄົນ[15].

ຫົວໜ້າອົງການສືບສວນ-ສອບສວນ ຫຼື ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການສາມາດທຳການທົດສອບຂໍ້ມູນນັ້ນຄືນໃໝ່ໂດຍໃຫ້ຜູ້ຖືກຫາ ຫຼື ຈຳເລີຍສະແດງການກະທຳຂອງຕົນຄືນໃໝ່, ໃນການທົດສອບຂໍ້ມູນຄືນໃໝ່ອາດຈະໃຫ້ຜູ້ຖືກເສຍຫາຍ ຫຼື ພະຍານສະແດງຄືນກໍໄດ້ການທົດສອບຂໍ້ມູນຄືນໃໝ່ຕ້ອງຖ່າຍຮູບ, ຖ່າຍພາບ, ວັດແທກ, ແຕ້ມແຜນວາດປະກອບ ແລະ ຕ້ອງເຮັດບົດບັນທຶກໄວ້.

ໃນການທົດສອບຂໍ້ມູນຄືນໃໝ່ຈະຕ້ອງມີພະຍານເຂົ້າຮ່ວມນຳຢ່າງໜ້ອຍສອງຄົນ ແລະ ອາດຈະມີການເຂົ້າຮ່ວມຂອງຜູ້ຖືກເສຍຫາຍກໍໄດ້. ໃນກໍລະນີທີ່ຈຳເປັນຕ້ອງໃຫ້ຫົວໜ້າອົງການໄອຍະການ ແລະ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານທີ່ກ່ຽວຂ້ອງເຂົ້າຮ່ວມນຳ.

ການທົດສອບຂໍ້ມູນຄືນໃໝ່ຈະເຮັດໄດ້ກໍຕໍ່ເມື່ອຫາກເຫັນວ່າບໍ່ເປັນໄພອັນຕະລາຍຕໍ່ຊີວິດ, ສຸຂະພາບ ຫຼື ສິ່ງແວດລ້ອມ ແລະ ທັງບໍ່ກໍ່ຄວາມເສຍຫາຍແກ່ກຽດສັກສີຂອງມະນຸດ.

## 1.9. ການຊີ້ຕົວ ແລະ ການຢັ້ງຢືນ

ການຊີ້ຕົວໃນຄະດີອາຍາ ແມ່ນວິທີການໜຶ່ງໃນການສືບສວນ-ສອບສວນທີ່ສະແດງອອກໂດຍພະຍານ ຫຼື ຜູ້ຖືກເສຍຫາຍເປັນຜູ້ຊີ້ຕົວ, ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ທີ່ຕົນຮູ້ ແລະ ໄດ້ເຫັນວ່າເປັນຜູ້ກະທຳຄວາມຜິດ. ໃນການຊີ້ຕົວ ແລະ ການຢັ້ງຢືນ ຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການຕ້ອງໃຫ້ພະຍານ, ຜູ້ຖືກເສຍຫາຍ, ຜູ້ຖືກສົງໄສ ຫຼື ຜູ້ຖືກຫາຊີ້ຕົວບຸກຄົນ, ຢັ້ງຢືນວັດຖຸສິ່ງຂອງ ຫຼື ຊາກສົບ.

ການຊີ້ຕົວຜູ້ຖືກສົງໄສ, ຜູ້ຖືກຫາໃນຄະດີອາຍາ ຫຼື ການຢັ້ງຢືນວັດຖຸສິ່ງຂອງ ຫຼື ຊາກສົບນັ້ນແມ່ນອາໃສຄວາມຈົດຈຳຂອງຜູ້ທີ່ຊີ້ຕົວ ຫຼື ຢັ້ງຢືນເປັນສິ່ງສຳຄັນ ແລະ ເປັນຕົ້ນຕໍ, ບໍ່ແມ່ນເກີດຈາກການແນະນຳຂອງຜູ້ອື່ນ, ຄວາມຈື່ຈຳດັ່ງກ່າວອາດເປັນຄວາມຈື່ຈຳ

---

[15] ວຽງວິໄລ ທ່ຽງຈັນໄຊ, ການດຳເນີນຄະດີອາຍາ, ພິມຄັ້ງທີ II ປີ 2005, ໜ້າ 81

ດ້ວຍສາຍຕາຄື ຜູ່ທີ່ຊີ້ຕົວໄດ້ເຫັນຜູ່ກະທຳຜິດ ຫຼື ຄວາມຊົງຈຳທາງຫູຄື ໄດ້ຍິນສຽງປາກຂອງຜູ່ກະທຳຜິດແລ້ວໃຫ້ຜູ່ກ່ຽວຊີ້ຕົວ ຫຼື ຢັ້ງຢືນວ່າຜູ່ຖືກຊີ້ຕົວນັ້ນແມ່ນຜູ່ກະທຳຜິດແທ້ຫຼື ບໍ່.

**1.9.1. ຈຸດປະສົງຂອງການຊີ້ຕົວ ແລະ ການຢັ້ງຢືນ**

ຈຸດປະສົງຂອງການຊີ້ຕົວ ແລະ ການຢັ້ງຢືນ ແມ່ນເພື່ອໃຫ້ແນ່ໃຈວ່າຜູ່ຖືກສົງໄສ ຫຼື ຜູ່ຖືກຫາເປັນຜູ່ກະທຳຜິດແທ້ ຫຼື ບໍ່, ເພາະຖ້າຫາກຜູ່ຖືກເສັຍຫາຍຈື່ຈຳຄົນຮ້າຍໄດ້ ແລະ ສາມາດຊີ້ຕົວຜູ່ຖືກສົງໄສ ຫຼື ຜູ່ຖືກຫາໄດ້ຢ່າງຖືກຕ້ອງກໍໜ້າເຊື່ອຖືໄດ້ວ່າຜູ່ນັ້ນເປັນຜູ່ກະທຳຜິດເຮັດໃຫ້ເຈົ້າໜ້າທີ່ມີຄວາມໝັ້ນໃຈໃນການປະກອບຫຼັກຖານມັດຕົວຜູ່ກະທຳຜິດ, ກົງກັນຂ້າມຖ້າຜູ່ຖືກເສັຍຫາຍ ຫຼື ພະຍານອ້າງວ່າຕົນຈື່ຈຳຄົນຮ້າຍໄດ້ດີ, ແຕ່ເມື່ອຈັດໃຫ້ມີການຊີ້ຕົວຊໍ້າພັດບໍ່ສາມາດຊີ້ຕົວຜູ່ຖືກຫາໄດ້ເລີຍ, ໃນກໍລະນີນີ້ກໍອາດເຊື່ອໄດ້ວ່າຜູ່ຖືກສົງໄສ ຫຼື ຜູ່ຖືກຫາທີ່ເຈົ້າໜ້າທີ່ຈັບຕົວມານັ້ນຍັງບໍ່ທັນແມ່ນຄົນຮ້າຍ, ອາດຈະເປັນຫຼັກຖານແກ້ມັດໃຫ້ຜູ່ຖືກສົງໄສ ຫຼື ຜູ່ຖືກຫາກໍໄດ້.

ການຊີ້ຕົວຜູ່ຖືກສົງໄສ ຫຼື ຜູ່ຖືກຫາວ່າໄດ້ກະທຳຜິດນີ້ມີຄວາມໝາຍສຳຄັນ ແລະ ມີຜົນຕໍ່ການດຳເນີນຄະດີອາຍາ. ດັ່ງນັ້ນ, ຈຶ່ງຕ້ອງດຳເນີນໄປດ້ວຍຄວາມລະມັດລະວັງໂດຍຄຳນຶງເຖິງສິດເສລີພາບ ແລະ ຄວາມເປັນທຳຂອງຜູ່ຖືກຊີ້ຕົວເປັນສິ່ງສຳຄັນ, ໃນຂະນະດຽວກັນນັ້ນເພື່ອໃຫ້ແນ່ໃຈວ່າຈະໄດ້ຕົວຜູ່ກະທຳຄວາມຜິດຢ່າງແທ້ຈິງມາລົງໂທດຕາມກົດໝາຍ. ສຳລັບການຢັ້ງຢືນແມ່ນໃຫ້ພະຍານ ຫຼື ຜູ່ຖືກເສັຍຫາຍຢັ້ງຢືນວັດຖຸສິ່ງຂອງທີ່ພົວພັນເຖິງການກະທຳຜິດ ຫຼື ຊາກສົບນັ້ນແມ່ນເປັນວັດຖຸ ຫຼື ຊາກສົບຕາມທີ່ຕົນໄດ້ຮູ້ ຫຼື ໄດ້ເຫັນແທ້ ຫຼື ບໍ, ຊຶ່ງການຊີ້ຕົວ ແລະ ການຢັ້ງຢືນມີວິທີການທີ່ສຳຄັນດັ່ງນີ້:

**1.9.2. ວິທີການຊີ້ຕົວ**

ການຊີ້ຕົວ ແມ່ນວິທີການສືບສວນ-ສອບສວນໜຶ່ງທີ່ສະແດງອອກໂດຍໃຫ້ພະຍານ ຫຼື ຜູ່ຖືກເສັຍຫາຍເປັນຜູ່ຊີ້ຕົວຜູ່ຖືກຫາທີ່ຕົນຮູ້ເຫັນວ່າເປັນຜູ່ກະທຳຜິດໂດຍອາໃສຄວາມຊົງຈຳຂອງຜູ່ຊີ້ຕົວ ແລະ ຕ້ອງດຳເນີນໄປດ້ວຍວິທີການໃຫ້ຜູ່ທີ່ຈະຖືກຊີ້ຕົວມາຮ່ວມກັບບຸກຄົນອື່ນຢ່າງໜ້ອຍສາມຄົນຂຶ້ນໄປໂດຍຕຳນິຮູບປະພັນ, ຈຸດພິເສດຂອງບຸກຄົນທີ່ຄ້າຍຄືກັນ. ການຊີ້ຕົວຕ້ອງໃຫ້ຄວາມເປັນທຳແກ່ທຸກຝ່າຍ, ຊຶ່ງເຈົ້າໜ້າທີ່ຜູ່ຈັດໃຫ້ມີການຊີ້ຕົວຕ້ອງປະຕິບັດດັ່ງນີ້:

1) ກ່ອນການຊີ້ຕົວ ຫຼື ຢັ້ງຢືນນັ້ນ ຜູ່ຈະຊີ້ຕົວບຸກຄົນ, ຢັ້ງຢືນວັດຖຸສິ່ງຂອງ ຫຼື ຊາກສົບຕ້ອງໃຫ້ການກ່ຽວກັບລັກສະນະທົ່ວໄປ, ພ້ອມທັງບອກຕຳນິຮູບປະພັນ ເຊັ່ນ ເພດ, ອາຍຸ, ຂະໜາດ, ຮູບຮ່າງ, ໜ້າຕາ, ຜິວພັນ ແລະ ລັກສະນະຈຸດພິເສດຕ່າງໆຂອງບຸກຄົນ ຫຼື ວັດຖຸສິ່ງຂອງ ຫຼື ຊາກສົບທີ່ຜູ່ຊີ້ຕົວ ຫຼື ຜູ່ຢັ້ງຢືນທີ່ສາມາດຈື່ຈຳຄົນຮ້າຍ, ວັດຖຸສິ່ງຂອງ ຫຼື ຊາກສົບນັ້ນໄດ້ຢ່າງຖືກຕ້ອງ;

2) ບໍ່ອະນຸຍາດໃຫ້ຜູ້ທີ່ບໍ່ມີໜ້າທີ່ກ່ຽວຂ້ອງ ຫຼື ເຈົ້າໜ້າທີ່ໄດ້ມີສ່ວນໄດ້ສ່ວນເສັຍໃນຄະດີເຂົ້າໄປກ່ຽວຂ້ອງກັບການຊີ້ຕົວ ຫຼື ການຢັ້ງຢືນ;

3) ກ່ອນຈະລົງມືຊີ້ຕົວ ຫຼື ຢັ້ງຢືນຢ່າໃຫ້ຜູ້ທີ່ມີການຊີ້ຕົວມີໂອກາດຕິດຕໍ່ກັບບຸກຄົນທີ່ເຫັນວ່າຈະກໍ່ໃຫ້ເກີດຄວາມບໍ່ຍຸຕິທຳໃນຄະດີທັງຢ່າໃຫ້ເຫັນຕົວ ຫຼື ຮູບພາບ ຫຼື ຈຸດຕຳນິຈຸດພິເສດຕ່າງໆຂອງຜູ້ຖືກຊີ້ຕົວ ຫຼື ວັດຖຸ ຫຼື ຊາກສົບທີ່ຈະຖືກຢັ້ງຢືນ;

4) ຕ້ອງໃຫ້ຜູ້ນັ້ນຊີ້ຕົວ ຫຼື ຢັ້ງຢືນດ້ວຍຄວາມຊົງຈຳຂອງຜູ້ກ່ຽວເອງເຈົ້າໜ້າທີ່ບໍ່ຄວນເວົ້າ ຫຼື ສະແດງທ່າທີ ຫຼື ມີຄຳເວົ້າໃດໆອອກມາອັນຈະເຮັດໃຫ້ຜູ້ຊີ້ຕົວ ຫຼື ຢັ້ງຢືນເຂົ້າໃຈວ່າຜູ້ຖືກສົງໄສ ຫຼື ຜູ້ຖືກຫາຄືຜູ້ກະທຳຜິດ;

5) ຖ້າຫາກວ່າມີຜູ້ຊີ້ຕົວຫຼາຍຄົນກໍຕ້ອງຈັດໃຫ້ຊີ້ຕົວເທື່ອລະຄົນ, ເມື່ອຜູ້ທີໜຶ່ງອອກໄປຈາກບ່ອນຊີ້ຕົວແລ້ວຢ່າໃຫ້ກັບໄປຢູ່ ຫຼື ມີໂອກາດຕິດຕໍ່ກັບຜູ້ອື່ນທີ່ຍັງບໍ່ທັນໄດ້ທຳການຊີ້ຕົວ, ທັງນີ້ກໍເພື່ອບໍ່ໃຫ້ເກີດມີການຊີ້ຕົວ ຫຼື ການຢັ້ງຢືນໂດຍເອົາແບບຢ່າງກັນ ຫຼື ມີການໂອ້ລົມກັນ;

6) ເມື່ອຈັດໃຫ້ມີການຊີ້ຕົວ ຫຼື ຢັ້ງຢືນແລ້ວຕ້ອງເຮັດບົດບັນທຶກກ່ຽວກັບການຊີ້ຕົວຂອງແຕ່ລະຄົນໄວ້ໂດຍບົ່ງບອກສະຖານທີ່, ວັນ, ເວລາເລີ່ມຕົ້ນ ແລະ ເວລາສິ້ນສຸດການຊີ້ຕົວ, ຊື່ ແລະ ນາມສະກຸນ, ທີ່ຢູ່, ອາຊີບ, ໜ້າທີ່ຕຳແໜ່ງຂອງເຈົ້າໜ້າທີ່ ແລະ ບຸກຄົນທີ່ເຂົ້າຮ່ວມໃນການຈັດໃຫ້ມີການຊີ້ຕົວ ຫຼື ການຢັ້ງຢືນ, ພ້ອມທັງຜົນຂອງການຊີ້ຕົວ ຫຼື ການຢັ້ງຢືນ, ຈາກນັ້ນຜູ້ເຂົ້າຮ່ວມຈຶ່ງລົງລາຍເຊັນໄວ້ເປັນຫຼັກຖານ.

ຫຼັກການຕ່າງໆທີ່ກ່າວມາໃນຂ້າງເທິງນີ້ກໍມີຈຸດປະສົງທີ່ຈະໃຫ້ຜູ້ຖືກສົງໄສ ຫຼື ຜູ້ຖືກຫາມີຫຼັກປະກັນກ່ຽວກັບສິດ ແລະ ເສລີພາບໂດຍຄຳນຶງເຖິງຄວາມເປັນທຳຄືຖ້າຫາກຜູ້ຖືກສົງໄສ ຫຼື ຜູ້ຖືກຫາບໍ່ໄດ້ກະທຳຜິດແລ້ວຜູ້ກ່ຽວຄວນໄດ້ຮັບການປ່ອຍຕົວໄປຕາມຂັ້ນຕອນຂອງລະບຽບກົດໝາຍ ເນື່ອງຈາກວ່າຈຸດປະສົງຂອງການຊີ້ຕົວ ຫຼື ການຢັ້ງຢືນນີ້ແມ່ນເພື່ອຕ້ອງການໃຫ້ຮູ້ຕົວຜູ້ກະທຳຜິດ ຫຼື ວັດຖຸສິ່ງຂອງ ຫຼື ຊາກສົບທີ່ແທ້ຈິງ.

### 1.9.3. ການຢັ້ງຢືນວັດຖຸ ຫຼື ຊາກສົບ

ການຢັ້ງຢືນວັດຖຸ, ຊາກສົບ ຫຼື ຮູບພາບ ແມ່ນວິທີການໜຶ່ງໃນການສືບສວນ-ສອບສວນທີ່ສະແດງອອກໂດຍໃຫ້ພະຍານ ຫຼື ຜູ້ຖືກເສັຍຫາຍຢັ້ງຢືນວັດຖຸສິ່ງຂອງ, ທີ່ພົວພັນເຖິງການກະທຳຜິດ ຫຼື ຊາກສົບ ຫຼື ຮູບພາບທີ່ຕົນຮູ້ເຫັນ;

ການຢັ້ງຢືນຕົວຜູ້ຖືກຫາໂດຍໃຊ້ວິທີຊີ້ຮູບພາບນີ້ ແມ່ນການຈັດໃຫ້ຜູ້ຖືກເສັຍຫາຍ ຫຼື ພະຍານເບິ່ງຮູບພາບຂອງບຸກຄົນຕ່າງໆທີ່ສົງໄສວ່າເປັນຄົນຮ້າຍຊຶ່ງມີຮູບພາບຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາປົນເປຢູ່ນຳກັນແລ້ວໃຫ້ຜູ້ຖືກເສັຍຫາຍ ຫຼື ພະຍານຊີ້ຢັ້ງຢືນຮູບພາບນັ້ນວ່າມີຮູບພາບຂອງຄົນຮ້າຍ ຫຼື ບໍ່, ໃນເມື່ອໄດ້ເຫັນຄົນຮ້າຍດ້ວຍຕາຂອງຕົນເອງຈຶ່ງເຮັດໃຫ້ຜູ້ຊີ້

ຕົວຈີ່ຈຳຄົນຮ້າຍໄດ້ຕິດຕາມ, ເມື່ອຈັດໃຫ້ມີການຢັ້ງຢືນຮູບພາບຈຶ່ງຢັ້ງຢືນໄດ້ຢ່າງຖືກຕ້ອງ ເຖິງຢ່າງໃດກໍຕາມຖ້າຫາກຈັບຕົວຄົນຮ້າຍໄດ້ກໍຄວນຈະໃຫ້ມີການຊີ້ຕົວໂດຍວິທີຢືນລຽງຄູ່ ຫຼື ໂດຍວິທີຢືນດ່ຽວ, ເວັ້ນເສັຍແຕ່ຍັງຈັບຕົວຄົນຮ້າຍບໍ່ທັນໄດ້ ຫຼື ຍັງບໍ່ທັນຮູ້ວ່າໃຜເປັນຄົນຮ້າຍ ຈຶ່ງຈຳເປັນຕ້ອງນຳໃຊ້ວິທີການຢັ້ງຢືນຮູບພາບສ້າງຮູບພາບຂອງຄົນຮ້າຍຂຶ້ນມາ. ເມື່ອເລືອກໃຊ້ການຢັ້ງຢືນຮູບພາບແລ້ວຕ້ອງໄດ້ດຳເນີນການຕາມວິທີດັ່ງນີ້:

1) ຮູບພາບຂອງຜູ້ຖືກຫາວ່າເປັນຄົນຮ້າຍຄວນເປັນຮູບຖ່າຍທີ່ເຫັນເຕັມໂຕອາດເປັນຮູບຖ່າຍຂອງຜູ້ຖືກຫາ ແລະ ຜູ້ອື່ນໆຢູ່ໃນໃບດຽວກັນ ຫຼື ແຕ່ລະຮູບພາບຂອງແຕ່ລະຄົນເປັນຮູບພາບດ່ຽວຊຶ່ງເອົາຫຼາຍໃບມາປົນເປກັນໄວ້ແລ້ວໃຫ້ຜູ້ຖືກເສັຍຫາຍ ຫຼື ພະຍານຊີ້ຢັ້ງຢືນ;

2) ຮູບພາບຂອງແຕ່ລະຄົນຄວນມີຮູບຮ່າງລັກສະນະ ແລະ ການແຕ່ງກາຍໃກ້ຄຽງກັນ ເຊັ່ນ ຖ້າຜູ້ຖືກເສັຍຫາຍ ຫຼື ພະຍານຈື່ໄດ້ວ່າຄົນຮ້າຍຈິ່ງຜົມຍາວ, ທຸກຄົນໃນຮູບພາບກໍຕ້ອງຕົບແຕ່ງຜົມປອມໃຫ້ເປັນໄປລັກສະນະນັ້ນບໍ່ແມ່ນຈະໃຫ້ມີຜົມຍາວແຕ່ຜູ້ດຽວສ່ວນເຫຼືອຈາກນັ້ນແມ່ນຜົມສັ້ນ;

3) ຄວນຈັດຂະໜາດຂອງຮູບພາບເທົ່າກັນ ແລະ ໃກ້ຄຽງກັນ, ບໍ່ຄວນໃຫ້ຮູບພາບໃດໜຶ່ງແຕກຕ່າງໄປຈາກຮູບພາບຂອງຜູ້ອື່ນໆ;

4) ຮູບພາບຂອງແຕ່ລະຄົນທີ່ເອົາມາຊີ້ຢັ້ງຢືນນັ້ນບໍ່ໃຫ້ຖ່າຍເກີນກ່ວາຫົກເດືອນ, ເພາະຖ້າຫາກເກີນກ່ວານັ້ນຢ້ານວ່າຕົວຈິງກັບຮູບພາບກໍອາດບໍ່ຄ້າຍຄືກັນເລີຍກໍເປັນໄດ້;

ຖ້າຫາກເປັນການຢັ້ງຢືນວັດຖຸ, ໃນການຢັ້ງຢືນວັດຖຸສິ່ງຂອງຕ້ອງນຳເອົາວັດຖຸສິ່ງຂອງທີ່ຈະຖືກຢັ້ງຢືນມາລວມກັນກັບວັດຖຸສິ່ງຂອງອື່ນທີ່ມີລັກສະນະຄ້າຍຄືກັນ, ປະເພດດຽວກັນຢ່າງໜ້ອຍສາມອັນແລ້ວເອົາຜູ້ຈະຢັ້ງຢືນມາຢັ້ງຢືນວັດຖຸທີ່ກ່ຽວຂ້ອງ.

## 2. ມາດຕະການສະກັດກັ້ນ

### 2.1. ຄວາມໝາຍ

ມາດຕະການສະກັດກັ້ນ ແມ່ນຮູບການ ແລະ ວິທີການໜຶ່ງໃນການດຳເນີນຄະດີ ເພື່ອຮັບປະກັນໃຫ້ຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍເອົາຕົວລົບໜີ, ກະທຳຜິດໃໝ່, ທຳລາຍຫຼັກຖານ ຫຼື ອື່ນໆ. ພ້ອມທັງຮັບປະກັນໃຫ້ການດຳເນີນຄະດີອາຍາໃຫ້ໄປຕາມຂັ້ນຕອນຂອງກົດໝາຍ ແລະ ຖືກຕ້ອງເປັນທຳ, ສອດຄ່ອງກັບສະພາບການຂອງການກະທຳຜິດ ແລະ ບຸກຄະລິກກະພາບຂອງຜູ້ກະທຳຜິດ.

ມາດຕະການສະກັດກັ້ນມີຄວາມສຳຄັນຫຼາຍ ແລະ ຕ້ອງພິຈາລະນາຢ່າງຮອບຄອບໃນການທີ່ຈະນຳໃຊ້ມາດຕະການໃດໜຶ່ງເພາະວ່າບັນດາມາດຕະການເຫຼົ່ານັ້ນ ລ້ວນແຕ່ແຕະຕ້ອງເຖິງສິດ, ເສລີພາບ, ກຽດສັກສີຂອງບຸກຄົນ. ສະນັ້ນ, ອີງການດຳເນີນຄະດີອາຍາ

ມີສິດອອກຄຳສັ່ງຕາມຂອບເຂດສິດ ແລະ ໜ້າທີ່ຕາມທີ່ກົດໝາຍໄດ້ກຳນົດໄວ້ເຊັ່ນ ອົງການສືບສວນ-ສອບສວນ ມີສິດອອກຄຳສັ່ງພາຕົວ, ກັກຕົວ ແລະ ຄຸມຕົວຢູ່ກັບທີ່, ສ່ວນມາດຕະການສະກັດກັ້ນອື່ນ ຕ້ອງໄດ້ສະເໜີຂໍຄຳສັ່ງຈາກຫົວໜ້າອົງການໄອຍະການ ຫຼື ສານ.

ຫົວໜ້າອົງການໄອຍະການມີສິດອອກຄຳສັ່ງໃນທຸກມາດຕະການສະກັດກັ້ນ, ສ່ວນສານມີສິດອອກຄຳສັ່ງຄື ການພາຕົວ, ການຈັບຕົວ, ການກັກຂັງພາງ, ການປ່ອຍຕົວພາງ ແລະ ການຄຸມຕົວຢູ່ກັບທີ່, ສ່ວນການກັກຕົວ ແລະ ການງົດໜ້າທີ່ ຫຼື ຕຳແໜ່ງນັ້ນອົງການສືບສວນ-ສອບສວນ ຫຼື ອົງການໄອຍະການໄດ້ນຳໃຊ້ໃນເວລາດຳເນີນຄະດີແຕ່ເບື້ອງຕົ້ນ.

**2.2. ປະເພດມາດຕະການສະກັດກັ້ນ**

- ການພາຕົວ;
- ການກັກຕົວ;
- ການຈັບຕົວ;
- ການກັກຂັງພາງ;
- ການປ່ອຍຕົວພາງ;
- ການຄຸມຕົວຢູ່ກັບທີ່;
- ການງົດໜ້າທີ່ ຫຼື ຕຳແໜ່ງ.

**2.3. ມາດຕະການທີ່ອົງການສືບສວນ-ສອບສວນມີສິດນຳໃຊ້**

**2.3.1. ການພາຕົວ**

ການພາຕົວ ແມ່ນມາດຕະການສະກັດກັ້ນໜຶ່ງທີ່ນຳໃຊ້ໃນກໍລະນີທີ່ຜູ້ຖືກສົງໄສ, ຜູ້ຖືກຫາທີ່ບໍ່ຖືກກັກຂັງພາງ, ພະຍານ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍນັ້ນຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ສານຈະອອກຄຳສັ່ງໃຫ້ພາຕົວຜູ້ກ່ຽວ.

ຕາມຫຼັກການຂອງກົດໝາຍແລ້ວການພາຕົວບໍ່ແມ່ນການຈັບຕົວຜູ້ຖືກສົງໄສ, ຜູ້ຖືກຫາ, ພະຍານ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງຫາກໄດ້ຮັບໝາຍຮຽກເຖິງສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນພຽງພໍ ຊຶ່ງເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການ ຫຼື ຜູ້ພິພາກສາທີ່ໄດ້ອອກໝາຍຮຽກຕ້ອງມີຄວາມໝັ້ນໃຈວ່າຜູ້ກ່ຽວໄດ້ຮັບໝາຍຮຽກໂດຍມີການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ;

ຄຳສັ່ງພາຕົວໃຫ້ປະຕິບັດໄດ້ແຕ່ເວລາຫົກໂມງຫາສິບແປດໂມງເວັ້ນເສັຍແຕ່ກໍລະນີທີ່ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ຈະເອົາຕົວຫຼົບໜີ ຫຼື ບໍ່ມີທີ່ຢູ່ອັນແນ່ນອນ.

ການປະຕິບັດຄຳສັ່ງພາຕົວ ແມ່ນສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ກ່ອນຈະພາຕົວຕ້ອງອ່ານຄຳສັ່ງໃຫ້ຜູ່ຖືກພາຕົວຮັບຊາບ.

ບໍ່ອະນຸຍາດໃຫ້ທຳການພາຕົວແມ່ຍິງຖືພາມານ ຫຼື ຄົນເຈັບປ່ວຍທີ່ບໍ່ສາມາດອອກ ຈາກສະຖານທີ່ ຊຶ່ງໄດ້ຮັບການຢັ້ງຢືນຈາກຄະນະແພດ.

**ຕົວຢ່າງ: ແບບພິມໝາຍຮຽກ ຂອງອົງການສືບສວນ-ສອບສວນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການສືບສວນ-ສອບສວນ

ຂອງເຈົ້າໜ້າທີ່.................. ເລກທີ......../

**ໝາຍຮຽກ**

**ຄັ້ງທີ..................**

– ອີງຕາມ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງປີ 2012, ມາດຕາ 113 ແລະ 114;

ຫົວໜ້າອົງການສືບສວນ-ສອບສວນ.......................................ໄດ້ອອກໝາຍຮຽກ ໃຫ້ ທ້າວ ຫຼື ນາງ................................................., ອາຍຸ.........ປີ, ສັນຊາດ ............., ຊົນເຜົ່າ......................., ອາຊີບ...................., ປັດຈຸບັນຢູ່ໜ່ວຍ.............. ບ້ານ.................., ເມືອງ................., ແຂວງ/ນະຄອນຫຼວງວຽງຈັນ......................... . ເຂົ້າພົບທ່ານ................................, ໜ້າທີ່ຮັບຜິດຊອບ.........................ຢູ່ຫ້ອງເບີ....... ...............ຊັ້ນທີ.........., ຂອງອົງການສືບສວນ-ສອບສວນ...................................., . ໃນວັນທີ.........../........./........., ເວລາ............ໂມງ...........ນາທີ, ກ່ຽວກັບຄະດີອາຍາ ສະບັບເລກທີ..........., ລົງວັນທີ......../......../........, ໃນຖານະເປັນ.....................;

ທີ່........., ວັນທີ......./......../.....

ຫົວໜ້າອົງການສືບສວນ-ສອບສວນ

ຢັ້ງຢືນວ່າໄດ້ຮັບໝາຍຮຽກສະບັບນີ້ແລ້ວ

ວັນທີ.........../........../...........

ໝາຍເຫດ: ຖ້າຜູ່ຖືກຮຽກຫາກບໍ່ປະຕິບັດຕາມໝາຍຮຽກ ຫຼື ບໍ່ເຂົ້າມາຕາມໝາຍຮຽກໂດຍບໍ່ມີເຫດຜົນ ຈະຖືກພາຕົວຕາມກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ມາດຕາ 137.

**ຕົວຢ່າງ: ແບບພິມຄຳສັ່ງພາຕົວຂອງອົງການສືບສວນ-ສອບສວນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ........................ ເລກທີ........./.......

ອົງການສືບສວນ-ສອບສວນ..... ລົງວັນທີ....../....../........

## ຄຳສັ່ງພາຕົວ

– ອີງຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 137;

ຫົວໜ້າອົງການສືບສວນ-ສອບສວນ.................. ໄດ້ອອກໝາຍຮຽກ ທ້າວ ຫຼື ນາງ.......... ................, ອາຍຸ .......... ປີ, ອາຊີບ ......................., ເຊື້ອຊາດ ........, ສັນຊາດ ................ ຕັ້ງຢູ່ບ້ານ ............, ໜ່ວຍ..............., ເຮືອນເລກທີ ...................., ເມືອງ ....................., ແຂວງ..............................., ໃນຖານະ ......................ຈຳນວນ...........ຄັ້ງແລ້ວ ຕາມໝາຍຮຽກຄັ້ງທີ........ສະບັບເລກທີ .........../..........., ລົງວັນທີ...........................ແຕ່ບໍ່ເຂົ້າມາພົບຕາມໝາຍຮຽກໂດຍບໍ່ມີເຫດຜົນ.

ດັ່ງນັ້ນ, ຫົວໜ້າອົງການສືບສວນ-ສອບສວນ............ ຈຶ່ງອອກຄຳສັ່ງພາຕົວສະບັບນີ້ ໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ.................... ພາຕົວ ທ້າວ ຫຼື ນາງ.................. .................... ເຂົ້າມາອົງການສືບສວນ-ສອບສວນ......................................... .................ວັນທີ........../.........../........., ເວລາ........ໂມງ......ນາທີ

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ

**ຫົວໜ້າອົງການສືບສວນ-ສອບສວນ**

**ຕົວຢ່າງ: ແບບພິມຄຳສັ່ງພາຕົວຂອງອົງການໄອຍະການແຂວງ,ນະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ...................... ເລກທີ......../ອຍກ.......

ອົງການໄອຍະການປະຊາຊົນ ລົງວັນທີ...../...../.......

**ຄຳສັ່ງພາຕົວ**

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ (ສະບັບປັບປຸງປີ 2009) ມາດຕາ 42;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ສະບັບປັບປຸງປີ 2012) ມາດຕາ 137;

ຫົວໜ້າອົງການໄອຍະການປະຊາຊົນ............................... ໄດ້ອອກໝາຍຮຽກ ທ້າວ ຫຼື ນາງ........................, ອາຍຸ ......... ປີ, ອາຊີບ ......................, ເຊື້ອຊາດ ........, ສັນຊາດ ............... ຕັ້ງຢູ່ບ້ານ ..........., ໜ່ວຍ.............., ເຮືອນເລກທີ..................., ເມືອງ ...................., ແຂວງ........................., ໃນຖານະ......................ຈຳນວນ...........ຄັ້ງແລ້ວ ຕາມໝາຍຮຽກຄັ້ງທີ........ສະບັບເລກທີ.........../..........., ລົງວັນທີ....................ແຕ່ບໍ່ເຂົ້າມາພົບຕາມໝາຍຮຽກໂດຍບໍ່ມີເຫດຜົນ.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນ...................... ຈຶ່ງອອກຄຳສັ່ງພາຕົວສະບັບນີ້ ໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນ.................... ພາຕົວ ທ້າວ ຫຼື ນາງ.................................. ເຂົ້າມາອົງການໄອຍະການປະຊາຊົນ.............................................ວັນທີ........../.........../........., ເວລາ........ໂມງ......ນາທີ

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການ ໄອຍະການປະຊາຊົນ**

### 2.3.2. ການກັກຕົວ

ການກັກຕົວ ແມ່ນມາດຕະການສະກັດກັ້ນໜຶ່ງທີ່ນໍາໃຊ້ຕໍ່ຜູ້ຖືກສົງໄສເມື່ອໄດ້ເອົາຄໍາໃຫ້ການແລ້ວເຫັນວ່າມີຂໍ້ມູນຫຼັກຖານໜັກແໜ້ນວ່າຜູ້ກ່ຽວໄດ້ກະທໍາຜິດທາງອາຍາຊຶ່ງກົດໝາຍໄດ້ກໍານົດໂທດຕັດອິດສະລະພາບ, ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການອາດຈະອອກຄໍາສັ່ງກັກຕົວຜູ້ກ່ຽວໄວ້ໄດ້ພາຍໃນກໍານົດສີ່ສິບແປດຊົ່ວໂມງເພື່ອດໍາເນີນການສືບສວນ-ສອບສວນ, ໃນກໍລະນີທີ່ຫົວໜ້າອົງການສືບສວນ-ສອບສວນໄດ້ອອກຄໍາສັ່ງກັກຕົວຜູ້ຖືກສົງໄສຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການຊາບເປັນລາຍລັກອັກສອນ ພາຍໃນກໍານົດຊາວສີ່ຊົ່ວໂມງນັບແຕ່ເວລາທີ່ໄດ້ອອກຄໍາສັ່ງກັກຕົວເປັນຕົ້ນໄປ.

ໃນການກັກຕົວ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງອ່ານຄໍາສັ່ງກັກຕົວ ພ້ອມທັງແຈ້ງສິດ ແລະ ພັນທະໃຫ້ຜູ້ຖືກກັກຕົວຊາບແລ້ວແຈ້ງສະຖານທີ່ກັກຕົວໃຫ້ຄອບຄົວ, ສໍານັກງານ, ອົງການ ຫຼື ວິສາຫະກິດທີ່ຜູ້ກ່ຽວສັງກັດຢູ່ຊາບພາຍໃນກໍານົດຊາວສີ່ຊົ່ວໂມງ.

ພາຍໃນກໍານົດສີ່ສິບແປດຊົ່ວໂມງນັບແຕ່ເວລາອອກຄໍາສັ່ງກັກຕົວເປັນຕົ້ນໄປເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງລົງຄໍາເຫັນດັ່ງນີ້:

– ຖ້າເຫັນວ່າບໍ່ມີຂໍ້ມູນຫຼັກຖານໜັກແໜ້ນທີ່ພາໃຫ້ອອກຄໍາສັ່ງເປີດການສືບສວນ-ສອບສວນໄດ້ນັ້ນເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງຂໍຄໍາສັ່ງປ່ອຍຕົວຈາກຫົວໜ້າອົງການສືບສວນ-ສອບສວນແລ້ວປ່ອຍຜູ້ຖືກກັກຕົວພ້ອມທັງລາຍງານເປັນລາຍລັກອັກສອນໃຫ້ຫົວໜ້າອົງການໄອຍະການຊາບໃນທັນໃດ. ສໍາລັບພະນັກງານໄອຍະການຕ້ອງຂໍຄໍາສັ່ງປ່ອຍຕົວຈາກຫົວໜ້າອົງການໄອຍະການ.

– ຖ້າເຫັນວ່າມີຂໍ້ມູນຫຼັກຖານໜັກແໜ້ນທີ່ພາໃຫ້ອອກຄໍາສັ່ງເປີດການສືບສວນ-ສອບສວນໄດ້ນັ້ນຫົວໜ້າອົງການສືບສວນ-ສອບສວນຕ້ອງອອກຄໍາສັ່ງເປີດການສືບສວນ-ສອບສວນ. ສໍາລັບພະນັກງານໄອຍະການຕ້ອງຂໍຄໍາສັ່ງເປີດການສືບສວນ-ສອບສວນຈາກຫົວໜ້າອົງການໄອຍະການ.

– ຖ້າເຫັນວ່າມີຄວາມຈໍາເປັນຕ້ອງທໍາການກັກຂັງພາງເພື່ອດໍາເນີນການສືບສວນ-ສອບສວນແລ້ວຫົວໜ້າອົງການສືບສວນ-ສອບສວນຕ້ອງຂໍຄໍາສັ່ງກັກຂັງພາງຈາກຫົວໜ້າອົງການໄອຍະການ, ສໍາລັບພະນັກງານໄອຍະການຕ້ອງຂໍຄໍາສັ່ງກັກຂັງພາງຈາກຫົວໜ້າອົງການໄອຍະການ.

ພາຍຫຼັງທີ່ໄດ້ຮັບຄຳສະເໜີຂໍຄຳສັ່ງກັກຂັງພາງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການແລ້ວຫົວໜ້າອົງການໄອຍະການຕ້ອງລົງຄຳເຫັນຊີ້ຂາດພາຍໃນກຳນົດຊາວສີ່ຊົ່ວໂມງວ່າຈະປ່ອຍຕົວ ຫຼື ຈະກັກຂັງພາງ.

## ແຜນວາດການນຳໃຊ້ມາດຕະການກັກຕົວ (ກໍລະນີທົ່ວໄປ)




## ແຜນວາດການນຳໃຊ້ມາດຕະການກັກຕົວ (ກໍລະນີເດັກກະທຳຜິດ)



**ຕົວຢ່າງ: ແບບພິມຄໍາສັ່ງກັກຕົວຂອງອົງການສືບສວນ-ສອບສວນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການສືບສວນ-ສອບສວນ

ຂອງເຈົ້າໜ້າທີ່........................... ເລກທີ…………..…/

# ຄໍາສັ່ງກັກຕົວ

– ອີງຕາມ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 138;

– ອີງຕາມ ການເກັບກໍາຂໍ້ມູນເບື້ອງຕົ້ນ ແລະ ບົດລາຍງານຂອງເຈົ້າໜ້າທີ່ສືບສວນ-ສອບສວນ ສະບັບເລກທີ........../......, ລົງວັນທີ....../......../........;

ຫົວໜ້າອົງການສືບສວນ-ສອບສວນ....................ໄດ້ຄົ້ນຄວ້າແລ້ວ ເຫັນວ່າ ທ້າວ ຫຼື ນາງ................, ອາຍຸ........ປີ, ສັນຊາດ.........., ເຊື້ອຊາດ............, ອາຊີບ .............., ປະຈຸບັນຢູ່ໜ່ວຍ..........ບ້ານ......................, ເມືອງ.........................., ແຂວງ/ນະຄອນ............... ຖືກສົງໄສວ່າ ໄດ້ກະທໍາຜິດ ໃນສະຖານ............................ ຕາມມາດຕາ..........................ຂອງກົດໝາຍອາຍາ ຫຼື ກົດໝາຍ...................;

ດັ່ງນັ້ນ, ຫົວໜ້າອົງການສືບສວນ-ສອບສວນ......................ຈິ່ງໄດ້ອອກຄໍາສັ່ງກັກຕົວສະບັບນີ້ເພື່ອດໍາເນີນການສືບສວນ-ສອບສວນຕາມກົດໝາຍ.

ຄໍາສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ທີ່.....................,ວັນທີ........./........./.......

**ຫົວໜ້າອົງການສືບສວນ-ສອບສວນ**

**ຕົວຢ່າງ: ແບບພິມຄຳສັ່ງກັກຕົວຂອງອົງການໄອຍະການປະຊາຊົນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ......................... ເລກທີ......../ອຍກ........

ອົງການໄອຍະການປະຊາຊົນ ລົງວັນທີ...../....../..........

**ຄຳສັ່ງກັກຕົວ**

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2009 ມາດຕາ 42 ຂໍ້ 5;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 138;
- ອີງຕາມ ບົດລາຍງານ ແລະ ໃບສະເໜີຂອງ............................................ ສະບັບເລກທີ ....../......, ລົງວັນທີ ...../....../........

ຫົວໜ້າອົງການໄອຍະການປະຊາຊົນ............ ໄດ້ຄົ້ນຄ້ວາບົດລາຍງານ ແລະ ໃບສະເໜີຂອງ.......................................ເພື່ອຂໍຄຳສັ່ງກັກຕົວຂອງ ທ້າວ ຫຼື ນາງ ........................., ອາຍຸ .......... ປີ, ອາຊີບ ......................, ເຊື້ອຊາດ ........., ສັນຊາດ ................, ຢູ່ບ້ານ ..........................., ໜ່ວຍ........., ເຮືອນເລກທີ ..................., ເມືອງ ...................................., ແຂວງ................. ຖືກສົງໄສວ່າ ................................ເມື່ອໄດ້ຄົ້ນຄ້ວາແລ້ວເຫັນວ່າ ມີຫຼັກຖານໜັກແໜ້ນທີ່ຊີ້ບອກວ່າ ຜູ່ກ່ງວໄດ້ຖືກສົງໄສວ່າ ກະທຳຜິດໃນສະຖານ..................................ຊຶ່ງບົ່ງໄວ້ໃນມາດຕາ .....................ຂອງກົດໝາຍອາຍາ ແລະ ກົດໝາຍ............................................

ດັ່ງນັ້ນ, ຫົວໜ້າອົງການໄອຍະກາປະຊາຊົນ.....................ຈຶ່ງອອກຄຳສັ່ງກັກຕົວ ທ້າວ ຫຼື ນາງ.......................

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

### 2.3.3. ການຄຸມຕົວຢູ່ກັບທີ່

ການຄຸມຕົວຢູ່ກັບທີ່ ແມ່ນການບໍ່ອະນຸຍາດໃຫ້ຜູ້ຖືກຫາ ຫຼື ຈຳເລີຍອອກຈາກສະຖານທີ່ໃດໜຶ່ງເພື່ອຮັບປະກັນການດຳເນີນຄະດີ, ການຄຸມຕົວຢູ່ກັບທີ່ຕ້ອງມີຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ສານໂດຍບໍ່ໃຫ້ຜູ້ຖືກຫາ ຫຼື ຈຳເລີຍອອກຈາກສະຖານທີ່ປະຕິບັດ.

ຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ສານຕ້ອງອອກຄຳສັ່ງຄຸມຕົວຢູ່ກັບທີ່ໃຫ້ອົງການປົກຄອງບ້ານບ່ອນຜູ້ຖືກຫາ ຫຼື ຈຳເລີຍອາໄສຢູ່ຊາບພ້ອມທັງມອບໃຫ້ອົງການປົກຄອງບ້ານນັ້ນເປັນຜູ້ຄຸ້ມຄອງ ແລະ ຕິດຕາມຈົນກວ່າຈະມີຄຳສັ່ງລົບລ້າງ, ໃນກໍລະນີທີ່ຜູ້ຖືກຫາ ຫຼື ຈຳເລີຍຫາກໄດ້ລະເມີດຄຳສັ່ງຄຸມຕົວຢູ່ກັບທີ່ອາດນຳໃຊ້ມາດຕະການສະກັດກັ້ນອື່ນທີ່ໜັກກວ່າເກົ່າໃສ່ຜູ້ກ່ຽວຕາມຄວາມເໝາະສົມ.

## 2.4. ມາດຕະການສະກັດກັ້ນທີ່ຂໍຄຳສັ່ງຈາກອົງການໄອຍະການ

### 2.4.1. ການຈັບຕົວ

ການຈັບຕົວບຸກຄົນໃດໜຶ່ງຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານເວັ້ນເສຍແຕ່ການຈັບຕົວໃນກໍລະນີການກະທຳຜິດເຊິ່ງໜ້າ ຫຼື ຮີບດ່ວນ (ມ 140 ກດຍ).

#### ກ. ເງື່ອນໄຂໃນການອອກຄຳສັ່ງຈັບຕົວ

ໃນການພິຈາລະນາອອກຄຳສັ່ງຈັບຕົວຫົວໜ້າອົງການໄອຍະການ ຫຼື ສານຕ້ອງອີງໃສ່ເງື່ອນໄຂດັ່ງນີ້:

– ມີຄຳສັ່ງເປີດການສືບສວນ-ສອບສວນ;

– ມີການກະທຳຊຶ່ງເປັນການກະທຳຜິດທາງອາຍາທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບ;

– ມີຫຼັກຖານໃນຄະດີໜັກແໜ້ນ;

ໃນການອອກຄຳສັ່ງຈັບຕົວຫົວໜ້າອົງການໄອຍະການ ຫຼື ສານຕ້ອງຄົ້ນຄວ້າພິຈາລະນາຢ່າງລະອຽດຖີ່ຖ້ວນ, ຖ້າເຫັນວ່າຜູ້ຖືກຫາມີທີ່ຢູ່ທີ່ແນ່ນອນ, ໃຫ້ຄວາມຮ່ວມມື ແລະ ຕອບສະໜອງຂໍ້ມູນທຸກຢ່າງຕໍ່ອົງການດຳເນີນຄະດີອາຍາ ແລະ ເປັນການກະທຳຜິດທີ່ກົດໝາຍກຳນົດໂທດຕັດອິດສະລະພາບຕ່ຳກວ່າສາມປີ ຊຶ່ງເຫັນວ່າຈະບໍ່ເໝາະສົມໃນການນຳໃຊ້ມາດຕະການດັ່ງກ່າວນີ້ ເພາະວ່າການຈັບຕົວແມ່ນແຕະຕ້ອງເຖິງສິດ, ເສລີພາບ ແລະ ກຽດສັກສີຂອງບຸກຄົນ.

ນອກຈາກນັ້ນແລ້ວຍັງຕ້ອງອີງໃສ່ເງື່ອນໄຂໃດໜຶ່ງ ເຊັ່ນ ຜູ້ຖືກຫາອາດຈະເອົາຕົວຫຼົບໜີ, ທຳລາຍຫຼັກຖານ, ກະທຳຜິດໃໝ່, ທຳຮ້າຍຜູ້ຖືກເສຍຫາຍ, ພະຍານ ຫຼື ຜູ້ຖືກຫາອາດຈະຖືກທຳຮ້າຍຈາກຜູ້ຖືກເສຍຫາຍ ຫຼື ຈາກບຸກຄົນອື່ນ.

**ຂ. ຮູບການຂອງການຈັບຕົວ**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດສອງຮູບການຂອງການຈັບຕົວຄື:

– ການຈັບຕົວໃນກໍລະນີທຳມະດາ, ຊຶ່ງຈຳເປັນຕ້ອງມີຄຳສັ່ງຈັບຕົວຈາກຫົວໜ້າອົງການໄອຍະການ, ໃນກໍລະນີຄະດີທີ່ອົງການສືບສວນ-ສອບສວນດຳເນີນການສືບສວນ-ສອບສວນເພື່ອປະກອບຫຼັກຖານ, ຖ້າວ່າຄະດີຢູ່ຂັ້ນອົງການໄອຍະການດຳເນີນການສືບສວນ-ສອບສວນ ຫຼື ຂັ້ນຕອນຂອງການສັ່ງຟ້ອງກໍສາມາດອອກຄຳສັ່ງຈັບຕົວໄດ້, ຖ້າຄະດີຢູ່ໃນການພິຈາລະນາຂອງສານ, ສານທີ່ກ່ຽວຂ້ອງກໍມີສິດໃນການອອກຄຳສັ່ງຈັບຕົວ.

– ການຈັບຕົວໃນກໍລະນີການກະທຳຜິດເຊິ່ງໜ້າ ແລະ ຮີບດ່ວນບໍ່ຈຳເປັນຕ້ອງມີຄຳສັ່ງຈັບຕົວ (ມ 140 ກດຍ).

❖ ການກະທຳຜິດເຊິ່ງໜ້າແມ່ນການກະທຳຜິດຂອງບຸກຄົນໃນກໍລະນີດັ່ງນີ້:

1) ບຸກຄົນທີ່ພວມກະທຳຜິດຢູ່ ຫຼື ຫາກໍສິ້ນສຸດການກະທຳຜິດ;

2) ບຸກຄົນທີ່ໄດ້ກະທຳຜິດທີ່ພວມຖືກໄລ່ຕິດຕາມໄປ ຫຼື ມີບຸກຄົນ ຊຶ່ງຜູ້ເຫັນເຫດການ ຫຼື ຜູ້ຖືກເສຍຫາຍໄດ້ຊີ້ຕົວວ່າໄດ້ກະທຳຜິດ;

3) ບຸກຄົນທີ່ມີຮ່ອງຮອຍຂອງການກະທຳຜິດຢູ່ໃນຕົນຕົວ, ຢູ່ໃນເຮືອນ ຫຼື ຢູ່ບ່ອນເຮັດວຽກຂອງຜູ້ກ່ຽວໃນໄລຍະເວລາຊຶ່ງການກະທຳຜິດນັ້ນຫາກໍໄດ້ເກີດຂຶ້ນ;

❖ ການກະທຳຜິດໃນກໍລະນີຮີບດ່ວນແມ່ນການກະທຳຜິດຂອງບຸກຄົນໃນກໍລະນີດັ່ງນີ້:

1) ບຸກຄົນທີ່ຖືກສົງໄສວ່າໄດ້ກະທຳຜິດຊຶ່ງມີປະຫວັດບໍ່ດີ ຫຼື ບ່ອນຢູ່ບໍ່ແນ່ນອນ;

2) ບຸກຄົນທີ່ຖືກສົງໄສວ່າໄດ້ກະທຳຜິດຊຶ່ງພວມຈະເອົາຕົວຫຼົບໜີ.

ການຈັບຕົວໃນກໍລະນີຮີບດ່ວນ ແມ່ນມີແຕ່ເຈົ້າໜ້າທີ່ສືບສວນ-ສອບສວນເທົ່ານັ້ນຈະປະຕິບັດໄດ້, ໃນກໍລະນີທີ່ບໍ່ແມ່ນເຈົ້າໜ້າທີ່ສືບສວນ-ສອບສວນທຳການຈັບຕົວນັ້ນຕ້ອງນຳຜູ້ຖືກຈັບຕົວໄປມອບໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນໃນທັນໃດ. ສຳລັບການຈັບຕົວຢູ່ໃນເຂດຫ່າງໄກສອກຫຼີກນັ້ນໃຫ້ນຳຕົວຜູ້ຖືກຈັບຕົວໄປມອບໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນບໍ່ໃຫ້ເກີນເຈັດວັນນັບແຕ່ວັນຈັບຕົວເປັນຕົ້ນໄປ.

**ຄ. ວິທີການຂອງການຈັບຕົວ**

ການຈັບຕົວພິກຂຸ ຫຼື ສາມະເນນຕ້ອງແຈ້ງໃຫ້ເຈົ້າອະທິການວັດ ຫຼື ຜູ້ຕາງໜ້າຊາບເພື່ອປົງສິກຂາບົດເສຍກ່ອນໃນກໍລະນີຈັບນັກບວດຂອງສາສະໜາອື່ນກໍຕ້ອງແຈ້ງໃຫ້ຫົວໜ້າ

ຮັບຜິດຊອບຂອງອົງການສາສະໜານັ້ນຊາບ, ໃນການຈັບຕົວເຈົ້າໜ້າທີ່ຕ້ອງອ່ານຄໍາສັ່ງຈັບຕົວ ພ້ອມທັງແຈ້ງຂໍ້ກ່າວຫາ, ສິດ ແລະ ພັນທະໃຫ້ຜູ້ຖືກຈັບຕົວຊາບ, ພາຍຫຼັງທີ່ໄດ້ຈັບຕົວຜູ້ຖືກຫາແລ້ວເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການຕ້ອງເອົາຄໍາໃຫ້ການຂອງຜູ້ຖືກຈັບຕົວໃນທັນໃດ ແລະ ຕ້ອງລາຍງານເປັນລາຍລັກອັກສອນໃຫ້ຫົວໜ້າອົງການໄອຍະການຊາບພາຍໃນກໍານົດຊາວສີ່ຊົ່ວໂມງ, ພາຍໃນກໍານົດຊາວສີ່ຊົ່ວໂມງນັບແຕ່ເວລາຈັບຕົວເປັນຕົ້ນໄປ ພະນັກງານໄອຍະການຕ້ອງລົງຄໍາເຫັນວ່າຈະປ່ອຍຕົວ ຫຼື ຈະກັກຂັງພາງ.

ໃນກໍລະນີທີ່ເຫັນວ່າຕ້ອງປ່ອຍຕົວ ຫຼື ມີຄວາມຈໍາເປັນຕ້ອງກັກຂັງພາງເພື່ອດໍາເນີນການສືບສວນ-ສອບສວນແລ້ວ ຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການ ຕ້ອງຂໍຄໍາສັ່ງປ່ອຍຕົວ ຫຼື ຄໍາສັ່ງກັກຂັງພາງຈາກຫົວໜ້າອົງການໄອຍະການ.

ພາຍຫຼັງທີ່ຮັບຄໍາສະເໜີຂໍປ່ອຍຕົວ ຫຼື ກັກຂັງພາງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການແລ້ວຫົວໜ້າອົງການໄອຍະການຕ້ອງລົງຄໍາເຫັນຊີ້ຂາດພາຍໃນກໍານົດຊາວສີ່ຊົ່ວໂມງວ່າຈະປ່ອຍຕົວ ຫຼື ຈະອອກຄໍາສັ່ງກັກຂັງພາງ.

ການຈັບຕົວຕ້ອງດໍາເນີນໄປດ້ວຍວິທີ ແລະ ຮູບການອັນເໝາະສົມກັບລັກສະນະຂອງການກະທໍາຜິດ ແລະ ຜູ້ຖືກຈັບຕົວບໍ່ອະນຸຍາດໃຫ້ທຸບຕີ ຫຼື ທໍລະມານຜູ້ຖືກຈັບຕົວ.

ການຈັບຕົວບໍ່ວ່າຈະແມ່ນໃນກໍລະນີໃດ ຕ້ອງແຈ້ງໃຫ້ຄອບຄົວ, ອົງການປົກຄອງບ້ານສໍານັກງານ, ອົງການ ຫຼື ວິສາຫະກິດທີ່ຜູ້ກ່ຽວສັງກັດຢູ່ຊາບພາຍໃນເວລາຊາວສີ່ຊົ່ວໂມງພ້ອມທັງແຈ້ງສະຖານທີ່ກັກຂັງ.

**ແຜນວາດການນໍາໃຊ້ມາດຕະການຈັບຕົວ (ກໍລະນີທົ່ວໄປ)**



**ແຜນວາດການນຳໃຊ້ມາດຕະການຈັບຕົວ (ກໍລະນີເດັກກະທຳຜິດ)**




**໑. ບົດບັນທຶກການຈັບຕົວ**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 141 ກຳນົດດັ່ງນີ້:

ໃນກໍລະນີໃດກໍຕາມການຈັບຕົວຕ້ອງເຮັດບົດບັນທຶກໄວ້ເປັນຫຼັກຖານ.

ໃນບົດບັນທຶກການຈັບຕົວນັ້ນຕ້ອງບອກຊື່, ນາມສະກຸນ, ຊັ້ນຕຳແໜ່ງ, ໜ້າທີ່ ແລະ ບ່ອນປະຈຳການຂອງເຈົ້າໜ້າທີ່ສືບສວນ-ສອບສວນ ພ້ອມທັງຊື່, ນາມສະກຸນ, ອາຍຸ, ອາຊີບ, ຊັ້ນ, ຕຳແໜ່ງ, ໜ້າທີ່ ແລະ ບ່ອນຢູ່ຂອງຜູ້ຖືກຈັບຕົວ, ວັນ, ເວລາ ແລະ ສະຖານທີ່ຈັບຕົວ, ຂໍ້ກ່າວຫາ, ສາເຫດ ແລະ ຂໍ້ມູນຫຼັກຖານທີ່ພາໃຫ້ຈັບຕົວ.

ໃນບົດບັນທຶກການຈັບຕົວຕ້ອງບອກຊື່, ຈຳນວນ, ປະເພດ, ນ້ຳໜັກ, ຄຸນນະພາບ, ຕຳນິ ແລະ ຮູບປະພັນອື່ນຂອງວັດຖຸສິ່ງຂອງທີ່ຖືກຍຶດເປັນຂອງກາງ ແລະ ວັດຖຸສິ່ງຂອງທີ່ເປັນຂອງຕິດຕົວຜູ້ຖືກຈັບຕົວ.

ວັດຖຸສິ່ງຂອງຕິດຕົວຂອງຜູ້ຖືກຈັບຕົວທີ່ຖືກຕ້ອງຕາມກົດໝາຍນັ້ນຕ້ອງມອບໃຫ້ຄອບຄົວຂອງຜູ້ກ່ຽວຄືນຢ່າງຄົບຖ້ວນ ແລະ ຢູ່ໃນສະພາບເດີມພ້ອມທັງເຮັດບົດບັນທຶກມອບຮັບຢ່າງຄັກແນ່ໂດຍຊ້ອງໜ້າຜູ້ຖືກຈັບຕົວນັ້ນ. ໃນກໍລະນີທີ່ວັດຖຸສິ່ງຂອງທີ່ເປັນຂອງຕິດຕົວຂອງຜູ້ຖືກຈັບຕົວຫາກບໍ່ຄົບຖ້ວນ ຫຼື ບໍ່ຢູ່ໃນສະພາບເດີມນັ້ນເຈົ້າໜ້າທີ່ຜູ້ປົກປັກຮັກສາວັດຖຸສິ່ງຂອງນັ້ນຈະໄດ້ຮັບຜິດຊອບທາງອາຍາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ.

ພາຍຫຼັງທີ່ໄດ້ເຮັດບົດບັນທຶກການຈັບຕົວແລ້ວຕ້ອງອ່ານໃຫ້ຜູ້ເຂົ້າຮ່ວມໃນການຈັບຕົວຟັງແລ້ວລົງລາຍເຊັນ ແລະ ແປະໂປ້ມືໄວ້.

**ຕົວຢ່າງ: ແບບພິມຄໍາສັ່ງຈັບຕົວ ຂອງອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ.................... ເລກທີ........./ອຍກ........

ອົງການໄອຍະການປະຊາຊົນ ລົງວັນທີ....../....../........

**ຄໍາສັ່ງຈັບຕົວ**

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2009 ມາດຕາ 42 ຂໍ້ 5;
- ອີງຕາມ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 139;
- ອີງຕາມ ບົດລາຍງານຂອງ.......................ສະບັບເລກທີ...../..........., ລົງວັນທີ........ຕາມຂາເຂົ້າເລກທີ........./ອຍກ.ນວ, ລົງວັນທີ ....../......./.............

ຫົວໜ້າອົງການໄອຍະການປະຊາຊົນ............. ໄດ້ຄົ້ນຄ້ວາບົດລາຍງານຄະດີ ແລະ ເອກະສານຕ່າງໆທີ່ມີຢູ່ໃນສໍານວນຄະດີຢ່າງລະອຽດຖີ່ຖ້ວນແລ້ວເຫັນວ່າ ມີເງື່ອນໄຂ ແລະ ເຫດຜົນພຽງພໍອອກຄໍາສັ່ງຈັບຕົວ ທ້າວ ຫຼື ນາງ ......................, ອາຍຸ ....... ປີ, ເຊື້ອຊາດ ........, ສັນຊາດ ....., ອາຊີບ........, ຢູ່ບ້ານ .........., ໜ່ວຍ ..., ເມືອງ............, ແຂວງ .............

- ຖືກຫາວ່າ: ......................... ຕາມມາດຕາ.............. ຂອງກົດໝາຍອາຍາ.

ສະນັ້ນ, ຫົວໜ້າອົງການໄອຍະການປະຊາຊົນ................................ ຈຶ່ງອອກຄໍາສັ່ງຈັບຕົວ ທ້າວ ຫຼື ນາງ ......................ໃຫ້ເຈົ້າໜ້າທີ່................................ນໍາຕົວມາດໍາເນີນຄະດີຕາມກົດໝາຍ.

ຄໍາສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

**2.4.2. ການກັກຂັງພາງ**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 142 ໄດ້ກຳນົດວ່າ ການກັກຂັງພາງແມ່ນການກັກຂັງຊົ່ວຄາວກ່ອນຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດ; ການກັກຂັງພາງຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານ.

**ກ. ເງື່ອນໄຂໃນການອອກຄຳສັ່ງກັກຂັງພາງ**

ກ່ອນການອອກຄຳສັ່ງກັກຂັງພາງຫົວໜ້າອົງການໄອຍະການຕ້ອງໄດ້ຄົ້ນຄວ້າໂດຍອີງໃສ່ເງື່ອນໄຂຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 139 ດັ່ງນີ້:

– ມີຄຳສັ່ງເປີດການສືບສວນ-ສອບສວນຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຂອງຫົວໜ້າອົງການໄອຍະການ;

– ມີການກະທຳຜິດຊຶ່ງເປັນການກະທຳຜິດທາງອາຍາທີ່ກົດໝາຍກຳນົດໂທດຕັດອິດສະລະພາບ;

– ມີຫຼັກຖານໃນຄະດີໜັກແໜ້ນ.

ນອກຈາກເງື່ອນໄຂທີ່ກ່າວມາຂ້າງເທິງນັ້ນແລ້ວການອອກຄຳສັ່ງກັກຂັງພາງຍັງຕ້ອງອີງໃສ່ເງື່ອນໄຂ ເຊັ່ນ ຜູ້ຖືກຫາອາດຈະເອົາຕົວຫຼົບໜີ, ທຳລາຍຫຼັກຖານ, ກະທຳຜິດໃໝ່, ທຳຮ້າຍຜູ້ຖືກເສັຍຫາຍ, ພະຍານ ຫຼື ຜູ້ຖືກຫາອາດຈະຖືກທຳຮ້າຍຈາກຜູ້ຖືກເສັຍຫາຍ ຫຼື ຈາກບຸກຄົນອື່ນ.

**ຂ. ວິທີການກັກຂັງພາງ**

ພາຍຫຼັງທີ່ຫົວໜ້າອົງການສືບສວນ-ສອບສວນໄດ້ຮັບຄຳສັ່ງກັກຂັງພາງຈາກຫົວໜ້າອົງການໄອຍະການແລ້ວຕ້ອງໄດ້ແຈ້ງຄຳສັ່ງກັກຂັງພາງໃຫ້ຜູ້ຖືກຫາຊາບພ້ອມທັງນຳຜູ້ຖືກຫາໄປກັກຂັງໂດຍແຍກຕ່າງຫາກຈາກນັກໂທດ ແລະ ຕ້ອງຢູ່ໃນເງື່ອນໄຂທີ່ເໝາະສົມເພາະຍັງຖືວ່າເປັນຜູ້ບໍລິສຸດຢູ່ (ມ 142 ວັກ 3 ກດຍ).

**ຄ. ກຳນົດເວລາໃນການກັກຂັງພາງ**

ກຳນົດເວລາການກັກຂັງພາງເພື່ອດຳເນີນການສືບສວນ-ສອບສວນບໍ່ໃຫ້ເກີນສອງເດືອນສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະ ບໍ່ໃຫ້ເກີນສາມເດືອນສຳລັບການກະທຳຜິດໃນສະຖານຄະຣຸໂທດນັບແຕ່ວັນອອກຄຳສັ່ງກັກຂັງພາງເປັນຕົ້ນໄປ.

ຖ້າເຫັນວ່າມີຄວາມຈຳເປັນຕ້ອງໄດ້ສືບຕໍ່ດຳເນີນການສືບສວນ-ສອບສວນ ຫົວໜ້າອົງການໄອຍະການອາດຈະຕໍ່ກຳນົດເວລາການກັກຂັງພາງໄດ້ອີກເທື່ອລະສອງເດືອນແຕ່ທັງໝົດບໍ່ໃຫ້ເກີນຫົກເດືອນສຳລັບການກະທຳຜິດໃນສະຖານໂທສານຸໂທດ, ສຳລັບການກະທຳ

ຜິດໃນສະຖານຄະຣຸໂທດນັ້ນສາມາດຕໍ່ໄດ້ເທື່ອລະສາມເດືອນແຕ່ທັງໝົດບໍ່ໃຫ້ເກີນໜຶ່ງປີ ຕາມການສະເໜີຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການ, ການສະເໜີຂໍຕໍ່ກຳນົດເວລາການກັກຂັງພາງແຕ່ລະເທື່ອໃຫ້ດຳເນີນສິບຫ້າວັນກ່ອນໝົດກຳນົດເວລາການກັກຂັງພາງ.

ເມື່ອໝົດກຳນົດເວລາການກັກຂັງພາງແລ້ວແຕ່ບໍ່ທັນມີຫຼັກຖານພຽງພໍເພື່ອສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີສົ່ງໃຫ້ຫົວໜ້າອົງການໄອຍະການນັ້ນ ຫົວໜ້າອົງການສືບສວນ-ສອບສວນຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການຊາບ ພ້ອມທັງຂໍຄຳສັ່ງປ່ອຍຕົວຜູ້ຖືກຫາແລ້ວສົ່ງສິ່ງຂອງຕິດຕົວທີ່ຖືກຕ້ອງຂອງຜູ້ກ່ຽວຄືນຢ່າງຄົບຖ້ວນ ແລະ ຢູ່ໃນສະພາບເດີມໂດຍເຮັດບົດບັນທຶກມອບຮັບຢ່າງຄັກແນ່.

### ຕົວຢ່າງ: ແບບພິມຄຳສັ່ງກັກຂັງພາງຂອງອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ....................... ເລກທີ......../ອຍກ...........

ອົງການໄອຍະການປະຊາຊົນ ລົງວັນທີ....../....../...........

**ຄຳສັ່ງກັກຂັງພາງ**

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009 ມາດຕາ 42 ຂໍ້ 5;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 111 ແລະ 142;
- ອີງຕາມ ບົດລາຍງານຄະດີຂອງ.......................................ສະບັບເລກທີ ....../........., ລົງວັນທີ...................................... ແລະ ໃບສະເໜີ ເລກທີ ......./........, ລົງວັນທີ.....................ຕາມຂາເຂົ້າເລກທີ......../ອຍກ......., ລົງວັນທີ.........................

ຫົວໜ້າອົງການໄອຍະການປະຊາຊົນ................ໄດ້ຄົ້ນຄ້ວາບົດລາຍງານຄະດີ ແລະ ເອກະສານຕ່າງໆທີ່ມີຢູ່ໃນສຳນວນຄະດີຢ່າງລະອຽດຖີ່ຖ້ວນແລ້ວເຫັນວ່າມີເງື່ອນໄຂພຽງພໍໃນການອອກຄຳສັ່ງກັກຂັງພາງຜູ້ຖືກຫາຊື່ ທ້າວ/ນາງ ....................., ອາຍຸ .......... ປີ, ເຊື້ອຊາດ........., ສັນຊາດ ..........., ອາຊີບ.............., ຢູ່ບ້ານ............., ໜ່ວຍ......, ເມືອງ..........., ແຂວງ..................

- ຖືກຫາວ່າ: ..............ຕາມມາດຕາ.........ຂອງກົດໝາຍອາຍາ ຫຼື ກົດໝາຍອື່ນໆ (ຖ້າມີ)
- ຖືກກັກຕົວ: ວັນທີ......./......../........
- ສະຖານທີ່ກັກຂັງ:................................

ສະນັ້ນ, ຫົວໜ້າອົງການໄອຍະການປະຊາຊົນ.......................ຈິ່ງອອກຄຳສັ່ງກັກຂັງພາງຜູ້ຖືກຫາ ຊື່ ທ້າວ/ນາງ ..................... ກຳນົດ 02 ຫຼື 3 ເດືອນ ນັບແຕ່ວັນທີ ......ເດືອນ........ ຫາວັນທີ ........ເດືອນ..........ປີ............

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

**ຕົວຢ່າງ: ແບບພິມຄຳສັ່ງຕໍ່ການກັກຂັງພາງ ຂອງອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ................................ ເລກທີ........./ອຍກ.........

ອົງການໄອຍະການປະຊາຊົນ ລົງວັນທີ....../....../..........

**ຄຳສັ່ງຕໍ່ການກັກຂັງພາງ**

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງ ປີ 2009 ມາດຕາ 42 ຂໍ້ 5;

– ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 111 ແລະ 142;
– ອີງຕາມ ບົດລາຍງານຄະດີຂອງ.......................... ສະບັບເລກທີ......./......, ລົງວັນທີ.....;
– ອີງຕາມ ໃບສະເໜີ ສະບັບເລກທີ......../........ລົງວັນທີ......... ຕາມຂາເຂົ້າເລກທີ.....ອຍກ...., ລົງວັນທີ ........................

ຫົວໜ້າອົງການໄອຍະການປະຊາຊົນ.................................. ໄດ້ຄົ້ນຄ້ວາບົດລາຍງານ ແລະ ເອກະສານຕ່າງໆ ທີ່ມີຢູ່ໃນສຳນວນຄະດີອາຍາຢ່າງລະອຽດຖີ່ຖ້ວນແລ້ວເຫັນວ່າ ມີຄວາມຈຳເປັນຕໍ່ກຳນົດເວລາການກັກຂັງພາງຜູ່ຖືກຫາ ຊື່ ທ້າວ/ນາງ ......................., ອາຍຸ ...... ປີ, ເຊື້ອຊາດ...........,ສັນຊາດ ..........., ອາຊີບ ............, ຢູ່ບ້ານ .............., ໜ່ວຍ....., ເມືອງ ............., ນະຄອນຫຼວງວຽງຈັນ;

- ຖືກຫາວ່າ:.........ຕາມມາດຕາ**.........** ຂອງກົດໝາຍອາຍາ ແລະ ກົດໝາຍອື່ນໆ (ຖ້າມີ)

- ຖືກກັກຕົວ: ວັນທີ....../......./.......

- ສະຖານທີ່ກັກຂັງ: ............................

ສະນັ້ນ, ຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ຈິ່ງອອກຄຳສັ່ງຕໍ່ກຳນົດເວລາການກັກຂັງພາງຜູ່ຖືກຫາ ຊື່ ທ້າວ/ນາງ...................ກຳນົດ 02 ຫຼື 3 ເດືອນ ນັບແຕ່ວັນທີ.......ເດືອນ........ຫາວັນທີ.........ເດືອນ.......ປີ...... ເພື່ອສືບຕໍ່ດຳເນີນການສືບສວນ-ສອບສວນ.

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

### 2.4.3. ການປ່ອຍຕົວພາງ

ການປ່ອຍຕົວພາງ ແມ່ນການປ່ອຍຕົວຜູ່ຖືກຫາຊົ່ວຄາວກ່ອນການຕັດສິນຂອງສານ;

ການປ່ອຍຕົວພາງຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ ຫຼື ສານ.

ໃນເວລາດຳເນີນຄະດີ ຫົວໜ້າອົງການໄອຍະການ ຫຼື ສານ ອາດຕົກລົງປ່ອຍຕົວພາງໂດຍໜ້າທີ່ ຫຼື ປ່ອຍຕາມຄຳຮ້ອງຂໍຂອງຜູ່ຖືກຫາ, ອົງການຈັດຕັ້ງທີ່ຜູ່ກ່ຽວສັງກັດຢູ່, ຜູ່ຕາງໜ້າ, ຜົວ ຫຼື ເມັຍ, ຜູ່ປົກຄອງ, ພໍ່, ແມ່ ຫຼື ຍາດພີ່ນ້ອງໃກ້ຊິດ ຂອງຜູ່ຖືກຫາກໍໄດ້.

ການປ່ອຍຕົວພາງຈະປະຕິບັດໄດ້ກໍຕໍ່ເມື່ອມີເງື່ອນໄຂດັ່ງນີ້:

– ເປັນການກະທຳຜິດໃນສະຖານໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ສາມປີລົງມາຍົກເວັ້ນການກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນອາຈິນ;

– ມີຂໍ້ມູນ ຫຼື ພື້ນຖານທີ່ພາໃຫ້ເຊື່ອໝັ້ນວ່າ ຜູ້ຖືກຫາ ຫຼື ຈຳເລີຍ ຈະບໍ່ເອົາຕົວຫຼົບໜີ, ຈະບໍ່ທຳລາຍຫຼັກຖານ, ຈະບໍ່ໄປກະທຳຜິດໃໝ່ອີກ, ຈະບໍ່ໄປທຳຮ້າຍຜູ້ຖືກເສັຍຫາຍ, ພະຍານ ຫຼື ຜູ້ຖືກຫາ ຈະບໍ່ຖືກທຳຮ້າຍຈາກຜູ້ອື່ນ;

ໃນການປ່ອຍຕົວພາງ ຕາມຄຳຮ້ອງຂໍຂອງຜູ້ຖືກຫາ, ອົງການຈັດຕັ້ງທີ່ຜູ້ກ່ຽວສັງກັດຢູ່, ຜູ້ຕາງໜ້າ, ຜົວ ຫຼື ເມັຍ, ຜູ້ປົກຄອງ, ພໍ່, ແມ່ ຫຼື ຍາດພີ່ນ້ອງໃກ້ຊິດຂອງຜູ້ຖືກຫານັ້ນ ໃຫ້ວາງເງິນຄ້ຳປະກັນຕາມແຕ່ລະກໍລະນີ;

ໃນກໍລະນີທີ່ຜູ້ຖືກປ່ອຍຕົວພາງ ຫາກເອົາຕົວຫຼົບໜີຈາກການດຳເນີນຄະດີ ເງິນຄ້ຳປະກັນນັ້ນ ກໍຈະນຳມາໃຊ້ແທນຄ່າເສັຍຫາຍກ່ອນ ຖ້າຍັງເຫຼືອໃຫ້ຮິບເປັນຂອງລັດ ຕາມຄຳຕັດສິນຂອງສານ ຖ້າຜູ້ກ່ຽວຫາກປະຕິບັດພັນທະຢ່າງຖືກຕ້ອງ ແລະ ຄົບຖ້ວນຕາມເງື່ອນໄຂການປ່ອຍຕົວພາງແລ້ວເງິນຄ້ຳປະກັນນັ້ນ ກໍຈະຖືກສົ່ງຄືນໃຫ້ຜູ້ຄ້ຳປະກັນ.

**ຕົວຢ່າງ: ແບບພິມຄຳສັ່ງປ່ອຍຕົວພາງ ຂອງອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ....................... ເລກທີ......../ອຍກ.......

ອົງການໄອຍະການປະຊາຊົນ ລົງວັນທີ....../....../.......

**ຄຳສັ່ງປ່ອຍຕົວພາງ**

– ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2009 ມາດຕາ 42 ຂໍ້ 5;
– ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 143;

– ອີງຕາມ ຄຳຮ້ອງຂໍປະກັນຂອງ ທ້າວ/ນາງ .......................... ຕາມຂາເຂົ້າເລກທີ ..../ອຍກ....., ລົງ ວັນທີ ................ ເພື່ອຂໍປ່ອຍຕົວພາງ ທ້າວ/ນາງ .................., ອາຍຸ ....... ປີ, ສັນຊາດ ..........., ອາຊີບ ..............., ຢູ່ ບ້ານ ............, ໜ່ວຍ..., ເມືອງ.............,ແຂວງ.............................

- **ຖືກຫາວ່າ:** .....................ຕາມມາດຕາ ..............ຂອງກົດໝາຍອາຍາ.
- **ຖືກກັກຕົວ:** ....................................
- **ສະຖານທີ່ກັກຂັງ:** .......................................

ຫົວໜ້າອົງການໄອຍະການປະຊາຊົນ................. ໄດ້ຄົ້ນຄ້ວາຄຳຮ້ອງຂໍປ່ອຍຕົວພາງ ແລະ ເອກະສານຕ່າງໆທີ່ມີຢູ່ໃນສຳນວນຄະດີແລ້ວເຫັນວ່າ ມີເງື່ອນໄຂພຽງພໍໃນການປ່ອຍຕົວພາງຕາມກົດໝາຍວ່າດ້ວຍການດຳເນີນຄຳດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 143.

ສະນັ້ນ, ຫົວໜ້າອົງການໄອຍະການປະຊາຊົນ.................. ຈຶ່ງອອກຄຳສັ່ງປ່ອຍຕົວພາງໃຫ້ຄະນະຮັບຜິດຊອບຄ້າຍຄຸມຂັງ ........... ທຳການປ່ອຍຕົວພາງ ທ້າວ/ນາງ **............**ນັບແຕ່ວັນທີ ......../......./........ ເພື່ອລໍຖ້າການຕັດສິນຂອງສານ ຫຼື ຈົນກ່ວາຈະມີຄຳສັ່ງປ່ຽນແປງໃໝ່.

ຫ້າມຜູ່ກ່ຽວເອົາຕົວຫຼົບໜີ, ໄປທຳລາຍຫຼັກຖານ, ໄປກະທຳຜິດເທື່ອໃໝ່, ໄປທຳຮ້າຍໂຈດທາງແພ່ງ, ຜູ່ຖືກເສັຍຫາຍ ຫຼື ພະຍານ, ຕ້ອງເຂົ້າໄປຕາມໝາຍຮຽກຂອງອົງການທີ່ກ່ຽວຂ້ອງຢ່າງເຂັ້ມງວດ ແລະ ຕ້ອງໄປສະເໜີຕົວຕໍ່ຄະນະຮັບຜິດຊອບຄ້າຍຄຸມຂັງ ................ ທຸກໆ 15 ວັນນັບແຕ່ມື້ຖືກປ່ອຍຕົວເປັນຕົ້ນໄປ.

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

ບ່ອນສົ່ງ

- ຄ້າຍຄຸມຂັງ 01 ສະບັບ.
- ປະກອບສຳນວນ 01 ສະບັບ.
- ສຳເນົາ 02 ສະບັບ.
- ສົ່ງນາຍບ້ານຜູ່ກ່ຽວສັງກັດຢູ່ 01 ສະບັບ.
- ໃຫ້ຜູ່ຖືກປ່ອຍຕົວ 01 ສະບັບ.

### 2.4.4. ການງົດໜ້າທີ່ ຫຼື ຕຳແໜ່ງ

ການງົດໜ້າທີ່ ຫຼື ຕຳແໜ່ງ ແມ່ນການໂຈະ ໜ້າທີ່ ຫຼື ຕຳແໜ່ງ ຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ຍ້ອນວ່າການກະທຳຜິດນັ້ນ ພົວພັນເຖິງໜ້າທີ່ ຫຼື ຕຳແໜ່ງຂອງຜູ້ກ່ຽວ ເພື່ອບໍ່ໃຫ້ເປັນອຸປະສັກໃນການສືບສວນ-ສອບສວນ.

ການງົດໜ້າທີ່ ຫຼື ຕຳແໜ່ງ ຕ້ອງມີຄຳສັ່ງເປັນລາຍລັກອັກສອນຂອງຫົວໜ້າອົງການໄອຍະການ.

ຄຳສັ່ງງົດໜ້າທີ່ ຫຼື ຕຳແໜ່ງນັ້ນ ຕ້ອງສົ່ງໃຫ້ອົງການຈັດຕັ້ງທີ່ຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ສັງກັດຢູ່ ເພື່ອພິຈາລະນາງົດໜ້າທີ່ ຫຼື ຕຳແໜ່ງ, ຜູ້ຖືກງົດໜ້າທີ່ ຫຼື ຕຳແໜ່ງ ຍັງມີສິດໄດ້ຮັບເງິນເດືອນຕາມປົກກະຕິ; ຫົວໜ້າອົງການໄອຍະການ ອາດຈະຍົກເລີກຄຳສັ່ງງົດໜ້າທີ່ ຫຼື ຕຳແໜ່ງ ໃນກໍລະນີທີ່ເຫັນວ່າມີຄວາມຈຳເປັນຕໍ່ໄປອີກ.

**ຕາຕະລາງສັງລວມ**
**ການອອກຄຳສັ່ງມາດຕະການສະກັດກັ້ນຂອງ**
**ອົງການສືບສວນ-ສອບສວນ, ອົງການໄອຍະການ ຫຼື ສານ**

| ລ/ດ | ມາດຕະການສະກັດກັ້ນ | ອົງການສືບສວນ-ສອບສວນ | ອົງການໄອຍະການ | ສານ |
|---|---|---|---|---|
| 1 | ການພາຕົວ (ມາດຕາ 137 ກດຍ) | ✓ | ✓ | ✓ |
| 2 | ການກັກຕົວ (ມາດຕາ 138 ກດຍ) | ✓ | ✓ | |
| 3 | ການຈັບຕົວ (ມາດຕາ 139 ກດຍ) | | ✓ | ✓ |
| 4 | ການກັກຂັງພາງ (ມາດຕາ 142 ກດຍ) | | ✓ | ✓ |
| 5 | ການປ່ອຍຕົວພາງ (ມາດຕາ 143 ກດຍ) | | ✓ | ✓ |
| 6 | ການຄຸມຕົວຢູ່ກັບທີ່ (ມາດຕາ 144 ກດຍ) | ✓ | ✓ | ✓ |
| 7 | ການງົດໜ້າທີ່ ຫຼື ຕຳແໜ່ງ (ມາດຕາ 145 ກດຍ) | | ✓ | |

## 3. ການໂຈະການສືບສວນ-ສອບສວນ ແລະ ການຊັດມ້ຽນຄະດີ

### 3.1. ການໂຈະການການສືບສວນ-ສອບສວນ

ການໂຈະການສືບສວນ-ສອບສວນ ແມ່ນການຢຸດເຊົາການສືບສວນ-ສອບສວນໄວ້ຊົ່ວຄາວ ດ້ວຍສາເຫດໃດໜຶ່ງດັ່ງນີ້:

- ຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບຫຼີກຈາກການດຳເນີນຄະດີ ຫຼື ບໍ່ຮູ້ບ່ອນຢູ່ຂອງຜູ້ກ່ຽວ;
- ບໍ່ສາມາດຮູ້ໄດ້ວ່າແມ່ນຜູ້ໃດເປັນຜູ້ກະທຳຜິດ;
- ຜູ້ຖືກຫາເຈັບປ່ວຍໜັກ ຫຼື ເປັນບ້າເສຍຈິດ ໂດຍມີການຢັ້ງຢືນຈາກຄະນະແພດ.

ການໂຈະການສືບສວນ-ສອບສວນ ໃນສາເຫດທີໜຶ່ງ ແລະ ທີສອງຈະມີໄດ້ກໍຕໍ່ເມື່ອກຳນົດເວລາໃນການສືບສວນ-ສອບສວນຫາກໄດ້ສິ້ນສຸດແລ້ວເທົ່ານັ້ນ;

ສຳລັບການໂຈະໃນສາເຫດທີໜຶ່ງກ່ອນຈະອອກຄຳສັ່ງໂຈະການສືບສວນ-ສອບສວນ ຫົວໜ້າອົງການສືບສວນ-ສອບສວນ ຕ້ອງຂໍຄຳສັ່ງຈັບຕົວແລ້ວຕິດຕາມຫາຈັບຕົວຜູ້ຖືກຫາ;

ການໂຈະໃນສາເຫດທີສາມ ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງສົ່ງຜູ້ຖືກຫາໄປປິ່ນປົວ;

ການໂຈະການສືບສວນ-ສອບສວນນັ້ນຕ້ອງມີຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຂອງຫົວໜ້າອົງການໄອຍະການ ໃນກໍລະນີທີ່ອົງການໄອຍະການດຳເນີນການສືບສວນ-ສອບສວນ, ຄຳສັ່ງໂຈະການສືບສວນ-ສອບສວນຂອງຫົວໜ້າອົງການສືບສວນ-ສອບສວນນັ້ນ ຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການຊາບ ພາຍໃນກຳນົດຊາວສີ່ຊົ່ວໂມງ;

ໃນກໍລະນີ ທີ່ມີຜູ້ຖືກຫາຫຼາຍຄົນ ແຕ່ສາເຫດທີ່ພາໃຫ້ໂຈະການສືບສວນ-ສອບສວນນັ້ນ ບໍ່ພົວພັນກັບຜູ້ຖືກຫາທັງໝົດ, ການໂຈະການສືບສວນ-ສອບສວນ ກໍຈະປະຕິບັດແຕ່ສະເພາະຜູ້ຖືກຫາທີ່ມີສາເຫດທີ່ພາໃຫ້ໂຈະເທົ່ານັ້ນ;

ຄຳສັ່ງໂຈະຕ້ອງແຈ້ງໃຫ້ຜູ້ຖືກເສຍຫາຍ ຫຼື ໂຈດທາງແພ່ງທີ່ເປັນຄູ່ຄວາມ ພາຍໃນກຳນົດສາມວັນທາງລັດຖະການ ນັບແຕ່ວັນອອກຄຳສັ່ງ ແລະ ພວກກ່ຽວມີສິດຂໍອຸທອນພາຍໃນກຳນົດເຈັດວັນ ນັບແຕ່ວັນຮັບຊາບຄຳສັ່ງນັ້ນເປັນຕົ້ນໄປ;

ຄຳສັ່ງໂຈະຂອງຫົວໜ້າອົງການສືບສວນ-ສອບສວນ ຕ້ອງຂໍອຸທອນໄປຍັງຫົວໜ້າອົງການໄອຍະການຂັ້ນດຽວກັນ, ຄຳສັ່ງໂຈະຂອງຫົວໜ້າອົງການໄອຍະການ ຕ້ອງຂໍອຸທອນໄປຍັງຫົວໜ້າອົງການໄອຍະການຂັ້ນເທິງຖັດໄປ ໃນກໍລະນີທີ່ຍັງບໍ່ພໍໃຈກໍມີສິດຂໍລົບລ້າງພາຍໃນກຳນົດເຈັດວັນ;

ຄະດີອາຍາທີ່ໄດ້ໂຈະໄວ້ນັ້ນ ກໍຈະຖືກຊັດມ້ຽນ ເມື່ອຫາກໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ.

**ຕົວຢ່າງ: ແບບພິມຄຳສັ່ງໂຈະການສືບສວນ-ສອບສວນ ຂອງອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ...................... ເລກທີ........./ອຍກ.......

ອົງການໄອຍະການປະຊາຊົນ ລົງວັນທີ....../....../........

**ຄຳສັ່ງໂຈະການສືບສວນ-ສອບສວນ**

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2009 ມາດຕາ 42 ຂໍ້ 9;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 146;
- ອີງຕາມ ສຳນວນຄະດີເລກທີ......../ອຍກ......,ລົງວັນທີ ....../......./...........
- ອີງຕາມ ບົດສະຫຼຸບລາຍງານຜົນຂອງການຄົ້ນຄ້ວາຄະດີ ສະບັບເລກທີ ........../ອຍກ........, ລົງວັນທີ ....................

ຫົວໜ້າອົງການໄອຍະການປະຊາຊົນ.................. ໄດ້ຄົ້ນຄ້ວາບົດສະຫຼຸບລາຍງານຜົນຂອງການຄົ້ນຄ້ວາຄະດີຂອງພະນັກງານໄອຍະການຢ່າງລະອຽດຖີ່ຖ້ວນແລ້ວເຫັນວ່າ ທ້າວ/ນາງ...................., ອາຍຸ ........ ປີ, ສັນຊາດ ..........., ອາຊີບ ..............., ຢູ່ບ້ານ ...................., ໜ່ວຍ ............, ເມືອງ ........................., ແຂວງ..................

- **ຖືກຫາວ່າ:** .......................... ຕາມມາດຕາ...............ຂອງກົດໝາຍອາຍາ.
- **ຖືກກັກຕົວ**: ......................................
- **ສະຖານທີ່ກັກຂັງ**: .............................

ຊຶ່ງຜູ້ກ່ຽວໄດ້ໂຕນໜີຈາກຄ້າຍຄຸມຂັງ ແລະ ເອົາຕົວຫຼົບໜີຈາກການດຳເນີນຄະດີອາຍາຕາມບົດລາຍງານຂອງ...........ສະບັບເລກທີ ............/............, ລົງວັນທີ........

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນ............ ຈຶ່ງອອກຄໍາສັ່ງໂຈະການດໍາເນີນຄະດີອາຍານີ້ໄວ້ ຈົນກ່ວາຈະມີຄໍາສັ່ງປ່ຽນແປງ.

ຄໍາສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

### 3.2. ການຊັດມ້ຽນຄະດີ

ການຊັດມ້ຽນຄະດີ ແມ່ນການຢຸດເຊົາການດໍາເນີນຄະດີດ້ວຍສາເຫດດັ່ງນີ້:

1) ເມື່ອມີສາເຫດໃດໜຶ່ງ ຕາມທີ່ກໍານົດໄວ້ໃນມາດຕາ 6 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ;

2) ເມື່ອບໍ່ມີຂໍ້ມູນຫຼັກຖານພຽງພໍ ວ່າຜູ້ຖືກຫາໄດ້ເປັນຜູ້ກະທໍາຜິດ;

ໃນກໍລະນີທີ່ມີການຊັດມ້ຽນຄະດີນັ້ນ ຫົວໜ້າອົງການໄອຍະການ ຕ້ອງອອກຄໍາສັ່ງປ່ອຍຕົວຜູ້ຖືກຫາໃນທັນໃດ ພ້ອມທັງສົ່ງຄືນສິ່ງຂອງຕິດຕົວທີ່ຖືກຕ້ອງຕາມກົດໝາຍ ລວມທັງວັດຖຸສິ່ງຂອງທີ່ໄດ້ຍຶດເປັນຂອງກາງ ຊຶ່ງເປັນກໍາມະສິດຂອງຜູ້ກ່ຽວ;

ການຊັດມ້ຽນຄະດີມີ 2 ປະເພດດັ່ງນີ້:

– ການຊັດມ້ຽນຄະດີທາງດ້ານກົດໝາຍ;

– ການຊັດມ້ຽນຄະດີທາງດ້ານຫຼັກຖານ;

➢ ການຊັດມ້ຽນຄະດີທາງດ້ານກົດໝາຍແມ່ນການຊັດມ້ຽນຄະດີ ຕາມທີ່ກໍານົດໄວ້ໃນຂໍ້ 1 ເທິງນີ້

➢ ການຊັດມ້ຽນຄະດີທາງດ້ານຫຼັກຖານ ແມ່ນການຊັດມ້ຽນຄະດີ ຕາມທີ່ກໍານົດໄວ້ໃນຂໍ້ 2 ເທິງນີ້

ຄໍາສັ່ງຊັດມ້ຽນຄະດີ ຕ້ອງແຈ້ງໃຫ້ຜູ້ຖືກເສຍຫາຍ ຫຼື ໂຈດທາງແພ່ງທີ່ເປັນຄູ່ຄວາມພາຍໃນກໍານົດສາມວັນທາງລັດຖະການ ນັບແຕ່ວັນອອກຄໍາສັ່ງ ແລະ ພວກກ່ຽວມີສິດຂໍອຸທອນ ພາຍໃນກໍານົດເຈັດວັນ ນັບແຕ່ວັນຮັບຊາບຄໍາສັ່ງນັ້ນເປັນຕົ້ນໄປ;

ຄໍາສັ່ງຊັດມ້ຽນຂອງຫົວໜ້າອົງການສືບສວນ-ສອບສວນ ຕ້ອງຂໍອຸທອນໄປຍັງຫົວໜ້າອົງການໄອຍະການຂັ້ນດຽວກັນ ຄໍາສັ່ງຊັດມ້ຽນຂອງຫົວໜ້າອົງການໄອຍະການ ຕ້ອງຂໍອຸທອນໄປຍັງຫົວໜ້າອົງການໄອຍະການຂັ້ນເທິງຖັດໄປ ໃນກໍລະນີ ທີ່ຍັງບໍ່ພໍໃຈ ກໍມີສິດຂໍລົບລ້າງພາຍໃນກໍານົດເຈັດວັນ;

ໃນກໍລະນີທີ່ມີການຊັດມ້ຽນຄະດີນັ້ນ ບົດສະຫຼຸບການສືບສວນ-ສອບສວນ ຕ້ອງບອກແຈ້ງສະພາບການເຄື່ອນໄຫວດຳເນີນການສືບສວນ-ສອບສວນ, ເຫດຜົນ ແລະ ພື້ນ ຖານທີ່ພາໃຫ້ຊັດມ້ຽນຄະດີ.

**ຕົວຢ່າງ: ແບບພິມຄຳສັ່ງຊັດມ້ຽນຂອງອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ/ນະຄອນ.......................... ເລກທີ........./ອຍກ.......

ອົງການໄອຍະການປະຊາຊົນ ລົງວັນທີ....../....../.........

## ຄຳສັ່ງຊັດມ້ຽນຄະດີ

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບ ປຸງປີ 2009 ມາດຕາ 42 ຂໍ້ 9;
- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 148 ຂໍ້ 02;
- ອີງຕາມ ສຳນວນຄະດີອາຍາເລກທີ ເລກທີ....../ອຍກ......, ລົງວັນທີ ...../...../........
- ອີງຕາມ ບົດສະຫຼຸບລາຍງານຄະດີ, ສະບັບເລກທີ......./.........., ລົງວັນທີ ...../...../......

ຫົວໜ້າອົງການໄອຍະການປະຊາຊົນ................. ໄດ້ຄົ້ນຄ້ວາພິຈາລະນາບົດລາຍງານຄະດີອາຍາຂອງພະນັກງານໄອຍະການປະຊາຊົນ ແລະ ສຳນວນຄະດີອາຍາດັ່ງກ່າວຢ່າງລະອຽດ, ຖີ່ຖ້ວນແລ້ວເຫັນວ່າບໍ່ມີຫຼັກຖານພຽງພໍ, ຂາດອົງປະກອບຂອງການກະທຳຜິດທາງອາຍາ ຢັ້ງຢືນວ່າຜູ້ຖືກຫາຊື່ ທ້າວ ຫຼື ນາງ **........................,** ອາຍຸ ...... ປີ, ສັນຊາດ ..............., ອາຊີບ ................, ຢູ່ບ້ານ ............., ໜ່ວຍ ..., ເມືອງ .............., ແຂວງ........................

- **ຖືກຫາວ່າ:** ...................... ຕາມມາດຕາ ................ຂອງກົດໝາຍອາຍາ.
- **ຖືກກັກຕົວ**: .................................
- **ສະຖານທີ່ກັກຂັງ**: ........................
- **ປ່ອຍຕົວພາງ**: .............................. ໄດ້ເປັນຜູ່ກະທຳຜິດຕາມຂໍ້ກ່າວຫາ.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ຈຶ່ງອອກຄຳສັ່ງຊັດມ້ຽນຄະດີນີ້ໄວ້, ຜູ່ຖືກເສັຍຫາຍ ຫຼື ໂຈດທາງແພ່ງ ມີສິດຂໍອຸທອນຄຳສັ່ງສະບັບນີ້ໄດ້ພາຍໃນກຳນົດ ເຈັດ ວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ.

ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

ໂຈດທາງແພ່ງໄດ້ຮັບຊາບຄຳສັ່ງນີ້ແລ້ວ
ວັນທີ.........../.........../................

## 4. ການສິ້ນສຸດການສືບສວນ-ສອບສວນ

ການສືບສວນ-ສອບສວນ ຈະສິ້ນສຸດລົງໄດ້ກໍຕໍ່ເມື່ອຫົວໜ້າອົງການສືບສວນ-ສອບສວນ ຫຼື ເຈົ້າໜ້າທີ່ອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການ ໄດ້ສຳເລັດການສືບສວນ-ສອບສວນ ແລະ ເຮັດບົດສະຫຼຸບຜົນຂອງການສືບສວນ-ສອບສວນ;

ບົດສະຫຼຸບຜົນຂອງການສືບສວນ-ສອບສວນ ປະກອບດ້ວຍເນື້ອໃນດັ່ງນີ້:

– ເຫດການຂອງການກະທຳຜິດ;

– ຫຼັກຖານຢັ້ງຢືນການກະທຳຜິດ;

– ຄຳເຫັນກ່ຽວກັບການສືບສວນ-ສອບສວນ;

– ມາດຕະການສະກັດກັ້ນ ທີ່ໄດ້ປະຕິບັດຜ່ານມາ;

– ຂອງກາງໃນຄະດີ ແລະ ການນຳໃຊ້ມາດຕະການຍຶດຊັບ, ອາຍັດຊັບ ເພື່ອຮັບປະກັນການປະຕິບັດຄຳຕັດສິນຂອງສານ;

– ເຫດຜົນ ແລະ ພື້ນຖານທີ່ພາໃຫ້ສັ່ງຟ້ອງ ລວມທັງຂໍ້ສະເໜີກ່ຽວກັບການແກ້ໄຂຄະດີ.

ຈາກນັ້ນ ຈຶ່ງປະກອບສຳນວນຄະດີ ແລ້ວສົ່ງໃຫ້ອົງການໄອຍະການ ພ້ອມດ້ວຍຂອງກາງພາຍໃນກຳນົດສາມວັນ, ໃນກໍລະນີອອກຄຳສັ່ງຊັດມ້ຽນຄະດີຕ້ອງລາຍງານຕໍ່ອົງການໄອຍະການໃນທັນໃດ.

# ບົດທີ 3
# ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ

## 1. ຄວາມໝາຍ, ຈຸດປະສົງ ແລະ ເປົ້າໝາຍຂອງການຕິດຕາມກວດກາ

### 1.1. ຄວາມໝາຍ

ອົງການໄອຍະການປະຊາຊົນ ແມ່ນອົງການຕິດຕາມກວດກາການປະຕິບັດກົດໝາຍ (ມ 86 ລນ), ອົງການໄອຍະການປະຊາຊົນແມ່ນອົງການລັດທີ່ເຮັດໜ້າທີ່ຕິດຕາມກວດກາການເຄົາລົບ ແລະ ປະຕິບັດກົດໝາຍໃນຂອບເຂດທົ່ວປະເທດ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ (ມ 2 ກຍກ) ເວົ້າລວມແລ້ວພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍ ແມ່ນກວ້າງຂວາງ ແລະ ພົວພັນເຖິງຫຼາຍຂະແໜງການ, ແຕ່ເນື່ອງຈາກວ່າບົດນີ້ແມ່ນເວົ້າສະເພາະການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ. ສະນັ້ນ, ຈຶ່ງໃຫ້ຄວາມໝາຍຂອງການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນແມ່ນການປະຕິບັດພາລະບົດບາດຂອງອົງການໄອຍະການຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາເພື່ອເຮັດໃຫ້ການປະຕິບັດໜ້າທີ່ຂອງອົງການສືບສວນ-ສອບສວນໄດ້ດຳເນີນຢ່າງຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ, ຮັບປະກັນໃນການປະຕິບັດສິດ ແລະ ພັນທະຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ ເຊັ່ນ ຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ, ຜູ້ຖືກເສຍຫາຍ, ພະຍານ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ຜູ້ຊ່ຽວຊານ, ຜູ້ຊຳນານງານ.

ສິ່ງສຳຄັນອີກອັນໜຶ່ງກໍແມ່ນເພື່ອເຮັດໃຫ້ການສືບສວນ-ສອບສວນຄະດີດຳເນີນຢ່າງຖືກຕ້ອງ ແລະ ຍຸຕິທຳ, ຕ້ານ ແລະ ສະກັດກັ້ນການກະທຳຜິດ ທັງເປັນການປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### 1.2. ຈຸດປະສົງ

ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ ແມ່ນເປັນສິ່ງທີ່ສຳຄັນ ແລະ ເປັນພື້ນຖານຕົ້ນຕໍໃຫ້ແກ່ອົງການໄອຍະການປະຊາຊົນໃນນາມລັດເພື່ອປະຕິບັດສິດສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ, ການປະຕິບັດສິດສັ່ງຟ້ອງຈະຮັບປະກັນປະສິດທິພາບ ຫຼື ບໍ່ນັ້ນແມ່ນຂຶ້ນກັບການຕິດຕາມກວດກາການປະຕິບັດກົດໝາຍ

ຂອງອົງການສືບສວນ-ສອບສວນ. ສະນັ້ນ, ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນແມ່ນການຕິດຕາມກວດກາການປະຕິບັດກົດໝາຍໃນຂັ້ນຕອນການເຄື່ອນໄຫວຂອງເຈົ້າໜ້າທີ່ອົງການສືບສວນ-ສອບສວນໃຫ້ຖືກຕ້ອງ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ (ມ 41 ກຍກ) ເພື່ອ:

1) ຊອກໃຫ້ເຫັນສະພາບການປະຕິບັດລະບຽບກົດໝາຍຂອງອົງການສືບສວນ-ສອບສວນມີຄວາມຖືກຕ້ອງ ຫຼື ມີການລະເມີດກົດໝາຍ;

2) ຊອກຮູ້ການນຳໃຊ້ມາດຕະການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ເຊັ່ນ ການກວດຄົ້ນເຄຫະສະຖານ, ການກັກຕົວ, ການຈັບຕົວ, ການກັກຂັງພາງ, ການປ່ອຍຕົວພາງຜູ່ຖືກຫາໄດ້ປະຕິບັດຖືກຕ້ອງຕາມກົດໝາຍ ຫຼື ມີການລະເມີດກົດໝາຍ;

3) ໃຫ້ອົງການສືບສວນ-ສອບສວນ ປະຕິບັດລະບຽບກົດໝາຍໃນການດຳເນີນຄະດີອາຍາຢ່າງເຂັ້ມງວດ;

4) ໃຫ້ການອອກ ຫຼື ບໍ່ອອກຄຳສັ່ງເປີດການສືບສວນ-ສອບສວນຂອງຫົວໜ້າອົງການສືບສວນ-ສອບສວນມີ ຫຼື ບໍ່ມີຫຼັກຖານໜັກແໜ້ນ ແລະ ຖືກຕ້ອງຕາມກົດໝາຍ;

5) ຄົ້ນຄວ້າ, ຊອກໃຫ້ເຫັນທຸກການກະທຳຜິດທີ່ເກີດຂຶ້ນ ແລະ ບໍ່ໃຫ້ຜູ່ກະທຳຜິດພົ້ນຈາກການລົງໂທດຕາມກົດໝາຍ;

6) ຊອກໃຫ້ເຫັນສາເຫດ ແລະ ເງື່ອນໄຂຂອງການກໍ່ອາດຊະຍາກຳ ຫຼື ການກະທຳຜິດ ເພື່ອວາງມາດຕະການແກ້ໄຂ.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນເພື່ອໃຫ້ອົງການສືບສວນ-ສອບສວນເຄົາລົບລະບຽບການດຳເນີນການສືບສວນ-ສອບສວນບໍ່ໃຫ້ບຸກຄົນໃດໜຶ່ງໄດ້ຖືກກັກຕົວ, ຈັບຕົວ, ກັກຂັງໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ຕິດຕາມກວດກາຢ່າງເຂັ້ມງວດເພື່ອບໍ່ໃຫ້ຜູ່ບໍ່ໄດ້ກະທຳຜິດຖືກລົງໂທດ (ມ 151 ຂໍ້ 2-4 ກດຢ).

### 1.3. ເປົ້າໝາຍການຕິດຕາມກວດກາ

ການກຳນົດເປົ້າໝາຍຂອງການຕິດຕາມກວດກາ ແມ່ນມີຄວາມໝາຍສຳຄັນເພາະມັນບົ່ງບອກໃຫ້ພວກເຮົາເຫັນການເຄື່ອນໄຫວຂອງອົງການສືບສວນ-ສອບສວນທັງດ້ານທິດສະດີ ແລະ ພຶດຕິກຳຕົວຈິງທີ່ພົວພັນເຖິງບຸກຄົນທີ່ເຂົ້າຮ່ວມໃນການດຳເນີນຄະດີອາຍາອົງການໄອຍະການປະຊາຊົນຕິດຕາມກວດກາການອອກຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ, ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ການນຳໃຊ້ມາດຕະການສະກັດກັ້ນຂອງຫົວໜ້າ, ຮອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ

-ສອບສວນ ແລະ ຜູ້ຊ່ວຍເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ຜູ້ດຳເນີນການສືບສວນ-ສອບສວນ.

ບັນດາອົງການສືບສວນ-ສອບສວນທີ່ເປັນເປົ້າໝາຍຂອງການຕິດຕາມກວດກາ (ມ 46 ກດຍ) ມີດັ່ງນີ້:

1) ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕຳຫຼວດ;

2) ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ທະຫານ;

3) ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ພາສີ;

4) ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້;

5) ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕ້ານການສໍ້ລາດບັງຫຼວງ;

6) ອົງການສືບສວນ-ສອບສວນຂອງພາກສ່ວນອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍ.

## 2. ສິດ ແລະ ໜ້າທີ່ຂອງອົງການໄອຍະການໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ

ເພື່ອເປັນການປະຕິບັດສິດ ແລະ ໜ້າທີ່ຕາມທີ່ກຳນົດໃນມາດຕາ 10 ຂໍ້ 2 ແລະ ຂໍ້ 9 ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນຄື ຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ, ປະສານສົມທົບກັບອົງການສືບສວນ-ສອບສວນ ແລະ ອົງການອື່ນທີ່ກ່ຽວຂ້ອງດຳເນີນການສະກັດກັ້ນ, ຕ້ານອາຊະຍາກຳ ຫຼື ການກະທຳຜິດ ແລະ ການລະເມີດກົດໝາຍອື່ນພ້ອມທັງລົບລ້າງບັນດາສາເຫດ ແລະ ເງື່ອນໄຂທີ່ພາໃຫ້ການກະທຳຜິດເກີດຂຶ້ນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາກໍໄດ້ກຳນົດສິດ ແລະ ໜ້າທີ່ຂອງອົງການໄອຍະການໃນການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນໃຫ້ມີຄວາມຖືກຕ້ອງ ແລະ ເຫັນບັນດາບັນຫາທີ່ລະເມີດກົດໝາຍ, ເຮັດໃຫ້ການດຳເນີນຄະດີອາຍາໄປຕາມຂັ້ນຕອນດ້ວຍການນຳໃຊ້ວິທີການສືບສວນ-ສອບສວນ ແລະ ການນຳໃຊ້ມາດຕະການສະກັດກັ້ນ (ມ 42 ກຍກ, ມ 151 ກດຍ) ດັ່ງນີ້:

1) ທວງເອົາສຳນວນຄະດີອາຍາ, ເອກະສານ, ຂອງກາງ ແລະ ຂໍ້ມູນຫຼັກຖານຕ່າງໆກ່ຽວກັບການກະທຳຜິດຈາກອົງການສືບສວນ-ສອບສວນ;

2) ເຂົ້າຮ່ວມການສືບສວນ-ສອບສວນຄະດີອາຍາ ຫຼື ຈະດຳເນີນການສືບສວນ-ສອບສວນດ້ວຍຕົນເອງກໍໄດ້ໃນກໍລະນີທີ່ຈຳເປັນ;

3) ລົບລ້າງຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນທີ່ບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ມີເຫດຜົນພຽງພໍ;

4) ໃຫ້ຄຳແນະນຳເປັນລາຍລັກອັກສອນກ່ຽວກັບວິທີການສືບສວນ-ສອບສວນ, ມາດຕະການສະກັດກັ້ນ ແລະ ການຊອກຫາຜູ້ກະທຳຜິດ, ການຈຳແນກການກະທຳຜິດ;

5) ອອກຄຳສັ່ງຕ່າງໆເປັນຕົ້ນຄຳສັ່ງກັກຕົວ, ຈັບຕົວ, ກັກຂັງພາງ, ປ່ອຍຕົວພາງຜູ້ຖືກຫາ, ກວດຄົ້ນເຄຫະສະຖານກ່ຽວກັບການກະທຳຜິດທີ່ບໍ່ເຊິ່ງໜ້າ ຫຼື ໃນກໍລະນີບໍ່ຮີບດ່ວນ;

6) ຕໍ່ກຳນົດເວລາການສືບສວນ-ສອບສວນ ແລະ ກຳນົດເວລາກັກຂັງພາງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

7) ສົ່ງສຳນວນຄະດີຄືນໃຫ້ອົງການສືບສວນ-ສອບສວນພ້ອມຄຳແນະນຳກ່ຽວກັບການສືບສວນ-ສອບສວນເພີ່ມເຕີມ;

8) ອອກຄຳສັ່ງໃຫ້ເຈົ້າໜ້າທີ່ສືບສວນ-ສອບສວນທີ່ໄດ້ລະເມີດກົດໝາຍໃນການດຳເນີນຄະດີຢຸດເຊົາການສືບສວນ-ສອບສວນ;

9) ອອກຄຳສັ່ງເປີດການສືບສວນ-ສອບສວນ, ຊັດມ້ຽນຄະດີ ຫຼື ໂຈະການດຳເນີນຄະດີ;

10) ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມທີ່ກົດໝາຍໄດ້ກຳນົດໄວ້.

## 3. ການຕິດຕາມກວດກາການດຳເນີນຄະດີອາຍາຂອງອົງການສືບສວນ-ສອບສວນ

### 3.1. ການຕິດຕາມກວດກາການນຳໃຊ້ຫຼັກການຂອງການດຳເນີນຄະດີອາຍາຂອງອົງການສືບສວນ-ສອບສວນ

ການດຳເນີນຄະດີອາຍາ ແມ່ນມີຄວາມສຳຄັນຫຼາຍເພາະແມ່ນການຊອກຫາຕົວຜູ້ກະທຳຜິດມາລົງໂທດ ຊຶ່ງເປັນການແຕະຕ້ອງເຖິງກຽດສັກສີ, ສິດເສລີພາບ ແລະ ຜົນປະໂຫຍດອັນຊອບທຳຂອງອົງການຈັດຕັ້ງສັງຄົມ ແລະ ພົນລະເມືອງ. ດັ່ງນັ້ນ, ໃນການດຳເນີນຄະດີອາຍາ ນອກຈາກຈະຊອກເຫັນການກະທຳຜິດຢ່າງຮີບດ່ວນ, ຄົບຖ້ວນ ແລະ ຮອບຄອບ, ນຳເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ, ຜູ້ກະທຳຜິດຕ້ອງຖືກລົງໂທດຕາມກົດໝາຍ, ຜູ້ບໍ່ໄດ້ກະທຳຜິດຈະບໍ່ຖືກລົງໂທດ (ມ 2 ກດຍ) ຍັງຈະຕ້ອງໄດ້ປົກປ້ອງສິດ ແລະ ເສລີພາບຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ, ຢາກເຮັດໄດ້ຄືແນວນັ້ນອົງການໄອຍະການປະຊາຊົນຕ້ອງຕິດຕາມກວດກາການນຳໃຊ້ບັນດາຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການດຳເນີນຄະດີອາຍາ ຊຶ່ງບັນດາຫຼັກການພື້ນຖານໃນການດຳເນີນຄະດີອາຍາທີ່ຈະຕ້ອງໄດ້ຕິດຕາມກວດກາຢູ່ຂັ້ນເຈົ້າໜ້າທີ່ອົງການສືບສວນ-ສອບສວນມີດັ່ງນີ້:

1) ນິຕິທຳ (ມ 11 ກດຍ);

2) ການບໍ່ໃຫ້ລ່ວງລະເມີດສິດ ແລະ ເສລີພາບຂອງພົນລະເມືອງ (ມ 12 ກດຍ);

3) ຄວາມສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ແລະ ສານ (ມ 13 ກດຍ);
4) ການຮັບປະກັນສິດໃນການຕໍ່ສູ້ຄະດີ (ມ 14 ກດຍ);
5) ການສັນນິຖານວ່າເປັນຜູ່ບໍລິສຸດ (ມ 15 ກດຍ);
6) ພາສາທີ່ໃຊ້ໃນການດຳເນີນຄະດີ (ມ 20 ກດຍ);
7) ການດຳເນີນຄະດີຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ (ມ 24 ກດຍ);
8) ການຮັບປະກັນສິດໃນການຮ້ອງຟ້ອງ (ມ 25 ກດຍ);
9) ການປະສານສົມທົບ (ມ 26 ກດຍ).

ລາຍລະອຽດຂອງບັນດາຫຼັກການທີ່ກ່າວມານັ້ນໄດ້ອະທິບາຍໃນພາກທີ 1 ບົດທີ 1.

### 3.2. ການຕິດຕາມກວດກາການອອກຄຳສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ

#### ກ. ການຕິດຕາມກວດກາການເປີດການສືບສວນ-ສອບສວນ

ການຕິດຕາມກວດກາການເປີດການສືບສວນ-ສອບສວນ ແມ່ນຄວາມຈຳເປັນພາວະວິໄສ ເພາະວ່າຄຳສັ່ງເປີດການສືບສວນ-ສອບສວນແມ່ນການກຳນົດທາງດ້ານກົດໝາຍກ່ຽວກັບການກະທຳໃດໜຶ່ງຂອງບຸກຄົນໃດໜຶ່ງທີ່ເປັນອັນຕະລາຍຕໍ່ສັງຄົມ, ເປັນການຈຳກັດສິດ ແລະ ຜົນປະໂຫຍດຂອງຜູ່ຖືກຫາ ແລະ ຖືວ່າບຸກຄົນນັ້ນເປັນຜູ່ຖືກຫາໃນສະຖານການກະທຳຜິດໃດໜຶ່ງຕາມກົດໝາຍອາຍາຊຶ່ງຈຳເປັນຕ້ອງບັງຄັບໃຫ້ດຳເນີນໄປຕາມຂະບວນການຍຸຕິທຳ, ຄຳສັ່ງເປີດການສືບສວນ-ສອບສວນທັງເປັນບ່ອນອີງທີ່ເປັນພື້ນຖານໃຫ້ແກ່ການເຄື່ອນໄຫວຂອງເຈົ້າໜ້າທີ່ສືບສວນ-ສອບສວນ. ສະນັ້ນ, ເມື່ອໄດ້ຮັບຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ, ການເຂົ້າມອບຕົວ ຫຼື ການພົບເຫັນຮ່ອງຮອຍຂອງການກະທຳຜິດຊຶ່ງມີພື້ນຖານຢ່າງໜັກແໜ້ນກ່ຽວກັບການກະທຳຜິດແລ້ວເຈົ້າໜ້າທີ່ສືບສວນ-ສອບສວນຕ້ອງໄດ້ລາຍງານໃຫ້ອົງການໄອຍະການຊາບພາຍໃນຊາວສີ່ຊົ່ວໂມງ (ມ 95 ກດຍ) ເພື່ອໃຫ້ອົງການໄອຍະການປະຊາຊົນໄດ້ປະຕິບັດສິດ ແລະ ໜ້າທີ່ຂອງຕົນໃນການເລີ່ມຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນຈົນເຖິງຂັ້ນຕອນການສະຫຼຸບຜົນ ແລະ ສິ້ນສຸດການສືບສວນ-ສອບສວນ;

ການດຳເນີນຄະດີອາຍາຂອງອົງການສືບສວນ-ສອບສວນ ຫົວໜ້າອົງການໄອຍະການປະຊາຊົນຕ້ອງໄດ້ທຳການກວດກາບັນດາເນື້ອໃນຂອງສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ ເຊັ່ນ:

– ຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມຂອງບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການກະທຳຜິດ;

– ມີການເຂົ້າມອບຕົວຂອງຜູ່ກະທຳຜິດ;

– ພົບເຫັນຮ່ອງຮອຍຂອງການກະທຳຜິດໂດຍອົງການສືບສວນ-ສອບສວນ.

ບັນດາສາເຫດທີ່ກ່າວມານັ້ນອົງການໄອຍະການຈະຕ້ອງໄດ້ກວດເບິ່ງຂໍ້ມູນທີ່ສ່ອງແສງໃຫ້ເຫັນເຖິງພຶດຕິກຳທີ່ເປັນການກະທຳຜິດທີ່ເປັນອັນຕະລາຍຕໍ່ສັງຄົມ ຫຼື ບໍ່, ຫຼື ເປັນການກະທຳຜິດທີ່ກົດໝາຍອາຍາກຳນົດໂທດ.

**ຕົວຢ່າງ**: ໄດ້ມີການແຈ້ງຄວາມຈາກອົງການປົກຄອງບ້ານ ກ ວ່າໄດ້ມີການຄາດຕະກຳປະຊາຊົນຜູ່ໜຶ່ງຢູ່ພາຍໃນບ້ານເປັນເວລາສອງວັນຜ່ານມາແລ້ວ. ຜ່ານການກວດກາການບັນທຶກຂໍ້ມູນກ່ຽວກັບເຫດການຄາດຕະກຳ, ຜົນການເກັບກຳຂໍ້ມູນເບື້ອງຕົ້ນຂອງເຈົ້າໜ້າທີ່ສືບສວນ-ສອບສວນພາຍໃນກຳນົດຫ້າວັນ ຫຼື ສິບວັນກໍລະນີທີ່ມີຄວາມຫຍຸ້ງຍາກສັບສົນ (ມ 90 ກດຍ).

ຫົວໜ້າອົງການໄອຍະການຕ້ອງໄດ້ກວດກາເບິ່ງການໃສ່ຂໍ້ຫາຜູ່ຖືກຫາ, ຖ້າເປັນການກະທຳຜິດຫຼາຍສະຖານກໍຕ້ອງໄດ້ບອກຂໍ້ຫາແຕ່ລະສະຖານການກະທຳຜິດ, ພ້ອມທັງມາດຕາຂອງກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາທີ່ກ່ຽວຂ້ອງກັບຂໍ້ຫານັ້ນ. ກໍລະນີທີ່ເຫັນວ່າຍັງມີບຸກຄົນອື່ນທີ່ໄດ້ເຂົ້າຮ່ວມໃນການກະທຳຜິດແຕ່ຍັງບໍ່ທັນໄດ້ອອກຄຳສັ່ງເປີດການສືບສວນ-ສອບສວນກໍຕ້ອງໄດ້ແນະນຳໃຫ້ຫົວໜ້າອົງການສືບສວນ-ສອບສວນອອກຄຳສັ່ງເປີດການສືບສວນ-ສອບສວນໃສ່ບຸກຄົນນັ້ນ;

ຜ່ານການກວດກາເມື່ອເຫັນວ່າເປັນການກະທຳຜິດທາງອາຍາທີ່ມີອົງປະກອບຂອງການກະທຳຜິດທາງອາຍາຢ່າງຄົບຖ້ວນແລ້ວຫົວໜ້າອົງການໄອຍະການກໍຕ້ອງໄດ້ອອກຄຳຕົກລົງເຫັນດີໃນການອອກຄຳສັ່ງເປີດການສືບສວນ-ສອບສວນສົ່ງໃຫ້ອົງການສືບສວນ-ສອບສວນເພື່ອຈັດຕັ້ງປະຕິບັດໃນທັນໃດ.

**໒. ການຕິດຕາມກວດກາຄຳສັ່ງບໍ່ເປີດການສືບສວນ-ສອບສວນ**

ຫົວໜ້າອົງການໄອຍະການເມື່ອໄດ້ຮັບບົດລາຍງານຂອງຫົວໜ້າອົງການສືບສວນ-ສອບສວນກ່ຽວກັບການອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນແລ້ວຕ້ອງໄດ້ຄົ້ນຄວ້າຢ່າງລະອຽດຖີ່ຖ້ວນເປັນຕົ້ນສາເຫດທີ່ບໍ່ພາໃຫ້ເປີດການສືບສວນ-ສອບສວນດັ່ງນີ້:

1) ບໍ່ມີຂໍ້ມູນຫຼັກຖານໜັກແໜ້ນທີ່ຢັ້ງຢືນວ່າມີການກະທຳຜິດ;

2) ມີສາເຫດໃດໜຶ່ງທີ່ກຳນົດໃນມາດຕາ 6 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ລະອຽດໄດ້ເວົ້າໃນບົດທີ 1 ຂໍ້ 6.1. ຂອງພານີ້);

ເມື່ອໄດ້ຄົ້ນຄວ້າເຫັນວ່າຄົບຕາມເງື່ອນໄຂທີ່ກ່າວມາຂ້າງເທິງນັ້ນແລ້ວຫົວໜ້າອົງການໄອຍະການຕ້ອງແຈ້ງໃຫ້ອົງການສືບສວນ-ສອບສວນຊາບ.

ໃນກໍລະນີທີ່ໄດ້ຄົ້ນຄວ້າແລ້ວເຫັນວ່າຫົວໜ້າອົງການສືບສວນ-ສອບສວນອອກຄຳສັ່ງບໍ່ເປີດການສືບສວນ-ສອບສວນໂດຍບໍ່ມີເຫດຜົນໝາຍຄວາມວ່າມີເງື່ອນໄຂທີ່ພາໃຫ້ອອກຄຳ

ສັ່ງເປີດການສືບສວນ-ສອບສວນຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງລົບລ້າງຄຳສັ່ງບໍ່ເປີດການສືບສວນ-ສອບສວນ ແລະ ອອກຄຳສັ່ງເປີດການສືບສວນ-ສອບສວນສົ່ງໃຫ້ອົງການສືບສວນ-ສອບສວນດຳເນີນຄະດີຕາມຂັ້ນຕອນຂອງກົດໝາຍ.

### 3.3. ການຕິດຕາມກວດກາການນຳໃຊ້ວິທີການສືບສວນ-ສອບສວນ

ຫົວໜ້າອົງການໄອຍະການຕ້ອງປະສານສົມທົບກັບອົງການສືບສວນ-ສອບສວນເພື່ອຕິດຕາມກວດກາການນຳໃຊ້ວິທີການສືບສວນ-ສອບສວນເປັນຕົ້ນການເອົາຄຳໃຫ້ການ, ການສອບຖາມຊ້ອງໜ້າ, ການຊີ້ຕົວ ແລະ ການຢັ້ງຢືນ, ການກວດຄົ້ນ, ການຕິດຕາມກວດກາການຍຶດ ຫຼື ອາຍັດຊັບທີ່ເປັນປະໂຫຍດໃຫ້ແກ່ການດຳເນີນຄະດີ, ການຕິດຕາມກວດກາການຊັນນະສູດສະຖານທີ່ເກີດເຫດ, ການຊັນນະສູດຊາກສົບ, ການແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານທຳການພິສູດ ແລະ ທົດສອບຂໍ້ມູນຄືນໃໝ່ເພື່ອເກັບໂຮມບັນດາຂໍ້ມູນຫຼັກຖານຕ່າງໆໃນການດຳເນີນຄະດີອາຍາໃຫ້ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສເປັນຕົ້ນແມ່ນຂັ້ນຕອນ ແລະ ວິທີການສືບສວນ-ສອບສວນ.

**ຕົວຢ່າງ:** ການຕິດຕາມກວດກາການເອົາຄຳໃຫ້ການ ຊຶ່ງແມ່ນການສອບຖາມຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ບຸກຄົນອື່ນໆທີ່ເຂົ້າຮ່ວມໃນການດຳເນີນຄະດີອາຍາແມ່ນເປັນບັນຫາທີ່ສຳຄັນ ແລະ ມີຄວາມຈຳເປັນທີ່ຈະຕ້ອງໄດ້ມີເຕັກນິກກຳຄືສິລະປະໃນການສອບຖາມ ຫຼື ໂດຍຮູບການ ແລະ ວິທີການທີ່ຖືກຕ້ອງຕາມກົດໝາຍ, ຈຸດປະສົງຂອງການສອບຖາມກໍແມ່ນເພື່ອໃຫ້ບຸກຄົນດັ່ງກ່າວນັ້ນລາຍງານກ່ຽວກັບເຫດການຂອງການກະທຳຜິດຢ່າງລະອຽດ ແລະ ຈະແຈ້ງດ້ວຍຄວາມຈິງໃຈ ແລະ ຖືກຕ້ອງຕາມເຫດການໂດຍໃຊ້ວິທີການໃຫ້ເລົ່າຄືນເຫດການ ແລະ ມີການຕັ້ງຄຳຖາມເພື່ອເຈາະຈີ້ມບັນຫາໃຫ້ຮູ້ຄວາມຈິງຂອງບັນຫາທີ່ເກີດຂຶ້ນ;

ກ່ຽວກັບການເອົາຄຳໃຫ້ການຫົວໜ້າອົງການໄອຍະການຕ້ອງໄດ້ກວດກາເບິ່ງການແຈ້ງສິດ ແລະ ພັນທະຂອງຜູ້ໃຫ້ການ ຕາມມາດຕາ 65, 67, 68, 69, 70 ແລະ 116 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ຈຸດປະສົງຂອງການຕິດຕາມກວດກາບັນຫາດັ່ງກ່າວ ກໍຍ້ອນວ່າບໍ່ຢາກໃຫ້ເຈົ້າໜ້າທີ່ອົງການ ສືບສວນ-ສອບສວນ ຖືເບົາຕໍ່ການປະຕິບັດຫຼັກການຂອງການດຳເນີນຄະດີອາຍາ, ໃນພາກປະຕິບັດຕົວຈິງບາງຄະດີເຈົ້າໜ້າທີ່ໄດ້ແຈ້ງພັນທະຂອງຜູ້ໃຫ້ການ, ແຕ່ບໍ່ແຈ້ງສິດໃຫ້ຜູ້ກ່ຽວຊາບ ເຊັ່ນ ຜູ້ຖືກຫາມີສິດໄດ້ຮັບເອກະສານກ່ຽວກັບການເປີດການສືບສວນ-ສອບສວນ, ຄຳສັ່ງໂຈະ, ບົດສະຫຼຸບຜົນການສືບສວນ-ສອບສວນ ຫຼື ອື່ນໆ (ມ 65 ກດຍ), ແຕ່ເຈົ້າໜ້າທີ່ສືບສວນ-ສອບສວນບໍ່ແຈ້ງລະອຽດໃຫ້ຜູ້ໃຫ້ການຮັບຊາບ, ເມື່ອເຫັນວ່າມີການລະເມີດແລ້ວຫົວໜ້າອົງການໄອຍະການກໍຕ້ອງໄດ້

ກວດກາພ້ອມທັງມີຄຳແນະນຳເປັນລາຍລັກອັກສອນໃຫ້ເຈົ້າໜ້າທີ່ອົງການສືບສວນ-ສອບສວນຈັດຕັ້ງປະຕິບັດ.

### 3.4. ການຕິດຕາມກວດກາການນຳໃຊ້ມາດຕະການສະກັດກັ້ນ

ການນຳໃຊ້ມາດຕະການສະກັດກັ້ນໃນການດຳເນີນຄະດີອາຍາເປັນການຈຳກັດສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາເພື່ອເກັບກຳຂໍ້ມູນຫຼັກຖານທີ່ເປັນປະໂຫຍດໃນຄະດີອາຍາ, ຊຶ່ງບັນດາມາດຕະການສະກັດກັ້ນໃນການດຳເນີນຄະດີອາຍາທີ່ນຳໃຊ້ຢູ່ຂັ້ນເຈົ້າໜ້າທີ່ອົງການສືບສວນ-ສອບສວນເພື່ອສະກັດກັ້ນການກະທຳຜິດຢ່າງທັນການ ຫຼື ເມື່ອມີພື້ນຖານທີ່ພາໃຫ້ເຊື່ອໝັ້ນວ່າຜູ້ຖືກຫາຈະສ້າງຄວາມຫຍຸ້ງຍາກໃຫ້ແກ່ການສືບສວນ-ສອບສວນ ຊຶ່ງລວມມີ 7 ມາດຕະການສະກັດກັ້ນຄື ການພາຕົວ, ການກັກຕົວ, ການຈັບຕົວ, ການກັກຂັງພາງ, ການປ່ອຍຕົວພາງ, ການຄຸມຕົວຢູ່ກັບທີ່, ການງົດໜ້າທີ່ ຫຼື ຕຳແໜ່ງ ຊຶ່ງການນຳໃຊ້ບັນດາມາດຕະການເຫຼົ່ານັ້ນແມ່ນເພື່ອເຮັດໃຫ້ການສືບສວນ-ສອບສວນໄດ້ດຳເນີນໄປຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ, ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ ແລະ ມີຄວາມຍຸຕິທຳ ທັງເປັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ ຊຶ່ງການປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາການນຳໃຊ້ມາດຕະການສະກັດກັ້ນນັ້ນແມ່ນເລີ່ມຈາກການຄົ້ນຄວ້າພິຈາລະນາຄຳສະເໜີຈາກຫົວໜ້າອົງການສືບສວນ-ສອບສວນ, ໃນນັ້ນຈະຕ້ອງໄດ້ກວດກາເປົ້າໝາຍ, ເງື່ອນໄຂ, ກຳນົດເວລາ ແລະ ການນຳໃຊ້ມາດຕະການພາຍຫຼັງທີ່ໄດ້ອອກຄຳສັ່ງແລ້ວ ຫຼື ບັນຫາອື່ນໆທີ່ເຫັນວ່າມີຄວາມຈຳເປັນ.

**ຕົວຢ່າງ:** ຕິດຕາມກວດກາກ່ອນການອອກຄຳສັ່ງ ແລະ ພາຍຫຼັງອອກຄຳສັ່ງກັກຂັງພາງ.

#### ກ. ຕິດຕາມກວດກາກ່ອນການອອກຄຳສັ່ງກັກຂັງພາງ

#### 1. ກວດກາເປົ້າໝາຍກັກຂັງພາງ

ຫົວໜ້າອົງການໄອຍະການ ເມື່ອໄດ້ຮັບຄຳສະເໜີຂໍຄຳສັ່ງກັກຂັງພາງແລ້ວຕ້ອງໄດ້ຄົ້ນຄວ້າພິຈາລະນາຢ່າງລະອຽດຖີ່ຖ້ວນ ເບິ່ງວ່າຜູ້ຖືກຫາທີ່ຫົວໜ້າອົງການສືບສວນ-ສອບສວນສະເໜີມານັ້ນແມ່ນຜູ້ກະທຳຜິດ ຫຼື ບໍ່ ແລະ ການກະທຳຜິດນັ້ນເປັນອັນຕະລາຍຕໍ່ສັງຄົມໃນລະດັບໃດທັງນີ້ກໍເພື່ອຫຼີກເວັ້ນການອອກຄຳສັ່ງກັກຂັງພາງບຸກຄົນທີ່ບໍ່ໄດ້ກະທຳຜິດ;

#### 2. ກວດກາເງື່ອນໄຂການອອກຄຳສັ່ງກັກຂັງພາງ

– ການອອກຄຳສັ່ງເປີດການສືບສວນ-ສອບສວນຖືກຕ້ອງຕາມກົດໝາຍ ຫຼື ບໍ່;

– ເປັນການກະທຳຜິດ ຊຶ່ງເປັນອັນຕະລາຍຕໍ່ສັງຄົມ ແລະ ເປັນການກະທຳຜິດທາງອາຍາ ທີ່ກົດໝາຍກຳນົດໂທດຕັດອິດສະຫຼະພາບ ຫຼື ບໍ່;

– ມີຫຼັກຖານໜັກແໜ້ນ ຫຼື ບໍ່;

– ການກັກຕົວ, ການຈັບຕົວຖືກຕ້ອງຕາມກົດໝາຍ ຫຼື ບໍ່;

**3. ການພິຈາລະນາອອກຄຳສັ່ງ ຫຼື ບໍ່ອອກຄຳສັ່ງກັກຂັງພາງ**

ພາຍຫຼັງທີ່ໄດ້ກວດກາເປົ້າໝາຍ ແລະ ເງື່ອນໄຂຄົບຖ້ວນແລ້ວຫົວໜ້າອົງການໄອຍະການຕ້ອງໄດ້ລົງຄຳເຫັນຊີ້ຂາດພາຍໃນຊາວສີ່ຊົ່ວໂມງວ່າຈະປ່ອຍຕົວ ຫຼື ຈະອອກຄຳສັ່ງກັກຂັງພາງ (ມ 138 ແລະ 139 ກດຍ).

**ຂ. ຕິດຕາມກວດກາພາຍຫຼັງອອກຄຳສັ່ງກັກຂັງພາງ**

ພາຍຫຼັງທີ່ໄດ້ອອກຄຳສັ່ງກັກຂັງພາງແລ້ວຫົວໜ້າອົງການໄອຍະການຕ້ອງໄດ້ຕິດຕາມກວດກາການປະຕິບັດກຳນົດເວລາການກັກຂັງພາງຢ່າງເຂັ້ມງວດໂດຍໃຫ້ສ້າງປຶ້ມບັນທຶກ ແລະ ຕາຕະລາງຕິດຕາມຢ່າງລະອຽດຈະແຈ້ງ, ກ່ອນຈະໝົດກຳນົດເວລາກັກຂັງພາງພະນັກງານໄອຍະການຜູ່ຮັບຜິດຊອບຕ້ອງໄດ້ລາຍງານຫົວໜ້າອົງການໄອຍະການເພື່ອແນະນຳໃຫ້ຫົວໜ້າອົງການສືບສວນ-ສອບສວນລາຍງານຜົນການສືບສວນ-ສອບສວນ.

ເມື່ອໝົດກຳນົດເວລາການກັກຂັງພາງແຕ່ຍັງບໍ່ທັນມີຫຼັກຖານພຽງພໍເພື່ອສະຫຼຸບການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ, ຕ້ອງໄດ້ແນະນຳໃຫ້ຫົວໜ້າອົງການສືບສວນ-ສອບສວນສະຫຼຸບລາຍງານຫົວໜ້າອົງການໄອຍະການເພື່ອຂໍຄຳສັ່ງປ່ອຍຕົວຜູ່ຖືກຫາ (ມ 111 ກດຍ).

## ສົມທຽບການນຳໃຊ້ມາດຕະການສະກັດກັ້ນໃນການດຳເນີນຄະດີ

## ສົກປີ 2012-2013 ໃສ່ສົກປີ 2011-2012 (17 ແຂວງ, ນະຄອນ ແລະ 39 ເຂດ)

| ລ/ດ | ຊື່ ແຂວງ | ສົກປີ 2012 - 2013 | | | ສົກປີ 2011 - 2012 | | | ສົມທຽບ( ເພີ່ມ + ; ຫຼຸດ - ) | | |
|---|---|---|---|---|---|---|---|---|---|---|
| | | ຄຳສັ່ງ | | | ຄຳສັ່ງ | | | ຄຳສັ່ງ | | |
| | | ຈັບຕົວ | ກັກຂັງພາງ | ປ່ອຍຕົວພາງ | ຈັບຕົວ | ກັກຂັງພາງ | ປ່ອຍຕົວພາງ | ຈັບຕົວ | ກັກຂັງພາງ | ປ່ອຍຕົວພາງ |
| 1 | ຜົ້ງສາລີ | 31 | 40 | 2 | 29 | 31 | 0 | 2 | 9 | 2 |
| 2 | ອຸດົມໄຊ | 67 | 149 | 15 | 77 | 194 | 11 | -10 | -45 | 4 |
| 3 | ຫຼວງນ້ຳທາ | 12 | 254 | 6 | 10 | 223 | 9 | 2 | 31 | -3 |
| 4 | ບໍ່ແກ້ວ | 22 | 154 | 25 | 43 | 191 | 14 | -21 | -37 | 11 |
| 5 | ໄຊຍະບູລີ | 49 | 379 | 29 | 13 | 300 | 24 | 36 | 79 | 5 |
| 6 | ຫຼວງພະບາງ | 160 | 509 | 164 | 119 | 568 | 134 | 41 | -59 | 30 |
| 7 | ຫົວພັນ | 17 | 171 | 1 | 6 | 140 | 8 | 11 | 31 | -7 |
| 8 | ຊຽງຂວາງ | 69 | 206 | 22 | 85 | 213 | 42 | -16 | -7 | -20 |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 9 | ວຽງຈັນ | 22 | 130 | 13 | 10 | 80 | 18 | 12 | 50 | -5 |
| 10 | ນະຄອນຫຼວງ | 102 | 1,310 | 108 | 74 | 909 | 128 | 28 | 401 | -20 |
| 11 | ບໍລິຄຳໄຊ | 216 | 390 | 54 | 193 | 420 | 88 | 23 | -30 | -34 |
| 12 | ຄຳມ່ວນ | 81 | 482 | 55 | 57 | 550 | 48 | 24 | -68 | 7 |
| 13 | ສະຫວັນນະເຂດ | 123 | 730 | 48 | 71 | 480 | 64 | 52 | 250 | -16 |
| 14 | ຈຳປາສັກ | 23 | 157 | 28 | 15 | 201 | 6 | 8 | -44 | 22 |
| 15 | ສາລະວັນ | 53 | 219 | 35 | 95 | 219 | 69 | -42 | 0 | -34 |
| 16 | ເຊກອງ | 6 | 34 | 6 | 7 | 30 | 4 | -1 | 4 | 2 |
| 17 | ອັດຕະປື | 80 | 268 | 83 | 51 | 172 | 35 | 29 | 96 | 48 |
| ລວມ | | 1,133 | 5,582 | 694 | 955 | 4,921 | 702 | 178 | 661 | -8 |

# ບົດທີ 4
# ການປົກປ້ອງສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາ ໃນຂັ້ນຕອນການສືບສວນ-ສອບສວນ

ມະນຸດທຸກຄົນລ້ວນແຕ່ມີເສລີພາບມາແຕ່ກຳເນີດ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ, ຄວນຈະຕ້ອງປະພຶດຕໍ່ກັນ ແລະ ກັນດ້ວຍນ້ຳໃຈອັນເປັນພາລາດອນພາບນຳກັນ. ທຸກຄົນມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ມີສິດໄດ້ຮັບການປົກປ້ອງຈາກກົດໝາຍຢ່າງເທົ່າທຽມກັນ, ໂດຍບໍ່ມີການຈຳແນກ, ບໍ່ມີບຸກຄົນໃດທີ່ຈະຖືກຈັບຕົວ ຫຼື ຖືກກັກຂັງໂດຍພາລະການ ແລະ ບໍ່ມີບຸກຄົນໃດທີ່ຈະຖືກທໍລະມານ, ຖືກລົງໂທດ ຫຼື ໄດ້ຮັບການກະທຳທີ່ໂຫດຮ້າຍປ່າເຖື່ອນ, ບໍ່ມີມະນຸດສະທຳ ແລະ ເຊື່ອມຊາມ. ດ້ວຍຄວາມສະເໝີພາບຢ່າງເຕັມສ່ວນ, ທຸກຄົນມີສິດໄດ້ຮັບການພິຈາລະນາຢ່າງຍຸຕິທຳ, ເປີດເຜີຍ, ບໍ່ລຳອຽງ ແລະ ຖືວ່າຍັງເປັນຜູ້ບໍລິສຸດຢູ່, ຈະບໍ່ຖືກລ່ວງລ້ຳກຽດສັກສີ, ຊີວິດສ່ວນຕົວ, ຄອບຄົວ, ທີ່ຢູ່ອາໄສ ແລະ ການສື່ສານ ໂດຍໄດ້ຮັບການປົກປ້ອງດ້ວຍກົດໝາຍ. ຖະແຫຼງການສາກົນວ່າດ້ວຍສິດທິມະນຸດ ປີ 1948, (The Universal Declaration of Human Rights, 1948). Cf part 1 ມ 1, ມ 5, ມ 7, ມ 9, ມ 10, ມ 11 ແລະ ມ 12 ຕະຫຼອດຮອດການເອົາຄຳໃຫ້ການຜູ້ຖືກສົງໄສ ຫຼື ຜູ້ຖືກຫານັ້ນ, ເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງນອກຈາກຈະບໍ່ຈຳກັດແລ້ວ ຍັງຕ້ອງໄດ້ແຈ້ງສິດໃນການຕໍ່ສູ້ຄະດີ ແລະ ສິດອື່ນໆໃຫ້ເຂົາເຈົ້າໄດ້ຮັບຊາບ.

## 1. ຄວາມໝາຍສຳຄັນຂອງການປົກປ້ອງສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາໃນຂັ້ນຕອນການສືບສວນ-ສອບສວນ

ຈາກຜົນຂອງສົນທິສັນຍາສາກົນວ່າດ້ວຍສິດທິມະນຸດດັ່ງທີ່ໄດ້ກ່າວມາໃນຂ້າງເທິງໄດ້ກໍ່ໃຫ້ເກີດການເຄື່ອນໄຫວໃນປະເທດຕ່າງໆລວມທັງ ສປປ ລາວ, ຊຶ່ງໄດ້ນຳເອົາຫຼັກການຂອງສົນທິສັນຍາສາກົນມາຈັດຕັ້ງປະຕິບັດໃຫ້ເປັນຈິງໂດຍໄດ້ກຳນົດໃຫ້ລັດເປັນຜູ້ປົກປ້ອງສິດເສລີພາບ ແລະ ປະຊາທິປະໄຕຂອງປະຊາຊົນ, ທີ່ບໍ່ມີໃຜຈະລ່ວງລະເມີດໄດ້. ທຸກອົງການ ແລະ ພະນັກງານຂອງລັດຕ້ອງພ້ອມກັນຈັດຕັ້ງປະຕິບັດເພື່ອຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນ. ຫ້າມທຸກການກະທຳແບບອາດຍາສິດ, ຂົ່ມຂູ່ອັນຈະກໍ່ຄວາມເສັຍຫາຍເຖິງກຽດສັກສີ, ຮ່າງກາຍ, ຊີວິດ, ຈິດໃຈ ແລະ ຊັບສິນບັດຂອງປະຊາຊົນ (ມ 6 ລນ) ຊຶ່ງໄດ້ສອດຄ່ອງກັບຫຼັກການຂອງສົນທິສັນຍາສາກົນດັ່ງທີ່ໄດ້ກ່າວມາ.

ໃນລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດໃຫ້ລັດຕ້ອງປົກປ້ອງສິດ ແລະ ເສລີພາບຂອງພົນລະເມືອງ, ຊຶ່ງມີຄວາມໝາຍວ່າທຸກໜ່ວຍງານຂອງ

ລັດຕ້ອງຄຳນຶງເຖິງສັກສີຄວາມເປັນມະນຸດ, ໃນສ່ວນທີ່ກ່ຽວຂ້ອງກັບການຄຸ້ມຄອງສິດ ແລະ ເສລີພາບຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາໃນຂັ້ນຕອນການສືບສວນ-ສອບສວນ, ໂດຍໄດ້ເອົາມາກຳນົດໄວ້ເປັນຫຼັກການທີ່ສຳຄັນວ່າ "ໃນການດຳເນີນຄະດີອາຍາຕ້ອງສັນນິຖານໄວ້ກ່ອນວ່າຜູ້ຖືກສົງໄສ ຫຼື ຜູ້ຖືກຫາຍັງເປັນຜູ້ບໍລິສຸດຢູ່ (ມ 15 ກດຍ), ລັດ ຕ້ອງໃຫ້ຫຼັກປະກັນໃນການຕໍ່ສູ້ຄະດີເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເຂົາເຈົ້າ".

ການປົກປ້ອງສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາໃນຂັ້ນຕອນການສືບສວນ-ສອບສວນນີ້ ນອກຈາກຈະປົກປ້ອງສິດ ແລະ ຜົນປະໂຫຍດຂອງເຂົາເຈົ້າແລ້ວ ຍັງສ້າງຄວາມເຂັ້ມແຂງແກ່ຂະບວນການຍຸຕິທຳທາງອາຍາ, ຕ້ານການລ່ວງລະເມີດສິດອັນຊອບທຳຂອງຜູ້ຖືກຫາ, ໃຫ້ຜູ້ຖືກຫາເຂົ້າເຖິງຂະບວນການຍຸຕິທຳ, ສ້າງຄວາມເຊື່ອໝັ້ນ ແລະ ທັງເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ (ມ 1 ກທຄ). ພົນລະເມືອງທຸກຄົນມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສານ ໂດຍບໍ່ຈຳແນກເພດ, ເຊື້ອຊາດ, ສັນຊາດ, ເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ (ມ 13 ວັກ 1 ກດຍ). ພົນລະເມືອງທຸກຄົນລ້ວນແຕ່ໄດ້ຮັບການປົກປ້ອງພາຍໃຕ້ກົດໝາຍດຽວກັນ, ອີງການດຳເນີນຄະດີອາຍາຕ້ອງສ້າງເງື່ອນໄຂໃຫ້ພົນລະເມືອງໂດຍສະເພາະຜູ້ຖືກສົງໄສ ແລະ ຜູ້ຖືກຫາໃຫ້ໄດ້ນຳໃຊ້ສິດຕາມກົດໝາຍ ເພື່ອຮັບປະກັນໃຫ້ການດຳເນີນຄະດີອາຍາໄດ້ດຳເນີນໄປຢ່າງຖືກຕ້ອງຕາມຄວາມເປັນຈິງ, ພາວະວິໄສ (ມ 13 ວັກທ້າຍ ກດຍ) ແລະ ຍຸຕິທຳ ເພື່ອຊອກໃຫ້ເຫັນຄວາມຈິງ ແລະ ທັງປົກປ້ອງຄຸ້ມຄອງສິດຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາ, ການປົກປ້ອງສິດຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາຈຶ່ງເປັນເລື່ອງຂອງການທີ່ມີກົດເກນ, ບໍ່ແມ່ນສິ່ງທີ່ຈະກະທຳໄດ້ໂດຍລຳພັງໃຈ, ເປັນເລື່ອງຂອງການໃຊ້ກົດເກນຕາມກົດໝາຍ. ເນື່ອງຈາກວ່າສິດ ແລະ ເສລີພາບຂອງທຸກຄົນຈະຕ້ອງມີສິດໄດ້ຮັບການປົກປ້ອງຈາກກົດໝາຍໂດຍບໍ່ມີຂໍ້ຍົກເວັ້ນ, ເປັນການເຄົາລົບຍອມຮັບຮູ້ກຽດສັກສີຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາ, ຊຶ່ງທຸກຄົນມີສິດ ແລະ ເສລີພາບເທົ່າທຽມກັນ, ບໍ່ສາມາດໂອນ, ຈຳກັດ ຫຼື ປິດສິດ ຫຼື ແຍກສິດດັ່ງກ່າວນີ້ອອກຈາກຕົວມະນຸດບຸກຄົນຜູ້ໃດຜູ້ໜຶ່ງໄດ້ຈຶ່ງເອີ້ນວ່າ "ສິດທິມະນຸດ" ມັນມີຄຸນຄ່າ ແລະ ເປັນແຫຼ່ງທີ່ມາແຫ່ງອິດສະລະພາບ ແລະ ຄວາມຍຸຕິທຳ, ເພື່ອປົກປ້ອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາໃຫ້ລອດພົ້ນຈາກການບຽດບຽນ, ຢຽບຢາມ ຫຼື ການກະທຳອັນປ່າເຖື່ອນ, ເນື່ອງຈາກວ່າບຸກຄົນຜູ້ໃດຜູ້ໜຶ່ງຈະຖືກທໍລະມານ ຫຼື ຖືກເລືອກປະຕິບັດ

ຫຼື ຖືກລົງໂທດທີ່ໂຫດຮ້າຍຜິດມະນຸດສະທຳ ຫຼື ຕ່ຳຊ້າບໍ່ໄດ້, ດັ່ງນັ້ນຈຶ່ງມີຄວາມຈຳເປັນຢ່າງຍິ່ງ ທີ່ສິດທິມະນຸດທຸກຄົນຄວນໄດ້ຮັບການປົກປ້ອງໂດຍຫຼັກການຂອງລະບຽບກົດໝາຍ[16].

## 2. ການຮັບປະກັນສິດໃນການຕໍ່ສູ້ຄະດີຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາໃນຂັ້ນຕອນການສືບສວນ-ສອບສວນ

ການດຳເນີນຄະດີອາຍາໃນຂັ້ນຕອນການສືບສວນ-ສອບສວນ, ຜູ້ຖືກສົງໄສ ແລະ ຜູ້ຖືກຫາມີສິດຕໍ່ສູ້ຄະດີດ້ວຍຕົນເອງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນເພື່ອຊ່ວຍເຫຼືອທາງດ້ານກົດໝາຍ. ອົງການດຳເນີນຄະດີອາຍາຕ້ອງຮັບປະກັນສິດໃນການຕໍ່ສູ້ຄະດີຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາ ຊຶ່ງເຂົາເຈົ້າມີສິດໂຕ້ແຍ່ງ, ໂຕ້ຖຽງ, ສະເໜີຫຼັກຖານເພື່ອປົກປ້ອງຕົນເອງ ແລະ ຈະບໍ່ຖືກບັງຄັບໃຫ້ຊອກຫາຫຼັກຖານມາຢັ້ງຢືນຄວາມບໍລິສຸດຂອງຕົນ (ມ 14 ກດຍ).

ເມື່ອມີການກະທຳຄວາມຜິດທາງອາຍາເກີດຂຶ້ນ, ລັດມີສິດອຳນາດ ແລະ ມີໜ້າທີ່ໃນການເຂົ້າຄວບຄຸມ ພ້ອມທັງອຳນວຍຄວາມຍຸຕິທຳໃຫ້ກັບປະຊາຊົນທຸກຄົນຢ່າງສະເໝີພາບກັນ, ຊຶ່ງແມ່ນເຈົ້າໜ້າທີ່ຂອງອົງການສືບສວນ-ສອບສວນເປັນຜູ້ດຳເນີນການເພື່ອຮັກສາຄວາມສະຫງົບສຸກ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ແຕ່ໃນຂະນະດຽວກັນນັ້ນພຽງແຕ່ເປັນຜູ້ຖືກສົງໄສ ຫຼື ເປັນຜູ້ຖືກຫາວ່າໄດ້ກະທຳຜິດ ຊຶ່ງຍັງບໍ່ທັນໄດ້ພິສູດວ່າເປັນຄວາມຈິງຕາມຂໍ້ກ່າວຫານັ້ນແທ້ ຫຼື ບໍ່, ດັ່ງນັ້ນຜູ້ຖືກສົງໄສ ຫຼື ຜູ້ຖືກຫາກໍຈະຕ້ອງໄດ້ຮັບການປົກປ້ອງສິດ ແລະ ເສລີພາບຂອງເຂົາເຈົ້າໃນຖານະທີ່ໄດ້ຮັບການສັນນິຖານວ່າຍັງເປັນຜູ້ບໍລິສຸດຢູ່ນັ້ນ (ມ 15 ກດຍ). ກໍເປັນສິ່ງສຳຄັນບໍ່ໜ້ອຍໄປກວ່າຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມສະຫງົບສຸກຂອງສັງຄົມ, ດັ່ງນັ້ນການເກັບໂຮມຫຼັກຖານຈຶ່ງຕົກເປັນໜ້າທີ່ຂອງລັດໂດຍດຳເນີນໄປຕາມຂັ້ນຕອນຂອງກົດໝາຍ, ແຕ່ການເກັບໂຮມຫຼັກຖານໃນຂັ້ນຕອນສືບສວນ-ສອບສວນນັ້ນ, ຜູ້ຖືກສົງໄສ ຫຼື ຜູ້ຖືກຫາເປັນບຸກຄົນທີ່ສຳຄັນໃນຄະດີອາຍາ ຫຼື ໃນການດຳເນີນຄະດີອາຍາ, ດັ່ງນັ້ນຜູ້ຖືກສົງໄສ ແລະ ຜູ້ຖືກຫາ ນອກຈາກຈະໄດ້ຮັບການປົກປ້ອງສິດດ້ວຍຕົນເອງ, ດ້ວຍທະນາຍຄວາມ ຫຼື ດ້ວຍຜູ້ຕາງໜ້າແລ້ວ, ຍັງໄດ້ຮັບການປົກປ້ອງສິດ ແລະ ເສລີພາບໂດຍລະບຽບກົດໝາຍໄປພ້ອມກັນຄື ຖ້າຫາກການເກັບໂຮມຫຼັກຖານທີ່ບໍ່ມີປະສິດທິພາບ ຫຼື ບໍ່ປະຕິບັດຕາມກົດໝາຍ ເຊັ່ນ ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ຫຼື ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ, ຕະຫຼອດຮອດຄຳຮັບສາລະພາບຕໍ່ການກະທຳຜິດ ຈະຖືເປັນຫຼັກຖານໃນຄະດີໄດ້ກໍຕໍ່ເມື່ອຄຳຮັບສາລະພາບນັ້ນໄດ້ຮັບການຢັ້ງຢືນດ້ວຍຫຼັກຖານຜູກມັດທີ່ໜັກແໜ້ນ, ນອກຈາກນີ້ຄຳຮັບສາລະພາບຂອງຜູ້ຖືກຫາທີ່

[16] ຊາດຊາຍ ຊອບທາງສິນ, ສິດທິຂອງຜູ້ເສຍຫາຍທີ່ຈະໄດ້ຮັບການຢຽວຢາຈາກລັດອັນເນື່ອງມາຈາກການກະທຳຄວາມຜິດທາງອາຍາ, (ວິທະຍານິພົນປະລິນຍາມະຫາບັນດິດພາກວິຊານິຕິສາດ, ສາຂາວິຊານິຕິສາດ, ຄະນະນິຕິສາດ ມະຫາວິທະຍາໄລຈຸລາລົງກອນ, ພສ 2542), ໜ້າ 34-35

ໄດ້ມາດ້ວຍການຕົວະຍົວະ, ຫຼອກລວງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານຈະໃຊ້ເປັນຫຼັກຖານໃນຄະດີອາຍາບໍ່ໄດ້ (ມ 12, ມ 24, ມ 36 ແລະ ມ 42 ກດຍ).

ການດຳເນີນຄະດີອາຍາໃນຂັ້ນຕອນການສືບສວນ-ສອບສວນຜູ້ຖືກສົງໄສ ຫຼື ຜູ້ຖືກຫາມີສິດຂໍການປະກັນຕົວ, ມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫຼືອທາງດ້ານກົດໝາຍຈາກທະນາຍຄວາມ ຫຼື ຜູ້ປົກປ້ອງ, ມີສິດທີ່ຈະໄດ້ຮັບການແຈ້ງສິດ, ແຈ້ງພັນທະ, ແຈ້ງຂໍ້ກ່າວຫາ, ມີສິດທີ່ຈະໄດ້ຮັບການພິຈາລະນາຄະດີຢ່າງວ່ອງໄວ ແລະ ເປັນທຳ, ມີສິດທີ່ຈະບໍ່ຖືກປະຈານ[17] ແລະມີສິດອື່ນໆຕາມກົດໝາຍ. ເນື່ອງຈາກວ່າໃນການດຳເນີນຄະດີອາຍາພົນລະເມືອງຕ້ອງໄດ້ຮັບການປົກປ້ອງຊີວິດ, ສຸຂະພາບ, ກຽດສັກສີ ຫຼື ຊັບສິນຂອງຕົນ, ທຸກພຶດຕິກຳຂອງອົງການ ແລະ ຜູ້ດຳເນີນຄະດີອາຍາ ເຊັ່ນ ການທຸບຕີ, ການທໍລະມານ, ການບັງຄັບ ແລະ ການຂົ່ມຂູ່ຊຶ່ງສ້າງຄວາມເສັຍຫາຍຕໍ່ພົນລະເມືອງຈະຖືກລົງໂທດຕາມກົດໝາຍ (ມ 7 ວັກ 3 ແລະ 4 ກດຍ). ດັ່ງນັ້ນ, ສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາຕ້ອງໄດ້ຮັບການປົກປ້ອງໂດຍລະບຽບກົດໝາຍຢ່າງເຄັ່ງຄັດ.

### 3. ສິດໃນການຕໍ່ສູ້ຄະດີຂອງຜູ້ຖືກສົງໄສໃນຂັ້ນຕອນການສືບສວນ-ສອບສວນ

ສຳລັບບຸກຄົນທີ່ຕົກເປັນຜູ້ຖືກສົງໄສນັ້ນໃນຄວາມເປັນຈິງ ແລະ ໃນທາງກົດໝາຍແລ້ວແມ່ນຍັງເປັນຜູ້ບໍລິສຸດຢູ່ພຽງແຕ່ຖືກສົງໄສວ່າເປັນຜູ້ກະທຳຜິດທາງອາຍາ, ແຕ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການ ຍັງບໍ່ສາມາດອອກຄຳສັ່ງເປີດການສືບສວນ-ສອບສວນ ແລະ ຍັງບໍ່ທັນໄດ້ຕັ້ງຂໍ້ຫາຕໍ່ຜູ້ກ່ຽວ, ດັ່ງນັ້ນ ຜູ້ຖືກສົງໄສ ຈຶ່ງມີສິດຕໍ່ສູ້ຄະດີ (ມ 64 ວັກ 2 ກດຍ) ດັ່ງນີ້:

1) ຮັບຊາບຂໍ້ສົງໄສຕໍ່ຕົນ;

2) ໄດ້ຮັບການອະທິບາຍກ່ຽວກັບສິດ ແລະ ພັນທະຂອງຕົນ;

3) ໃຫ້ຄຳອະທິບາຍ ຫຼື ໃຫ້ການກ່ຽວກັບຂໍ້ສົງໄສຕໍ່ຕົນ;

4) ສະເໜີຫຼັກຖານ;

5) ຮ້ອງຟ້ອງຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງອົງການສືບສວນ-ສອບສວນ ແລະ ອົງການໄອຍະການ;

6) ສະເໜີປະກັນຕົວ (ໃນກໍລະນີທີ່ຜູ້ຖືກສົງໄສຖືກຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການອອກຄຳສັ່ງກັກຕົວພາຍໃນກຳນົດສີ່ສິບແປດຊົ່ວໂມງ)

---

[17] ພັດທະນາ, "ມາດຕະການຄຸ້ມຄອງຜູ້ຖືກຫາໃນການສອບສວນຄະດີອາຍາ", (ວິທະຍານິພົນປະລິນຍານິຕິສາດມະຫາບັນດິດ, ສາຂາວິຊານິຕິສາດ, ຄະນະນິຕິສາດ ມະຫາວິທະຍາໄລຈຸລາລົງກອນ, ພສ 2544), ໜ້າ 37-40

ສໍາລັບການກະທໍາຜິດໃນສະຖານໂທສານຸໂທດ ທີ່ກົດໝາຍໄດ້ກໍານົດໂທດຕັດອິດສະລະພາບແຕ່ສາມປີລົງມາ.

ໃນໄລຍະເວລາຖືກກັກຕົວ ຫຼື ຕົກເປັນຜູ້ຖືກສົງໄສນັ້ນ, ຜູ້ກ່ຽວມີສິດພົບ ແລະ ເອົາທະນາຍຄວາມເພື່ອປົກປ້ອງ, ສ່ວນທະນາຍຄວາມກໍມີສິດພົບກັບຜູ້ຖືກສົງໄສ ຕາມການສະເໜີຂອງຜູ້ກ່ຽວພາຍຫຼັງຖືກຈັບຕົວ ຫຼື ກັກຕົວ, ພ້ອມທັງມີສິດສະເໜີຂໍປະກັນຕົວລູກຄວາມຂອງຕົນ ແລະ ປະຕິບັດໜ້າທີ່ປົກປ້ອງສິດຂອງລູກຄວາມຕາມລະບຽບກົດໝາຍ (ມ 19 ຂໍ້ 1 ກທຄ).

ຫຼັກການທີ່ບໍ່ຖືວ່າເປັນຫຼັກຖານກ່ຽວກັບຂໍ້ມູນທີ່ໄດ້ມາເນື່ອງຈາກຖືກນາບຂູ່, ທຸບຕີ ແລະ ຖືກທໍລະມານນີ້, ຢູ່ໃນປະເທດສະຫະລັດອາເມລິກາສານສູງໄດ້ມີຄໍາພິພາກສາຄະດີ Brown v. Mississippi, ປີ 1936 (ກ່ອນຄະດີມິແຣນດາ Miranda Rules) ຄື ຮອງເຈົ້າເມືອງພ້ອມດ້ວຍທີມງານຄຸມຕົວຜູ້ຖືກສົງໄສໄປຍັງສະຖານທີ່ເກີດເຫດ ຈາກນັ້ນກໍສອບຖາມກ່ຽວກັບເລື່ອງການຄາດຕະກໍາ, ຜູ້ຖືກສົງໄສປະຕິເສດເຈົ້າໜ້າທີ່ຈຶ່ງຈັບມັດ ແລະ ແຂວນໄວ້ກັບງ່າໄມ້ແຕ່ຜູ້ຖືກສົງໄສກໍຍັງປະຕິເສດ, ຈາກນັ້ນເຈົ້າໜ້າທີ່ຈຶ່ງເອົາລົງມາມັດຕິດກັບຕົ້ນໄມ້ແລ້ວລົງມືຂ້ຽນດ້ວຍແສ້ ແຕ່ຜູ້ຖືກສົງໄສກໍຍັງປະຕິເສດ ແລະ ຖືກປ່ອຍຕົວກັບບ້ານໃນເວລາຕໍ່ມາກໍຖືກຈັບຕົວໄປອີກ ແລະ ຖືກຂ້ຽນຕີຈົນຕ້ອງຍອມຮັບສາລະພາບ, ສານສູງພິພາກສາປ່ຽນແປງຄໍາຕັດສິນຂອງສານຂັ້ນຕົ້ນທີ່ຕັດສິນວ່າຈໍາເລີຍເປັນຜູ້ກະທໍາຜິດໂດຍໃຫ້ເຫດຜົນວ່າຄໍາຮັບສາລະພາບນັ້ນ ໄດ້ມາຈາກການບັງຄັບ, ນາບຂູ່, ທຸບຕີ ແລະ ທໍລະມານ.

ສໍາລັບຄໍາຮັບສາລະພາບຂອງຜູ້ຖືກສົງໄສທີ່ໄດ້ມາດ້ວຍການຕົວະຍົວະ ຫຼອກລວງ, ທີ່ໃຊ້ເປັນຫຼັກຖານໃນຄະດີອາຍາບໍ່ໄດ້ນັ້ນ, ສານສູງຂອງສະຫະລັດອາເມລິກາໄດ້ລົງຄໍາພິພາກສາຄະດີ Spano v.New york, ປີ 1959. ຄືຫຼັງເກີດເຫດ 10 ວັນ ທ້າວ ສະປ່າໂນ ໂທລະສັບໄປບອກສ່ຽວທີ່ເປັນຕໍາຫຼວດໃໝ່ໃນເມືອງ ນິວຢອກວ່າເຂົາຖືກຜູ້ຕາຍທຸບຕີຢ່າງຮຸນແຮງ ຈຶ່ງເກີດຄວາມໂມໂຫແລ້ວໃຊ້ປືນຍິງຜູ້ຕາຍ, ຕໍາຫຼວດໃໝ່ຈຶ່ງລາຍງານຕໍ່ຜູ້ບັງຄັບບັນຊາ ທ້າວ ສະປ່າໂນ ຈຶ່ງຖືກຈັບຕົວສອບສວນ, ທະນາຍຄວາມຂອງເຂົາບອກວ່າບໍ່ໃຫ້ຕອບຄໍາຖາມໃດໆ, ຜູ້ບັງຄັບບັນຊາຈຶ່ງສັ່ງໃຫ້ຕໍາຫຼວດໃໝ່ເຂົ້າມາກ້ຽວກ່ອມຂໍຄວາມເຫັນໃຈຈາກທ້າວ ສະປ່າໂນ ຖ້າຫາກບໍ່ຮັບສາລະພາບສ່ຽວຕໍາຫຼວດໃໝ່ຈະມີບັນຫາຢ່າງໜັກໜ່ວງຍ້ອນໂທລະສັບດັ່ງກ່າວ, ຈຶ່ງເຫັນແກ່ລູກ ແລະ ເມັຍສ່ຽວຕໍາຫຼວດໃໝ່ແດ່, ແຕ່ຜູ້ຖືກສົງໄສປະຕິເສດ, ສ່ຽວຕໍາຫຼວດພະຍາຍາມຈົນຮອດ 4 ຄັ້ງ ທ້າວ ສະປ່າໂນ ຈຶ່ງຮັບສາລະພາບຕາມຄວາມເປັນຈິງກ່ຽວກັບການຍິງຄົນຕາຍ, ສານຂັ້ນຕົ້ນຕັດສິນວ່າເຂົາເປັນຜູ້ກະທໍາຜິດ, ສານສູງພິພາກສາປ່ຽນແປງ ໂດຍໃຫ້ເຫດຜົນວ່າວິທີການຕົວະຍົວະ ຫຼອກລວງເພື່ອສ້າງຄວາມກົດດັນທາງດ້ານຈິດໃຈຈົນໄດ້ຄໍາຮັບສາລະພາບຂອງເຂົາມາ.

ອົງການດຳເນີນຄະດີອາຍາໂດຍສະເພາະ ແມ່ນອົງການສືບສວນ-ສອບສວນ ແລະ ອົງການໄອຍະການໄດ້ນຳໃຊ້ມາດຕະການຈັບຕົວ ແລະ ການກັກຕົວຜູ້ຖືກສົງໄສວ່າໄດ້ກະທຳຜິດທາງອາຍາ ເພື່ອມາດຳເນີນການສອບສວນ, ເມື່ອສິ້ນສຸດການເອົາຄຳໃຫ້ການ ຫຼື ສຳເລັດການສືບສວນ-ສອບສວນແລ້ວ, ຖ້າຫາກເຫັນວ່າບໍ່ມີຄວາມຈຳເປັນໃນການກັກຕົວຕໍ່ໄປ, ຜູ້ຖືກສົງໄສກໍມີສິດ ແລະ ສົມຄວນຈະໄດ້ຮັບການປະກັນຕົວ ໂດຍການສະເໜີປະກັນຕົວດ້ວຍຕົນເອງ ສຳລັບການກະທຳຜິດໃນສະຖານໂທສານຸໂທດ ທີ່ກົດໝາຍກຳນົດໂທດຕັດອິດສະລະພາບແຕ່ສາມປີລົງມາ (ມ 64 ວັກ 1 ຂໍ້ 6 ກດຍ) ຫຼື ຕາມການສະເໜີຂໍປະກັນຕົວໂດຍທະນາຍຄວາມຂອງຜູ້ກ່ຽວຕາມລະບຽບກົດໝາຍ (ມ 19 ຂໍ້ 9 ກທຄ). ເນື່ອງຈາກວ່າເປັນພຽງຜູ້ຖືກສົງໄສເທົ່ານັ້ນ, ຍັງບໍ່ທັນມີຄຳສັ່ງເປີດການສືບສວນ-ສອບສວນ, ຖ້າຫາກມີຄວາມຈຳເປັນຕ້ອງກັກຕົວ ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການກໍມີສິດອຳນາດກັກຕົວໄດ້ພຽງ ສີ່ສິບແປດ ຊົ່ວໂມງເທົ່ານັ້ນ (ມ 138 ກດຍ) ກຳນົດເວລາຂອງການກັກຕົວບຸກຄົນທີ່ຕົກເປັນຜູ້ຖືກສົງໄສກໍເປັນໄລຍະເວລາທີ່ສັ້ນ, ດັ່ງນັ້ນໄລຍະເວລາການປົກປ້ອງສິດໃນການຕໍ່ສູ້ຄະດີ ໂດຍສະເພາະແມ່ນສິດໃນການຂໍສະເໜີປະກັນຕົວຜູ້ຖືກສົງໄສທີ່ຖືກກັກຕົວນັ້ນ ກໍມີຢູ່ໃນກຳນົດເວລາດັ່ງກ່າວ, ຊຶ່ງມັນມີຄວາມແຕກຕ່າງກັບການກັກຂັງພາງຜູ້ຖືກຫາທີ່ມີ ກຳນົດເວລາກັກຂັງພາງຍາວກວ່າ ແລະ ການຕໍ່ສູ້ຄະດີກໍມີເວລາກະກຽມຫຼາຍກວ່າ, ສຳລັບສິດໃນການຄ້ານຕົວເຈົ້າໜ້າທີ່ສືບສວນ-ສອບສວນ, ສິດໃນການພົບທະນາຍຄວາມ ຫຼື ຜູ້ປົກປ້ອງ, ສິດໃນການແຕ່ງຕັ້ງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ແລະ ສິດອື່ນໆຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາໃນຂັ້ນຕອນການສືບສວນ-ສອບສວນ ແມ່ນມີລັກສະນະຄ້າຍຄືກັນ, ຊຶ່ງຈະໄດ້ເວົ້າລາຍລະອຽດໃນຂໍ້ທີ 5 ຂອງບົດນີ້.

## 4. ສິດໃນການຕໍ່ສູ້ຄະດີຂອງຜູ້ຖືກຫາໃນຂັ້ນຕອນການສືບສວນ-ສອບສວນ

ຜູ້ຖືກຫາໃນຄະດີອາຍາແມ່ນບຸກຄົນທີ່ຖືກນຳມາດຳເນີນຄະດີ ໂດຍຄຳສັ່ງເປີດການສືບສວນ-ສອບສວນຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ, ຊຶ່ງເຈົ້າໜ້າທີ່ຜູ້ດຳເນີນການສືບສວນ-ສອບສວນ ຕ້ອງແຈ້ງຂໍ້ກ່າວຫາໃຫ້ຜູ້ຖືກຫາຮັບຊາບວ່າໄດ້ກະທຳຄວາມຜິດທາງອາຍາ, ແຕ່ຍັງບໍ່ທັນໄດ້ຖືກສັ່ງຟ້ອງຂຶ້ນສານ.[18] ໃນການດຳເນີນຄະດີອາຍາຜູ້ຖືກຫາໄດ້ຮັບການປົກປ້ອງຊີວິດ, ສຸຂະພາບ, ກຽດສັກສີ ຫຼື ຊັບສິນຂອງຕົນ.

ຜູ້ຖືກຫາມີສິດຕໍ່ສູ້ຄະດີທີ່ຕົນຖືກຫາ ຫຼື ຖືກກ່າວຟ້ອງດ້ວຍຕົນເອງ ຫຼື ເອົາທະນາຍຄວາມ ຫຼື ເອົາຜູ້ປົກປ້ອງອື່ນ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ. ອົງການສືບສວນ-ສອບສວນ, ອົງການໄອຍະການ ຕ້ອງຮັບປະກັນສິດໃນການຕໍ່ສູ້ຄະດີຂອງຜູ້ຖືກຫາເພື່ອປົກປ້ອງ

---

[18] ຄະນຶງ ຣືໄທ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາເຫຼັ້ມ 1, ພິມຄັ້ງທີ 8, (ກຸງເທບມະຫານະຄອນ: ສຳນັກພິມມະຫາວິທະຍາໄລທຳມະສາດ 2005), ໜ້າ 48

ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພວກກ່ຽວ. ຜູ້ຖືກຫາມີສິດໂຕ້ແຍ່ງ, ໂຕ້ຖຽງ, ສະເໜີຫຼັກຖານ, ເພື່ອປົກປ້ອງຕົນເອງ ແລະ ຈະບໍ່ຖືກບັງຄັບໃຫ້ຊອກຫາຫຼັກຖານມາຢັ້ງຢືນຄວາມບໍລິສຸດຂອງຕົນ (ມ 14 ກດຍ).

ທຸກການດຳເນີນຄະດີອາຍາບໍ່ວ່າຈະເປັນຄວາມຜິດສະຖານຄະຣຸໂທດ, ສະຖານໂທສານຸໂທດ ແລະ ສະຖານລະຫຸໂທດ, ໃນຂັ້ນຕອນການສືບສວນ-ສອບສວນນີ້ ຜູ້ຖືກຫາມີສິດຕໍ່ສູ້ຄະດີຕາມທີ່ກົດໝາຍໄດ້ກຳນົດເອົາໄວ້, ໂດຍການນຳເອົາພະຍານຫຼັກຖານແກ້ມັດມາສະເໜີຕໍ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການປະຊາຊົນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ, ໂດຍສະເພາະແມ່ນເພື່ອແກ້ຂໍ້ກ່າວຫາພ້ອມທັງຢັ້ງຢືນຄວາມບໍລິສຸດຂອງຕົນເອງ ຫຼື ຖ້າຫາກວ່າຜູ້ຖືກຫາໄດ້ກະທຳຜິດຕາມຂໍ້ກ່າວຫາແທ້ກໍແມ່ນຊອກຫາສາເຫດມາສະເໜີ ເພື່ອໃຫ້ມີການຫຼຸດຜ່ອນໂທດທາງອາຍາ, ເຈົ້າໜ້າທີ່ຂອງລັດຜູ້ຮັບຜິດຊອບໃນການດຳເນີນການສືບສວນ-ສອບສວນ, ຕ້ອງປະຕິບັດຕາມໜ້າທີ່ດ້ວຍຄວາມລະມັດລະວັງ ແລະ ຕ້ອງຮັບປະກັນສິດຂອງຜູ້ຖືກຫາຕາມທີ່ກົດໝາຍໄດ້ກຳນົດຄື (ມ 65 ວັກ 2 ກດຍ).

1) ຮັບຊາບ ແລະ ແກ້ຂໍ້ກ່າວຫາ;

2) ໄດ້ຮັບການອະທິບາຍກ່ຽວກັບສິດ ແລະ ພັນທະຂອງຕົນໃນການຕໍ່ສູ້ຄະດີ;

3) ໃຫ້ການ ແລະ ສະເໜີຫຼັກຖານ;

4) ການສະເໜີປະກັນຕົວ ແລະ ຍື່ນຄຳຮ້ອງຂໍອື່ນ;

5) ໄດ້ຮັບເອກະສານ ກ່ຽວກັບການເປີດການສືບສວນ-ສອບສວນ, ບົດບັນທຶກຄຳໃຫ້ການຂອງຕົນ, ຄຳສັ່ງກ່ຽວກັບການນຳໃຊ້, ປ່ຽນແປງ ຫຼື ລົບລ້າງມາດຕະການສະກັດກັ້ນ, ຄຳສັ່ງໂຈະ, ບົດສະຫຼຸບຜົນຂອງການສືບສວນ-ສອບສວນ, ຄຳສັ່ງຊັດມ້ຽນ ແລະ ເອກະສານອື່ນກ່ຽວກັບຜູ້ຖືກຫາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

6) ເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ;

7) ເອົາ ແລະ ພົບທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນການຕໍ່ສູ້ຄະດີ;

8) ສະເໜີຄ້ານຕົວຜູ້ດຳເນີນຄະດີອາຍາ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ;

9) ຮ້ອງຟ້ອງຕໍ່ການກະທຳ ຫຼື ການອອກຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ພະນັກງານໄອຍະການທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;

10) ຂໍອຸທອນ, ຂໍລົບລ້າງຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ທີ່ເຫັນວ່າຕົນບໍ່ໄດ້ຮັບຄວາມເປັນທຳ.

ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການທີ່ດຳເນີນການສືບສວນ-ສອບສວນຕ້ອງເຄົາລົບສິດ ແລະ ທັງບໍ່ໃຫ້ສັນນິຖານວ່າຜູ້ຖືກຫາທີ່ຍັງບໍ່ທັນມີຄຳຕັດສິນຂອງ

ສານທີ່ໃຊ້ໄດ້ຢ່າງເດັດຂາດວ່າເປັນຜູ່ກະທຳຜິດນັ້ນ, ແຕ່ໃນທາງກົດໝາຍໃຫ້ສັນນິຖານວ່າຜູ່ກ່ຽວຍັງເປັນຜູ່ບໍລິສຸດ. ການເອົາຄຳໃຫ້ການຂອງຜູ່ຖືກຫາ ແລະ ບຸກຄົນທີ່ເຂົ້າຮ່ວມໃນຄະດີນັ້ນແມ່ນບໍ່ໃຫ້ລ່ວງລະເມີດສິດເສລີພາບຂອງພົນລະເມືອງ, ບໍ່ອະນຸຍາດໃຫ້ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ຫຼື ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ (ມ 12, ມ 24, ມ 36 ແລະ ມ 42 ກດຍ). ຖ້າຫາກວ່າອົງການ ແລະ ຜູ່ດຳເນີນຄະດີອາຍາມີພຶດຕິກຳຝ່າຝືນກົດໝາຍ ເຊັ່ນ ການທຸບຕີ, ການທໍລະມານ, ການບັງຄັບ ແລະ ການນາບຂູ່ ຊຶ່ງສ້າງຄວາມເສັຍຫາຍຕໍ່ຜູ່ຖືກຫາ, ບຸກຄົນທີ່ເຂົ້າຮ່ວມໃນຄະດີ ຫຼື ຕໍ່ພົນລະເມືອງກໍຈະຖືກລົງໂທດຕາມກົດໝາຍ.

ຫຼັກການກ່ຽວກັບການປົກປ້ອງສິດຂອງຜູ່ຖືກຫາໃນຄະດີອາຍາ, ປະເທດສະຫະລັດອາເມລິກາໄດ້ກຳນົດໃຫ້ເຈົ້າໜ້າທີ່ຕ້ອງແຈ້ງໃຫ້ຜູ່ຖືກຫາຮັບຊາບເຖິງສິດຂອງຜູ່ກ່ຽວ ຈຶ່ງເລີ່ມຕົ້ນການສອບສວນຄື:

1) ແຈ້ງສິດມິດງຽບ;

2) ຄຳເວົ້າທຸກຄຳຂອງເຈົ້າສາມາດໃຊ້ເປັນຫຼັກຖານຜູກມັດ ແລະ ແກ້ມັດຜູ່ຖືກຫາໃນຊັ້ນສານ;

3) ຜູ່ຖືກຫາມີສິດເອົາທະນາຍຄວາມເຂົ້າຮ່ວມຟັງການສອບສວນໄດ້;

4) ຖ້າຜູ່ຖືກຫາບໍ່ສາມາດຈ້າງທະນາຍຄວາມໄດ້ ເຈົ້າໜ້າທີ່ຈະຈັດຫາທະນາຍຄວາມໃຫ້ໜຶ່ງຄົນກ່ອນທີ່ຈະສອບສວນ.

ຫຼັກການດັ່ງກ່າວ ເປັນການເຕືອນໃຫ້ຜູ່ຖືກຫາໄດ້ທົບທວນຄືນເຖິງສິດຂອງຕົນທີ່ຈະບໍ່ໃຫ້ການທີ່ເປັນພິນຮ້າຍ ຫຼື ເປັນປໍລະປັກຕໍ່ຕົນເອງ, ຊຶ່ງເອີ້ນກັນວ່າຫຼັກມິແຣນດາ (Miranda Rules), ສານສູງຂອງສະຫະລັດອາເມລິກາໄດ້ກຳນົດຫຼັກການສຳຄັນ ເພື່ອປົກປ້ອງຄວາມເປັນທຳຈາກການສອບປາກຄຳຂອງຜູ່ຖືກຫາທີ່ຖືກຄວບຄຸມຕົວ ຫຼື ຖືກກັກຕົວ ໂດຍກຳນົດໃຫ້ພວກກ່ຽວມີສິດໄດ້ຮັບການປຶກສາຈາກທະນາຍຄວາມໃນຂະນະທີ່ຖືກກັກຕົວຢູ່ ແລະ ມີສິດປະຕິເສດຄຳໃຫ້ການທີ່ເປັນໂທດແກ່ຕົນເອງ, ຊຶ່ງປະກົດຢູ່ໃນຄຳພິພາກສາສານສູງຂອງສະຫະລັດອາເມລິກາໃນຄະດີ Miranda V. Arizona ເມື່ອວັນທີ 13 ມິຖຸນາ ປີ 1966 ສະຫຼຸບຫຼັກການສຳຄັນວ່າ: “ກ່ອນທີ່ຈະດຳເນີນການສອບສວນ ເຈົ້າໜ້າທີ່ຜູ່ສອບສວນຕ້ອງແຈ້ງໃຫ້ບຸກຄົນຜູ່ຖືກສົງໄສ ຫຼື ຜູ່ຖືກຫາຊາບວ່າຜູ່ຖືກສົງໄສ ຫຼື ຜູ່ຖືກຫານັ້ນໆມີສິດທີ່ຈະບໍ່ຕອບຄຳຖາມ ຫຼື ໃຫ້ການໃດໆອັນທີ່ຈະພາໃຫ້ຕົນຖືກສັ່ງຟ້ອງຂຶ້ນສານ, ບຸກຄົນທີ່ຕົກເປັນຜູ່ຖືກສົງໄສ ຫຼື ຕົກເປັນຜູ່ຖືກຫາໃນຄະດີອາຍາ ມີສິດທີ່ຈະປຶກສາທະນາຍຄວາມໃນໄລຍະເວລາທີ່ຖືກສອບສວນ, ຖ້າຫາກພວກກ່ຽວບໍ່ສາມາດຊອກຫາທະນາຍຄວາມດ້ວຍຕົນເອງໄດ້, ກໍມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫຼືອຈາກບຸກຄົນທີ່ກ່ຽວຂ້ອງ ໃນການແຕ່ງຕັ້ງທະນາຍຄວາມໃຫ້ຕາມທີ່

ພວກກ່ຽວຕ້ອງການ, ຈາກຄະດີດັ່ງກ່າວຈຶ່ງກາຍເປັນຫຼັກການ ແລະ ເປັນມາດຕະການໃນການແຈ້ງສິດຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາຊາບ ແລະ ກາຍເປັນສິດຂອງພວກກ່ຽວພາຍຫຼັງຖືກຈັບຕົວ, ຖືກກັກຕົວ, ຖືກກັກຂັງ ຊຶ່ງຮູ້ຈັກກັນດີໃນຊື່ " Miranda Rule ".

ການກຳນົດຫຼັກການນີ້ ໃຫ້ເຈົ້າໜ້າທີ່ຜູ້ດຳເນີນການສືບສວນ-ສອບສວນຕ້ອງແຈ້ງສິດໃຫ້ແກ່ຜູ້ຖືກຫາທີ່ຖືກກັກຂັງ, ກໍເພາະຢ້ານວ່າພວກກ່ຽວຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ນັ້ນ, ພວກກ່ຽວຈະຢູ່ພາຍໃຕ້ຄວາມກົດດັນທີ່ຈະຕ້ອງໃຫ້ການປັກປຳຕົນເອງ, ຖ້າຫາກບໍ່ກຳນົດຫຼັກການ ຫຼື ມາດຕະການປ້ອງກັນເອົາໄວ້ລ່ວງໜ້າຈະເຮັດໃຫ້ສະພາວະຈິດໃຈທີ່ຖືກກົດດັນຂອງຜູ້ຖືກຫາ ທີ່ຈະຕໍ່ຕ້ານກັບເຈົ້າໜ້າທີ່ກໍຫຼຸດໜ້ອຍຖອຍລົງ ແລະ ສະພາບບັງຄັບຕ່າງໆກໍຈະເຮັດໃຫ້ເຂົາເຈົ້າເວົ້າອອກໄປທັງໆທີ່ເຂົາບໍ່ໄດ້ກະທຳ ຫຼື ມີພຶດຕິກຳອັນນັ້ນ[19]. ຈາກຫຼັກການດັ່ງກ່າວນັ້ນກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງ ສປປ ລາວ ກໍໄດ້ກຳນົດໄວ້ໃນມາດຕາ 116 ວັກ 2 ຄື ກ່ອນຈະເອົາຄຳໃຫ້ການຜູ້ຖືກຫາຕ້ອງແຈ້ງຂໍ້ກ່າວຫາ ພ້ອມທັງສິດ ແລະ ພັນທະຕາມທີ່ໄດ້ກຳນົດໄວ້ໃນມາດຕາ 65 ວັກ 2 ດັ່ງທີ່ໄດ້ກ່າວມາໃນຂ້າງເທິງ, ແຕ່ກົດໝາຍກໍບໍ່ໄດ້ກຳນົດໃຫ້ຈະແຈ້ງລົງໄປວ່າໃຫ້ມີສິດມິດງຽບ ຫຼື ບໍ່ຕອບຄຳຖາມຄືກັນກັບກົດໝາຍຕ່າງປະເທດ, ຕໍ່ກັບບັນຫານີ້ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປີ 1990 (ມ 18 ວັກ 5 ຂໍ້ 2) ໄດ້ກຳນົດໃຫ້ຜູ້ຖືກຫາຕ້ອງມີພັນທະໃຫ້ຄຳອະທິບາຍ ຫຼື ໃຫ້ການຕໍ່ຂໍ້ກ່າວຫາ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2004 (ມ 28 ວັກ 5 ຂໍ້ 2) ໄດ້ກຳນົດວ່າຜູ້ຖືກຫາມີພັນທະໃຫ້ການ ຫຼື ໃຫ້ຄຳອະທິບາຍຕໍ່ຂໍ້ກ່າວຫາ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 (ມ 65 ວັກ 2 ຂໍ້ 3) ໄດ້ກຳນົດວ່າຜູ້ຖືກຫາມີສິດໃຫ້ການ ແລະ ສະເໜີຫຼັກຖານ, ຊຶ່ງມັນໄດ້ປ່ຽນຈາກພັນທະມາເປັນສິດຂອງຜູ້ຖືກຫາໃນການໃຫ້ການ, ຖ້າຫາກໃນຕໍ່ໜ້າກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 (ມ 65 ວັກ 2 ຂໍ້ 3) ໄດ້ຖືກຕີຄວາມໝາຍ ຫຼື ຖືກອະທິບາຍວ່າສິດໃຫ້ການມີຄວາມໝາຍອັນດຽວກັນກັບສິດມິດງຽບ, ກໍຈະເຮັດໃຫ້ຜູ້ຖືກຫາໄດ້ຮັບສິດຂອງຕົນເອງເພີ່ມຫຼາຍຂຶ້ນທີ່ຈະຕອບ ຫຼື ບໍ່ຕອບຄຳຖາມ.

ການນຳເອົາຫຼັກການດັ່ງກ່າວມາກຳນົດໄວ້ໃນກົດໝາຍ ແລະ ນຳເອົາໄປຈັດຕັ້ງປະຕິບັດນັ້ນ, ເຊື່ອວ່າຈະເປັນການຢັບຢັ້ງພຶດຕິກຳເຈົ້າໜ້າທີ່ຂອງລັດບໍ່ໃຫ້ກະທຳໃນສິ່ງທີ່ຂັດຕໍ່ກົດໝາຍ, ເນື່ອງຈາກວ່າຂໍ້ມູນທີ່ໄດ້ມາດ້ວຍວິທີການທີ່ລະເມີດກົດໝາຍສະບັບນີ້ຈະບໍ່ຖືເປັນຫຼັກຖານໃນຄະດີອາຍາ ແລະ ຂໍ້ມູນທີ່ບໍ່ຖືວ່າເປັນຫຼັກຖານໄດ້ນັ້ນຈະບໍ່ມີຜົນທາງດ້ານກົດໝາຍ ແລະ ບໍ່ສາມາດໃຊ້ເປັນພື້ນຖານໃນການດຳເນີນຄະດີອາຍາ (ມ 42 ກດຍ) ແລະ ບໍ່ສາມາດ

---

[19] ກິດຕິພົງ ກິດຍາຣັກ, ຂະບວນການຍຸຕິທຳບົນເສັ້ນທາງຂອງການປ່ຽນແປງ, (ກຸງເທບມະຫານະຄອນ : ວິນຍູຊົນ, 2541), ໜ້າ 135-136

ນຳໃຊ້ຫຼັກຖານທີ່ໄດ້ມາຢ່າງຜິດກົດໝາຍມາຜູກມັດ ເພື່ອເອົາຄວາມຜິດກັບຜູ້ຖືກຫານັ້ນໄດ້, ບໍ່ວ່າຈະເປັນການດຳເນີນຄະດີໃນລະດັບເຂດ, ແຂວງ, ພາກ ແລະ ລະດັບປະເທດກໍຕາມ, ຖ້າຫາກສານຍອມຮັບຟັງພະຍານຫຼັກຖານເຫຼົ່ານັ້ນ ກໍຈະເຮັດໃຫ້ສານຄືກັບວ່າມີສ່ວນຮັບຮູ້ ແລະ ສະໜັບສະໜູນໃຫ້ເຈົ້າໜ້າທີ່ຂອງລັດກະທຳຜິດກົດໝາຍ ຊຶ່ງສານກໍລະເມີດກົດໝາຍໄປນຳກັນອີກດ້ວຍ.

### 4.1. ສິດໃນການຄ້ານຕົວເຈົ້າໜ້າທີ່ສືບສວນ-ສອບສວນ

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ກຳນົດເອົາໄວ້ວ່າ ເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການ, ຜູ້ເຮັດໜ້າທີ່ສືບສວນ-ສອບສວນຄະດີ ຫຼື ຜູ້ຊ່ຽວຊານ, ຜູ້ຊຳນານງານ, ຜູ້ແປພາສາ, ຫາກເປັນຍາດພີ່ນ້ອງ, ມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງ, ບຸກຄົນດັ່ງກ່າວນັ້ນ ຕ້ອງຂໍຖອນຕົວອອກຈາກການດຳເນີນຄະດີ. ຖ້າຜູ້ກ່ຽວຫາກບໍ່ຍອມຖອນຕົວ, ຄູ່ຄວາມຝ່າຍໃດຝ່າຍໜຶ່ງກໍມີສິດສະເໜີຄ້ານຕົວຜູ້ກ່ຽວອອກຈາກການດຳເນີນຄະດີ (ມ 22 ວັກ 1 ແລະ 2 ກດຍ). ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດໃຫ້ຄູ່ກໍລະນີປົກປ້ອງສິດ ແລະ ຜົນປະໂຫຍດຢ່າງກວ້າງຂວາງ ແລະ ຢ່າງເຕັມສ່ວນ, ບຸກຄົນທີ່ຖືກສະເໜີຄ້ານຕົວອອກຈາກການດຳເນີນຄະດີ, ຕາມກົດໝາຍແລ້ວຜູ້ກ່ຽວກໍຈະໝົດໜ້າທີ່ ແລະ ຈະບໍ່ມີສ່ວນກ່ຽວຂ້ອງໃດໆໃນຄະດີດັ່ງກ່າວນັ້ນນັບຕັ້ງແຕ່ມື້ຖືກຄ້ານຕົວເປັນຕົ້ນໄປ.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດເປັນຫຼັກການ, ເປັນລະບຽບການ ແລະ ມາດຕະການກ່ຽວກັບການດຳເນີນຄະດີອາຍາຢ່າງຖືກຕ້ອງຍຸຕິທຳ, ເພື່ອຈຳກັດ, ສະກັດກັ້ນ ແລະ ຕ້ານການກະທຳຜິດ, ທັງປ້ອງກັນບໍ່ໃຫ້ມີການເຂົ້າຂ້າງອອກຊາ ຫຼື ການມີຜົນປະໂຫຍດຕ່າງໆຈາກການດຳເນີນຄະດີ, ຖ້າໃຫ້ບຸກຄົນດັ່ງກ່າວຍັງມີສິດອຳນາດໃນການຊີ້ຂາດຄະດີກໍອາດຈະເກີດມີການເຫັນແກ່ຕົວ, ເຫັນແກ່ຍາດພີ່ນ້ອງ, ເຫັນແກ່ເພື່ອນຝູງ ຫຼື ອາດແກ່ຍາວເວລາໃນການດຳເນີນຄະດີອອກໄປ, ອັນເຮັດໃຫ້ການການສືບສວນ-ສອບສວນ ແລະ ການນຳໃຊ້ມາດຕະການສະກັດກັ້ນ (ມ 5 ກດຍ). ບໍ່ເປັນໄປຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ອາດເຮັດໃຫ້ຄູ່ກໍລະນີບໍ່ໄດ້ຮັບຄວາມຍຸຕິທຳ. ໃນຮູບຄະດີກໍຈະບໍ່ຖືກຕ້ອງ, ບໍ່ສອດຄ່ອງ ແລະ ບໍ່ເປັນໄປຕາມຂໍ້ກຳນົດກົດໝາຍ. ດັ່ງນັ້ນ, ກົດໝາຍຈຶ່ງກຳນົດເປັນຂໍ້ບັງຄັບໃຫ້ບຸກຄົນດັ່ງກ່າວໄດ້ໝົດໜ້າທີ່ໃນການດຳເນີນຄະດີ, ເພື່ອປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ, ພ້ອມທັງສຶກສາອົບຮົມພົນລະເມືອງໃຫ້ເຄົາລົບ ແລະ ປະຕິບັດກົດໝາຍແນໃສ່ເຮັດໃຫ້ສັງຄົມ ມີຄວາມສະຫງົບສຸກ ແລະ ມີຄວາມເປັນລະບຽບຮຽບຮ້ອຍ (ມ 1 ກດຍ). ແນໃສ່ໃຫ້ແກ້ໄຂຄະດີມີຄວາມວ່ອງໄວ, ໂປ່ງໃສ, ຖືກຕ້ອງຕາມກົດໝາຍ ແລະ ຮັບປະກັນຄວາມຍຸຕິທຳ.

### 4.2. ສິດໃນການພົບທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ

ໃນໄລຍະຜ່ານມາການດຳເນີນຄະດີອາຍາໃນຂັ້ນຕອນການສືບສວນ-ສອບສວນ, ເຖິງວ່າກົດໝາຍຈະກຳນົດໃຫ້ຜູ້ຖືກຫາມີສິດ ແລະ ສາມາດພົບ ຫຼື ເອົາທະນາຍຄວາມ ຫຼື ຜູ້ປົກປ້ອງເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ, ແຕ່ໃນທາງປະຕິບັດແລ້ວແມ່ນມີໜ້ອຍທີ່ສຸດ ຫຼື ເກືອບຈະບໍ່ມີຊ້ຳ (ມ 25 ວັກ 4 ຂໍ້ 1 ກດຍ ສະບັບປີ 1990 ແລະ ມ 35 ວັກ 2 ກດຍ ສະບັບປີ 2004), ໃນກໍລະນີຜູ້ຖືກຫາ ຫຼື ຈຳເລີຍຫາກແມ່ນເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ, ປາກກືກ, ຄົນປັນຍາອ່ອນເສັຍຈິດ, ຜູ້ບໍ່ຮູ້ພາສາລາວ ແລະ ຜູ້ທີ່ກົດໝາຍກຳນົດໂທດປະຫານຊີວິດນັ້ນຈຳເປັນຕ້ອງມີຜູ້ປົກປ້ອງ, ຖ້າຫາກຜູ້ຖືກຫາ ຫຼື ຈຳເລີຍຫາກບໍ່ມີຜູ້ປົກປ້ອງແລ້ວ ສານປະຊາຊົນຈະແຕ່ງຕັ້ງທະນາຍຄວາມໃຫ້ໂດຍໜ້າທີ່ (ມ 25 ວັກ 3 ກດຍ ສະບັບປີ 1990 ແລະ ມ 35 ວັກ 3 ກດຍ ສະບັບປີ 2004), ແຕ່ໃນປັດຈຸບັນລັດໄດ້ໃຫ້ຫຼັກປະກັນໂດຍໄດ້ກຳນົດໃຫ້ຜູ້ຖືກຫາ ກໍມີສິດຕໍ່ສູ້ຄະດີທີ່ຕົນຖືກຫາ ຫຼື ຖືກກ່າວຟ້ອງດ້ວຍຕົນເອງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ ຊຶ່ງຖືກນຳເອົາໄປຈັດຕັ້ງປະຕິບັດຢ່າງກວ້າງຂວາງ ເຊັ່ນ ນອກຈາກຈະມີສິດໃນການພົບ ແລະ ປຶກສາທະນາຍຄວາມເປັນການສ່ວນຕົວແລ້ວ, ລັດຍັງໃຫ້ຫຼັກປະກັນສິດໃນການຕໍ່ສູ້ຄະດີຍິ່ງໄປກວ່ານັ້ນອີກຄື ຖ້າຫາກຜູ້ຖືກຫາບໍ່ສາມາດຈ້າງ ຫຼື ຊອກຫາທະນາຍຄວາມໄດ້ດ້ວຍຕົນເອງ ລັດຍັງມີໜ້າທີ່ຕ້ອງຊອກຫາ ຫຼື ແຕ່ງຕັ້ງທະນາຍຄວາມໃຫ້ຜູ້ກ່ຽວອີກດ້ວຍ.

ທະນາຍຄວາມໃຫ້ການບໍລິການທາງດ້ານກົດໝາຍແກ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ສັງຄົມເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງລູກຄວາມຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ສຳລັບຜູ້ປົກປ້ອງອື່ນຈະເຂົ້າຮ່ວມໃນການດຳເນີນຄະດີໄດ້ກໍຕ້ອງໄດ້ຮັບການມອບສິດເທົ່ານັ້ນ, ເວັ້ນເສັຍແຕ່ຜູ້ຕາງໜ້າທີ່ຖືກຕ້ອງທາງດ້ານກົດໝາຍ ເຊັ່ນ ພໍ່, ແມ່, ຜົວ ຫຼື ເມັຍ, ລູກ, ຜູ້ປົກຄອງ (ມ 71 ວັກ 4 ກດຍ).

ກ່ຽວກັບສິດໃນການພົບ ຫຼື ມີທະນາຍຄວາມນີ້ ຢູ່ອາເມລິກາໄດ້ກຳນົດໃຫ້ເປັນການແຈ້ງສິດໃຫ້ແກ່ຜູ້ຖືກຫາກ່ອນດຳເນີນການສອບສວນ ເຊັ່ນ ສິດພົບ ແລະ ປຶກສາທະນາຍຄວາມ ຫຼື ຜູ້ປົກປ້ອງ, ສິດມິດງຽບ ແລະ ສິດໄດ້ຮັບການຊ່ວຍເຫຼືອຈາກທະນາຍຄວາມໂດຍຄ່າໃຊ້ຈ່າຍຈາກລັດ. ໃນກໍລະນີດັ່ງກ່າວນີ້ຢູ່ອາເມລິກາໄດ້ກຳນົດໄວ້ໃນລັດຖະທຳມະນູນ ສະບັບປັບປຸງ ຄັ້ງທີ 6 (The Sixth Amendment) ຕົວຢ່າງ ຄະດີ Brewer V.Williams (ປີ 1977) ສານສູງຂອງອາເມລິກາໄດ້ວິນິດໄສວ່າ ການທີ່ພະນັກງານສອບສວນປະຕິເສດບໍ່ໃຫ້ຜູ້ຖືກສົງໄສພົບທະນາຍຄວາມ, ຄຳຮັບສາລະພາບນຳສູ່ການຄົ້ນພົບສົບຜູ້ຕາຍ, ທັງຄຳຮັບ

ສາລະພາບ ແລະ ສືບຜູ້ຕາຍລ້ວນແຕ່ເປັນຂໍ້ມູນທີ່ໄດ້ມາຢ່າງຜິດກົດໝາຍ, ບໍ່ສາມາດໃຊ້ເປັນຫຼັກຖານໃນຄະດີ. [20]

**4.3. ການແຕ່ງຕັ້ງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ**

ຜູ້ຖືກຫາ ຫຼື ສະມາຊິກຄອບຄົວ ຫຼື ການຈັດຕັ້ງຂອງຜູ້ກ່ຽວມີສິດ ແລະ ສາມາດສະເໜີເອົາ ຫຼື ແຕ່ງຕັ້ງທະນາຍຄວາມຜູ້ທີ່ຕົນມີຄວາມໄວ້ວາງໃຈ ຫຼື ຜູ້ທີ່ຕົນເຫັນວ່າມີຄວາມເໝາະສົມ, ເພື່ອມາປົກປ້ອງ, ໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍ ແລະ ຕໍ່ສູ້ຄະດີໃຫ້ຕົນ (ມ 18 ກທຄ). ທະນາຍຄວາມສາມາດເຂົ້າຮ່ວມໃນການດຳເນີນຄະດີອາຍານັບແຕ່ວັນທີ່ຕົນໄດ້ຮັບການແຕ່ງຕັ້ງ ຫຼື ການສະເໜີຢ່າງເປັນລາຍລັກອັກສອນຂອງລູກຄວາມ ຫຼື ສະມາຊິກຄອບຄົວ ຫຼື ການຈັດຕັ້ງຂອງຜູ້ກ່ຽວເປັນຕົ້ນໄປ (ມ 71 ວັກ 2 ກດຍ).

**5. ໜ້າທີ່ຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນຂັ້ນຕອນການສືບສວນ-ສອບສວນ**

ຂະບວນການຍຸຕິທຳທາງອາຍາ ໃນຂັ້ນຕອນການສືບສວນ-ສອບສວນນີ້ ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ມີໜ້າທີ່ປົກປ້ອງລູກຄວາມຂອງຕົນ, ທັງເປັນສິດຂອງຜູ້ຖືກສົງໄສ ແລະ ຜູ້ຖືກຫາທີ່ຈະໄດ້ຮັບຄວາມຊ່ວຍເຫຼືອຈາກທະນາຍຄວາມ ຫຼື ຜູ້ປົກປ້ອງ, ເປັນສິ່ງທີ່ບໍ່ສາມາດຈະປະຕິເສດໄດ້ສຳລັບສິດໃນການຕໍ່ສູ້ຄະດີ, ຖືວ່າເປັນຮາກຖານຂອງລະບົບຄວາມຍຸຕິທຳທາງອາຍາ, ຖ້າຫາກປາສະຈາກສິດດັ່ງກ່າວນີ້ແລ້ວຄວາມຍຸຕິທຳຈະເກີດຂຶ້ນບໍ່ໄດ້ເລີຍ. ລັດໃຫ້ຄວາມສຳຄັນຕໍ່ກັບສິດດັ່ງກ່າວ ລັດຈຶ່ງໄດ້ນຳເອົາໄປກຳນົດໄວ້ໃນລັດຖະທຳມະນູນ (ມ 6 ແລະ ມ 35).

ລັດຖະທຳມະນູນໄດ້ກຳນົດໃຫ້ທຸກຄົນມີຄວາມສະເໝີພາບຕໍ່ໜ້າກົດໝາຍ, ສ່ວນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍທະນາຍຄວາມ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງກັບການດຳເນີນຄະດີອາຍາຂອງ ສປປ ລາວ ກໍໄດ້ເປີດໂອກາດໃຫ້ຄູ່ກໍລະນີຕ້ອງຕໍ່ສູ້ເອົາຊະນະກັນດ້ວຍເຫດຜົນທາງກົດໝາຍ ໂດຍມີສານເປັນຄົນກາງປະຕິບັດໜ້າທີ່ຄວບຄຸມໃນທີ່ປະຊຸມສານໃຫ້ເປັນໄປຢ່າງຖືກຕ້ອງຕາມລະບຽບການດຳເນີນຄະດີອາຍາ ແລະ ຕັດສິນຄະດີດ້ວຍຄວາມຍຸຕິທຳ. ການທີ່ສານຈະໃຫ້ຄວາມຍຸຕິທຳແກ່ທຸກຝ່າຍໄດ້ເປັນຢ່າງດີນັ້ນຄູ່ກໍລະນີຈະຕ້ອງຢູ່ໃນສະຖານະທີ່ເທົ່າທຽມ ຫຼື ມີຄວາມສະເໝີພາບກັນຕໍ່ໜ້າກົດໝາຍ. ຄວາມຖືກຕ້ອງ ຫຼື ຄວາມຍຸຕິທຳທີ່ແທ້ຈິງຈຶ່ງຈະເກີດຂຶ້ນໄດ້. ທັງນີ້ກໍເພື່ອຫຼີກເວັ້ນຄຳເວົ້າທີ່ວ່າຝ່າຍເຈົ້າໜ້າທີ່ຂອງລັດມີທັງສິດອຳນາດ ແລະ ມີທັງຄວາມຊ່ຽວຊານທາງດ້ານລະບຽບການ ຫຼື ທາງດ້ານກົດໝາຍເໜືອກວ່າຜູ້ຖືກສົງໄສ ຫຼື ຜູ້ຖືກຫາຢູ່ແລ້ວ, ປຽບດັ່ງນັກມວຍທັງສອງຝ່າຍຕ້ອງມີນ້ຳໜັກຢູ່ໃນລຸ້ນດຽວກັນການຕໍ່ສູ້ "ຈຶ່ງເອີ້ນວ່າເປັນການແຂ່ງຂັນກັນ".

---

[20] ພັດທະນາ, "ມາດຕະການຄຸ້ມຄອງຜູ້ຖືກຫາໃນການສອບສວນຄະດີອາຍາ", (ອ້າງແລ້ວ), ໜ້າ 38

ການດຳເນີນຄະດີອາຍາໃນຂັ້ນຕອນສືບສວນ-ສອບສວນໃນ ສປປ ລາວ ເຖິງແມ່ນວ່າກົດໝາຍຈະກຳນົດໃຫ້ຜູ້ຖືກສົງໄສ ຫຼື ຜູ້ຖືກຫາມີສິດຕໍ່ສູ້ຄະດີດ້ວຍຕົນເອງ, ທະນາຍຄວາມ ຫຼື ຜູ້ປົກປ້ອງເພື່ອໃຫ້ຫຼັກປະກັນ ຫຼື ຍົກສູງສະຖານະ ຫຼື ເພີ່ມຂີດຄວາມສາມາດທາງດ້ານວິທີການ ແລະ ດ້ານກົດໝາຍໃຫ້ໃກ້ຄຽງກັບເຈົ້າໜ້າທີ່ຂອງລັດ, ແຕ່ໃນຄວາມເປັນຈິງແລ້ວສາມາດເວົ້າໄດ້ວ່າຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ແມ່ນຕົກຢູ່ໃນສະຖານະເສຍປຽບໃຫ້ແກ່ຝ່າຍເຈົ້າໜ້າຂອງລັດມາໂດຍຕະຫຼອດ, ຮອດປັດຈຸບັນກໍຍັງຢູ່ໃນຖານະດ້ອຍກວ່າຄືເກົ່າ, ເພາະລັດໄດ້ປັບປຸງລະບົບອົງການສືບສວນ-ສອບສວນຂຶ້ນຕາມຂະແໜງການຂອງວຽກງານ ຍິ່ງລົງເລິກຄວາມຊ່ຽວຊານສະເພາະດ້ານໃຫ້ເຂັ້ມແຂງຂຶ້ນ ເພື່ອແນໃສ່ປ້ອງກັນ ແລະ ປາບປາມອາຊະຍາກຳດ້ວຍງົບປະມານມະຫາສານ ຊຶ່ງລະບົບການສືບສວນ-ສອບສວນທີ່ເຂັ້ມແຂງນີ້ ກໍຈະຖືກຝ່າຍຜູ້ຖືກເສັຍຫາຍ ແລະ ລັດນຳເອົາໄປໃຊ້ເປັນເຄື່ອງມື ຫຼື ກົນໄກດຳເນີນຄະດີອາຍາຕໍ່ກັບຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ໂດຍຝ່າຍຜູ້ຖືກສົງໄສ ຫຼື ຜູ້ຖືກຫາ ເກືອບຈະບໍ່ມີໂອກາດໄດ້ໃຊ້ເຄື່ອງມື ຫຼື ກົນໄກຂອງລັດມາຊ່ວຍໃຫ້ຢູ່ໃນຖານະທີ່ຈະຕໍ່ສູ້ກັບຝ່າຍໂຈດໄດ້ເລີຍ.

ນອກຈາກຈະເສັຍປຽບເກືອບທຸກຢ່າງໃນຂະບວນການຍຸຕິທຳທາງອາຍາ ດັ່ງທີ່ກ່າວມາຂ້າງເທິງນັ້ນແລ້ວ ຜູ້ຖືກສົງໄສ ຫຼື ຜູ້ຖືກຫາສ່ວນຫຼວງຫຼາຍມັກຈະຕົກຢູ່ໃນຖານະທີ່ທຸກຍາກ, ບໍ່ມີຄວາມຮູ້ໃນທາງກົດໝາຍກໍຄືລະບົບຄວາມຍຸຕິທຳທາງອາຍາ, ເກືອບບໍ່ຮູ້ສິດຂອງຕົນໃນເວລາຕົກເປັນຜູ້ຖືກສົງໄສ ຫຼື ຜູ້ຖືກຫາໃນຄະດີອາຍາຊໍ້າ ແລະ ຖືກໂດດດ່ຽວ, ບຸກຄົນເຫຼົ່ານີ້ບໍ່ພຽງແຕ່ວ່າຈະຂາດເຂີນທາງດ້ານເສດຖະກິດເທົ່ານັ້ນ, ແຕ່ຍັງຕໍ່າຕ້ອຍໃນທາງສັງຄົມອີກດ້ວຍ. ໃນຍາມປົກກະຕິກໍມີຊີວິດໂດດດ່ຽວຢູ່ແລ້ວ ເມື່ອຕົກເປັນຜູ້ຖືກສົງໄສ ຫຼື ຜູ້ຖືກຫາກໍມັກຈະຢູ່ໃນສະພາບຈົນມູມ, ບໍ່ມີຍາດພີ່ນ້ອງ ຫຼື ໝູ່ຄູ່ ບໍ່ມີໂອກາດທີ່ຈະໄດ້ຮັບການປ່ອຍຕົວພາງ (no right to bail) ຫຼື ບໍ່ມີໂອກາດໄດ້ຮັບຄວາມຊ່ວຍເຫຼືອຈາກທະນາຍຄວາມ (no right to counsel) ຫຼື ບໍ່ມີໂອກາດທີ່ຈະໄດ້ຕໍ່ສູ້ຄະດີຢ່າງຍຸຕິທຳ (no right to defend) ຫຼື ຖ້າຫາກລັດ ຫຼື ສະພາທະນາຍຄວາມຈັດຫາທະນາຍຄວາມໃຫ້ກໍມັກຈະເປັນທະນາຍຄວາມມືໃໝ່ ຫຼື ຍິ່ງໄປກວ່ານັ້ນກໍເປັນທະນາຍຄວາມຝຶກງານ. ຖ້າຫາກພວກເຮົາປະປ່ອຍໃຫ້ຜູ້ຖືກສົງໄສ ຫຼື ຜູ້ຖືກຫາຈຳນວນບໍ່ໜ້ອຍຕ້ອງຕົກຢູ່ໃນສະພາບຈົນມູມແບບນີ້ແລ້ວ ເຮົາຍັງຈະເວົ້າໄດ້ອີກ ຫຼື ບໍ່ວ່າທະນາຍຄວາມເປັນຜູ້ໃຫ້ຄວາມຊ່ວຍເຫຼືອແກ່ເຂົາເຈົ້າ.

**5.1. ໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍ**

ທະນາຍຄວາມແມ່ນຜູ້ທີ່ມີຄວາມຮູ້ມີຄວາມຊຳນານ ຫຼື ຊ່ຽວຊານທາງດ້ານກົດໝາຍ. ສະນັ້ນ, ໃນຂະບວນການຍຸຕິທຳທາງອາຍາໂດຍສະເພາະແມ່ນຂັ້ນຕອນການສືບສວນ-ສອບສວນ ທະນາຍຄວາມຈຶ່ງມີໜ້າທີ່ໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍແກ່ທຸກຝ່າຍໂດຍງົບປະມານຂອງຕົນ. ນອກຈາກນີ້ ທະນາຍຄວາມຍັງມີໜ້າທີ່ໃຫ້ການຊ່ວຍເຫຼືອລ້າທາງດ້ານກົດ

ໝາຍ ຊຶ່ງເອີ້ນວ່າການບໍລິການທາງດ້ານກົດໝາຍແກ່ປະຊາຊົນທີ່ທຸກຍາກ ແລະ ດ້ອຍໂອກາດໂດຍບໍ່ຄິດຄ່າຜ່ານສະພາທະນາຍຄວາມ ແລະ ທະນາຍຄວາມ, ເພື່ອສົ່ງເສີມການເຂົ້າເຖິງກົດໝາຍ ແລະ ຂະບວນການຍຸຕິທຳທາງອາຍາ (ມ 23 ກທຄ). ພ້ອມກັນນັ້ນ ທະນາຍຄວາມຍັງມີໜ້າທີ່ໃຫ້ຄຳປຶກສາທາງດ້ານກົດໝາຍ, ເອີ້ນວ່າການໃຫ້ຄຳເຫັນ, ຄຳແນະນຳ, ຄຳອະທິບາຍທາງດ້ານກົດໝາຍທາງປາກເປົ່າ ຫຼື ເປັນລາຍລັກອັກສອນແກ່ລູກຄວາມ ຫຼື ຊ່ວຍເຫຼືອລູກຄວາມໃນການຮ່າງສັນຍາ, ພິໄນກຳ ແລະ ເອກະສານອື່ນໆ (ມ 22 ກດຍ) ຕາມການຕົກລົງກັນ.

ສຳລັບຜູ້ຖືກສົງໄສ ຫຼື ຜູ້ຖືກຫາທີ່ເປັນເດັກບໍ່ເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ, ຕາບອດ, ປາກກືກ, ຄົນປັນຍາອ່ອນ, ເສັຍຈິດ, ຜູ້ບໍ່ຮູ້ພາສາລາວ ແລະ ຜູ້ທີ່ກົດໝາຍກຳນົດໂທດປະຫານຊີວິດນັ້ນ, ຈຳເປັນຕ້ອງມີທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ. ຖ້າວ່າຜູ້ກ່ຽວບໍ່ມີທະນາຍຄວາມ ສະພາທະນາຍຄວາມຕ້ອງແຕ່ງຕັ້ງທະນາຍຄວາມໃຫ້ໂດຍໜ້າທີ່, ຕາມຄຳສະເໜີຂອງອົງການດຳເນີນຄະດີອາຍາພາຍໃນກຳນົດເຈັດວັນ, ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ (ມ 71 ວັກສຸດທ້າຍ ກດຍ). ທະນາຍຄວາມປະຕິບັດໜ້າທີ່ອາດມີຜົນເຖິງຊີວິດ, ຮ່າງກາຍ, ເສລີພາບ, ກຽດສັກສີ, ຊື່ສຽງ ແລະ ຊັບສິນລູກຄວາມຂອງຕົນ, ຜູ້ທີ່ເປັນທະນາຍຄວາມ ຈຶ່ງຕ້ອງເປັນຜູ້ທີ່ມີວຸດທິ, ມີຄຸນສົມບັດ ແລະ ມີຄວາມຮັບຜິດຊອບສູງ[21].

ເຖິງວ່າ ສປປ ລາວ ຈະມີສະພາທະນາຍຄວາມ ແລະ ມີທະນາຍຄວາມຢ່າງເປັນລະບົບຄົບຊຸດ ແລະ ມີຫຼາຍກົດໝາຍໃຫ້ການປົກປ້ອງ ແລະ ອຳນວຍຄວາມສະດວກແກ່ການເຄື່ອນປະຕິບັດໜ້າທີ່ເປັນຢ່າງດີກໍຕາມ, ຜູ້ຂຽນຂໍສະຫຼຸບກ່ຽວກັບການໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍ ແກ່ຜູ້ຖືກສົງໄສ ແລະ ຜູ້ຖືກຫາຂອງທະນາຍຄວາມ ໃນເມື່ອກ່ອນກໍຄືໃນປັດຈຸບັນຍັງມີຈຸດອ່ອນ ແລະ ຍັງມີຊ່ອງຫວ່າງຢູ່ຫຼາຍຢ່າງ ເຊັ່ນ ການໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍ ຈາກການແຕ່ງຕັ້ງໂດຍໜ້າທີ່ຂອງສະພາທະນາຍຄວາມ ຫຼື ການຊ່ວຍເຫຼືອລ້າຍັງມີໜ້ອຍເກີນໄປ ຫຼື ຍັງຊັກຊ້າເກີນໄປ ຫຼື ຍັງບໍ່ທັນໄດ້ມາດຕະຖານ, ເປັນການສະແດງໃຫ້ເຫັນວ່າຜູ້ຮັບຜິດຊອບ ຫຼື ຜູ້ທີ່ມີສ່ວນກ່ຽວຂ້ອງກັບວຽກງານດັ່ງກ່າວນີ້ຍັງບໍ່ທັນໄດ້ໃຫ້ຄວາມສຳຄັນແກ່ວຽກງານອັນນີ້ຢ່າງແທ້ຈິງ.

### 5.2. ຊ່ວຍໃຫ້ການສືບສວນ-ສອບສວນຖືກຕ້ອງຕາມກົດໝາຍ

ການປະຕິບັດໜ້າທີ່ຂອງຂອງທະນາຍຄວາມ ນອກຈາກຈະເປັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາແລ້ວ ຍັງສ້າງຄວາມເຂັ້ມແຂງໃຫ້ແກ່ຂະບວນການຍຸຕິທຳທາງອາຍາ, ຕ້ານການລ່ວງລະເມີດສິດອັນຊອບທຳຂອງຜູ້ຖືກສົງໄສ ຫຼື ຜູ້ຖືກຫາ

---

[21] ຄະນິງ ຣິໄທ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ (ອ້າງແລ້ວ), ໜ້າ 53

ແລະ ເຮັດໃຫ້ພວກກ່ຽວເຂົ້າເຖິງຂະບວນການຍຸຕິທຳຕາມກົດໝາຍ, ສ້າງຄວາມເຊື່ອໝັ້ນ ແລະ ທັງເຮັດໃຫ້ສັງຄົມມີຄວາມສະຫງົບສຸກ ມີຄວາມເປັນລະບຽບຮຽບຮ້ອຍ. ພົນລະເມືອງທຸກຄົນມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ສານໂດຍບໍ່ຈຳແນກເພດ, ເຊື້ອຊາດ, ສັນຊາດ, ເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຊີບ, ຄວາມເຊື່ອຖື, ພູມລຳເນົາ ແລະ ອື່ນໆ (ມ 13 ວັກ 1 ກດຍ ແລະ ມ 1 ກທຄ). ໃນເມື່ອມີທະນາຍຄວາມ ຫຼື ຜູ້ປົກປ້ອງເຂົ້າຮ່ວມໃນການດຳເນີນຄະດີ ກໍຈະມີສ່ວນເຮັດໃຫ້ເຈົ້າໜ້າທີ່ຂອງລັດປະຕິບັດໜ້າທີ່ດ້ວຍຄວາມລະມັດລະວັງຍິ່ງຂຶ້ນ, ຄ້າຍຄືກັນກັບວ່າ ມີຄົນທີ່ຮູ້ກ່ຽວກັບລະບຽບການເຄື່ອນໄຫວວຽກງານຂອງເຮົາມາຕິດຕາມກວດກາ ຫຼື ມາເຂົ້າຮ່ວມການເຄື່ອນໄຫວໃນທຸກຂັ້ນຕອນການສືບສວນ-ສອບສວນ ເຊັ່ນ ການຈັບຕົວ, ການກວດຄົ້ນ, ການຍຶດ ຫຼື ອາຍັດຊັບ, ການຊັນນະສູດສະຖານທີ່ເກີດເຫດ, ການພິສູດຫຼັກຖານ, ການເອົາຄຳໃຫ້ການ, ການເຮັດບົດບັນທຶກອື່ນໆ, ແຜນວາດ ແລະ ອື່ນໆຂອງເຈົ້າໜ້າທີ່ລັດ, ຖ້າຫາກມີການລະເມີດກົດໝາຍ ຫຼື ລະເມີດລະບຽບການດຳເນີນຄະດີທະນາຍຄວາມ ຫຼື ຜູ້ປົກປ້ອງກໍຈະທັກທ້ວງດ້ວຍເຫດດ້ວຍຜົນ ແລະ ຂໍ້ມູນທີ່ໄດ້ມາກໍຈະບໍ່ສາມາດໃຊ້ເປັນຫຼັກຖານໃນຄະດີໄດ້. ໃນການດຳເນີນຄະດີອາຍາທະນາຍຄວາມ ມີສິດ ແລະ ໜ້າທີ່ດັ່ງນີ້ (ມ 71 ກດຍ ແລະ ມ 19 ກທຄ).

1) ພົບກັບຜູ້ທີ່ຈະເປັນລູກຄວາມ ຫຼື ລູກຄວາມ ຕາມການສະເໜີຂອງຜູ້ກ່ຽວ ພາຍຫຼັງຖືກກັກຕົວ, ຈັບຕົວ ຫຼື ຖືກກັກຂັງ;

2) ຮັບຊາບຂໍ້ກ່າວຫາໃສ່ລູກຄວາມ ແລະ ເຂົ້າຮ່ວມຮັບຟັງການເອົາຄຳໃຫ້ການຂອງລູກຄວາມຕົນ;

3) ເບິ່ງເອກະສານຢູ່ໃນສຳນວນຄະດີ, ສຳເນົາ ຫຼື ກ່າຍເອົາເນື້ອໃນເອກະສານ;

4) ສະເໜີຫຼັກຖານ ແລະ ພະຍານ;

5) ສະເໜີຄ້ານຕົວຜູ້ພິພາກສາ, ພະນັກງານໄອຍະການ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ;

6) ໃຫ້ຄຳເຫັນ, ສອບຖາມຜູ້ເຂົ້າຮ່ວມອື່ນໃນເວລາໄຕ່ສວນຄະດີໃນທີ່ປະຊຸມສານ;

7) ຄັດຄ້ານ ຫຼື ຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງ ຫຼື ບໍ່ເໝາະສົມຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ;

8) ຂໍອຸທອນ, ຂໍລົບລ້າງຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ ຫຼື ຄຳຕົກລົງຂອງສານ;

9) ສະເໜີປະກັນຕົວການປ່ອຍຕົວພາງລູກຄວາມຂອງຕົນຕາມລະບຽບກົດໝາຍ;

10) ໃຫ້ການຮ່ວມມືໃນການນຳຕົວລູກຄວາມຂອງຕົນ ທີ່ຖືກປ່ອຍຕົວພາງເຂົ້າມາສານ ຫຼື ອົງການໄອຍະການ;

11) ຮັບການແຕ່ງຕັ້ງເປັນທະນາຍຄວາມ ໃນກໍລະນີການກະທຳຜິດ ທີ່ກົດໝາຍກຳນົດໂທດປະຫານຊີວິດ ແລະ ການກະທຳຜິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

12) ຮັບໝາຍຮຽກໃຫ້ຄູ່ຄວາມຂອງຕົນເຂົ້າຮ່ວມໃນການດຳເນີນຄະດີ;

13) ປະຕິບັດສິດ ແລະ ໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ຜູ້ປົກປ້ອງອື່ນ ແລະ ຜູ້ຕາງໜ້າມີສິດ ແລະ ໜ້າທີ່ຄືກັນກັບສິດຂອງທະນາຍຄວາມ, ແຕ່ບໍ່ຖືກແຕ່ງຕັ້ງເປັນທະນາຍຄວາມ ໃນກໍລະນີການກະທຳຜິດທີ່ກົດໝາຍກຳນົດໂທດປະຫານຊີວິດ ແລະ ການກະທຳຜິດອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ (ມ 71 ວັກ 3 ຂໍ້ 11 ກດຍ ແລະ ມ 19 ຂໍ້ 11 ກທຄ). ເນື່ອງຈາກວ່າການປະຕິບັດໜ້າທີ່ດັ່ງກ່າວຕ້ອງແມ່ນສິດຂອງທະນາຍຄວາມເທົ່ານັ້ນ. ຈາກເຫດຜົນດັ່ງທີ່ໄດ້ກ່າວມາຈຶ່ງສາມາດສະຫຼຸບຄວາມໝາຍໄດ້ວ່າ ການເຂົ້າຮ່ວມໃນການດຳເນີນຄະດີອາຍາ ຈຶ່ງເປັນການຊ່ວຍໃຫ້ການສືບສວນ-ສອບສວນຂອງເຈົ້າໜ້າທີ່ລັດໄດ້ດຳເນີນໄປຢ່າງຖືກຕ້ອງຕາມກົດໝາຍ.

**5.3. ຊ່ວຍເກັບກຳຂໍ້ມູນຫຼັກຖານໃຫ້ຜູ້ຖືກສົງໄສ ຫຼື ຜູ້ຖືກຫາທີ່ຖືກກັກຕົວ ຫຼື ຖືກກັກຂັງພາງ**

ທະນາຍຄວາມ ຫຼື ຜູ້ປົກປ້ອງມີໜ້າທີ່ໃຫ້ຄວາມຊ່ວຍເຫຼືອໃນການເກັບກຳຂໍ້ມູນຫຼັກຖານ ໃຫ້ແກ່ລູກຄວາມຂອງຕົນທີ່ຖືກຈັບຕົວ, ຖືກກັກຕົວ ຫຼື ຖືກກັກຂັງ ຊຶ່ງບໍ່ສາມາດອອກໄປເຄື່ອນໄຫວຢູ່ຂ້າງນອກ ຫຼື ອອກໄປຊອກຫາດ້ວຍຕົນເອງ, ເພື່ອເອົາມາໃຫ້ອົງການດຳເນີນຄະດີອາຍາຊັ່ງຊາ ຕີລາຄາ ແລະ ໃຊ້ເປັນພື້ນຖານໃນການກຳນົດວ່າຜູ້ຖືກສົງໄສ ຫຼື ຜູ້ຖືກຫາມີ ຫຼື ບໍ່ມີພຶດຕິກຳທີ່ເປັນອັນຕະລາຍຕໍ່ສັງຄົມ ແລະ ເຫດການອື່ນທີ່ເປັນປະໂຫຍດ ໃຫ້ແກ່ການພິຈາລະນາແກ້ໄຂ ຫຼື ຕັດສີນຄະດີອາຍາໃຫ້ຖືກຕ້ອງ ແລະ ເປັນທຳ, ໂດຍສະເພາະແມ່ນຂໍ້ມູນຫຼັກຖານແກ້ມັດຢັ້ງຢືນວ່າຜູ້ຖືກສົງໄສ ຫຼື ຜູ້ຖືກຫາເປັນຜູ້ບໍລິສຸດ.

ໃນການຊ່ວຍເກັບກຳຂໍ້ມູນຫຼັກຖານໃຫ້ຜູ້ຖືກສົງໄສ ຫຼື ຜູ້ຖືກຫາທີ່ຖືກກັກຕົວ ຫຼື ຖືກກັກຂັງນີ້ ທະນາຍຄວາມສາມາດເກັບກຳຈາກສຳນວນຄະດີ ຊຶ່ງຜູ້ດຳເນີນຄະດີໄດ້ເກັບໂຮມເຂົ້າມາໄວ້ໃນສຳນວນມີບົດບັນທຶກຕ່າງໆ ເຊັ່ນ ບົດບັນທຶກການເກັບໂຮມຫຼັກຖານ ຫຼື ບົດບັນທຶກການສືບສວນ-ສອບສວນ, ບົດບັນທຶກການຈັບຕົວ, ການກວດຄົ້ນ, ການຍຶດ ຫຼື ອາຍັດຊັບ, ການຊັນນະສູດສະຖານທີ່ເກີດເຫດ, ການພິສູດຫຼັກຖານ, ການເອົາຄຳໃຫ້ການ, ການສອບຖາມຊ້ອງໜ້າ, ການຢັ້ງຢືນ ແລະ ການທົດສອບຂໍ້ມູນຄືນໃໝ່, ບັນຊີ, ແຜນວາດ, ຮູບພາບ ແລະ ເອກະສານອື່ນໆລ້ວນແຕ່ແມ່ນເຈົ້າໜ້າທີ່ຂອງລັດ ຫຼື ຜູ້ດຳເນີນຄະດີ ຫຼື ຜູ້ຕັ້ງຂໍ້ກ່າວຫາເປັນຜູ້ເກັບໂຮມເຂົ້າມາ, ດັ່ງນັ້ນຢູ່ໃນສຳນວນສ່ວນຫຼວງຫຼາຍແລ້ວ ມັກຈະມີຫຼັກຖານຜູກມັດຫຼາຍກວ່າ, ສ່ວນຫຼັກຖານແກ້ມັດແມ່ນມີໜ້ອຍທີ່ສຸດ ຫຼື ເກືອບຈະບໍ່ມີເລີຍ, ເພາະວ່າຂໍ້ມູນຫຼັກຖານຢູ່ໃນສຳນວນຄະດີແມ່ນຝ່າຍທີ່ຕັ້ງຂໍ້ກ່າວຫາໃສ່ກັບຜູ້ຖືກຫາເປັນຜູ້ເກັບໂຮມ. ນອກນີ້

ທະນາຍຄວາມ ຫຼື ຜູ່ປົກປ້ອງຍັງມີສິດ ແລະ ສາມາດເກັບໂຮມຂໍ້ມູນຫຼັກຖານຈາກແຫຼ່ງອື່ນໆ ທີ່ເຫັນວ່າເປັນປະໂຫຍດໃຫ້ລູກຄວາມຂອງຕົນມາສະເໜີໃຫ້ເປັນຫຼັກຖານ ເຊັ່ນ ມີພະຍານທີ່ຮູ້ເຫັນເຫດການແຕ່ຜູ່ດຳເນີນຄະດີບໍ່ເອົາຄຳໃຫ້ການ, ການໄດ້ຫຼັກຂໍ້ມູນຫຼັກຖານມາໂດຍມີການລະເມີດລະບຽບການດຳເນີນຄະດີອາຍາ ຫຼື ການນຳໃຊ້ກົດໝາຍບໍ່ຖືກຕ້ອງ, ມີຫຼັກຖານຢັ້ງຢືນວ່າພະຍານ, ຜູ່ຊ່ຽວຊານ, ຜູ່ຊຳນານງານ, ຜູ່ແປພາສາໄດ້ໃຫ້ຂໍ້ຄວາມເປັນເທັດ.

**5.4. ເຊື່ອມຕໍ່ຄອບຄົວ, ໃຫ້ຄວາມອົບອຸ່ນທາງດ້ານຈິດໃຈຕໍ່ຜູ່ຖືກສົງໄສ ຫຼື ຜູ່ຖືກຫາ**

ເນື່ອງຈາກວ່າຜູ່ຖືກສົງໄສ ຫຼື ຜູ່ຖືກຫາອາດຈະຖືກກັກຕົວ ຫຼື ຖືກກັກຂັງພາງໃນລະຫວ່າງການດຳເນີນການສືບສວນ-ສອບສວນ, ພວກກ່ຽວບໍ່ສາມາດອອກໄປຂ້າງນອກເພື່ອພົບປະກັບຍາດພີ່ນ້ອງ ຫຼື ບຸກຄົນອື່ນໆ, ຈະຕິດຕໍ່ພົວພັນກັນໂດຍກົງບໍ່ໄດ້ຈຶ່ງໄດ້ອາໄສທະນາຍຄວາມ ຫຼື ຜູ່ປົກປ້ອງເປັນສື່ກາງ. ໃນເມື່ອມີທະນາຍຄວາມເຂົ້າມາໃຫ້ການປົກປ້ອງ ແລະ ຄຸ້ມຄອງແລ້ວ, ທາງດ້ານຈິດໃຈຜູ່ຖືກສົງໄສ ຫຼື ຜູ່ຖືກຫາກໍເກີດມີຄວາມອົບອຸ່ນ ແລະ ສະບາຍໃຈຂຶ້ນ.

# ພາກທີ IV
# ການສັ່ງຟ້ອງຂຶ້ນສານ
## ບົດທີ 1
## ຄວາມຮູ້ກ່ຽວກັບການສັ່ງຟ້ອງຜູ້ຖືກຫາຂຶ້ນສານ

ສໍາລັບການດໍາເນີນຄະດີອາຍາຕາມກົດໝາຍຂອງ ສປປ ລາວ ແລ້ວເປັນການດໍາເນີນຄະດີອາຍາໂດຍລັດ, ມີແນວຄວາມຄິດທີ່ຖືວ່າລັດເປັນຜູ້ຖືກເສຍຫາຍ ເນື່ອງມາຈາກຜົນຂອງການກະທໍາຜິດທາງອາຍາ. ດັ່ງນັ້ນ, ການສືບສວນ-ສອບສວນ ແລະ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານຈຶ່ງເປັນໜ້າທີ່ຂອງລັດ ແລະ ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຫົວໜ້າອົງການໄອຍະການ. ຫົວໜ້າອົງການໄອຍະການປະຕິບັດໜ້າທີ່ເປັນໂຈດ ແລະ ມີສິດໜ້າທີ່ໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານໄດ້ພຽງແຕ່ຜູ້ດຽວ, (ມ 49 ຂໍ້ 3 ກດຍ) ຫົວໜ້າອົງການໄອຍະການຕ້ອງຮູ້ຂໍ້ເທັດຈິງກ່ຽວກັບພຶດຕິກໍາຂອງຜູ້ຖືກຫາເປັນຢ່າງດີ ຈຶ່ງຈະເກີດຄວາມໝັ້ນໃຈໃນການສັ່ງຟ້ອງ, ທັງສອງຝ່າຍຈະໄດ້ນໍາສະເໜີຫຼັກຖານຕໍ່ສານເພື່ອໃຫ້ສານໄດ້ຮູ້ເຖິງຂໍ້ເທັດຈິງ ແລະ ຕັດສິນຄະດີໄດ້ຢ່າງຖືກຕ້ອງຕາມກົດໝາຍ. ເພາະວ່າຈຸດປະສົງຂອງການສັ່ງຟ້ອງຄະດີກໍເພື່ອໃຫ້ສານຕັດສິນລົງໂທດຜູ້ກະທໍາຜິດຕາມຂໍ້ກ່າວຫາ.

ການດໍາເນີນຄະດີອາຍາໃນ ສປປ ລາວນີ້, ຜູ້ຖືກເຄາະຮ້າຍ ຫຼື ຜູ້ຖືກເສຍຫາຍແມ່ນບໍ່ມີສິດໜ້າທີ່ທີ່ຈະສັ່ງຟ້ອງຄະດີອາຍາຂຶ້ນສານໄດ້ໂດຍກົງ, ພຽງແຕ່ມີສິດຍື່ນຄໍາຮ້ອງຟ້ອງຂໍເປັນໂຈດເພື່ອຂໍຄ່າເສຍຫາຍທາງແພ່ງຕໍ່ກັບອົງການດໍາເນີນຄະດີອາຍາ, ອັນເປັນສາເຫດໃຫ້ຫົວໜ້າອົງການໄອຍະການຕ້ອງໄດ້ຮັບເອົາຄໍາຮ້ອງຟ້ອງມາພິຈາລະນາ ແລະ ໃຫ້ສິດຜູ້ຖືກເສຍຫາຍເປັນໂຈດທາງແພ່ງຮ່ວມກັບຫົວໜ້າອົງການໄອຍະການທີ່ເປັນໂຈດທາງອາຍາໃນຄະດີອາຍານັ້ນ.

### 1. ຄວາມໝາຍສໍາຄັນຂອງການສັ່ງຟ້ອງຜູ້ຖືກຫາຂຶ້ນສານ

ຄວາມໝາຍສໍາຄັນຂອງການສັ່ງຟ້ອງຜູ້ຖືກຫາຂຶ້ນສານນີ້ ແມ່ນເປັນການສໍາເລັດຜົນແຫ່ງການສືບສວນ-ສອບສວນຄະດີ, ເນື່ອງຈາກວ່າທຸກຄະດີທີ່ຖືກສັ່ງຟ້ອງຂຶ້ນສານນັ້ນຕ້ອງເປັນຄະດີອາຍາທີ່ໄດ້ຜ່ານການເປີດການສືບສວນ-ສອບສວນ ແລະ ປະຕິບັດຕາມລະບຽບການທົ່ວໄປກ່ຽວກັບການສືບສວນ-ສອບສວນ, ເວັ້ນເສຍແຕ່ກໍລະນີສັ່ງຟ້ອງຂຶ້ນສານໂດຍກົງ (ມ 157-159 ກດຍ) ໂດຍໄດ້ຮັບການກວດກາ ແລະ ຊັ່ງຊາ ຕີລາຄາຂໍ້ມູນຫຼັກຖານຈາກຫົວໜ້າອົງການໄອຍະການຕື່ມອີກຂັ້ນຕອນໜຶ່ງ, ຖ້າຫາກເຊື່ອໄດ້ວ່າມີຄວາມຜິດຕາມຂໍ້ກ່າວຫາແທ້ ແລະ ໃນຖານະເປັນທີ່ເປັນໂຈດ, ເປັນຕົວແທນຂອງລັດ ແລະ ຂອງສັງຄົມ, ຫົວໜ້າອົງ

ການໄອຍະການ ຕ້ອງເກັບໂຮມບັນດາຂໍ້ເທັດຈິງທີ່ອົງການສືບສວນ-ສອບສວນ ຫຼື ພະນັກງານໄອຍະການໄດ້ປະກອບເຂົ້າໃນສໍານວນຄະດີ ໂດຍດໍາເນີນການຕາມຂັ້ນຕອນການກວດການສໍານວນຄະດີ, ຂັ້ນຕອນສະຫຼຸບຄະດີ, ຂັ້ນຕອນການຖະແຫຼງ ແລະ ຂັ້ນຕອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ (ມ 154 ແລະ 156 ກດຍ), ເປັນການສົ່ງສໍານວນຄະດີ ແລະ ຂອງກາງໃຫ້ສານຢ່າງເປັນທາງການ ຊຶ່ງການສັ່ງຟ້ອງຜູ້ຖືກຫາຂຶ້ນສານນັ້ນໄດ້ປ່ຽນຖານະຈາກຜູ້ຖືກຫາໃຫ້ກາຍມາເປັນຈໍາເລີຍຢູ່ສານ, ຖ້າບໍ່ມີຄໍາສັ່ງຟ້ອງແລ້ວ, ສານກໍບໍ່ມີສິດທີ່ຈະນໍາເອົາຄະດີດັ່ງກ່າວອອກມາຕັດສິນໄດ້.

**2. ອົງການທີ່ມີສິດອໍານາດໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ**

ເນື່ອງຈາກວ່າການດໍາເນີນຄະດີອາຍາຂອງ ສປປ ລາວ ເປັນການດໍາເນີນຄະດີໂດຍລັດ ແລະ ມີແຕ່ອົງການໄອຍະການເທົ່ານັ້ນ ທີ່ມີສິດໜ້າທີ່ໃນການສັ່ງຟ້ອງຄະດີອາຍາ (ມ 86 ຂໍ້ 2 ລນ ແລະ ມ 49 ຂໍ້ 3 ກດຍ), ສ່ວນອົງການສືບສວນ-ສອບສວນ ແລະ ເຈົ້າໜ້າທີ່ອົງການທີ່ກ່ຽວຂ້ອງອື່ນໆນັ້ນ ແມ່ນເປັນຜູ້ໃຫ້ຄວາມຊ່ວຍເຫຼືອ ຫຼື ໃຫ້ຄວາມສະດວກແກ່ອົງການໄອຍະການ, ເຖິງຢ່າງໃດກໍຕາມລັດບໍ່ອາດຈະສາມາດຜູກຂາດ ຫຼື ລະເມີດສິດ ແລະ ເສລີພາບສ່ວນຕົວຂອງບຸກຄົນໂດຍເຂົ້າໄປເປັນຜູ້ເສຍຫາຍ ຫຼື ເປັນໂຈດຮ້ອງຟ້ອງເພື່ອເອົາຄວາມຜິດທາງອາຍາໄດ້ໃນທຸກເຫດການ. ສະນັ້ນ, ລັດຈຶ່ງໄດ້ຜ່ອນຜັນ ແລະ ຍອມໃຫ້ເອກະຊົນ ຫຼື ບຸກຄົນຜູ້ເສຍຫາຍໂດຍກົງກໍມີສິດຕັດສິນໃຈໄດ້ຢ່າງເປັນອິດສະລະວ່າຈະເລີ່ມຕົ້ນດໍາເນີນຄະດີ ຫຼື ບໍ່, ຈະເອົາຄວາມຜິດທາງອາຍາຕໍ່ກັບພຶດຕິກໍາທີ່ຝ່າຝືນກົດໝາຍນັ້ນ ຫຼື ບໍ່, ລັດອະນຸຍາດໃຫ້ຢູ່ໃນຂອບເຂດປະເພດຄວາມຜິດເລັກໆນ້ອຍໆ ຫຼື ເປັນຄະດີທີ່ສ້າງຄວາມເສຍຫາຍລະຫວ່າງສ່ວນຕົວບຸກຄົນ ແລະ ເປັນກໍລະນີທີ່ການກະທໍາຜິດທີ່ບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ (ມ 25 ກອຍ) ເຊັ່ນ ການທໍາຮ້າຍຮ່າງກາຍລະຫວ່າງຍາດໃກ້ຊິດທີ່ບໍ່ມີບາດເຈັບສາຫັດ ຫຼື ບໍ່ເສຍອົງຄະ, ການນິນທາ ແລະ ການໃສ່ຮ້າຍ (ມ 94 ກອຍ), ການປ້ອຍດ່າ (ມ 95 ກອຍ), ການໝິ່ນປະໝາດຊາກສົບ ຫຼື ຊື່ສຽງຂອງຜູ້ຕາຍ (ມ 96 ກອຍ), ການກະທໍາຜິດຕໍ່ກໍາມະສິດສ່ວນຕົວຂອງຍາດໃກ້ຊິດ, ການລ່ວງລະເມີດເຄຫະສະຖານ (ມ 103 ກອຍ) ແລະ ການລ່ວງລະເມີດຄວາມລັບສ່ວນຕົວ (ມ 104 ກອຍ), ປະເທດທີ່ເປັນຕົ້ນແບບໃນການໃຊ້ລະບົບນີ້ໄດ້ແກ່ປະເທດຝຣັ່ງເສດ, ເຢຍລະມັນ, ອີຕາລີ, ແອັດສະປາຍ, ປ້ອກຕຸຍການ[22].

---

[22] ສຸຈິນ ທິມສຸວັນ,ອົງການໄອຍະການກັບການດໍາເນີນຄະດີອາຍາໃຫ້ແກ່ລັດ, (ບ.ປ.ທ, ພ.ສ.2525), ໜ້າ 34 ອ້າງ ເຖິງໃນ ອາຣີ ຣຸ່ງພອນວິວັດ, “ການບັງຄັບໃຊ້ກົດໝາຍອາຍາໂດຍອົງການໃນຂະບວນການຍຸຕິທໍາໃນປະເທດໄທ”, (ອ້າງແລ້ວ), ໜ້າ 77

### 3. ການເກັບໂຮມຂອງກາງທີ່ເປັນຫຼັກຖານກ່ອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງ ສປປ ລາວ ໄດ້ໃຫ້ສິດອຳນາດແກ່ທີ່ວໜ້າອົງການໄອຍະການໃນການລວບລວມຂອງກາງເພື່ອນຳມາພິສູດ ແລະ ກັ່ນຕອງວ່າມັນສາມາດເປັນຫຼັກຖານໃນຄະດີດັ່ງກ່າວນັ້ນ ຫຼື ບໍ່, ຈາກນັ້ນຈຶ່ງດຳເນີນການກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານ, ເປັນການຊອກຫາຫຼັກຖານຜູກມັດມາຢັ້ງຢືນໃຫ້ມີເຫດຜົນທີ່ໜ້າເຊື່ອຖືໄດ້ວ່າຜູ້ຖືກຫາໄດ້ກະທຳຄວາມຜິດເພື່ອສັ່ງຟ້ອງຂຶ້ນສານ (ມ 28 ວັກ 2 ກດຍ), ໃນຂະນະດຽວກັນນັ້ນ ກໍຕ້ອງຊອກຫາຫຼັກຖານແກ້ມັດມາຢັ້ງຢືນໃຫ້ມີຄວາມຊັດເຈນມີເຫດຜົນທີ່ໜ້າເຊື່ອຖືໄດ້ວ່າຜູ້ຖືກຫາເປັນບຸກຄົນຜູ້ບໍລິສຸດ ເພື່ອປ່ອຍຕົວ.

ເນື່ອງຈາກວ່າຂອງກາງທີ່ເປັນຫຼັກຖານໃນຄະດີອາຍາ ແມ່ນຂໍ້ມູນຕົວຈິງທີ່ຫົວໜ້າອົງການໄອຍະການຕ້ອງລວບລວມ ແລະ ນຳເອົາມາໃຊ້ເປັນພື້ນຖານໃນການກຳນົດວ່າພຶດຕິກຳນັ້ນເປັນອັນຕະລາຍຕໍ່ສັງຄົມ, ມີສາຍພົວພັນລະຫວ່າງພຶດຕິກຳ ແລະ ຄວາມເສັຍຫາຍນັ້ນມັນແມ່ນເຫດທີ່ນຳມາຊຶ່ງຜົນອັນນັ້ນຢ່າງແທ້ຈິງ ຫຼື ບໍ່, ການລວບລວມຂອງກາງທີ່ເປັນຫຼັກຖານກ່ອນການສັ່ງຟ້ອງນີ້ແມ່ນການລວບລວມບັນດາຮ່ອງຮອຍ ແລະ ສິ່ງເສດເຫຼືອຕ່າງໆທີ່ເຫດການນັ້ນໄດ້ປະໄວ້, ເມື່ອນຳເອົາຕິດຕໍ່ເຂົ້າກັນຕາມຂັ້ນຕອນ ແລະ ຕາມຫຼັກການ, ເຮົາກໍຈະສາມາດວາດພາບ ຫຼື ສຳນຶກເຫັນເຫດການອັນນັ້ນໄດ້ຢ່າງຈະແຈ້ງ ແລະ ຢ່າງສົມບູນ. ດັ່ງນັ້ນ, ການລວບລວມຂອງກາງທີ່ເປັນຫຼັກຖານກ່ອນການສັ່ງຟ້ອງ ຈຶ່ງເປັນການຊອກຫາຄວາມຈິງກ່ຽວກັບສະພາບການດັ່ງນີ້ (ມ 41 ກດຍ):

1) ເຫດການຂອງຄະດີ (ພຶດຕິກຳ, ວັນ, ເວລາ, ສະຖານທີ່, ພາຫະນະ, ອຸປະກອນ, ວິທີການ ແລະ ສະພາບການອື່ນ);

2) ຄວາມຜິດຂອງຜູ້ຖືກຫາ ຫຼື ຈຳເລີຍ (ເຈດຕະນາ ຫຼື ບໍ່ລະມັດລະວັງ) ແລະ ເຫດຜົນໃນການກະທຳຜິດ;

3) ລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຂອງການກະທຳຜິດພ້ອມທັງບຸກຄະລິກກະພາບຂອງຜູ້ຖືກຫາ ຫຼື ຈຳເລີຍ;

4) ລັກສະນະ ແລະ ລະດັບຄວາມເສັຍຫາຍທີ່ເນື່ອງມາຈາກການກະທຳຜິດ;

5) ສາເຫດທີ່ພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ ຫຼື ສາເຫດທີ່ພາໃຫ້ມີຄວາມຮັບຜິດຊອບທາງອາຍາ;

6) ສາເຫດທີ່ພາໃຫ້ຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາ.

ການລວບລວມຂອງກາງທີ່ເປັນຫຼັກຖານກ່ອນການສັ່ງຟ້ອງນັ້ນ ຫົວໜ້າອົງການໄອຍະການຕ້ອງໄດ້ກວດກາ ແລະ ຊັ່ງຊາ ຕີລາຄາກ່ຽວກັບຄວາມຖືກຕ້ອງທາງດ້ານກົດໝາຍ, ຄວາມຈິງຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ດ້ວຍຄວາມໝັ້ນໃຈຂອງຕົນ (ມ 44

ວັກ 1 ກດຍ), ຂອງກາງອັນໃດມີການພົວພັນກັບຄະດີ ແລະ ສາມາດເປັນບ່ອນອີງໃຫ້ແກ່ການສັ່ງຟ້ອງ. ດັ່ງນັ້ນ, ກ່ອນການສັ່ງຟ້ອງຕ້ອງໄດ້ລວບລວມກາງທີ່ເປັນວັດຖຸ ແລະ ຂອງກາງທີ່ເປັນເອກະສານດັ່ງນີ້:

**3.1. ຂອງກາງທີ່ເປັນວັດຖຸ**

ການເກັບໂຮມຂອງກາງທີ່ເປັນວັດຖຸແມ່ນລວບລວມເອົາບັນດາວັດຖຸທີ່ໄດ້ໃຊ້ ຫຼື ຈະໃຊ້ ຫຼື ໄດ້ມາຈາກການກະທຳຜິດ ເຊັ່ນ ອາວຸດປືນ, ມີດ, ຮອຍມື, ຄາບເລືອດ ແລະ ວັດຖຸອື່ນທີ່ມີຄວາມໝາຍສຳຄັນສຳລັບຄະດີ (ມ 29 ກດຍ) ເຊັ່ນ ໄມ້ເຖື່ອນ, ແຮ່ທາດເຖື່ອນ, ສິນຄ້າເຖື່ອນ, ສານເສບຕິດທີ່ມີສ່ວນພົວພັນ ຫຼື ມີສ່ວນກ່ຽວຂ້ອງກັບຄະດີ.

**3.2. ຂອງກາງທີ່ເປັນເອກະສານ**

ການເກັບໂຮມຂອງກາງທີ່ເປັນເອກະສານນັ້ນແມ່ນການລວບລວມເອົາຈົດໝາຍ, ບົດບັນທຶກ, ໜັງສືສັນຍາ, ພິໄນກຳ, ບັນຊີຕ່າງໆ, ຮູບພາບ, ວີດີໂອ ແລະ ເອກະສານອື່ນທີ່ພົວພັນກັບການກະທຳຜິດເພື່ອໃຊ້ເປັນຫຼັກຖານຜູກມັດ ຫຼື ແກ້ມັດໃນຄະດີອາຍາ.

**4. ການຄົ້ນຄວ້າສຳນວນຄະດີອາຍາກ່ອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ**

ການຄົ້ນຄວ້າສຳນວນຄະດີອາຍາກ່ອນການສັ່ງຟ້ອງ ແມ່ນການນຳເອົາສຳນວນຄະດີອອກມາກວດກາເບິ່ງບັນດາຂໍ້ມູນຫຼັກຖານຕ່າງໆທີ່ມີຢູ່ໃນສຳນວນຄະດີໂດຍມີຈຸດປະສົງເພື່ອໃຫ້ຮູ້ເຖິງຂໍ້ເທັດຈິງ ແລະ ເຫດການທີ່ເກີດຂຶ້ນ. ດັ່ງນັ້ນ, ການຄົ້ນຄວ້າສຳນວນຄະດີຂອງພະນັກງານໄອຍະການ ຈຶ່ງເປັນຂັ້ນຕອນທີ່ສຳຄັນທີ່ສຸດຂອງຂະບວນການຍຸຕິທຳທາງອາຍາເພາະຈະໄດ້ຮູ້ຂໍ້ເທັດຈິງມີຄືແນວໃດ, ເນື່ອງຈາກວ່າມັນເປັນຂັ້ນຕອນທີ່ຢູ່ລະຫວ່າງກາງການສືບສວນ-ສອບສວນ ແລະ ການພິຈາລະນາຕັດສິນຂອງສານ[23]. ດັ່ງນັ້ນ, ການຄົ້ນຄວ້າສຳນວນຄະດີອາຍາຂອງພະນັກງານໄອຍະການຈຶ່ງມີຈຸດປະສົງດັ່ງນີ້:

1) ເພື່ອກຳໃຫ້ໄດ້ເນື້ອໃນ, ເຫດການ ແລະ ຮູບການຄະດີອາຍາທີ່ເກີດຂຶ້ນ;

2) ເພື່ອຊອກໃຫ້ເຫັນບັນດາຂໍ້ມູນຫຼັກຖານ ເຊັ່ນ ຫຼັກຖານຜູກມັດ, ຫຼັກຖານແກ້ມັດຂອງຜູ້ຖືກຫາ, ຜົນສະທ້ອນທີ່ເປັນອັນຕະລາຍຕໍ່ສັງຄົມ, ຜົນເສັຍຫາຍ, ສາເຫດທີ່ພາໃຫ້ເພີ່ມ ຫຼື ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ, ແນໃສ່ໃຫ້ການຕັດສິນ ຫຼື ການພິພາກສາມີຄວາມຖືກຕ້ອງຕາມກົດໝາຍ ແລະ ມີຄວາມຍຸຕິທຳ;

---

[23] ສຸພາສິດ ລໍວັນໄຊ, “ຂະບວນການຍຸຕິທຳທາງອາຍາຂັ້ນຕອນກ່ອນການພິຈາລະນາຂອງສານ” (ວິທະຍານິພົນປະລິນ ຍາມະຫາບັນດິດ ພາກວິຊານິຕິສາດ, ມະຫາວິທະຍາໄລຈຸລາລົງກອນ, 2005), ໜ້າ 135

3) ເພື່ອເປັນບ່ອນອີງ ແລະ ຮັບປະກັນໃຫ້ແກ່ການສົ່ງສຳນວນຄະດີຄືນໃຫ້ອົງການສືບ ສວນ-ສອບສວນໄປດຳເນີນການສືບສວນ-ສອບສວນເພີ່ມເຕີມ ຫຼື ຊັດມ້ຽນຄະດີ ຫຼື ສົ່ງສຳ ນວນຄະດີໃຫ້ອົງການໄອຍະການປະຊາຊົນທີ່ກ່ຽວຂ້ອງ;

4) ເພື່ອເປັນບ່ອນອີງ ແລະ ເປັນຂໍ້ມູນໃນການຂຽນຄຳຖະແຫຼງ ແລະ ສັ່ງຟ້ອງເພື່ອໃຫ້ສານພິຈາລະນາຕັດສິນ.

ພາຍຫຼັງທີ່ຫົວໜ້າອົງການໄອຍະການ ໄດ້ຮັບສຳນວນຄະດີຈາກຫົວໜ້າອົງການສືບສວນ-ສອບສວນ ຫຼື ຈາກພະນັກງານໄອຍະການແລ້ວ, ຕ້ອງໄດ້ເອົາໃຈໃສ່ຄົ້ນຄວ້າ, ກວດກາ, ຊັ່ງຊາ ຕີລາຄາຫຼັກຖານຢ່າງຊ້າບໍ່ໃຫ້ເກີນສິບຫ້າວັນ ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງໃດໜຶ່ງໃນຄະດີດັ່ງນີ້ (ມ 152 ກດຍ):

**4.1. ການສົ່ງສຳນວນຄືນໃຫ້ອົງການສືບສວນ-ສອບສວນ**

ພະນັກງານໄອຍະການ ຫຼື ຜູ້ຊ່ວຍພະນັກງານໄອຍະການທີ່ໄດ້ຄົ້ນຄວ້າສຳນວນຄະດີອາຍາແລ້ວ, ຖ້າຫາກເຫັນວ່າການສືບສວນ-ສອບສວນຄະດີ ຫຼື ຂໍ້ມູນຫຼັກຖານຍັງບໍ່ທັນຄົບຖ້ວນເພື່ອຖະແຫຼງສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ພະນັກງານໄອຍະການ ຫຼື ຜູ້ຊ່ວຍພະນັກງານໄອຍະການຜູ້ທີ່ຮັບຜິດຊອບຄະດີນັ້ນຕ້ອງສະເໜີໃຫ້ຫົວໜ້າອົງການໄອຍະການ ເພື່ອສົ່ງສຳນວນຄະດີອາຍາພ້ອມດ້ວຍຄຳແນະນຳຄືນໃຫ້ອົງການສືບສວນ-ສອບສວນ ເພື່ອທຳການສືບສວນ-ສອບສວນເພີ່ມເຕີມໃນກໍລະນີດັ່ງນີ້ (ມ 153 ກດຍ):

1) ປະກອບຂໍ້ມູນຫຼັກຖານຍັງບໍ່ທັນຄົບຖ້ວນ ຊຶ່ງອົງການໄອຍະການບໍ່ສາມາດດຳເນີນການສືບສວນ- ສອບສວນເພີ່ມເຕີມດ້ວຍຕົນເອງໄດ້;

2) ມີພື້ນຖານໃນການເປີດການສືບສວນ-ສອບສວນໃສ່ຜູ້ຖືກຫາ ຫຼື ຜູ້ຮ່ວມມືອື່ນໃນຄະດີດຽວກັນທີ່ຍັງບໍ່ທັນໄດ້ນຳຕົວມາດຳເນີນຄະດີ;

3) ມີການລະເມີດກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ໃນການສົ່ງສຳນວນຄະດີຄືນໃຫ້ອົງການສືບສວນ-ສອບສວນ, ຫົວໜ້າອົງການໄອຍະການຕ້ອງເຮັດປະເດັນການສືບສວນ-ສອບສວນເພີ່ມເຕີມໄປພ້ອມ, ສ່ວນອົງການສືບສວນ-ສອບສວນ ກໍຕ້ອງສົ່ງສຳນວນຄະດີພ້ອມທັງບົດສະຫຼຸບຜົນຂອງການສືບສວນ-ສອບສວນເພີ່ມເພີ່ມເຕີມໄປຍັງອົງການໄອຍະການທີ່ກ່ຽວຂ້ອງພາຍໃນກຳນົດສາມສິບວັນ ນັບແຕ່ວັນໄດ້ຮັບປະເດັນການສືບສວນ-ສອບສວນເພີ່ມເຕີມເປັນຕົ້ນໄປ.

**ຕົວຢ່າງ: ແບບພິມຄຳແນະນຳ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການ...................... ເລກທີ............/ອຍກ.........

ລົງວັນທີ....../....../........

**ຄຳແນະນຳ**

ຮຽນ: ທ່ານຫົວໜ້າກອງບັນຊາການ ປກສ ................................

ເລື່ອງ: ສືບສວນ-ສອບສວນເພີ່ມເຕີມ

– ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງ ປີ 2009 ມາດຕາ 10 ວັກ 1 ຂໍ້ 2.

– ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 153 ວັກ 1 ຂໍ້ 1.

– ອີງຕາມສຳນວນຄະດີອາຍາເລກທີ......../ອຍກ........, ລົງວັນທີ.........................

**ລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ....................................................ໂຈດ

ທ້າວ/ນາງ...................,ອາຍຸ..........ປີ, ສັນຊາດ...............,ອາຊີບ..........., ຢູ່ບ້ານ..........., ໜ່ວຍ......., ເມືອງ............, ແຂວງ ຫຼື ນະຄອນ........................ຜູ້ຖືກຫາ

ຖືກຫາວ່າ: ...........................................

ຖືກກັກຕົວ ຫຼື ຈັບຕົວ: ..............................

ສະຖານທີ່ກັກຂັງ: ......................................

ຖືກປ່ອຍຕົວພາງ : .................................

ຫົວໜ້າອົງການໄອຍະການປະຊາຊົນ........ໄດ້ຄົ້ນຄວ້າສຳນວນຄະດີອາຍາ ສະບັບເລກທີ. .../...., ລົງວັນທີ.................. ແລ້ວ ເຫັນວ່າ ການປະກອບຂໍ້ມູນຫຼັກຖານຍັງບໍ່ທັນຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ຈຶ່ງມີຄວາມຈຳເປັນໃຫ້ຫົວໜ້າອົງການສືບສວນ-ສອບສວນເກັບກຳຂໍ້ມູນເພີ່ມເຕີມດັ່ງນີ້ :

1). ...........................................................................................

2)..............................................................................................

3).............................................................................................

ນອກຈາກປະເດັນທີ່ກ່າວມາຂ້າງເທິງ ຖ້າຫາກທ່ານເຫັນວ່າຍັງມີຄວາມຈຳເປັນກ່ຽວກັບການປະກອບຫຼັກຖານທີ່ເປັນປະໂຫຍດແກ່ການດຳເນີນຄະດີ ກໍໃຫ້ສືບສວນ-ສອບສວນຕາມກົດໝາຍ.

ພາຍຫຼັງທຳການສືບສວນ-ສອບສວນເພີ່ມເຕີມສຳເລັດແລ້ວ ໃຫ້ສະຫຼຸບຜົນການສືບສວນ-ສອບສວນພ້ອມສົ່ງສຳນວນຄະດີມາຍັງອົງການໄອຍະການປະຊາຊົນ................... ຕາມກຳນົດເວລາທີ່ບົ່ງໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 153 ວັກ 3.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນ.......................ຈຶ່ງມີຄຳແນະນຳພ້ອມທັງສົ່ງສຳນວນຄະດີດັ່ງກ່າວມາຍັງທ່ານ ເພື່ອດຳເນີນການສືບສວນ-ສອບສວນເພີ່ມເຕີມຕາມປະເດັນເທິງນີ້.

**ຫົວໜ້າອົງການໄອຍະການປະຊາຊົນ.............**

**ເຊັນ ແລະ ປະທັບຕາ**

### 4.2. ການໂຈະການສືບສວນ-ສອບສວນ

ການໂຈະການສືບສວນ-ສອບສວນ ແມ່ນການຢຸດເຊົາການສືບສວນ-ສອບສວນໄວ້ຊົ່ວຄາວ (ມ 146 ວັກ 1 ກດຍ), ເນື່ອງຈາກວ່າມີສາເຫດໃດໜຶ່ງທີ່ເຮັດໃຫ້ບໍ່ສາມາດດຳເນີນການສືບສວນ-ສອບສວນຕໍ່ໄປໄດ້, ການໂຈະການສືບສວນ-ສອບສວນຕ້ອງມີຄຳສັ່ງຂອງຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການ, ຄຳສັ່ງໂຈະການສືບສວນ-ສອບສວນຂອງຫົວໜ້າອົງການສືບສວນ-ສອບສວນນັ້ນ ຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການຊາບພາຍໃນຊາວສີ່ຊົ່ວໂມງ. ໃນກໍລະນີທີ່ມີຜູ້ຖືກຫາຫຼາຍຄົນ ການໂຈະການສືບສວນ-ສອບສວນກໍຈະປະຕິບັດສະເພາະແຕ່ຜູ້ຖືກຫາທີ່ມີສາເຫດທີ່ພາໃຫ້ໂຈະການສືບສວນ-ສອບສວນເທົ່ານັ້ນ. ຄຳສັ່ງໂຈະຕ້ອງແຈ້ງໃຫ້ຜູ້ຖືກເສັຍຫາຍ ຫຼື ໂຈດທາງແພ່ງທີ່ເປັນຄູ່ຄວາມພາຍ

ໃນກຳນົດສາມວັນທາງລັດຖະການ ນັບແຕ່ວັນອອກຄຳສັ່ງ ແລະ ພວກກ່ຽວມີສິດຂໍອຸທອນພາຍໃນກຳນົດເຈັດວັນນັບແຕ່ວັນຮັບຊາບຄຳສັ່ງນັ້ນເປັນຕົ້ນໄປ.

ຄຳສັ່ງໂຈະຂອງຫົວໜ້າອົງການສືບສວນ-ສອບສວນນັ້ນ ຕ້ອງຂໍອຸທອນໄປຍັງຫົວໜ້າອົງການໄອຍະການຂັ້ນດຽວກັນ. ສຳລັບຄຳສັ່ງໂຈະຂອງຫົວໜ້າອົງການໄອຍະການຕ້ອງຂໍອຸທອນໄປຍັງຫົວໜ້າອົງການໄອຍະການຂັ້ນເທິງຖັດໄປ, ຖ້າຫາກຍັງບໍ່ພໍໃຈກໍມີສິດຂໍລົບລ້າງພາຍໃນກຳນົດເວລາເຈັດວັນ.

ໃນການໂຈະການສືບສວນ-ສອບສວນຄະດີອາຍາ ຜູ້ຮັບຜິດຊອບຄະດີຕ້ອງກະທຳດ້ວຍຄວາມລະມັດລະວັງ ແລະ ຮອບຄອບ ໂດຍອີງໃສ່ຜົນຂອງການສືບສວນ-ສອບສວນ ຫຼື ຄວາມຈິງຕ່າງໆທີ່ກ່ຽວຂ້ອງມາປະກອບການຄົ້ນຄວ້າພິຈາລະນາເພື່ອໃຫ້ຮັບຊາບ ແລະ ດຳເນີນໄປເຖິງຂັ້ນຕອນການໂຈະການສືບສວນ-ສອບສວນຢ່າງຖືກຕ້ອງ, ເຖິງຢ່າງໃດກໍຕາມຜູ້ຖືກຫາທີ່ມີເງື່ອນໄຂ ແລະ ທັງໄດ້ຮັບສິດໃຫ້ໂຈະການສືບສວນ-ສອບສວນນັ້ນ, ຕາມຫຼັກການຂອງກົດໝາຍແລ້ວຜູ້ກ່ຽວຍັງມີສະພາບ ແລະ ຍັງຕົກເປັນຜູ້ຖືກຫາຢູ່, ມີບາງປະເທດຍັງຈັດວາງກຳລັງຂອງເຈົ້າໜ້າທີ່ໃຫ້ຕິດຕາມ ແລະ ຊອກຫາຈົນກວ່າຈະໝົດອາຍຸຄວາມໃນການຮ້ອງຟ້ອງ, ແຕ່ສະພາບຄວາມເປັນຈິງຂອງ ສປປ ລາວ ໃນປັດຈຸບັນຍັງບໍ່ທັນມີຄວາມສາມາດພຽງພໍທີ່ຈະຈັດວາງກຳລັງໃຫ້ຕິດຕາມຢູ່ຕະຫຼອດເວລາ, ຈຶ່ງຕ້ອງອາໄສທຸກຄົນໃນສັງຄົມຊ່ວຍເປັນຫູເປັນຕາ ແລະ ຮ່ວມມືກັນດຳເນີນການໄປກ່ອນ. ດັ່ງນັ້ນ, ການໂຈະການສືບສວນ-ສອບສວນ ຈຶ່ງມີແຕ່ອົງການສືບສວນ-ສອບສວນ ຫຼື ອົງການໄອຍະການເທົ່າທີ່ມີສິດອຳນາດໂຈະໄດ້, ສາເຫດຂອງການໂຈະການສືບສວນ-ສອບສວນມີດັ່ງນີ້:

1) ຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບຫຼີກຈາກການດຳເນີນຄະດີ ຫຼື ບໍ່ຮູ້ບ່ອນຢູ່ຂອງຜູ້ກ່ຽວ;

2) ບໍ່ສາມາດຮູ້ໄດ້ວ່າ ແມ່ນຜູ້ໃດເປັນຜູ້ກະທຳຜິດ;

3) ຜູ້ຖືກຫາເຈັບປ່ວຍໜັກ ຫຼື ເປັນບ້າເສັຍຈິດ ໂດຍມີການຢັ້ງຢືນຈາກຄະນະແພດ.

ການໂຈະການສືບສວນ-ສອບສວນໃນສາເຫດທີໜຶ່ງ ແລະ ທີສອງຈະມີໄດ້ກໍຕໍ່ເມື່ອກຳນົດເວລາການສືບສວນ-ສອບສວນຫາກໄດ້ສິ້ນສຸດແລ້ວເທົ່ານັ້ນ. ສຳລັບການໂຈະໃນສາເຫດທີໜຶ່ງ ກ່ອນຈະອອກຄຳສັ່ງໂຈະການສືບສວນ-ສອບສວນ, ຫົວໜ້າອົງການສືບສວນ-ສອບສວນຕ້ອງຂໍຄຳສັ່ງຈັບຕົວຈາກຫົວໜ້າອົງການໄອຍະການໄວ້ສາກ່ອນ, ເພື່ອຕິດຕາມຊອກຫາ ແລະ ຈັບຕົວຜູ້ຖືກຫາມາດຳເນີນຄະດີ. ສ່ວນການໂຈະການສືບສວນ-ສອບສວນໃນສາເຫດທີສາມນີ້, ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງສົ່ງຜູ້ຖືກຫາໄປປິ່ນປົວຕາມຄວາມເປັນຈິງ ແລະ ຢ່າງເໝາະສົມ.

ວິທີການດຳເນີນການໂຈະການສືບສວນ-ສອບສວນນັ້ນ ຕ້ອງດຳເນີນໂດຍຄຳສັ່ງທີ່ເປັນລາຍລັກອັກສອນຂອງຫົວໜ້າອົງການສືບສວນ-ສອບສວນ, ໃນກໍລະນີທີ່ອົງການໄອຍະ

ການດຳເນີນການສືບສວນ-ສອບສວນ ກໍຕ້ອງແມ່ນຫົວໜ້າອົງການໄອຍະການເປັນຜູ້ອອກຄຳສັ່ງໂຈະ. ຄະດີອາຍາທີ່ໄດ້ໂຈະໄວ້ນັ້ນກໍຈະຖືກຊັດມ້ຽນເມື່ອໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ ແລະ ຈະບໍ່ສາມາດຮ້ອງຟ້ອງທາງອາຍາໄດ້ຕື່ມອີກ ຈຶ່ງເປັນສາເຫດທີ່ພາໃຫ້ການດຳເນີນຄະດີອາຍາຕົກໄປ (ມ 6 ກດຍ).

1) ໜຶ່ງປີ ສຳລັບການກະທຳຜິດໃນຖານລະຫຸໂທດ;

2) ເຈັດປີ ສຳລັບການກະທຳຜິດໃນຖານໂທສານຸໂທດ;

3) ສິບຫ້າປີ ສຳລັບການກະທຳຜິດໃນຖານຄະຣຸໂທດ.

ອາຍຸຄວາມໃນການຮ້ອງຟ້ອງທາງອາຍານັ້ນ ໃຫ້ນັບແຕ່ມື້ໄດ້ກະທຳຜິດເປັນຕົ້ນໄປ, ໃນກໍລະນີທີ່ໄດ້ມີການກະທຳຜິດເທື່ອໃໝ່ ພາຍໃນກຳນົດອາຍຸຄວາມຂອງການກະທຳຜິດເທື່ອກ່ອນນັ້ນ, ອາຍຸຄວາມໃນການຮ້ອງຟ້ອງກໍໃຫ້ນັບແຕ່ມື້ກະທຳຜິດເທື່ອໃໝ່ເປັນຕົ້ນໄປ. ສຳລັບກໍລະນີທີ່ໂຈະການສືບສວນ-ສອບສວນຕາມສາເຫດທີ່ໜຶ່ງຄືຜູ້ຖືກຫາໄດ້ລີ້ຊ່ອນ, ຫຼົບຫຼີກຈາກການດຳເນີນຄະດີ ຫຼື ບໍ່ຮູ້ບ່ອນຢູ່ຂອງຜູ້ກ່ຽວນັ້ນ, ອາຍຸຄວາມໃນການຮ້ອງຟ້ອງຈະບໍ່ມີມື້ສິ້ນສຸດ. ດັ່ງນັ້ນ, ການດຳເນີນຄະດີ ແລະ ອາຍຸຄວາມໃນການຮ້ອງຟ້ອງກໍຈະເລີ່ມຕົ້ນຂຶ້ນນັບແຕ່ມື້ທີ່ຜູ້ກະທຳຜິດໄດ້ເຂົ້າມາສະເໜີຕົວ ຫຼື ຖືກຈັບຕົວໄດ້ເປັນຕົ້ນໄປ.

**ຕົວຢ່າງ: ແບບພິມຄຳສັ່ງໂຈະການສືບສວນ-ສອບສວນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການ........ ເລກທີ...../ອຍກ.....

ລົງວັນທີ......./....../......

**ຄຳສັ່ງໂຈະການສືບສວນ-ສອບສວນ**

– ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 56 ຂໍ້ 7.

– ອີງຕາມ ບົດສະຫຼຸບລາຍງານຂອງພະນັກງານໄອຍະການ ສະບັບລົງວັນທີ...........

– ອີງຕາມ ສຳນວນຄະດີອາຍາເລກທີ........../ອຍກ........, ລົງວັນທີ............

**ລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ..................................................ໂຈດ.

ທ້າວ ຫຼື ນາງ....................... ອາຍຸ...........ປີ, ສັນຊາດ.......ອາຊີບ ........., ຢູ່ບ້ານ.........., ໜ່ວຍ...............ເມືອງ....................,ແຂວງ...............ຜູ້ຖືກຫາ.

ຖືກຫາວ່າ:.................................................ກົດໝາຍອາຍາມາດຕາ............

ຖືກກັກຕົວ ຫຼື ຈັບຕົວ:......................................................................

ສະຖານທີ່ກັກຂັງ: .........................................................................

ຖືກປ່ອຍຕົວພາງ:........................................................................

ຫົວໜ້າອົງການໄອຍະການປະຊາຊົນ............................ໄດ້ຄົ້ນຄວ້າສຳນວນຄະດີອາຍາດັ່ງກ່າວຢ່າງລະອຽດຖີ່ຖ້ວນແລ້ວເຫັນວ່າ ທ້າວ ຫຼື ນາງ..................(ຜູ້ຖືກຫາ) ໄດ້ເຈັບປ່ວຍໜັກຕາມການຢັ້ງຢືນຂອງຄະນະແພດ............ສະບັບເລກທີ.........ລົງວັນທີ...... ຊຶ່ງເປັນສາເຫດທີ່ພາໃຫ້ມີການໂຈະການສືບສວນ-ສອບສວນ ຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ146 ຂໍ້ 3.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນ...............ຈຶ່ງອອກຄຳສັ່ງໂຈະການສືບສວນ-ສອບສວນ.

ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

**ເຊັນ ແລະ ປະທັບຕາ**

ເມື່ອສາເຫດຂອງການໂຈະການສືບສວນ-ສອບສວນຫາກຕົກໄປ ແລະ ອາຍຸຄວາມໃນການຮ້ອງຟ້ອງຍັງບໍ່ທັນສິ້ນສຸດ, ຫົວໜ້າອົງການສືບສວນ-ສອບສວນ ຫຼື ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງສືບຕໍ່ດຳເນີນການສືບສວນ-ສອບສວນທີ່ຖືກໂຈະໄວ້ນັ້ນຄືນໃໝ່ (ມ 147 ກດຍ), ຖ້າອາຍຸຄວາມໃນການຮ້ອງຟ້ອງທາງອາຍາຫາກໝົດໄປ, ຄະດີອາຍາທີ່ໄດ້ໂຈະໄວ້ນັ້ນກໍຈະຖືກຊັດມ້ຽນ (ມ 146 ກດຍ).

### 4.3. ການຊັດມ້ຽນຄະດີ

ການຊັດມ້ຽນຄະດີອາຍາ ແມ່ນການຢຸດເຊົາການດຳເນີນຄະດີ, ໝາຍຄວາມວ່າເປັນການຢຸດຕິທຸກການເຄື່ອນໄຫວເພື່ອເກັບໂຮມຫຼັກຖານໃນຄະດີດັ່ງກ່າວຢ່າງເດັດຂາດ ແລະ ຖາວອນ, ມັນເປັນເງື່ອນໄຂທີ່ສະກັດກັ້ນ ແລະ ທັງເຮັດໃຫ້ເຈົ້າໜ້າທີ່ກ່ຽວຂ້ອງໝົດສິດອຳນາດທີ່ຈະດຳເນີນຄະດີນັ້ນ, ເຖິງແມ່ນວ່າຄະດີນັ້ນຍັງມີຢູ່ແຕ່ດຳເນີນບໍ່ໄດ້ ຫຼື ບໍ່ສາມາດດຳ

ເນີນຕໍ່ໄປໄດ້, ການຊັດມ້ຽນຄະດີມີສອງປະເພດຄື ການຊັດມ້ຽນຄະດີທາງດ້ານກົດໝາຍ ແລະ ການຊັດມ້ຽນຄະດີທາງດ້ານຫຼັກຖານ ຊຶ່ງລາຍລະອຽດຂອງແຕ່ລະປະເພດມີດັ່ງນີ້:

### 4.3.1. ການຊັດມ້ຽນທາງດ້ານກົດໝາຍ

ການຊັດມ້ຽນຄະດີທາງດ້ານກົດໝາຍ ແມ່ນການຊັດມ້ຽນຄະດີເມື່ອມີສາເຫດໃດໜຶ່ງທີ່ພາໃຫ້ການການດໍາເນີນຄະດີອາຍາຕົກໄປຄື (ມ 6 ກດຍ)

1) ຂາດເຫດການຂອງການກະທຳຜິດທາງອາຍາ;

2) ຂາດອົງປະກອບຂອງການກະທຳຜິດທາງອາຍາ;

3) ໝົດອາຍຸຄວາມໃນການຮ້ອງຟ້ອງທາງອາຍາ;

4) ມີການນິລະໂທດກຳ;

5) ມີການຕົກລົງໄກ່ເກ່ຍກັນ ໃນຄະດີທີ່ການກະທຳຜິດບໍ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ລະຫວ່າງຜູ້ຖືກເສຍຫາຍກັບຜູ້ຖືກຫາ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;

6) ຂາດການຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຫຼື ຜູ້ຖືກເສຍຫາຍ ຖອນຄຳຮ້ອງຟ້ອງໃນກໍ ລະນີການກະທຳຜິດທີ່ຈຳເປັນຕ້ອງມີຄຳຮ້ອງຟ້ອງຂອງຜູ້ຖືກເສຍຫາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;

7) ມີການກະທຳຜິດທີ່ມີຜົນເສຍຫາຍທາງດ້ານວັດຖຸ ຕໍ່າກວ່າມູນຄ່າຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ;

8) ຜູ້ກະທຳຜິດໄດ້ເສຍຊີວິດ, ຍົກເວັ້ນກໍລະນີການເສຍຊີວິດໃນເວລາດຳເນີນຄະດີຢູ່ສານ;

9) ມີຄຳສັ່ງຊັດມ້ຽນ ຫຼື ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດກ່ຽວກັບຄະດີດຽວກັນ;

10) ສຳລັບເດັກອາຍຸຕໍ່າກວ່າສິບຫ້າປີທີ່ມີພຶດຕິກຳ ຊຶ່ງເປັນອັນຕະລາຍຕໍ່ສັງຄົມນັ້ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

### 4.3.2. ການຊັດມ້ຽນຄະດີທາງດ້ານຫຼັກຖານ

ການຊັດມ້ຽນຄະດີທາງດ້ານຫຼັກຖານ ແມ່ນການຊັດມ້ຽນຄະດີໃນກໍລະນີທີ່ບໍ່ມີຫຼັກຖານຜູກມັດພຽງພໍວ່າຜູ້ຖືກຫາເປັນຜູ້ກະທຳຄວາມຜິດ (ມ 148 ວັກ 2 ກດຍ), ຜ່ານການເກັບໂຮມຫຼັກຖານເຈົ້າໜ້າທີ່ສືບສວນ-ສອບສວນ ພາຍໃນກຳນົດສອງເດືອນສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະ ສາມເດືອນສຳລັບການກະທຳຜິດໃນສະຖານຄະຣຸໂທດ, ນັບແຕ່ວັນອອກຄຳສັ່ງເປີດການສືບສວນ-ສອບສວນເປັນຕົ້ນໄປ ແລະ ຫົວໜ້າອົງການໄອຍະການໄດ້ຕໍ່ກຳນົດເວລາໃນການສືບສວນ-ສອບສວນໄດ້ອີກເທື່ອລະສອງເດືອນ, ແຕ່ລວມທັງ

ໝົດບໍ່ໃຫ້ເກີນຫົກເດືອນ ສຳລັບການກະທຳຜິດໃນສະຖານໂທສານຸໂທດ ແລະ ເທື່ອລະສາມເດືອນແຕ່ລວມທັງໝົດບໍ່ໃຫ້ເກີນໜຶ່ງປີ ສຳລັບການກະທຳຜິດໃນສະຖານຄະຣຸໂທດ (ມ 110 ກດຍ), ເມື່ອໝົດກຳນົດເວລາດັ່ງກ່າວແລ້ວ ແຕ່ຫຼັກຖານບໍ່ໜັກແໜ້ນພຽງພໍວ່າຜູ້ຖືກຫາເປັນຜູ້ກະທຳຜິດ, ທີ່ວໜ້າອົງການສືບສວນ-ສອບສວນ ຫຼື ທີ່ວໜ້າອົງການໄອຍະການຕ້ອງອອກຄຳສັ່ງຊັດມ້ຽນຄະດີ. ຖ້າຫາກຜູ້ຖືກຫາຍັງຖືກກັກຂັງພາງຢູ່ ທີ່ວໜ້າອົງການໄອຍະການຕ້ອງອອກຄຳສັ່ງປ່ອຍຕົວຜູ້ຖືກຫາໃນທັນໃດ ພ້ອມທັງສົ່ງຄືນສິ່ງຂອງຕິດຕົວທີ່ຖືກຕ້ອງຕາມກົດໝາຍລວມທັງວັດຖຸສິ່ງຂອງທີ່ໄດ້ຍຶດເປັນຂອງກາງຊຶ່ງເປັນກຳມະສິດຂອງຜູ້ກ່ຽວ.

ການຊັດມ້ຽນຄະດີອາຍາບໍ່ວ່າຈະເປັນການຊັດມ້ຽນທາງດ້ານກົດໝາຍ ຫຼື ການຊັດມ້ຽນທາງດ້ານຫຼັກຖານ, ກໍຕ້ອງມີຄຳສັ່ງທີ່ເປັນລາຍລັກອັກສອນຂອງທີ່ວໜ້າອົງການສືບສວນ-ສອບສວນ ຫຼື ຂອງທີ່ວໜ້າອົງການໄອຍະການ, ຄຳສັ່ງຊັດມ້ຽນຄະດີຕ້ອງແຈ້ງໃຫ້ຜູ້ຖືກເສຍຫາຍ ຫຼື ໂຈດທາງແພ່ງທີ່ເປັນຄູ່ຄວາມພາຍໃນກຳນົດ ສາມວັນທາງລັດຖະການນັບແຕ່ວັນອອກຄຳສັ່ງ ແລະ ພວກກ່ຽວມີສິດຂໍອຸທອນພາຍໃນກຳນົດເຈັດວັນ ນັບແຕ່ວັນຮັບຊາບຄຳສັ່ງນັ້ນເປັນຕົ້ນໄປ. ໃນການຂໍອຸທອນນັ້ນ ຖ້າຫາກເປັນຄຳສັ່ງຊັດມ້ຽນຄະດີເປັນຂອງທີ່ວໜ້າອົງການສືບສວນ-ສອບສວນ ຕ້ອງຂໍອຸທອນໄປຍັງທີ່ວໜ້າອົງການໄອຍະການຂັ້ນດຽວກັນ, ແຕ່ຖ້າຫາກເປັນຄຳສັ່ງຊັດມ້ຽນຄະດີຂອງທີ່ວໜ້າອົງການໄອຍະການຕ້ອງຂໍອຸທອນໄປຍັງທີ່ວໜ້າອົງການໄອຍະການຂັ້ນເທິງຖັດໄປ. ໃນກໍລະນີທີ່ຍັງບໍ່ພໍໃຈ ກໍມີສິດຂໍລົບລ້າງພາຍໃນກຳນົດເວລາເຈັດວັນ (ມ 148 ກດຍ).

**ຕົວຢ່າງ: ແບບພິມຄຳສັ່ງຊັດມ້ຽນຄະດີອາຍາ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການ.................. ເລກທີ......./ອຍກ..........

ລົງວັນທີ...../...../..........

**ຄຳສັ່ງຊັດມ້ຽນຄະດີອາຍາ**

- ອີງຕາມ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 56 ຂໍ້ 7.
- ອີງຕາມ ບົດສະຫຼຸບລາຍງານຂອງພະນັກງານໄອຍະການ ສະບັບລົງວັນທີ...........
- ອີງຕາມ ສຳນວນຄະດີອາຍາ ສະບັບເລກທີ..../ອຍກ...., ລົງວັນທີ.................

**ລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ..................................................ໂຈດ.

ທ້າວ ຫຼື ນາງ....................ອາຍຸ...........ປີ, ສັນຊາດ...........ອາຊີບ..........,

ຢູ່ບ້ານ........... ໜ່ວຍ.........ເມືອງ ..... ແຂວງ...................................ຜູ້ຖືກຫາ.

ຖືກຫາວ່າ:................................ກົດໝາຍອາຍາ ມາດຕາ..............................

ຖືກກັກຕົວ ຫຼື ຈັບຕົວ: ..........................................................................

ສະຖານທີ່ກັກຂັງ: ................................................................................

ຖືກປ່ອຍຕົວພາງ:.................................................................................

ຫົວໜ້າອົງການໄອຍະການປະຊາຊົນ........ໄດ້ຄົ້ນຄວ້າສຳນວນຄະດີອາຍາດັ່ງກ່າວຢ່າງລະອຽດຖີ່ຖ້ວນແລ້ວ ເຫັນວ່າ ການກະທຳຂອງ ທ້າວ ຫຼື ນາງ.................(ຜູ້ຖືກຫາ) ນັ້ນ, ຂາດອົງປະກອບການກະທຳຜິດທາງອາຍາ ຫຼື ຫຼັກຖານບໍ່ໜັກແໜ້ນ................ຈຶ່ງເປັນສາ

ເຫດພາໃຫ້ມີການຊັດມ້ຽນຄະດີຕາມກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ ປີ 2012 ມາດຕາ 148 ຂໍ້......ວັກ.......

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນ................ຈຶ່ງອອກຄຳສັ່ງຊັດມ້ຽນຄະດີດັ່ງກ່າວ.

ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຫົວໜ້າອົງການໄອຍະການປະຊາຊົນ**

**ເຊັນ ແລະ ປະທັບຕາ**

# ບົດທີ 2
# ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ

## 1. ຄວາມຮູ້ກ່ຽວກັບການສັ່ງຟ້ອງຜູ້ຖືກຫາຂຶ້ນສານ

### 1.1. ການສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍຂອງ ສປປ ລາວ

ການສັ່ງຟ້ອງຜູ້ຖືກຫາຂຶ້ນສານໃນ ສປປ ລາວ ຕ້ອງຜ່ານຂັ້ນຕອນການສືບສວນ-ສອບສວນ (ມ 49 ຂໍ້ 3 ກດຍ), ຄຳສັ່ງຟ້ອງດັ່ງກ່າວນີ້ມັນໄດ້ປ່ຽນຖານະຈາກຜູ້ຖືກຫາໃຫ້ກາຍເປັນຈຳເລີຍໃນສານ (ມ 3 ຂໍ້ 13 ກດຍ) ຖ້າບໍ່ມີຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານແລ້ວ, ສານກໍຈະບໍ່ມີສິດນຳເອົາຄະດີດັ່ງກ່າວມາຕັດສິນໂດຍລຳພັງໃຈ, ໃນຄວາມເປັນຈິງແລ້ວຢູ່ໃນຄຳສັ່ງຟ້ອງຈະບໍ່ມີການໄຈ້ແຍກ ຫຼື ຖະແຫຼງກ່ຽວກັບຄວາມຜິດຂອງຈຳເລີຍຕໍ່ສານ. ໃນເມື່ອຫົວໜ້າອົງການໄອຍະການໃນຖານະເປັນໂຈດລົງລາຍເຊັນໃນຄຳສັ່ງຟ້ອງແລ້ວ (ມ 49 ຂໍ້ 3 ກດຍ), ກໍຈະສົ່ງຄຳສັ່ງຟ້ອງພ້ອມດ້ວຍສຳນວນ ແລະ ຂອງກາງໃນຄະດີໄປໃຫ້ສານ, ໃນບາງຄະດີກໍອາດຈະມີຄຳຮ້ອງຟ້ອງຂອງຜູ້ຖືກເສັຍຫາຍ ຫຼື ໂຈດທາງແພ່ງປະກອບໄປນຳຊຶ່ງມີລາຍລະອຽດດັ່ງນີ້:

#### 1.1.1. ຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານຂອງຫົວໜ້າອົງການໄອຍະການ

ຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານນີ້ ຈະບໍ່ໄດ້ຂຽນເນື້ອໃນລາຍລະອຽດຂອງຄະດີ, ບໍ່ມີຄຳເຫັນ ຫຼື ຄຳວິນິດໄສໃດໆ. ສະນັ້ນ, ຈຶ່ງຕ້ອງມີຄຳຖະແຫຼງ ແລະ ອີງໃສ່ຄຳຖະແຫຼງເພື່ອໄຈ້ແຍກພຶດຕິກຳຂອງຜູ້ຖືກຫາ ແລະ ມາດຕາຂອງກົດໝາຍທີ່ການກະທຳນັ້ນໄດ້ລະເມີດ, ອາດເວົ້າໄດ້ວ່າເນື້ອໃນຂອງຄຳສັ່ງຟ້ອງແມ່ນຢູ່ໃນຄຳຖະແຫຼງ. ສະນັ້ນ, ທຸກຄຳສັ່ງຟ້ອງຕ້ອງມີຄຳຖະແຫຼງແນບໄປພ້ອມໆກັນ, ເພາະວ່າຄຳຖະແຫຼງແມ່ນເອກະສານທີ່ຫົວໜ້າອົງການໄອຍະການສົ່ງໄປໃຫ້ສານເພື່ອໃຊ້ເປັນບ່ອນອີງໃນການພິຈາລະນາຕັດສິນ.

ໃນເມື່ອເຫັນວ່າມີຂໍ້ມູນຫຼັກຖານຄົບຖ້ວນພຽງພໍ ແລະ ໜັກແໜ້ນ, ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານຢ່າງເປັນລາຍລັກອັກສອນ ໂດຍໄດ້ຕັ້ງຂໍ້ກ່າວຫາໃສ່ຜູ້ຖືກຫາ ຊຶ່ງມີເນື້ອໃນທີ່ສຳຄັນ ແລະ ຂາດບໍ່ໄດ້ຄືດັ່ງລຸ່ມນີ້ (ມ 154 ກດຍ) .

1) ວັນ, ເດືອນ, ປີ ແລະ ສະຖານທີ່ອອກຄຳສັ່ງຟ້ອງ;

2) ຊື່, ນາມສະກຸນ, ໜ້າທີ່ ແລະ ຕຳແໜ່ງ ພ້ອມທັງລາຍເຊັນຂອງຜູ້ອອກຄຳສັ່ງຟ້ອງ;

3) ຊື່ ແລະ ນາມສະກຸນຂອງຜູ້ຖືກຫາ, ອາຍຸ, ສັນຊາດ, ເຜົ່າ, ອາຊີບ, ເລກບັດປະຈຳຕົວ ຫຼື ສຳມະໂນຄົວ, ທີ່ຢູ່;

4) ຂໍ້ກ່າວຫາ, ວັນ, ເດືອນ, ປີ (ຖືກຈັບຕົວ, ຖືກກັກຂັງ, ປ່ອຍຕົວພາງ), ສະຖານທີ່ກັກຂັງ, ມາດຕາກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ກຳນົດໂທດທາງອາຍາ.

ຫົວໜ້າອົງການໄອຍະການຕ້ອງແຈ້ງຄໍາສັ່ງຟ້ອງໃຫ້ຜູ້ຖືກຫາ ຫຼື ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນ ຂອງຜູ່ກ່ຽວແລ້ວໃຫ້ລົງລາຍເຊັນຮັບຮູ້ພາຍໃນສາມວັນລັດຖະການ ກ່ອນການສົ່ງສໍານວນຄະດີໃຫ້ສານ. ໃນກໍລະນີທີ່ບໍ່ລົງລາຍເຊັນໃນຄໍາສັ່ງຟ້ອງກໍໃຫ້ບັນທຶກໄວ້. ໃນການສັ່ງຟ້ອງຜູ່ຖືກຫາຂຶ້ນສານຕ້ອງສົ່ງສໍານວນຄະດີ ແລະ ຂອງກາງເພື່ອໃຫ້ສານພິຈາລະນາຕາມກົດໝາຍ.

**ຕົວຢ່າງ: ແບບພິມຄໍາສັ່ງຟ້ອງຜູ່ຖືກຫາຂຶ້ນສານ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ ເລກທີ...../ອຍກ.ນວ.....

ອົງການໄອຍະການປະຊາຊົນ ລົງວັນທີ......./....../............

**ຄໍາສັ່ງຟ້ອງຜູ່ຖືກຫາຂຶ້ນສານ**

- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2009 ມາດຕາ 10 ຂໍ້ 4 ແລະ ມາດຕາ 44;
- ອີງຕາມ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 154;
- ອີງຕາມ ສໍານວນຄະດີອາຍາເລກທີ........./ອຍກ........ , ລົງວັນທີ...............

ຫົວໜ້າອົງການໄອຍະການ......................ໄດ້ຄົ້ນຄວ້າສໍານວນຄະດີອາຍາ ສະບັບເລກທີ............./ອຍກ, ລົງວັນທີ.............ຢ່າງລະອຽດຖີ່ຖ້ວນແລ້ວເຫັນວ່າມີຂໍ້ມູນຫຼັກຖານພຽງພໍຮັດກຸມວ່າທ້າວ ຫຼື ນາງ............. ......................................., ອາຍຸ..............ປີ, ສັນຊາດ......................, ອາຊີບ........................, ຢູ່ໜ່ວຍ..........., ບ້ານ................. ເມືອງ............................., ແຂວງ ....................................

ຖືກຫາວ່າ: ........................ ກົດໝາຍອາຍາມາດຕາ ...........ວັກ.......ຂໍ້.........

ຖືກກັກຕົວ ຫຼື ຖືກຈັບຕົວ: ວັນທີ.....................................................

ສະຖານທີ່ກັກຂັງ: ...................................................................

ຖືກປ່ອຍຕົວພາງ: ວັນທີ .................... ເປັນຜູ້ກະທຳຜິດຕາມຂໍ້ກ່າວຫາແທ້.

ດັ່ງນັ້ນ, ຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ຈຶ່ງສັ່ງຟ້ອງຜູ້ຖືກຫາດັ່ງກ່າວຂຶ້ນສານຂັ້ນຕົ້ນ...............ເພື່ອພິຈາລະນາຕັດສິນຕາມກົດໝາຍ.

**ຫົວໜ້າອົງການໄອຍະການປະຊາຊົນ**

**ເຊັນ ແລະ ປະທັບຕາ**

ໄດ້ແຈ້ງຄຳສັ່ງສະບັບນີ້

ໃຫ້ຜູ້ຖືກຫາຊາບໃນວັນທີ .........................

ເຊັນ ແລະ ແປະໂປ້ມື

### 1.1.2. ຄຳຖະແຫຼງຂອງຫົວໜ້າອົງການໄອຍະການໃນກໍລະນີທີ່ບໍ່ມີໂຈດທາງແພ່ງ

ຄຳຖະແຫຼງ ແມ່ນຄຳເຫັນຂອງຫົວໜ້າອົງການໄອຍະການທີ່ໄຈ້ແຍກການກະທຳຜິດຂອງຈຳເລີຍຕໍ່ສານ ໂດຍຊີ້ໃຫ້ເຫັນສີ່ອົງປະກອບຂອງການກະທຳຜິດທາງອາຍາຄື ດ້ານວັດຖຸກຳ, ດ້ານພາວະວິໄສ, ດ້ານອັດຕະວິໄສ ແລະ ເຈົ້າກຳ, ສາເຫດທີ່ພາໃຫ້ຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາ, ເງື່ອນໄຂອື່ນທີ່ມີຄວາມສຳຄັນສຳລັບຄະດີ, ມາດຕາກົດໝາຍອາຍາ, ກົດໝາຍອື່ນທີ່ກຳນົດໂທດທາງອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ (ມ 156 ກດຍ) ເພື່ອໃຫ້ສານໄດ້ຮູ້, ໄດ້ເຫັນຂໍ້ເທັດຈິງ, ຂໍ້ກົດໝາຍ ແລະ ຄວາມເປັນອັນຕະລາຍຕໍ່ສັງຄົມຂອງພຶດຕິກຳທີ່ຈຳເລີຍໄດ້ກະທຳ, ການຂຽນຄຳຖະແຫຼງໃນຄະດີອາຍາເປັນຂັ້ນຕົ້ນນັ້ນ ຕ້ອງປະຕິບັດຕາມຂັ້ນຕອນ,ໂຄງປະກອບສ້າງ ແລະ ມີເນື້ອໃນຕົ້ນຕໍທີ່ສຳຄັນຄືດັ່ງນີ້:

1) ພາກຕົ້ນ;
2) ພາກເນື້ອຄະດີ;
3) ພາກຄຳເຫັນ;
4) ພາກສະເໜີ.

## ຕົວຢ່າງ: ແບບພິມຄຳຖະແຫຼງຄະດີອາຍາຂັ້ນຕົ້ນໃນກໍລະນີທີ່ບໍ່ມີໂຈດທາງແພ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ  ເອກະລາດ ປະຊາທິປະໄຕ  ເອກະພາບ  ວັດທະນະຖາວອນ

ອົງການໄອຍະການປະຊາຊົນ.........                                    ເລກທີ......../ອຍກ......

ອົງການໄອຍະການປະຊາຊົນເຂດ...............                          ທີ່........, ລົງວັນທີ............

### ຄຳຖະແຫຼງ

- ອີງຕາມ  ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ  ສະບັບປັບປຸງ ປີ 2009 ມາດຕາ 34 ຂໍ້ 3 ແລະ 45;
- ອີງຕາມ  ກົດໝາຍວ່າດວ້ຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 156;
- ອີງຕາມ  ສຳນວນຄະດີອາຍາ ສະບັບເລກທີ....../....ອຍກ, ລົງວັນທີ............

### ລະຫວ່າງ

ຫົວໜ້າອົງໄອຍະການປະຊາຊົນເຂດ......................................................ໂຈດ.

ທ້າວ ຫຼື ນາງ......................................., ອາຍຸ.............ປີ, ສັນຊາດ................, ອາຊີບ.................., ປັດຈຸບັນຢູ່ບ້ານ......................., ໜ່ວຍ........................., ເຮືອນເລກທີ................, ເມືອງ.......................ແຂວງ........................................ຈຳເລີຍ.

ທ້າວ ຫຼື ນາງ..........................................., ອາຍຸ......ປີ, ສັນຊາດ.................., ອາຊີບ......................., ປັດຈຸບັນຢູ່ບ້ານ......................., ໜ່ວຍ..............., ເຮືອນເລກທີ.................., ເມືອງ...................., ແຂວງ.................................................ທະນາຍຄວາມ / ຜູ້ປົກປ້ອງ.

ຖືກຫາວ່າ:...........................................................................

ຖືກກັກຕົວ ຫຼື ຈັບຕົວ: ວັນທີ.....................................................

ສະຖານທີ່ກັກຂັງ:.....................................................................

ຖືກປ່ອຍຕົວພາງ: ວັນທີ .........................................................

## ເນື້ອຄະດີ

ໃນພາກເນື້ອຄະດີໃຫ້ຂຽນການກໍານົດເຫດການ ຫຼື ເນື້ອໃນທີ່ເກີດຂຶ້ນມີດັ່ງນີ້:

1) ມີເຫດການຫຍັງເກີດຂຶ້ນ;

2) ເຫດການນັ້ນເກີດຂຶ້ນໃນເວລາໃດ (ເວລາ, ວັນ, ເດືອນ, ປີ);

3) ເຫດການເກີດຂຶ້ນຢູ່ສະຖານທີ່ໃດ;

4) ໃຜເປັນເຈົ້າກໍາ;

5) ພາຫະນະ ຫຼື ອຸປະກອນທີ່ໃຊ້ເຂົ້າໃນການກະທໍາຜິດ;

6) ເຫດການດັ່ງກ່າວໄດ້ສ້າງຄວາມເສັຍຫາຍ ແລະ ມີຄວາມເປັນອັນຕະລາຍແນວໃດ.

ໃນຄໍ່າຄືນຂອງວັນສຸກ, ທີ 2 ກຸມພາ 2012 ເວລາ 21 ໂມງ ທ້າວ ເຫຼືອງດອກຄູນ ໄດ້ກໍາແກ້ວເບຍທີ່ຍັງບໍ່ທັນໄດ້ໄຂຕີຫົວ ທ້າວ ແດງດອກຜາງ ເປັນເຫດໃຫ້ຫົວແຕກ ແລະ ສະຫຼົບຢູ່ໃນຮ້ານກິນດື່ມດອກຄູນ, ບ້ານບໍ່ເພັດ, ເມືອງທັບທິມ, ແຂວງດວງເດືອນ (ນາມສົມມຸດ).

### ຄໍາເຫັນ

ຜ່ານການກວດກາ, ຄົ້ນຄວ້າບັນດາຂໍ້ມູນຫຼັກຖານ ແລະ ເອກະສານອື່ນ ທີ່ມີໃນສໍານວນຄະດີຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສແລ້ວ.

ເຫັນວ່າ.................................................ໃນພາກຄໍາເຫັນໃຫ້ຂຽນກ່ຽວກັບອົງປະກອບຂອງການກະທໍາຜິດທາງອາຍາ, ສາເຫດທີ່ພາໃຫ້ຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາ (ຖ້າມີ) ມີດັ່ງນີ້:

**ອົງປະກອບຂອງການກະທໍາຜິດທາງອາຍາ:**

– **ດ້ານວັດຖຸກໍາ**: ຕ້ອງຢັ້ງຢືນໃຫ້ເຫັນວ່າພຶດຕິກໍາ ຫຼື ການກະທໍາຜິດຕໍ່ກົດໝາຍອາຍາໃນໝວດ............ ມາດຕາ................. ແລະ ການກະທໍາຜິດແນໃສ່ທໍາລາຍເຊັ່ນ ຫົວແຕກເປັນການແຕະຕ້ອງເຖິງສຸຂະພາບຮ່າງກາຍສ່ວນຕົວບຸກຄົນ. (ໃຫ້ຂຽນເນື້ອໃນລະອຽດຂອງໝວດ ແລະ ມາດຕາຂອງກົດໝາຍອາຍາໃສ່ຢ່າງຄົບ ຖ້ວນ).

– **ດ້ານພາວະວິໄສ:** ຕ້ອງຊີ້ໃຫ້ເຫັນວ່າພຶດຕິກໍານັ້ນໄດ້ມີຄວາມເປັນອັນຕະລາຍ ແລະ ສ້າງຄວາມເສັຍຫາຍດັ່ງກ່າວ, ສາຍພົວພັນລະຫວ່າງເຫດ ແລະ ຜົນເສັຍຫາຍທີ່ເກີດຂຶ້ນວັນເວລາ, ສະຖານທີ່, ພາຫະນະ ແລະ ອຸປະກອນທີ່ໃຊ້ເຂົ້າໃນການກະທໍາຜິດ.

– **ດ້ານອັດຕະວິໄສ:** ຕ້ອງຢັ້ງຢືນໃຫ້ເຫັນເຖິງຄວາມຮູ້ສຶກນຶກຄິດຂອງເຈົ້າກໍາວ່າພຶດຕິກໍາ ຫຼື ການກະທໍາຜິດເປັນຄວາມຜິດໂດຍເຈດຕະນາຊົ່ວ (ເຈດຕະນາໂດຍທາງກົງ ຫຼື

ເຈດຕະນາໂດຍທາງອ້ອມ) ຫຼື ການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ (ການປະໝາດ ຫຼື ເລີ່ນເລີ້).

– **ເຈົ້າກຳ:** ທົ່ວໄປ ຫຼື ພິເສດ, ສະເພາະ ອາຍຸກະສຽນທາງອາຍາແຕ່ 15 ປີຂຶ້ນໄປ ແລະ ມີສະຕິສຳປະຊັນຍະ.

ສາເຫດທີ່ພາໃຫ້ຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາຕ້ອງຢັ້ງຢືນໃຫ້ເຫັນໄດ້ວ່າ ພຶດຕິກຳ ຫຼື ການກະທຳມີສາເຫດໃດແດ່ທີ່ພາໃຫ້ຫຼຸດຜ່ອນ ແລະ ເພີ່ມຄວາມຮັບຜິດຊອບທາງອາຍາຕາມທີ່ກົດໝາຍອາຍາໄດ້ກຳນົດໄວ້.

**ດ້ວຍເຫດນີ້**

ຫົວໜ້າອົງການໄອຍະການປະຊາຊົນເຂດ, ແຂວງ.........................ຖະແຫຼງຕໍ່ຄະນະສານອາຍາຂັ້ນຕົ້ນ ຂອງສານ............... ພິຈາລະນາຕັດສິນຕາມກົດໝາຍ.

**ຫົວໜ້າອົງການໄອຍະການປະຊາຊົນເຂດ/ແຂວງ.........**

**ເຊັນ ແລະ ປະທັບຕາ**

**ຕົວຢ່າງ: ຄຳຖະແຫຼງຄະດີອາຍາຂັ້ນຕົ້ນໃນກໍລະນີທີ່ບໍ່ມີໂຈດທາງແພ່ງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນ........... ເລກທີ......./ອຍກ....

ອົງການໄອຍະການປະຊາຊົນເຂດ..... ນະຄອນຫຼວງວຽງຈັນ, ລົງວັນທີ...........

**ຄຳຖະແຫຼງ**

– ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ສະບັບປັບປຸງປີ 2009 ມາດຕາ 34 ຂໍ້ 3 ແລະ 45;
– ອີງຕາມ ກົດໝາຍວ່າດວ້ຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 156;
– ອີງຕາມ ສຳນວນຄະດີອາຍາ ເລກທີ 545/ອຍກ....., ລົງວັນທີ ..................

## ລະຫວ່າງ

ຫົວໜ້າອົງໄອຍະການປະຊາຊົນເຂດ.....................................................ໂຈດ.

ທ້າວ ຄ ອາຍຸ 27 ປີ, ສັນຊາດລາວ, ອາຊີບຫວ່າງງານ, ປັດຈຸບັນຢູ່ບ້ານໜອງພະຍາ, ໜ່ວຍ 888, ເຮືອນເລກທີ 789, ເມືອງໄຊທານີ, ນະຄອນຫຼວງວຽງຈັນ.................ຈຳເລີຍ.

ນາງ ງ ອາຍຸ 45 ປີ, ສັນຊາດລາວ, ອາຊີບທະນາຍຄວາມ, ປັດຈຸບັນຢູ່ບ້ານຍອດຝົນ, ໜ່ວຍ 333, ເຮືອນເລກທີ 222, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ......................................ທະນາຍຄວາມ.

ຖືກຫາວ່າ: ທຳຮ້າຍຮ່າງກາຍ.

ຖືກຈັບຕົວ ແລະ ກັກຕົວ: ວັນທີ 3 ກຸມພາ 2012.

ສະຖານທີ່ກັກຂັງ: ຄ້າຍຄຸມຂັງ ປກສ ເມືອງໄຊທານີ.

ຖືກປ່ອຍຕົວພາງ: ວັນທີ 12 ເມສາ 2012.

## ເນື້ອຄະດີ

ໃນຄືນຂອງວັນສຸກ, ທີ 2 ກຸມພາ 2012 ທ້າວ ກ, ອາຍຸ 25 ປີ, ສັນຊາດລາວ, ອາຊີບພະນັກງານ, ປັດຈຸບັນຢູ່ບ້ານບໍ່ເພັດ, ໜ່ວຍ 06, ເຮືອນເລກທີ 123, ເມືອງທັບທິມ, ແຂວງດວງເດືອນ ແລະ ນາງ ຂ, ອາຍຸ 20 ປີ, ສັນຊາດລາວ, ອາຊີບນັກຮຽນ, ປັດຈຸບັນຢູ່ບ້ານດຽວກັນ, ທັງສອງຂີ່ລົດຕູ້ຍີ່ຫໍ້ ຮຸນໄດສະຕາແລກ, ໝາຍເລກທະບຽນ ກກ 9999 ຊຶ່ງຂັບຂີ່ໂດຍທ້າວ ກ ມານັ່ງດື່ມເບຍຢູ່ທີ່ຮ້ານກິນດື່ມດອກຄູນ ແລະ ດື່ມເບຍລາວໝົດ 4 ແກ້ວ, ຮອດເວລາ 21: 00 ໂມງ ຂອງວັນດຽວກັນ, ທ້າວ ຄ ອາຍຸ 27 ປີ, ສັນຊາດລາວ, ອາຊີບຫວ່າງງານ, ປັດຈຸບັນຢູ່ບ້ານດຽວກັນໄດ້ຍ່າງເຂົ້າມາ ແລະ ມີປາກສຽງກັບ ທ້າວ ກ ຍ້ອນຜູ່ກ່ຽວຫຼົງມັກນາງ ຂ, ແຕ່ຝ່າຍຍິງຊ້ຳພັດມັກຮັກ ທ້າວ ກ, ດ້ວຍຄວາມໂມໂຫ ແລະ ຫຶງຫວງ ທ້າວ ຄ ຈຶ່ງກຳແກ້ວເບຍທີ່ຍັງບໍ່ທັນໄດ້ໄຂຕີຫົວ ທ້າວ ກ, ເປັນເຫດໃຫ້ຫົວແຕກ ແລະ ສະຫຼົບຄາທີ່, ແລ້ວຜູ່ກ່ຽວກໍຫຼົບໜີໄປ.

## ຄຳເຫັນ

ຜ່ານການກວດກາ, ຄົ້ນຄວ້າບັນດາຂໍ້ມູນຫຼັກຖານ ແລະ ເອກະສານອື່ນທີ່ມີໃນສຳນວນຄະດີຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສແລ້ວ.

ເຫັນວ່າ ການກະທຳຂອງທ້າວ ຄ (ຈຳເລີຍ) ເປັນການກະທຳທີ່ແຕະຕ້ອງຕໍ່ກົດໝາຍອາຍາ ໃນໝວດທີ 2 ວ່າດ້ວຍການກະທຳຜິດຕໍ່ຊີວິດ, ສຸກຂະພາບ ແລະ ກຽດສັກສີຂອງບຸກຄົນ. ຕາມກົດໝາຍອາຍາ ສະບັບປັບປຸງປີ 2005 ມາດຕາ 90 ວັກ 2 ໃນສະຖານການທຳຮ້າຍຮ່າງກາຍ, ໃນກໍລະນີທີ່ມີການຫຸ້ມຕີ ຫຼື ໃນກໍລະນີທີ່ການກະທຳຜິດດັ່ງກ່າວຫາກໄດ້ເຮັດໃຫ້ມີບາດເຈັບສາຫັດ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງປີ ຫາ ຫ້າປີ ແລະ ຈະຖືກປັບໃໝແຕ່ 500.000 ກີບ ຫາ 1.500.000 ກີບ.

ເຫັນວ່າ ການກະທຳຂອງທ້າວ ຄ (ຈຳເລີຍ) ໃນຄັ້ງວັນທີ 2 ກຸມພາ 2012 ໄດ້ສ້າງຄວາມເປັນອັນຕະລາຍໃຫ້ແກ່ສັງຄົມ ແລະ ສ້າງຄວາມເສັຍຫາຍໃຫ້ແກ່ສຸຂະພາບຮ່າງກາຍຂອງທ້າວ ກ, ຊຶ່ງສະແດງອອກໂດຍການທີ່ ທ້າວ ຄ ໃຊ້ແກ້ວເບຍເປັນອາວຸດຕີຫົວທ້າວ ກ ແຕກ ແລະ ສະຫຼົບຄາທີ, ທາງເຈົ້າໜ້າທີ່ກໍໄດ້ລົງກວດກາ ແລະ ເກັບແກ້ວເບຍໄດ້ໃນສະຖານທີ່ເກີດເຫດ, ອີງຕາມຜົນຂອງການພິສູດລາຍມືຂອງພະແນກພິສູດຫຼັກຖານກະຊວງປ້ອງກັນຄວາມສະຫງົບສະບັບເລກທີ 111/ປກສ..., ລົງວັນທີ 29 ກັນຍາ 2012 ກໍໄດ້ ຢັ້ງຢືນວ່າລາຍນິ້ວມືທີ່ເກັບໄດ້ຈາກຄໍແກ້ວເບຍກັບລາຍມືຂອງ ທ້າວ ຄ ນັ້ນ ແມ່ນລາຍມືອັນດຽວກັນ.

ເຫັນວ່າ ທ້າວ ຄ (ຈຳເລີຍ) ໄດ້ເຈດຕະນາທຳຮ້າຍຮ່າງກາຍທ້າວ ກ ແທ້, ຊຶ່ງສະແດງອອກທີ່ (ຈຳເລີຍ) ໄດ້ໃຊ້ແກ້ວເບຍເປັນອາວຸດໃນການກະທຳຜິດໃນຄັ້ງນີ້;

ເຫັນວ່າ ທ້າວ ຄ (ຈຳເລີຍ) ມີອາຍຸກະສຽນທາງອາຍາ ແລະ ມີສະຕິຊຳປະຊັນຍະສາມາດຮູ້ ແລະ ຈຳແນກໄດ້ການກະທຳຂອງຕົນເປັນການກະທຳຜິດຕໍ່ກົດໝາຍອາຍາ;

ເຫັນວ່າ ທ້າວ ຄ (ຈຳເລີຍ) ໄດ້ກະທຳຜິດຄັ້ງໜຶ່ງຄັ້ງດຽວ, ຍ້ອນຄວາມໂມໂຫ, ຫຶງຫວງ ແລະ ຈິງໃຈຮັບສາລະພາບ. ຈຶ່ງເປັນສາເຫດທີ່ພາໃຫ້ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາຕາມກົດໝາຍອາຍາ ສະບັບປັບປຸງປີ 2005 ມາດຕາ 40 ຂໍ້ 8, 9.

## ດ້ວຍເຫດນີ້

ຫົວໜ້າອົງການໄອຍະການປະຊາຊົນເຂດ 1 ແຂວງ, ນະຄອນ............. ຖະແຫຼງຕໍ່ຄະນະສານອາຍາຂອງສານປະຊາຊົນເຂດ 1 ຂັ້ນຕົ້ນ ແຂວງ, ນະຄອນ.................. ພິຈາລະນາຕັດສິນຕາມກົດໝາຍ.

**ຫົວໜ້າອົງການໄອຍະການປະຊາຊົນເຂດ 1**

**ເຊັນ ແລະ ປະທັບຕາ**

### 1.1.3. ຄຳຖະແຫຼງຂອງຫົວໜ້າອົງການໄອຍະການໃນກໍລະນີທີ່ມີໂຈດທາງແພ່ງ

ເມື່ອຫົວໜ້າອົງການໄອຍະການໄດ້ຮັບເອົາບຸກຄົນຜູ້ຖືກເສຍຫາຍ ຫຼື ເຈົ້າຂອງຄຳຮ້ອງຟ້ອງຂໍໃຫ້ໃຊ້ແທນຄ່າເສຍຫາຍເຂົ້າເປັນໂຈດທາງແພ່ງແລ້ວ, ຢູ່ໃນຄຳຖະແຫຼງຂຶ້ນສານກໍຕ້ອງໄດ້ລະບຸ ຊື່ນາມສະກຸນ ແລະ ລາຍລະອຽດຂອງບຸກຄົນທີ່ເປັນໂຈດທາງແພ່ງໄປພ້ອມກັນດ້ວຍ. ຢູ່ໃນຄຳຖະແຫຼງກໍຕ້ອງໄຈ້ແຍກການກະທຳຜິດຂອງຈຳເລີຍຕໍ່ສານ ໂດຍຊີ້ໃຫ້ເຫັນສີ່ອົງປະກອບຂອງການກະທຳຜິດທາງອາຍາ, ສາເຫດທີ່ພາໃຫ້ຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາ, ເງື່ອນໄຂອື່ນທີ່ມີຄວາມສຳຄັນສຳລັບຄະດີ, ມາດຕາກົດໝາຍອາຍາ, ກົດໝາຍອື່ນທີ່ກຳນົດໂທດທາງອາຍາ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ໂດຍປະຕິບັດຄືກັນກັບຄຳຖະແຫຼງໃນກໍລະນີທີ່ບໍ່ໂຈດທາງແພ່ງທຸກຢ່າງ, ຈະແຕກຕ່າງກັນຢູ່ໃນລາຍລະອຽດຂອງເນື້ອໃນຄຳຖະແຫຼງ ແລະ ຂໍ້ສະເໜີເທົ່ານັ້ນ, ໂດຍຄຳຖະແຫຼງຕໍ່ສານ ໃນກໍລະນີທີ່ມີຄຳຮ້ອງຂໍຄ່າເສຍຫາຍ ຫຼື ຄ່າທົດແທນຂອງຜູ້ຖືກເສຍຫາຍ ຫຼື ໂຈດທາງແພ່ງນັ້ນ, ຫົວໜ້າອົງການໄອຍະການກໍຈະຄົ້ນຄວ້າພິຈາລະນາວ່າ ຜູ້ກ່ຽວມີຄວາມສາມາດທາງດ້ານການປະພຶດ ຫຼື ບໍ່, ບໍ່ເປັນບຸກຄົນທີ່ຖືກລົ້ມລະລາຍ ຫຼື ບໍ່, ພ້ອມທັງລາຍລະອຽດຂອງໂຈດທາງແພ່ງ, ຜູ້ຕາງໜ້າ ຫຼື ທະນາຍຄວາມ ຫຼື ຜູ້ປົກປ້ອງຂອງຜູ້ກ່ຽວ, ຕະຫຼອດຮອດຄ່າເສຍຫາຍທາງແພ່ງທີ່ເກີດຈາກຄວາມຜິດທາງອາຍາ, ມູນຄ່າທີ່ຜູ້ກ່ຽວໄດ້ຮ້ອງຂໍມາກໍຕ້ອງໄດ້ຄົ້ນຄວ້າ ແລະ ພິຈາລະນາຕາມກົດໝາຍວ່າດ້ວຍຂໍ້ຜູກພັນນອກສັນຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ, ເພື່ອຖະແຫຼງໃຫ້ສານຕັດສິນຢ່າງຖືກຕ້ອງຕາມກົດໝາຍ ແລະ ຍຸຕິທຳ.

## ຕົວຢ່າງ: ແບບພິມຄຳຖະແຫຼງຄະດີອາຍາຂັ້ນຕົ້ນໃນກໍລະນີທີ່ມີໂຈດທາງແພ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນແຂວງ, ນະຄອນ ເລກທີ ......../ອຍກ......
ອົງການໄອຍະການປະຊາຊົນ........... ທີ່............, ລົງວັນທີ ............

### ຄຳຖະແຫຼງ

– ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ສະບັບປັບປຸງປີ 2009 ມາດຕາ 34 ຂໍ້ 3 ແລະ 45;
– ອີງຕາມ ກົດໝາຍວ່າດວ້ຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 156;
– ອີງຕາມ ສຳນວນຄະດີອາຍາ ເລກທີ ............/ອຍກ............, ລົງວັນທີ.........

### ລະຫວ່າງ

ຫົວໜ້າອົງໄອຍະການປະຊາຊົນເຂດ..................................................ໂຈດ

ທ້າວ ຫຼື ນາງ............................................, ອາຍຸ.........ປີ, ສັນຊາດ.........., ອາຊີບ............, ປັດຈຸບັນຢູ່ບ້ານ............, ໜ່ວຍ............, ເຮືອນເລກທີ............, ເມືອງ................, ແຂວງ............................................................ໂຈດທາງແພ່ງ;

ທ້າວ ຫຼື ນາງ.............................., ອາຍຸ.............ປີ, ສັນຊາດ........., ອາຊີບ........................, ປັດຈຸບັນຢູ່ບ້ານ........, ໜ່ວຍ........, ເຮືອນເລກທີ.............. ເມືອງ...................., ແຂວງ.............................ຜູ່ຕາງໜ້າ / ທະນາຍຄວາມ / ຜູ່ປົກປ້ອງ.

ທ້າວ ຫຼື ນາງ.................., ອາຍຸ.............ປີ, ສັນຊາດ................, ອາຊີບ.......... ປັດຈຸບັນຢູ່ບ້ານ.............., ໜ່ວຍ............, ເຮືອນເລກທີ..............,ເມືອງ.............. ແຂວງ..........................................................................................ຈຳເລີຍ.

ທ້າວ ຫຼື ນາງ....................................., ອາຍຸ........ປີ, ສັນຊາດ.................., ອາຊີບ......................., ປັດຈຸບັນຢູ່ບ້ານ......................., ໜ່ວຍ.............., ເຮືອນເລກທີ.................., ເມືອງ..............., ແຂວງ.................... ທະນາຍຄວາມ / ຜູ່ປົກປ້ອງ.

ຖືກຫາວ່າ:........................................................................................

ຖືກກັກຕົວ ຫຼື ຈັບຕົວ: ວັນທີ.....................................................

ສະຖານທີ່ກັກຂັງ:...........................................................................

ຖືກປ່ອຍຕົວພາງ: ວັນທີ .........................................................

## ເນື້ອຄະດີ

ໃນພາກເນື້ອຄະດີໃຫ້ຂຽນການກໍານົດເຫດການ ຫຼື ເນື້ອໃນທີ່ເກີດຂຶ້ນໂດຍຫຍໍ້ມີດັ່ງນີ້:

1) ມີເຫດການຫຍັງເກີດຂຶ້ນ;

2) ເຫດການນັ້ນເກີດຂຶ້ນໃນເວລາໃດ (ເວລາ, ວັນ, ເດືອນ, ປີ);

3) ເຫດການເກີດຂຶ້ນຢູ່ສະຖານທີ່ໃດ;

4) ໃຜເປັນເຈົ້າກໍາ;

5) ພາຫະນະ ຫຼື ອຸປະກອນທີ່ໃຊ້ເຂົ້າໃນການກະທໍາຜິດ;

6) ເຫດການດັ່ງກ່າວໄດ້ສ້າງຄວາມເສັຍຫາຍ ແລະ ມີຄວາມເປັນອັນຕະລາຍແນວໃດ.

## ຄໍາເຫັນ

ຜ່ານການກວດກາ, ຄົ້ນຄວ້າ ບັນດາຂໍ້ມູນຫຼັກຖານ ແລະ ເອກະສານອື່ນ ທີ່ມີໃນສໍານວນຄະດີ ຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສແລ້ວ.

ເຫັນວ່າ........................................ ພາກຄໍາເຫັນໃຫ້ຂຽນກ່ຽວກັບອົງປະກອບຂອງການກະທໍາ ຜິດທາງອາຍາ, ສາເຫດທີ່ພາໃຫ້ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາ ( ຖ້າມີ ) ແລະ ການໃຊ້ແທນຄ່າເສັຍຫາຍມີດັ່ງນີ້ :

**ອົງປະກອບຂອງການກະທໍາຜິດທາງອາຍາ:**

– **ດ້ານວັດຖຸກໍາ**: ຕ້ອງຢັ້ງຢືນໃຫ້ເຫັນວ່າພຶດຕິກໍາ ຫຼື ການກະທໍາຜິດຕໍ່ກົດໝາຍອາຍາໃນໝວດ ................, ມາດຕາ............ ແລະ ການກະທໍາຜິດແນໃສ່ທໍາລາຍ ເຊັ່ນ ຫົວແຕກເປັນການແຕະຕ້ອງເຖິງສຸຂະພາບຮ່າງກາຍສ່ວນຕົວບຸກຄົນ. (ໃຫ້ຂຽນເນື້ອໃນລະອຽດຂອງໝວດ ແລະ ມາດຕາຂອງກົດໝາຍອາຍາໃສ່ຢ່າງຄົບຖ້ວນ).

– **ດ້ານພາວະວິໄສ:** ຕ້ອງຊີ້ໃຫ້ເຫັນວ່າພຶດຕິກໍານັ້ນໄດ້ມີຄວາມເປັນອັນຕະລາຍ ແລະ ສ້າງຄວາມເສັຍຫາຍດັ່ງກ່າວ, ສາຍພົວພັນລະຫວ່າງເຫດ ແລະ ຜົນເສັຍຫາຍທີ່ເກີດຂຶ້ນ, ວັນເວລາ, ສະຖານທີ່, ພາຫະນະ ແລະ ອຸປະກອນທີ່ໃຊ້ເຂົ້າໃນການກະທໍາຜິດ.

– **ດ້ານອັດຕະວິໄສ:** ຕ້ອງຢັ້ງຢືນໃຫ້ເຫັນເຖິງຄວາມຮູ້ສຶກນຶກຄິດຂອງເຈົ້າກໍາວ່າພຶດຕິກໍາ ຫຼື ການກະທໍາຜິດເປັນຄວາມຜິດໂດຍເຈດຕະນາຊົ່ວ ( ເຈດຕະນາໂດຍທາງກົງ ຫຼື

ເຈດຕະນາໂດຍທາງອ້ອມ ) ຫຼື ການກະທຳຜິດດ້ວຍຄວາມບໍ່ລະມັດລະວັງ (ການປະໝາດ ຫຼື ເລີ່ນເລີ້).

– **ເຈົ້າກາ:** ທົ່ວໄປ ຫຼື ພິເສດ, ສະເພາະ, ອາຍຸກະສຽນທາງອາຍາແຕ່ 15 ປີຂຶ້ນໄປ ແລະ ມີສະຕິສຳປະຊັນຍະ.

ສາເຫດທີ່ພາໃຫ້ຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາຕ້ອງຢັ້ງຢືນໃຫ້ເຫັນໄດ້ວ່າ ພຶດຕິກຳ ຫຼື ການກະທຳມີສາເຫດໃດແດ່ທີ່ພາໃຫ້ຫຼຸດຜ່ອນ ແລະ ເພີ່ມຄວາມຮັບຜິດຊອບທາງອາຍາ ຕາມທີ່ກົດໝາຍອາຍາໄດ້ກຳນົດໄວ້.

ການໃຊ້ແທນຄ່າເສັຍຫາຍ ຕ້ອງຢັ້ງຢືນໃຫ້ໄດ້ວ່າການໃຊ້ແທນຄ່າເສັຍຫາຍຕາມຂໍ້ມູນຫຼັກຖານຕົວຈິງຈາກພຶດຕິກຳ ຫຼື ການກະທຳຜິດຂອງຈຳເລີຍທີ່ໄດ້ກໍ່ຂຶ້ນ.

**ດ້ວຍເຫດນີ້**

ຫົວໜ້າອົງການໄອຍະການປະຊາຊົນເຂດ...........................ຖະແຫຼງຕໍ່ຄະນະສານອາຍາຂັ້ນຕົ້ນ ຂອງສານ............... ພິຈາລະນາຕັດສິນຕາມກົດໝາຍ

**ຫົວໜ້າອົງການໄອຍະການປະຊາຊົນເຂດ**

**ເຊັນ ແລະ ປະທັບຕາ**

**ຕົວຢ່າງ: ຄຳຖະແຫຼງຄະດີອາຍາຂັ້ນຕົ້ນໃນກໍລະນີທີ່ມີໂຈດທາງແພ່ງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ເລກທີ........../ອຍກ.ຂ.......

ອົງການໄອຍະການປະຊາຊົນເຂດ..............ທີ່ນະຄອນຫຼວງວຽງຈັນ, ລົງວັນທີ.................

**ຄຳຖະແຫຼງ**

– ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ສະບັບປັບປຸງປີ 2009 ມາດຕາ 34 ຂໍ້ 3 ແລະ 45;
– ອີງຕາມ ກົດໝາຍວ່າດວ້ຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ມາດຕາ 156;
– ອີງຕາມ ສຳນວນຄະດີອາຍາ ເລກທີ 545/ອຍກ............, ລົງວັນທີ ...............

**ລະຫວ່າງ**

ຫົວໜ້າອົງໄອຍະການປະຊາຊົນເຂດ 1 ...............................................ໂຈດ

ທ້າວ ກ ອາຍຸ 25 ປີ, ສັນຊາດລາວ, ອາຊີບພະນັກງານ, ປັດຈຸບັນຢູ່ບ້ານໜອງພະຍາ, ໜ່ວຍ 06, ເຮືອນເລກທີ 123, ເມືອງໄຊທານີ, ນະຄອນຫຼວງວຽງຈັນ.............. ...........................................................................................ໂຈດທາງແພ່ງ.

ທ້າວ ງ ອາຍຸ 54 ປີ, ສັນຊາດລາວ, ອາຊີບທະນາຍຄວາມ, ປັດຈຸບັນຢູ່ບ້ານຕາກແດດ, ໜ່ວຍ 999, ເຮືອນເລກທີ 999, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ......... ........... .............................................................................ທະນາຍຄວາມ.

ທ້າວ ຄ ອາຍຸ 27 ປີ, ສັນຊາດລາວ, ອາຊີບຫວ່າງງານ, ປັດຈຸບັນຢູ່ບ້ານໜອງພະຍາ, ໜ່ວຍ 888, ເຮືອນເລກທີ 789, ເມືອງໄຊທານີ, ນະຄອນຫລວງວຽງຈັນ................ຈຳເລີຍ

ນາງ ຈ ອາຍຸ 45 ປີ, ສັນຊາດລາວ, ອາຊີບທະນາຍຄວາມ, ປັດຈຸບັນຢູ່ບ້ານຍອດຝົນ, ໜ່ວຍ 333, ເຮືອນເລກທີ 222, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ................ ...............................................................................ທະນາຍຄວາມ.

ຖືກຫາວ່າ: ທຳຮ້າຍຮ່າງກາຍ.

ຖືກຈັບຕົວ ແລະ ກັກຕົວ:  ວັນທີ 3 ກຸມພາ 2012.

ສະຖານທີ່ກັກຂັງ:  ຄ້າຍຄຸມຂັງ ປກສ ເມືອງໄຊທານີ.

ຖືກປ່ອຍຕົວພາງ: ວັນທີ 12 ເມສາ 2012.

## ເນື້ອຄະດີ

ໃນຄືນຂອງວັນສຸກ, ວັນທີ 2 ກຸມພາ 2012 ທ້າວ ກ ອາຍຸ 25 ປີ, ສັນຊາດລາວ, ອາຊີບພະນັກງານ, ປັດຈຸບັນຢູ່ບ້ານໜອງພະຍາ, ໜ່ວຍ 06, ເຮືອນເລກທີ 123, ເມືອງໄຊທານີ, ນະຄອນຫຼວງວຽງຈັນ ແລະ ນາງ ຂ ອາຍຸ 20 ປີ, ສັນຊາດລາວ, ອາຊີບນັກຮຽນ, ປັດຈຸບັນຢູ່ບ້ານໜອງພະຍາ, ໜ່ວຍ 07, ເຮືອນເລກທີ 423, ເມືອງໄຊທານີ, ນະຄອນຫຼວງວຽງຈັນ, ທັງສອງຂີ່ລົດຕູ້ຍີ່ຫໍ້ ຮູນໄດສະຕາແລກ, ໝາຍເລກທະບຽນ ກກ 9999 ຊຶ່ງຂັບຂີ່ໂດຍ ທ້າວ ກ ມານັ່ງດື່ມເບຍຢູ່ທີ່ຮ້ານກິນດື່ມດອກຄູນ ແລະ ດື່ມເບຍລາວໝົດ 4 ແກ້ວ, ຮອດເວລາ 21:30 ໂມງ ຂອງວັນດຽວກັນ, ທ້າວ ຄ ອາຍຸ 27 ປີ, ສັນຊາດລາວ, ອາຊີບຫວ່າງງານ, ປັດຈຸບັນຢູ່ບ້ານໜອງພະຍາ, ໜ່ວຍ 888, ເຮືອນເລກທີ 789, ເມືອງໄຊທານີ, ໄດ້ຍ່າງເຂົ້າມາ ແລະ ມີການຜິດຖຽງກັບ ທ້າວ ກ ຍ້ອນຜູ່ກ່ຽວຫຼົງມັກ ນາງ ຂ, ແຕ່ຝ່າຍຍິງຊໍ້າພັດມັກຮັກທ້າວ ກ ດ້ວຍຄວາມໂມໂຫ ແລະ ຫຶງຫວງ ທ້າວ ຄ ຈຶ່ງກຳແກ້ວເບຍທີ່ຍັງບໍ່ທັນໄດ້ໄຂຕີຫົວທ້າວ ກ ເປັນເຫດໃຫ້ຫົວແຕກ ແລະ ສະຫຼົບຄາທີ, ແລ້ວຜູ່ກ່ຽວກໍຫຼົບໜີໄປ.

### ຄຳເຫັນ

ຜ່ານການກວດກາ, ຄົ້ນຄວ້າບັນດາຂໍ້ມູນຫຼັກຖານ ແລະ ເອກະສານອື່ນທີ່ມີໃນສຳນວນຄະດີຢ່າງ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສແລ້ວ.

ເຫັນວ່າ ການກະທຳຂອງທ້າວ ຄ (ຈຳເລີຍ) ເປັນການກະທຳທີ່ແຕະຕ້ອງຕໍ່ກົດໝາຍອາຍາໃນໝວດທີ 2 ວ່າດ້ວຍການກະທຳຜິດຕໍ່ຊີວິດ, ສຸກຂະພາບ ແລະ ກຽດສັກສີຂອງບຸກຄົນ. ຕາມກົດໝາຍອາຍາ ສະບັບປັບປຸງປີ 2005 ມາດຕາ 90 ວັກ 2 ໃນສະຖານການທຳຮ້າຍຮ່າງກາຍໃນກໍລະນີທີ່ມີການຫຸ້ມຕີ ຫຼື ໃນກໍລະນີທີ່ການກະທຳຜິດດັ່ງກ່າວ ຫາກໄດ້ເຮັດໃຫ້ມີບາດເຈັບສາຫັດ ຈະຖືກລົງໂທດຕັດອິດສະລະພາບແຕ່ ໜຶ່ງ ປີ ຫາ ຫ້າ ປີ ແລະ ຈະຖືກປັບໃໝແຕ່ 500.000 ກີບ ຫາ 1.500.000 ກີບ.

ເຫັນວ່າ ການກະທຳຂອງທ້າວ ຄ (ຈຳເລີຍ) ໃນຄັ້ງວັນທີ 2 ກຸມພາ 2012 ໄດ້ສ້າງຄວາມເປັນອັນຕະລາຍໃຫ້ແກ່ສັງຄົມ ແລະ ສ້າງຄວາມເສັຍຫາຍໃຫ້ແກ່ສຸຂະພາບຮ່າງກາຍຂອງ ທ້າວ ກ ເຮັດໃຫ້ຫົວທ້າວ ກ ແຕກ ແລະ ສະຫຼົບຄາທີ່ ອັນເກີດມາຈາກການໃຊ້ແກ້ວເບຍເປັນອາວຸດຕີ ຊຶ່ງເຈົ້າໜ້າທີ່ເກັບໄດ້ໃນສະຖານທີ່ເກີດເຫດ, ອີງຕາມຜົນຂອງການພິສູດລາຍ

ມືຂອງພະແນກພິສູດຫຼັກຖານກະຊວງປ້ອງກັນຄວາມສະຫງົບ ສະບັບເລກທີ 111/ປກສ......, ລົງວັນທີ 29 ກັນຍາ 2012 ກໍໄດ້ຢັ້ງຢືນວ່າລາຍນິ້ວມືທີ່ເກັບໄດ້ຈາກຄໍແກ້ວເບຍກັບລາຍມືຂອງ ທ້າວ ຄ ນັ້ນແມ່ນລາຍມືອັນດຽວກັນ.

ເຫັນວ່າ ທ້າວ ຄ (ຈຳເລີຍ) ໄດ້ເຈດຕະນາທຳຮ້າຍຮ່າງກາຍທ້າວ ກ ແທ້ ຊຶ່ງສະແດງອອກທີ່ (ຈຳເລີຍ) ໄດ້ໃຊ້ແກ້ວເບຍເປັນອາວຸດໃນການກະທຳຜິດໃນຄັ້ງນີ້;

ເຫັນວ່າ ທ້າວ ຄ (ຈຳເລີຍ) ມີອາຍຸກະສຽນທາງອາຍາ ແລະ ມີສະຕິຊຳປະຊັນຍະສາມາດຮູ້ ແລະ ຈຳແນກໄດ້ການກະທຳຂອງຕົນເປັນການກະທຳຜິດຕໍ່ກົດໝາຍອາຍາ;

ເຫັນວ່າ ທ້າວ ຄ (ຈຳເລີຍ) ໄດ້ກະທຳຜິດຄັ້ງໜຶ່ງຄັ້ງດຽວ, ຍ້ອນຄວາມໂມໂຫ, ຫຶງຫວງ ແລະ ຈິງໃຈຮັບສາລະພາບ. ຈຶ່ງເປັນສາເຫດທີ່ພາໃຫ້ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາຕາມກົດໝາຍອາຍາ ສະບັບປັບປຸງ ປີ 2005 ມາດຕາ 40 ຂໍ້ 8, 9.

ເຫັນວ່າ ທ້າວ ກ (ໂຈດທາງແພ່ງ) ຜູ້ຖືກເສັຍຫາຍໄດ້ຮ້ອງຂໍຄ່າປິ່ນປົວ ຕາມໃບບິນຢາທີ່ໄດ້ຮັບການຢັ້ງຢືນຈາກໂຮງໝໍເປັນເງິນຈຳນວນ 10.000.000 ກີບ ຕາມຄຳຮ້ອງສະບັບລົງວັນທີ 12 ທັນວາ 2012 ຊຶ່ງຄ່າໃຊ້ຈ່າຍໃນການປິ່ນປົວທີ່ຮ້ອງຂໍມານັ້ນ ແມ່ນໄດ້ນຳໃຊ້ບັດປະກັນສັງຊຶ່ງແມ່ນອົງການປະກັນສັງຄົມໄດ້ອອກຄ່າໃຊ້ຈ່າຍດັ່ງກ່າວໄປແລ້ວ ຈຶ່ງສະເໜີໃຫ້ສານພິຈາລະນາຕາມກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ສະບັບປັບປຸງປີ 2008 ມາດຕາ 83.

**ດ້ວຍເຫດນີ້**

ຫົວໜ້າອົງການໄອຍະການປະຊາຊົນເຂດ 1 ນະຄອນຫຼວງວຽງຈັນ ຖະແຫຼງຕໍ່ຄະນະສານອາຍາຂອງສານປະຊາຊົນເຂດ 1 ຂັ້ນຕົ້ນ ແຂວງ, ນະຄອນ......................... ພິຈາລະນາຕັດສິນຕາມກົດໝາຍ.

**ຫົວໜ້າອົງການໄອຍະການປະຊາຊົນເຂດ 1**

**ເຊັນ ແລະ ປະທັບຕາ**

### 1.2. ການສັ່ງຟ້ອງຜູ້ຖືກຫາຂຶ້ນສານຂອງຕ່າງປະເທດ

ການນຳເອົາຜົນສຳເລັດຂອງການສືບສວນ-ສອບສວນ ແລະ ສົ່ງຜູ້ຖືກຫາໃຫ້ສານໂດຍຜ່ານການສັ່ງຟ້ອງຂອງອົງການໄອຍະການເພື່ອໃຫ້ສານຄົ້ນຄວ້າພິຈາລະນາລົງໂທດຈຳເລີຍຕາມຂໍ້ກ່າວຫານັ້ນ, ໃນແຕ່ລະປະເທດອາດຈະມີວິທີການ, ຂັ້ນຕອນ ແລະ ຂະບວນການທີ່ແຕກຕ່າງກັນໄປຕາມຄວາມເໝາະສົມຂອງສັງຄົມ ແລະ ຕາມກົດໝາຍຂອງແຕ່ລະປະເທດ ຊຶ່ງປະເທດທີ່ມີກົດໝາຍເປັນຕົ້ນແບບໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານມີດັ່ງນີ້[24].

ປະເທດອັງກິດເປັນຕົ້ນສະບັບຂອງລະບົບກ່າວຫາ (Common Law) ໄດ້ມີຫຼັກການ ແລະ ກຳນົດໃຫ້ປະຊາຊົນທຸກຄົນມີສິດສັ່ງຟ້ອງຜູ້ຖືກຫາຂຶ້ນສານ ໂດຍທີ່ຕົນບໍ່ຈຳເປັນຕ້ອງມີສ່ວນໄດ້ເສຍໃນຄະດີນັ້ນ, ຍົກເວັ້ນຄະດີປະເພດທີ່ກົດໝາຍກຳນົດໃຫ້ເປັນສິດຂອງຫົວໜ້າອົງການໄອຍະການສັ່ງຟ້ອງ, ຖ້າຫາກບຸກຄົນອື່ນມີຈຸດປະສົງຈະສັ່ງຟ້ອງຄະດີດັ່ງກ່າວ ກໍຕ້ອງໄດ້ຮັບອະນຸຍາດຈາກຫົວໜ້າອົງການໄອຍະການສູງສຸດ ຫຼື ຫົວໜ້າຫ້ອງການລັດຖະບານເສັຍກ່ອນ. ດັ່ງນັ້ນ, ຈຶ່ງສະຫຼຸບໄດ້ວ່າປະຊາຊົນ, ເຈົ້າໜ້າທີ່ຕຳຫຼວດ, ເຈົ້າໜ້າທີ່ອື່ນຂອງລັດຖະບານ ຫຼື ຂອງອົງການປົກຄອງທ້ອງຖິ່ນມີສິດ ແລະ ສາມາດສັ່ງຟ້ອງຜູ້ຖືກຫາຂຶ້ນສານໄດ້ທັງນັ້ນ, ເວັ້ນເສັຍແຕ່ຄະດີອາຍາທີ່ຢູ່ໃນສິດອຳນາດຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ. ສຳລັບຫົວໜ້າອົງການໄອຍະການປະຊາຊົນສູງສຸດຈະປະຕິບັດໜ້າທີ່ເປັນໂຈດໃນການສັ່ງຟ້ອງໃນຄວາມຜິດທີ່ຮ້າຍແຮງ ຫຼື ຄວາມຜິດທີ່ເຫັນວ່າມີຄວາມສຳຄັນ ຫຼື ມີເຫດຜົນອື່ນທີ່ສົມຄວນເຂົ້າໄປດຳເນີນການສັ່ງຟ້ອງດ້ວຍຕົນເອງ, ໂດຍຜ່ານການສືບສວນ-ສອບສວນຂອງອົງການສືບສວນ-ສອບສວນ, ເພາະຫົວໜ້າອົງການໄອຍະການປະຊາຊົນສູງສຸດບໍ່ມີໜ້າທີ່ສືບສວນ-ສອບສວນຄະດີອາຍາດ້ວຍຕົນເອງ[25].

ປະເທດສະຫະລັດອາເມລິກາໄດ້ຈັດແບ່ງສານພິຈາລະນາຄະດີອອກເປັນ 3 ປະເພດຄື ສານກາງຂອງສະຫະລັດ, ສານລັດຕ່າງໆ ແລະ ສານທ້ອງຖິ່ນ. ສະນັ້ນ, ການສັ່ງຟ້ອງຄະດີອາຍາໃນສະຫະລັດອາເມລິກາຈຶ່ງມີຢູ່ 3 ຮູບແບບທີ່ແຕກຕ່າງກັນຄື: 1) ການສັ່ງຟ້ອງຄະດີແບບ Presentment ເປັນການສັ່ງຟ້ອງຄະດີອາຍາຂອງຄະນະລູກຂຸນ, ໂດຍບໍ່ມີຜູ້ໃດຍື່ນຄຳຮ້ອງມາໃຫ້ຄະນະລູກຂຸນ ແຕ່ຄະນະລູກຂຸນຈະເປັນຜູ້ຊອກຫາຂໍ້ມູນຫຼັກຖານ, ຮ່າງຄຳສັ່ງຟ້ອງ ແລະ ເປັນໂຈດລົງລາຍເຊັນສັ່ງຟ້ອງຜູ້ຖືກຫາຂຶ້ນສານທີ່ມີສິດອຳນາດ, ການສັ່ງຟ້ອງ

---

[24] ສຸພາສິດ ລໍວັນໄຊ,"ຂະບວນການຍຸຕິທຳທາງອາຍາປຽບທຽບໄທ-ລາວ: ຂັ້ນຕອນກ່ອນການພິຈາລະນາຂອງສານ", (ວິທະຍານິພົນປະລິນຍານິຕິສາດມະຫາບັນດິດ ຄະນະນິຕິສາດ ມະຫາວິທະຍາໄລຈຸລາລົງກອນ, ພສ 2547), ໜ້າ 41.

[25] ກົມພົນ ພົນວັນ, "ລະບົບການດຳເນີນຄະດີອາຍາໂດຍໄອຍະການໃນປະເທດໄທ", ໄອຍະການນິເທດ, ປີທີ 9, ສະບັບທີ 101 (ພຶດສະພາ ພສ 2529), ໜ້າ 78.

ແບບນີ້ປັດຈຸບັນເກືອບຈະບໍ່ໄດ້ນຳໃຊ້ແລ້ວ; 2) ການສັ່ງຟ້ອງຄະດີແບບ Indictment ເປັນການສັ່ງຟ້ອງຄະດີທີ່ຜູ້ຖືກຫາ ຫຼື ຜູ້ຖືກເສັຍຫາຍ ຫຼື ພະນັກງານໄອຍະການໄດ້ຍື່ນຄຳຮ້ອງສະເໜີຕໍ່ຄະນະລູກຂຸນ ແລະ ຄະນະລູກຂຸນກໍຈະດຳເນີນການໄຕ່ສວນ ເພື່ອຊອກຫາຂໍ້ມູນຫຼັກຖານ, ຖ້າມີຂໍ້ມູນຫຼັກຖານພຽງພໍຄະນະລູກຂຸນກໍຈະລົງລາຍຊື່ ແລະ ລົງລາຍເຊັນເປັນໂຈດສັ່ງຟ້ອງຂຶ້ນສານທີ່ມີສິດອຳນາດພິຈາລະນາຕັດສິນຄະດີດັ່ງກ່າວ ແລະ 3) ການສັ່ງຟ້ອງຄະດີແບບ Information ແມ່ນການສັ່ງຟ້ອງຄະດີອາຍາຂອງພະນັກງານໄອຍະການຕໍ່ສານທີ່ມີສິດອຳນາດຕັດສິນຄະດີນັ້ນ, ແຕ່ຖ້າຫາກເປັນຄວາມຜິດຖານຄະຣຸໂທດຈະຕ້ອງໄດ້ຮັບການໄຕ່ສວນຈາກສານທີ່ຕັດສິນຄະດີລະຫຸໂທດ (Magistrate Court) ເສັຍກ່ອນ[26]. ສະຫຼຸບແລ້ວ ຜູ້ທີ່ມີສິດອຳນາດໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານໃນສະຫະລັດອາເມລິກາ ແມ່ນເປັນຂອງພະນັກງານໄອຍະການ[27], ສ່ວນຜູ້ຖືກເສັຍຫາຍບໍ່ມີສິດອຳນາດສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງໄດ້ ແຕ່ມີສິດຍື່ນຄຳຮ້ອງທຸກຕໍ່ອົງການສືບສວນ-ສອບສວນໃຫ້ດຳເນີນຄະດີອາຍາ ຫຼື ຍື່ນຄຳຮ້ອງທຸກຕໍ່ Magistrate Court ໃນຄວາມຜິດທີ່ມີໂທດເບົາບາງ ແລະ ຍື່ນຄຳຮ້ອງທຸກຕໍ່ຄະນະລູກຂຸນໃນຄະດີທີ່ມີຄວາມຜິດຮ້າຍແຮງ ເພື່ອໃຫ້ດຳເນີນການໄຕ່ສວນ ແລະ ສັ່ງຟ້ອງຂຶ້ນສານ.

ປະເທດຝຣັ່ງແມ່ນຕົ້ນສະບັບຂອງລະບົບໄຕ່ສວນ ( Civil Law ) ມີແຕ່ພະນັກງານໄອຍະການເທົ່ານັ້ນທີ່ມີສິດອຳນາດສັ່ງຟ້ອງ ຫຼື ບໍ່ສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ຖ້າຫາກຜົນຂອງການສັ່ງຟ້ອງຈະເກີດຄວາມເສັຍຫາຍຕໍ່ສັງຄົມຫຼາຍກວ່າຜົນປະໂຫຍດທີ່ຈະໄດ້ຮັບ ພະນັກງານໄອຍະການຈະບໍ່ສັ່ງຟ້ອງ. ສ່ວນປະຊາຊົນ ຫຼື ຜູ້ຖືກເສັຍຫາຍຈະສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງບໍ່ໄດ້ ແຕ່ສາມາດຮ້ອງຟ້ອງເອົາຄ່າເສຍຫາຍທາງແພ່ງທີ່ຕິດພັນກັບຄະດີອາຍາເລື່ອງນັ້ນໄດ້ ຊຶ່ງສິ່ງຜົນໃຫ້ພະນັກງານໄອຍະການຕ້ອງໄດ້ສັ່ງຟ້ອງຜູ້ຖືກຫາໃນຄະດີດັ່ງກ່າວຂຶ້ນສານ[28]. ໃນປະເທດຝຣັ່ງ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານມີ 3 ວິທີຄື ການສັ່ງຟ້ອງຜູ້ຖືກຫາຂຶ້ນສານໃນຄະດີທີ່ໄດ້ຮັບມາຈາກຕຸລາການສອບສວນ, ການສັ່ງຟ້ອງຜູ້ຖືກຫາຂຶ້ນສານໃນຄະດີຄວາມຜິດແບບເຊິ່ງໜ້າ ແລະ ການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ ຊຶ່ງແຕ່ລະວິທີກໍມີ

---

[26] (From http://ebook.ram.edu/ebook/l/LW454(51)/LW4548.pdf)

[27] ກິດຕິ ບຸດສະພະລາກອນ, "ຜູ້ເສັຍຫາຍໃນຄະດີອາຍາ", (ວິທະຍານິພົນພາກວິຊານິຕິສາດ ບັນດິດວິທະຍາໄລ ມະຫາ ວິທະຍາໄລຈຸລາລົງກອນ, ພສ 2523), ໜ້າ 23-24

[28] ໂກເມນ ພັດທະຣະພິຣົມ, "ລະບົບການດຳເນີນຄະດີອາຍາໂດຍໄອຍະການໃນປະເທດຝຣັ່ງເສດ", ໄອຍະການນິເທດ, ເຫຼັ້ມ 32, ສະບັບທີ 2, ໜ້າ 172

ຄວາມແຕກຕ່າງກັນອອກໄປ[29]. ຄະດີທີ່ພະນັກງານໄອຍະການບໍ່ສັ່ງຟ້ອງຜູ້ຖືກຫາຂຶ້ນສານນັ້ນ, ພະນັກງານໄອຍະການສາມາດກັບມາສັ່ງຟ້ອງໃໝ່ໄດ້ ພາຍໃນກຳນົດອາຍຸຄວາມໃນການສັ່ງຟ້ອງຄື ຄວາມຜິດໃນສະຖານຄະຣຸໂທດ 10 ປີ, ຄວາມຜິດໃນສະຖານໂທສານຸໂທດ 3 ປີ ແລະ ຄວາມຜິດໃນສະຖານລະຫຸໂທດ 1 ປີ, ໃນເມື່ອພະນັກງານໄອຍະການສັ່ງຟ້ອງຜູ້ຖືກຫາຂຶ້ນສານແລ້ວຈະຖອນຄຳສັ່ງຟ້ອງໃນພາຍຫຼັງບໍ່ໄດ້ ຕ້ອງດຳເນີນຄະດີໄປຈົນສຳເລັດ, ຫົວໜ້າອົງການໄອຍະການ ຈະອອກຄຳສັ່ງໃຫ້ພະນັກງານໄອຍະການສັ່ງຟ້ອງຜູ້ຖືກຫາຂຶ້ນສານໃນຄະດີໃດໜຶ່ງກໍໄດ້, ແຕ່ຖ້າຫາກພະນັກງານໄອຍະການທີ່ຖືກສັ່ງຟ້ອງບໍ່ຍອມປະຕິບັດຕາມ ຫົວໜ້າອົງການໄອຍະການຈະເຂົ້າໄປສັ່ງຟ້ອງເອງບໍ່ໄດ້, ກົງກັນຂ້າມຫົວໜ້າອົງການໄອຍະການມີຄຳສັ່ງບໍ່ໃຫ້ສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ແຕ່ເມື່ອພະນັກງານໄອຍະການບໍ່ຍອມປະຕິບັດ ແລະ ຂັດຄຳສັ່ງນັ້ນ ໂດຍຍື່ນຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານຄຳສັ່ງຟ້ອງນັ້ນຖືວ່າໃຊ້ໄດ້.

ການດຳເນີນຄະດີອາຍາໃນປະເທດເຢັຍລະມັນ ມີລັກສະນະເປັນວິທີພິຈາລະນາໃນລະບົບກ່າວຫາ (Accusatorial system) , ກົດໝາຍເຢັຍລະມັນ ໄດ້ກຳນົດໃຫ້ອົງການໄອຍະການ ແລະ ຜູ້ຖືກເສັຍຫາຍ ມີສິດອຳນາດໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ແຕ່ເຢັຍລະມັນຖືຫຼັກການດຳເນີນຄະດີອາຍາໂດຍລັດ, ພະນັກງານໄອຍະການ ມີສິດອຳນາດໃນການສັ່ງຟ້ອງຄະດີອາຍາຢ່າງກວ້າງຂວາງ ໂດຍສະເພາະແມ່ນຄວາມຜິດຕໍ່ສາທາລະນະ ຫຼື ຕໍ່ລັດແມ່ນໃຫ້ອົງການໄອຍະການເປັນຕົວແທນຂອງປະຊາຊົນ ໃນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ (ປະມວນກົດໝາຍວ່າດ້ວຍການດຳເນີນຄະດີອາຍາຂອງເຢັຍລະມັນ ມາດຕາ 152 ຂໍ້ 1), ສ່ວນຜູ້ຖືກເສັຍຫາຍ ແມ່ນມີສິດອຳນາດສັ່ງຟ້ອງຜູ້ຖືກຫາຂຶ້ນສານຢູ່ໃນຂອບເຂດຈຳກັດໃນບາງປະເພດຄວາມຜິດ ເຊັ່ນ ການບຸກລຸກ, ການໝິ່ນປະໝາດ, ການເປີດຊອງຈົດໝາຍຂອງຜູ້ອື່ນ, ການທຳຮ້າຍຮ່າງກາຍ, ການຂົ່ມຂູ່, ການລັກ ຫຼື ຊິງຊັບ, ການລະເມີດເຄື່ອງໝາຍທາງການຄ້າ, ການປອມແປງສິນຄ້າ, ລິຂະສິດ ແລະ ອື່ນໆທີ່ມີໂທດເບົາ[30]. ຜູ້ຖືກເສັຍຫາຍໃນເຢັຍລະມັນສາມາດສັ່ງຟ້ອງຜູ້ຖືກຫາຂຶ້ນສານຢ່າງເປັນອິດສະຫຼະ, ແຕ່ຄະດີດັ່ງກ່າວຕ້ອງໄດ້ຜ່ານການໄກ່ເກ່ຍຈາກເຈົ້າໜ້າທີ່ຂອງກະຊວງຍຸຕິທຳທີ່ປະຈຳຢູ່ຫ້ອງການຍຸຕິທຳເມືອງ ຫຼື ພະແນກຍຸຕິທຳແຂວງເສັຍກ່ອນ, ຖ້າຫາກຕົກລົງກັນບໍ່ໄດ້ຜູ້ຖືກເສັຍຫາຍ ຈຶ່ງດຳເນີນການສັ່ງຟ້ອງ ແລະ ຕ້ອງໄດ້ວາງຄ່າທຳນຽມສານໄວ້ລ່ວງໜ້າເສັຍກ່ອນ ສານຈຶ່ງຈະຮັບເອົາຄະດີມາ

---

[29] ໂກເມນ ພັດທະຣະພິຣົມ, "ລະບົບການດຳເນີນຄະດີອາຍາໂດຍໄອຍະການໃນປະເທດຝຣັ່ງເສດ",(ຫາກໍ່ອ້າງ), ໜ້າ 174-177

[30] ກິດຕິ ບຸດສະພະລາກອນ, "ຜູ້ເສັຍຫາຍໃນຄະດີອາຍາ", (ອ້າງແລ້ວ), ໜ້າ 19

ພິຈາລະນາ. ໃນກໍລະນີທີ່ຈຳເປັນພະນັກງານໄອຍະການ ມີສິດອຳນາດເຂົ້າເປັນໂຈດຮ່ວມກັບຜູ້ຖືກເສັຍຫາຍໃນເວລາໃດກໍໄດ້.

ສະຫຼຸບແລ້ວ ເຖິງວ່າຄຳສັ່ງຟ້ອງ ແລະ ຄຳຖະແຫຼງ ຈະສົ່ງໄປໃຫ້ສານພ້ອມໆກັນ ແລະ ໃນເວລາດຽວກັນກໍຕາມ, ແຕ່ຄຳສັ່ງຟ້ອງກໍມີຄວາມແຕກຕ່າງຈາກຄຳຖະແຫຼງຢູ່ບ່ອນວ່າ "ຄຳສັ່ງຟ້ອງນັ້ນຈະເຮັດໃຫ້ປ່ຽນແປງຖານະຂອງຜູ້ຖືກຫາ ກາຍມາເປັນຈຳເລີຍໃນຄະດີທັນທີ, ສ່ວນຄຳຖະແຫຼງເປັນເອກະສານທີ່ອະທິບາຍກ່ຽວກັບການກະທຳຜິດ ແລະ ເປັນບ່ອນອີງໃຫ້ສານພິຈາລະນາຄະດີ", ດັ່ງທີ່ເຫັນໃນຕົວຢ່າງຂອງຄຳສັ່ງຟ້ອງ ແລະ ຄຳຖະແຫຼງຂ້າງເທິງນັ້ນ.

## 2. ການສົ່ງສຳນວນຄະດີ ແລະ ຂອງກາງໄປໃຫ້ສານ

ບໍ່ວ່າຈະເປັນການສັ່ງຟ້ອງໃນກໍລະນີມີ ຫຼື ບໍ່ມີຄຳຮ້ອງຟ້ອງຂອງຜູ້ຖືກເສັຍຫາຍ ຫຼື ໂຈດທາງແພ່ງກໍຕາມ, ເມື່ອຫົວໜ້າອົງການໄອຍະການລົງລາຍເຊັນໃນຄຳສັ່ງຟ້ອງຄະດີອາຍາຂຶ້ນສານເປັນທີ່ຮຽບຮ້ອຍແລ້ວ, ກໍຕ້ອງມີການສົ່ງຄຳສັ່ງຟ້ອງນັ້ນ ໄປໃຫ້ສານພິຈາລະນາຕາມຂັ້ນຕອນຂອງກົດໝາຍ, ຜູ້ຖືກຫາກໍຈະກາຍມາເປັນຈຳເລີຍ ໃນເມື່ອສານໄດ້ຮັບເອົາສຳນວນຄະດີ ແລະ ຄຳສັ່ງຟ້ອງເຂົ້າມາສູ່ຂັ້ນຕອນ ແລະ ຂະບວນການພິຈາລະນາຂອງສານ.

### 2.1. ການສົ່ງສຳນວນຄະດີໄປໃຫ້ສານ

ໃນເມື່ອຫົວໜ້າອົງການໄອຍະການ ໄດ້ລົງລາຍເຊັນໃນຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານແລ້ວຕ້ອງແຈ້ງໃຫ້ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ ແລະ ຜູ້ຮັບຜິດຊອບທາງແພ່ງຊາບພາຍໃນກຳນົດເວລາສາມວັນທາງລັດຖະການ ນັບແຕ່ວັນອອກຄຳສັ່ງຟ້ອງເປັນຕົ້ນໄປ (ມ 152 ວັກ 2 ກດຍ) ແລະ ກ່ອນຈະສົ່ງສຳນວນຄະດີໄປໃຫ້ສານນັ້ນ, ຫົວໜ້າອົງການໄອຍະການກໍຕ້ອງແຈ້ງຄຳສັ່ງຟ້ອງໃຫ້ຜູ້ຖືກຫາ ຫຼື ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງຜູ້ກ່ຽວເພື່ອໃຫ້ລົງລາຍເຊັນຮັບຮູ້ພາຍໃນສາມວັນທາງລັດຖະການ, ໃນກໍລະນີທີ່ບໍ່ລົງລາຍເຊັນໃນຄຳສັ່ງຟ້ອງກໍໃຫ້ບັນທຶກໄວ້ເປັນຫຼັກຖານ (ມ 154 ວັກ 2 ກດຍ).

ການສົ່ງສຳນວນຄະດີອາຍາໄປໃຫ້ສານເປັນຂັ້ນຕອນ ແລະ ເປັນຜົນສຳເລັດຂອງການສັ່ງຟ້ອງຄະດີ ເພື່ອກ່າວຟ້ອງການກະທຳຄວາມຜິດຂອງຈຳເລີຍ ໂດຍມີວັດຖຸປະສົງໃຫ້ສານພິຈາລະນາຕັດສິນລົງໂທດຜູ້ທີ່ກະທຳຜິດຕາມກົດໝາຍ, ຄຳສັ່ງຟ້ອງ ແລະ ສຳນວນຄະດີທີ່ຈະເອົາໄປຍື່ນຕໍ່ສານຕ້ອງໄດ້ຜ່ານຂັ້ນຕອນ, ມີເນື້ອໃນ, ມີຮູບແບບຖືກຕ້ອງຄົບຖ້ວນທັງຂໍ້ເທັດຈິງ ແລະ ຂໍ້ກົດໝາຍ. ດັ່ງນັ້ນ, ຈຶ່ງຕ້ອງໄດ້ກວດກາ ແລະ ດຳເນີນການດັ່ງນີ້:

1) ກວດກາເບິ່ງຄຳສັ່ງຟ້ອງ ແລະ ຄຳຖະແຫຼງ ທັງສອງສະບັບນັ້ນວ່າໄດ້ເຮັດຂຶ້ນຖືກຕ້ອງຄົບຖ້ວນແລ້ວ ຫຼື ບໍ່, ໂດຍສະເພາະແມ່ນວັນ, ເດືອນ, ປີ ແລະ ສະຖານທີ່ເກີດເຫດ, ບຸກຄົນທີ່ເປັນໂຈດທາງແພ່ງ ແລະ ເປົ້າໝາຍຂອງການຮ້ອງຂໍກັບຄຳຖະແຫຼງຖືກຕ້ອງສອດຄ່ອງກັນ ຫຼື ບໍ່;

2) ການສຳເນົາຄຳສັ່ງຟ້ອງ ແລະ ຄຳຖະແຫຼງຄົບຖ້ວນຕາມຈຳນວນຂອງຈຳເລີຍແລ້ວ ຫຼື ບໍ່, ເປັນສຳເນົາທີ່ຖືກຕ້ອງກັບຕົ້ນສະບັບ ຫຼື ບໍ່, ມີການຢັ້ງຢືນວ່າສຳເນົານັ້ນຖືກຕ້ອງ ຫຼື ບໍ່;

3) ຖ້າຫາກມີການແກ້ໄຂ ຫຼື ມີຮອຍຂີດຂ້າເລັກນ້ອຍໃນຄຳສັ່ງຟ້ອງ ຫຼື ໃນຄຳຖະແຫຼງ ຊຶ່ງບໍ່ສາມາດເຮັດສະບັບໃໝ່ປ່ຽນແທນທັນກໍຕ້ອງໃຫ້ເຈົ້າໜ້າທີ່ກ່ຽວຂ້ອງຕ້ອງລົງລາຍເຊັນຢັ້ງຢືນໃສ່;

4) ການນຳສົ່ງສຳນວນຄະດີອາຍາໄປໃຫ້ສານ ໃນກໍລະນີທີ່ມີການປ່ອຍຕົວພາງຜູ້ຖືກຫາກໍຕ້ອງນຳເອົາຜູ້ກ່ຽວມາລົງລາຍເຊັນຮັບຊາບໃນຄຳສັ່ງຟ້ອງ ແລະ ຕ້ອງຮັບປະກັນໃຫ້ໄດ້ຕົວຜູ້ກ່ຽວເຂົ້າມາສານຕາມໝາຍຮຽກຂອງສານ, ບໍ່ແມ່ນໃຫ້ຜູ້ອື່ນລົງລາຍເຊັນແທນ ຫຼື ເຂົ້າມາສານແທນ;

5) ການນຳສົ່ງສຳນວນຄະດີອາຍາໄປໃຫ້ສານ ໃນກໍລະນີທີ່ມີການກັກຂັງພາງຜູ້ຖືກຫາກໍຕ້ອງກວດກາເບິ່ງວ່າໄດ້ລະບຸເລກທີ, ລົງວັນທີຂອງຄຳສັ່ງກັກຂັງພາງໃນຄຳສັ່ງຟ້ອງ ຫຼື ຄຳຖະແຫຼງຢ່າງຖືກຕ້ອງ ຫຼື ບໍ່, ຈຳເລີຍມີຫຼາຍຊື່ ຫຼື ບໍ່, ເພື່ອໃຫ້ຊື່ໃນຄຳສັ່ງກັກຂັງພາງຖືກຕ້ອງກັບຄຳສັ່ງຟ້ອງ ຫຼື ຄຳຖະແຫຼງ;

6) ຕາມປົກກະຕິແລ້ວໄດ້ຍື່ນສຳນວນຄະດີ, ຄຳສັ່ງຟ້ອງ ແລະ ຄຳຖະແຫຼງແລ້ວ, ສານກໍຈະຮັບເອົາສຳນວນຄະດີດັ່ງກ່າວ ພ້ອມທັງຂຶ້ນເລກທີ່ຂາເຂົ້າ, ເພື່ອຢັ້ງຢືນວ່າສານໄດ້ຮັບເອົາຜູ້ຖືກຫາ ແລະ ໃຫ້ຜູ້ກ່ຽວກາຍເປັນຈຳເລີຍໃນສານ. ເລີ່ມຕັ້ງແຕ່ເວລານັ້ນເປັນຕົ້ນໄປຄະດີດັ່ງກ່າວກໍຈະເຂົ້າສູ່ການພິຈາລະນາໃນຂັ້ນຕອນຂອງສານ.

ການສົ່ງສຳນວນຄະດີອາຍາໄປໃຫ້ສານນີ້ມີວິທີ ແລະ ຂັ້ນຕອນຂອງການຈັດຕັ້ງປະຕິບັດຕົວຈິງຢ່າງລະອຽດອ່ອນ, ຄົບຖ້ວນ, ຮອບດ້ານ, ພາວະວິໄສ, ມີຄວາມຊັດເຈນ, ມີຄວາມຈະແຈ້ງ ແລະ ແນ່ນອນ, ທັງນີ້ກໍເພື່ອຮັບປະກັນຄວາມໂປ່ງໃສ, ທັງຫຼີກເວັ້ນບໍ່ໃຫ້ເອກະສານທີ່ມີໃນສຳນວນຄະດີຕົກເຮັ່ຍເສັຍຫາຍໂດຍບໍ່ມີເຫດຜົນ ແລະ ບໍ່ມີຜູ້ຮັບຜິດຊອບ, ເນື່ອງຈາກວ່າທຸກໆເອກະສານ ລ້ວນແຕ່ມີຄວາມໝາຍສຳຄັນ ແລະ ທັງເປັນບ່ອນອີງໃຫ້ແກ່ການພິຈາລະນາຕັດສິນຄະດີຂອງສານ. ສະນັ້ນ, ທຸກຄັ້ງທີ່ຫົວໜ້າອົງການໄອຍະການ ໄດ້ນຳສົ່ງສຳນວນຄະດີໄປໃຫ້ສານ ຈຶ່ງມີຄວາມຈຳເປັນ ແລະ ຕ້ອງເຮັດສະໂນດນຳສົ່ງ, ຊຶ່ງຢູ່ໃນສະໂນດນຳສົ່ງນັ້ນ ຕ້ອງໄດ້ລະບຸໄວ້ຢ່າງຈະແຈ້ງ ເຊັ່ນ ອົງການໄອຍະການທີ່ສົ່ງສຳນວນຄະດີໄປ, ເລກທີ, ລົງວັນທີສົ່ງ, ສານທີ່ຮັບສຳນວນຄະດີ, ລາຍການເອກະສານ, ລາຍເຊັນຫົວໜ້າອົງການໄອຍະການບ່ອນສົ່ງໄປ ແລະ ລາຍເຊັນຜູ້ຮັບຊຶ່ງມີຕົວຢ່າງດັ່ງນີ້.

## ຕົວຢ່າງ: ສະໂນດນຳສົ່ງຄະດີອາຍາໄປໃຫ້ສານຂັ້ນຕົ້ນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນ......... ເລກທີ ......../ອຍກ, ຂ..

ອົງການໄອຍະການປະຊາຊົນເຂດ...............

### ສະໂນດນຳສົ່ງ

**ຮຽນ:** ທ່ານປະທານສານປະຊາຊົນເຂດ.....................................................

**ເລື່ອງ:** ສົ່ງສຳນວນຄະດີ.........................................................................

| ລຳດັບ | ລາຍການເອກະສານ | ເລກທີ | ລົງວັນທີ | ຈຳນວນ | ໝາຍເຫດ |
|---|---|---|---|---|---|
| 1 | ຄຳສັ່ງຟ້ອງຂຶ້ນສານ | 28 | 11/12/13 | 1 ສະບັບ | 1 ໜ້າ |
| 2 | ຄຳຖະແຫຼງ | 29 | 11/12/13 | 1 ສະບັບ | 4 ໜ້າ |
| 3 | ບົດສະຫຼຸບຄະດີຂອງເຈົ້າໜ້າທີ່ | 18 | 5/11/13 | 1 ສະບັບ | 5 ໜ້າ |
| 4 | ຄຳສັ່ງກັກຂັງພາງ | 13 | 29/10/13 | 1 ສະບັບ | 1 ໜ້າ |
| 5 | ຄຳສັ່ງປ່ອຍຕົວພາງ | 19 | 3/11/13 | 1 ສະບັບ | 1 ໜ້າ |
| 6 | ບົດບັນທຶກຄຳໃຫ້ການຂອງຜູ້ຖືກຫາ | - | 18/10/13 | 1 ສະບັບ | 4 ໜ້າ |
| 7 | ຄຳຮ້ອງຟ້ອງຂອງຜູ້ຖືກເສັຍຫາຍ | - | 11/10/13 | 1 ສະບັບ | 6 ໜ້າ |
| 8 | ບົດບັນທຶກຄຳໃຫ້ການຂອງຜູ້ຖືກເສັຍຫາຍ | - | 19/10/13 | 1 ສະບັບ | 3 ໜ້າ |
| **ລວມ** | ມີເອກະສານ 8 ລາຍການ | - | - | 8 ສະບັບ | 25 ໜ້າ |

ທີ່........................., ວັນທີ .......................

**ຜູ້ຮັບສຳນວນຄະດີ** **ຫົວໜ້າອົງການໄອຍະການປະຊາຊົນເຂດ.......**

ຊື່ແຈ້ງ......................................... ຊື່ແຈ້ງ................................................

ການສົ່ງສຳນວນຄະດີອາຍາໄປໃຫ້ສານນີ້ ນອກຈາກຈະມີລາຍລະອຽດທີ່ໄດ້ລະບຸໄວ້ໃນສະໂນດນຳສົ່ງດັ່ງທີ່ໄດ້ກ່າວມາໃນຂ້າງເທິງນັ້ນແລ້ວ, ໃນການປະຕິບັດຕົວຈິງ ແລະ ຕາມປົກກະຕິແລ້ວ ພະນັກງານຜູ່ທີ່ເອົາສຳນວນຄະດີໄປສົ່ງນັ້ນ ຈະບໍ່ມີສິດອຳນາດລົງລາຍເຊັນໃສ່ໃນສະໂນດນຳສົ່ງ, ພຽງແຕ່ເປັນຜູ່ນຳສົ່ງສະໂນດເທົ່ານັ້ນ, ເພື່ອເປັນການປ້ອງຄວາມຜິດພາດ ແລະ ທັງຮັບປະກັນວ່າເອກະສານດັ່ງກ່າວໄດ້ສົ່ງໄປຮອດສານ ແລະ ສານທີ່ກ່ຽວຂ້ອງໄດ້ຮັບເປັນຢ່າງເປັນທາງການ, ສະນັ້ນອີງການໄອຍະການບ່ອນສົ່ງສະໂນດ ຈຶ່ງມອບປື້ມບັນທຶກປະຈຳວັນໃຫ້ພະນັກງານຜູ່ໄປສົ່ງເອກະສານຖືຕິດຕົວໄປນຳພ້ອມ ແລະ ໃຫ້ເຈົ້າໜ້າທີ່ຂອງສານຜູ່ຮັບສະໂນດລົງລາຍເຊັນວ່າໄດ້ຮັບແລ້ວໃສ່ໃນປື້ມດັ່ງກ່າວຕື່ມອີກ, ທັງນີ້ກໍເພື່ອໃຫ້ເກີດມີຄວາມໝັ້ນໃຈວ່າເອກະສານດັ່ງກ່າວໄດ້ໄປຮອດຈຸດໝາຍປາຍທາງຢ່າງສົມບູນແລ້ວ.

### 2.2. ການສົ່ງຂອງກາງໄປໃຫ້ສານ

ໃນການສັ່ງຟ້ອງຜູ່ຖືກຫາຂຶ້ນສານຕ້ອງສົ່ງສຳນວນຄະດີ ແລະ ຂອງກາງ ເພື່ອໃຫ້ສານພິຈາລະນາຕາມກົດໝາຍ (ມ 154 ວັກທ້າຍ ກດຍ). ດັ່ງນັ້ນ, ວັດຖຸສິ່ງຂອງທີ່ໄດ້ຍຶດມາເປັນຂອງກາງໃນຄະດີນັ້ນມີ 3 ກໍລະນີຄື ມີໄວ້ໂດຍຜິດກົດໝາຍ, ໄດ້ມາໂດຍຜິດກົດໝາຍ ແລະໄດ້ ໃຊ້ ຫຼື ຈະໃຊ້ໂດຍຜິດກົດໝາຍ ຊຶ່ງເຈົ້າໜ້າທີ່ໄດ້ຍຶດໄວ້ເພື່ອເປັນຫຼັກຖານໃນຄະດີ, ຢູ່ໃນກົດ ໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ມາດຕາ 154 ວັກທ້າຍໄດ້ກຳນົດກ່ຽວກັບຂອງກາງໄວ້ສັ້ນໆວ່າ **"ການສັ່ງຟ້ອງຜູ່ຖືກຫາຂຶ້ນສານຕ້ອງສົ່ງສຳນວນຄະດີ ແລະ ຂອງກາງໄປໃຫ້ສານ"**. ດັ່ງນັ້ນ, ຈຶ່ງອີງໃສ່ມາດຕາດັ່ງກ່າວ ເພື່ອຂະຫຍາຍຄວາມໝາຍກ່ຽວກັບຂອງກາງ ໃຫ້ມີຄວາມກະຈ່າງແຈ້ງຂຶ້ນຕື່ມດັ່ງນີ້:

ຂອງກາງແມ່ນວັດຖຸ ຫຼື ຊັບສິນ ຊຶ່ງຕົກຢູ່ໃນການຄຸ້ມຄອງຂອງເຈົ້າໜ້າທີ່ລັດທີ່ມີສິດໜ້າທີ່ ຕາມກົດໝາຍ ຫຼື ບຸກຄົນທີ່ປະຕິບັດໜ້າທີ່ໂດຍຖືກແຕ່ງຕັ້ງເປັນການຊົ່ວຄາວ, ຊຶ່ງໄດ້ຍຶດຂອງກາງມາເພື່ອພິສູດ ແລະ ໃຊ້ເປັນຫຼັກຖານໃນຄະດີ. ລັກສະນະສະເພາະກ່ຽວກັບຂອງກາງນີ້ມັນໄດ້ສະແດງຄຸນລັກສະນະ ແລະ ທາດແທ້ຂອງມັນອອກມາໃຫ້ພວກເຮົາຮັບຮູ້ ແລະເຫັນໄດ້ຢ່າງພາວະວິໄສໃນ 2 ປະເພດຄື ປະເພດຂອງກາງທີ່ກ່ຽວຂ້ອງກັບຄວາມຜິດທາງອາຍາທີ່ໃຊ້ເປັນຫຼັກຖານພິສູດຄວາມຜິດ ແລະ ປະເພດຂອງກາງໃນຄະດີອື່ນ ທີ່ບໍ່ກ່ຽວຂ້ອງກັບຄະດີອາຍາ ເຊັ່ນ ຊັບສິ່ງຂອງທີ່ຕົກເຮ່ຍ, ວັດຖຸທີ່ພົບເຫັນຕາມທຳມະຊາດ, ວັດຖຸທີ່ຍັງບໍ່ທັນມີໃຜເປັນເຈົ້າຂອງ, ຊຶ່ງມີຫຼາຍຄົນກ່າວອ້າງຕົນເປັນເຈົ້າກຳມະສິດ ຫຼື ສະແດງຕົນເປັນເຈົ້າຂອງ, ຈຶ່ງເກີດຂໍ້ຂັດແຍ່ງ ແລະ ເປັນໜ້າທີ່ສານອື່ນຕັດສິນ.

ສຳລັບປະເພດຂອງກາງທີ່ກ່ຽວຂ້ອງກັບຄວາມຜິດທາງອາຍາ ຫຼື ໄດ້ຍຶດມາເປັນຫຼັກຖານໃນຄະດີອາຍານັ້ນ, ກໍຍັງບໍ່ທັນມີຄວາມແນ່ນອນວ່າ ຈະສົ່ງຄືນໃຫ້ຜູ່ເປັນເຈົ້າກຳມະສິດເດີມ ຫຼື ຈະໃຫ້ເປັນກຳມະສິດຜູ່ອື່ນ ຫຼື ຈະຮິບເປັນຂອງລັດ ຫຼື ຈະໃຫ້ທຳລາຍຖິ້ມ ຫຼື ຈະຖືກ

ຕັດສິນເປັນຢ່າງອື່ນ, ຂອງກາງທີ່ຍຶດມາເປັນຫຼັກຖານໃນຄະດີອາຍາ, ສ່ວນຫຼວງຫຼາຍແລ້ວມັກຈະປະກົດໃຫ້ເຫັນດັ່ງນີ້:

1) ຂອງກາງທີ່ມີໄວ້ຢ່າງຜິດກົດໝາຍ ເຊັ່ນ ຢາເສບຕິດ, ເງິນປອມ, ເອກະສານປອມ ແລະ ອື່ນໆ;

2) ຂອງກາງທີ່ໄດ້ມາຢ່າງຜິດກົດໝາຍ ເຊັ່ນ ໄມ້ເຖື່ອນ, ແຮ່ທາດເຖື່ອນ, ຊື້-ຂາຍວັດຖຸສິ່ງຂອງໂດຍບໍ່ຖືກຕ້ອງ, ການສໍ້ລາດບັງຫຼວງ, ສິ່ງຂອງທີ່ໄດ້ມາໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ອື່ນໆ;

3) ຂອງກາງທີ່ໄດ້ໃຊ້ ຫຼື ຕັ້ງໃຈຈະໃຊ້ໃນການກະທຳຜິດ ເຊັ່ນ ເຄື່ອງມື, ເຄື່ອງໃຊ້, ຍານພາຫະນະ, ເຄື່ອງຈັກ, ອາວຸດ ແລະ ອື່ນໆ;

4) ຂອງກາງທີ່ເປັນຫຼັກຖານເພື່ອພິສູດຄວາມຜິດ ໂດຍສະເພາະແມ່ນຂອງກາງທີ່ເປັນວັດຖຸ ເຊັ່ນ ເສື້ອຜ້າທີ່ຜູ້ຖືກຫານຸ່ງໃນຂະນະກະທຳຜິດ ຫຼື ເສື້ອຜ້າຜູ້ຖືກຫາທີ່ເປື້ອນຄາບເລືອດຂອງຜູ້ຕາຍ ຫຼື ລົດທີ່ໄດ້ດັດແປງ ເພື່ອຊຸກເຊື່ອງຢາເສບຕິດ ແລະ ອື່ນໆ.

ການສົ່ງຂອງກາງໄປໃຫ້ສານນັ້ນ ໃນການຈັດຕັ້ງປະຕິບັດຕົວຈິງ ແລະ ສ່ວນຫຼວງຫຼາຍແລ້ວຫົວໜ້າອົງການໄອຍະການຈະກະກຽມຄຳສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ສຳນວນຄະດີ ແລະ ຂອງກາງສົ່ງໄປໃຫ້ສານເປັນຊຸດດຽວກັນ ແລະ ໃນເວລາດຽວກັນ, ເພື່ອມອບຂອງກາງໃຫ້ຢູ່ໃນການຄຸ້ມຄອງຂອງສານ ວິທີການນຳສົ່ງຂອງກາງທີ່ເປັນວັດຖຸ ແລະ ຂອງກາງທີ່ເປັນເອກະສານນັ້ນ ແມ່ນມີວິທີປະຕິບັດທີ່ແຕກຕ່າງກັນ ໂດຍສ່ວນໃຫຍ່ແລ້ວມັກປະຕິບັດກັນມາຄືດັ່ງນີ້.

### 2.2.1. ການສົ່ງຂອງກາງທີ່ເປັນວັດຖຸໄປໃຫ້ສານ

ການນຳສົ່ງຂອງກາງທີ່ເປັນວັດຖຸໄປໃຫ້ສານນັ້ນ ມັນກໍມີວິທີປະຕິບັດທີ່ລະອຽດ ແລະ ມີຄວາມແຕກຕ່າງກັນໄປຕາມລັກສະນະສະເພາະຂອງວັດຖຸຊະນິດນັ້ນໆ, ຂອງກາງທີ່ເປັນວັດຖຸກໍມີຫຼາຍຢ່າງ, ຊຶ່ງບໍ່ສາມາດຂຽນອອກມາໃຫ້ມີຄວາມກະຈ່າງແຈ້ງໄດ້ທັງໝົດທຸກຢ່າງ, ດັ່ງນັ້ນຈຶ່ງຂໍຍົກຂຶ້ນມາບາງກໍລະນີພໍເປັນຕົວຢ່າງ ເຊັ່ນ ຂອງກາງທີ່ເປັນອາວຸດປືນ ແລະ ເສື້ອຜ້າທີ່ຖືກຍິງ, ຊຶ່ງມີລາຍລະອຽດດັ່ງນີ້:

1) ໃນເວລານຳສົ່ງຂອງກາງໄປໃຫ້ສານຫ້າມທຳຄວາມສະອາດປືນ, ຊັກເສື້ອຜ້າ, ລ້າງລຳກ້ອງປືນ ຫຼື ໃຊ້ສິ່ງໃດສິ່ງໜຶ່ງສອດລຳກ້ອງປືນ ຫຼື ແທງເສື້ອຜ້າໃຫ້ເປັນຮູຂາດເພີ່ມຂຶ້ນ;

2) ຖ້າຫາກປືນຂອງກາງມີລູກປືນ ຫຼື ກະສອກລູກປືນບັນຈຸຢູ່ໃຫ້ແຍກເອົາລູກປືນອອກ ແລະ ຫຸ້ມຫໍ່ໄວ້ຕ່າງຫາກ, ແລ້ວສົ່ງຂອງກາງໄປໃຫ້ສານພ້ອມກັນ;

3) ໃນເວລາເອົາໄປສົ່ງໃຫ້ສານຫ້າມທົດລອງຍິງປືນ ຫຼື ທົດລອງນຸ່ງເສື້ອຜ້າທີ່ເປັນຂອງກາງ;

4) ໃນເວລານຳສົ່ງຕ້ອງລະວັງຢ່າໃຫ້ເສື້ອຜ້າ ຫຼື ປືນທີ່ເປັນຂອງກາງເປິະເປື້ອນເພີ່ມຂຶ້ນ;

5) ຖ້າຫາກເສື້ອຜ້າ ຫຼື ປືນເປິະເປື້ອນເລືອດກໍຕ້ອງຕາກແດດ ຫຼື ຕາກລົມໃຫ້ເລືອດແຫ້ງ ແລ້ວຈຶ່ງເອົາໄປສົ່ງໃຫ້ສານ;

6) ບົດບັນທຶກກ່ຽວກັບປືນເຊັ່ນ ທະບຽນປືນ, ເລກໝາຍປະຈຳປືນ, ໃບອະນຸຍາດໃຫ້ນຳໃຊ້ປືນ, ຈຳນວນລູກປືນ, ຍີ່ຫໍ້ປືນ, ສີ ຫຼື ຈຳນວນຂອງເສື້ອຜ້າ, ຈຳນວນຮູລູກປືນໃນເສື້ອຜ້າແຕ່ລະຜືນ ແລ້ວໃຫ້ສົ່ງໄປພ້ອມກັນ;

**2.2.2. ການສົ່ງຂອງກາງທີ່ເປັນເອກະສານໄປໃຫ້ສານ**

ການນຳສົ່ງຂອງກາງທີ່ເປັນເອກະສານໄປໃຫ້ສານນັ້ນ ກໍມີວິທີປະຕິບັດທີ່ຄ້າຍຄືກັນກັບຂອງກາງທີ່ເປັນວັດຖຸ, ພຽງແຕ່ຕ້ອງໄດ້ເພີ່ມທະວີຄວາມລະອຽດ ແລະ ເພີ່ມທະວີຄວາມລະມັດລະວັງຂຶ້ນຕື່ມ ເຊັ່ນ ແຊັກ, ພິໄນກຳ ຫຼື ໜັງສືສັນຍາ ແລະ ອື່ນໆ, ໃນເວລາເອົາຂອງກາງໄປສົ່ງໃຫ້ສານນັ້ນຕ້ອງປະຕິບັດດັ່ງນີ້ :

1) ຢ່າພັບເອກະສານຂອງກາງໃຫ້ເກີດຮອຍພັບໃໝ່, ຖ້າຫາກມີຄວາມຈຳເປັນຕ້ອງພັບ, ກໍຢ່າພັບບໍລິເວນທີ່ເປັນຈຸດສຳຄັນ;

2) ຢ່າຕັດ, ຈີກ, ໃຊ້ເຂັມໝຸດ ຫຼື ໃຊ້ເຄື່ອງຫຍິບ, ໃຊ້ເສັ້ນລວດຫຍິບ ຫຼື ຂີດຂຽນຂໍ້ຄວາມຕ່າງໆລົງໃນເອກະສານຂອງກາງ;

3) ເອົາເອກະສານຂອງກາງ ໃສ່ໃນຊອງທີ່ມີຂະໜາດເໝາະສົມກັບເອກະສານເຊັ່ນ ຊອງທີ່ເຮັດດ້ວຍເຈ້ຍ ຫຼື ເຮັດດ້ວຍຢາງພະລາດສະຕິກ, ຖ້າຫາກມີຈຳນວນຫຼວງຫຼາຍກໍໃຫ້ບັນຈຸດ້ວຍຫີບ ຫຼື ຫໍ່ໃຫ້ຮຽບຮ້ອຍ ແລະ ໃຫ້ແຍກຫີບ ຫຼື ຫໍ່ໃຫ້ລະອຽດ;

4) ເອກະສານຂອງກາງກ່ຽວກັບລາຍນິ້ວມື, ຝາມື ແລະ ຝາຕີນ ຫຼື ເອກະສານຕ່າງໆເຊັ່ນ ໜັງສືສັນຍາ, ພິໄນກຳ, ໃນເວລານຳສົ່ງ ຫ້າມນຳເອົາເອກະສານຂອງທາກາວແລ້ວປົກທັບດ້ວຍເຈ້ຍໃບອື່ນ, ລະວັງບໍ່ໃຫ້ປຽກນ້ຳ, ບໍ່ໃຫ້ຖືກຄວາມຊຸ່ມ ຫຼື ມີອຸນະພູມສູງເກີນໄປ;

5) ເອກະສານຂອງກາງ ເຊັ່ນ ແຊັກ, ພິໄນກຳ ຫຼື ໜັງສືສັນຍາ, ໃນກໍລະນີຕ້ອງສົ່ງໄປໃຫ້ສານຫຼາຍແຫ່ງ ໃຫ້ເຮັດເຄື່ອງໝາຍແຕ່ລະແຫ່ງໄວ້ໃນຂອບເບື້ອງເທິງດ້ານຊ້າຍມືຂອງເອກະສານ ທີ່ເປັນຂອງກາງນັ້ນ ເພື່ອບໍ່ໃຫ້ຫຼົງລືມ ຫຼື ປົນເປກັນ.

ການນຳເອົາຂອງກາງໃນຄະດີໄປສົ່ງໃຫ້ສານນີ້ ນອກຈາກວິທີການສະເພາະດັ່ງທີ່ໄດ້ກ່າວມາໃນຂ້າງເທິງແລ້ວ, ຍັງມີຄວາມຈຳເປັນທີ່ຈະຕ້ອງໄດ້ປະຕິບັດຕາມຫຼັກການລວມໂດຍບໍ່ມີການຈຳແນກວ່າຈະເປັນຂອງກາງປະເພດໃດ, ທັງນີ້ກໍເພື່ອຮັບປະກັນການນຳສົ່ງຂອງກາງໃຫ້ໄປຮອດສານດ້ວຍຄວາມປອດໄພ ຈຶ່ງມີວິທີປະຕິບັດເປັນອັນລວມຄືດັ່ງນີ້:

1) ຂອງກາງບາງຊະນິດໂດຍສະເພາະແມ່ນຊັບສິນທີ່ເປັນກຳມະສິດຂອງບຸກຄົນ, ໃນເວລາອີງການໄອຍະການນຳເອົາຂອງກາງໄປສົ່ງໃຫ້ສານນັ້ນ, ໃນຄວາມເປັນຈິງແລ້ວແມ່ນເປັນການຍາດຊິງການຄອບຄອງຊັບສິ່ງຂອງນັ້ນມາຈາກເຈົ້າກຳມະສິດເດີມໄປໃຫ້ສານ, ສະນັ້ນການນຳສົ່ງຕ້ອງໄດ້ລະມັດລະວັງ, ຕ້ອງມີການປ້ອງກັນການຍາດຊິງຄືນ ແລະ ຕ້ອງມີເຫດຜົນທາງດ້ານກົດໝາຍ, ບໍ່ດັ່ງນັ້ນອາດຖືກຮ້ອງຟ້ອງທາງແພ່ງ ແລະ ທາງອາຍາກັບຄືນກໍເປັນໄດ້;

2) ຂອງກາງປະເພດທີ່ຜິດກົດໝາຍ, ບຸກຄົນບໍ່ອາດສາມາດມີໄວ້ໃນການຄອບໄດ້ ແລະ ຄາດຄະເນວ່າສານຈະຕັດສິນຮິບເປັນຂອງລັດ ເຊັ່ນ ສານເສບຕິດ, ປືນເຖື່ອນ, ໄມ້ເຖື່ອນ, ຊັບສິນທີ່ໄດ້ມາຈາກການສໍ້ລາດບັງຫຼວງ ແລະ ສິ່ງຂອງອື່ນໆ, ກໍໃຫ້ຈັດສົ່ງໂດຍປິດລັບ, ເພາະສິ່ງຂອງດັ່ງກ່າວແມ່ນກ່ຽວຂ້ອງກັບບຸກຄົນທີ່ມີອິດທິພົນ;

3) ຂອງກາງປະເພດທີ່ຈະເຮັດໃຫ້ເສັຍຫາຍແກ່ຄະດີ, ກໍຄວນຈະເອົາໄປສົ່ງໃຫ້ສານໃນທີ່ປະຊຸມສານພາຍຫຼັງທີ່ສຳເລັດການໂຕ້ຖຽງ ແລະ ການສະເໜີຫຼັກຖານ;

4) ຂອງກາງໃນຄະດີທີ່ເປັນໄມ້ທ່ອນ ຫຼື ລົດເຖື່ອນ ຫຼື ແຮ່ທາດເຖື່ອນ, ເຮືອ, ແພເປັນຈຳນວນຫຼວງຫຼາຍຍາກທີ່ຈະເຄື່ອນຍ້າຍ ຫຼື ເກັບຮັກສາໄວ້ໃນສານ, ກໍໃຫ້ເອົາບົດບັນທຶກຂອງກາງໄປສົ່ງໃຫ້ສານ, ແລ້ວໃຫ້ເຈົ້າໜ້າທີ່ຂອງສານລົງໄປກວດກາຂອງກາງຕົວຈິງ ແລະ ມອບຮັບກັນຢູ່ສະໜາມ ຫຼື ຢູ່ໃນສະຖານທີ່ເກັບຮັກສາຂອງກາງ ຕາມຄວາມເໝາະສົມ;

5) ຂອງກາງປະເພດທີ່ມີການລ້ຽງດູ ຫຼື ເຝົ້າຮັກສາ ຫຼື ສັດທີ່ມີຊີວິດ ເຊັ່ນ ງົວ, ຄວາຍ, ຊ້າງ, ມ້າ, ເສືອ, ສິງ, ກະທິງ, ແຮດ ຫຼື ສັດອື່ນໆ ກໍຕ້ອງຂຽນ ແລະ ບອກໃຫ້ສານຮູ້ຢ່າງລະອຽດກ່ຽວກັບຄ່າໃຊ້ຈ່າຍຕ່າງໆ ແລະ ສົມຄວນຮັກສາໄວ້ຢູ່ບ່ອນໃດ;

6) ຂອງກາງປະເພດທີ່ໄປສົ່ງໃຫ້ສານອາດຈະເໜົ່າເປື່ອຍ ຫຼື ເຊື່ອມຄຸນນະພາບໃນລະຫວ່າງການນຳສົ່ງ ຫຼື ໃນເວລາເກັບຮັກສາ, ກໍໃຫ້ຂາຍ ແລະ ເອົາເງິນທີ່ຂາຍໄດ້ພ້ອມດ້ວຍພາບຖ່າຍໄປສົ່ງໃຫ້ສານ;

7) ຂອງກາງທີ່ມີລາຄາສູງ ເຊັ່ນ ເພັດ, ພອຍ, ຄຳຮູບປະພັນ, ເງິນເປັນຈຳນວນຫຼວງຫຼາຍ, ກໍໃຫ້ເອົາພຽງແຕ່ປື້ມຝາກທະນາຄານໄປສົ່ງ, ສ່ວນວັດຖຸຕົວຈິງໃຫ້ໄປກວດນັບຢູ່ທະນາຄານ;

8) ຂອງກາງທີ່ເປັນກ້ອນ ຫຼື ເມັດນ້ອຍ ຫຼື ເປັນຝຸ່ນຜົງ ແມ່ນໃຫ້ບັນຈຸໃສ່ກວດແກ້ວ ຫຼື ກະປອງ ຫຼື ກ່ອງ, ມີເຈັ້ຍ ຫຼື ສຳລີອັດປາກໄວ້ ແລ້ວອັດຝາໃຫ້ແຈບຮຽບຮ້ອຍດີ ເພື່ອບໍ່ໃຫ້ສະເທືອນ ຫຼື ສັ່ນຄອນໄປມາໄດ້ງ່າຍ;

9) ຂອງກາງປະເພດເສດແກ້ວ, ເສດເຫຼັກ, ເສດດິນ, ເສັ້ນຜົມ, ເສັ້ນຂົນ, ເສດເສັ້ນໃຍ, ໃຫ້ໃຊ້ເຈັ້ຍ ຫຼື ສຳລີຫຸ້ມຫໍ່ແລ້ວບັນຈຸໃສ່ກ່ອງ, ພະຍາຍາມຢ່າໃຫ້ກະທົບກະເທືອນຈົນເຮັດໃຫ້ແຕກຊະຊາຍໃນລະຫວ່າງການນຳສົ່ງໄປໃຫ້ສານ;

10) ຂອງກາງປະເພດເປັນສີຕ່າງໆເຊັ່ນ ສີທີ່ເກັບໄດ້ໃນທີ່ເກີດເຫດນັ້ນໃຫ້ບັນຈຸດ້ວຍກ່ອງເຈັ້ຍ ຫຼື ກ່ອງພະລາດສະຕິກ, ໃນເວລາສົ່ງໄປໃຫ້ສານຢ່າໃຫ້ມີສີອື່ນມາເປື້ອນເປິະ ຫຼື ປົນເປໃສ່;

11) ຂອງກາງທີ່ເປັນສານພິດ, ມີປະຕິກິລິຍາຮຸນແຮງ ເຊັ່ນ ນ້ຳກົດດ່າງຕ້ອງບັນຈຸໃນພາຊະນະທີ່ແຂງແຮງ ແລະ ປອດໄພ, ຖ້າຫາກເປັນຂອງແຫຼວຕ້ອງບັນຈຸດ້ວຍກວດແກ້ວຊະນິດທີ່ປາກແຄບ, ປິດຝາໃຫ້ແຈບ, ຮຽບຮ້ອຍ ແລະ ມີເຄື່ອງໝາຍທີ່ຊັດເຈນ;

12) ການມອບ-ຮັບຂອງກາງແຕ່ລະຄັ້ງນັ້ນຕ້ອງຂຽນຮູບປະພັນຢ່າງລະອຽດ, ມີຫຼັກຖານໃນການສົ່ງ-ມອບເພື່ອບໍ່ໃຫ້ມີຊ່ອງຫວ່າງ.

ການຕໍ່ສູ້ທາງດ້ານກົດໝາຍຂອງຫົວໜ້າອົງການໄອຍະການ ໃນຖານະເປັນໂຈດທາງອາຍາ ຫຼື ເປັນຄູ່ຄວາມຝ່າຍກົງກັນຂ້າມທີ່ເຄັ່ງຄັດກັບຈຳເລີຍນັ້ນ, ເຮັດໃຫ້ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ການນຳສົ່ງສຳນວນຄະດີ ແລະ ຂອງກາງໄປໃຫ້ສານນັ້ນ, ຕ້ອງກະທຳ ແລະ ຮັບປະກັນດ້ວຍຄວາມຈິງ ແລະ ຂໍ້ກົດໝາຍ, ເພື່ອໃຫ້ສານລົງໂທດແກ່ຈຳເລີຍຕາມກົດໝາຍ, ແຕ່ບໍ່ແມ່ນເພື່ອໃຫ້ສານຕັດສິນໃຫ້ຈຳເລີຍພົ້ນຂໍ້ກ່າວຫາ. ດັ່ງນັ້ນ, ພາຍຫຼັງທີ່ຫົວໜ້າອົງການໄອຍະການ ໄດ້ສັ່ງຟ້ອງຜູ້ຖືກຫາຂຶ້ນສານ, ໄດ້ນຳສົ່ງສຳນວນຄະດີ ແລະ ຂອງກາງໄປໃຫ້ສານແລ້ວ, ຍັງຕ້ອງມີໜ້າທີ່ນຳໄປພິສູດຄວາມຜິດຂອງຈຳເລີຍຢູ່ສານເພື່ອໃຫ້ຈຳເລີຍໄດ້ຮັບໂທດຕາມກົດໝາຍ. ເຖິງຢ່າງໃດກໍຕາມໃນຂັ້ນຕອນການສັ່ງຟ້ອງນັ້ນ ຜູ້ຖືກຫາກໍໄດ້ຮັບການປົກປ້ອງ ແລະ ຄຸ້ມຄອງຕາມກົດໝາຍ.

### 3. ການປົກປ້ອງສິດຂອງຜູ້ຖືກຫາໃນຂັ້ນຕອນການສັ່ງຟ້ອງຂຶ້ນສານ

ໃນຂັ້ນຕອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານນີ້ ອົງການໄອຍະການກໍຍັງສັນນິຖານໄວ້ກ່ອນວ່າຜູ້ຖືກຫາຍັງເປັນຜູ້ບໍລິສຸດຢູ່. ດັ່ງນັ້ນ, ຈຶ່ງຕ້ອງໄດ້ສ້າງເງື່ອນໄຂ ແລະ ໃຫ້ຫຼັກປະກັນແກ່ຜູ້ຖືກຫາ ເພື່ອໃຫ້ເຂົາໄດ້ນຳໃຊ້ສິດຕາມກົດໝາຍ ເຊັ່ນ ສິດໂຕ້ແຍ່ງ, ໂຕ້ຖຽງ, ສະເໜີຫຼັກຖານເພື່ອປົກປ້ອງຕົນເອງ ແລະ ຈະບໍ່ຖືກບັງຄັບໃຫ້ຊອກຫາຫຼັກຖານມາຢັ້ງຢືນຄວາມບໍລິສຸດຂອງຕົນ, ໃນຂັ້ນຕອນດັ່ງກ່າວນີ້ຜູ້ຖືກຫາມີສິດຕໍ່ສູ້ຄະດີດ້ວຍຕົນເອງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ເພື່ອຊ່ວຍເຫຼືອທາງດ້ານກົດໝາຍ. (ລາຍລະອຽດໄດ້ຂຽນໄວ້ໃນພາກທີ III ບົດທີ 4 ຂໍ້ 1), ເນື່ອງຈາກວ່າຂັ້ນຕອນການສັ່ງຟ້ອງມີຄວາມສຳຄັນຕໍ່ຜູ້ຖືກຫາ ເພາະຄຳສັ່ງຟ້ອງນັ້ນຈະເຮັດໃຫ້ປ່ຽນແປງຖານະຂອງຜູ້ຖືກຫາກາຍມາເປັນຈຳເລີຍໃນຄະດີທັນທີ ແລະ ສຳ ນວນຄະດີກໍຈະເຂົ້າໄປສູ່ຂະບວນການພິຈາລະນາຂອງສານ.

#### 3.1. ສິດໃນການຕໍ່ສູ້ຄະດີຂອງຜູ້ຖືກຫາໃນຂັ້ນຕອນການສັ່ງຟ້ອງ

ໃນຂັ້ນຕອນການສັ່ງຟ້ອງນີ້ ຜູ້ຖືກຫາມີສິດຂໍການປະກັນຕົວ ມີສິດທີ່ຈະໄດ້ຮັບຄວາມຊ່ວຍເຫຼືອທາງດ້ານກົດໝາຍຈາກທະນາຍຄວາມ ຫຼື ຜູ້ປົກປ້ອງ, ມີສິດທີ່ຈະໄດ້ຮັບການແຈ້ງສິດ, ແຈ້ງພັນທະ, ແຈ້ງຂໍ້ກ່າວຫາ, ມີສິດສະເໜີຄ້ານຕົວພະນັກງານໄອຍະການ, ຫົວໜ້າອົງການໄອຍະການ, ມີສິດສະເໜີເອົາ ຫຼື ແຕ່ງຕັ້ງທະນາຍຄວາມມາຕໍ່ສູ້ຄະດີໃຫ້ຕົນ, ມີສິດທີ່ຈະໄດ້ຮັບການພິຈາລະນາຄະດີຢ່າງເປັນທຳ ແລະ ມີສິດອື່ນໆຕາມກົດໝາຍ. ສຳລັບຜູ້ຖືກຫາທີ່ຈະຖືກສັ່ງຟ້ອງຂຶ້ນສານ ຫາກເປັນເດັກຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ, ຕາບອດ, ປາກກືກ, ຄົນປັນຍາອ່ອນ, ເສຍຈິດ, ຜູ້ບໍ່ຮູ້ພາສາລາວ ແລະ ຜູ້ທີ່ກົດໝາຍກຳນົດໂທດປະຫານຊີວິດນັ້ນ, ຖ້າຜູ້ຖືກຫາຍັງບໍ່ທັນມີທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນແລ້ວຫົວໜ້າອົງການໄອຍະການຕ້ອງສະເໜີຕໍ່ສະພາທະນາຍຄວາມ ເພື່ອແຕ່ງຕັ້ງທະນາຍຄວາມໃຫ້ຜູ້ກ່ຽວໂດຍໜ້າທີ່. ສະພາທະນາຍຄວາມຕ້ອງພິຈາລະນາແຕ່ງຕັ້ງຕາມຄຳສະເໜີຂອງຫົວໜ້າອົງການໄອຍະການ ພາຍໃນກຳນົດເຈັດວັນ ນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ. (ໃນຂັ້ນຕອນການສັ່ງຟ້ອງຜູ້ຖືກຫາກໍມີສິດຄືກັນກັບຂັ້ນຕອນການສືບສວນ-ສອບສວນ ຊຶ່ງໄດ້ກຳນົດໄວ້ໃນພາກທີ III).

#### 3.2. ໜ້າທີ່ຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃນຂັ້ນຕອນຂອງການສັ່ງຟ້ອງຜູ້ຖືກຫາຂຶ້ນສານ

ໃນຂັ້ນຕອນການສັ່ງຟ້ອງຜູ້ຖືກຫາຂຶ້ນສານ ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນມີໜ້າທີ່ປົກປ້ອງລູກຄວາມຂອງຕົນ ແລະ ກົງກັນຂ້າມກໍເປັນສິດຂອງຜູ້ຖືກຫາທີ່ຈະໄດ້ຮັບຄວາມຊ່ວຍເຫຼືອຈາກທະນາຍຄວາມ ຫຼື ຜູ້ປົກປ້ອງ, ເປັນສິ່ງທີ່ບໍ່ສາມາດຈະປະຕິເສດໄດ້ ແລະ ເປັນຮາກຖານຂອງລະບົບຄວາມຍຸຕິທຳທາງອາຍາ, ຖ້າຫາກປາສະຈາກສິດດັ່ງກ່າວແລ້ວຄວາມຍຸຕິທຳ

ຈະເກີດຂຶ້ນບໍ່ໄດ້ເລີຍ. ເປັນການຕໍ່ສູ້ກັນດ້ວຍເຫດຜົນທາງກົດໝາຍໂດຍມີຖານະທີ່ເທົ່າທຽມ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ (ລະອຽດໄດ້ກຳນົດໄວ້ໃນ ພາກທີ III ບົດທີ 4).

ເນື່ອງຈາກວ່າທະນາຍຄວາມ ແມ່ນຜູ້ທີ່ມີຄວາມຮູ້ມີຄວາມຊຳນານ ຫຼື ຊ່ຽວຊານທາງດ້ານກົດໝາຍ. ດັ່ງນັ້ນ, ໃນເມື່ອໄດ້ຮັບການແຕ່ງຕັ້ງແລ້ວຈຶ່ງມີໜ້າທີ່ໃຫ້ຄຳປຶກສາ, ໃຫ້ຄວາມຊ່ວຍເຫຼືອທາງດ້ານກົດໝາຍແກ່ຜູ້ຖືກຫາ. ໃນການປະຕິບັດໜ້າທີ່ຂອງຂອງທະນາຍຄວາມນອກຈາກຈະເປັນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຖືກຫາແລ້ວ, ຍັງສ້າງຄວາມເຂັ້ມແຂງແກ່ຂະບວນການຍຸຕິທຳທາງອາຍາ, ຕ້ານການລ່ວງລະເມີດສິດອັນຊອບທຳຂອງຜູ້ຖືກຫາ ແລະ ເຮັດໃຫ້ເຂົ້າເຖິງຂະບວນການຍຸຕິທຳຕາມກົດໝາຍ, ສ້າງຄວາມເຊື່ອໝັ້ນ ແລະ ທັງເຮັດໃຫ້ສັງຄົມຍອມຮັບໃນຂະບວນການຍຸຕິທຳທາງອາຍາ ໂດຍສະເພາະແມ່ນຂັ້ນຕອນການສັ່ງຟ້ອງ. ໃນເມື່ອມີທະນາຍຄວາມເຂົ້າຮ່ວມໃນການດຳເນີນຄະດີກໍຈະມີສ່ວນເຮັດ ໃຫ້ພະນັກງານໄອຍະການປະຕິບັດໜ້າທີ່ດ້ວຍຄວາມລະມັດລະວັງຂຶ້ນ, ຄ້າຍຄືກັນກັບວ່າມີຄົນທີ່ຮູ້ກ່ຽວກັບລະບຽບການເຄື່ອນໄຫວວຽກງານຂອງເຮົາມາເຂົ້າຮ່ວມນຳ.

ພ້ອມນີ້ທະນາຍຄວາມຍັງຊ່ວຍໃນການເກັບກຳຂໍ້ມູນຫຼັກຖານທີ່ເປັນປະໂຫຍດໃຫ້ຜູ້ຖືກຫາທີ່ຖືກກັກຂັງພາງ ຊຶ່ງບໍ່ສາມາດອອກໄປເຄື່ອນໄຫວຢູ່ຂ້າງນອກ, ນອກຈາກນີ້ຍັງເປັນຄົນກາງ ເຊື່ອມຕໍ່ລະຫວ່າງຜູ້ຖືກຫາກັບບຸກຄົນອື່ນໆທີ່ຢູ່ຂ້າງນອກ ແລະ ທັງຊ່ວຍໃຫ້ຜູ້ຖືກຫາມີຄວາມອົບອຸ່ນທາງດ້ານຈິດໃຈ.

# ພາກທີ V
# ການດຳເນີນຄະດີຢູ່ສານຂັ້ນຕົ້ນ
## ບົດທີ 1
## ສິດອຳນາດຂອງສານຕັດສິນຄະດີອາຍາເປັນຂັ້ນຕົ້ນ

### 1. ຄວາມຮູ້ທົ່ວໄປກ່ຽວກັບສານ

ສານ ແມ່ນອົງການຕຸລາການທີ່ມີສິດອຳນາດໃນການພິຈາລະນາຕັດສິນ ຫຼື ພິພາກສາຄະດີ ຢູ່ໃນ ສປປ ລາວ; ມີແຕ່ສານເທົ່ານັ້ນ ທີ່ມີສິດອຳນາດພິຈາລະນາຕັດສິນຄະດີອາຍາບົນພື້ນຖານຫຼັກຖານ, ການເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ (ມ 2 ກປຊ). ບຸກຄົນໃດໜຶ່ງຈະບໍ່ຖືວ່າເປັນຜູ້ກະທຳຜິດ ແລະ ຖືກລົງໂທດທາງອາຍາ ຖ້າບໍ່ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ (ມ 17 ກດຍ).

ດັ່ງນັ້ນ, ສານທີ່ມີສິດອຳນາດໃນການຕັດສິນຄະດີອາຍາເປັນຂັ້ນຕົ້ນ (ມ 160 ກດຍ) ມີດັ່ງນີ້:

- ສານປະຊາຊົນເຂດ;
- ສານປະຊາຊົນແຂວງ, ນະຄອນ;
- ສານທະຫານພາກ.

#### 1.1. ສິດອຳນາດ ຂອງສານປະຊາຊົນເຂດ ແລະ ສານປະຊາຊົນແຂວງ, ນະຄອນ

ໃນການພິຈາລະນາຕັດສິນຂອງສານປະຊາຊົນເຂດ ແລະ ສານປະຊາຊົນແຂວງ, ນະຄອນໃຫ້ປະຕິບັດດັ່ງນີ້ (ມ 161 ກດຍ):

ທຸກການກະທຳຜິດທາງອາຍາ ທີ່ຕົກຢູ່ໃນວັກໃດໜຶ່ງຂອງມາດຕາກົດໝາຍອາຍາ ຫຼື ກົດໝາຍອື່ນ ຊຶ່ງກຳນົດໂທດຕັດອິດສະລະພາບຕ່ຳກວ່າສາມປີແມ່ນສິດອຳນາດຂອງສານປະຊາຊົນເຂດ.

ທຸກການກະທຳຜິດທາງອາຍາ ທີ່ຕົກຢູ່ໃນວັກໃດໜຶ່ງຂອງມາດຕາກົດໝາຍອາຍາ ຫຼື ກົດໝາຍອື່ນ ຊຶ່ງກຳນົດໂທດຕັດອິດສະລະພາບ ແຕ່ ສາມປີຂຶ້ນໄປ ແລະ ທຸກການກະທຳຜິດຂອງເດັກ ໃນກໍລະນີທີ່ບໍ່ມີສານເດັກ ແມ່ນສິດອຳນາດຂອງສານປະຊາຊົນ ແຂວງ, ນະຄອນ.

ສຳລັບການກະທຳຜິດທາງອາຍາ ຊຶ່ງມີຜູ້ກະທຳຜິດຫຼາຍຄົນ ແຕ່ໃນນັ້ນມີບາງຄົນ ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບແຕ່ສາມປີຂຶ້ນໄປນັ້ນ ຄະດີດັ່ງກ່າວແມ່ນສິດໜ້າທີ່ຂອງສານປະຊາຊົນແຂວງ, ນະຄອນ.

**1.2. ສິດອຳນາດ ຂອງສານທາງດ້ານພື້ນທີ່**

ສິດອຳນາດທາງດ້ານພື້ນທີ່ໃນການຕັດສິນຄະດີອາຍາຂອງສານປະຊາຊົນ ແລະ ສານທະຫານ (ມ 162 ກດຍ) ດັ່ງນີ້:

ສານ ບ່ອນການກະທຳຜິດໄດ້ເກີດຂຶ້ນ ເວັ້ນເສຍແຕ່ໃນກໍລະນີທີ່ຈຳເປັນ ເພື່ອຮັບປະກັນຄວາມປອດໄພ ແລະ ຄວາມຍຸຕິທຳ ປະທານສານປະຊາຊົນສູງສຸດ ມີສິດຕົກລົງໃຫ້ສານບ່ອນອື່ນຕັດສິນກໍໄດ້;

**ຕົວຢ່າງ:** ເຫດເກີດຂຶ້ນຢູ່ແຂວງຫຼວງພະບາງ ແຕ່ສານແຂວງຫຼວງພະບາງບໍ່ສາມາດຕັດສິນໄດ້ຍ້ອນວ່າ ຄະດີດັ່ງກ່າວມີຄວາມສັບສົນ ພົວພັນກັບຫຼາຍພາກສ່ວນ ແລະ ຜູ້ທີ່ມີໜ້າທີ່. ດັ່ງນັ້ນ, ສານແຂວງຫຼວງພະບາງ ຈຶ່ງຂຽນຄຳຮ້ອງຂໍຄຳຊີ້ຂາດມາຍັງສານປະຊາຊົນສູງສຸດ ເພື່ອໃຫ້ສານປະຊາຊົນສູງສຸດອອກຄຳຊີ້ຂາດວ່າຈະໃຫ້ສານໃດເປັນຜູ້ພິຈາລະນາຕັດສິນ, ຖ້າສານປະຊາຊົນສູງສຸດອອກຄຳຊີ້ຂາດໃຫ້ສານໃດສານນັ້ນຕ້ອງຮັບໄປພິຈາລະນາ.

ສຳລັບການກະທຳຜິດ ຊຶ່ງຜູ້ດຽວໄດ້ກໍ່ຂຶ້ນຢູ່ຫຼາຍບ່ອນ ຫຼື ຫຼາຍແຂວງໃຫ້ເອົາບ່ອນການກະທຳຜິດສຸດທ້າຍເປັນບ່ອນດຳເນີນຄະດີ. ກໍລະນີຖ້າຫາກມີການກະທຳຜິດຫຼາຍອັນ ຫຼື ຫຼາຍສະຖານ ໃຫ້ຖືເອົາບ່ອນການກະທຳຜິດທີ່ໜັກກວ່າໝູ່ນັ້ນເປັນບ່ອນດຳເນີນຄະດີ (ມ 97 ກດຍ).

**ຕົວຢ່າງ:** ທ້າວ ກ ໄດ້ກະທຳຜິດໃນສະຖານຄາດຕະກຳຢູ່ແຂວງຫຼວງພະບາງ ແລ້ວເອົາຕົວຫຼົບໜີມານະຄອນຫຼວງວຽງຈັນ ແລ້ວໄດ້ກະທຳຜິດໃໝ່ໃນສະຖານລັກຊັບຂອງພົນລະເມືອງ ແລ້ວຖືກເຈົ້າໜ້າທີ່ຈັບຕົວໄດ້, ກໍລະນີນີ້ສານປະຊາຊົນນະຄອນຫຼວງວຽງຈັນ ຕ້ອງໄດ້ປະສານສົມທົບກັບສານປະຊາຊົນແຂວງຫຼວງພະບາງແລ້ວສົ່ງຕົວທ້າວ ກ ໃຫ້ສານປະຊົນແຂວງຫຼວງພະບາງເປັນຜູ້ພິຈາລະນາຕັດສິນຄະດີ ເນື່ອງຈາກວ່າສະຖານການກະທຳຜິດຢູ່ແຂວງຫຼວງພະບາງແມ່ນໜັກກວ່າສະຖານການກະທຳຜິດຢູ່ ນະຄອນຫຼວງວຽງຈັນ.

ໃນກໍລະນີທີ່ການກະທຳຜິດຫາກໄດ້ເກີດຂຶ້ນຢູ່ໃນເຮືອບິນ, ເຮືອ, ກຳປັ່ນໂດຍສານ ຫຼື ຂົນສົ່ງຂອງ ສປປ ລາວ ທີ່ກຳລັງດຳເນີນການບໍລິການຢູ່ພາຍໃນ ຫຼື ຢູ່ຕ່າງປະເທດນັ້ນສານບ່ອນເຮືອບິນ, ເຮືອ, ກຳປັ່ນ ມາຈອດຢູ່ສະໜາມບິນ ຫຼື ທ່າເຮືອບ່ອນທຳອິດຂອງ ສປປ ລາວ ເປັນສານທີ່ມີສິດອຳນາດພິຈາລະນາຄະດີດັ່ງກ່າວ;

**ຕົວຢ່າງ:** ເຮືອບິນໄດ້ລົງຈອດຢູ່ສະໜາມບິນວັດໄຕນະຄອນຫຼວງວຽງຈັນ ແມ່ນສານປະຊາຊົນນະຄອນຫຼວງວຽງຈັນເປັນສານທີ່ມີສິດອຳນາດໃນການພິຈາລະນາຕັດສິນຄະດີ.

ຄົນລາວທີ່ໄດ້ກະທຳຜິດຢູ່ຕ່າງປະເທດ ແລະ ໄດ້ຖືກນຳມາດຳເນີນຄະດີຢູ່ ສປປ ລາວ ແມ່ນສານປະຊາຊົນແຂວງ, ນະຄອນ ບ່ອນຢູ່ສຸດທ້າຍຂອງຜູ້ກ່ຽວຢູ່ ສປປ ລາວ ມີສິດໜ້າທີ່

ພິຈາລະນາ. ຖ້າຫາກບໍ່ຮູ້ບ່ອນຢູ່ສຸດທ້າຍຂອງຜູ້ກ່ຽວຢູ່ ສປປ ລາວ ແລ້ວ ກໍໃຫ້ປະທານສານປະຊາຊົນສູງສຸດຕົກລົງໃຫ້ສານໃດໜຶ່ງມີສິດອຳນາດພິຈາລະນາ.

**ຕົວຢ່າງ 1:** ຄົນລາວໄປກະທຳຜິດຢູ່ຕ່າງປະເທດ ເວລາຖືກເອົາຕົວມາດຳເນີນຄະດີຢູ່ ສປປ ລາວ ຖ້າຜູ້ກ່ຽວຢູ່ແຂວງຄຳມ່ວນເປັນບ່ອນຢູ່ສຸດທ້າຍກໍໃຫ້ສານປະຊາຊົນແຂວງຄຳມ່ວນພິຈາລະນາຕັດສິນຄະດີ.

**ຕົວຢ່າງ 2:** ຄົນລາວໄປກະທຳຜິດຢູ່ຕ່າງປະເທດ ເວລາຖືກເອົາຕົວມາດຳເນີນຄະດີຢູ່ ສປປ ລາວ ແຕ່ຜູ້ກ່ຽວບໍ່ມີບ່ອນຢູ່ທີ່ແນ່ນອນວ່າຜູ້ກ່ຽວຢູ່ນະຄອນຫຼວງວຽງຈັນ ຫຼື ແຂວງອື່ນ ກໍລະນີນີ້ແມ່ນໃຫ້ປະທານສານປະຊາຊົນສູງສຸດເປັນຜູ້ຕົກລົງວ່າ ຈະໃຫ້ສານໃດເປັນຜູ້ມີສິດໜ້າທີ່ພິຈາລະນາ ຖ້າຖືກສານໃດກໍຕ້ອງພິຈາລະນາຕັດສິນຕາມການຕົກລົງຂອງສານປະຊາຊົນສູງສຸດ.

### 1.3. ການຊີ້ຂາດກ່ຽວກັບສິດອຳນາດຂອງສານ

ໃນກໍລະນີທີ່ມີຂໍ້ຂັດແຍ່ງໃນການຊີ້ຂາດກ່ຽວກັບສິດອຳນາດຂອງສານໃຫ້ປະຕິບັດ (ມ 163 ກດຍ) ດັ່ງນີ້:

ການຊີ້ຂາດກ່ຽວກັບສິດອຳນາດຂອງສານປະຊາຊົນເຂດ ຢູ່ແຂວງ, ນະຄອນດຽວກັນ ແມ່ນປະທານສານປະຊາຊົນແຂວງ, ນະຄອນເປັນຜູ້ຕົກລົງ;

**ຕົວຢ່າງ:** ສານເຂດແຕ່ລະເຂດທີ່ຂຶ້ນກັບສານປະຊາຊົນແຂວງວຽງຈັນກໍໃຫ້ປະທານສານປະຊາຊົນແຂວງວຽງຈັນເປັນຜູ້ຕົກລົງຈະໃຫ້ສານປະຊາຊົນເຂດໃດເປັນຜູ້ພິຈາລະນາ.

ການຊີ້ຂາດກ່ຽວກັບສິດອຳນາດຂອງສານປະຊາຊົນເຂດທີ່ຢູ່ແຂວງຕ່າງກັນ ແມ່ນປະທານສານປະຊາຊົນພາກເປັນຜູ້ຕົກລົງ;

**ຕົວຢ່າງ:** ສານປະຊາຊົນເຂດສອງຢູ່ແຂວງບໍລິຄຳໄຊ ຫຼື ສານປະຊາຊົນເຂດໜຶ່ງຢູ່ແຂວງວຽງຈັນ ກໍລະນີມີຂໍ້ຂັດແຍ່ງກ່ຽວກັບສິດອຳນາດໃນການພິຈາລະນາ ກໍລະນີນີ້ແມ່ນປະທານສານປະຊາຊົນພາກກາງເປັນຜູ້ຕົກລົງວ່າຈະໃຫ້ສານປະຊາຊົນເຂດຂອງແຂວງໃດ ເປັນຜູ້ພິຈາລະນາ.

ການຊີ້ຂາດກ່ຽວກັບສິດອຳນາດຂອງສານປະຊາຊົນແຂວງ, ນະຄອນດ້ວຍກັນ ແມ່ນປະທານສານປະຊາຊົນສູງສຸດເປັນຜູ້ຕົກລົງ;

**ຕົວຢ່າງ:** ເຈົ້າໜ້າທີ່ແຂວງຫຼວງນ້ຳທາຈັບຕົວ ທ້າວ ກ ໄດ້ ແລະ ຜູ້ກ່ຽວໃຫ້ການຮັບສາລະພາບວ່າ ຕົນໄດ້ລັກລົດຈັກມາຈາກແຂວງອຸດົມໄຊແທ້, ກໍລະນີດັ່ງກ່າວເຫັນວ່າສານປະຊາຊົນແຂວງອຸດົມໄຊ ຂໍເອົາໄປພິຈາລະນາຕັດສິນຢູ່ແຂວງອຸດົມໄຊ, ແຕ່ສານປະຊາຊົນແຂວງຫຼວງນ້ຳທາອ້າງວ່າ ຕ້ອງແມ່ນສານປະຊາຊົນແຂວງຫຼວງນ້ຳທາເປັນຜູ້ດຳເນີນຄະດີ

ເນື່ອງຈາກວ່າຜູ້ກ່ຽວໄດ້ຖືກຈັບຢູ່ແຂວງ ຫຼວງນ້ຳທາ, ກໍລະນີນີ້ ຕ້ອງສະເໜີໃຫ້ປະທານສານປະຊາຊົນສູງສຸດ ເປັນຜູ້ຕົກລົງວ່າຈະໃຫ້ສານແຂວງໃດເປັນຜູ້ພິຈາລະນາຕັດສີນ.

ການຊີ້ຂາດກ່ຽວກັບສິດອຳນາດຂອງສານປະຊາຊົນ ແລະ ສານທະຫານແມ່ນປະທານສານປະຊາຊົນສູງສຸດເປັນຜູ້ຕົກລົງ;

**ຕົວຢ່າງ:** ຄະດີການລະເມີດກົດຈະລາຈອນ ທີ່ພາໃຫ້ເກີດອຸບປະຕິເຫດລະຫວ່າງປະຊາຊົນກັບທະຫານ ສານທະຫານກໍຢາກເອົາໄປດຳເນີນຢູ່ສານທະຫານ, ສານປະຊາຊົນກໍອ້າງວ່າ ຕ້ອງແມ່ນສິດອຳນາດຂອງສານປະຊາຊົນ ຕໍ່ກັບບັນຫາດັ່ງກ່າວນີ້ ກໍແມ່ນປະທານສານປະຊາຊົນສູງສຸດເປັນຜູ້ຕົກລົງຕາມການສະເໜີຂອງສານບ່ອນຂັດແຍ່ງກັນ.

## 2. ການຮັບເອົາຄະດີມາພິຈາລະນາ

**ແຜນວາດການຮັບເອົາສຳນວນຄະດີອາຍາມາພິຈາລະນາ**[31]




ສານຈະຮັບເອົາສຳນວນຄະດີອາຍາມາພິຈາລະນາໄດ້ ກໍຕໍ່ເມື່ອຫາກມີຄຳສັ່ງຟ້ອງຂຶ້ນສານຂອງຫົວໜ້າອົງການໄອຍະການເທົ່ານັ້ນ (ມ 164 ກດຍ). ພາຍຫຼັງຫົວໜ້າອົງການໄອຍະການ ໄດ້ມີຄຳສັ່ງຟ້ອງຂຶ້ນສານແລ້ວ ສານຕ້ອງໄດ້ກວດກາເບິ່ງຄຳສັ່ງຟ້ອງດັ່ງກ່າວວ່າພະນັກງານໄອຍະການຜູ້ຮັບຜິດຊອບຄະດີ ໄດ້ນຳເອົາຄຳສັ່ງຟ້ອງໄປຫາຈຳເລີຍ ຢູ່ສະຖານທີ່ຄຸມຂັງບ່ອນຈຳເລີຍ ຢູ່ນັ້ນເຊັນຮັບຊາບຕໍ່ຂໍ້ກ່າວຫາແລ້ວ ຫຼື ຍັງ, ຖ້າຍັງແມ່ນຕ້ອງໄດ້ສົ່ງສຳນວນຄະດີກັບຄືນໃຫ້ອົງການໄອຍະການ ເພື່ອແຈ້ງຄຳສັ່ງຟ້ອງດັ່ງກ່າວ ໃຫ້ຈຳເລີຍຊາບ

[31] ແຜນວາດການຮັບເອົາສຳນວນຄະດີອາຍາມາພິຈາລະນາ ແມ່ນການຈໍລະຈອນເອກະສານ ແລະ ສຳນວນຄະດີອາຍາຕາມທີ່ໄດ້ປະຕິບັດຕົວຈິງຢູ່ໃນສານຂັ້ນຕົ້ນ

ກ່ອນ ເພື່ອໃຫ້ຈຳເລີຍ ນັ້ນກະກຽມເອກະສານ ແລະ ຫຼັກຖານຕ່າງໆ ເພື່ອມາເປັນບ່ອນອີງໃນການຕໍ່ສູ້ຄະດີຢູ່ຂັ້ນສານ.

**2.1. ກຳນົດເວລາໃນການພິຈາລະນາຕັດສິນຄະດີຢູ່ສານຂັ້ນຕົ້ນ**

ສານປະຊາຊົນເຂດ, ສານປະຊາຊົນແຂວງ, ນະຄອນ ຂັ້ນຕົ້ນ ແລະ ສານທະຫານພາກຕ້ອງພິຈາລະນາຕັດສິນຄະດີ ພາຍໃນກຳນົດ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳສັ່ງຟ້ອງຈາກຫົວໜ້າອົງການໄອຍະການ ເປັນຕົ້ນໄປ (ມ 165 ກດຍ) ໝາຍຄວາມວ່າ ພາຍຫຼັງສານໄດ້ຮັບສຳນວນຄະດີເຂົ້າມາ ສານ ແລະ ຈ່າສານໄດ້ຂຶ້ນເລກທີໃສ່ປຶ້ມຂຶ້ນຟ້ອງແລ້ວ ສົ່ງໄປໃຫ້ປະທານສານກວດກາ ແລະ ບັນທຶກໄວ້ ຈາກນັ້ນກໍສົ່ງໄປໃຫ້ຫົວໜ້າຄະນະສານອາຍາ ຈະເປັນຜູ້ແຈກຢາຍຄະດີໃຫ້ຜູ້ພິພາກສາ ແລະ ຜູ້ຊ່ວຍຜູ້ພິພາກສາຄົ້ນຄວ້າ ນັບແຕ່ມື້ໄດ້ຮັບສຳນວນຄະດີເປັນຕົ້ນໄປ, ຕ້ອງຄົ້ນຄວ້າ ແລະ ນຳຄະດີອອກພິຈາລະນາຕັດສິນພາຍໃນກຳນົດເວລາ ສາມສິບວັນ ດັ່ງກ່າວ.

ສຳລັບຄະດີທີ່ສັ່ງຟ້ອງຂຶ້ນສານໂດຍກົງ ຕ້ອງພິຈາລະນາຕັດສິນ ພາຍໃນກຳນົດ ສີ່ສິບແປດຊົ່ວໂມງ ນັບແຕ່ເວລາໄດ້ຮັບຄຳສັ່ງຟ້ອງໂດຍກົງ ຈາກຫົວໜ້າອົງການໄອຍະການ ເປັນຕົ້ນໄປ. ຄຳຕັດສິນຂອງສານໃນກໍລະນີນີ້ສາມາດຂໍອຸທອນໄດ້ ແຕ່ບໍ່ມີສິດຂໍລຶບລ້າງ.

ກໍລະນີມີສິດຂໍອຸທອນໄດ້ ແຕ່ບໍ່ມີສິດຂໍລຶບລ້າງ ເນື່ອງຈາກ ການກະທຳຜິດດັ່ງກ່າວເປັນການກະທຳຜິດທີ່ມີລັກສະນະເບົາບາງ, ມີຫຼັກຖານຄົບຖ້ວນ ເປັນຕົ້ນແມ່ນການກະທຳຜິດເຊິ່ງໜ້າ, ມີການຮັບສາລະພາບຂອງຜູ້ຖືກຫາ.

ການສັ່ງຟ້ອງໂດຍກົງ ບໍ່ຈຳເປັນຕ້ອງຂຽນເປັນລາຍລັກອັກສອນກໍໄດ້ ໝາຍຄວາມວ່າສັ່ງຟ້ອງທາງປາກເປົ່າ, ເວລາໄຕ່ສວນໃນທີ່ປະຊຸມສານສິ້ນສຸດແລ້ວ ກໍໃຫ້ໄອຍະການຖະແຫຼງປາກເປົ່າກໍໄດ້ ແລ້ວຈຶ່ງມາຂຽນເປັນລາຍລັກອັກສອນຕາມຫຼັງ ເພື່ອໃຫ້ສານເອົາເຂົ້າໄວ້ໃນສຳນວນຄະດີ.

**2.2. ມາດຕະການຂອງສານ**

ໃນການດຳເນີນຄະດີຢູ່ສານ ສານມີສິດນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ. ໃນກໍລະນີທີ່ມີການນຳໃຊ້, ປ່ຽນແປງ ຫຼື ຍົກເລີກມາດຕະການສະກັດກັ້ນ ສານຕ້ອງແຈ້ງໃຫ້ອົງການໄອຍະການຂັ້ນດຽວກັນ, ຈຳເລີຍ, ໂຈດທາງແພ່ງ, ທະນາຍຄວາມ, ຜູ້ປົກປ້ອງອື່ນ ຫຼື ສະຖານທີ່ກັກຂັງຈຳເລີຍ ໃນທັນໃດ (ມ 166 ກດຍ).

**2.3. ການຄົ້ນຄວ້າຄະດີຂອງສານ**

ພາຍຫຼັງທີ່ສານໄດ້ຮັບສຳນວນຄະດີຈາກ ອົງການໄອຍະການແລ້ວ ຕາມຫຼັກການຂອງກົດໝາຍ ປະທານສານຈະມອບໃຫ້ ຜູ້ພິພາກສາໃດໜຶ່ງ (ແຕ່ໃນການປະຕິບັດຕົວຈິງ ປະທານສານຈະມອບໃຫ້ຫົວໜ້າຄະນະສານກ່ອນ ແລ້ວຈຶ່ງໃຫ້ຫົວໜ້າຄະນະສານ ແຈກຢາຍໃຫ້ຜູ້ພິພາກສາ ໂດຍຜ່ານໜ່ວຍງານຈ່າສານ) ເປັນຜູ້ຄົ້ນຄວ້າຄວາມຖືກຕ້ອງ ແລະ ຄົບຖ້ວນກ່ຽວກັບການດຳເນີນຄະດີຂອງອົງການສືບສວນ-ສອບສວນ, ອົງການໄອຍະການ ແລະ ຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການ ຈາກນັ້ນກໍນຳສະເໜີປະທານສານ ເພື່ອພິຈາລະນາຕົກລົງຕາມແຕ່ລະກໍລະນີດັ່ງນີ້ (ມ 167 ກດຍ):

1) ສົ່ງສຳນວນຄະດີຄືນໃຫ້ອົງການໄອຍະການ ເພື່ອທຳການສືບສວນ-ສອບສວນເພີ່ມເຕີມ ຖ້າເຫັນວ່າການສືບສວນ-ສອບສວນ ຫາກຍັງບໍ່ທັນຄົບຖ້ວນ;

2) ສົ່ງສຳນວນຄະດີຄືນໃຫ້ອົງການໄອຍະການ ເພື່ອສັ່ງຟ້ອງເພີ່ມເຕີມ ຖ້າເຫັນວ່າຍັງມີການກະທຳຜິດອື່ນ ຫຼື ມີບຸກຄົນອື່ນ ທີ່ບໍ່ທັນໄດ້ຖືກສັ່ງຟ້ອງຂຶ້ນສານ;

3) ຕົກລົງວັນ, ເວລາ ນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ ຖ້າເຫັນວ່າການສືບສວນ-ສອບສວນ ຫາກໄດ້ດຳເນີນໄປຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ.

ພາຍຫຼັງປະທານສານໄດ້ອອກຄຳຕົກລົງໃດໜຶ່ງ ດັ່ງທີ່ກ່າວມາຂ້າງເທິງນີ້ແລ້ວ ກໍຕ້ອງແຈ້ງໃຫ້ຈຳເລີຍ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ ຊາບພາຍໃນກຳນົດເວລາສາມວັນ ນັບແຕ່ວັນອອກຄຳຕົກລົງເປັນຕົ້ນໄປ.

**2.4. ການສົ່ງສຳນວນຄະດີຄືນ ເພື່ອດຳເນີນການສືບສວນ-ສອບສວນເພີ່ມເຕີມ**

ປະທານສານ ຈະອອກຄຳສັ່ງສົ່ງສຳນວນຄະດີຄືນໃຫ້ຫົວໜ້າອົງການໄອຍະການ ເພື່ອດຳເນີນການສືບສວນ-ສອບສວນ ຫຼື ສັ່ງຟ້ອງເພີ່ມເຕີມ (ມ 168 ກດຍ) ຕາມແຕ່ລະກໍລະນີ ດັ່ງນີ້:

1) ຂາດຫຼັກຖານທີ່ສຳຄັນ

**ຕົວຢ່າງ:** ຄະດີຢາເສບຕິດ ໃນເມື່ອຄົ້ນຄວ້າສຳນວນຄະດີແລ້ວເຫັນວ່າ ຢູ່ໃນສຳນວນຄະດີດັ່ງກ່າວ ບໍ່ມີໃບຢັ້ງຢືນ ຜົນກວດພິສູດວິໄຈກ່ຽວກັບ ສານເສບຕິດ ຈາກກົມອາຫານ ແລະ ຢາ ກະຊວງສາທາລະນະສຸກແລ້ວ ສານຈຳເປັນຕ້ອງສົ່ງສຳນວນຄະດີໄປຍັງອົງການໄອຍະການ ເພື່ອໃຫ້ເຈົ້າໜ້າທີ່ເອົາໄປພິສູດຫາສານເສບຕິດ

2) ມີພື້ນຖານທີ່ພາໃຫ້ເຊື່ອຖືໄດ້ວ່າ ຈຳເລີຍ ຍັງມີການກະທຳຜິດ ຫຼື ມີຜູ້ກະທຳຜິດອື່ນອີກໃນຄະດີດຽວກັນທີ່ບໍ່ທັນໄດ້ສັ່ງຟ້ອງຂຶ້ນສານ.

**ຕົວຢ່າງ:** ທ້າວ ກ ແລະ ທ້າວ ຂ ໄດ້ຮ່ວມກັນກະທຳຜິດໃນສະຖານດຽວກັນຄື ລັກຊັບຂອງພົນລະເມືອງ ແຕ່ອົງການໄອຍະການສັ່ງຟ້ອງແຕ່ທ້າວ ກ ບໍ່ໄດ້ສັ່ງຟ້ອງທ້າວ ຂ ທັງໆທີ່

ທ້າວ ຂ ກໍໄດ້ຮ່ວມກະທໍາຜິດນໍາກັນແຕ່ຕົ້ນຕະຫຼອດປາຍ, ເມື່ອສານຄົ້ນຄວ້າແລ້ວເຫັນວ່າຍັງສັ່ງຟ້ອງບໍ່ຄົບຖ້ວນກັບເຫດການຕົວຈິງ. ດັ່ງນັ້ນ, ສານຕ້ອງສົ່ງສໍານວນຄະດີ ພ້ອມທັງເຮັດປະເດັນຊີ້ແຈງກ່ຽວກັບບັນຫາດັ່ງກ່າວ ໃຫ້ອົງການໄອຍະການຂັ້ນຂອງຕົນ ເພື່ອທໍາການສັ່ງຟ້ອງທ້າວ ຂ ຄືນໃນສະຖານລັກຊັບຂອງພົນລະເມືອງ. ກໍລະນີມີຄໍາຖະແຫຼງຂອງຫົວໜ້າອົງການໄອຍະການ ເວົ້າເຖິງ ທ້າວ ຂ ວ່າ ທ້າວ ຂ ໄດ້ເອົາຕົວຫຼົບໜີຢູ່ ຖ້າຈັບໄດ້ເມື່ອໃດ ຈະດໍາເນີນຄະດີພາຍຫຼັງ ໃນກໍລະນີນີ້ ສານກໍຕ້ອງພິຈາລະນາຕັດສິນແຕ່ທ້າວ ກ ຄົນດຽວໄປເລີຍ.

ການສືບສວນ-ສອບສວນເພີ່ມເຕີມນັ້ນ ຕ້ອງເຮັດເປັນປະເດັນ ພ້ອມທັງບອກແຈ້ງບັນຫາທີ່ຕ້ອງການໃຫ້ສືບສວນ-ສອບສວນ. ໃນການສືບສວນ-ສອບສວນເພີ່ມເຕີມນັ້ນ ຖ້າຫາກມີສາເຫດທີ່ພາໃຫ້ຊັດມ້ຽນຄະດີ ຕາມທີ່ໄດ້ກໍານົດໄວ້ໃນ (ມ 148 ກດຍ) ຫົວໜ້າອົງການໄອຍະການຕ້ອງອອກຄໍາສັ່ງຊັດມ້ຽນຄະດີແລ້ວແຈ້ງໃຫ້ສານຊາບ. ຖ້າວ່າອົງການໄອຍະການຫາກບໍ່ສາມາດເກັບກໍາຂໍ້ມູນເພີ່ມເຕີມຕາມຄໍາສະເໜີຂອງສານ ແລະ ຍັງຢືນຢັນຄໍາສັ່ງຟ້ອງຂອງຕົນສານຕ້ອງນໍາເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ.

### 2.5. ເນື້ອໃນ ຂອງຄໍາສັ່ງ ໃຫ້ນໍາເອົາຄະດີອອກພິຈາລະນາ

ຫຼັງຈາກຜູ່ພິພາກສາໄດ້ຄົ້ນຄວ້າສໍານວນຄະດີສໍາເລັດແລ້ວ ປະທານສານຕ້ອງອອກຄໍາສັ່ງໃຫ້ນໍາເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ (ມ 169 ກດຍ).

ຄໍາສັ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

- ຊື່ ແລະ ນາມສະກຸນ, ອາຍຸ, ສັນຊາດ, ອາຊີບ, ແລະ ທີ່ຢູ່ ຂອງຈໍາເລີຍ;
- ຂໍ້ກ່າວຫາ ແລະ ມາດຕາກົດໝາຍອາຍາ ຫຼື ກົດໝາຍອື່ນ ທີ່ກໍານົດໂທດທາງອາຍາ ຕາມຄໍາສັ່ງຟ້ອງ;
- ວັນ, ເວລາ ແລະ ສະຖານທີ່ ປະຊຸມສານ.

**ຕົວຢ່າງ: ແບບພິມຄຳສັ່ງໃຫ້ນຳເອົາຄະດີອອກມາພິຈາລະນາ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ ເລກທີ ........../ສປຊ.ນວ

ລົງວັນທີ ....................

**ຄຳສັ່ງ**

**ໃຫ້ນຳເອົາຄະດີອອກມາພິຈາລະນາ**

- ອີງຕາມ ມາດຕາ 167 (ປັບປຸງ) ແລະ 169 (ໃໝ່) ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.
- ອີງຕາມ ຜົນການຄົ້ນຄວ້າຄະດີຂອງ ຄະນະສານອາຍາ.

ເພື່ອຮັບປະກັນໃຫ້ການດຳເນີນຄະດີອາຍາ ປະຕິບັດຖືກຕ້ອງຕາມ ມາດຕາ 169 (ໃໝ່) ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

**ປະທານສານປະຊາຊົນ ນະຄອນຫຼວງວຽງຈັນ**

**ຕົກລົງອອກຄຳສັ່ງ**

**ມາດຕາ 1:** ໃຫ້ນຳເອົາສຳນວນຄະດີອາຍາດັ່ງລຸ່ມນີ້ອອກມາພິຈາລະນາໃນທີ່ປະຊຸມສານ ໃນວັນທີ ....

- ຄະດີອາຍາ ເລກທີ ......../ຂຕ.ອ, ລົງວັນທີ ..............

**ລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ...................... ໂຈດ.

ທ້າວ/ນາງ.................................................................ໂຈດທາງແພ່ງ.

ທ້າວ/ນາງ.........................................................................ຈຳເລີຍ.

**ຖືກຫາວ່າ:** .............................................

**ມາດຕາ 2:** ໃຫ້ຄະນະສານອາຍາ ກຳນົດເວລາ, ສະຖານທີ່ປະຊຸມສານ, ບຸກຄົນ ແລະ ການຈັດຕັ້ງທີ່
ກ່ຽວຂ້ອງເພື່ອເຂົ້າຮ່ວມປະຊຸມສານ ຕາມຄວາມເໝາະສົມ.

**ມາດຕາ 3:** ຄຳສັ່ງສະບັບນີ້ ມີຜົນບັງຄັບປະຕິບັດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສານປະຊາຊົນ**

## 2.6. ການຮຽກ ບຸກຄົນ ຫຼື ການຈັດຕັ້ງ ເຂົ້າມາໃຫ້ການ

ເພື່ອເຮັດໃຫ້ການໄຕ່ສວນຄະດີໄດ້ດຳເນີນໄປຢ່າງ ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສນັ້ນ ສານຈະຮຽກບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງເຂົ້າມາໃຫ້ການ ຫຼື ນຳຫຼັກຖານຕ່າງໆ ມາສະເໜີໃນທີ່ປະຊຸມສານ (ມ 113 ກດຍ).

ຈ່າສານ ອອກໝາຍຮຽກ ຜູ້ຖືກຫາ ທີ່ບໍ່ໄດ້ຖືກກັກຂັງ ແລະ ຜູ້ຖືກສົ່ງໄສໃຫ້ເຂົ້າມາສະເໜີຕົວ.

ຈ່າສານ ອອກໝາຍຮຽກ ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ ແລະ ພະຍານ ເພື່ອເຂົ້າມາໃຫ້ການ.

ໝາຍຮຽກ ຕ້ອງບອກຊື່ ແລະ ນາມສະກຸນ, ອາຍຸ, ສັນຊາດ, ອາຊີບ ແລະ ທີ່ຢູ່ຂອງຜູ້ຖືກຮຽກ, ເຫດຜົນຂອງການຮຽກ, ວັນ ເວລາ ສະຖານທີ່ ໃຫ້ເຂົ້າພົບ, ຄວາມຮັບຜິດຊອບ ໃນກໍລະນີທີ່ບໍ່ເຂົ້າມາພົບຕາມໝາຍຮຽກ.

ຈ່າສານອອກແຈ້ງການໃຫ້ເຈົ້າໜ້າທີ່ຄ້າຍຄຸມຂັງໃຫ້ນຳຕົວຈຳເລີຍເຂົ້າມາທີ່ສານປະຊາຊົນເພື່ອຕັດສີນຄະດີ.

ນອກຈາກນີ້ ສານຍັງອອກບັດເຊີນ ໃຫ້ຜູ້ຕາງໜ້າຂອງອົງການໄອຍະການ ເຂົ້າຮ່ວມເພື່ອປຶກສາຫາລືກ່ຽວກັບ ຄະດີທີ່ມີຄວາມຫຍຸ້ງຍາກ.

**ຕົວຢ່າງ: ແບບພິມໝາຍຮຽກ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ

ຄະນະສານອາຍາ

ຈ່າສານ ເລກທີ ........../ສປຊ.ນວ

ໂທ: ........................ ລົງວັນທີ ...........................

**ໝາຍຮຽກສະບັບລ່າງຄະດີອາຍາ**[32]

ຮຽກເຖິງ ທ້າວ/ນາງ ....................... , ອາຍຸ .... ປີ, ສັນຊາດ ..........., ອາຊີບ .........., ປັດຈຸບັນຢູ່ໜ່ວຍ....., ບ້ານ..............., ເມືອງ...................., ແຂວງ .............. ໃຫ້ເຂົ້າມາຍັງສານປະຊາຊົນນະຄອນຫຼວງວຽງຈັນ ໃນວັນທີ ................ເວລາ ......... ໂມງ ..... ນາທີ ມາພົບທ່ານ/ທ່ານ ນາງ ..............................ເພື່ອມາໃຫ້ການ ແລະ ຟັງຄຳຕັດສິນ

**ຄະດີລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ........................ ໂຈດ.

ທ້າວ/ນາງ.............................................................................ໂຈດທາງແພ່ງ.

ທ້າວ/ນາງ...........................................................................................ຈຳເລີຍ.

**ຖືກຫາວ່າ:** ......................................

**ໝາຍເຫດ:** ໃຫ້ຖືໝາຍຮຽກສະບັບນີ້ໄປພ້ອມ, ຖ້າຜູ້ຖືໝາຍຮຽກບໍ່ເຂົ້າມາຍັງສານຕາມວັນ ແລະ ເວລາ ນັດໝາຍຈະໄດ້ຮັບໂທດຕາມ ມາດຕາ 173 ຂອງກົດໝາຍອາຍາ.

ຫ້ອງການຕັ້ງຢູ່ບ້ານ ບຶງຂະຫຍອງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ.

ໂທລະສັບ: ................................

ໝາຍຮຽກຄັ້ງທີ 1

ແຜນທີ່ຢູ່ດ້ານຫຼັງ **ຈ່າສານ,**

---

[32] ໝາຍຮຽກ ແມ່ນເພື່ອຮຽກຕົວໂຈດ, ຈຳເລີຍ, ບຸກຄົນທີສາມ, ພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ ເຂົ້າມາສານຕາມວັນ, ເວລາ ແລະ ສະຖານທີ່ຊຶ່ງໄດ້ກຳນົດໄວ້ໃນໝາຍຮຽກ.

**ຕົວຢ່າງ: ແບບພິມໝາຍເຊີນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ

ຄະນະສານອາຍາ

ຈ່າສານ ເລກທີ .........../ສປຊ.ນວ

ໂທ: ........................ ລົງວັນທີ ...........................

**ໝາຍເຊີນ**[33]

**ຮຽນ:** ທ່ານ ຫົວໜ້າ ອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ

ໂດຍອີງຕາມ ການຕົກລົງຂອງຄະນະສານອາຍາຂອງສານປະຊາຊົນ ນະຄອນຫຼວງວຽງຈັນ ຊຶ່ງຈະໄດ້ພິຈາລະນາຄະດີອາຍາ ໃນວັນທີ ........................... ເວລາ ....... ໂມງ .......... ນາທີ ຢູ່ທີ່ຫ້ອງປະຊຸມສານຂອງສານປະຊາຊົນ ນະຄອນຫຼວງວຽງຈັນ

1. ຄຳຖະແຫຼງ ເລກທີ ........./ອຍກ.ນວ ລົງວັນທີ .........................

ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ ....................... ໂຈດ.

ທ້າວ/ນາງ .................................................................ໂຈດທາງແພ່ງ.

ທ້າວ/ນາງ ............................................................................ ຈຳເລີຍ.

**ຖືກຫາວ່າ:** ...........................................

ດັ່ງນັ້ນ, ຈຶ່ງຂໍເຊີນທ່ານເຂົ້າຮ່ວມປະຊຸມສານຕາມວັນເວລາ, ສະຖານທີ່ຂ້າງເທິງນີ້ດ້ວຍ.

**ຈ່າສານ,**

[33] ໝາຍເຊີນ ແມ່ນເພື່ອເຊີນ ຫົວໜ້າອົງການໄອຍະການເຂົ້າຮ່ວມ ໃນການພິຈາລະນາຕັດສິນຄະດີ

**ຕົວຢ່າງ: ແບບພິມບັດເຊີນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ
ຫ້ອງການ — ເລກທີ ......./ສປຊ.ນວ
ໂທລະສັບ: ........................... — ລົງວັນທີ .......................

## ບັດເຊີນ[34]

- ຂໍເຊີນ **ທ່ານຜູ້ຕາງໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ**
- ເຂົ້າມາຍັງສານປະຊາຊົນນະຄອນຫຼວງວຽງຈັນໃນວັນທີ ..........................
- ເວລາ ....... ໂມງ .......... ນາທີ ເພື່ອຮ່ວມປະຊຸມສານ

**ລະຫວ່າງ:**

ຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ....................... ໂຈດ.
ທ້າວ/ນາງ .................................................................ໂຈດທາງແພ່ງ.
ທ້າວ/ນາງ ................................................................... ຈຳເລີຍ.

**ຖືກຫາວ່າ:** .........................................

ນະຄອນຫຼວງວຽງຈັນ, ວັນທີ ............
**ຫົວໜ້າຫ້ອງການສານປະຊາຊົນ**

[34] ບັດເຊີນ ແມ່ນເພື່ອເຊີນ ຜູ່ຕາງໜ້າອົງການໄອຍະການເຂົ້າຮ່ວມ ໃນການປຶກສາຫາລື ກ່ຽວກັບ ຄະດີທີ່ມີຄວາມຫຍຸ້ງຍາກ

**ຕົວຢ່າງ: ແບບພິມແຈ້ງການ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ

ຄະນະສານອາຍາ

ຈ່າສານ ເລກທີ ........../ສປຊ.ນວ

ໂທ: ........................ ລົງວັນທີ ..........................

**ແຈ້ງການ**

**ຮຽນ:** ທ່ານ ຫົວໜ້າ ຄ້າຍຄຸມຂັງ ໂພນທັນ

**ເລື່ອງ:** ນຳເອົາຕົວຈຳເລີຍມາທີ່ສານປະຊາຊົນ ນະຄອນຫຼວງວຽງຈັນ ເພື່ອຕັດສິນຄະດີ

ໂດຍອີງຕາມ ການຕົກລົງຂອງຄະນະສານອາຍາຂອງ ສານປະຊາຊົນ ນະຄອນຫຼວງວຽງຈັນ ຈະໄດ້ພິຈາລະນາຄະດີ ໃນວັນທີ ............................ ເວລາ ....... ໂມງ .......... ນາທີ

1. ທ້າວ/ນາງ........................ອາຍຸ......ປີ, ສັນຊາດ............., ອາຊີບ ................, ຢູ່ໜ່ວຍ ......, ບ້ານ ........................,ເມືອງ.................,ແຂວງ ...............................
2. ທ້າວ/ນາງ........................ອາຍຸ...... ປີ, ສັນຊາດ ............., ອາຊີບ ................, ຢູ່ໜ່ວຍ ......, ບ້ານ ........................, ເມືອງ ................., ແຂວງ ...........................
3. ທ້າວ/ນາງ........................ອາຍຸ...... ປີ, ສັນຊາດ ............., ອາຊີບ ................, ຢູ່ໜ່ວຍ ......, ບ້ານ ........................, ເມືອງ ................., ແຂວງ ...........................

**ຖືກຫາວ່າ:** ......................................

ດັ່ງນັ້ນ , ຈິ່ງແຈ້ງມາຍັງທ່ານເພື່ອເອົາຕົວ ຈຳເລີຍ ທີ່ມີລາຍຊື່ຂ້າງເທິງນີ້ ມາທີ່ສານ ປະຊາຊົນ ນະຄອນຫຼວງວຽງຈັນ ຕາມວັນເວລາທີ່ກ່າວມາຂ້າງເທິງນີ້ດ້ວຍ.

**ຈ່າສານ,**

**ຕົວຢ່າງ: ແບບພິມຄຳສັ່ງແຕ່ງຕັ້ງຜູ້ພິພາກສາ ແລະ ຈ່າສານເພື່ອພິຈາລະນາຄະດີອາຍາ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ ເລກທີ ........../ສປຊ.ນວ

ລົງວັນທີ ........................

**ຄຳສັ່ງແຕ່ງຕັ້ງ**

**ຜູ້ພິພາກສາ ແລະ ຈ່າສານ ເພື່ອພິຈາລະນາຄະດີອາຍາ**

- ອີງຕາມສຳນວນຄະດີອາຍາ ເລກທີ................../ຂຕ.ອ, ລົງວັນທີ ................

**ລະຫວ່າງ:**

ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ....................... ໂຈດ.

ທ້າວ/ນາງ.............................................................ໂຈດທາງແພ່ງ.

ທ້າວ/ນາງ..................................................................ຈຳເລີຍ.

**ຖືກຫາວ່າ:** ...........................................

- ອີງຕາມ ມາດຕາ 59 (ໃໝ່) ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

- ອີງຕາມ ຜົນການດຳເນີນຄົ້ນຄວ້າຄະດີດັ່ງກ່າວຂອງ ຄະນະສານອາຍາ.

ໂດຍປະຕິບັດຕາມ ມາດຕາ 59 (ໃໝ່) ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

**ປະທານສານປະຊາຊົນ ນະຄອນຫຼວງວຽງຈັນ**

**ຕົກລົງອອກຄຳສັ່ງ**

**ມາດຕາ 1:** ເຫັນດີແຕ່ງຕັ້ງຜູ້ພິພາກສາ ແລະ ຈ່າສານ ເພື່ອພິຈາລະນາຄະດີດັ່ງກ່າວ ໃນວັນທີ ............. ຊຶ່ງມີລາຍຊື່ລຸ່ມນີ້:

**1.** ທ່ານ .............................. ເປັນປະທານ

**2.** ທ່ານ .............................. ເປັນຄະນະ

3. ທ່ານ ............................... ເປັນຄະນະ

4. ທ່ານ ............................... ເປັນຈ່າສານ

**ມາດຕາ 2:** ໃຫ້ຜູ້ທີ່ມີລາຍຊື່ຂ້າງເທິງນີ້ປະສານສົມທົບກັບຄະນະສານອາຍາ, ບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງເພື່ອກຳນົດວັນເວລາ ແລະ ສະຖານທີ່ຕາມຄວາມເໝາະສົມ.

**ມາດຕາ 3:** ຄຳສັ່ງສະບັບນີ້ ມີຜົນບັງຄັບປະຕິບັດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານສານປະຊາຊົນ**

ພາຍຫຼັງ ຈ່າສານໄດ້ອອກ ໝາຍຮຽກ, ໝາຍເຊີນ ແລະ ແຈ້ງການຕ່າງໆໄປແລ້ວ ຈ່າສານຕ້ອງຕິດຕາມວ່າແຕ່ລະພາກສ່ວນໄດ້ຮັບໝົດແລ້ວບໍ່; ກ່ອນມື້ຈະຂຶ້ນພິຈາລະນາຕັດສິນ ຈ່າສານຕ້ອງພົວພັນລະອຽດ ເພື່ອມາລາຍງານຕໍ່ຄະນະສານ ທີ່ຈະຂຶ້ນປະຊຸມສານໃນມື້ນັ້ນ; ຖ້າມີຄຳຮ້ອງຂໍໂຈະ ຫຼື ຂໍເລື່ອນ ກໍຕ້ອງລາຍງານໃຫ້ຄະນະສານຮັບຊາບ ເພື່ອຈະໄດ້ພິຈາລະນາຕໍ່ບັນຫາດັ່ງກ່າວວ່າມີເຫດຜົນ ຫຼື ບໍ່; ຖ້າມີເຫດຜົນກໍຕ້ອງໃຫ້ຈ່າສານບອກຜູ້ຂຽນຄຳຮ້ອງມານັ້ນຮັບຊາບ.

### 3. ຄະນະສານອາຍາຂັ້ນຕົ້ນ

ຄະນະສານອາຍາຂັ້ນຕົ້ນປະກອບດ້ວຍ ຜູ້ພິພາກສາ ສາມຄົນ ໃນນັ້ນຜູ້ໜຶ່ງເປັນປະທານ ແລະ ອີກສອງຄົນເປັນຄະນະ; ຜູ້ພິພາກສາ ທີ່ເປັນປະທານຄະນະສານ ມີໜ້າທີ່ນຳພາການໄຕ່ສວນຄະດີຢ່າງເປັນກາງໃນທີ່ປະຊຸມສານ; ຜູ້ພິພາກສາທີ່ເປັນຄະນະສານ ຕ້ອງເຂົ້າຮ່ວມໄຕ່ສວນຄະດີໃນທີ່ປະຊຸມສານ ນັບແຕ່ເລີ່ມຕົ້ນຈົນສຳເລັດ; ໃນກໍລະນີ ທີ່ການໄຕ່ສວນຄະດີໃນທີ່ປະຊຸມສານໄດ້ດຳເນີນໄປໃນໄລຍະໜຶ່ງແລ້ວ ແຕ່ມີຜູ້ພິພາກສາໃດໜຶ່ງໃນຄະນະສານບໍ່ສາມາດສືບຕໍ່ເຂົ້າຮ່ວມປະຊຸມສານໄດ້ ປະທານສານຕ້ອງແຕ່ງຕັ້ງຜູ້ພິພາກສາຄົນໃໝ່ປ່ຽນແທນ ແລະ ການໄຕ່ສວນຄະດີຕ້ອງເລີ່ມຄືນໃໝ່ (ມ 171 ກດຍ).

**ຕົວຢ່າງ:** ປະທານສານໄດ້ເປີດປະຊຸມສານ ແລະ ນຳພາການໄຕ່ສວນໄປໄດ້ໄລຍະໜຶ່ງແລ້ວ ມີຄະນະສານຜູ້ໜຶ່ງເຈັບທ້ອງຢ່າງແຮງ ປະທານຄະນະສານຕ້ອງປິດປະຊຸມສານໄວ້ຊົ່ວຄາວ ແລ້ວແຕ່ງຕັ້ງຜູ້ພິພາກສາຄົນໃໝ່ມາປ່ຽນແທນ ໃນເວລານີ້ປະທານຄະນະສານ ຕ້ອງນຳພາເປີດປະຊຸມສານຕໍ່ເຮັດຄືກັບຜ່ານມາກ່ອນນັ້ນທັງໝົດ.

**4. ສິດ ແລະ ໜ້າທີ່ຂອງຈ່າສານ**

ຈ່າສານ ມີສິດ ແລະ ໜ້າທີ່ ໃນການດຳເນີນຄະດີອາຍາ (ມ 62 ກດຍ) ດັ່ງນີ້:

1) ຮັບສຳນວນຄະດີ ແລະ ຂື້ນຟ້ອງຄະດີອາຍາ, ຈັດລຽງ ແລະ ເຮັດບັນຊີເອກະສານໃນສຳນວນຄະດີອາຍາ;

2) ອອກໝາຍຮຽກ, ໝາຍເຊີນ ຕາມການແນະນຳ ຂອງຜູ້ພິພາກສາ;

3) ເຂົ້າຮ່ວມບັນທຶກໃນການເອົາຄຳໃຫ້ການ ແລະ ໃນການໄກ່ເກັ່ຍບັນຫາທາງແພ່ງໃນຄະດີອາຍາ;

4) ກະກຽມ ແລະ ແຈ້ງ ລະບຽບການປະຊຸມສານ;

5) ບັນທຶກການປະຊຸມສານ, ຮັບຜິດຊອບຄວາມຖືກຕ້ອງ ແລະ ຄົບຖ້ວນໃນການບັນທຶກການປະຊຸມສານ;

6) ສຳເນົາບົດບັນທຶກການປະຊຸມສານ ໃສ່ສຳນວນຄະດີອາຍາ;

7) ອະທິບາຍ, ຊີ້ແຈງເຫດຜົນໃຫ້ຄູ່ຄວາມ ເຂົ້າໃຈກ່ຽວກັບການຕັດສິນ ຫຼື ພິພາກສາຄະດີຂອງສານ ພ້ອມທັງແຈ້ງສິດໃນການຂໍອຸທອນ ຫຼື ຂໍລົບລ້າງ;

8) ຮັບຄຳຮ້ອງຂໍອຸທອນ, ຄຳຮ້ອງຂໍລົບລ້າງ, ອອກໃບຮັບການຈອງຂໍອຸທອນ ຫຼື ຂໍລົບລ້າງ;

9) ເຊັນຢັ້ງຢືນຄຳຕັດສິນ ຫຼື ຄຳພິພາກສາ ແລະ ເອກະສານອື່ນ ຕາມລະບຽບກົດໝາຍ;

10) ເຮັດບັນຊີ ແລະ ເກັບມ້ຽນ ຂອງກາງຄະດີ;

11) ສະຫຼຸບສະຖິຕິຄະດີ, ສົ່ງຄຳຕັດສິນ ຫຼື ຄຳພິພາກສາໃຫ້ສານຂັ້ນເທິງ ແລະ ອົງການໄອຍະການທີ່ກ່ຽວຂ້ອງ ເພື່ອຕິດຕາມກວດກາ;

12) ເຮັດບັນຊີເອກະສານ ແລະ ສົ່ງສຳນວນຄະດີອາຍາໄປໃຫ້ສານທີ່ກ່ຽວຂ້ອງໃນກໍລະນີທີ່ມີຄຳຮ້ອງຂໍອຸທອນ ຫຼື ຂໍລົບລ້າງ ແລະ ຄຳສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການ;

13) ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍ.

**5. ມາດຕະການຕໍ່ຜູ້ລະເມີດລະບຽບການປະຊຸມສານ ແລະ ການເຂົ້າຮ່ວມຂອງທຸກໆພາກສ່ວນທີ່ກ່ຽວຂ້ອງ**

**5.1. ມາດຕະການຕໍ່ຜູ້ລະເມີດລະບຽບການປະຊຸມສານ**

ບຸກຄົນທີ່ລະເມີດລະບຽບການປະຊຸມສານ ຕ້ອງຖືກຕັກເຕືອນ, ສັ່ງໃຫ້ອອກ ຫຼື ນຳຕົວອອກຈາກຫ້ອງປະຊຸມສານ ຫຼື ຖືກດຳເນີນຄະດີ ແລະ ສັ່ງຟ້ອງກັບທີ່ໃນກໍລະນີຈຳເປັນ. ເຈົ້າ

ໜ້າທີ່ປ້ອງກັນຄວາມສະຫງົບ ຢູ່ທີ່ປະຊຸມສານຕ້ອງຮັກສາລະບຽບ ແລະ ປະຕິບັດຄຳສັ່ງຂອງປະທານຄະນະສານຕໍ່ຜູ້ລະເມີດ (ມ 173 ກດຢ).

**5.2. ການເຂົ້າຮ່ວມຂອງຫົວໜ້າອົງການໄອຍະການ**

ຫົວໜ້າອົງການໄອຍະການ ຕ້ອງເຂົ້າຮ່ວມການໄຕ່ສວນຄະດີໃນທີ່ປະຊຸມສານຂອງສານຂັ້ນດຽວກັນ ຫຼື ອາດມອບໝາຍໃຫ້ພະນັກງານໄອຍະການເຂົ້າຮ່ວມໃນທີ່ປະຊຸມສານແທນຕົນກໍໄດ້[35].

**5.3. ການເຂົ້າຮ່ວມ ຂອງຈຳເລີຍ**

ຈຳເລີຍ ຕ້ອງເຂົ້າຮ່ວມການໄຕ່ສວນຄະດີໃນທີ່ປະຊຸມສານ ຕາມໝາຍຮຽກຂອງສານ. ໃນກໍລະນີທີ່ຈຳເລີຍ ບໍ່ໄດ້ຖືກກັກຂັງ ຫາກບໍ່ເຂົ້າຮ່ວມໃນການໄຕ່ສວນຄະດີ ໂດຍບໍ່ມີເຫດຜົນ ຜູ່ກ່ຽວກໍຈະຖືກພາຕົວ ຕາມທີ່ໄດ້ກຳນົດໄວ້ໃນ (ມ 137 ກດຢ). ຖ້າຈຳເລີຍຫາກບໍ່ສາມາດເຂົ້າມາຮ່ວມໃນທີ່ປະຊຸມສານ ຍ້ອນມີເຫດຜົນພຽງພໍ ສານກໍຈະເລື່ອນການປະຊຸມສານອອກໄປ.

**ຕົວຢ່າງ:** ຜູ່ກ່ຽວໄດ້ໄປເຮັດວຽກຢູ່ຕ່າງແຂວງ ຫຼື ໄປເຮັດວຽກຢູ່ຕ່າງປະເທດ.

ຖ້າຈຳເລີຍ ຫາກເຈັບເປັນຢ່າງກະທັນຫັນໃນທີ່ປະຊຸມສານ ຄະນະສານຕ້ອງໂຈະການໄຕ່ສວນຈົນກວ່າຈຳເລີຍຈະເຊົາເປັນປົກກະຕິ. ຖ້າຈຳເລີຍ ຫາກໄດ້ເອົາຕົວຫຼົບໜີ ຄະນະສານຕ້ອງອອກຄຳສັ່ງຈັບຕົວ ຜູ່ກ່ຽວມາດຳເນີນຄະດີ. ຈຳເລີຍ ທີ່ຖືກກັກຂັງພາງໃນເວລາເຂົ້າຮ່ວມໃນທີ່ປະຊຸມສານ ມີສິດພົບກັບທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນຂອງຕົນເທົ່ານັ້ນ. ສ່ວນການພົວພັນກັບບຸກຄົນອື່ນ ກໍຕ້ອງໄດ້ຮັບອະນຸຍາດຈາກປະທານຄະນະສານເທົ່ານັ້ນ. ຈຳເລີຍຫາກບໍ່ໄດ້ຖືກກັກຂັງພາງ ຕ້ອງເຂົ້າຮ່ວມໃນທີ່ປະຊຸມສານແຕ່ຕົ້ນຈົນສຳເລັດ.

**5.4. ການເຂົ້າຮ່ວມຂອງຜູ່ຖືກເສັຍຫາຍ, ໂຈດທາງແພ່ງ ແລະ ຜູ່ຮັບຜິດຊອບທາງແພ່ງ**

ຜູ່ຖືກເສັຍຫາຍ, ໂຈດທາງແພ່ງ ແລະ ຜູ່ຮັບຜິດຊອບທາງແພ່ງ ຕ້ອງເຂົ້າຮ່ວມໃນທີ່ປະຊຸມສານຕາມໝາຍຮຽກຂອງສານ. ໃນກໍລະນີ ທີ່ຜູ່ຖືກເສັຍຫາຍ, ໂຈດທາງແພ່ງ ຫຼື ຜູ່ຮັບຜິດຊອບທາງແພ່ງ ຫາກບໍ່ໄດ້ເຂົ້າຮ່ວມໃນທີ່ປະຊຸມສານ ຄະນະສານຕ້ອງພິຈາລະນາຕາມແຕ່ລະກໍລະນີວ່າຈະເລື່ອນ ຫຼື ຈະດຳເນີນການໄຕ່ສວນຄະດີໃນທີ່ປະຊຸມສານ. ກໍລະນີດັ່ງກ່າວນີ້ມັນແມ່ນຜົນປະໂຫຍດຂອງຜູ່ຖືກເສັຍຫາຍ, ໂຈດທາງແພ່ງ ແລະ ຜູ່ຮັບຜິດຊອບທາງແພ່ງ ເມື່ອຕ້ອງການຢາກໄດ້, ນອກຈາກຄຳຮ້ອງຂໍແລ້ວ ຕ້ອງເຂົ້າມາສະເໜີຕໍ່ໜ້າຄະນະສານດ້ວຍຕົນເອງເພື່ອໃຫ້ສອດຄ່ອງກັບເຫດການຕົວຈິງ ແລະ ຄວາມເສັຍຫາຍທີ່ເກີດຂຶ້ນ. ຖ້າໂຈດທາງແພ່ງເຂົ້າໄປໃນທີ່ປະຊຸມສານ ກໍຈະເປັນຜົນດີເພື່ອໃຫ້ສານໄດ້ທຳການໄກ່ເກັ່ຍກ່ຽວ

---

[35] ກໍລະນີນີ້ ຕ້ອງໄດ້ແຈ້ງໄປຍັງສານຂັ້ນຂອງຕົນ ເພື່ອຮັບຊາບໄວ້ກ່ອນລ່ວງໜ້າຢ່າງຊ້າ ສາມ ວັນ ກ່ອນຈະປະຊຸມສານ.

ກັບບັນຫາທາງແພ່ງ; ຖ້າໄກ່ເກັ່ຍບັນຫາທາງແພ່ງໄດ້ກໍຈະເປັນຜົນດີ ແລະ ສານກໍຈະພິຈາລະນາ ແຕ່ບັນຫາໂທດເທົ່ານັ້ນ.

### 5.5. ການເຂົ້າຮ່ວມຂອງພະຍານ

ພະຍານຕ້ອງເຂົ້າຮ່ວມໃນທີ່ປະຊຸມສານ ເພື່ອໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບສະພາບຂອງຄະດີ ໝາຍຄວາມວ່າຊ່ວຍອະທິບາຍໃຫ້ຄະດີດັ່ງກ່າວແຈ້ງຂຶ້ນ; ຖ້າພະຍານບໍ່ເຂົ້າຮ່ວມໃນການໄຕ່ສວນຄະດີໂດຍບໍ່ມີເຫດຜົນ ຜູ່ກ່ຽວກໍຈະຖືກພາຕົວຕາມທີ່ໄດ້ກຳນົດໄວ້ໃນ (ມ 137 ກດຍ), ຖ້າພະຍານບໍ່ເຂົ້າຮ່ວມ ແຕ່ຜ່ານມານັ້ນ ຜູ່ກ່ຽວໄດ້ໃຫ້ການລະອຽດກ່ຽວກັບຄະດີດັ່ງກ່າວນີ້ແລ້ວ ໂດຍສະເພາະຢູ່ຂັ້ນເຈົ້າໜ້າທີ່ສືບສວນ-ສອບສວນ ຫຼື ພະນັກງານໄອຍະການແລ້ວ ສານຕ້ອງເອົາບົດບັນທຶກຄຳໃຫ້ການຂອງຜູ່ກ່ຽວ ມາອ່ານໃນທີ່ປະຊຸມສານ. ຖ້າໃນກໍລະນີທີ່ສານຫາກເຫັນວ່າບັນຫາທີ່ຍົກຂຶ້ນມານັ້ນມີຄວາມສຳຄັນ ແລະ ຈຳເປັນ ຄະນະສານຕ້ອງເລື່ອນການໄຕ່ສວນຄະດີອອກໄປ; ແລ້ວນັດວັນປະຊຸມສານໃສ່ມື້ໃໝ່ ເພື່ອຈະໄດ້ນຳເອົາພະຍານ ດັ່ງກ່າວເຂົ້າມາໃຫ້ການໃນທີ່ປະຊຸມສານ.

### 5.6. ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນ

ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນ ຂອງຈຳເລີຍ ມີພັນທະເຂົ້າຮ່ວມການດຳເນີນຄະດີໃນທີ່ປະຊຸມສານ ແລະ ຕ້ອງສົ່ງຄຳຖະແຫຼງຂອງຕົນເປັນລາຍລັກອັກສອນໃຫ້ສານ ກ່ອນວັນເປີດປະຊຸມສານ. ໃນກໍລະນີ ຜູ່ຖືກຫາ ຫຼື ຈຳເລີຍ ຫາກແມ່ນເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຄົນຫູໜວກ, ຕາບອດ, ປາກກືກ, ຄົນປັນຍາອ່ອນ ເສັຍຈິດ ແລະ ຜູ່ກະທຳຜິດ ໃນສະຖານທີ່ກົດໝາຍກຳນົດໂທດປະຫານຊີວິດນັ້ນ ຈຳເປັນຕ້ອງມີທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນເຂົ້າຮ່ວມ. ໃນກໍລະນີ ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນ ບໍ່ເຂົ້າຮ່ວມໃນທີ່ປະຊຸມສານ ສານຕ້ອງເປີດປະຊຸມສານ ເພື່ອດຳເນີນການໄຕ່ສວນຄະດີຕາມລະບຽບການ ເວັ້ນເສັຍແຕ່ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນຂອງຈຳເລີຍ ມີເຫດຜົນ ສານຕ້ອງເລື່ອນການໄຕ່ສວນອອກໄປ.

**ຕົວຢ່າງ:** ທະນາຍຄວາມຫາກໍໄດ້ຮັບການແຕ່ງຕັ້ງ ບໍ່ທັນໄດ້ຄົ້ນຄວ້າ ແລະ ເຂົ້າເອົາຄຳໃຫ້ການຂອງຜູ່ຖືກຫາຢູ່ຄ້າຍຄຸມຂັງ ໝາຍຄວາມວ່າ ຍັງບໍ່ທັນໄດ້ຂໍ້ມູນທີ່ຈະມາຖະແຫຼງຍື່ນຕໍ່ສານເທື່ອ. ດັ່ງນັ້ນ, ສານຄວນໃຫ້ເວລາ ທະນາຍຄວາມເພື່ອເຂົ້າໄປຈົດກ່າຍເອົາເອກະສານຢູ່ໃນສຳນວນຄະດີ ຫຼື ສຳເນົາ ເອົາເອກະສານທີ່ສຳຄັນ ເພື່ອມາຖະແຫຼງຕໍ່ສານ. ສະຫຼຸບລວມແລ້ວ ທະນາຍຄວາມຕ້ອງມີຂໍ້ມູນກ່ອນທີ່ຈະໄປປົກປ້ອງລູກຄວາມຂອງຕົນ.

**ຕົວຢ່າງ: ແບບພິມຄຳສັ່ງແຕ່ງຕັ້ງທະນາຍຄວາມ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ ເລກທີ ........../ສປຊ.ນວ

ລົງວັນທີ .........................

**ຄຳສັ່ງແຕ່ງຕັ້ງທະນາຍຄວາມ**

- ອີງຕາມ ມາດຕາ 10 ຂອງກົດໝາຍວ່າດ້ວຍ ສານປະຊາຊົນ ສະບັບປັບປຸງ ປີ 2009.
- ອີງຕາມ ມາດຕາ 71 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.
- ອີງຕາມ ສຳນວນຄະດີອາຍາ ເລກທີ ........./ຂຕ.ອ ລົງວັນທີ .........................

**ລະຫວ່າງ:**

ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ........................ ໂຈດ.

ທ້າວ/ນາງ....................... ອາຍຸ ...... ປີ, ສັນຊາດ..............., ອາຊີບ ............, ຢູ່ໜ່ວຍ.........., ບ້ານ............., ເມືອງ................, ແຂວງ............................. ຈຳເລີຍ.

**ຖືກຫາວ່າ:** ........................................

**ວັນທີຖືກກັກຕົວ:** ວັນທີ .........................

ເຫັນວ່າ ຄະດີເລື່ອງນີ້ ທ້າວ/ນາງ...........................(ຈຳເລີຍ) ໄດ້ຖືກຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນສັ່ງຟ້ອງຕາມ.................................., ແຕ່ໃນໄລຍະດຳເນີນຄະດີຢູ່ສານປະຊາຊົນນະຄອນຫຼວງວຽງຈັນ ຜູ່ກ່ຽວບໍ່ມີທະນາຍຄວາມເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ່ກ່ຽວຕາມທີ່ໄດ້ກຳນົດໄວ້ໃນມາດຕາ 71 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

ດັ່ງນັ້ນ, ສານປະຊາຊົນນະຄອນຫຼວງວຽງຈັນ ຈຶ່ງຕົກລົງແຕ່ງຕັ້ງທະນາຍຄວາມໃຫ້ຜູ່ກ່ຽວຄື:

ທ້າວ/ນາງ....................................., ອາຊີບທະນາຍຄວາມ, ສັງກັດຢູ່ສະພາທະນາຍຄວາມແຫ່ງ ສປປ ລາວ ເປັນທະນາຍຄວາມປົກປ້ອງ ທ້າວ/ນາງ..................(ຈຳເລີຍ).

ສຳລັບສິດ ແລະ ພັນທະ ຂອງທະນາຍຄວາມແມ່ນໃຫ້ປະຕິບັດຕາມ ມາດຕາ 71 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານສານປະຊາຊົນ**

### 5.7. ການເຂົ້າຮ່ວມຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ແລະ ຜູ້ແປພາສາ

ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ຕ້ອງເຂົ້າຮ່ວມໃນທີ່ປະຊຸມສານ ເພື່ອໃຫ້ຄວາມເຫັນ ແລະ ຄຳອະທິບາຍ. ຖ້າຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ຫາກບໍ່ສາມາດເຂົ້າຮ່ວມໄດ້ ຄະນະສານຕ້ອງພິຈາລະນາວ່າຈະເລື່ອນ ຫຼື ຈະດຳເນີນການໄຕ່ສວນຄະດີໂດຍອີງໃສ່ຄວາມສຳຄັນ ແລະ ຄວາມຈຳເປັນຂອງການເຂົ້າຮ່ວມຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານນັ້ນ.

**ຕົວຢ່າງ:** ກໍລະນີບໍ່ເຂົ້າຮ່ວມແຕ່ຜ່ານມານັ້ນ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ສານໄດ້ມີຄຳເຫັນໄວ້ຢ່າງເປັນລາຍລັກອັກສອນແລ້ວ ຖ້າບໍ່ຈຳເປັນສານກໍຈະດຳເນີນການໄຕ່ສວນໄປເລີຍກໍໄດ້, ຖ້າເຫັນວ່າ ບາງບັນຫາ ຫາກຍັງບໍ່ຈະແຈ້ງກ່ຽວກັບສັບທາງວິຊາການ ຫຼື ການໃຫ້ຄຳເຫັນ ບໍ່ຈະແຈ້ງສານຈຳເປັນຕ້ອງໄດ້ເລື່ອນການໄຕ່ສວນຄະດີ ເພື່ອໃຫ້ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານເຂົ້າຮ່ວມ ເພື່ອໃຫ້ຄຳເຫັນ ແລະ ຊີ້ແຈງຕໍ່ກັບບັນຫາດັ່ງກ່າວໃຫ້ຈະແຈ້ງ.

ຜູ້ແປພາສາ ຕ້ອງເຂົ້າຮ່ວມໃນທີ່ປະຊຸມສານເພື່ອແປພາສາ. ຖ້າຜູ້ແປພາສາຫາກບໍ່ສາມາດເຂົ້າຮ່ວມໄດ້ ຄະນະສານຕ້ອງເລື່ອນການປະຊຸມສານອອກໄປ. ບັນຫານີ້ສຳຄັນຫຼາຍເພາະມັນແມ່ນການສື່ສານ ລະຫວ່າງ ຄົນກັບຄົນດ້ວຍກັນ ແຕ່ມັນພັດແມ່ນຄົນລະພາສາຕ່າງກັນ. ສະນັ້ນ, ຈຳເປັນຕ້ອງໄດ້ຜ່ານນາຍພາສາແປ ໂດຍມີການແຕ່ງຕັ້ງຢ່າງເປັນທາງການຢ່າງຖືກຕ້ອງ.

**ຕົວຢ່າງ: ແບບພິມຄຳສັ່ງແຕ່ງຕັ້ງ ຜູ່ແປພາສາ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ ເລກທີ ........../ສປຊ.ນວ

ລົງວັນທີ ........................

**ຄຳສັ່ງແຕ່ງຕັ້ງ ຜູ່ແປພາສາ**

- ອີງຕາມ ມາດຕາ 14 ຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009.
- ອີງຕາມມາດຕາ 74 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.
- ອີງຕາມ ສຳນວນຄະດີອາຍາ ເລກທີ ........./ຂຕ.ອ ລົງວັນທີ ........................

**ລະຫວ່າງ:**

ຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ........................ ໂຈດ.

ທ້າວ/ນາງ...................ອາຍຸ..........ປີ, ສັນຊາດ................, ອາຊີບ..............., ຢູ່ໜ່ວຍ.......,ບ້ານ.................,ເມືອງ................,ແຂວງ....................ຈຳເລີຍ.

**ຖືກຫາວ່າ:** .......................................

**ວັນທີຖືກກັກຕົວ:** ວັນທີ ..........................

**ສະຖານທີ່ກັກຕົວ:** ................................

ເຫັນວ່າ ຄະດີເລື່ອງນີ້ ທ້າວ/ນາງ............................(ຈຳເລີຍ) ໄດ້ຖືກຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ ສັ່ງຟ້ອງຕາມມາດຕາ .................... ...., ແຕ່ຜູ່ກ່ຽວບໍ່ຮູ້ພາສາລາວ. ສະນັ້ນ, ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ່

ກ່ຽວຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 74 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

ດັ່ງນັ້ນ, ສານປະຊາຊົນ ນະຄອນຫຼວງວຽງຈັນ ຈຶ່ງຕົກລົງແຕ່ງຕັ້ງ ຜູ່ແປພາສາໃຫ້ຜູ່ ກ່ຽວຄື:

ທ້າວ/ນາງ........................., ອາຊີບພະນັກງານ, ສັງກັດຢູ່ກະຊວງຍຸຕິທຳເປັນຜູ່ແປ ພາສາໃຫ້ ທ້າວ/ນາງ..............................................................(ຈຳເລີຍ). ທ່ານທີ່ຖືກ ແຕ່ງຕັ້ງນີ້ມີໜ້າທີ່ແປພາສາ...........ເປັນພາສາລາວ ແລະ ແປພາສາລາວເປັນພາສາ........ ໃນເວລາໄຕ່ສວນຄະດີ ໃນທີ່ປະຊຸມສານຈົນກວ່າສານລົງຄຳຕັດສິນ ຫຼື ມີຄຳສັ່ງປ່ຽນແປງ. ຜູ່ ແປພາສາຕ້ອງຮັບຜິດຊອບ ຕໍ່ການແປຂອງຕົນ ແລະ ມີພັນທະໃນການຮັກສາຄວາມລັບໃນ ຄະດີ.

ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານສານປະຊາຊົນ**

ບ່ອນສົ່ງ:

- ຜູ່ຖືກແຕ່ງຕັ້ງ 1 ສະບັບ
- ສານປະຊາຊົນ ນະຄອນຫຼວງວຽງຈັນ 1 ສະບັບ
- ອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ 1 ສະບັບ
- ປະກອບໃສ່ສຳນວນ 1 ສະບັບ
- ແຈ້ງໃຫ້ຈຳເລີຍຊາບ 1 ສະບັບ

# ບົດທີ 2
# ການເປີດປະຊຸມສານ

## 1. ລະບຽບການປະຊຸມສານ

ກ່ອນຈະເລີ່ມປະຊຸມສານຈ່າສານ ຕ້ອງແຈ້ງລະບຽບການໃຫ້ຜູ່ເຂົ້າຮ່ວມໃນທີ່ປະຊຸມສານຊາບ. ທຸກຄົນໃນທີ່ປະຊຸມສານ ຕ້ອງເຄົາລົບຄະນະສານ, ປະຕິບັດຕາມລະບຽບການ ແລະ ຄຳແນະນຳຂອງປະທານຄະນະສານ. ໃນເວລາຄະນະສານເຂົ້າມາ ແລະ ອອກຈາກທີ່ປະຊຸມສານ ລວມທັງໃນເວລາ ອ່ານຄຳຕັດສິນໝົດທຸກຄົນ ຕ້ອງຢືນຂຶ້ນເພື່ອເຄົາລົບສານ. ບຸກຄົນທີ່ຖືກຮຽກໃຫ້ເຂົ້າຮ່ວມໃນການໄຕ່ສວນຄະດີໃນທີ່ປະຊຸມສານ ມີສິດສະເໜີຄຳເຫັນຂອງຕົນຕໍ່ຄະນະສານ ພາຍຫຼັງໄດ້ຮັບອະນຸຍາດ ຈາກ ປະທານຄະນະສານ. ຖ້າຜູ່ຖືກໄຕ່ສວນຫາກມີບັນຫາທາງດ້ານສຸຂະພາບ ປະທານຄະນະສານຈະອະນຸຍາດໃຫ້ຜູ່ກ່ຽວນັ່ງໃຫ້ການ ກໍໄດ້. ເດັກທີ່ມີອາຍຸຕ່ຳກວ່າ ສິບແປດປີ ບໍ່ອະນຸຍາດໃຫ້ເຂົ້າໃນທີ່ປະຊຸມສານ ຍົກເວັ້ນເດັກກະທຳຜິດ ແລະ ເດັກຖືກເຄາະຮ້າຍ (ມ 172 ກດຍ).

ລະບຽບການລະອຽດ ກ່ຽວກັບການປະຊຸມສານ ໄດ້ກຳນົດໄວ້ດັ່ງນີ້:

1) ຫ້າມນຸ່ງເຄື່ອງທີ່ບໍ່ສຸພາບ ເວລາເຂົ້າປະຊຸມສານ;

2) ຫ້າມເອົາສິ່ງຂອງ, ອາຫານ ມາກິນຢູ່ໃນຫ້ອງປະຊຸມສານ;

3) ຫ້າມນຳເອົາວັດຖຸເຊັ່ນ: ມີດ, ປືນ ເຂົ້າມາໃນຫ້ອງປະຊຸມສານ;

4) ຫ້າມເອົາໂທລະສັບ, ເຄື່ອງສຽງ ເຂົ້າມາອັດ, ຟັງ;

5) ຫ້າມຖິ້ມນ້ຳລາຍ, ຄາຍຂີ້ກະເທີ ຢູ່ຫ້ອງປະຊຸມສານ;

6) ເວລາປະທານຄະນະສານ ຖາມຜູ່ໃດໃຫ້ຜູ່ນັ້ນຕອບ;

7) ຫ້າມເວົ້າຈາບໍ່ສຸພາບ ປ້ອຍດ່າກັນ ເວລາປະທານຄະນະສານຖາມ;

8) ຕ້ອງໃຫ້ການເທື່ອລະຄົນ, ປະທານຄະນະສານຖາມອັນໃດ ກໍໃຫ້ຕອບຕາມຄຳຖາມ ຫ້າມເວົ້າໄປນອກຄຳຖາມ;

9) ເວລາຄະນະສານເຂົ້າ, ອອກ ແລະ ອ່ານຄຳຕັດສິນ ທຸກຄົນຕ້ອງລຸກຂຶ້ນຢືນເຄົາລົບ;

10) ຖ້າມີເອກະສານຫຼັກຖານໃໝ່ ແມ່ນເອົາມາຍື່ນຕໍ່ຈ່າສານ ເພື່ອຈະນຳສະເໜີຕໍ່ປະທານຄະນະສານ.

**ແຜນວາດທີ່ປະຊຸມສານຄະດີອາຍາ**




## 2. ການເປີດປະຊຸມສານ

ການເປີດປະຊຸມສານ ດຳເນີນຕາມຂັ້ນຕອນ ດັ່ງນີ້:

1) ຈ່າສານ ແຈ້ງລະບຽບການປະຊຸມສານ ສູ່ທີ່ປະຊຸມສານ;

2) ຈ່າສານລາຍງານ ກ່ຽວກັບຜູ່ເຂົ້າຮ່ວມໃນທີ່ປະຊຸມສານ ກ່ອນຄະນະສານຈະເຂົ້າສູ່ຫ້ອງປະຊຸມສານ;

3) ຈ່າສານ ນຳເອົາສຳນວນຄະດີ ມອບໃຫ້ຄະນະສານ ເພື່ອທຳການໄຕ່ສວນ;

4) ປະທານຄະນະສານກ່າວເປີດການປະຊຸມສານແລ້ວອ່ານຄຳສັ່ງໃຫ້ນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ;

5) ປະທານຄະນະສານ ຖາມຈຳເລີຍ ກ່ຽວກັບການຮັບຊາບຂໍ້ກ່າວຫາ.

### 2.1. ການແຈ້ງຄະດີທີ່ນຳອອກພິຈາລະນາ

ພາຍຫຼັງທີ່ຈຳເລີຍ ຮັບຊາບຂໍ້ກ່າວຫາຕາມການສັ່ງຟ້ອງຂຶ້ນສານຂອງຫົວໜ້າອົງການໄອຍະການ ແລະ ຄຳສັ່ງຂອງປະທານສານແລ້ວ ປະທານຄະນະສານຕ້ອງແຈ້ງຄະດີທີ່ນຳອອກພິຈາລະນາໃຫ້ຄູ່ຄວາມ ແລະ ຜູ່ເຂົ້າຮ່ວມອື່ນໃນການດຳເນີນຄະດີ (ມ 186 ກດຍ).

### 2.2. ການແຈ້ງຊື່ຄະນະສານ, ຈ່າສານ ແລະ ຫົວໜ້າອົງການໄອຍະການ

ປະທານຄະນະສານ ຕ້ອງແຈ້ງ ຊື່ ແລະ ນາມສະກຸນຂອງ ຄະນະສານ, ຈ່າສານ, ຫົວໜ້າອົງການໄອຍະການ ໃຫ້ຜູ້ເຂົ້າຮ່ວມໃນທີ່ປະຊຸມສານຊາບ ໂດຍເລີ່ມຈາກປະທານຄະນະສານ, ຄະນະສານ, ຈ່າສານ ແລະ ຫົວໜ້າອົງການໄອຍະການ ຫຼື ຜູ້ຕາງໜ້າຫົວໜ້າອົງການໄອຍະການ ຕາມລຳດັບ (ມ 187 ກດຍ).

**ຕົວຢ່າງ:** ຄະນະສານປະກອບຂຶ້ນໃນມື້ນີ້ ມີຄື:

ຂ້າພະເຈົ້າຊື່............................................... ນັ່ງເປັນປະທານ, ເບື້ອງຂວາມື ຂ້າພະເຈົ້າຊື່ ທ່ານ..................................................... ຜູ້ພິພາກສາ ນັ່ງເປັນຄະນະ, ເບື້ອງຊ້າຍມື ຂ້າພະເຈົ້າຊື່ ທ່ານ.................................... ຜູ້ພິພາກສາ ນັ່ງເປັນຄະນະ;

ນັ່ງພ້ອມດ້ວຍ ທ່ານ................................................ ເປັນຈ່າສານ, ຕໍ່ໜ້າທ່ານ ..........................ຫົວໜ້າອົງການໄອຍະການ ຫຼື ຕໍ່ໜ້າທ່ານ .................................... ຜູ້ຕາງໜ້າຫົວໜ້າອົງການໄອຍະການ.

### 2.3. ສິດໃນການຄ້ານຕົວ

ປະທານຄະນະສານ ຕ້ອງແຈ້ງສິດໃນການຄ້ານຕົວຄະນະສານ ຫຼື ບຸກຄົນໃດໜຶ່ງໃນຄະນະສານ, ຈ່າສານ, ຫົວໜ້າອົງການໄອຍະການ ຫຼື ຜູ້ຕາງໜ້າຫົວໜ້າອົງການໄອຍະການ, ຜູ້ຊ່ຽວຊານ, ຜູ້ຊຳນານງານ ຫຼື ຜູ້ແປພາສາ ໃຫ້ຄູ່ຄວາມຊາບ ແລະ ຖາມຄຳເຫັນຂອງຄູ່ຄວາມ (ມ 188 ກດຍ).

**ຕົວຢ່າງ:** ກ່ອນສານຈະເຂົ້າໄປໄຕ່ສວນ ແລະ ດຳເນີນຄະດີ ສານຈະແຈ້ງສິດໃນການຄ້ານຕົວໃຫ້ ໂຈດທາງແພ່ງ, ຈຳເລີຍ ແລະ ຜູ້ເຂົ້າຮ່ວມໃນການດຳເນີນຄະດີໃນມື້ນີ້ຊາບດັ່ງນີ້, ຖ້າຄະນະສານປະກອບຂຶ້ນໃນມື້ນີ້ຫາກເປັນຍາດພີ່ນ້ອງ, ເພື່ອນມິດສະຫາຍ ຫຼື ວ່າຈະເຮັດໃຫ້ການດຳເນີນຄະດີໄປ ບໍ່ເປັນທຳແກ່ໂຈດທາງແພ່ງ, ຈຳເລີຍ ຫຼື ຜູ້ເຂົ້າຮ່ວມນັ້ນ ແມ່ນທຸກຄົນມີສິດຄ້ານຕົວຂອງຄະນະສານໄດ້ ຈະຄ້ານຕົວບຸກຄົນໃດໜຶ່ງກໍໄດ້ ຫຼື ທັງໝົດຄະນະສານນີ້ກໍໄດ້ ເພາະວ່າກົດໝາຍໄດ້ໃຫ້ສິດ ຖ້າມີການຄ້ານຕົວ ຕ້ອງຖາມເຫດຜົນຂອງການຄ້ານຕົວນັ້ນ.

ຄູ່ຄວາມ ມີສິດສະເໜີຄ້ານຕົວ ຄະນະສານ, ບຸກຄົນໃດໜຶ່ງທີ່ໄດ້ກ່າວໄວ້ໃນວັກໜຶ່ງເທິງນີ້ ຖ້າເຫັນວ່າ ເປັນຍາດພີ່ນ້ອງ, ມີຜົນປະໂຫຍດ ຫຼື ມີຂໍ້ຂັດແຍ່ງກັບຄູ່ຄວາມຝ່າຍໃດຝ່າຍໜຶ່ງ. ໃນກໍລະນີດັ່ງກ່າວ ປະທານຄະນະສານ ຕ້ອງປິດການປະຊຸມສານໄວ້ຊົ່ວຄາວ ເພື່ອພິຈາລະນາຕົກລົງກ່ຽວກັບບັນຫານີ້ ໃນຫ້ອງປະຊຸມລັບ.

**2.4. ຜົນຂອງການພິຈາລະນາ ກ່ຽວກັບການຄ້ານຕົວ**

ພາຍຫຼັງທີ່ໄດ້ພິຈາລະນາ ກ່ຽວກັບການຄ້ານຕົວໃນຫ້ອງປະຊຸມລັບແລ້ວ ຄະນະສານຈະອອກສູ່ທີ່ປະຊຸມສານຕາມລະບຽບການ ໝາຍຄວາມວ່າ ເລີ່ມເປີດປະຊຸມສານຄືເຮັດຜ່ານມາທຸກຢ່າງ (ມ 172 ກດຍ).

ຖ້າວ່າ ຄຳສະເໜີຄ້ານຕົວ ຫາກມີເຫດຜົນແລ້ວ ຕ້ອງມີການສັບປ່ຽນບຸກຄົນທີ່ຖືກຄ້ານຕົວ. ຖ້າວ່າຄຳສະເໜີຄ້ານຕົວນັ້ນຫາກບໍ່ມີເຫດຜົນ ເຊັ່ນ ຢາກໃຫ້ແຕ່ຜູ້ພິພາກສາທີ່ເປັນຜູ້ຍິງຕັດສິນ ຫຼື ບໍ່ມັກຮູບຮ່າງໜ້າຕາຂອງຜູ້ພິພາກສາເຫຼົ່ານີ້ເປັນຕົ້ນ, ປະທານສານຕ້ອງຢັ້ງຢືນເອົາຄະນະສານ ແລະ ແຈ້ງເຫດຜົນ ໃນການບໍ່ສັບປ່ຽນຄະນະສານ ຫຼື ບຸກຄົນອື່ນທີ່ຖືກຄ້ານຕົວ ແລ້ວດຳເນີນການໄຕ່ສວນຕໍ່ໄປ ຕາມຈັນຍາບັນຂອງຜູ້ພິພາກສາແລ້ວ ຖ້າບໍ່ຈຳເປັນແທ້ ຫາກມີການຄ້ານຕົວແລ້ວ ຜູ້ພິພາກສາທີ່ຖືກຄ້ານຕົວບໍ່ຈຳເປັນຈະຂຶ້ນພິຈາລະນາຕັດສິນຄະດີຕໍ່ເພື່ອເປັນຄວາມສະບາຍໃຈໃຫ້ແກ່ຜູ້ຄ້ານຕົວ.

**2.5. ການອະທິບາຍ ສິດ ແລະ ພັນທະຂອງຜູ້ຊ່ຽວຊານ, ຜູ້ຊຳນານງານ ແລະ ຜູ້ແປພາສາ**

ໃນກໍລະນີ ທີ່ຜູ້ຊ່ຽວຊານ, ຜູ້ຊຳນານງານ ແລະ ຜູ້ແປພາສາ ເຂົ້າຮ່ວມໃນການປະຊຸມສານປະທານຄະນະສານຕ້ອງແຈ້ງຊື່ ແລະ ນາມສະກຸນ, ອາຊີບ ແລະ ໜ້າທີ່ຮັບຜິດຊອບພ້ອມທັງອະທິບາຍສິດ ແລະ ພັນທະຂອງພວກກ່ຽວ.

ຜູ້ຊ່ຽວຊານ ແມ່ນບຸກຄົນທີ່ມີຄວາມຮູ້ ແລະ ປະສົບການທາງດ້ານວິຊາສະເພາະໃດໜຶ່ງທີ່ຖືກຮັບຮູ້ຈາກສະຖາບັນທີ່ກ່ຽວຂ້ອງ ຊຶ່ງສາມາດໃຫ້ຄວາມກະຈ່າງແຈ້ງ ຕໍ່ບັນຫາທີ່ພົວພັນກັບວິຊາສະເພາະຂອງຕົນ. ໃນການພິສູດຫຼັກຖານສານ ຕ້ອງອອກຄຳສັ່ງແຕ່ງຕັ້ງຜູ້ຊ່ຽວຊານ. ຜູ້ຊ່ຽວຊານມີສິດ ແລະ ພັນທະ ດັ່ງນີ້:

1) ໄດ້ຮັບເອກະສານ ແລະ ວັດຖຸ ທີ່ຕ້ອງການໃຫ້ພິສູດ;

2) ເຂົ້າຮ່ວມຟັງການເອົາຄຳໃຫ້ການ ແລະ ຕັ້ງຄຳຖາມກ່ຽວກັບບັນຫາທີ່ພົວພັນກັບເປົ້າໝາຍທີ່ຕ້ອງການພິສູດ;

3) ປະຕິເສດການພິສູດ ແຕ່ຕ້ອງໃຫ້ເຫດຜົນ;

4) ສະຫຼຸບຜົນຂອງການພິສູດ.

ຜູ້ຊ່ຽວຊານ ຕ້ອງດຳເນີນການພິສູດຫຼັກຖານຢູ່ໃນຂອບເຂດ ແລະ ເວລາທີ່ໄດ້ກຳນົດໄວ້ໃນຄຳສັ່ງແຕ່ງຕັ້ງ. ຜູ້ຊ່ຽວຊານ ໃຫ້ຄຳເຫັນໃນນາມຂອງຕົນ ແລະ ຮັບຜິດຊອບຕໍ່ຄຳເຫັນດັ່ງກ່າວ ພ້ອມທັງຮັກສາຄວາມລັບໃນຄະດີ (ມ 72 ກດຍ).

ຜູ້ຊຳນານງານ ແມ່ນບຸກຄົນທີ່ມີຄວາມຊຳນິຊຳນານ ໃນດ້ານໃດໜຶ່ງ ແລະ ມີຄວາມສາມາດໃຫ້ຄຳເຫັນ ກ່ຽວກັບບັນຫາທີ່ອີງການດຳເນີນຄະດີອາຍາ ໃຫ້ທຳການພິສູດ. ໃນການ

ພິສູດຫຼັກຖານຜູ້ຊຳນານງານໄດ້ຮັບການແຕ່ງຕັ້ງຄືກັນກັບຜູ້ຊ່ຽວຊານ. ຜູ້ຊຳນານງານ ມີສິດປະຕິເສດການພິສູດ ແຕ່ຕ້ອງໃຫ້ເຫດຜົນ. ຜູ້ຊຳນານງານໃຫ້ຄຳເຫັນໃນນາມຂອງຕົນ ແລະຮັກສາຄວາມລັບໃນຄະດີ (ມ 73 ກດຍ).

ຜູ້ແປພາສາ ແມ່ນ ບຸກຄົນທີ່ມີຄວາມຮູ້, ຄວາມສາມາດ ຫຼື ປະສົບການໃນການແປພາສາໃດໜຶ່ງຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີ ທີ່ບໍ່ຮູ້ພາສາລາວ. ຜູ້ແປພາສາໄດ້ຮັບການແຕ່ງຕັ້ງຄືກັນກັບຜູ້ຊ່ຽວຊານ. ຜູ້ແປພາສາ ຕ້ອງຮັບຜິດຊອບຕໍ່ການແປຂອງຕົນ ແລະ ມີພັນທະໃນການຮັກສາຄວາມລັບໃນຄະດີ. ຄ່າໃຊ້ຈ່າຍໃນການແປພາສາ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍຄ່າທຳນຽມສານ (ມ 74 ກດຍ).

### 2.6. ການອະທິບາຍສິດ ແລະ ພັນທະ ຂອງພະຍານ

ພາຍຫຼັງໄດ້ຖາມ ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ ແລະ ທີ່ຢູ່ຂອງພະຍານແຕ່ລະຄົນ ແລ້ວປະທານຄະນະສານ ຕ້ອງອະທິບາຍສິດ ແລະ ພັນທະໃຫ້ຜູ້ກ່ຽວຊາບ (ມ 70 ກດຍ).

ພະຍານ ແມ່ນບຸກຄົນທີ່ໄດ້ຮູ້ເຫັນເຫດການຂອງການກະທຳຜິດ ຫຼື ສະພາບຂອງຄະດີ. ຄົນຫູໜວກ, ຕາບອດ, ປາກກືກ, ປັນຍາອ່ອນ ເສັຍຈິດ, ເດັກ ທີ່ຍັງບໍ່ທັນເຖິງກະສຽນອາຍຸສິບແປດປີ, ຍາດພີ່ນ້ອງຂອງຄູ່ຄວາມອາດນຳມາໃຫ້ການ ເພື່ອຊອກຫາຂໍ້ມູນແຕ່ບໍ່ໃຫ້ຖືວ່າເປັນພະຍານ. ພະຍານມີສິດດັ່ງນີ້:

1) ໃຫ້ການ;

2) ເບິ່ງບົດບັນທຶກຄຳໃຫ້ການຂອງຕົນ ໃນຂັ້ນສືບສວນ-ສອບສວນ;

3) ສະເໜີປ່ຽນແປງ ຫຼື ເພີ່ມເຕີມ ບົດບັນທຶກຄຳໃຫ້ການຂອງຕົນ;

4) ຮ້ອງຟ້ອງຕໍ່ການກະທຳ ຫຼື ການອອກຄຳສັ່ງ ຂອງຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ, ຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ຫຼື ສານທີ່ຕົນເຫັນວ່າບໍ່ຖືກຕ້ອງ;

5) ໄດ້ຮັບການປົກປ້ອງຕາມລະບຽບກົດໝາຍ ຈາກການຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ຊັບສິນ ຫຼື ຈິດໃຈ ຍ້ອນການໃຫ້ການຂອງຕົນ.

ພະຍານມີພັນທະຄືກັນກັບພັນທະຂອງຜູ້ຖືກເສັຍຫາຍຕາມທີ່ໄດ້ກຳນົດໄວ້ໃນ (ມ 67 ກດຍ).

## 3. ລະບຽບການໄຕ່ສວນຄະດີໃນທີ່ປະຊຸມສານຂັ້ນຕົ້ນ

ການໄຕ່ສວນຄະດີໃນທີ່ປະຊຸມສານຂັ້ນຕົ້ນຕ້ອງເຮັດໂດຍກົງ, ທາງປາກເປົ່າ, ຢ່າງເປີດເຜີຍ ຫຼື ປິດລັບໃນບາງກໍລະນີ, ເຮັດຕໍ່ເນື່ອງກັນໂດຍບໍ່ມີການສັບປ່ຽນຄະນະສານ ຄຳວ່າເປີດເຜີຍແມ່ນຄະດີທົ່ວໆໄປ ທຸກຄົນແມ່ນເຂົ້າຮ່ວມຟັງໄດ້ຈະເປັນນັກສຶກສາ ຫຼື ພະນັກງານທີ່ກ່ຽວຂ້ອງກໍສາມາດເຂົ້າຮ່ວມຟັງໄດ້ ແຕ່ຕ້ອງປະຕິບັດຕາມລະບຽບປະຊຸມສານ, ຄຳວ່າ “ປິດ

ລັບ" ແມ່ນເປັນຄະດີທີ່ສຳຄັນ ເຊັ່ນ ຄະດີກ່ຽວກັບເດັກທີ່ຖືກເຄາະຮ້າຍຈາກການກະທຳຂອງຜູ້ໃຫຍ່, ກ່ຽວກັບຄອບຄົວ, ການທຳມິດສະຈານ, ຄວາມລັບຂອງຊາດ ແລະ ອື່ນໆ.

ໃນການໄຕ່ສວນນັ້ນ ປະທານຄະນະສານ ຕ້ອງໄດ້ກຳນົດເຫດການຂອງຄະດີໂດຍກົງດ້ວຍການຕັ້ງຄຳຖາມແລ້ວຟັງຄຳຕອບຂອງຈຳເລີຍ, ຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ພະຍານ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ, ການພິສູດຫຼັກຖານ, ຟັງຄຳຖະແຫຼງຂອງຫົວໜ້າອົງການໄອຍະການ ແລະ ຄຳຖະແຫຼງຂອງທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ.

ປະທານຄະນະສານມີໜ້າທີ່ນຳພາການໄຕ່ສວນຄະດີຢ່າງເປັນກາງໃນຫ້ອງປະຊຸມສານ, ຖາມຊີວະປະຫວັດຂອງຈຳເລີຍ, ແຈ້ງຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການ ແລະ ຂໍ້ກ່າວຫາໃຫ້ຈຳເລີຍຊາບ, ຄະນະສານຕ້ອງຟັງຄຳໃຫ້ການຂອງຜູ້ຖືກເສຍຫາຍ ຫຼື ໂຈດທາງແພ່ງ, ຈຳເລີຍ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ, ພະຍານ ແລະ ຜູ້ເຂົ້າຮ່ວມອື່ນໃນການດຳເນີນຄະດີ.

ໃນເວລາໄຕ່ສວນຄະດີນັ້ນ ຫົວໜ້າອົງການໄອຍະການ, ຄະນະສານ ມີສິດຖາມຄູ່ຄວາມ ແລະ ຜູ້ເຂົ້າຮ່ວມອື່ນ ໃນການດຳເນີນຄະດີເພີ່ມເຕີມ ໂດຍໄດ້ຮັບອະນຸຍາດ ຈາກປະທານຄະນະສານ, ຄະນະສານນຳເອົາບັນດາຂອງກາງ ແລະ ຫຼັກຖານໃນຄະດີມາສະເໜີຕໍ່ທີ່ປະຊຸມສານ ແລ້ວເປີດການໂຕ້ຖຽງ, ກໍລະນີດັ່ງກ່າວຖ້າຫາກມີການສັບປ່ຽນຄະນະສານຕ້ອງໄດ້ເລີ່ມຕົ້ນດຳເນີນການໄຕ່ສວນຄືນໃໝ່ທັງໝົດ.

### 3.1. ການອ່ານຄຳສັ່ງຟ້ອງຜູ້ຖືກຫາ

ກ່ອນທຳການໄຕ່ສວນຄະດີ ປະທານຄະນະສານ ຕ້ອງໄດ້ສະເໜີໃຫ້ຫົວໜ້າອົງການໄອຍະການທີ່ ເຂົ້າຮ່ວມປະຊຸມສານ ອ່ານຄຳສັ່ງຟ້ອງໃຫ້ຈຳເລີຍຊາບ.

### 3.2. ວິທີການໄຕ່ສວນຄະດີ

ໃນການໄຕ່ສວນຄະດີ ຄະນະສານຕ້ອງຊອກຫາຫຼັກຖານ ເພື່ອກຳນົດສະພາບການຢ່າງຄົບຖ້ວນ ຂອງແຕ່ລະເຫດການຂອງການກະທຳຜິດໃນຄະດີຕາມຂັ້ນຕອນຂອງການໄຕ່ສວນ. ໃນການໄຕ່ສວນແຕ່ລະຄົນ ປະທານຄະນະສານເປັນຜູ້ຖາມກ່ອນ, ຕໍ່ມາຄະນະສານເປັນຜູ້ຖາມຈາກນັ້ນຈຶ່ງ ແມ່ນຫົວໜ້າອົງການໄອຍະການ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ. ຄະນະສານ, ຫົວໜ້າອົງການໄອຍະການ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ກ່ອນຈະຖາມຜູ້ເຂົ້າຮ່ວມ ຕ້ອງໄດ້ຮັບອະນຸຍາດຈາກປະທານຄະນະສານ.

ຜູ້ເຂົ້າຮ່ວມການໄຕ່ສວນຄະດີໃນທີ່ປະຊຸມສານ ມີສິດສະເໜີຕໍ່ປະທານຄະນະສານໃຫ້ຕັ້ງຄຳຖາມກ່ຽວກັບສະພາບການ ເພື່ອຄວາມກະຈ່າງແຈ້ງຂອງເຫດການໃນຄະດີ. ຜູ້ຊ່ຽວ

ຊານ ຫຼື ຜູ້ຊໍານານງານ ສາມາດຕັ້ງຄໍາຖາມຕໍ່ຜູ້ເຂົ້າຮ່ວມກ່ຽວກັບບັນຫາທີ່ພົວພັນກັບການໃຫ້ຄໍາເຫັນຂອງຕົນ.

### 3.3. ການໄຕ່ສວນຄະດີ

ປະທານຄະນະສານຈະເລີ່ມຕົ້ນ ການໄຕ່ສວນຄະດີດ້ວຍການຖາມຈໍາເລີຍ ໂດຍເນັ້ນປະເດັນທີ່ສໍາຄັນຄື ຊີວະປະຫວັດຂອງຜູ້ກ່ຽວ, ການຮັບຊາບຄໍາສັ່ງຟ້ອງ ແລະ ຂໍ້ກ່າວຫາ, ສະພາບຂອງຄະດີ, ຫຼັງຈາກນັ້ນປະທານຄະນະສານຕ້ອງສືບຕໍ່ ການໄຕ່ສວນ ກ່ຽວກັບບັນຫາທີ່ຍັງບໍ່ທັນຈະແຈ້ງ, ບໍ່ທັນຄົບຖ້ວນ ແລະ ບັນຫາອື່ນໆ ໃນກໍລະນີຫາກຈໍາເລີຍຫຼາຍຄົນນັ້ນຄະນະສານຕ້ອງໄຕ່ສວນເທື່ອລະຄົນ, ຖ້າວ່າຄໍາໃຫ້ການຂອງພວກຈໍາເລີຍບໍ່ສົ່ງຜົນກະທົບ ຊຶ່ງກັນ ແລະ ກັນ ຄະນະສານບໍ່ແຍກກໍໄດ້; ຖ້າຫາກວ່າມີການສົ່ງຜົນກະທົບຊຶ່ງກັນ ແລະ ກັນ ກໍລະນີນີ້ຕ້ອງໄດ້ແຈ້ງຄໍາໃຫ້ການຂອງຈໍາເລີຍຜູ້ກ່ອນໃຫ້ຈໍາເລີຍຜູ້ຖືກແຍກນີ້ຊາບເສຍກ່ອນ ແລະ ຜູ້ກ່ຽວກໍມີສິດຕັ້ງຄໍາຖາມຕໍ່ຈໍາເລີຍຜູ້ກ່ອນ.

ຫົວໜ້າອົງການໄອຍະການ ມີສິດຖາມກ່ຽວກັບສະພາບການຂອງຄະດີ ທີ່ມີການພົວພັນກັບຂໍ້ກ່າວຫາຕໍ່ຈໍາເລີຍ. ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນມີສິດຖາມ ແລະ ສະເໜີບັນຫາກ່ຽວກັບສະພາບການທີ່ພົວພັນກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກຄວາມຂອງຕົນ. ຜູ້ເຂົ້າຮ່ວມໃນການໄຕ່ສວນຄະດີ ແມ່ນມີສິດສະເໜີຕໍ່ປະທານຄະນະສານເພື່ອສືບຕໍ່ຖາມກ່ຽວກັບສະພາບການທີ່ພົວພັນເຖິງຕົນເອງ, ໃນກໍລະນີທີ່ຈໍາເລີຍຫາກໄດ້ປະຕິເສດຈະຕອບຄໍາຖາມ ຄະນະສານຕ້ອງສືບຕໍ່ຖາມກ່ຽວກັບບຸກຄົນອື່ນ ແລະ ກວດກາຂໍ້ມູນຫຼັກຖານທີ່ພົວພັນກັບຄະດີ.

ພາຍຫຼັງສິ້ນສຸດການໄຕ່ສວນຈໍາເລີຍແລ້ວ ຄະນະສານຕ້ອງທໍາການໄຕ່ສວນຜູ້ຖືກເສຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງພວກກ່ຽວໃນກໍລະນີທີ່ຍັງມີບັນຫາຍັງບໍ່ທັນຄົບຖ້ວນ, ຈະແຈ້ງ ຫຼື ມີຈຸດທີ່ສໍາຄັນການໃຫ້ການຂອງພວກກ່ຽວອາດມີຄວາມແຕກຕ່າງກັນ ໃຫ້ຄະນະສານສືບຕໍ່ໄຕ່ສວນຈົນສໍາເລັດ.

### 3.4. ການໄຕ່ສວນພະຍານ

ຄະນະສານຕ້ອງດໍາເນີນການໄຕ່ສວນພະຍານໄປເທື່ອລະຄົນ ໃນກໍລະນີມີຫຼາຍຄົນຕ້ອງແຍກພະຍານອອກຈາກກັນ ແລະ ບໍ່ໃຫ້ພວກກ່ຽວຮູ້ເນື້ອໃນຄໍາໃຫ້ການຂອງພະຍານຜູ້ອື່ນ ທີ່ກໍາລັງຖືກໄຕ່ສວນຢູ່, ໃນການໄຕ່ສວນພະຍານນັ້ນ ຄະນະສານຕ້ອງສະເໜີໃຫ້ພະຍານແຕ່ລະຄົນນັ້ນ ໃຫ້ເວົ້າຈະແຈ້ງໄດ້ຍິນຊັດເຈນ ກ່ຽວກັບສະພາບຂອງຄະດີທີ່ຕົນໄດ້ຮູ້, ໄດ້ເຫັນ ແລະ ສືບຕໍ່ຖາມບັນຫາທີ່ຍັງບໍ່ທັນຄົບຖ້ວນ ຫຼື ບໍ່ຈະແຈ້ງ.

ພະຍານທີ່ໄດ້ຜ່ານການໄຕ່ສວນຢູ່ທີ່ຫ້ອງປະຊຸມສານມາແລ້ວ ຕ້ອງຢູ່ໃນຫ້ອງປະຊຸມສານຕໍ່ເພື່ອຄວາມສະດວກໃນການຖາມເພີ່ມເຕີມ, ໃນກໍລະນີທີ່ຈໍາເປັນເພື່ອຮັບປະກັນຄວາມ

ປອດໄພ ໃຫ້ແກ່ພະຍານ ຫຼື ຍາດໃກ້ຊິດຂອງຜູ່ກ່ຽວນັ້ນ ຄະນະສານຕ້ອງນຳໃຊ້ມາດຕະການປົກປ້ອງ ທີ່ຈຳເປັນຕາມທີ່ກຳນົດໄວ້ໃນກົດໝາຍ.

### 3.5. ການໃຫ້ຄຳເຫັນຂອງຜູ່ຊ່ຽວຊານ ຫຼື ຜູ່ຊຳນານງານ

ຜູ່ຊ່ຽວຊານ ຫຼື ຜູ່ຊຳນານງານຕ້ອງເຂົ້າຮ່ວມປະຊຸມສານຕາມໝາຍເຊີນຂອງສານ ເພື່ອໃຫ້ຄຳເຫັນຂອງຕົນຕໍ່ສານ ກ່ຽວກັບບັນຫາທີ່ຕົນໄດ້ຖືກແຕ່ງຕັ້ງໃຫ້ພິສູດ, ເວລາທີ່ຢູ່ໃນທີ່ປະຊຸມສານນັ້ນຜູ່ຊ່ຽວຊານ ຫຼື ຜູ່ຊຳນານງານມີສິດໃຫ້ຄຳອະທິບາຍເພີ່ມເຕີມກ່ຽວກັບບົດສະຫຼຸບຂອງຕົນຕໍ່ທີ່ປະຊຸມສານໄດ້ ໃນກໍລະນີຜູ່ຊ່ຽວຊານ ຫຼື ຜູ່ຊຳນານງານຫາກບໍ່ສາມາດເຂົ້າຮ່ວມໃນທີ່ປະຊຸມສານໄດ້ນັ້ນ ປະທານຄະນະສານຕ້ອງແຈ້ງເນື້ອໃນບົດສະຫຼຸບຂອງຜູ່ຊ່ຽວຊານ ຫຼື ຜູ່ຊຳນານງານຕໍ່ໃນທີ່ປະຊຸມສານຊາບ.

ຫົວໜ້າອົງການໄອຍະການ, ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນຂອງຈຳເລີຍ ແລະ ຜູ່ເຂົ້າຮ່ວມອື່ນໃນທີ່ປະຊຸມສານມີສິດໃຫ້ຄຳເຫັນກ່ຽວກັບບົດສະຫຼຸບຂອງຜູ່ຊ່ຽວຊານ ຫຼື ຜູ່ຊຳນານງານ ແລະ ຖາມກ່ຽວກັບບັນຫາທີ່ບໍ່ທັນຈະແຈ້ງ ຫຼື ບໍ່ທັນກົງກັນກັບບົດສະຫຼຸບໃນກໍລະນີຈຳເປັນຄະນະສານສາມາດ ສະເໜີໃຫ້ຜູ່ຊ່ຽວຊານ ຫຼື ຜູ່ຊຳນານງານທຳການພິສູດເພີ່ມເຕີມ ຫຼື ທຳການພິສູດຄືນໃໝ່ໄດ້.

### 3.6. ການສະແດງຫຼັກຖານ

ຫົວໜ້າອົງການໄອຍະການ, ຈຳເລີຍ, ທະນາຍຄວາມ ຫຼື ຜູ່ເຂົ້າຮ່ວມອື່ນສະເໜີຄຳເຫັນຂອງຕົນກ່ຽວກັບຫຼັກຖານທາງດ້ານວັດຖຸ, ຮູບພາບ, ພາບ ຫຼື ສຽງບັນທຶກ. ຕ້ອງນຳມາສະແດງ ຫຼື ສະເໜີຢູ່ທີ່ຫ້ອງ ປະຊຸມສານ, ຫຼັກຖານຕ່າງໆທີ່ນຳມາສະແດງ ຫຼື ສະເໜີຢູ່ໃນທີ່ຫ້ອງປະຊຸມສານ ຄະນະສານຕ້ອງທຳການກວດກາຄວາມຖືກຕ້ອງ, ຄວາມສອດຄ່ອງ ແລະ ມີສາຍກ່ຽວພັນກັບຄະດີນັ້ນ ຫຼື ບໍ່, ຈາກນັ້ນປະທານຄະນະສານຕ້ອງຖາມຄືນວ່າຫຼັກຖານທີ່ນຳມາສະເໜີໃນມື້ນີ້ໝົດແລ້ວບໍ່ ຫຼື ວ່າຜູ່ໃດມີຫຼັກຖານອັນໃດກໍຕ້ອງບອກໃຫ້ນຳມາສະ ເໜີ.

ຖ້າບໍ່ມີຫຼັກຖານໃໝ່ແລ້ວ ປະທານຄະນະສານຈະກ້າວໄປສູ່ການສິ້ນສຸດການໄຕ່ສວນໃນເມື່ອເຫັນວ່າທຸກສະພາບການຂອງຄະດີ ໄດ້ນຳມາໄຕ່ສວນໃນທີ່ປະຊຸມສານຢ່າງຄົບຖ້ວນແລ້ວ. ປະທານຄະນະສານຕ້ອງເປັນຜູ່ຖາມລະອຽດກ່ຽວກັບຜູ່ເຂົ້າຮ່ວມໃນຫ້ອງປະຊຸມສານວ່າ ຍັງມີຫຼັກຖານໃດທີ່ຕ້ອງການນຳມາສະເໜີ ຫຼື ຕ້ອງການໃຫ້ໄຕ່ສວນບັນຫາໃດຕື່ມອີກ. ຖ້າຫາກຍັງມີການສະເໜີ ຫຼື ການຖາມຫາກຍັງມີເຫດຜົນ ຄະນະສານກໍຈະສືບຕໍ່ການໄຕ່ສວນຈົນໃຫ້ ທຸກບັນຫາມີຄວາມຈະແຈ້ງ ແລະ ຄົບຖ້ວນ, ໃນເມື່ອຫາກບໍ່ມີການສະເໜີ ຫຼື ການຖາມຕື່ມ ນັ້ນໃຫ້ຖືວ່າການໄຕ່ສວນຄະດີໄດ້ສິ້ນສຸດລົງ.

## 4. ການໂຕ້ຖຽງໃນທີ່ປະຊຸມສານ

### 4.1. ລະບຽບການໂຕ້ຖຽງ

ພາຍຫຼັງການໄຕ່ສວນຄະດີໃນທີ່ຫ້ອງປະຊຸມສານສິ້ນສຸດລົງແລ້ວ ປະທານຄະນະສານກໍເປີດການໂຕ້ຖຽງຂຶ້ນທັນທີ, ການໂຕ້ຖຽງແມ່ນເລີ່ມຕົ້ນດ້ວຍການຊີ້ແຈງຂອງຫົວໜ້າອົງການໄອຍະການກ່ຽວກັບຫຼັກຖານຜູກມັດ ແລະ ຄວາມຮັບຜິດຊອບທາງອາຍາຂອງຈຳເລີຍ ຈຳເລີຍຈະຕ້ອງມີຄຳເຫັນເພື່ອປົກປ້ອງຕົນເອງ ເຖິງແມ່ນວ່າຈະມີທະນາຍຄວາມ ຫຼື ຜູ່ປົກປ້ອງແລ້ວກໍຕາມ, ໂຈດທາງແພ່ງ, ຜູ່ຮັບຜິດຊອບທາງແພ່ງ ແລະ ບຸກຄົນອື່ນໆກໍມີສິດສະເໜີຄຳເຫັນເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ. ໃນກໍລະນີບຸກຄົນດັ່ງກ່າວຫາກມີທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນກໍຈະແມ່ນທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນນັ້ນເປັນຜູ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ່ກ່ຽວ.

### 4.2. ການໂຕ້ຖຽງ

ເລີ່ມຈາກຈຳເລີຍ, ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນ ໃຫ້ຄຳເຫັນກ່ຽວກັບຂໍ້ກ່າວຫາແລ້ວ ປະທານຄະນະສານຈະສະເໜີໃຫ້ຫົວໜ້າອົງການໄອຍະການ ຫຼື ຜູ່ຕາງໜ້າຫົວໜ້າອົງການໄອຍະການຊີ້ແຈງຄຳເຫັນຂອງຜູ່ກ່ຽວ, ປະທານຄະນະສານຈະໃຫ້ເວລາແກ່ການໂຕ້ຖຽງ ແລະ ສ້າງເງື່ອນໄຂໃຫ້ບັນດາຜູ່ເຂົ້າຮ່ວມໄດ້ສະເໜີຄຳຄິດເຫັນຂອງຕົນ ແຕ່ຈະບໍ່ອະນຸຍາດໃຫ້ມີຄຳເຫັນທີ່ບໍ່ກ່ຽວຂ້ອງກັບຄະດີ, ບັນຫາອື່ນໆທີ່ເຫັນວ່າບໍ່ໄດ້ພົວພັນກັບເນື້ອຄະດີ ແລະ ຮູບຄະດີ.

ໂຈດທາງແພ່ງ, ຜູ່ຮັບຜິດຊອບທາງແພ່ງ ມີສິດສະເໜີກ່ຽວກັບບັນຫາທາງແພ່ງເທົ່ານັ້ນ ຖ້າຜູ່ເຂົ້າຮ່ວມໃນການໂຕ້ຖຽງຫາກບໍ່ມີຄຳເຫັນ ຫຼື ຄຳສະເໜີໃດແລ້ວ ປະທານຄະນະສານກໍປະກາດປິດການໂຕ້ຖຽງ ຫຼັງຈາກນັ້ນປະທານຄະນະສານກໍສະເໜີໃຫ້ຫົວໜ້າອົງການໄອຍະການ ຫຼື ຜູ່ຕາງໜ້າຫົວໜ້າອົງການໄອຍະການຖະແຫຼງ ຖ້າມີບັນຫາທາງດ້ານຂໍ້ມູນຫຼັກຖານຕ່າງໆນັ້ນ ປະທານຄະນະສານຈະບໍ່ໃຫ້ຫົວໜ້າອົງການໄອຍະການຖະແຫຼງ ປະທານຄະນະສານຈະໄດ້ໂຈະ ຫຼື ເລື່ອນຄະດີໄປກ່ອນ.

ກໍລະນີໃຫ້ຫົວໜ້າອົງການໄອຍະການຖະແຫຼງແລ້ວ ຄະນະສານຕ້ອງໄດ້ຕັດສິນ ແຕ່ຫາກມີອຸປະສັກກ່ຽວກັບເວລາອ່ານຄຳຕັດສິນບໍ່ທັນ ປະທານຄະນະສານຈະບອກເລື່ອນປະຊຸມສານໄປໃສ່ໃນມື້ຕໍ່ໄປແຕ່ບໍ່ໃຫ້ເກີນເຈັດວັນ.

ກໍລະນີພາຍຫຼັງທີ່ຫົວໜ້າອົງການໄອຍະການ ຫຼື ຜູ່ຕາງໜ້າຫົວໜ້າອົງການໄອຍະການຖະແຫຼງແລ້ວ ປະທານຄະນະສານຕ້ອງບອກໃຫ້ຈຳເລີຍມີຄຳເຫັນເປັນຜູ່ສຸດທ້າຍ ປະທານຄະນະສານຕ້ອງຖາມຈຳເລີຍວ່າ ຜ່ານການຟັງຄຳຖະແຫຼງຂອງໄອຍະການແລ້ວຈຳເລີຍມີຫຍັງບໍ່ຈະໃຫ້ການຕໍ່ໜ້າສານເປັນຄັ້ງສຸດທ້າຍ, ໃນກໍລະນີທີ່ເຫັນວ່າຈຳເລີຍໃຫ້ການເປັນຄັ້ງ

ສຸດທ້າຍນັ້ນ ຫາກເຫັນວ່າຄຳໃຫ້ການມີສະພາບການໃໝ່ທີ່ມີຄວາມສຳຄັນຕໍ່ຄະດີ ແລະ ເປັນໜ້າເຊື່ອຖືໄດ້ນັ້ນ ປະທານຄະນະສານ ກໍຕ້ອງໄດ້ດຳເນີນການໄຕ່ສວນ ຫຼື ໂຕ້ຖຽງເພີ່ມເຕີມ ແຕ່ຫາກວ່າບໍ່ມີສະພາບການໃດໆແລ້ວ ປະທານຄະນະສານກໍປະກາດປິດປະຊຸມສານຊົ່ວຄາວຄື ຜ່ານການໄຕ່ສວນ ແລະ ໂຕ້ຖຽງຜ່ານມານັ້ນເຫັນວ່າຄະດີດັ່ງກ່າວແຈ້ງຂາວພໍທີ່ຈະໃຫ້ຄະນະສານຂອງພວກເຮົານັ້ນນຳເອົາຄະດີດັ່ງກ່າວ ເຂົ້າຫ້ອງປະຊຸມລັບເພື່ອຮ່າງຄຳຕັດສິນໄດ້ແລ້ວ, ຂ້າພະເຈົ້າໃນນາມປະທານຄະນະສານອາຍາ ປິດປະຊຸມສານໄວ້ຊົ່ວຄາວ ເພື່ອນຳເອົາຄະດີເຂົ້າໄປພິຈາລະນາຢູ່ໃນຫ້ອງປະຊຸມລັບ.

### 4.3. ການໂຈະ ແລະ ການເລື່ອນ ການໄຕ່ສວນຄະດີໃນທີ່ປະຊຸມສານ

ການໂຈະການໄຕ່ສວນຄະດີໃນທີ່ປະຊຸມສານ ແມ່ນການຢຸດເຊົາການປະຊຸມສານຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງ ທີ່ເປັນອຸປະສັກຕໍ່ການໄຕ່ສວນຄະດີນັ້ນ ເປັນຕົ້ນຈຳເລີຍເຈັບເປັນຢ່າງກະທັນຫັນ ຫຼື ສູນເສຍຄວາມສາມາດທາງດ້ານການປະພຶດ.

**ຕົວຢ່າງ 1:** ກຳລັງໄຕ່ສວນຢູ່ ຈຳເລີຍເກີດມີອາການເປັນລົມຢູ່ຕໍ່ໜ້າຄະນະສານ, ຄະນະສານຕ້ອງຈຳເປັນຢຸດເຊົາຊົ່ວຄາວ ເພື່ອໃຫ້ເຈົ້າໜ້າທີ່ເອົາຈຳເລີຍອອກໄປນອກເພື່ອດື່ມຢາ, ມີສະຕິແລ້ວກໍເອົາເຂົ້າມາໄຕ່ສວນຕໍ່.

**ຕົວຢ່າງ 2:** ໃນສຳນວນຄະດີນັ້ນ ຫາກຍັງມີເອກະສານບາງຢ່າງທີ່ຈຳເປັນ ຕ້ອງນຳເອົາໄປໃຫ້ເຈົ້າໜ້າທີ່ພິສູດ, ຜູ້ເຂົ້າຮ່ວມຜູ້ໃດຜູ້ໜຶ່ງບໍ່ມາຮ່ວມຍ້ອນໄປຮຽນຕໍ່ຢູ່ຕ່າງປະເທດ ຫຼື ເຈັບເປັນກະທັນຫັນນອນຢູ່ໂຮງໝໍ.

**ຕົວຢ່າງ 3:** ໃນກໍລະນີ ສານໄຕ່ສວນແລ້ວ ເຫັນວ່າ ຄຳໃຫ້ການຂອງຈຳເລີຍດັ່ງກ່າວນັ້ນ ເປັນຂໍ້ມູນຫຼັກຖານອັນໃໝ່ ທີ່ບໍ່ຢູ່ໃນສຳນວນຄະດີ ຊຶ່ງຄຳໃຫ້ການນັ້ນເປັນປະໂຫຍດ ໃຫ້ແກ່ການດຳເນີນຄະດີ ເຊັ່ນ ອົງການໄອຍະການບໍ່ທັນໄດ້ສັ່ງຟ້ອງ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນບໍ່ເຫັນ ເພາະຜູ້ກ່ຽວໄດ້ອ້າງວ່າ ຜ່ານມາຜູ້ກ່ຽວເຄີຍກະທຳຜິດມາກ່ອນ ແລະ ຖືກສານຕັດສິນລົງໂທດມາແລ້ວ ແຕ່ອົງການໄອຍະການບໍ່ທັນໄດ້ສັ່ງຟ້ອງ ໃນກໍລະນີນີ້ ສານຕ້ອງໄດ້ໂຈະຄະດີໄວ້ແລ້ວສົ່ງສຳນວນຄະດີ ພ້ອມທັງປະເດັນບັນຫາດັ່ງກ່າວນັ້ນ ໃຫ້ອົງການໄອຍະການດຳເນີນຄະດີຄືນໃໝ່ ຫຼື ຖະແຫຼງເພີ່ມເຕີມ.

ໃນກໍລະນີ ຈຳເລີຍຫາກປະຕິເສດບໍ່ຍອມຮັບການກະທຳຜິດຂອງຕົນເອງຢູ່ໃນທີ່ປະຊຸມສານ ຖ້າຫາກຜູ້ພິພາກສາພິຈາລະນາເບິ່ງແລ້ວ ເຫັນວ່າການປະຕິເສດນັ້ນບໍ່ມີເຫດຜົນ ເປັນພຽງແຕ່ເປັນການປະຕິເສດເພື່ອແກ່ຍາວເວລາໃນການພິຈາລະນາຕັດສິນ ຫຼື ປະຕິເສດເພື່ອຢາກຫຼຸດພົ້ນຈາກຄວາມຜິດ ຜູ້ພິພາກສາຈະພິຈາລະນາຕັດສິນໄປເລີຍ ໂດຍອີງໃສ່ຫຼັກຖານອື່ນທີ່ປະກອບໃນສຳນວນຄະດີ ເປັນຕົ້ນແມ່ນຄຳໃຫ້ການຮັບສາລະພາບຢູ່ໃນຂັ້ນເຈົ້າໜ້າທີ່ ຫຼື ອຸປະກອນທີ່ຈຳເລີຍໃຊ້ເຂົ້າໃນການກະທຳຜິດ ໂດຍບໍ່ມີການໂຈະ ແລະ ການເລື່ອນ.

ການເລື່ອນການໄຕ່ສວນຄະດີ ແມ່ນການຕົກລົງເອົາຄະດີໄປໄຕ່ສວນໃນມື້ໜ້າ ຍ້ອນຄວາມຈຳເປັນທີ່ຕ້ອງທວງເອົາຫຼັກຖານໃໝ່ ຫຼື ຜູ້ເຂົ້າຮ່ວມໃນຄະດີຜູ້ໃດຜູ້ໜຶ່ງທີ່ມີຄວາມສຳຄັນຕໍ່ການພິຈາລະນາຄະດີນັ້ນ ບໍ່ມາຮ່ວມໃນທີ່ປະຊຸມສານ ຫຼື ຍ້ອນເຫດສຸດວິໄສ ຫຼື ເຫດບັງເອີນ.

ຄະນະສານ ມີສິດຕົກລົງກຳນົດເວລາຂອງການເລື່ອນການປະຊຸມສານ ແຕ່ກຳນົດເວລາຂອງການເລື່ອນ ແຕ່ລະຄັ້ງສູງສຸດບໍ່ໃຫ້ເກີນ ເຈັດວັນ ນັບແຕ່ວັນຕົກລົງເລື່ອນເປັນ ຕົ້ນໄປ.

**ຕົວຢ່າງ1:** ຜ່ານການໄຕ່ສວນ, ການໂຕ້ຖຽງສິ້ນສຸດ ພະນັກງານໄອຍະການໄດ້ຖະແຫຼງແລ້ວ ແຕ່ເວລາໝົດຈຳເປັນຕ້ອງໄດ້ເອົາຈຳເລີຍໄປຄ້າຍຄຸມຂັງຕາມໂມງ ແລະ ເວລາ ຄະນະສານຕ້ອງໄດ້ເລື່ອນການອ່ານຄຳຕັດສິນອອກໄປຈະໃສ່ມື້ໃດກໍໄດ້ແຕ່ບໍ່ໃຫ້ກາຍເຈັດວັນ.

**ຕົວຢ່າງ 2:** ກໍລະນີ ຈຳເລີຍມີຫຼາຍຄົນການໄຕ່ສວນບໍ່ທັນແລ້ວ. ສະນັ້ນ, ສານຈຳເປັນຕ້ອງໄດ້ເລື່ອນການໄຕ່ສວນໄປມື້ໃໝ່ເພື່ອສືບຕໍ່ການໄຕ່ສວນໃຫ້ສຳເລັດ.

**ຕົວຢ່າງ 3:** ກໍລະນີ ສານໄດ້ອອກໝາຍຮຽກແລ້ວແຕ່ໂຈດທາງແພ່ງ ຫຼື ຈຳເລີຍ ບໍ່ສາມາດເຂົ້າມາຮ່ວມປະຊຸມສານ ໃນກໍລະນີນີ້ສານຕ້ອງໄດ້ເລື່ອນໄປກ່ອນ, ຖ້າເລື່ອນໄປຮອດສາມຄັ້ງແລ້ວ ຍັງເຫັນວ່າໂຈດທາງແພ່ງ ຫຼື ຈຳເລີຍ ບໍ່ເຂົ້າມາຕາມໝາຍຮຽກ ກໍລະນີນີ້ສານຈະນຳເອົາຄະດີມາພິຈາລະນາຕັດສິນລັບຫຼັງ ໂຈດທາງແພ່ງ ຫຼື ຈຳເລີຍກໍໄດ້ ແຕ່ສານຕ້ອງຮຽກໃຫ້ໂຈດທາງແພ່ງ ຫຼື ຈຳເລີຍ ມາຮັບຊາບຕາມພາຍຫຼັງ.

### 4.4. ຂອບເຂດການພິຈາລະນາຕັດສິນຄະດີ

ສານ ຕ້ອງນຳເອົາຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການ ແລະ ຄຳຮ້ອງຂໍຂອງຄູ່ຄວາມມາພິຈາລະນາບົນພື້ນຖານຂໍ້ມູນຫຼັກຖານ ແລະ ຜົນຂອງການໄຕ່ສວນໃນທີ່ປະຊຸມສານເປັນຕົ້ນຕໍ. ທຸກຂໍ້ສະເໜີໃນຄຳສັ່ງຟ້ອງ ແລະ ຄຳຮ້ອງຂໍ ສານຕ້ອງນຳມາພິຈາລະນາຕາມກົດໝາຍ. ບັນຫາໃດທີ່ອົງການໄອຍະການ ຫຼື ຄູ່ຄວາມບໍ່ໄດ້ສະເໜີ ສານຈະບໍ່ນຳມາພິຈາລະນາ ໝາຍຄວາມວ່າສານຈະພິຈາລະນາແຕ່ເນື້ອໃນຂອງການສັ່ງຟ້ອງ ແລະ ເນື້ອໃນຄຳຮ້ອງຂໍເທົ່ານັ້ນ. ນອກຈາກນັ້ນ ຖ້າບໍ່ມີການສັ່ງຟ້ອງ ແລະ ບໍ່ມີການຮ້ອງຂໍ ສານຈະບໍ່ນຳມາພິຈາລະນາ.

ບົດບັນທຶກປະຊຸມສານ ມີເນື້ອໃນດັ່ງນີ້:

1) ຊື່ ແລະ ຄຳຂວັນ ຂອງປະເທດ;
2) ວັນ, ເວລາ ແລະ ສະຖານທີ່ປະຊຸມສານ;
3) ເລກທີ ແລະ ວັນທີ, ເດືອນ, ປີ ຂອງຄະດີ;
4) ຊື່ ແລະ ນາມສະກຸນ ຂອງຄະນະສານ;

5) ຊື່ ແລະ ນາມສະກຸນ ຂອງຫົວໜ້າ ຫຼື ຜູ່ຕາງໜ້າອົງການໄອຍະການ ແລະ ຈ່າສານ;

6) ຊື່ ແລະ ນາມສະກຸນ ຂອງຈໍາເລີຍ, ຜູ່ຖືກເສັຍຫາຍ, ໂຈດທາງແພ່ງ, ຜູ່ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນ;

7) ຂໍ້ກ່າວຫາ; ວັນທີ, ເດືອນ, ປີ ຖືກກັກຕົວ ຫຼື ຈັບຕົວ, ຖືກກັກຂັງ; ສະຖານທີ່ ກັກຂັງ; ວັນທີ, ເດືອນ, ປີປ່ອຍຕົວພາງ;

8) ການແຈ້ງສິດ ແລະ ພັນທະ ໃຫ້ຜູ່ເຂົ້າຮ່ວມ;

9) ຄໍາຖາມ ແລະ ຄໍາຕອບຂອງຜູ່ເຂົ້າຮ່ວມ, ຖ້າມີການຖ່າຍພາບ ຫຼື ບັນທຶກສຽງກໍຕ້ອງບອກແຈ້ງໃນບົດບັນທຶກ;

10) ພາກຕັດສິນຂອງສານ;

11) ການແຈ້ງສິດຂໍອຸທອນ ຫຼື ສະເໜີຄັດຄ້ານຄໍາຕັດສິນ;

12) ເວລາສິ້ນສຸດປະຊຸມສານ.

ຫົວໜ້າ ຫຼື ຜູ່ຕາງໜ້າອົງການໄອຍະການ, ຈໍາເລີຍ, ຜູ່ຖືກເສັຍຫາຍ, ໂຈດທາງແພ່ງ, ຜູ່ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນມີສິດອ່ານບົດບັນທຶກປະຊຸມສານ ແລະ ມີສິດສະເໜີປັບປຸງ ຫຼື ເພີ່ມເຕີມ ກ່ອນລົງລາຍເຊັນ ແລະ/ຫຼື ແປະໂປ້ມື.

ໃນກໍລະນີ ຜູ່ໃດຜູ່ໜຶ່ງຫາກບໍ່ລົງລາຍເຊັນ ແລະ/ຫຼື ແປະໂປ້ມື ຈ່າສານຕ້ອງບັນທຶກໄວ້. ປະທານ ແລະ ຄະນະສານຕ້ອງກວດເບິ່ງປຶ້ມປະຊຸມສານແລ້ວເຊັນບົດບັນທຶກປະຊຸມສານຮ່ວມກັບຈ່າສານ.

ບົດບັນທຶກປະຊຸມສານ ຕ້ອງສໍາເນົາໄວ້ໃນສໍານວນຄະດີທີ່ກ່ຽວຂ້ອງ.

ຕົວຢ່າງ: ແບບພິມບົດບັນທຶກປະຊຸມສານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ ນະຄອນຫຼວງວຽງຈັນ

ຄະນະສານອາຍາ ເລກທີ ........../ຂຕ.ອ

ຂັ້ນຕົ້ນ ລົງວັນທີ ..........................

## ບົດບັນທຶກປະຊຸມສານ

ຄະນະສານອາຍາ ຂອງສານປະຊາຊົນ ນະຄອນຫຼວງວຽງຈັນ ປະກອບດ້ວຍ:

ທ່ານ ........................................... ປະທານ

ທ່ານ ........................................... ຄະນະ

ທ່ານ ........................................... ຄະນະ

ນັ່ງພ້ອມດ້ວຍ ທ່ານ ........................................... ຈ່າສານ

ຕໍ່ໜ້າ ທ່ານ .............ຜູ່ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນນະຄອນ ຫຼວງວຽງຈັນ

ໄດ້ເປີດປະຊຸມສານຂຶ້ນ ໃນວັນທີ .......................... ເວລາ ....... ໂມງ ......... ນາທີ, ຢູ່ທີ່ຫ້ອງປະຊຸມສານຂອງ ສານປະຊາຊົນ ນະຄອນຫຼວງວຽງຈັນ ເພື່ອພິຈາລະນາຄະດີອາຍາ ເລກທີ ......../ຂຕ.ອ ລົງວັນທີ ...........................

**ລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ ....................... ໂຈດ.

ທ້າວ/ນາງ ..............................................................................ໂຈດທາງແພ່ງ.

ທ້າວ/ນາງ .............................................................................. ຈຳເລີຍ.

**ຖືກຫາວ່າ:** ........................................

**ວັນທີຖືກກັກຕົວ:** ........................................

**ສະຖານທີ່ຖືກກັກຕົວ: ຄ້າຍຄຸມຂັງ** ........................................

**ວັນທີປ່ອຍຕົວພາງ:** ........................................

ທ້າວ/ນາງ.......................(ໂຈດທາງແພ່ງ/ຈຳເລີຍ)ໄດ້ໃຫ້ການວ່າ: ...................

ຜູ່ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ ໄດ້ຖະແຫຼງວ່າ: ......................................................................................................

**ດ້ວຍເຫດນີ້**

ຄະນະສານອາຍາຂອງສານປະຊາຊົນນະຄອນຫຼວງວຽງຈັນ ຈຶ່ງໄດ້ຕັດສິນຄະດີ ເລື່ອງນີ້ຕໍ່ໜ້າປະຊາຊົນໃນສະຖານອາຍາເປັນຂັ້ນຕົ້ນ ໂດຍຊ້ອງໜ້າຜູ່ຕາງໜ້າຫົວໜ້າອົງ ການໄອຍະການປະຊາຊົນນະຄອນຫຼວງວຽງຈັນ, ໂຈດທາງແພ່ງ ແລະ ຈຳເລີຍ

ບອກວ່າ:

..........................................................................................................................

..........................................................................................................................

..........................................................................................................................

ໄດ້ແຈ້ງໃຫ້ ຜູ່ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນຊາບແລ້ວ ຖ້າບໍ່ພໍໃຈຕໍ່ຄຳຕັດສິນສະບັບນີ້ ມີສິດສະເໜີຄັດຄ້ານໄດ້ພາຍໃນກຳນົດຊາວວັນນັບແຕ່ວັນນີ້ເປັນຕົ້ນໄປ

ໄດ້ແຈ້ງໃຫ້ ໂຈດທາງແພ່ງ ແລະ ຈຳເລີຍຊາບແລ້ວ ຖ້າບໍ່ພໍໃຈຕໍ່ຄຳຕັດສິນສະບັບນີ້ ມີສິດຂໍອຸທອນໄດ້ພາຍໃນກຳນົດຊາວວັນນັບແຕ່ວັນນີ້ເປັນຕົ້ນໄປ.

**ຄະນະສານ,** **ໄອຍະການ,**

**ຈ່າສານ**

1.......................................

2........................................

3.......................................

**ໂຈດທາງແພ່ງ** **ຈຳເລີຍ**

....................................... .......................................

.

5. **ການພິຈາລະນາຄະດີໃນຫ້ອງປະຊຸມລັບ ແລະ ການອ່ານຄຳຕັດສິນ**

ໃນການພິຈາລະນາຄະດີຢູ່ໃນຫ້ອງປະຊຸມລັບນັ້ນ ຄະນະສານຕ້ອງເຮັດຢ່າງລະອຽດ, ຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສຢູ່ໃນຫ້ອງປະຊຸມລັບນັ້ນ ຫ້າມບຸກຄົນທີ່ບໍ່ມີສ່ວນກ່ຽວຂ້ອງເຂົ້າໄປເດັດຂາດ ໝາຍຄວາມວ່າມີແຕ່ບັນດາຄະນະສານສາມທ່ານເທົ່ານັ້ນ ຈາກນັ້ນປະທານຄະນະສານຕ້ອງເອົາຜົນຂອງການໄຕ່ສວນຕົວຈິງຢູ່ທີ່ຫ້ອງປະຊຸມສານເປັນຫຼັກ ເພື່ອໃຫ້ຄຳຕັດສິນຖືກຕ້ອງ ແລະ ຍຸຕິທຳ, ການລົງຄຳຊີ້ຂາດຢູ່ໃນຫ້ອງປະຊຸມລັບນັ້ນ ຕ້ອງຖືເອົາຕາມສຽງສ່ວນຫຼາຍ ໂດຍໃຫ້ຄະນະສານ ຜູ້ທີ່ມີຄຸນວຸດທິຫຼຸດໝູ່ເປັນຜູ້ອອກຄຳຄິດເຫັນກ່ອນ ສ່ວນປະທານຄະນະສານນັ້ນເປັນຜູ້ອອກຄຳເຫັນເປັນຜູ້ສຸດທ້າຍ ໝາຍຄວາມວ່າ ນັບແຕ່ຊ້າຍໄປຫາຂວາ ຜູ້ນັ່ງເບື້ອງຊ້າຍອອກຄຳຄິດເຫັນກ່ອນ, ຜູ້ຢູ່ເບື້ອງຂວາອອກຄຳເຫັນເປັນຜູ້ທີສອງ, ສ່ວນປະທານຄະນະສານອອກຄຳເຫັນເປັນຜູ້ສຸດທ້າຍ, ຖ້າເຫັນວ່າ ມີຜູ້ບໍ່ເຫັນດີຕາມສຽງສ່ວນຫຼາຍນັ້ນ, ກໍມີສິດສະແດງຄຳເຫັນຂອງຕົນໄວ້ເປັນລາຍລັກອັກສອນ ເພື່ອເອົາເຂົ້າໄວ້ໃນສຳນວນຄະດີ ຫຼື ວ່າຈົດໄວ້ໃນປື້ມຂື້ນປະຊຸມສານຂອງຕົນເອງວ່າໄດ້ຕັດສິນໃນຄັ້ງວັນທີ, ເດືອນ, ປີໃດ ຄະດີ ເລກທີເທົ່າໃດ, ລົງວັນທີ, ເດືອນ, ປີໃດ, ເພື່ອໃຫ້ສານຂັ້ນເທິງພິຈາລະນາ, ເວລານັ້ນບັນດາຄະນະສານ ຕ້ອງໄດ້ລົງລາຍເຊັນໃສ່ຮ່າງຄຳຕັດສິນໄວ້ຢູ່ທີ່ຫ້ອງປະຊຸມລັບ.

ການພິຈາລະນາການກະທຳຜິດຂອງຈຳເລີຍ ແມ່ນການພິຈາລະນາເຖິງຂໍ້ມູນຫຼັກຖານທີ່ກ່ຽວພັນກັບຕົວຈຳເລີຍນັ້ນ ວ່າມີຄວາມໜັກແໜ້ນເທົ່າໃດ, ຄົບອົງປະກອບຂອງການກະທຳຜິດ ຫຼື ບໍ່ ແລະ ພິຈາລະນາເຖິງຫຼັກຖານທີ່ເປັນການຜູກມັດຕົວຈຳເລີຍ ແລະ ອັນໃດທີ່ເປັນຫຼັກຖານແກ້ມັດຕົວຈຳເລີຍ, ການນຳໃຊ້ວິທີການສືບສວນ-ສອບສວນ ແລະ ການນຳໃຊ້ມາດຕະການຕ່າງໆຕາມຂັ້ນຕອນຂອງກົດໝາຍ ລວມທັງພິຈາລະນາວ່າ ການກະທຳຜິດນັ້ນເປັນກຸ່ມກ້ອນ ຫຼື ມີການຈັດຕັ້ງສ້າງແຜນການໃນແຕ່ລະໄລຍະຂັ້ນຕອນຂອງການກະທຳຜິດ ຫຼື ກະທຳຜິດຄົນດຽວ ຫຼື ໃຊ້ເຄື່ອງມືວັດຖຸອຸປະກອນ ຕ່າງໆເຂົ້າໃນການກະທຳຜິດ ແລະ ພິຈາລະນາວ່າ ການກະທຳຜິດນັ້ນເປັນອາຈິນ ຫຼື ເປັນການກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນການເມີນເສີຍ ນອກນັ້ນຍັງໄດ້ພິຈາລະນາວ່າການກະທຳຜິດຂອງຈຳເລີຍນັ້ນແມ່ນດ້ວຍຄວາມຈຳເປັນ ຫຼື ຖືກບັງຄັບນາບຂູ່ ຫຼື ການກະທຳຜິດນັ້ນແມ່ນຍ້ອນນິດໄສໃຈຄໍ, ບຸກຄະລິກກະພາບຂອງຕົວຈຳເລີຍເອງ ຕ້ອງທຳການພິສູດ ແລະ ການຢັ້ງຢືນຄືນໃໝ່.

ການພິຈາລະນາ ການວາງໂທດໃສ່ຈຳເລີຍ ແມ່ນການພິຈາລະນາຜົນຂອງການໄຕ່ສວນໃນທີ່ປະຊຸມສານວ່າການກະທຳຜິດຂອງຈຳເລີຍນັ້ນມີຈິງ ຫຼື ບໍ່, ມັນຖືກຕ້ອງສອດຄ່ອງຕາມມາດຕາຂອງກົດໝາຍທີ່ຫົວໜ້າອົງການໄອຍະການຖະແຫຼງ ແລະ ສັ່ງຟ້ອງຂຶ້ນມາໃຫ້ສານ ຫຼື ບໍ່ ແລະ ການກະທຳຜິດຂອງຈຳເລີຍນັ້ນມີສາເຫດທີ່ພາໃຫ້ເພີ່ມ ຫຼື ຜ່ອນໂທດ ຫຼື

ເປັນສາເຫດພາໃຫ້ພົ້ນຈາກຄວາມຮັບຜິດຊອບທາງອາຍາ ຊຶ່ງສານຈະເປັນຜູ້ວາງໂທດໃສ່ຈຳເລີຍ ໃນຂອບເຂດຂອງມາດຕາກົດໝາຍທີ່ໄດ້ກຳນົດໂທດໃສ່ການກະທຳຜິດ ນອກນັ້ນສານຍັງໄດ້ອີງໃສ່ລັກສະນະບຸກຄະລິກກະພາບຂອງຜູ້ກະທຳຜິດ ແລະ ລະດັບຄວາມເປັນອັນຕະລາຍຂອງການກະທຳຜິດນັ້ນ ຊຶ່ງຂຶ້ນກັບຄວາມເສັຍຫາຍຕົວຈິງທາງດ້ານຊີວິດ, ສຸຂະພາບ,ກຽດສັກສີ ແລະ ຊັບສິນທີ່ເນື່ອງມາຈາກການກະທຳຜິດໂດຍເຈດຕະນາ ຫຼື ດ້ວຍຄວາມບໍ່ລະມັດລະວັງ ໃນການພິຈາລະນາການວາງໂທດໃສ່ການກະກຽມໃຫ້ແກ່ການກະທຳຜິດ ແລະ ຄວາມພະຍາຍາມກໍ່ການກະທຳຜິດ ແລະ ສາເຫດທີ່ພາໃຫ້ການກະທຳຜິດບໍ່ສຳເລັດການສົມຮູ້ຮ່ວມຄິດ ແລະ ການຍຸຍົງການກະທຳຜິດນັ້ນ ສານຈະວາງໂທດຕ່ຳກວ່າກົດໝາຍກຳນົດໄວ້ກໍໄດ້.

### 5.1. ຄຳຕັດສິນ

ສານຕັດສິນຄະດີອາຍາໃນນາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຄຳຕັດສິນຄະດີອາຍາຂອງສານຂັ້ນຕົ້ນປະກອບດວ້ຍ :

1) ພາກສະເໜີ;
2) ພາກເນື້ອຄະດີ;
3) ພາກວິນິດໄສ;
4) ພາກຕັດສິນ.

**ຕົວຢ່າງ : ແບບພິມຄຳຕັດສິນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

| | |
|---|---|
| ສານປະຊາຊົນ ນະຄອນຫຼວງວຽງຈັນ | ເລກທີ ........../ຂຕ.ອ |
| ຄະນະສານອາຍາ ຂັ້ນຕົ້ນ | ລົງວັນທີ ......................... |

**ຄຳຕັດສິນ**

ຄະນະສານອາຍາ ຂອງສານປະຊາຊົນ ນະຄອນຫຼວງວຽງຈັນ ປະກອບດ້ວຍ:

ທ່ານ ............................................ ປະທານ

ທ່ານ ............................................ ຄະນະ

ທ່ານ ............................................ ຄະນະ

ນັ່ງພ້ອມດ້ວຍ ທ່ານ ............................................ ຈ່າສານ

ໂດຍຊ້ອງໜ້າ ທ່ານ ............................................ ໄອຍະການປະຊາຊົນ

ນະຄອນຫຼວງວຽງຈັນ

ໄດ້ເປີດປະຊຸມສານຂຶ້ນໃນວັນທີ ......................... ເວລາ ...... ໂມງ ........ ນາທີ, ຢູ່ທີ່ຫ້ອງປະຊຸມສານຂອງສານປະຊາຊົນນະຄອນຫຼວງວຽງຈັນ ເພື່ອພິຈາລະນາຄະດີອາຍາ ສະບັບເລກທີ ......../ຂຕ.ອ ລົງວັນທີ ..........................

**ລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ ນະຄອນຫຼວງວຽງຈັນ ........................ໂຈດ.

ທ້າວ/ນາງ .......................................................................ໂຈດທາງແພ່ງ.

ທ້າວ/ນາງ ............................................................................ ຈຳເລີຍ.

**ຖືກຫາວ່າ:** .......................................

**ວັນທີຖືກກັກຕົວ:** .......................................

**ສະຖານທີ່ຖືກກັກຕົວ: ຄ້າຍຄຸມຂັງ** .......................................

**ວັນທີປ່ອຍຕົວພາງ:** .......................................

**ສານ:**

ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ໂດຍອີງຕາມໜ້າທີ່ ແລະ ສິດອຳນາດຂອງສານຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງປີ 2009;

ໄດ້ແຈ້ງຊື່ ແລະ ນາມສະກຸນ ຂອງຄະນະສານ, ຈ່າສານ, ໄອຍະການປະຊາຊົນ ແລະ ຄະດີທີ່ນຳມາພິຈາລະນາໃຫ້ຈຳເລີຍ ແລະ ຜູ່ປົກປ້ອງຈຳເລີຍ ຊາບແລ້ວ;

ໄດ້ແຈ້ງ ສິດໃນການຄ້ານຕົວ ຂອງຄະນະສານ ຫຼື ບຸກຄົນໃດໜຶ່ງໃນຄະນະສານ, ຈ່າສານ ແລະ ໄອຍະການປະຊາຊົນ ໃຫ້ຈຳເລີຍ ແລະ ຜູ່ປົກປ້ອງຈຳເລີຍ ຊາບແລ້ວ;

ໄດ້ແຈ້ງ ສິດໃນການຕໍ່ສູ້ຄະດີ ໃຫ້ຈຳເລີຍ ແລະ ຜູ່ປົກປ້ອງຈຳເລີຍ ຊາບແລ້ວ;

ໄດ້ແຈ້ງ ຄຳສັ່ງຟ້ອງ ແລະ ຂໍ້ກ່າວຫາຂອງຫົວໜ້າອົງການໄອຍະການປະຊາຊົນໃຫ້ຈຳເລີຍ ຊາບແລ້ວ;

ໄດ້ຟັງຄຳໃຫ້ການຂອງຈຳເລີຍ ແລະ ຄຳເຫັນຜູ່ປົກປ້ອງຂອງຈຳເລີຍ ຊາບແລ້ວ;

ໄດ້ຟັງຄຳຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນນະຄອນວຽງຈັນແລ້ວ;

ໄດ້ຟັງຄຳເຫັນເປັນເທື່ອສຸດທ້າຍຂອງຈຳເລີຍ ແລ້ວ.

## ເນື້ອຄະດີ:

.....................................................................................................................

.....................................................................................................................

.....................................................................................................................

## ວິນິດໄສ:

ຜ່ານການຄົ້ນຄວ້າ ບັນດາເອກະສານ, ຂໍ້ມູນ ແລະ ຫຼັກຖານຕ່າງໆ ທີ່ມີຢູ່ໃນສຳນວນຄະດີພ້ອມທັງພິຈາລະນາ ຜົນຂອງການໄຕ່ສວນ ໃນທີ່ປະຊຸມສານ ຢ່າງລະອຽດຖີ່ຖ້ວນແລ້ວ;

ເຫັນວ່າ:

..............................................................................................................

.....................................................................................................................

.....................................................................................................................

ເຫັນວ່າ: ທ້າວ/ນາງ ............................ ຈຳເລີຍ ໄດ້ກະທຳຜິດຕໍ່ກົດໝາຍອາຍາແທ້, ເຫັນຕາມມາດຕາ 28, 29, 30, 31, 32 ແລະ ມາດຕາ 34 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານສະບັບປັບປຸງປີ 2007. ດັ່ງນັ້ນ, ສານຈຶ່ງເຫັນຄວນໃຫ້ຈຳເລີຍເສັຍຄ່າເອກະສານ ແລະ ຄ່າສຳເນົາເອກະສານ ເປັນເງິນຈຳນວນ .............. ກີບ.

ເຫັນຕາມ ມາດຕາ.......... ຂອງກົດໝາຍວ່າດ້ວຍ........................................;

ເຫັນຕາມ ມາດຕາ........................ ຂອງກົດໝາຍອາຍາ ສະບັບປັບປຸງ ປີ 2005;

ເຫັນຕາມ ມາດຕາ 28, 29, 30, 31, 32 ແລະ ມາດຕາ 34 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງ ປີ 2007;

ເຫັນຕາມ ມາດຕາ .......................................................................... 207, 212, 214 ແລະ ມາດຕາ 215ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

## ດ້ວຍເຫດນີ້

ຄະນະສານອາຍາຂອງສານປະຊາຊົນນະຄອນຫຼວງວຽງຈັນ, ຈຶ່ງໄດ້ຕັດສິນຄະດີນີ້ຕໍ່ໜ້າປະຊາຊົນເປັນຂັ້ນຕົ້ນ ໂດຍຊ້ອງໜ້າໂຈດ, ............................ ແລະ ຈຳເລີຍ.

ບອກວ່າ: ທ້າວ/ນາງ....................... (ຈຳເລີຍ) ມີຄວາມຜິດໃນສະຖານ .............

ລົງໂທດຕັດອິດສະລະພາບ ທ້າວ/ນາງ ........................ (ຈຳເລີຍ) ................... ແລະ ປັບໃໝ ເປັນເງິນ ຈຳນວນ ................................... ກີບ

ຮີບ..........................................................................................................
..........................................................................................................................

ໃຫ້ຈຳເລີຍເສັຍຄ່າເອກະສານ ແລະ ຄ່າສຳເນົາເອກະສານ ເປັນເງິນຈຳນວນ ................ ກີບ

ໄດ້ບອກໂຈດ, ຈຳເລີຍ ແລະ ............................ ຊາບແລ້ວວ່າ ຖ້າຫາກຝ່າຍໃດ ບໍ່ພໍໃຈຕໍ່ຄຳຕັດສິນ ສະບັບນີ້ ມີສິດສະເໜີຄັດຄ້ານ ຫຼື ຂໍອຸທອນໄດ້ ພາຍໃນກຳນົດ ຊາວ ວັນ ນັບແຕ່ວັນນີ້ເປັນຕົ້ນໄປ.

**ປະທານຄະນະສານ** **ຈ່າສານ**

**5.2. ການອ່ານຄຳຕັດສິນຂອງສານ**

ພາຍຫຼັງໄດ້ພິຈາລະນາຕົກລົງກັນຢູ່ໃນຫ້ອງປະຊຸມລັບແລ້ວ ປະທານຄະນະສານຕ້ອງ ນຳເອົາຄຳຕັດສິນອອກມາອ່ານຢູ່ໃນທີ່ຫ້ອງປະຊຸມສານຢ່າງເປີດເຜີຍ.

**ຕົວຢ່າງ:** ຂ້າພະເຈົ້າເປີດປະຊຸມສານຕໍ່ເພື່ອອ່ານຄຳຕັດສິນ, ສະເໜີໃຫ້ຈຳເລີຍ, ໂຈດ ທາງແພ່ງ ຂຶ້ນມາຢືນຢູ່ຕໍ່ໜ້າສານ, ທຸກຄົນຢືນຂຶ້ນທັງໝົດເພື່ອຟັງຄຳຕັດສິນ, ຈາກນັ້ນປະ ທານຄະນະສານອ່ານຄຳຕັດສິນຕ້ອງອ່ານດັງເວົ້າແຈ້ງແບບເປີດເຜີຍ. ພາຍຫຼັງອ່ານຄຳຕັດ ສິນສິ້ນສຸດແລ້ວ, ປະທານຄະນະສານ ຕ້ອງແຈງສິດໃນການຂໍອຸທອນຄຳຕັດສິນຂອງສານ; ຖ້າມີຜູ່ບໍ່ຮູ້ພາສາລາວຈ້ອງໄດ້ຜ່ານຜູ່ແປພາສາ ການແປຕ້ອງແປຄຳຕັດສິນທັງໝົດໃຫ້ຈຳ ເລີຍຟັງ.

ປະທານຄະນະສານຕ້ອງອະທິບາຍກ່ຽວກັບການຂໍອຸທອນ, ຖ້າຈຳເລີຍບໍ່ພໍໃຈຕໍ່ຄຳຕັດ ສິນດັ່ງກ່າວແມ່ນມີສິດຂໍອຸທອນໄດ້ພາຍໃນກຳນົດຊາວວັນ ຖ້າຢ້ານກາຍກໍຈອງໄວ້ກ່ອນລາຍ ລະອຽດນັ້ນ ແມ່ນສະເໜີໃຫ້ພົວພັນກັບຈ່າສານຕື່ມ.

ປະທານຄະນະສານປະກາດວ່າ ຜ່ານການອ່ານຄຳຕັດສິນເຫັນວ່າສິ້ນສຸດ ຂ້າພະເຈົ້າ ໃນນາມປະທານຄະນະສານອາຍາ ປິດປະຊຸມສານແລ້ວຢ່າງອອກຫ້ອງປະຊຸມສານໄປ.

**5.3. ການຕັດສິນຊ້ອງໜ້າ, ຖືວ່າຊ້ອງໜ້າ ແລະ ການຕັດສິນລັບຫຼັງ**

ການຕັດສິນຊ້ອງໜ້າແມ່ນການຕັດສິນຂອງສານ ທີ່ໄດ້ອອກໝາຍຮຽກໂຈດ ແລະ ຈຳ ເລີຍ ໃຫ້ເຂົ້າມາຮ່ວມໃນເວລາພິຈາລະນາຄະດີຢູ່ສານ ຂໍ້ຍົກເວັ້ນທີ່ໂຈດ ແລະ ຈຳເລີຍບໍ່ເຂົ້າ ຮ່ວມໃນການພິຈາລະນາຢູ່ສານນັ້ນ ມີແຕ່ການພິຈາລະນາຄະດີພິພາກສາຢູ່ສານຂັ້ນລົບລ້າງ ເທົ່ານັ້ນ.

ການຕັດສິນທີ່ຖືວ່າເປັນການຕັດສິນຊ້ອງໜ້ານັ້ນ ແມ່ນການຕັດສິນຂອງສານທີ່ຈຳເລີຍ ຫຼື ໂຈດທາງແພ່ງໄດ້ຮັບໝາຍຮຽກໃຫ້ເຂົ້າຮ່ວມໃນທີ່ປະຊຸມສານແລ້ວ ແຕ່ບໍ່ໄດ້ເຂົ້າມາຮ່ວມຕາມການໝາຍຮຽກໂດຍບໍ່ມີເຫດຜົນ ຫຼື ໃນກໍລະນີທີ່ການກະທຳຜິດມີລັກສະນະເບົາ ຊຶ່ງມີຄຳເຫັນຂອງຈຳເລີຍ ຫຼື ໂຈດທາງແພ່ງສະເໜີເປັນລາຍລັກອັກສອນມາໃຫ້ສານວ່າ ສະເໜີໃຫ້ສານພິຈາລະນາຕັດສິນໄປເລີຍໂດຍທີ່ຜູ້ກ່ຽວບໍ່ໄດ້ເຂົ້າຮ່ວມນຳ ໃນກໍລະນີນີ້ຜູ້ກ່ຽວແມ່ນບໍ່ມີສິດຈະສະເໜີຄັດຄ້ານຄຳຕັດສິນຂອງສານ ແຕ່ມີສິດຂໍອຸທອນເທົ່ານັ້ນ.

ການຕັດສິນລັບຫຼັງນັ້ນ ແມ່ນການຕັດສິນຂອງສານທີ່ເຫັນວ່າ ຈຳເລີຍ, ໂຈດທາງແພ່ງ, ຜູ້ຖືກເສຍຫາຍ ຫຼື ຜູ້ຮັບຜິດຊອບທາງແພ່ງ ບໍ່ໄດ້ເຂົ້າຮ່ວມໃນທີ່ປະຊຸມສານ ຊຶ່ງໄດ້ອອກໝາຍຮຽກໄປແລ້ວ ມີການຢັ້ງຢືນຈາກນາຍບ້ານແລ້ວວ່າໄດ້ຮັບໝາຍຮຽກແລ້ວ ແຕ່ນາຍບ້ານບໍ່ໄດ້ເອົາໄປໃຫ້ຜູ້ກ່ຽວ ນາຍບ້ານລືມ ຫຼື ວ່າຜູ້ກ່ຽວບໍ່ໄດ້ຮັບຍ້ອນມີສາເຫດໃດໜຶ່ງເຊັ່ນ ໝາຍຮຽກບໍ່ເຖິງມືຂອງຜູ້ກ່ຽວໃນກໍລະນີດັ່ງກ່າວຈຳເລີຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ຜູ້ຖືກເສຍຫາຍ, ມີສິດຄັດຄ້ານຄຳຕັດສິນນັ້ນໄດ້ພາຍໃນ ກຳນົດ ຊາວ ວັນ ນັບແຕ່ມື້ໄດ້ຮັບຊາບຄຳຕັດສິນນັ້ນເປັນຕົ້ນໄປ, ຄະນະສານເກົ່າຕ້ອງໄດ້ຕັດສິນຄະດີນັ້ນຄືນໃໝ່ ໂດຍຊ້ອງໜ້າຜູ້ກ່ຽວ ຕາມລະບຽບການພິຈາລະນາຄະດີອາຍາຢູ່ສານຂັ້ນຕົ້ນ.

### 5.4. ປະເພດຄຳຕັດສິນຂອງສານຂັ້ນຕົ້ນ

ປະເພດຄຳຕັດສິນຂອງສານຂັ້ນຕົ້ນ ມີດັ່ງນີ້:

1) ຄຳຕັດສິນລົງໂທດ

– ຕັດອິດສະລະພາບ, ປັບໃໝ, ການຮິບຊັບ ຫຼື ວັດຖຸສິ່ງຂອງ ແລະ ໂທດອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ໂທດອື່ນໆທີ່ໄດ້ມີການພົວພັນກັບໂທດ.

– ພາກໂທດໄວ້ທັງໝົດ ຫຼື ພາກໂທດໄວ້ບາງສ່ວນ.

2) ຄຳຕັດສິນໃຫ້ພົ້ນຂໍ້ກ່າວຫາ.

– ໃນກໍລະນີທີ່ຈຳເລີຍຖືກສານຕັດສິນລົງໂທດຕາມທີ່ໄດ້ກຳນົດໄວ້ໃນຂໍ້ 1 ມາດຕາ 208 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍານີ້ ແລະ ໄດ້ສ້າງຄວາມເສຍຫາຍເປັນຈຳນວນຫຼວງຫຼາຍ ຖ້າມີການຮ້ອງຂໍຄະນະສານຕ້ອງພິຈາລະນາກ່ຽວກັບການໃຊ້ແທນຄ່າເສຍຫາຍດັ່ງກ່າວ ແລະ ອາດມີການລົງຄຳເຫັນຊີ້ຂາດໃຫ້ປະຕິບັດບາງສ່ວນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

– ຕາມການປະຕິບັດຕົວຈິງແລ້ວ ຖ້າຫາກຈຳເລີຍຜູ້ນັ້ນຫາກຖືກສານຕັດສິນວ່າຜູ້ກ່ຽວບໍ່ມີຄວາມຜິດແລ້ວຖືວ່າຜູ້ກ່ຽວແມ່ນພົ້ນຂໍ້ກ່າວຫາທັງໝົດບໍ່ວ່າຈະເປັນທາງອາຍາ ຫຼື ທາງແພ່ງ.

– ໃນກໍລະນີທີ່ບໍ່ມີການຂໍອຸທອນ ຫຼື ສະເໜີຄັດຄ້ານຕໍ່ຄຳຕັດສິນຂອງສານຂັ້ນຕົ້ນນັ້ນແລ້ວ ພາຍໃນກຳນົດຊາວວັນ ຖືວ່າຄຳຕັດສິນຂອງສານນັ້ນໃຊ້ໄດ້ຢ່າງເດັດຂາດ ແລະ ບໍ່ສາມາດຂໍອຸທອນ ຫຼື ຂໍລຶບລ້າງໄດ້ສານຕ້ອງສົ່ງສຳນວນຄະດີທັງໝົດພ້ອມດ້ວຍຄຳຕັດສິນໄປໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອທຳການຈັດຕັ້ງປະຕິບັດຕາມທີ່ໄດ້ກຳນົດໄວ້ໃນພາກທີ XI ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ແລະ ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**5.5. ການປ່ອຍຕົວຈຳເລີຍ**

ຢູ່ໃນທີ່ຫ້ອງປະຊຸມສານ ຄະນະສານອາຍາຂອງສານປະຊາຊົນຂັ້ນຕົ້ນຕ້ອງອ່ານຄຳຕັດສິນສຳເລັດແລ້ວ ແມ່ນໃຫ້ປ່ອຍຕົວຈຳເລີຍທີ່ຖືກກັກຂັງຜ່ານມານັ້ນໃນທັນໃດໃນການປະຕິບັດຕົວຈິງກ່ອນຈະປ່ອຍຕົວຈຳເລີຍນັ້ນ ເຈົ້າໜ້າທີ່ຄ້າຍຄຸມຂັງຈະນຳຕົວຈຳເລີຍກັບຄືນໄປຄ້າຍຄຸມຂັງ-ດັດສ້າງ ເພື່ອສຶກສາອົບຮົມ ແລະ ປະຕິບັດຕາມລະບຽບການຂອງຄ້າຍຄຸມຂັງກ່ອນແລ້ວຈຶ່ງທຳການປ່ອຍຕົວຈຳເລີຍໄດ້.

1) ຈຳເລີຍ ຖືກຕັດສິນໃຫ້ພົ້ນຂໍ້ກ່າວຫາ.
2) ຈຳເລີຍ ຖືກຕັດສິນ ລົງໂທດດັດສ້າງໂດຍບໍ່ຕັດອິດສະລະພາບ.
3) ຈຳເລີຍ ຖືກຕັດສິນ ພາກໂທດທັງໝົດ.
4) ຈຳເລີຍຖືກຕັດສິນລົງໂທດຕັດອິດສະລະພາບ ເທົ່າທີ່ຜູ່ກ່ຽວຖືກກັກຂັງຜ່ານມາ.

ຈາກນັ້ນຈ່າສານ ຕ້ອງນຳເອົາຄຳຕັດສິນທີ່ປະທານຄະນະສານໄດ້ຮ່າງ ແລະ ຊຽນໄວ້ແລ້ວນັ້ນມາພິມພາຍໃນກຳນົດ ສິບວັນໃຫ້ແລ້ວ ພາຍຫຼັງພິມຄຳຕັດສິນ ແລະ ໃຫ້ປະທານຄະນະສານກວດກາສຳເລັດ ແລະ ລົງລາຍເຊັນປະທັບຕາເປັນທີ່ສຳເລັດແລ້ວ ຈ່າສານຕ້ອງໄດ້ມອບຄຳຕັດສິນດັ່ງກ່າວຂອງສານໃຫ້ຈຳເລີຍ, ອົງການໄອຍະການ, ອົງການສືບສວນ-ສອບສວນໃນຂັ້ນດຽວກັນ, ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນຂອງຈຳເລີຍ.

ກໍລະນີທີ່ການຕັດສິນລັບຫຼັງຈຳເລີຍນັ້ນ ຈ່າສານຕ້ອງສົ່ງຄຳຕັດສິນຂອງສານໃຫ້ອົງການປົກຄອງບ້ານບ່ອນຢູ່ຂອງຈຳເລີຍຢູ່ຄັ້ງສຸດທ້າຍເພື່ອແຈ້ງໃຫ້ຜູ່ກ່ຽວຊາບ, ຜູ່ຖືກເສັຍຫາຍ, ໂຈດທາງແພ່ງ, ຜູ່ຮັບຜິດຊອບທາງແພ່ງ, ບຸກຄົນອື່ນທີ່ມີສິດ ແລະ ຜົນປະໂຫຍດກ່ຽວກັບຄະດີ ຫຼື ຕາງໜ້າຂອງພວກກ່ຽວມີສິດສະເໜີຕໍ່ສານຂໍອັດສຳເນົາຄຳຕັດສິນຂອງສານໃຫ້ພວກກ່ຽວ.

## ສັງລວມຄະດີອາຍາທີ່ມີຢູ່ສານຂັ້ນຕົ້ນເຂດ ແລະ ແຂວງ ປະຈໍາ ປີ 2011

| ລ/ດ | ຂັ້ນແກ້ໄຂຄະດີ | ຄ້າງມາ | ເຂົ້າໃໝ່ | ລວມ | ແກ້ໄຂ | ຍັງຄ້າງ | ຄະດີທີ່ເກີດຂຶ້ນຫຼາຍກວ່າໝູ່ໃນປີ |
|---|---|---|---|---|---|---|---|
| 1 | ຂັ້ນຕົ້ນເຂດ | 122 | 1118 | 1240 | 1085 | 155 | ລັກຊັບພົນລະເມືອງ 436 ເລື່ອງ, ທໍາມິດສະຈານ 132 ເລື່ອງ |
| 2 | ຂັ້ນຕົ້ນແຂວງ ແລະ ສານທະຫານພາກ | 216 | 1561 | 1777 | 1547 | 230 | ຢາເສບຕິດ 543 ເລື່ອງ, ລັກຊັບພົນລະເມືອງ 213 ເລື່ອງ |
| | **ລວມ** | **338** | **2679** | **3017** | **2632** | **385** | |

## ສັງລວມຄະດີອາຍາທີ່ມີຢູ່ສານຂັ້ນຕົ້ນເຂດ ແລະ ແຂວງ ປະຈໍາ ປີ 2012

| ລ/ດ | ຂັ້ນແກ້ໄຂຄະດີ | ຄ້າງມາ | ເຂົ້າໃໝ່ | ລວມ | ແກ້ໄຂ | ຍັງຄ້າງ | ຄະດີທີ່ເກີດຂຶ້ນຫຼາຍກວ່າໝູ່ໃນປີ |
|---|---|---|---|---|---|---|---|
| 1 | ຂັ້ນຕົ້ນເຂດ | 155 | 1187 | 1342 | 1194 | 148 | ລັກຊັບພົນລະເມືອງ 481 ເລື່ອງ, ທໍາຮ້າຍຮ່າງກາຍ 119 ເລື່ອງ |
| 2 | ຂັ້ນຕົ້ນແຂວງ ແລະ ສານທະຫານພາກ | 230 | 1932 | 2162 | 1819 | 343 | ຢາເສບຕິດ 757 ເລື່ອງ, ລັກຊັບພົນລະເມືອງ 263 ເລື່ອງ |
| | **ລວມ** | **385** | **3119** | **3504** | **3013** | **491** | |

**ໝາຍເຫດ: ຖ້າທຽບປີ 2012 ໃສ່ປີ 2011 ເຫັນວ່າຄະດີເພີ່ມຂຶ້ນທັງໝົດ 487 ເລື່ອງ ເທົ່າກັບ 16,1%**

# ພາກທີ VI
# ການພິຈາລະນາຄະດີອາຍາເປັນຂັ້ນອຸທອນ

## 1. ຄວາມໝາຍຂອງການພິຈາລະນາຄະດີອາຍາເປັນຂັ້ນອຸທອນ

ກ່ອນທີ່ຈະໄປອະທິບາຍຄວາມໝາຍ ຂອງການພິຈາລະນາຄະດີອາຍາ ເປັນຂັ້ນອຸທອນນັ້ນ ຈຳເປັນຈະຕ້ອງໄດ້ເຂົ້າໃຈລະບົບຂອງສານ ໂດຍສະເພາະແມ່ນສານທີ່ມີສິດອຳນາດໃນການພິຈາລະນາຄະດີອາຍາເປັນຂັ້ນອຸທອນເສັຍກ່ອນ.

ສານຂັ້ນອຸທອນແມ່ນລະບົບໜຶ່ງຂອງສານປະຊາຊົນທີ່ສ້າງຕັ້ງຂຶ້ນຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້ຊຶ່ງເອີ້ນວ່າ ສານປະຊາຊົນພາກ ມີສິດອຳນາດພິຈາລະນາຄະດີອາຍາເປັນຂັ້ນອຸທອນ ໃນກໍລະນີທີ່ສານປະຊາຊົນແຂວງ ຫຼື ສານປະຊາຊົນນະຄອນຫຼວງພິຈາລະນາຕັດສິນເປັນຂັ້ນຕົ້ນແລ້ວ (ມ 22 ກປຊ) ແລະ ຈັດຕັ້ງຂຶ້ນຢູ່ສານປະຊາຊົນແຂວງ ແລະ ນະຄອນມີສິດພິຈາລະນາຄະດີອາຍາເປັນຂັ້ນອຸທອນ ໃນກໍລະນີທີ່ສານປະຊາຊົນເຂດໄດ້ພິຈາລະນາຕັດສິນເປັນຂັ້ນຕົ້ນມາແລ້ວ (ມ 24 ກປຊ).

ໂດຍຫຼັກການທົ່ວໄປຂອງການພິຈາລະນາຄະດີອາຍາແລ້ວ ຄະດີອາຍາໄດ້ສິ້ນສຸດເມື່ອມີຄຳຕັດສິນຂອງສານຂັ້ນຕົ້ນ ແລະ ຈະຕ້ອງນຳໄປຈັດຕັ້ງປະຕິບັດ ແຕ່ການຂໍອຸທອນຈຶ່ງເປັນກໍລະນີທີ່ຄູ່ຄວາມບໍ່ພໍໃຈຕໍ່ຄຳຕັດສິນຂອງສານດັ່ງກ່າວ. ການຂໍອຸທອນໃນຄວາມໝາຍທາງວິຊາການຈຶ່ງແມ່ນການຂໍໃຫ້ສານຂັ້ນທີ່ສູງກວ່າໄດ້ກວດກາຄືນຄຳຕັດສິນຂອງສານຂັ້ນຕົ້ນ. ດັ່ງນັ້ນ, ການພິຈາລະນາຂອງສານຂັ້ນອຸທອນ ຈຶ່ງເປັນການພິຈາລະນາຂອງສານຂັ້ນທີສອງຖັດຈາກສານຂັ້ນຕົ້ນນັ້ນເອງ[36].

ເຖິງຢ່າງໃດກໍຕາມສານປະຊາຊົນແຂວງ, ສານປະຊາຊົນນະຄອນຫຼວງ ຫຼື ສານປະຊາຊົນພາກ ຈະຮັບເອົາຄະດີມາພິຈາລະນາເປັນຂັ້ນອຸທອນໄດ້ກໍຕໍ່ເມື່ອມີຄຳຮ້ອງຂໍອຸທອນຂອງຄູ່ຄວາມ ຫຼື ຄຳສະເໜີຄັດຄ້ານຂອງອົງການໄອຍະການເທົ່ານັ້ນ (ມ 214 ກດຍ). ເມື່ອຫາກເຫັນວ່າການພິຈາລະນາຄະດີຂອງສານຂັ້ນຕົ້ນນັ້ນຍັງບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບຄວາມເປັນຈິງຂອງເຫດການໃນຄະດີ ຫຼື ການກຳນົດເຫດການບໍ່ສອດຄ່ອງກັບກົດໝາຍ ຫຼື ການວາງໂທດຍັງບໍ່ແທດເໝາະກັບບຸກຄະລິກກະພາບ ຫຼື ລັກສະນະຂອງການກະທຳຜິດ. ດັ່ງນັ້ນ, ຄູ່ຄວາມມີສິດຂໍອຸທອນ ຫຼື ອົງການໄອຍະການມີສິດສະເໜີຂໍຄັດຄ້ານໄດ້ທັງບັນຫາທາງດ້ານຄວາມເປັນຈິງ ແລະ ບັນຫາທາງດ້ານກົດໝາຍ.

---

[36] ຄະນິດ ນະ ນະຄອນ, ກົດໝາຍວິທີພິຈາລະນາຄວາມອາຍາ, ພິມຄັ້ງທີ 7 ສະບັບປັບປຸງໃໝ່ ແລະ ແກ້ໄຂເພີ່ມເຕີມ, ສຳນັກພິມວິຍູຊົນຈຳກັດ, ພສ. 2548, ໜ້າ 605. (ພາສາໄທ)

ບັນຫາທາງດ້ານຄວາມເປັນຈິງ ແມ່ນບັນຫາທາງດ້ານເຫດການຂອງຄະດີ ຫຼື ພຶດຕິກຳອັນໃດອັນໜຶ່ງທີ່ເກີດຂຶ້ນ ຫຼື ມີຢູ່ ຫຼື ເປັນຈິງຕາມທີ່ໄດ້ກ່າວອ້າງ ຫຼື ບໍ່, ເຊັ່ນ ໃຊ້ຄວາມຮຸນແຮງເພື່ອເອົາຊັບຂອງຜູ້ອື່ນໄປເປັນພຶດຕິກຳທີ່ເກີດຂຶ້ນຈິງ ຫຼື ບໍ່, ໃຊ້ກຳລັງເພື່ອເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບ ຫຼື ບໍ່, ຜູ້ກະທຳຜິດມີອາຍຸຮອດ 18 ປີ ຫຼື ບໍ່ ແລະ ອື່ນໆ ທັງໝົດເຫຼົ່ານີ້ ເປັນບັນຫາທາງດ້ານຄວາມເປັນຈິງ ຫຼື ບັນຫາທາງດ້ານຂໍ້ມູນຫຼັກຖານ.

ສ່ວນບັນຫາທາງດ້ານກົດໝາຍນັ້ນ ແມ່ນບັນຫາກ່ຽວກັບຄວາມໝາຍຂອງກົດໝາຍ ຫຼື ການຕີຄວາມໝາຍຂອງກົດໝາຍວ່າເປັນການກະທຳຜິດ ຫຼື ບໍ່ ຫຼື ຜິດສະຖານໃດ, ມີສາເຫດທີ່ພາໃຫ້ຫຼຸດຜ່ອນ ຫຼື ເພີ່ມຄວາມຮັບຜິດຊອບທາງອາຍາ ຫຼື ບໍ່, ເຊັ່ນ ໃຊ້ຄວາມຮຸນແຮງເພື່ອເອົາຊັບຂອງຜູ້ອື່ນໄປເປັນການປຸ້ນຊັບ ຫຼື ຍາດຊິງຊັບ, ໃຊ້ກຳລັງເພື່ອເຮັດໃຫ້ຜູ້ອື່ນໄດ້ຮັບບາດເຈັບເປັນການທຳຮ້າຍຮ່າງກາຍ ຫຼື ພະ ຍາຍາມຄາດຕະກຳ, ຜູ້ກະທຳຜິດມີອາຍຸແຕ່ 15 ປີ ແຕ່ບໍ່ຮອດ 18 ປີ ຈະຖືກດຳເນີນຄະດີທາງອາຍາ ຫຼື ຈະໃຊ້ມາດຕະການຂອງສານຕໍ່ເດັກກະທຳຜິດ, ການກະທຳຂອງຈຳເລີຍເປັນການກະທຳຜິດສະຖານດຽວ ຫຼື ຫຼາຍສະຖານ, ການໄດ້ຮັບບາດເຈັບນັ້ນເປັນບາດເຈັບທຳມະດາ, ບາດເຈັບປານກາງ ຫຼື ບາດເຈັບສາຫັດ ແລະ ອື່ນໆ ເປັນບັນຫາທາງດ້ານກົດໝາຍ.

ການພິຈາລະນາຄະດີອາຍາເປັນຂັ້ນອຸທອນ ແມ່ນການກວດກາຄືນຄຳສັ່ງ, ຄຳຕັດສິນ ຫຼື ຄຳຕັດສິນຂອງສານຂັ້ນຕົ້ນ ທັງນີ້ການດຳເນີນຄະດີອາຍາໃນຂັ້ນຕົ້ນເຖິງແມ່ນວ່າຜູ້ພິພາກສາໄດ້ພິຈາລະນາຄະດີຢ່າງຮອບດ້ານ, ຄົບຖ້ວນ, ພາວະວິໄສ ແລະ ລະອຽດຮອບຄອບແລ້ວກໍຕາມແຕ່ກໍບໍ່ສາມາດເປັນຫຼັກປະກັນວ່າກໍລະນີດັ່ງກ່າວຈະຖືກຕ້ອງ ແລະ ເປັນທຳສະເໝີໄປ, ນອກຈາກນັ້ນຄວາມຄິດເຫັນທາງກົດໝາຍ ຫຼື ການຕີຄວາມທາງກົດໝາຍກໍອາດຈະເກີດຄວາມຜິດພາດຂຶ້ນໄດ້. ດັ່ງນັ້ນ, ການພິຈາລະນາຄະດີອາຍາຂອງສານຂັ້ນອຸທອນຈຶ່ງເປັນການທົບທວນຄືນທັງຂໍ້ເທັດຈິງ ແລະ ຂໍ້ກົດໝາຍເພື່ອຮັບປະກັນ ແລະ ອຳນວຍຄວາມຍຸຕິທຳທີ່ແທ້ຈິງໃຫ້ແກ່ຄູ່ຄວາມ.

ເຫດຜົນທີ່ສຳຄັນທີ່ໃຫ້ສິດແກ່ຄູ່ຄວາມໄດ້ຂໍອຸທອນ ຫຼື ໄອຍະການໄດ້ຂໍຄັດຄ້ານນັ້ນກໍເພາະວ່າ ຜູ້ພິພາກສາທີ່ປະກອບເຂົ້າເປັນຄະນະສານໃນການພິຈາລະນາຄະດີອາຍາ ໃນສານຂັ້ນຕົ້ນນັ້ນ ກໍເປັນບຸກຄົນທຳມະດາທົ່ວໄປ ເຖິງແມ່ນວ່າຈະເປັນບຸກຄົນທີ່ໄດ້ຮຽນຮູ້ ແລະໄດ້ຜ່ານການຝຶກອົບຮົມທາງດ້ານກົດໝາຍເປັນເວລາດົນນານ ແລະ ຜ່ານປະສົບການໃນການພິຈາລະນາຄະດີມາຢ່າງຫຼວງຫຼາຍ ແຕ່ກໍອາດຈະເກີດຄວາມຜິດພາດໃນເວລາພິຈາລະນາຄະດີໄດ້ ເຊັ່ນ ພະຍານ ແລະ ຫຼັກຖານບໍ່ຖືກຕ້ອງກັບຄວາມຈິງ ຫຼື ພະຍານຫຼັກຖານບໍ່ຄົບຖ້ວນ ຫຼື ເກີດຈາກການຟັງຂໍ້ຄວາມຈິງຜິດພາດ, ການສະຫຼຸບຄະດີບໍ່ກົງກັບເນື້ອຄະດີ ແລະອື່ນໆ.

ການຂໍອຸທອນ ຫຼື ສະເໜີຄັດຄ້ານນີ້ເປັນກໍລະນີທີ່ຄຳຕັດສິນ, ຄຳຊີ້ຂາດ ຫຼື ຄຳຕັດສິນຂອງສານຂັ້ນຕົ້ນ ຍັງບໍ່ທັນໃຊ້ໄດ້ຢ່າງເດັດຂາດເທົ່ານັ້ນ ໝາຍຄວາມວ່າຖ້າຄຳຕັດສິນ, ຄຳຊີ້ຂາດ ຫຼື ຄຳຕັດສິນຂອງສານຂັ້ນຕົ້ນ ຫາກໃຊ້ໄດ້ຢ່າງເດັດຂາດແລ້ວຈະບໍ່ສາມາດຂໍອຸທອນ ຫຼື ສະເໜີຄັດຄ້ານໄດ້.

## 2. ການຂໍອຸທອນ ຫຼື ສະເໜີຄັດຄ້ານ

ການຂໍອຸທອນກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດໄວ້ວ່າ ການຂໍອຸທອນ ໝາຍເຖິງ ການທີ່ຄູ່ຄວາມ ຫຼື ອົງການໄອຍະການບໍ່ພໍໃຈຕໍ່ຄຳຕັດສິນຂອງສານຂັ້ນຕົ້ນ ແລະ ໄດ້ຂໍອຸທອນ ຫຼື ສະເໜີຄັດຄ້ານ (ມ 3 ຂໍ້ 28 ກດຍ). ດັ່ງນັ້ນ, ຜູ້ມີສິດຂໍອຸທອນຈຶ່ງແມ່ນຜູ້ທີ່ກ່ຽວຂ້ອງກັບຄະດີອາຍານັ້ນກໍຄືຄູ່ຄວາມ ແລະ ອົງການໄອຍະການນັ້ນເອງ.

ຈຸດປະສົງຂອງການຂໍອຸທອນ ກໍເພື່ອໃຫ້ສານຂັ້ນທີ່ສູງກວ່າໄດ້ພິຈາລະນາພິພາກສາຄືນໃໝ່ ເພື່ອໃຫ້ເປັນໄປຕາມຄວາມຕ້ອງການຂອງຜູ້ຂໍອຸທອນ ຫຼື ສະເໜີຄັດຄ້ານທີ່ເຫັນວ່າການພິຈາລະນາຕັດສິນຂອງສານຂັ້ນຕົ້ນນັ້ນຍັງບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບກົດໝາຍ ແລະ ຍັງບໍ່ຍຸຕິທຳ.

ການພິຈາລະນາຄະດີຂອງສານຂັ້ນອຸທອນ ຖ້າປຽບທຽບກັບການພິຈາລະນາຄະດີອາຍາຂອງສານຂັ້ນຕົ້ນແລ້ວເຫັນວ່າວິທີການ ແລະ ລະບຽບການພິຈາລະນາບໍ່ມີຄວາມແຕກຕ່າງກັນແຕ່ຢ່າງໃດ ໝາຍຄວາມວ່າສານຂັ້ນອຸທອນພິຈາລະນາບັນຫາທາງຂໍ້ເທັດຈິງ ແລະ ບັນຫາທາງກົດໝາຍຄືກັນກັບສານຂັ້ນຕົ້ນ, ແຕ່ການພິຈາລະນາຄະດີອາຍາຂອງສານຂັ້ນອຸທອນເປັນການພິຈາລະນາໂດຍສານທີ່ສູງກວ່າ ແລະ ໂດຍຜູ້ພິພາກສາຄະນະໃໝ່ທີ່ມີປະສົບການ ແລະ ມີຄວາມຮູ້ຄວາມສາມາດທີ່ສູງກວ່າ.

ການຂໍອຸທອນ ຫຼື ສະເໜີຄັດຄ້ານນັ້ນ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາໄດ້ກຳນົດບຸກຄົນທີ່ມີສິດໃນການຂໍອຸທອນ ແລະ ສະເໜີຄັດຄ້ານຄຳຕັດສິນ, ຄຳຊີ້ຂາດ ຫຼື ຄຳຕັດສິນຂອງສານຂັ້ນຕົ້ນໄວ້ດັ່ງນີ້:

### 2.1. ສິດໃນການຂໍອຸທອນ

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ໄດ້ກຳນົດໃຫ້ຈຳເລີຍ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງຈຳເລີຍມີສິດຂໍອຸທອນຄຳຕັດສິນ ຂອງສານຂັ້ນຕົ້ນກ່ຽວກັບບັນຫາທາງອາຍາ ສ່ວນໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງພວກກ່ຽວມີສິດຂໍອຸທອນຄຳຕັດສິນຂອງສານກ່ຽວກັບບັນຫາທາງແພ່ງເທົ່ານັ້ນ (ມ 212 ກດຍ).

ການທີ່ກົດໝາຍໃຫ້ສິດແກ່ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງພວກກ່ຽວມີສິດຂໍອຸທອນຄຳຕັດສິນຂອງສານ ກ່ຽວກັບບັນຫາທາງແພ່ງນັ້ນ

ກໍເພາະວ່າບັນຫາທາງແພ່ງເປັນບັນຫາທີ່ພົວພັນເຖິງສິດ ແລະ ຜົນປະໂຫຍດທາງດ້ານວັດຖຸທີ່ຈະຕ້ອງໄດ້ໃຊ້ແທນ ຫຼື ທົດແທນ ຫຼື ຟື້ນຟູຄືນສິດດັ່ງກ່າວໃຫ້ພວກກ່ຽວໂດຍກົງ, ຖ້າຫາກເຫັນວ່າສິດ ແລະ ຜົນປະໂຫຍດເຫຼົ່ານັ້ນບໍ່ໄດ້ຮັບການທົດແທນ ໃຫ້ແກ່ບຸກຄົນທີ່ຖືກເສຍຫາຍ ຫຼື ໄດ້ຮັບການໃຊ້ແທນທີ່ບໍ່ສົມເຫດສົມຜົນ ຫຼື ໃຫ້ຮັບຜິດຊອບຄວາມເສຍຫາຍນັ້ນຫຼາຍເກີນໄປ ກໍຈະເປັນການລະເມີດສິດສ່ວນຕົວບຸກຄົນໄດ້.

ສ່ວນບັນຫາທາງອາຍານັ້ນ ເປັນບັນຫາທາງກົດໝາຍທີ່ກ່ຽວຂ້ອງກັບການນໍາໃຊ້ມາດຕະການລົງໂທດຂອງອົງການທີ່ມີສິດອໍານາດຕໍ່ຜູ້ກະທໍາຜິດ ແລະ ເປັນບັນຫາທີ່ແຕະຕ້ອງເຖິງອິດສະລະພາບ, ກຽດສັກສີ ແລະ ຊື່ສຽງຂອງບຸກຄົນ ຈຶ່ງເປັນສິດອໍານາດ ແລະ ໜ້າທີ່ໂດຍກົງຂອງອົງການລັດທີ່ຈະຕ້ອງນໍາເອົາບຸກຄົນດັ່ງກ່າວ ມາລົງໂທດເພື່ອໃຫ້ເຂັດຫຼາບ ທັງນີ້ກໍເພື່ອສະກັດກັ້ນການກະທໍາຜິດໃນອະນາຄົດ (ມ 1 ກດຍ). ຊຶ່ງເປັນຄວາມຮັບຜິດຊອບໂດຍກົງຂອງລັດ, ສໍາລັບບຸກຄົນ ຫຼື ເອກະຊົນ ຖືວ່າບໍ່ມີສ່ວນກ່ຽວຂ້ອງ ຫຼື ບໍ່ມີສ່ວນໄດ້ເສຍກ່ຽວກັບເລື່ອງນີ້.

ເຖິງຢ່າງໃດກໍຕາມ ໃນບາງກໍລະນີຈໍາເລີຍ ແລະ ຜູ້ຮັບຜິດຊອບທາງແພ່ງອາດຈະແມ່ນບຸກຄົນດຽວກັນ. ດັ່ງນັ້ນ, ຈໍາເລີຍ ຈຶ່ງມີສິດຂໍອຸທອນຄໍາຕັດສິນຂອງສານກ່ຽວກັບບັນຫາທາງອາຍາ ແລະ ບັນຫາທາງແພ່ງໃນຄະດີດຽວກັນໄດ້.

**2.2. ສິດໃນການສະເໜີຄັດຄ້ານ**

ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012 ໄດ້ກໍານົດການສະເໜີຄັດຄ້ານຄໍາຕັດສິນຂອງສານຂັ້ນຕົ້ນ ເປັນສິດອໍານາດຂອງອົງການໄອຍະການຂັ້ນດຽວກັນກັບສານທີ່ພິຈາລະນາຕັດສິນຄະດີອາຍາເປັນຂັ້ນຕົ້ນ. ການສະເໜີຄັດຄ້ານຄໍາຕົກລົງຂອງສານຂອງອົງການໄອຍະການນັ້ນ ກໍຕໍ່ເມື່ອອົງການໄອຍະການຫາກເຫັນວ່າຄໍາຕົກລົງຂອງສານບໍ່ມີເຫດຜົນໜັກແໜ້ນພຽງພໍ ຫຼື ບໍ່ຖືກຕ້ອງຕາມລະບຽບກົດໝາຍ. ອົງການໄອຍະການທີ່ມີສິດອໍານາດໃນການສະເໜີຄັດຄ້ານຄໍາຕົກລົງຂອງສານ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາໄດ້ກໍານົດໃຫ້ເປັນສິດອໍານາດຂອງອົງການໄອຍະການຂັ້ນດຽວກັນກັບສານ ແລະອົງການໄອຍະການຂັ້ນເທິງຖັດນັ້ນ (ມ 213 ກດຍ).

ອົງການໄອຍະການຂັ້ນດຽວກັນກັບສານ ແລະ ອົງການໄອຍະການຂັ້ນເທິງຖັດນັ້ນມີຄວາມໝາຍ ດັ່ງນີ້:

ໃນກໍລະນີທີ່ຄະດີອາຍານັ້ນເປັນສິດອໍານາດຂອງສານປະຊາຊົນເຂດພິຈາລະນາເປັນຂັ້ນຕົ້ນ, ອົງການໄອຍະການຂັ້ນດຽວກັນກັບສານ ໝາຍເຖິງອົງການໄອຍະການປະຊາຊົນເຂດ, ສ່ວນອົງການໄອຍະການຂັ້ນເທິງຖັດນັ້ນໝາຍເຖິງອົງການໄອຍະການປະຊາຊົນແຂວງຫຼື ນະຄອນ.

ໃນກໍລະນີທີ່ຄະດີອາຍານັ້ນເປັນສິດອຳນາດຂອງສານປະຊາຊົນແຂວງ ຫຼື ນະຄອນຫຼວງພິຈາລະນາເປັນຂັ້ນຕົ້ນ, ອົງການໄອຍະການຂັ້ນດຽວກັນກັບສານ ໝາຍເຖິງອົງການໄອຍະການປະຊາຊົນແຂວງ ຫຼື ນະຄອນຫຼວງ, ສ່ວນອົງການໄອຍະການຂັ້ນເທິງຖັດນັ້ນ ໝາຍເຖິງອົງການໄອຍະການປະຊາຊົນພາກ ອາດຈະແມ່ນອົງການໄອຍະການປະຊາຊົນພາກເໜືອ, ພາກກາງ ຫຼື ພາກໃຕ້ແລ້ວແຕ່ກໍລະນີເປັນຕົ້ນ.

ການທີ່ກົດໝາຍກຳນົດໃຫ້ອົງການໄອຍະການ ມີສິດອຳນາດໃນການຄັດຄ້ານຄຳຕົກລົງຂອງສານນັ້ນກໍເພາະວ່າອົງການໄອຍະການ ເປັນອົງການທີ່ເປັນຕົວແທນໃຫ້ແກ່ລັດໃນການເປັນໂຈດທາງອາຍາ ເພື່ອຟ້ອງຈຳເລີຍຕໍ່ສານ ໃຫ້ສານໄດ້ລົງໂທດຜູ່ກະທຳຜິດແຕ່ເມື່ອອົງການໄອຍະການຫາກເຫັນວ່າຄຳຕົກລົງຂອງສານບໍ່ມີເຫດຜົນໜັກແໜ້ນພຽງພໍ ຫຼື ບໍ່ຖືກຕ້ອງຕາມລະບຽບກົດໝາຍຈຶ່ງເປັນສິດ ແລະ ໜ້າທີ່ຂອງອົງການລັດທີ່ຈະຕ້ອງໄດ້ຄັດຄ້ານທັງນີ້ກໍເພື່ອຮັກສາຄວາມສັກສິດຂອງກົດໝາຍ ແລະ ຄວາມຍຸຕິທຳໃນສັງຄົມ. ດັ່ງນັ້ນ, ການເຮັດໜ້າທີ່ຂອງໄອຍະການ ຈຶ່ງເປັນການປົກປ້ອງກົດໝາຍໃນຖານະທີ່ເປັນຕົວແທນໃຫ້ແກ່ອົງການລັດນັ້ນເອງ.

## 3. ລະບຽບການພິຈາລະນາຄະດີອາຍາໃນສານຂັ້ນອຸທອນ

### 3.1. ສາເຫດທີ່ພາໃຫ້ມີການຂໍອຸທອນ ຫຼື ສະເໜີຄັດຄ້ານ

ສາເຫດທີ່ພາໃຫ້ມີການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສິນຂອງສານຂັ້ນຕົ້ນນັ້ນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ບໍ່ໄດ້ກຳນົດເປັນສາເຫດໄວ້ຊັດເຈນ, ແຕ່ຖ້າພິຈາລະນາຈາກມາດຕາ 213 ປະກອບກັບມາດຕາ 223 ແລ້ວ ຈະເຫັນວ່າສາເຫດທີ່ພາໃຫ້ຄູ່ຄວາມມີການຂໍອຸທອນ ຫຼື ອົງການໄອຍະການສະເໜີຄັດຄ້ານນັ້ນເນື່ອງຈາກວ່າຄູ່ຄວາມ ຫຼື ອົງການໄອຍະການບໍ່ພໍໃຈຕໍ່ຄຳຕົກລົງ ຫຼື ຄຳຕັດສິນຂອງສານທີ່ເຫັນວ່າບໍ່ມີເຫດຜົນທີ່ໜັກແໜ້ນ ຫຼື ບໍ່ຖືກຕ້ອງຕາມກົດໝາຍ ພໍສະຫຼຸບໄດ້ເປັນ 3 ສາເຫດດັ່ງນີ້:

1) ການພິຈາລະນາຕັດສິນວາງໂທດຂອງສານຂັ້ນຕົ້ນບໍ່ຖືກຕ້ອງ ຫຼື ບໍ່ສອດຄ່ອງກັບກົດໝາຍ ເຊັ່ນ ມີການວາງໂທດໜັກ ຫຼື ເບົາກວ່າກົດໝາຍກຳນົດ ຫຼື ການວາງໂທດບໍ່ສອດຄ່ອງກັບລັກສະນະ, ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ ແລະ ບຸກຄະລິກກະພາບຂອງຜູ່ກະທຳຜິດ;

2) ການສືບສວນ-ສອບສວນ ຫຼື ການໄຕ່ສວນຄະດີໃນທີ່ປະຊຸມສານບໍ່ຮອບດ້ານ, ບໍ່ຄົບຖ້ວນ ຫຼື ບໍ່ພາວະວິໄສ; ການວິນິດໄສຂອງສານຂັ້ນຕົ້ນບໍ່ສອດຄ່ອງກັບເຫດການຕົວຈິງຂອງຄະດີ ຫຼື ການກຳນົດເຫດການຕົວຈິງຂອງຄະດີບໍ່ຖືກຕ້ອງ ;

3) ການພິຈາລະນາຂອງສານຂັ້ນຕົ້ນໄດ້ລະເມີດກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເຊັ່ນ ບໍ່ໄດ້ແຈ້ງສິດຕ່າງໆ ໃຫ້ຜູ່ເຂົ້າຮ່ວມໃນການດຳເນີນຄະດີຊາບກ່ອນການໄຕ່ສວນ,

ບໍ່ໃຫ້ສິດຄູ່ຄວາມໄດ້ໂຕ້ຖຽງ ຫຼື ສະເໜີຫຼັກຖານແກ້ມັດ ຫຼື ບໍ່ໃຫ້ສິດຈຳເລີຍມີຄຳເຫັນເທື່ອສຸດທ້າຍ ແລະ ອື່ນໆ ຫຼື ການນຳໃຊ້ກົດໝາຍອາຍາບໍ່ຖືກຕ້ອງ ເຊັ່ນ ຕັດສິນລົງໂທດຂໍ້ຫາບໍ່ຖືກກັບການກະທຳຂອງຈຳເລີຍ ແລະ ອື່ນໆເປັນຕົ້ນ.

**3.2. ລະບຽບການຂໍອຸທອນ**

ສານຂັ້ນອຸທອນຈະຮັບເອົາຄະດີອາຍາມາພິຈາລະນາໄດ້ກໍຕໍ່ເມື່ອມີຄຳຮ້ອງຂໍອຸທອນຂອງຈຳເລີຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນຂອງພວກກ່ຽວ ຫຼື ມີຄຳສະເໜີຄັດຄ້ານຂອງອົງການໄອຍະການເທົ່ານັ້ນ. ດັ່ງນັ້ນ, ກຳນົດເວລາໃນການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕົກລົງຂອງສານ ກົດໝາຍໄດ້ແຍກອອກເປັນ 2 ກໍລະນີດັ່ງນີ້:

1) ສິດໃນການຂໍອຸທອນ ຫຼື ຂໍສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນຕົ້ນນັ້ນສາມາດຂໍໄດ້ພາຍໃນກຳນົດເຈັດວັນນັບແຕ່ວັນທີ່ໄດ້ຮັບຊາບຄຳສັ່ງ ຫຼື ຄຳຊີ້ຂາດດັ່ງກ່າວເປັນຕົ້ນໄປ;

2) ສ່ວນໃນກໍລະນີການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສິນຂອງສານຂັ້ນຕົ້ນມາສາມາດຂໍໄດ້ພາຍໃນກຳນົດຊາວວັນ ນັບແຕ່ວັນອ່ານ ຫຼື ວັນຮັບຊາບຄຳຕັດສິນເປັນຕົ້ນໄປ ຫຼື ໃນກໍລະນີມີການຈອງຂໍອຸທອນ ຫຼື ຈອງຂໍສະເໜີຄັດຄ້ານຄຳຕັດສິນຂອງສານກໍຕ້ອງຍື່ນຄຳຮ້ອງຂໍ ຫຼື ຄຳສະເໜີດັ່ງກ່າວພາຍໃນກຳນົດຊາວວັນເຊັ່ນກັນ (ມ 214 ກດຍ). ຕາມກົດໝາຍແລ້ວໃນກໍລະນີມີການຈອງຂໍອຸທອນ ຫຼື ຈອງຂໍສະເໜີຄັດຄ້ານຄຳຕັດສິນຂອງສານ, ຖ້າກາຍກຳນົດເວລາແລ້ວ ແຕ່ຄູ່ຄວາມບໍ່ຂຽນຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານພາຍໃນກຳນົດສາມວັນ ກໍຕ້ອງສົ່ງສຳນວນຄະດີໄປຫາສານຂັ້ນອຸທອນເລີຍ (ມ 215 ວັກ 2 ກດຍ).

ລະບຽບການຂໍອຸທອນ ຫຼື ສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳຕັດສິນຂອງສານກົດໝາຍໄດ້ກຳນົດວ່າຜູ້ຂໍອຸທອນ ຫຼື ຜູ້ສະເໜີຄັດຄ້ານຕ້ອງຍື່ນຄຳຮ້ອງຂໍອຸທອນ ຫຼື ສະເໜີຄັດຄ້ານນັ້ນຕໍ່ສານ ຂັ້ນອຸທອນໂດຍຜ່ານສານທີ່ໄດ້ພິຈາລະນາຄະດີອາຍາເປັນຂັ້ນຕົ້ນນັ້ນ, ແຕ່ໃນທາງປະຕິບັດໃນປັດຈຸບັນ ສານຂັ້ນຕົ້ນທີ່ພິຈາລະນາຄະດີນັ້ນ ຕ້ອງສົ່ງສຳນວນຄະດີຜ່ານອົງການໄອຍະການຂັ້ນອຸທອນເສັຍກ່ອນ. ສານທີ່ພິຈາລະນາຄະດີອາຍາເປັນຂັ້ນຕົ້ນຕ້ອງໃຫ້ຄຳແນະນຳແກ່ຜູ້ຂໍອຸທອນຊາບກ່ຽວກັບກຳນົດເວລາ ໃນການຂໍອຸທອນ, ການຂຽນຄຳຮ້ອງຂໍອຸທອນ, ຄ່າທຳນຽມຂໍອຸທອນ ແລະ ສິດຕ່າງໆ ກ່ຽວກັບການຂໍອຸທອນຂອງຜູ້ກ່ຽວ. ຖ້າມີການຂໍອຸທອນ ຫຼື ສະເໜີຄັດຄ້ານ, ສານທີ່ໄດ້ພິຈາລະນາຄະດີອາຍາເປັນຂັ້ນຕົ້ນນັ້ນຈະຕ້ອງໄດ້ຮັບຄຳຮ້ອງຂໍອຸທອນ ຫຼື ສະເໜີຄັດຄ້ານດັ່ງກ່າວ ເຖິງວ່າຈະກາຍກຳນົດເວລາໃນການຂໍອຸທອນ ຫຼື ສະເໜີຄັດຄ້ານແລ້ວກໍຕາມ. ພາຍຫຼັງໝົດກຳນົດເວລາຂໍອຸທອນ ຫຼື ສະເໜີຄັດ

ຄ້ານແລ້ວ ສານຂັ້ນຕົ້ນກໍຕ້ອງສົ່ງຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານພ້ອມດ້ວຍສຳນວນຄະດີໄປຍັງສານຂັ້ນອຸທອນ ພາຍໃນກຳນົດສາມວັນ (ມ 215 ກດຍ).

ນອກຈາກນັ້ນ ກົດໝາຍຍັງກຳນົດໃຫ້ຜູ້ຂໍອຸທອນ ຫຼື ຜູ້ສະເໜີຄັດຄ້ານມີສິດຂໍອຸທອນ ຫຼື ສະເໜີຄັດຄ້ານໄປຍັງສານຂັ້ນອຸທອນໂດຍກົງ ຖ້າວ່າສານຂັ້ນຕົ້ນຫາກບໍ່ຮັບ ຫຼື ແກ່ຍາວການຮັບຄຳຮ້ອງຂໍອຸທອນຂອງຄູ່ຄວາມ ຫຼື ຄຳສະເໜີຄັດຄ້ານຂອງອົງການໄອຍະການດັ່ງກ່າວ.

ໃນກໍລະນີທີ່ສານຂັ້ນຕົ້ນຫາກຮັບຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານແລ້ວ ແຕ່ແກ່ຍາວ ການສົ່ງສຳນວນຄະດີທີ່ເປັນເຫດໃຫ້ກາຍກຳນົດເວລາສົ່ງໄປຍັງສານຂັ້ນອຸທອນ, ຜູ້ຂໍອຸທອນ ຫຼື ຜູ້ສະເໜີຄັດຄ້ານ ກໍມີສິດສະເໜີຕໍ່ສານຂັ້ນອຸທອນເພື່ອໃຫ້ສານຂັ້ນອຸທອນທວງເອົາສຳນວນຄະດີດັ່ງກ່າວມາພິຈາລະນາໄດ້ (ມ 215 ກດຍ).

ເຖິງຢ່າງໃດກໍຕາມພາຍຫຼັງທີ່ຄູ່ຄວາມໄດ້ຂໍອຸທອນ ຫຼື ອົງການໄອຍະການໄດ້ສະເໜີຄັດຄ້ານແລ້ວ ກ່ອນສານຂັ້ນອຸທອນຈະພິຈາລະນາຄະດີຄູ່ຄວາມ ຫຼື ອົງການໄອຍະການມີສິດສະເໜີເພີ່ມເຕີມ, ປ່ຽນແປງ ຫຼືຖອນຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານຂອງຕົນໄດ້.

ໃນກໍລະນີທີ່ຄູ່ຄວາມໄດ້ມີການຖອນຄຳຮ້ອງຂໍອຸທອນ ຫຼື ອົງການໄອຍະການໄດ້ຖອນຄຳສະເໜີຄັດຄ້ານຂອງຕົນແລ້ວ, ບຸກຄົນທີ່ກ່ຽວຂ້ອງບໍ່ມີສິດຂໍອຸທອນ ຫຼື ອົງການໄອຍະການບໍ່ມີສິດຂໍຄັດຄ້ານຄືນໃໝ່ໄດ້.

ໃນກໍລະນີທີ່ຄູ່ຄວາມໄດ້ມີການຖອນຄຳຮ້ອງຂໍອຸທອນ ຫຼື ອົງການໄອຍະການໄດ້ຖອນຄຳສະເໜີຄັດຄ້ານຂອງຕົນແລ້ວເປັນສາເຫດໃຫ້ສານຂັ້ນອຸທອນ ຕ້ອງໄດ້ຢຸດເຊົາການດຳເນີນຄະດີ ແລະ ຄຳຕັດສິນຂອງສານຂັ້ນຕົ້ນດັ່ງກ່າວນັ້ນຈະເປັນຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດນັບແຕ່ວັນທີ່ສານຂັ້ນອຸທອນ ໄດ້ອອກຄຳຊີ້ຂາດຢຸດເຊົາການດຳເນີນຄະດີເປັນຕົ້ນໄປ. ຖ້າຫາກມີການຂໍຖອນຄຳຮ້ອງຂໍອຸທອນ ຫຼື ສະເໜີຄັດຄ້ານຄຳຕັດສິນຂອງສານຂັ້ນຕົ້ນບາງສ່ວນສານຂັ້ນອຸທອນກໍຕ້ອງໄດ້ພິຈາລະນາໃນສ່ວນທີ່ບໍ່ໄດ້ຖອນເທົ່ານັ້ນ (ມ 217 ກດຍ).

**ຕົວຢ່າງ : ຮ່າງແບບພິມຄຳຮ້ອງຂໍອຸທອນ**

ທາງອາຍາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

## ຄຳຮ້ອງຂໍອຸທອນ

ຮຽນ : ທ່ານປະທານສານປະຊາຊົນ......................................................ຂັ້ນອຸທອນ

ເລື່ອງ : ຂໍອຸທອນ ຄຳສັ່ງ ☐ , ຄຳຊີ້ຂາດ ☐ , ຄຳຕັດສິນ ☐.

ຄະດີອາຍາສະບັບເລກທີ...................,ລົງວັນທີ.....................ຂອງສານປະຊາຊົນ.......

**I. ພາກແນະນຳ**

ຂ້າພະເຈົ້າຊື່ ແລະ ນາມສະກຸນ.....................ເພດຊາຍ☐ , ເພດຍິງ ☐ , ອາຍຸ.........ປີ, ສັນຊາດ............, ອາຊີບ.................ປັດຈຸບັນຢູ່ໜ່ວຍ........., ບ້ານ..............ເມືອງ................, ແຂວງ.......................

ບັດປະຈຳຕົວເລກທີ.....................ລົງວັນທີ.............,ສຳມະໂນຄົວເລກທີ................ລົງວັນ.......

ໜັງສືຜ່ານແດນ (Passport Number) ເລກທີ...........................ລົງວັນທີ................................

ໂທລະສັບມືຖື (Mobile phone) :................................ໂທລະສັບເຮືອນ (Home) ..................

ໂທລະສັບຫ້ອງການ (Office) :.......................................ໂທລະສານ (Fax) :.........................

ທີ່ຢູ່ທາງເອເລັກໂຕຣນິກ (E-mail address) :..................................................................

ຜູ່ຂໍອຸທອນໃນຖານະເປັນ[37] ໂຈດທາງແພ່ງ ☐ , ຈຳເລີຍ ☐, ບຸກຄົນທີສາມ ☐ ທະນາຍຄວາມ ຫຼື ☐ ຜູ່ປົກປ້ອງອື່ນ.......................................ຕາມໃບແຕ່ງຕັ້ງ ຫຼື ໃບມອບສິດ ສະບັບເລກທີ............. ລົງວັນທີ..............................ໃນຄະດີອາຍາເລກທີ................ລົງວັນທີ................................

**ລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ......................................................ເປັນໂຈດ

ທ້າວ ຫຼື ນາງ..........................................................................ເປັນໂຈດທາງແພ່ງ[38]

---

[37] ຂໍ້ແນະນຳທີ 1: ຜູ່ຂໍອຸທອນຕ້ອງບອກໃຫ້ສານຮູ້ແຈ້ງວ່າຕົນເອງແມ່ນໃຜທີ່ພົວພັນກັບຄະດີນີ້ ຕົວຢ່າງ: ຜູ່ປົກປ້ອງອື່ນອາດຈະແມ່ນ ພໍ່ ຫຼື ແມ່ ຫຼື ອ້າຍ ຫຼື ເອື້ອຍ ຫຼື ນ້ອງ ຫຼື........................ ຂອງໂຈດທາງແພ່ງ ຫຼື ຈຳເລີຍ ຫຼື ບຸກຄົນທີສາມ.

[38] ຂໍ້ແນະນຳທີ 2: ຖ້າມີໂຈດທາງແພ່ງ ຫຼື ຈຳເລີຍຫຼາຍຄົນໃຫ້ຂຽນຊື່ ແລະ ນາມສະກຸນຂອງແຕ່ລະຄົນໃສ່ດ້ານ ຫຼັງຂອງໜ້ານີ້.

ທ້າວ ຫຼື ນາງ..........................................................................................ເປັນຈຳເລີຍ

ຖືກຫາວ່າ: ...............................

ຖືກກັກຂັງວັນທີ: .......................ທີ່ຄ້າຍຄຸມຂັງ.........................., ປ່ອຍຕົວພາງ.............

**II. ພາກເຫດການຂອງຄະດີ**[39]

ໃຫ້ເລົ່າຫຍໍ້ເຫດການຂອງຄະດີ (ຫຼີກເວັ້ນການເລົ່າສິ່ງທີ່ບໍ່ມີສ່ວນພົວພັນກັບເນື້ອຄະດີ ຫຼື ສິ່ງທີ່ບໍ່ຈຳເປັນ).

..........................................................................................................................

..........................................................................................................................

..........................................................................................................................

**III. ພາກຜົນການຕົກລົງຂອງສານ (ການຕັດສິນຂອງສານ)**

..........................................................................................................................

..........................................................................................................................

..........................................................................................................................

**IV. ພາກທີ່ບໍ່ພໍໃຈ (ບັນຫາເຫດຜົນທີ່ບໍ່ພໍໃຈຂອງຜູ່ຂໍອຸທອນ)**

ຂ້າພະເຈົ້າບໍ່ພໍໃຈຕໍ່ຄຳສັ່ງ ☐ , ຄຳຊີ້ຂາດ ☐ , ຄຳຕັດສິນ ☐ .

1..........................................................................................................

..........................................................................................................................

..........................................................................................................................

**V. ພາກສະເໜີໃຫ້ສານຂັ້ນອຸທອນພິຈາລະນາ**

ຂ້າພະເຈົ້າຂໍສະເໜີໃຫ້ສານຂັ້ນອຸທອນຄົ້ນຄວ້າພິຈາລະນາບັນດາບັນຫາດັ່ງລຸ່ມນີ້:

1..........................................................................................................

..........................................................................................................................

..........................................................................................................................

ຫວັງຢ່າງຍິ່ງວ່າແຕ່ລະບັນຫາທີ່ສະເໜີມາຂ້າງເທິງນີ້ ຈະໄດ້ຮັບການພິຈາລະນາໃຫ້ຄວາມເປັນທຳແກ່ຂ້າພະເຈົ້າຕາມຂໍ້ມູນຫຼັກຖານ ແລະ ລະບຽບກົດໝາຍດ້ວຍ.

ທີ່..........................ວັນທີ........../.........../...........

ເຊັນ

ແລະ ແປະໂປ້ມືຂອງຜູ່ຂໍອຸທອນ.

ເອກະສານຄັດຕິດມານີ້ມີຄື:

---

[39] ຂໍ້ແນະນຳທີ 3: ສຳລັບພາກ II, III, IV ແລະV ຖ້າບ່ອນປະຫວ່າງໃນຮ່າງຄຳຮ້ອງນີ້ຫາກບໍ່ພໍຂຽນ ກໍໃຫ້ຂຽນ ຫຼື ພິມໃສ່ເຈ້ຍຕ່າງຫາກແລ້ວຄັດຕິດໃສ່ດ້ານຫຼັງຂອງພາກທີ່ກ່ຽວຂ້ອງໃນຮ່າງຄຳຮ້ອງນີ້.

1. ສຳເນົາໃບຈອງຂໍອຸທອນ 1 ສະບັບ (ຖ້າມີ)
2. ສຳເນົາຄຳຕັດສິນຂອງສານຂັ້ນຕົ້ນ 1 ສະບັບ
3. .....
4. .....
5. .....
6. .....
7. .....
8. .....
9. .....
10. .....

### 3.3. ການຮັບເອົາຄະດີ ແລະ ການກະກຽມ

#### 3.3.1. ການແຈ້ງຂໍອຸທອນ ຫຼື ສະເໜີຄັດຄ້ານ

ໃນກໍລະນີທີ່ມີຄຳຮ້ອງຂໍອຸທອນຂອງຄູ່ຄວາມ ຫຼື ຄຳສະເໜີຄັດຄ້ານຄຳຕັດສິນຂອງສານຂັ້ນຕົ້ນຂອງໄອຍະການນັ້ນ, ສານຂັ້ນຕົ້ນຕ້ອງແຈ້ງຄຳຮ້ອງຂໍອຸທອນ ຫຼື ສະເໜີຄັດຄ້ານໃຫ້ຄູ່ຄວາມອີກຝ່າຍໜຶ່ງຊາບທັງນີ້ກໍເພື່ອໃຫ້ຄູ່ຄວາມຝ່າຍນີ້ໄດ້ໃຊ້ສິດແກ້ຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານນັ້ນ. ໃນກໍລະນີຈຳເລີຍຫາກຍັງຖືກກັກຂັງຢູ່ ກໍຕ້ອງແຈ້ງໃຫ້ຜູ່ກ່ຽວຊາບໂດຍຜ່ານເຈົ້າໜ້າທີ່ຄ້າຍຄຸມຂັງບ່ອນທີ່ຜູ່ກ່ຽວຖືກກັກຂັງຢູ່ນັ້ນ.

#### 3.3.2. ການໃຫ້ຄຳອະທິບາຍເພີ່ມເຕີມ

ກ່ອນທີ່ສານຂັ້ນອຸທອນຈະນຳເອົາຄະດີມາພິຈາລະນາພິພາກສານັ້ນ ສານຕ້ອງໃຫ້ສິດແກ່ຜູ່ຂໍອຸທອນ ຫຼື ຜູ່ສະເໜີຄັດຄ້ານໄດ້ອະທິບາຍເພີ່ມເຕີມຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານຂອງຕົນ, ພ້ອມກັນນັ້ນກໍຕ້ອງໃຫ້ສິດແກ່ຄູ່ຄວາມອີກຝ່າຍໜຶ່ງມີຄຳເຫັນກ່ຽວກັບການແກ້ຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການ. ຖ້າໃນກໍລະນີຈຳເລີຍຫາກຖືກກັກຂັງກໍຕ້ອງແຈ້ງໃຫ້ຜູ່ກ່ຽວຊາບ ໂດຍຜ່ານເຈົ້າໜ້າທີ່ທີ່ຮັບຜິດຊອບຄ້າຍຄຸມຂັງທີ່ຜູ່ກ່ຽວຖືກກັກຂັງຢູ່.

#### 3.3.3. ການຄົ້ນຄວ້າຄະດີ

ພາຍຫຼັງທີ່ສານຂັ້ນອຸທອນ ໄດ້ຮັບສຳນວນຄະດີພ້ອມດ້ວຍຄຳຮ້ອງຂໍອຸທອນ ຂອງຄູ່ຄວາມ ຫຼື ຄຳສະເໜີຄັດຄ້ານຂອງໄອຍະການແລ້ວ ປະທານສານຈະຕ້ອງມອບໃຫ້ຜູ່ພິພາກສາຜູ່ໃດຜູ່ໜຶ່ງເປັນຜູ່ຄົ້ນຄວ້າຄວາມຖືກຕ້ອງກ່ຽວກັບລະບຽບການຂໍອຸທອນ ຫຼື ສະເໜີຄັດຄ້ານ ເຊັ່ນ ການຂໍອຸທອນຂອງຄູ່ຄວາມ ຫຼື ສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການຢູ່

ໃນໄລຍະເວລາ ຫຼື ບໍ່, ການຂໍອຸທອນ ຫຼື ສະເໜີຄັດຄ້ານກ່ຽວກັບເລື່ອງໃດ ແລະ ອື່ນໆ. ຫຼັງຈາກນັ້ນຈຶ່ງສະເໜີປະທານສານເພື່ອນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ.

ໂດຍຫຼັກການແລ້ວ ການພິຈາລະນາຄະດີອາຍາເປັນຂັ້ນອຸທອນ ສານຈະຕ້ອງພິຈາລະນາຕໍ່ໜ້າຈຳເລີຍ ໝາຍຄວາມວ່າໃນການພິຈາລະນາຄະດີອາຍາຈຳເລີຍຈະຕ້ອງມີໜ້າຢູ່ສານສະເໝີ. ເຖິງຢ່າງໃດກໍຕາມ ເນື່ອງຈາກວ່າການນຳເອົາຈຳເລີຍມາພິຈາລະນາຕໍ່ໜ້າສານຂັ້ນອຸທອນນັ້ນ ອາດຈະພົບຄວາມຫຍຸ້ງຍາກເພາະຈຳເລີຍຢູ່ໃນເຂດ ຫຼື ແຂວງທີ່ຫ່າງໄກ. ດັ່ງນັ້ນ, ໃນທາງປະຕິບັດໃນປັດຈຸບັນສານຂັ້ນອຸທອນຈະພິຈາລະນາລັບຫຼັງຈຳເລີຍກໍໄດ້.

**3.3.4. ໝາຍຮຽກ**

ກ່ອນການປະຊຸມສານ ສານຈະຕ້ອງອອກໝາຍຮຽກໃຫ້ຈຳເລີຍ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ພະຍານ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງໃຫ້ເຂົ້າມາໃຫ້ການ ຫຼື ນຳເອົາຫຼັກຖານມາສະເໜີຕໍ່ທີ່ປະຊຸມສານ[40].

**3.4. ການໄຕ່ສວນຄະດີໃນທີ່ປະຊຸມສານ**

ການພິຈາລະນາຄະດີອາຍາຢູ່ສານຂັ້ນອຸທອນນີ້ ກົດໝາຍກຳນົດລະບຽບການພິຈາລະນາຄືກັນກັບຢູ່ສານຂັ້ນຕົ້ນ ໝາຍຄວາມວ່າຈະຕ້ອງມີການເປີດປະຊຸມສານ ເພາະວ່າການພິຈາລະນາຄະດີຂອງສານຂັ້ນອຸທອນ ເປັນການພິຈາລະນາທາງດ້ານເຫດການຄວາມເປັນຈິງຂອງຄະດີ ແລະ ທາງດ້ານກົດໝາຍດັ່ງທີ່ໄດ້ກ່າວມາແລ້ວໃນຂ້າງເທິງ. ສານຂັ້ນອຸທອນຈະຮັບເອົາຄະດີມາພິຈາລະນາໄດ້ກໍຕໍ່ເມື່ອວ່າມີຄຳຮ້ອງຂໍອຸທອນຈາກຄູ່ຄວາມ ຫຼື ຄຳສະເໜີຄັດຄ້ານຂອງອົງການໄອຍະການເທົ່ານັ້ນ. ພາຍຫຼັງທີ່ສານຂັ້ນອຸທອນໄດ້ຮັບຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານພ້ອມດ້ວຍສຳນວນຄະດີຈາກສານຂັ້ນຕົ້ນ ຫຼື ໄດ້ຮັບຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານໂດຍກົງຈາກຜູ້ຂໍອຸທອນ ຫຼື ຜູ້ສະເໜີຄັດຄ້ານແລ້ວ (ໃນກໍລະນີທີ່ສານຂັ້ນຕົ້ນບໍ່ຮັບຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານ) ປະທານສານຈະມອບສຳນວນຄະດີນັ້ນໃຫ້ຜູ້ພິພາກສາຜູ້ໃດຜູ້ໜຶ່ງເປັນຜູ້ຄົ້ນຄວ້າສຳນວນຄະດີດັ່ງກ່າວແລ້ວລາຍງານຕໍ່ປະທານສານຄືນເພື່ອປະທານສານຈະໄດ້ກຳນົດວັນ ແລະ ເວລາໃນການນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ.

ໃນທີ່ປະຊຸມສານຂັ້ນອຸທອນ ພາຍຫຼັງທີ່ປະທານສານໄດ້ກ່າວເປີດປະຊຸມສານ ແລະ ຄະນະສານຜູ້ຮັບຜິດຊອບຄະດີໄດ້ລາຍງານແລ້ວ ປະທານຄະນະສານໃຫ້ຜູ້ຂໍອຸທອນ ແລະ ຫົວໜ້າອົງການໄອຍະການຂັ້ນອຸທອນສະເໜີເຫດຜົນກ່ຽວກັບການຂໍອຸທອນ ຫຼື ການສະເໜີຄັດຄ້ານນັ້ນ. ໃນກໍລະນີທີ່ມີການນຳສະເໜີຫຼັກຖານໃໝ່ໃນທີ່ປະຊຸມສານ, ສານຕ້ອງ

[40] ກະລຸນາເບິ່ງລາຍລະອຽດໃນການພິຈາລະນາຄະດີອາຍາໃນສານຂັ້ນຕົ້ນ

ແຈ້ງໃຫ້ຫົວໜ້າອົງການໄອຍະການຂັ້ນອຸທອນ ແລະ ຜູ້ເຂົ້າຮ່ວມອື່ນໃນທີ່ປະຊຸມສານຊາບ. ຫຼັງຈາກນັ້ນກໍໃຫ້ຈຳເລີຍ, ຜູ້ຖືກເສັຍຫາຍ, ໂຈດທາງແພ່ງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນໃຫ້ຄຳອະທິບາຍຕໍ່ສານ. ລະບຽບການໄຕ່ສວນ, ການໂຕ້ຖຽງ ລວມທັງການພິຈາລະນາຕົກລົງໃນຫ້ອງປະຊຸມລັບແມ່ນດຳເນີນຄືກັນກັບຢູ່ສານຂັ້ນຕົ້ນທຸກຢ່າງ (ມ 167, ມ 170-207 ແລະ ມ 219 ກດຍ). ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ.

ການພິຈາລະນາຄະດີຢູ່ສານຂັ້ນອຸທອນນີ້ ແມ່ນອີງໃສ່ພື້ນຖານທີ່ສານຂັ້ນຕົ້ນໄດ້ພິຈາລະນາມາແລ້ວ ໝາຍຄວາມວ່າ ສານຂັ້ນອຸທອນຕ້ອງໄດ້ພິຈາລະນາຫຼັກຖານຕ່າງໆທີ່ຄູ່ຄວາມໄດ້ສະເໜີຢູ່ສານຂັ້ນຕົ້ນນັ້ນ. ຖ້າຫາກມີການສະເໜີຫຼັກຖານໃໝ່ໃນສານຂັ້ນອຸທອນໃນພາຍຫຼັງກໍຕ້ອງໄດ້ພິຈາລະນາໄປພ້ອມໆກັນ ແລະ ເປັນພື້ນຖານໃນການພິຈາລະນາພິພາກສາຄະດີຂອງສານຂັ້ນອຸທອນ (ມ 218 ກດຍ).

ໃນການພິຈາລະນາຄະດີຢູ່ສານຂັ້ນອຸທອນ ກ່ອນອື່ນໝົດສານຕ້ອງໄດ້ພິຈາລະນາວ່າການຂໍອຸທອນຂອງຄູ່ຄວາມ ຫຼື ການສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການໄດ້ດຳເນີນໄປໂດຍຖືກຕ້ອງຕາມລະບຽບການຂໍອຸທອນ ຫຼື ສະເໜີຄັດຄ້ານ ຫຼື ບໍ່ໝາຍຄວາມວ່າໄດ້ຂໍອຸທອນ ຫຼື ສະເໜີຄັດຄ້ານພາຍໃນກຳນົດເວລາຊາວວັນນັ້ນ ຫຼື ບໍ່.

ຖ້າຫາກວ່າການຂໍອຸທອນ ຫຼື ສະເໜີຄັດຄ້ານບໍ່ຖືກຕ້ອງຕາມລະບຽບການ ຫຼື ກາຍກຳນົດເວລາຂໍອຸທອນ ຫຼື ສະເໜີຄັດຄ້ານແລ້ວ, ສານຂັ້ນອຸທອນກໍຈະລົງຄຳພິພາກສາບໍ່ຮັບເອົາຄະດີດັ່ງກ່າວມາພິຈາລະນາອີກຕໍ່ໄປ. ການທີ່ກົດໝາຍກຳນົດໃຫ້ສານຂັ້ນອຸທອນຕ້ອງຮັບເອົາຄຳຮ້ອງຂໍອຸທອນ ຫຼື ຄຳສະເໜີຄັດຄ້ານມາພິຈາລະນານັ້ນກໍເພາະວ່າສານຂັ້ນອຸທອນມີສິດອຳນາດພິຈາລະນາບັນຫາທາງດ້ານຄວາມເປັນຈິງ ແລະ ບັນຫາທາງດ້ານກົດໝາຍນັ້ນເອງ.

ໃນກໍລະນີທີ່ເຫັນວ່າການຂໍອຸທອນ ຫຼື ສະເໜີຄັດຄ້ານຖືກຕ້ອງຕາມລະບຽບການ ແລະ ຖືກຕ້ອງຕາມກຳນົດເວລາແລ້ວ, ເວລານັ້ນສານຂັ້ນອຸທອນກໍຈະນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານຕໍ່ໄປ ໝາຍຄວາມວ່າສານຂັ້ນອຸທອນຈະພິຈາລະນາກ່ຽວກັບເນື້ອຄະດີຕໍ່ໄປໄດ້ ກໍຕໍ່ເມື່ອວ່າສານຂັ້ນອຸທອນໄດ້ພິຈາລະນາແລ້ວວ່າການຂໍອຸທອນ ຫຼື ສະເໜີຄັດຄ້ານນັ້ນຖືກຕ້ອງຕາມລະບຽບການແລ້ວ.

ການພິຈາລະນາຄະດີອາຍານັ້ນ ສານຂັ້ນອຸທອນຕ້ອງໄດ້ກວດກາເຖິງຄວາມຖືກຕ້ອງຂອງຄຳຕັດສິນວ່າຖືກຕ້ອງຕາມກົດໝາຍ ຫຼື ບໍ່, ລວມທັງເຫດຜົນຂອງຄຳຕັດສິນໂດຍອີງໃສ່ຜົນຂອງການໄຕ່ສວນໃນທີ່ປະຊຸມສານເປັນຕົ້ນຕໍ ຫຼື ຫຼັກຖານໃໝ່ທີ່ໄດ້ສະເໜີເພີ່ມເຕີມ. ນອກຈາກນັ້ນສານຂັ້ນອຸທອນພິຈາລະນາບໍ່ພຽງແຕ່ພາຍໃນຂອບເຂດທີ່ຄູ່ຄວາມໄດ້ຂໍອຸທອນ ຫຼື ສະເໜີຄັດຄ້ານເທົ່ານັ້ນແຕ່ຕ້ອງໄດ້ກວດກາການດຳເນີນຄະດີທັງໝົດທີ່ກ່ຽວກັບພວກຈຳ

ເລີຍໃນຄະດີດຽວກັນເຖິງວ່າຈໍາເລີຍຈໍານວນໜຶ່ງບໍ່ໄດ້ຂໍອຸທອນ ຫຼື ຫົວໜ້າອົງການໄອຍະການບໍ່ໄດ້ສະເໜີຄັດຄ້ານກໍຕາມ (ມ 220 ກດຍ).

**3.5. ຄໍາພິພາກສາ**

ການພິຈາລະນາຄະດີຢູ່ສານຂັ້ນອຸທອນນັ້ນ ສານຂັ້ນອຸທອນບໍ່ມີສິດພິພາກສາເພີ່ມໂທດໃຫ້ຈໍາເລີຍໜັກຂຶ້ນກວ່າເກົ່າໄດ້ ມີແຕ່ມີສິດພິພາກສາຜ່ອນໂທດໃຫ້ເບົາລົງເທົ່ານັ້ນ ເວັ້ນເສັຍແຕ່ວ່າ ຫົວໜ້າອົງການໄອຍະການຫາກມີຄໍາສະເໜີຄັດຄ້ານໃຫ້ເພີ່ມໂທດແກ່ຈໍາເລີຍເທົ່ານັ້ນ ສານຂັ້ນອຸທອນຈຶ່ງຈະພິພາກສາເພີ່ມໂທດໄດ້ (ມ 220 ວັກທ້າຍ ກດຍ).

ການພິພາກສາຄະດີຂອງສານຂັ້ນອຸທອນນັ້ນແຍກເປັນປະເພດດັ່ງນີ້ (ມ 222 ກດຍ):

1) ຖ້າຫາກເຫັນວ່າສານຂັ້ນຕົ້ນໄດ້ພິຈາລະນາຕັດສິນຖືກຕ້ອງຕາມລະບຽບກົດໝາຍ ແລະ ມີເຫດຜົນພຽງພໍແລ້ວ, ສານຂັ້ນອຸທອນກໍຢັ້ງຢືນເອົາຕາມຄໍາຕັດສິນຂອງສານຂັ້ນຕົ້ນທັງໝົດ ແລະ ຖືວ່າ ສານຂັ້ນອຸທອນເຫັນດີເຫັນພ້ອມກັບຄໍາວິນິດໄສຂອງສານຂັ້ນຕົ້ນທຸກປະການແລ້ວ;

2) ຖ້າກໍລະນີຫາກເຫັນວ່າສານຂັ້ນຕົ້ນຕັດສິນບໍ່ຖືກຕ້ອງຕາມກົດໝາຍ ຫຼື ບໍ່ມີເຫດຜົນບາງສ່ວນ ຫຼື ທັງໝົດ, ສານຂັ້ນອຸທອນກໍປ່ຽນແປງຄໍາຕັດສິນຂອງສານຂັ້ນຕົ້ນບາງສ່ວນ ຫຼື ທັງໝົດແລ້ວພິພາກສາໃໝ່ດ້ວຍການເພີ່ມໂທດ ຫຼື ຫຼຸດຜ່ອນໂທດໃສ່ການກະທໍາຜິດຂອງຈໍາເລີຍທີ່ສານຂັ້ນຕົ້ນໄດ້ຕັດສິນມາແລ້ວ;

3) ຖ້າກໍລະນີຫາກເຫັນວ່າສານຂັ້ນຕົ້ນ ຍັງບໍ່ທັນໄດ້ພິຈາລະນາກ່ຽວກັບຄໍາຮ້ອງຂໍເລື່ອງໃດເລື່ອງໜຶ່ງ, ສານຂັ້ນອຸທອນກໍພິພາກສາລົບລ້າງຄໍາຕັດສິນຂອງສານຂັ້ນຕົ້ນແລ້ວສົ່ງຄະດີໄປໃຫ້ສານຂັ້ນຕົ້ນຄະນະໃໝ່ ຫຼື ຄະນະເກົ່າພິຈາລະນາຄືນໃໝ່ແລ້ວແຕ່ກໍລະນີ;

4) ຖ້າກໍລະນີຫາກເຫັນວ່າຈໍາເລີຍບໍ່ໄດ້ກະທໍາຜິດຕາມການສັ່ງຟ້ອງ ຫຼື ຍັງມີຂໍ້ສົງໄສວ່າຈໍາເລີຍໄດ້ກະທໍາຜິດ ຫຼື ບໍ່, ສານຂັ້ນອຸທອນກໍພິພາກສາລົບລ້າງຄໍາຕັດສິນຂອງສານຂັ້ນຕົ້ນແລ້ວພິພາກສາໃຫ້ຈໍາເລີຍພົ້ນຂໍ້ກ່າວຫາ.

ສ່ວນການປ່ຽນແປງ ຫຼື ລົບລ້າງຄໍາຕັດສິນຂອງສານຂັ້ນຕົ້ນຕາມຂໍ້ 2-4 ນັ້ນເນື່ອງມາຈາກສາເຫດ ເຊັ່ນ ການສືບສວນ-ສອບສວນ ຫຼື ການໄຕ່ສວນຄະດີໃນທີ່ປະຊຸມສານບໍ່ຮອບດ້ານ, ບໍ່ຄົບຖ້ວນ ຫຼື ບໍ່ພາວະວິໄສ, ຄໍາເຫັນຂອງສານບໍ່ສອດຄ່ອງກັບເຫດການຕົວຈິງຂອງຄະດີ, ການວາງໂທດບໍ່ສອດຄ່ອງກັບລັກສະນະ, ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທໍາຜິດ ແລະ ບຸກຄະລິກກະພາບຂອງຜູ້ກະທໍາຜິດ ຫຼື ສານຂັ້ນຕົ້ນໄດ້ລະເມີດລະບຽບການດໍາເນີນຄະດີອາຍາ ຫຼື ນໍາໃຊ້ກົດໝາຍອາຍາບໍ່ຖືກຕ້ອງເປັນຕົ້ນ (ມ 223 ກດຍ).

ນອກຈາກນັ້ນກົດໝາຍຍັງໄດ້ກຳນົດອີກວ່າ ສານຂັ້ນອຸທອນທີ່ໄດ້ພິພາກສາຄະດີແລ້ວຕ້ອງພິມຄຳພິພາກສາດັ່ງກ່າວໃຫ້ແລ້ວພາຍໃນກຳນົດສິບວັນ ນັບຕັ້ງແຕ່ມື້ທີ່ໄດ້ລົງຄຳພິພາກສາເປັນຕົ້ນໄປ. ຄຳພິພາກສາຂອງສານຂັ້ນອຸທອນຖືວ່າເປັນຄຳພິພາກສາຂັ້ນສຸດທ້າຍທາງດ້ານຄວາມເປັນຈິງ ຫຼື ເອີ້ນວ່າທາງດ້ານເນື້ອຄະດີ, ໃນກໍລະນີທີ່ຄູ່ຄວາມບໍ່ຂໍລົບລ້າງ ຫຼື ໄອຍະການບໍ່ຂໍຄັດຄ້ານຖືວ່າຄຳພິພາກສາດັ່ງກ່າວເປັນຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດ ແລະສານຕ້ອງສົ່ງຄຳພິພາກສາດັ່ງກ່າວພ້ອມດ້ວຍສຳນວນຄະດີໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕໍ່ໄປ.

ໃນກໍລະນີທີ່ສານຂັ້ນອຸທອນ ຫາກໄດ້ພິພາກສາລົບລ້າງຄຳຕັດສິນຂອງສານຂັ້ນຕົ້ນແລ້ວສົ່ງຄະດີໄປໃຫ້ສານຂັ້ນຕົ້ນຄະນະໃໝ່ ຫຼື ສົ່ງໃຫ້ຄະນະເກົ່າພິຈາລະນາຄືນໃໝ່ເນື່ອງມາຈາກຄະນະເກົ່າບໍ່ໄດ້ພິຈາລະນາຄຳຮ້ອງຂໍໃດໜຶ່ງນັ້ນຈຳເລີຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນ ແລະ ຫົວໜ້າອົງການໄອຍະການບໍ່ມີສິດຂໍລົບລ້າງ ຫຼື ສະເໜີຄັດຄ້ານໄດ້. ການທີ່ກົດໝາຍບໍ່ອະນຸຍາດໃຫ້ຄູ່ຄວາມຂໍລົບລ້າງ ຫຼື ສະເໜີຄັດຄ້ານກໍເພາະວ່າການສົ່ງຄະດີຄືນໃຫ້ສານຂັ້ນຕົ້ນ ບໍ່ວ່າຈະເປັນຄະນະເກົ່າ ຫຼື ຄະນະໃໝ່ເພື່ອໃຫ້ພິຈາລະນາຄືນໃໝ່ນັ້ນກໍຕາມ ຖືວ່າການດຳເນີນຄະດີນັ້ນຈະເປັນການເລີ່ມຕົ້ນຂະບວນການດຳເນີນຄະດີອາຍາຢູ່ສານເປັນຂັ້ນຕົ້ນຢູ່ຄືເກົ່າ, ຄູ່ຄວາມຍັງຈະມີສິດຂໍອຸທອນ ຫຼືຫົວໜ້າອົງການໄອຍະການຍັງຈະມີສິດສະເໜີຄັດຄ້ານຢູ່ຖ້າຫາກບໍ່ພໍໃຈຕໍ່ກັບຄຳຕັດສິນຂອງສານຂັ້ນຕົ້ນໃນພາຍຫຼັງ.

ໃນກໍລະນີສານຂັ້ນອຸທອນໄດ້ສົ່ງຄະດີຄືນໃຫ້ສານຂັ້ນຕົ້ນພິຈາລະນາຄືນໃໝ່ນັ້ນ, ສານຂັ້ນຕົ້ນກໍຕ້ອງໄດ້ພິຈາລະນາຕາມລະບຽບການທົ່ວໄປກ່ຽວກັບການດຳເນີນຄະດີອາຍາ ຢູ່ສານຂັ້ນຕົ້ນ ເຊັ່ນ ຈະລົງໂທດຈຳເລີຍໃນຂໍ້ຫາໃໝ່ຕື່ມອີກ ຫຼື ຈະເພີ່ມໂທດໃຫ້ຈຳເລີຍໜັກຂຶ້ນໄດ້ກໍຕໍ່ເມື່ອການສືບສວນ-ສອບສວນຄືນໃໝ່ນັ້ນ ຫາກພົບເຫັນເຫດການໃໝ່ທີ່ຢັ້ງຢືນວ່າຈຳເລີຍໄດ້ມີການກະທຳຜິດອັນໃໝ່ໂດຍມີຄຳສັ່ງຟ້ອງເພີ່ມເຕີມຂອງຫົວໜ້າອົງການໄອຍະການເທົ່ານັ້ນ (ມ 224 ກດຍ).

**ຕົວຢ່າງ : ຮ່າງຄຳພິພາກສາຂອງສານອາຍາຂັ້ນອຸທອນ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນພາກ.......... ເລກທີ......./ອທ.ອ

ຄະນະສານອາຍາຂັ້ນອຸທອນ ລົງວັນທີ....................

**ຄຳພິພາກສາ**

ຄະນະສານອາຍາຂອງສານປະຊາຊົນພາກ............ ປະກອບດ້ວຍ:

ທ່ານ..........................................................................ປະທານ

ທ່ານ..........................................................................ຄະນະ

ທ່ານ..........................................................................ຄະນະ

ນັ່ງພ້ອມດ້ວຍ ທ່ານ..........................................................................ຈ່າສານ

ຕໍ່ໜ້າທ່ານ............................ຜູ້ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນພາກ..................

ໄດ້ເປີດປະຊຸມສານຂຶ້ນໃນວັນທີ...............ເວລາ......ໂມງ......ນາທີ, ຢູ່ທີ່ຫ້ອງປະຊຸມສານຂອງສານປະຊາຊົນພາກ........ເພື່ອພິຈາລະນາຄະດີອາຍາເລກທີ...../ຂຕ.ອ, ລົງວັນທີ.................ຂອງສານປະຊາຊົນ.........................

**ລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ..............................................................ໂຈດ

1. ທ້າວ/ນາງ..................ອາຍຸ.....ປີ, ສັນຊາດ............, ອາຊີບ............., ປັດຈຸບັນຢູ່ບ້ານ............, ເມືອງ..................., ແຂວງ..................................................ໂຈດທາງແພ່ງ.

2. ທ້າວ/ນາງ.......................ອາຍຸ.......ປີ, ສັນຊາດ........, ອາຊີບ........., ປັດຈຸບັນຢູ່ບ້ານ............., ເມືອງ.................., ແຂວງ........................................................ຈຳເລີຍ.

**ຖືກຫາວ່າ :** .....................................

**ວັນທີຖືກກັກຕົວ :**..............................

**ສະຖານທີ່ກັກຕົວ :**.............................

**ສານ**

ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ອີງຕາມສິດ ແລະ ໜ້າທີ່ຂອງສານຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009.

ໄດ້ແຈ້ງຊື່ ແລະ ນາມສະກຸນຂອງຄະນະສານ, ໄອຍະການປະຊາຊົນ ແລະ ຈ່າສານໃຫ້ໂຈດທາງແພ່ງ ແລະ ຈຳເລີຍຊາບແລ້ວ.

ໄດ້ແຈ້ງສິດໃນການຄ້ານຕົວຄະນະສານໃຫ້ໂຈດທາງແພ່ງ ແລະ ຈຳເລີຍຊາບແລ້ວ.

ໄດ້ຟັງຄຳໃຫ້ການຂອງໂຈດທາງແພ່ງ ແລະຈຳເລີຍແລ້ວ.

ໄດ້ຟັງຄຳຖະແຫຼງຂອງຫົວໜ້າອົງການໄອຍະການປະຊາຊົນ.........ແລ້ວ.

ໄດ້ຟັງຄຳເຫັນສຸດທ້າຍຂອງຈຳເລີຍແລ້ວ.

## ເນື້ອຄະດີ

......................................................................................................................

..................................................................................................................................

..................................................................................................................................

## ຮູບຄະດີ

ເຫັນຕາມຄຳຕັດສິນ ສະບັບເລກທີ....../ຂຕ.ອ, ລົງວັນທີ.........................ຂອງສານປະຊາຊົນ..........ບອກວ່າ: ທ້າວ/ນາງ....................(ຈຳເລີຍ)ມີຄວາມຜິດທາງອາຍາໃນສະຖານ............ ລົງໂທດຕັດອິດສະລະພາບ ທ້າວ/ນາງ............................(ຈຳເລີຍ)........ປີ.........ເດືອນ ແຕ່ໃຫ້ປະຕິບັດຕົວຈິງ..........ປີ.........ເດືອນ ເຫຼືອນັ້ນພາກໄວ້ ແລະ ປັບໃໝ..................................ກີບ, ໃຫ້ທ້າວ/ນາງ.......................................................................................................... ໃຊ້ແທນເງິນຈຳນວນ.........................ກີບຄືນໃຫ້ແກ່ທ້າວ/ນາງ........................(ໂຈດທາງແພ່ງ).

ໃຫ້ຈຳເລີຍເສຍຄ່າທຳນຽມສານຈຳນວນ 30,000 ກີບ.

ເຫັນໃບຮັບການຈອງຂໍອຸທອນສະບັບເລກທີ................/ສປຊ........,ລົງວັນທີ.............ຂອງທ້າວ/ນາງ ..........................................................................(ຕາງໜ້າ..............).

ເຫັນຄຳຮ້ອງຂໍອຸທອນສະບັບຂາເຂົ້າເລກທີ............,ລົງວັນທີ.................ຂອງທ້າວ/ນາງ.......... (..........) ອ້າງວ່າ: ຂໍໃຫ້ສານພິຈາລະນາໃຫ້ຈຳເລີຍ..........................................

ເຫັນຄຳຖະແຫຼງ ສະບັບເລກທີ............./ອປພ..........., ລົງວັນທີ.....................ຂອງຫົວໜ້າອົງການໄອຍະການປະຊາຊົນພາກ............ມີຄຳເຫັນວ່າ:..................ນັ້ນບໍ່ຖືກຕ້ອງຕາມກົດໝາຍ ເນື່ອງຈາກວ່າ..................................................

## ວິນິດໄສ

......................................................................................................................

..................................................................................................................................

..................................................................................................................................

ເຫັນວ່າ: ຄຳຖະແຫຼງ ສະບັບເລກທີ............./ອປພ.........., ລົງວັນທີ......................ຂອງຫົວໜ້າອົງການໄອຍະການປະຊາຊົນພາກ........ມີຄຳເຫັນວ່າ: ................................................

ເຫັນວ່າ: ຄຳຕັດສິນ ສະບັບເລກທີ........./ຂຕ.ອ, ລົງວັນທີ................ຂອງສານປະຊາຊົນ.............. ເປັນຄຳຕັດສິນທີ່.................................................................

ເຫັນວ່າ: ທ້າວ/ນາງ.................(........)ເປັນຜູ້ຮ້ອງຂໍອຸທອນຈຶ່ງໃຫ້ຜູ່ກ່ຽວເສັຍຄ່າຂໍອຸທອນຈຳນວນ 30,000 ກີບ.

ເຫັນຕາມ ມາດຕາ.......ແລະ ມາດຕາ....ຂອງກົດໝາຍວ່າດ້ວຍສານປະຊາຊົນສະບັບປັບ ປຸງປີ 2009.

ເຫັນຕາມ ມາດຕາ.......ວັກ.....ແລະ ມາດຕາ......ວັກ.....ຂອງກົດໝາຍອາຍາ ສະບັບປັບ ປຸງປີ 2005.

ເຫັນຕາມ ມາດຕາ.....ແລະ ມາດຕາ....ຂອງກົດໝາຍວ່າດ້ວຍ.......ສະບັບປັບປຸງ ປີ..........

ເຫັນຕາມ ມາດຕາ......., ມາດຕາ......, ມາດຕາ......, ມາດຕາ......ແລະ ມາດຕາ..........ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

ເຫັນຕາມ ມາດຕາ.....ແລະ ມາດຕາ.....ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ ສະບັບປັບປຸງປີ 2006.

**ດ້ວຍເຫດນີ້**

ຄະນະສານອາຍາຂອງສານປະຊາຊົນພາກ...........ຈຶ່ງໄດ້ພິພາກສາຄະດີເລື່ອງນີ້ຕໍ່ໜ້າປະຊາຊົນໃນສະຖານອາຍາເປັນຂັ້ນອຸທອນ ໂດຍຊ້ອງໜ້າຜູ່ຕາງໜ້າຫົວໜ້າອົງການໄອຍະການປະຊາຊົນພາກ..............................................

**ຕາມຮູບຄະດີ:** ຮັບເອົາຄຳຮ້ອງຂໍອຸທອນ ສະບັບຂາເຂົ້າເລກທີ...................., ລົງວັນທີ.............................ຂອງ ທ້າວ/ນາງ....................... (.................) ມາພິຈາລະນາ.

**ຕາມເນື້ອຄະດີ:** ຄຳຮ້ອງຂໍອຸທອນດັ່ງກ່າວ..................(ຕ້ອງບອກວ່າມີເຫດຜົນ ຫຼືບໍ່ມີເຫດຜົນ)

**ພິພາກສາ:**...........................................................................................

- ໃຫ້ທ້າວ/ນາງ..........................................ເສັຍຄ່າທຳນຽມສານຈຳນວນ 30,000 ກີບ.

ໄດ້ແຈ້ງໃຫ້ໂຈດ, ໂຈດທາງແພ່ງ ແລະ ຈຳເລີຍຊາບແລ້ວຖ້າຝ່າຍໃດບໍ່ພໍໃຈຕໍ່ຄຳພິພາກສາສະບັບນີ້ມີສິດສະເໜີຄັດຄ້ານ ຫຼື ຂໍລຶບລ້າງພາຍໃນກຳນົດສີ່ສິບຫ້າວັນນັບແຕ່ວັນລົງຄຳພິພາກສານີ້ເປັນຕົ້ນໄປ. ສຳລັບຜູ່ທີ່ຖືກພິພາກສາລັບຫຼັງນັ້ນ ແມ່ນມີສິດສະເໜີຄັດຄ້ານໄດ້ພາຍໃນກຳນົດສີ່ສິບຫ້າວັນນັບແຕ່ວັນຮັບຊາບຄຳພິພາກສານີ້ເປັນຕົ້ນໄປ.

**ປະທານ** **ຈ່າສານ**

## 4. ການປົກປ້ອງສິດຂອງຈຳເລີຍໃນສານຂັ້ນອຸທອນ

ການພິຈາລະນາຄະດີໃນຂັ້ນອຸທອນນີ້ ຈຳເລີຍກໍຈະໄດ້ຮັບການປົກປ້ອງຈາກທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນຄືກັນກັບການດຳເນີນຄະດີອາຍາໃນຂັ້ນຕອນອື່ນເຊັ່ນດຽວກັນເຊັ່ນມີສິດມີທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນໃນການຕໍ່ສູ້ຄະດີ ແລະ ໃຫ້ການຊ່ວຍເຫຼືອທາງດ້ານ

ກົດໝາຍ, ມີສິດປະກັນຕົວ ຫຼື ໃຫ້ທະນາຍຄວາມປະກັນຕົວ ຫຼື ປ່ອຍຕົວພາງໃຫ້ຖ້າຫາກວ່າຕົນເອງຍັງຖືກກັກຂັງພາງຢູ່. ນອກຈາກນັ້ນ ຍັງມີສິດຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງຕາມກົດໝາຍຂອງເຈົ້າໜ້າທີ່ທີ່ຮັບຜິດຊອບຄະດີ, ສະເໜີຄ້ານຕົວຄະນະສານ, ຈ່າສານ, ຫົວໜ້າອົງການໄອຍະການ ຫຼື ຜູ່ຕາງໜ້າຫົວໜ້າອົງການໄອຍະການ, ຜູ່ຊ່ຽວຊານ, ຜູ່ຊຳນານງານ ຫຼື ຜູ່ແປພາສາ ແລະ ໄດ້ຮັບການປົກປ້ອງສິດອື່ນໆຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VII
# ການພິຈາລະນາຄະດີເປັນຂັ້ນລົບລ້າງ

## 1. ຄວາມຮູ້ທົ່ວໄປກ່ຽວກັບສານຂັ້ນລົບລ້າງ

ສານຂັ້ນລົບລ້າງ ເປັນສານຂັ້ນສຸດທ້າຍໃນລະບົບການພິຈາລະນາຄະດີຂອງສານຢູ່ ສປປ ລາວ. ກ່ອນການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ອຳນາດໃນການດຳເນີນຄະດີເປັນຂັ້ນລົບລ້າງ ແລະ ສຸດທ້າຍມີແຕ່ສານປະຊາຊົນສູງສຸດເທົ່ານັ້ນ (ມ 95 ກດຍ, 2004). ສານຂັ້ນລົບລ້າງໃນເວລານັ້ນມີພຽງແຫ່ງດຽວ ແລະ ແມ່ນຄະນະສານຂອງສານປະຊາຊົນສູງສຸດທີ່ຕັ້ງຢູ່ນະຄອນຫຼວງວຽງຈັນ ມີບົດບາດໃນການພິຈາລະນາພິພາກສາຄະດີເປັນຂັ້ນລົບລ້າງ. ທຸກໆຄຳຮ້ອງຂໍລົບລ້າງຄຳພິພາກສາຂອງສານຂັ້ນລຸ່ມ (ສານຂັ້ນລຸ່ມໃນທີ່ນີ້: ສານແຂວງທີ່ພິພາກສາເປັນຂັ້ນອຸທອນຄະດີຈາກສານເມືອງ ແລະ ສານອຸທອນທີ່ພິພາກສາເປັນຂັ້ນອຸທອນຄະດີຈາກສານແຂວງມາແລ້ວ) ຕ້ອງສົ່ງໃຫ້ສານລົບລ້າງຂອງສານປະຊາຊົນສູງສຸດພິຈາລະນາ. ປັດຈຸບັນ ອີງຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ 2009 ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ ປີ 2012, ສານປະຊາຊົນພາກນອກຈາກຈະເປັນສານຂັ້ນອຸທອນຍັງມີອຳນາດໃນການພິພາກສາຄະດີເປັນຂັ້ນລົບລ້າງ ທຸກຄະດີທີ່ຖືກຮ້ອງຂໍລົບລ້າງຈາກສານປະຊາຊົນແຂວງນະຄອນທີ່ພິພາກສາເປັນຂັ້ນອຸທອນມາແລ້ວ. ເນື່ອງຈາກສານຂັ້ນລົບລ້າງເປັນສານຂັ້ນສຸດທ້າຍໃນການພິພາກສາຄະດີ, ການພິຈາລະນາຄະດີຂອງສານຂັ້ນລົບລ້າງກໍມີລັກສະນະແຕກຕ່າງຈາກສານຂັ້ນຕ່າງໆໃນລະບົບສານຢູ່ ສປປ ລາວ ຄືພິພາກສາແຕ່ທາງດ້ານກົດໝາຍເທົ່ານັ້ນ. ບົນພື້ນຖານດັ່ງກ່າວນີ້ຈຶ່ງສາມາດຮັບປະກັນຄວາມເປັນເອກະພາບໃນການປະຕິບັດກົດໝາຍ ແລະ ກາຍເປັນປະເພນີສານ ທີ່ສານຂັ້ນລຸ່ມນຳເອົາໄປເປັນບ່ອນອີງໃນການຕັດສິນ, ພິພາກສາຄະດີໃນກໍລະນີດຽວກັນໃຫ້ເປັນເອກະພາບໃນຂອບເຂດທົ່ວປະເທດ.

## 2. ຂອບເຂດຂອງການພິພາກສາຄະດີຢູ່ສານຂັ້ນລົບລ້າງ

ການພິພາກສາຄະດີຢູ່ສານຂັ້ນລົບລ້າງ ຖືເປັນຫຼັກການສະເພາະຕາມທີ່ໄດ້ກຳນົດໄວ້ໃນກົດໝາຍຄື ສານຂັ້ນລົບລ້າງມີໜ້າທີ່ພຽງແຕ່ພິຈາລະນາບັນຫາທີ່ໄດ້ຍົກຂຶ້ນໃນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ "ທາງດ້ານກົດໝາຍ" ເທົ່ານັ້ນ ແລະ ຈະບໍ່ໄດ້ທຳການໄຕ່ສວນກ່ຽວກັບ "ເຫດການ" ຕ່າງໆຂອງຄະດີນັ້ນອີກ ຊຶ່ງມີຄວາມໝາຍວ່າສານຈະພິຈາລະນາແຕ່ຮູບຄະດີ, ບໍ່ພິຈາລະນາປ່ຽນແປງເນື້ອໃນຂອງຄະດີ, ແຕ່ສານຈະພິຈາລະນາຄວາມຖືກຕ້ອງຂອງການນຳໃຊ້ກົດໝາຍຂອງສານຂັ້ນອຸທອນ ທີ່ໄດ້ພິພາກສາເປັນຂັ້ນອຸທອນແລ້ວນັ້ນ ແລະ ກວດກາການປະຕິບັດລະບຽບການດຳເນີນຄະດີຂອງສານຂັ້ນລຸ່ມດັ່ງນີ້ເປັນຕົ້ນ.

ໃນກໍລະນີທີ່ຄະດີຫາກມີຈຳເລີຍຖືກພິພາກສາລົງໂທດຫຼາຍຄົນ ເຖິງວ່າຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານນັ້ນຈະມີແຕ່ຈຳເລີຍຜູ້ໃດຜູ້ໜຶ່ງ ຫຼື ຈຳນວນໜຶ່ງເທົ່ານັ້ນກໍຕາມ ສານຂັ້ນລົບລ້າງກໍຕ້ອງພິຈາລະນາຄະດີກ່ຽວກັບຈຳເລີຍທີ່ຖືກພິພາກສາລົງໂທດທັງໝົດໃນຄະດີດຽວກັນນີ້ ເພື່ອເຮັດໃຫ້ການພິຈາລະນາຄະດີເປັນໄປຕາມຂະບວນການຍຸຕິທຳຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ.

ເຖິງຢ່າງໃດກໍຕາມ, ຖ້າຫາກສານຂັ້ນລົບລ້າງ ເຫັນວ່າສານຂັ້ນອຸທອນໄດ້ພິພາກສາໃຫ້ຈຳເລີຍພົ້ນຂໍ້ກ່າວຫາໂດຍບໍ່ຖືກຕ້ອງ ຫຼື ຫາກເຫັນວ່າການວາງໂທດໃສ່ຈຳເລີຍບໍ່ສອດຄ່ອງກັບການກະທຳຜິດຕົວຈິງນັ້ນສານຂັ້ນລົບລ້າງຕ້ອງລົບລ້າງຄຳພິພາກສາຂອງສານອຸທອນທີ່ກ່ຽວຂ້ອງແລ້ວສົ່ງສຳນວນຄະດີໃຫ້ສານຂັ້ນອຸທອນຄະນະໃໝ່ເພື່ອພິຈາລະນາ (ມ 233 ກດຍ). ສັງລວມແລ້ວ, ເຖິງວ່າສານຂັ້ນລົບລ້າງຈະມີບົດບາດພິພາກສາແຕ່ທາງດ້ານກົດໝາຍກໍຕາມ ແຕ່ບໍ່ໄດ້ໝາຍຄວາມວ່າສານຂັ້ນລົບລ້າງຈະບໍ່ກວດກາເນື້ອໃນເຫດການຂອງຄະດີ ຊຶ່ງເປັນບັນຫາທີ່ສຳຄັນຕໍ່ການລົງຄຳວິນິດໄສໃຫ້ຖືກຕ້ອງຕາມກົດໝາຍ ແລະ ເຫດການຕົວຈິງຂອງຄະດີ. ໃນກໍລະນີດັ່ງກ່າວນີ້ ສານຂັ້ນລົບລ້າງບໍ່ສາມາດເພີ່ມເຕີມ, ບໍ່ໄຕ່ສວນເພີ່ມ ຫຼື ດັດແປງເນື້ອໃນໃດໆຂອງເນື້ອຄະດີທີ່ສານຂັ້ນອຸທອນໄດ້ພິພາກສາມາແລ້ວ, ແຕ່ຕ້ອງໄດ້ສຶກສາເນື້ອຄະດີໃຫ້ມີຄວາມໝັ້ນໃຈເພື່ອຈະລົງຄຳວິນິດໄສໃຫ້ມີຄວາມຖືກຕ້ອງຕາມກົດໝາຍເທົ່ານັ້ນ ຫຼື ເວົ້າອີກຢ່າງໜຶ່ງວ່າສານຂັ້ນລົບລ້າງບໍ່ພິພາກສາເນື້ອຄະດີຄືນອີກ. ເພາະສະນັ້ນ ຢູ່ໃນຄຳພິພາກສາຂອງສານຂັ້ນລົບລ້າງຈຶ່ງປະກອບດ້ວຍພາກເນື້ອຄະດີ ແລະ ຮູບຄະດີ.

### 3. ຫຼັກການພິຈາລະນາຄະດີຂອງສານຂັ້ນລົບລ້າງ

ເພື່ອຮັບປະກັນເຮັດໃຫ້ການພິພາກສາຄະດີຂອງສານຂັ້ນລົບລ້າງມີຄວາມສັກສິດທາງດ້ານກົດໝາຍ ແລະ ຮັບປະກັນຄວາມຍຸຕິທຳຂອງສັງຄົມນັ້ນ, ການພິຈາລະນາຄະດີຂອງສານຂັ້ນລົບລ້າງຕ້ອງຢູ່ບົນພື້ນຖານຫຼັກການທີ່ວ່າ:

– ສານຂັ້ນລົບລ້າງຕ້ອງເຄົາລົບຫຼັກການທີ່ສານຕັດສິນຕາມເນື້ອຄະດີໂດຍສານສອງຂັ້ນ;

– ສານຂັ້ນລົບລ້າງພິຈາລະນາພິພາກສາຄະດີຕາມສຳນວນຄະດີບໍ່ທຳການສອບສວນ ຫຼື ໄຕ່ສວນຕື່ມອີກ;

– ສານຂັ້ນລົບລ້າງພິຈາລະນາຄຳຮ້ອງຂໍລົບລ້າງກ່ຽວກັບບັນຫາທາງດ້ານກົດໝາຍເທົ່ານັ້ນ.

### 3.1. ສານຂັ້ນລົບລ້າງຕ້ອງເຄົາລົບຫຼັກການທີ່ສານຕັດສິນຕາມເນື້ອຄະດີ ໂດຍ ສານສອງຂັ້ນ

ການພິຈາລະນາຕັດສິນໂດຍສານສອງຂັ້ນໝາຍເຖິງສານຂັ້ນຕົ້ນຕັດສິນຕາມເນື້ອຄະດີ ແລະ ສານຂັ້ນອຸທອນພິພາກສາຕາມເນື້ອຄະດີຕື່ມອີກເປັນຂັ້ນທີສອງ ຊຶ່ງຖືເປັນຄໍາພິພາກສາສຸດທ້າຍທາງດ້ານຂໍ້ມູນຫຼັກຖານທີ່ມີໃນສໍານວນຄະດີ ໝາຍຄວາມວ່າສານຂັ້ນອຸທອນພິພາກສາກວດກາສິ່ງທີ່ສານຂັ້ນຕົ້ນໄດ້ພິຈາລະນາຕັດສິນຜ່ານມາແລ້ວດ້ວຍການຊັ່ງຊາ ຕີລາຄາຫຼັກຖານກໍານົດເຫດການຂອງຄະດີແລ້ວນໍາໃຊ້ມາດຕາກົດໝາຍທີ່ກ່ຽວຂ້ອງເຂົ້າໃສ່ໃນການແກ້ໄຂຄະດີ ແຕ່ສານຂັ້ນອຸທອນບໍ່ມີສິດອໍານາດພິຈາລະນາຄໍາຮ້ອງຟ້ອງຄືນໃໝ່ທີ່ປ່ຽນແປງເປົ້າໝາຍຄໍາສັ່ງຟ້ອງ ແລະ ຄໍາຮ້ອງຟ້ອງໃນເມື່ອກ່ອນນັ້ນ ຊຶ່ງສານຂັ້ນຕົ້ນຍັງບໍ່ທັນໄດ້ພິຈາລະນາຕັດສິນເທື່ອ ເມື່ອສານຂັ້ນອຸທອນໄດ້ກວດກາເຫັນວ່າ ສານຂັ້ນຕົ້ນຍັງບໍ່ທັນໄດ້ພິຈາລະນາຄໍາຮ້ອງຂໍບັນຫາໃດບັນຫາໜຶ່ງຂອງຄູ່ຄວາມ ຫຼື ຄໍາສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການຂັ້ນດັ່ງກ່າວຍັງບໍ່ຄົບຖ້ວນ ສານຂັ້ນອຸທອນກໍລົງຄໍາພິພາກ ສາລົບລ້າງຄໍາຕັດສິນຂອງສານຂັ້ນຕົ້ນ ແລ້ວສົ່ງສໍານວນຄະດີໃຫ້ສານຂັ້ນຕົ້ນພິຈາລະນາຄືນໃໝ່ຕາມລະບຽບກົດໝາຍ, ຖ້າຝ່າຍໃດບໍ່ພໍໃຈ ຈຶ່ງຮ້ອງຂໍອຸທອນມາຕື່ມອີກ (ມ 222 ກດຍ) ຊຶ່ງໃນນີ້ຄູ່ຄວາມມີສິດສະເໜີຫຼັກຖານໃໝ່ທີ່ພົວພັນເຖິງຂໍ້ມູນຫຼັກຖານທີ່ມີຢູ່ໃນສໍານວນຄະດີ. ຫຼັກການທີ່ສານພິຈາລະນາຕັດສິນຕາມເນື້ອຄະດີໂດຍສານສອງຂັ້ນນັ້ນຕ້ອງໄດ້ເຄົາລົບຢ່າງເຂັ້ມງວດເຊັ່ນ ຫົວໜ້າອົງການໄອຍະການໄດ້ສັ່ງຟ້ອງໃນຂໍ້ກ່າວຫາວ່າລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸປະຕິເຫດ ແລະ ຢູ່ສານຂັ້ນຕົ້ນກໍໄດ້ພິຈາລະນາຕັດສິນຕາມການສັ່ງຟ້ອງຂອງຫົວໜ້າອົງການໄອຍະການ ແຕ່ມາຮອດສານຂັ້ນອຸທອນໄດ້ກວດກາເຫັນວ່າ ຂໍ້ກ່າວຫາຕາມຄໍາສັ່ງຟ້ອງດັ່ງກ່າວໄດ້ພິຈາລະນາວ່າເປັນການເຮັດໃຫ້ຜູ່ອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງ, ສານຂັ້ນອຸທອນຈະພິຈາລະນາຂໍ້ກ່າວຫາວ່າເຮັດໃຫ້ຜູ່ອື່ນໄດ້ຮັບບາດເຈັບດ້ວຍຄວາມບໍ່ລະມັດລະວັງເລີຍແມ່ນບໍ່ໄດ້ ຊຶ່ງຂັດກັບມາດຕາ 220 ວັກ 2 ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ. ສະນັ້ນ, ສານຂັ້ນອຸທອນທີ່ມີສິດອໍານາດພິພາກສາສົ່ງຄືນໃຫ້ສານຂັ້ນຕົ້ນພິຈາລະນາຕັດສິນຄືນໃໝ່ຕາມກົດໝາຍ.

ສ່ວນສານຂັ້ນລົບລ້າງ ແມ່ນປະຕິບັດຫຼັກການກວດກາທາງດ້ານກົດໝາຍຕ້ອງເຄົາລົບຫຼັກການທີ່ວ່າສານພິຈາລະນາຕັດສິນຕາມເນື້ອຄະດີໂດຍສານສອງຂັ້ນ, ຖ້າສານຂັ້ນລົບລ້າງພິຈາລະນາພິພາກສາຕາມເນື້ອຄະດີຕື່ມອີກເປັນຄັ້ງທີສາມກໍເປັນການລະເມີດຫຼັກການທີ່ສານຂັ້ນລົບລ້າງພິຈາລະນາພິພາກສາກວດກາທາງດ້ານກົດໝາຍ ແລະ ທັງເປັນການລະເມີດຫຼັກການສານພິຈາລະນາຕັດສິນຕາມເນື້ອຄະດີໂດຍສານສອງຂັ້ນອີກດ້ວຍ. ສານຂັ້ນລົບ

ລ້າງຈະບໍ່ເຮັດໜ້າທີ່ໃນການຊັ່ງຊາ ຕີລາຄາຫຼັກຖານ ມີແຕ່ກວດກາ ແລະ ຊັ່ງຊາ ຕີລາຄາຫຼັກຖານໂດຍສານຂັ້ນຕົ້ນ ແລະ ສານຂັ້ນອຸທອນເທົ່ານັ້ນ[41] .

### 3.2. ສານຂັ້ນລົບລ້າງພິຈາລະນາພິພາກສາຄະດີຕາມສຳນວນຄະດີບໍ່ທຳການສອບສວນ-ໄຕ່ສວນຕື່ມອີກ

ໃນການດຳເນີນຄະດີອາຍາສານຂັ້ນລົບລ້າງພິພາກສາຕາມສຳນວນຄະດີໂດຍບໍ່ທຳການສອບສວນ ແລະ ໄຕ່ສວນຕື່ມອີກ. ຕາມຫຼັກການແລ້ວ ສານຂັ້ນລົບລ້າງຕ້ອງກວດກາພິຈາລະນາຂໍ້ມູນຫຼັກຖານທັງໝົດຢູ່ໃນສຳນວນຄະດີທີ່ໄດ້ຜ່ານການພິຈາລະນາຂອງສານຂັ້ນຕົ້ນ ແລະ ຂັ້ນອຸທອນມາແລ້ວ. ພວກເຮົາຈະເຫັນໄດ້ວ່າຜ່ານມາໄດ້ມີການຕັດສິນຕາມເນື້ອຄະດີໂດຍສານສອງຂັ້ນແລ້ວ ຖ້າຫາກສານຂັ້ນລົບລ້າງທຳການສອບສວນ ແລະ ໄຕ່ສ່ວນຕື່ມອີກກໍເປັນການພິພາກສາເນື້ອຄະດີຂັ້ນທີສາມ, ສານຂັ້ນລົບລ້າງພິພາກສາກວດກາສິ່ງທີ່ສານຂັ້ນຕົ້ນ ແລະ ຂັ້ນອຸທອນໄດ້ຕັດສິນພິພາກສາເນື້ອຄະດີຜ່ານມານັ້ນຕ້ອງຖືກຕາມກົດໝາຍແລ້ວ ຫຼື ບໍ່, ຖ້າຫາກສານຂັ້ນລົບລ້າງທຳການສອບສວນ ແລະ ໄຕ່ສວນຊອກຫາຂໍ້ມູນຫຼັກຖານໃໝ່ໂດຍບໍ່ທັນໄດ້ຜ່ານການພິຈາລະນາຂອງສານເນື້ອຄະດີກໍເປັນການລະເມີດຫຼັກການທີ່ສານຂັ້ນລົບລ້າງພິພາກສາກວດກາທາງດ້ານກົດໝາຍແຕ່ໃນກົດໝາຍໄດ້ຂຽນວ່າສານຂັ້ນລົບລ້າງຈະຮຽກຄູ່ຄວາມເຂົ້າມາຮ່ວມໃນການດຳເນີນຄະດີຢູ່ສານຂັ້ນລົບລ້າງ ຫຼື ລົງກວດກາເຫດການຕົວຈິງຂອງຄະດີກໍໄດ້ນັ້ນໝາຍຄວາມວ່າສານລົງກວດກາຕາມເຫດການຂອງຄະດີ, ຕາມຂໍ້ມູນຫຼັກຖານອັນເກົ່າ. ເພື່ອຄວາມເຂົ້າໃຈໃຫ້ຖືກຕ້ອງນັ້ນ, ຕາມຄວາມເປັນຈິງແລ້ວ ບໍ່ແມ່ນທຳການສອບສວນເອົາຫຼັກຖານໃໝ່ ເພາະສານຂັ້ນລົບລ້າງຕ້ອງພິຈາລະນາຕາມຂໍ້ມູນຫຼັກຖານທີ່ສານສອງຂັ້ນໄດ້ພິພາກສາຜ່ານມາທີ່ມີຢູ່ໃນສຳນວນຄະດີເທົ່ານັ້ນ. ຖ້າຫາກເຫັນວ່າຂໍ້ມູນຫຼັກຖານບໍ່ຄົບຖ້ວນຊຶ່ງເປັນສາເຫດໃຫ້ສານຂັ້ນລົບລ້າງບໍ່ສາມາດກວດກາຄຳພິພາກສາຂອງສານຂັ້ນອຸທອນໄດ້ ສານຂັ້ນລົບລ້າງກໍຕ້ອງພິພາກສາສົ່ງສຳນວນຄະດີໃຫ້ສານຂັ້ນອຸທອນພິຈາລະນາຄະດີຄືນໃໝ່ຕາມກົດໝາຍ (ມ 233 ວັກ 3 ກດຍ).

### 3.3. ສານຂັ້ນລົບລ້າງພິຈາລະນາຄຳຮ້ອງຂໍລົບລ້າງກ່ຽວກັບບັນຫາທາງດ້ານກົດໝາຍເທົ່ານັ້ນ

ຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານມີຄວາມສຳຄັນຫຼາຍທີ່ສຸດ ເພາະສານຂັ້ນລົບລ້າງຈະພິຈາລະນາຄະດີຢູ່ໃນຂອບເຂດຂອງຄຳຮ້ອງຂໍລົບລ້າງຂອງຄູ່ຄວາມ ຫຼື ຄຳສະເໜີຄັດຄ້ານຂອງໄອຍະການ ເມື່ອສານຂັ້ນອຸທອນໄດ້ພິພາກສາຄະດີແລ້ວ ຄູ່ຄວາມຝ່າຍໃດ

---

[41] ຜາຍ ອຸລາ, ສານປະຊາຊົນສູງສຸດ ພິພາກສາທາງດ້ານກົດໝາຍເທົ່ານັ້ນ ( ປີ 2010), ໜ້າ 50

ຝ່າຍໜຶ່ງ ອາດບໍ່ພໍໃຈຕໍ່ຄຳພິພາກສາທັງໝົດ ຫຼື ບໍ່ພໍໃຈໃນສະເພາະພາກສ່ວນໃດສ່ວນໜຶ່ງເທົ່ານັ້ນ ສານຂັ້ນລົບລ້າງກໍຈະພິຈາລະນາຄຳຮ້ອງຂໍລົບລ້າງຂອງຄູ່ຄວາມ ແລະ ຄຳສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການ ເວັ້ນເສຍແຕ່ກໍລະນີທີ່ກົດໝາຍໄດ້ກຳນົດເອົາໄວ້ສານຕ້ອງໄດ້ພິຈາລະນາຄະດີຄືນໃໝ່ທັງໝົດ ເຖິງວ່າຈະມີຜູ້ຮ້ອງຂໍລົບລ້າງແຕ່ຜູ້ດຽວກໍຕາມ (ມ 233 ວັກ 2 ກດຍ).

ຄຳຮ້ອງຂໍລົບລ້າງ ແລະ ຄຳສະເໜີຄັດຄ້ານຕ້ອງສະເໜີແຕ່ບັນຫາທາງດ້ານກົດໝາຍເທົ່ານັ້ນ(ມ 233 ວັກ 1 ກດຍ) ໝາຍຄວາມວ່າສານຂັ້ນລົບລ້າງມີໜ້າທີ່ພິຈາລະນາບັນຫາທີ່ຍົກຂຶ້ນໃນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານ ທາງດ້ານກົດໝາຍເທົ່ານັ້ນ ໃນທີ່ນີ້ໝາຍຄວາມວ່າ ສານຂັ້ນລົບລ້າງຈະບໍ່ພິຈາລະນາຄຳຮ້ອງຂໍລົບລ້າງທາງດ້ານເນື້ອຄະດີ. ຊຶ່ງບັນຫາດັ່ງກ່າວນີ້ຍັງເປັນທີ່ຖົກຖຽງກັນຢູ່ເນື່ອງຈາກຢູ່ໃນສະພາວະຄວາມເປັນຈິງແລ້ວຄຳຮ້ອງຂໍລົບລ້າງຍັງເປັນຂໍ້ທາງເນື້ອຄະດີຢູ່ເພາະຍັງເປັນການເລົ່າເຫດ ການຕົວຈິງຂອງຄະດີພຽງແຕ່ບໍ່ໄດ້ປັບເຂົ້າກົດໝາຍຢ່າງຄົບຖ້ວນ. ສ່ວນທາງດ້ານກົດໝາຍແມ່ນການນຳເອົາຂໍ້ກົດໝາຍມາວາງໃສ່ເຫດການຂອງຄະດີໃຫ້ເປັນຄຳຕັດສິນຂອງສານຊຶ່ງຂໍ້ທາງກົດໝາຍນັ້ນຜູ້ຮ້ອງຂໍລົບລ້າງຕ້ອງອ້າງເຫດຜົນວ່າສານຂັ້ນອຸທອນພິພາກສາບໍ່ຖືກຕ້ອງຕາມຂໍ້ໃດ, ວັກໃດຂອງມາດຕາກົດໝາຍທີ່ກ່ຽວຂ້ອງຢູ່ໃນຂອບເຂດສິດໃນການພິຈາລະນາຄະດີຂອງສານຂັ້ນລົບລ້າງຕາມທີ່ໄດ້ກຳນົດໄວ້ໃນມາດຕາ 232, 233 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ເນື້ອໃນຂອງຄຳຮ້ອງຂໍລົບລ້າງຕ້ອງອ້າງເຫດຜົນການລະເມີດກົດໝາຍໃຫ້ຈະແຈ້ງເພື່ອໃຫ້ສານຂັ້ນລົບລ້າງລົບລ້າງພິຈາລະນາ.

ສຳລັບກົດໝາຍເນື້ອໃນ ແລະ ເນື້ອຄະດີກໍຕ້ອງໃຫ້ມີໃນຄຳພິພາກສາສະເໜີເພາະສານສອງຂັ້ນທີ່ໄດ້ພິຈາລະນາຜ່ານມາແລ້ວນັ້ນກໍຕ້ອງອີງໃສ່ຂໍ້ໃດຂໍ້ໜຶ່ງຂອງກົດໝາຍເວັ້ນເສຍແຕ່ໃນກໍລະນີທີ່ສານບໍ່ຮັບເອົາຄຳຮ້ອງຂໍລົບລ້າງມາພິຈາລະນາ ຫຼື ສານບໍ່ມີສິດອຳນາດໃນການຕັດສິນ ຫຼື ສານລ່ວງເກີນສິດອຳນາດເຫຼົ່ານີ້ເປັນຕົ້ນ[42]. ເຖິງຢ່າງໃດກໍຕາມໃນກໍລະນີທີ່ຄຳຮ້ອງຂໍລົບລ້າງມີທັງຂໍ້ດ້ານເນື້ອໃນແລະຂໍ້ດ້ານກົດໝາຍນັ້ນສານຂັ້ນລົບລ້າງກໍຈະເລືອກເອົາຂໍ້ດ້ານກົດໝາຍມາພິຈາລະນາເນື່ອງຈາກກົດໝາຍໄດ້ກຳນົດເປັນຫຼັກການວ່າສານຂັ້ນລົບລ້າງຈະພິຈາລະນາແຕ່ທາງດ້ານກົດໝາຍເທົ່ານັ້ນ.

[42]ພາຍ ອຸລາ, ສານປະຊາຊົນສູງສຸດ ພິພາກສາທາງດ້ານກົດໝາຍເທົ່ານັ້ນ, (ອ້າງແລ້ວ) ໜ້າ 84 - 85

## 4. ການຂໍລົບລ້າງ ຫຼື ການສະເໜີຄັດຄ້ານ

ການຮ້ອງຂໍລົບລ້າງ ຫຼື ການສະເໜີຄັດຄ້ານເປັນສິດຂອງຄູ່ຄວາມໃນຄະດີ ແລະ ຫົວໜ້າອົງການໄອຍະການ ໃນເມື່ອບໍ່ພໍໃຈຕໍ່ຄຳພິພາກສາ ຫຼື ຄຳຕົກລົງຂອງສານຂັ້ນອຸທອນ ຈຳເລີຍ, ໂຈດທາງແພ່ງ, ຜູ່ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນມີສິດຂໍລົບລ້າງ ຫຼື ຫົວໜ້າອົງການໄອຍະການສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາຂັ້ນອຸທອນຕໍ່ສານຂັ້ນລົບລ້າງເພື່ອກວດກາຄວາມຖືກຕ້ອງທາງດ້ານກົດໝາຍ. ສານຂັ້ນລົບລ້າງຈະບໍ່ມີສິດພິຈາລະນາຄະດີໄດ້ໂດຍປາສະຈາກຄຳຮ້ອງຂໍລົບລ້າງຂອງຈຳເລີຍ, ໂຈດທາງແພ່ງ, ຜູ່ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ່ປົກປ້ອງອື່ນ ຫຼື ຄຳສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການ.

ເຖິງຢ່າງໃດກໍຕາມ, ການຍື່ນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການກໍຕ້ອງຢູ່ໃນກຳນົດເວລາຕາມກົດໝາຍ ຄື ຈຳເລີຍ, ໂຈດທາງແພ່ງ, ຜູ່ຮັບຜິດຊອບທາງແພ່ງ, ທະນາຍຄວາມ, ຜູ່ປົກປ້ອງອື່ນມີສິດຂໍລົບລ້າງ ຫຼື ຫົວໜ້າອົງການໄອຍະການມີສິດສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນອຸທອນ ໄດ້ພາຍໃນກຳນົດເຈັດວັນ ນັບແຕ່ວັນຮັບຊາບຄຳສັ່ງ, ຄຳຊີ້ຂາດເປັນຕົ້ນໄປ. ສ່ວນຄຳພິພາກສາຂອງສານຂັ້ນອຸທອນນັ້ນໃຫ້ຂໍລົບລ້າງ ຫຼື ສະເໜີຄັດຄ້ານໄດ້ພາຍໃນກຳນົດສີ່ສິບຫ້າວັນ ນັບແຕ່ວັນໄດ້ອ່ານ ຫຼື ວັນຮັບຊາບຄຳພິພາກສາເປັນຕົ້ນໄປ(ມ 226 ກດຍ). ເພື່ອບໍ່ໃຫ້ເປັນການແກ່ຍາວເວລາເກີນໄປ ແລະ ຮັບປະກັນຄວາມສັກສິດຂອງການຈັດຕັ້ງປະຕິບັດກົດໝາຍ, ຖ້າຫາກມີການຈອງຂໍລົບລ້າງ ຫຼື ຈອງຄັດຄ້ານກໍຕ້ອງຍື່ນຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານພາຍໃນກຳນົດເວລາສີ່ສິບຫ້າວັນ ນັບແຕ່ວັນຈອງເປັນຕົ້ນໄປ. ສານຂັ້ນລົບລ້າງມີສິດອຳນາດໃນການພິຈາລະນາພິພາກສາລົບລ້າງຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂອງສານຂັ້ນອຸທອນຖ້າຫາກເຫັນວ່າການວາງໂທດຂອງສານຂັ້ນອຸທອນບໍ່ສອດຄ່ອງກັບລັກສະນະ, ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ ແລະ ບຸກຄະລິກກະພາບຂອງຜູ່ກະທຳຜິດ ຫຼື ສານຂັ້ນອຸທອນຫາກໄດ້ລະເມີດລະບຽບການໃນການດຳເນີນຄະດີອາຍາ ຫຼື ນຳໃຊ້ກົດໝາຍອາຍາບໍ່ຖືກຕ້ອງຕາມຄວາມ ໝາຍຂອງກົດໝາຍ (ມ 232 ກດຍ).

## 5. ສານທີ່ມີສິດອຳນາດໃນການພິຈາລະນາຄະດີເປັນຂັ້ນລົບລ້າງ

ການພິຈາລະນາຄະດີຢູ່ສານຂັ້ນລົບລ້າງຖືເປັນການພິຈາລະນາຄະດີຂັ້ນສຸດທ້າຍຢູ່ໃນລະບົບການຕັດສີນ ແລະ ພິພາກສາຄະດີ ຢູ່ ສປປ ລາວ. ສະນັ້ນ, ສານທີ່ມີສິດອຳນາດພິພາກສາຄະດີເປັນຂັ້ນລົບລ້າງຈຶ່ງມີແຕ່ສານປະຊາຊົນສູງສຸດ ແລະ ສານປະຊາຊົນພາກຊຶ່ງສານປະຊາຊົນພາກມີສິດອຳນາດພິພາກສາເປັນຂັ້ນລົບລ້າງຄະດີທີ່ສານປະຊາຊົນແຂວງ, ນະຄອນພິພາກສາເປັນຂັ້ນອຸທອນມາແລ້ວ, ສ່ວນສານປະຊາຊົນສູງສຸດມີສິດອຳນາດພິ

ພາກສາເປັນຂັ້ນລົບລ້າງຄະດີທີ່ສານປະຊາຊົນພາກ, ສານທະຫານຂັ້ນສູງພິພາກສາເປັນຂັ້ນອຸທອນ (ມ 225 ກດຍ).

ອີງຕາມກົດໝາຍແລ້ວ, ສານປະຊາຊົນສູງສຸດມີສິດ ແລະ ໜ້າທີ່ພິຈາລະນາເປັນຂັ້ນລົບລ້າງທາງດ້ານກົດໝາຍຄະດີທີ່ສານປະຊາຊົນພາກໄດ້ພິຈາລະນາເປັນຂັ້ນອຸທອນຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມ ຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ(ມ 21 ກປຊ 2009). ສ່ວນສານປະຊາຊົນພາກກໍມີພາລະບົດບາດພິຈາລະນາເປັນຂັ້ນລົບລ້າງຄະດີທີ່ສານປະຊາຊົນແຂວງ, ນະຄອນໄດ້ພິພາກສາເປັນຂັ້ນອຸທອນຊຶ່ງຖືກຂໍລົບລ້າງໂດຍຄູ່ຄວາມຫຼື ສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນ (ມ 22 ກປຊ 2009) ສານປະຊາຊົນສູງສຸດມີແຫ່ງດຽວຕັ້ງຢູ່ນະຄອນຫຼວງວຽງຈັນ, ສ່ວນສານປະຊາຊົນພາກນັ້ນມີສາມແຫ່ງຄື ສານປະຊາຊົນພາກເໜືອຕັ້ງຢູ່ແຂວງຫຼວງພະບາງ, ສານປະຊາຊົນພາກກາງຕັ້ງຢູ່ນະຄອນຫຼວງວຽງຈັນ ແລະ ສານປະຊາຊົນພາກໃຕ້ຕັ້ງຢູ່ແຂວງຈຳປາສັກ.

ແຜນວາດ 1: ສິດອຳນາດໃນການພິຈາລະນາຄະດີຂັ້ນລົບລ້າງຂອງສານພາກ ແລະ ສານປະຊາຊົນສູງສຸດ




ສານຂັ້ນລົບລ້າງຕ້ອງພິຈາລະນາພິພາກສາຄະດີພາຍໃນກຳນົດສາມສິບວັນນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ (ມ 228 ກດຍ).

## 6. ລະບຽບການຂໍລຶບລ້າງ ແລະ ການພິຈາລະນາພິພາກສາເປັນຂັ້ນລຶບລ້າງ

### 6.1. ລະບຽບການຂໍລຶບລ້າງ

ໃນເມື່ອບໍ່ພໍໃຈຕໍ່ຄຳພິພາກສາຂອງສານຂັ້ນອຸທອນ, ຜູ້ຂໍລຶບລ້າງ ຫຼື ຜູ້ສະເໜີຄັດຄ້ານຕ້ອງຍື່ນຄຳຮ້ອງຂໍລຶບລ້າງ ຫຼື ຄຳສະເໜີຄັດຄ້ານຂອງຕົນຕໍ່ສານຂັ້ນລຶບລ້າງໂດຍຜ່ານສານຂັ້ນອຸທອນທີ່ໄດ້ພິພາກສາຄະດີນັ້ນ. ສານຂັ້ນອຸທອນຕ້ອງແນະນຳໃຫ້ຜູ້ກ່ຽວຮູ້ກ່ຽວກັບກຳນົດເວລາ, ການຂຽນຄຳຮ້ອງ, ຄ່າທຳນຽມ ແລະ ສິດຕ່າງໆຂອງຜູ້ກ່ຽວໃນການຂໍລຶບລ້າງ. ທັງນີ້ກໍເພື່ອຄວາມສະດວກ ແລະ ເຮັດໃຫ້ການຍື່ນຂໍລຶບລ້າງມີຄວາມຮັບປະກັນທາງດ້ານເນື້ອໃນ ແລະ ວິທີການປະກອບເອກະສານໃຫ້ເປັນເອກະພາບ, ຢູ່ສານຂັ້ນອຸທອນແຕ່ລະບ່ອນຈະມີແບບພິມກ່ຽວກັບການຂໍລຶບລ້າງໃຫ້. ເຖິງວ່າກຳນົດເວລາຂໍລຶບລ້າງນັ້ນຈະໝົດແລ້ວກໍຕາມສານຂັ້ນອຸທອນຕ້ອງຮັບຄຳຂໍລຶບລ້າງ ຫຼື ຄຳສະເໜີຄັດຄ້ານດັ່ງກ່າວໄວ້ພິຈາລະນາ. ພາຍຫຼັງສິ້ນສຸດກຳນົດເວລາຂໍລຶບລ້າງ ຫຼື ຄຳສະເໜີຄັດຄ້ານແລ້ວພາຍໃນກຳນົດສາມວັນສານຂັ້ນອຸທອນຕ້ອງສົ່ງຄຳຮ້ອງຂໍລຶບລ້າງ ຫຼື ຄຳສະເໜີຄັດຄ້ານພ້ອມດ້ວຍສຳນວນຄະດີໄປຍັງສານຂັ້ນລຶບລ້າງ.

**ແຜນວາດ 2: ກຳນົດເວລາການຍື່ນຂໍລຶບລ້າງ**




ສານຂັ້ນອຸທອນບ່ອນພິພາກສາຄະດີເປັນບ່ອນຮັບຄຳຮ້ອງຂໍລຶບລ້າງພາຍໃນກຳນົດເວລາສີ່ສິບຫ້າວັນຫຼັງຈາກນັ້ນສານຂັ້ນອຸທອນບ່ອນດັ່ງກ່າວຕ້ອງໃຊ້ເວລາພາຍໃນກຳນົດສາມວັນເພື່ອຈະໄດ້ກວດກາເບິ່ງສຳນວນຄະດີໃຫ້ຮຽບຮ້ອຍຄົບຖ້ວນ ແລະ ສົ່ງໃຫ້ສານຂັ້ນລຶບລ້າງ.

ໃນກໍລະນີທີ່ສານຂັ້ນອຸທອນຫາກບໍ່ຮັບ ຫຼື ແກ່ຍາວການຮັບຄໍາຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານຄໍາພິພາກສາຂອງສານ ຜູ້ຂໍລົບລ້າງ ຫຼື ຜູ້ສະເໜີຄັດຄ້ານມີສິດຂໍລົບລ້າງ ຫຼື ສະເໜີຄັດຄ້ານໂດຍກົງຕໍ່ສານຂັ້ນລົບລ້າງ.

ຫຼັງຈາກກໍານົດຂໍລົບລ້າງໄດ້ສິ້ນສຸດແລ້ວ ຖ້າສານຂັ້ນອຸທອນທີ່ໄດ້ຮັບຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານຫາກແກ່ຍາວເກີນກໍານົດເວລາໃນການສົ່ງສໍານວນຄະດີຂຶ້ນສານຂັ້ນລົບລ້າງ ຜູ້ຂໍລົບລ້າງ ຫຼື ຜູ້ສະເໜີຄັດຄ້ານມີສິດສະເໜີຕໍ່ສານຂັ້ນລົບລ້າງເພື່ອທວງເອົາຄະດີດັ່ງກ່າວມາພິຈາລະນາ.

ໃນກໍລະນີທີ່ມີຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານຄໍາພິພາກສານັ້ນສານຂັ້ນອຸທອນຕ້ອງແຈ້ງຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານໃຫ້ອີກຝ່າຍໜຶ່ງຊາບເພື່ອໃຫ້ຜູ້ກ່ຽວເຮັດຄໍາແກ້ຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານ ຖ້າວ່າຈໍາເລີຍຫາກຖືກກັກຂັງກໍຕ້ອງແຈ້ງໃຫ້ຜູ້ກ່ຽວຊາບໂດຍຜ່ານເຈົ້າໜ້າທີ່ຄ້າຍຄຸມຂັງ.

ກ່ອນການພິຈາລະນາພິພາກສາຄະດີຢູ່ສານຂັ້ນລົບລ້າງນັ້ນ ຜູ້ຂໍລົບລ້າງ ຫຼື ຜູ້ສະເໜີຄັດຄ້ານມີສິດໃຫ້ຄໍາອະທິບາຍເປັນລາຍລັກອັກສອນເພື່ອໃຫ້ເຫດຜົນເພີ່ມເຕີມຕໍ່ຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານຂອງຕົນ, ໃຫ້ຂໍ້ສັງເກດກ່ຽວກັບຄໍາຮ້ອງຂໍລົບລ້າງຂອງອີກຝ່າຍໜຶ່ງ ຫຼື ຄໍາສະເໜີຄັດຄ້ານຂອງຫົວໜ້າອົງການໄອຍະການ(ມ 227 ກດຍ).

### 6.2. ການພິຈາລະນາຄະດີຢູ່ທີ່ປະຊຸມສານຂັ້ນລົບລ້າງ

ກ່ອນຈະເປີດປະຊຸມສານຂັ້ນລົບລ້າງເພື່ອພິຈາລະນາຄະດີໃນທີ່ປະຊຸມສານ, ຈ່າສານຕ້ອງໄດ້ກວດກາຄວາມພ້ອມຕ່າງໆໃຫ້ຮຽບຮ້ອຍເສັຍກ່ອນເປັນຕົ້ນແມ່ນຜູ້ຖືກເຊີນເຂົ້າຮ່ວມປະຊຸມສານ ຄະນະສານ, ພະນັກງານໄອຍະການ ແລະ ເງື່ອນໄຂອື່ນໆ ທີ່ເປັນປະໂຫຍດໃນການດໍາເນີນຄະດີຢູ່ທີ່ປະຊຸມສານ. ໃນກໍລະນີຈໍາເປັນສານຂັ້ນລົບລ້າງຈະຮຽກເອົາຜູ້ຖືກຕັດສິນ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງໃນຄະດີມາຮ່ວມໃນທີ່ປະຊຸມສານກໍໄດ້.

ພາຍຫຼັງທີ່ໄດ້ເປີດປະຊຸມສານແລ້ວ ປະທານຄະນະສານ ຫຼື ຄະນະສານຜູ້ຮັບຜິດຊອບຄະດີລາຍງານສະພາບຂອງຄະດີ, ລາຍງານກ່ຽວກັບຄໍາສັ່ງ, ຄໍາຊີ້ຂາດ ຫຼື ຄໍາພິພາກສາ, ເນື້ອໃນຄໍາຮ້ອງຂໍລົບລ້າງ ຫຼື ຄໍາສະເໜີຄັດຄ້ານພ້ອມດ້ວຍຄໍາເຫັນຂອງຕົນກ່ຽວກັບຄະດີນັ້ນ. ຕໍ່ຈາກນັ້ນຄະນະສານຜູ້ອື່ນ, ຫົວໜ້າອົງການໄອຍະການມີສິດຖາມຜູ້ຮັບຜິດຊອບລາຍງານຄະດີ ແລະ ບຸກຄົນອື່ນທີ່ກ່ຽວຂ້ອງໃນຄະດີມີສິດສະເໜີ ແລະ ໃຫ້ຄໍາເຫັນຂອງຕົນຕໍ່ທີ່ປະຊຸມສານກ່ຽວກັບຄະດີນັ້ນ.

ພາຍຫຼັງທີ່ຫົວໜ້າອົງການໄອຍະການໄດ້ຖະແຫຼງແລ້ວ ປະທານຄະນະສານກໍກ່າວປິດປະຊຸມສານຊົ່ວຄາວເພື່ອພິຈາລະນາພິພາກສາຄະດີໃນຫ້ອງປະຊຸມລັບແລ້ວນໍາເອົາຄໍາພິພາກສາອອກມາອ່ານຕໍ່ທີ່ປະຊຸມສານ(ມ 229 ກດຍ).

**ແຜນວາດ 3: ຂັ້ນຕອນການພິຈາລະນາຄະດີຢູ່ທີ່ປະຊຸມສານ**

ປະທານເປີດປະຊຸມສານ

↓

ຄະນະສານລາຍງານຄະດີ

↓

ຜູ່ເຂົ້າຮ່ວມມີຄຳເຫັນ

↓

ໄອຍະການຖະແຫຼງ

↓

ປະທານປິດປະຊຸມສານຊົ່ວຄາວ

↓

ອ່ານຄຳພິພາກສາ

### 6.3. ຄຳພິພາກສາຂອງສານຂັ້ນລົບລ້າງ

ດ້ານໂຄງສ້າງຂອງຄຳພິພາກສາຂອງສານຂັ້ນລົບລ້າງບໍ່ແຕກຕ່າງຈາກຄຳພິພາກສາຂອງສານຂັ້ນອຸທອນ, ເນື່ອງຈາກສານຂັ້ນລົບລ້າງພິພາກສາຄະດີໃນນາມ ສປປ ລາວ (ມ 230 ກດຍ) ຊຶ່ງໃນຄຳພິພາກສາກໍຕ້ອງປະກອບດ້ວຍ:

1) ພາກສະເໜີ

ໃນພາກນີ້ຖືເປັນບັນຫາທົ່ວໄປຂອງຄຳພິພາກສາທີ່ຕ້ອງລະບຸລາຍລະອຽດຕ່າງໆ ທີ່ກ່ຽວຂ້ອງເຖິງຄະນະສານ, ຫົວໜ້າອົງການໄອຍະການ, ຄະດີທີ່ຈະນຳມາພິຈາລະນາ ແລະ ບັນຫາອື່ນໆ (ຕາມແບບຢ່າງຂ້າງລຸ່ມ).

2) ພາກເນື້ອຄະດີ

ການສັງລວມເຫດການຕົວຈິງຂອງຄະດີທີ່ເປັນພື້ນຖານໃຫ້ແກ່ການພິພາກສາຂອງສານ, ເຫດການຕົວຈິງທີ່ສັງລວມໃນພາກນີ້ໂດຍທົ່ວໄປກໍແມ່ນເນື້ອຄະດີທີ່ໄດ້ສັງລວມຢູ່ໃນຄຳພິພາກສາຂອງສານຂັ້ນອຸທອນ.

3) ພາກຮູບຄະດີ

ພາກຮູບຄະດີ ແມ່ນພາກສັງລວມການຕັດສິນ ແລະ ພິພາກສາຄະດີຜ່ານມາລວມທັງການຂະບວນການຮ້ອງຂໍຕ່າງໆເພື່ອຂໍລົບລ້າງ.

4) ພາກວິນິດໄສ

ພາກວິນິດໄສເປັນພາກທີ່ສຳຄັນຫຼາຍເພາະສານຂັ້ນລົບລ້າງຈະໄດ້ສະແດງໃຫ້ເຫັນເຖິງເຫດຜົນຕ່າງໆຂອງສານໃນການພິພາກສາຄະດີໃຫ້ເປັນໄປຢ່າງຖືກຕ້ອງຕາມກົດໝາຍ ແລະ ມີຄວາມຍຸຕິທຳ.

5) ພາກຕັດສິນ

ພາກຕັດສິນ ແມ່ນພາກສຸດທ້າຍຂອງຄຳພິພາກສາທີ່ສານຂັ້ນລົບລ້າງຕ້ອງອອກຄຳຕົກລົງຂອງສານດັ່ງນີ້:

1) ບໍ່ຮັບເອົາຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານມາພິຈາລະນາຖ້າວ່າຈຳເລີຍ, ໂຈດທາງແພ່ງ, ຜູ້ຮັບຜິດຊອບທາງແພ່ງ, ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ຫຼື ຫົວໜ້າອົງການໄອຍະການຫາກປະຕິບັດບໍ່ຖືກຕ້ອງຕາມລະບຽບການຂໍລົບລ້າງ ຫຼື ສະເໜີຄັດຄ້ານ;

2) ຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານແລ້ວພິພາກສາຢັ້ງຢືນເອົາຕາມຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂອງສານຂັ້ນອຸທອນທັງໝົດ;

3) ລົບລ້າງຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂອງສານຂັ້ນອຸທອນທັງໝົດໂດຍບໍ່ສົ່ງຄະດີຄືນໃຫ້ສານຂັ້ນອຸທອນພິຈາລະນາແລ້ວໃຫ້ຈຳເລີຍພົ້ນຂໍ້ກ່າວຫາ;

4) ລົບລ້າງຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂອງສານຂັ້ນອຸທອນບາງສ່ວນ ຫຼື ທັງໝົດແລ້ວສົ່ງຄະດີໄປຍັງສານຂັ້ນອຸທອນຄະນະໃໝ່ ຫຼື ຄະນະເກົ່າໃນກໍລະນີທີ່ສານຂັ້ນອຸທອນຄະນະເກົ່າບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍໃດໜຶ່ງ ຫຼື ມີການລະເມີດກົດໝາຍ.

**ຕົວຢ່າງ: ແບບພິມຄໍາພິພາກສາຂອງສານຂັ້ນລົບລ້າງ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນ...........

ຄະນະສານອາຍາ ເລກທີ..............

ຂັ້ນລົບລ້າງ ລົງວັນທີ ............

**ຄໍາພິພາກສາ**

ຄະນະສານອາຍາຂອງສານປະຊາຊົນ.............ຊຶ່ງປະກອບດ້ວຍ

ທ່ານ.................................... ປະທານ

ທ່ານ.................................... ຄະນະ

ທ່ານ.................................... ຄະນະ

ພ້ອມດ້ວຍທ່ານ........................... ຈ່າສານ

ຊ້ອງໜ້າ................................. ໄອຍະການປະຊາຊົນສູງສຸດ

ໄດ້ເປີດປະຊຸມສານຂຶ້ນໃນວັນທີ ...........ເວລາ .............ຢູ່ທີ່ຫ້ອງປະຊຸມສານຂອງສານປະຊາຊົນ..........ເພື່ອພິຈາລະນາຄະດີອາຍາ ສະບັບເລກທີ .........ລົງວັນທີ...............

**ລະຫວ່າງ**

ຫົວໜ້າອົງການໄອຍະການປະຊາຊົນ.........................................................ໂຈດ;

ທ້າວ/ ນາງ................ອາຍຸ....., ສັນຊາດ ......, ອາຊີບ ......, ຢູ່ບ້ານ ............ ໜ່ວຍ ........, ເມືອງ..............ແຂວງ.............................. ............ຈໍາເລີຍ.

**ຖືກຫາວ່າ:**

**ຖືກກັກຕົວ:**

**ສານ**

ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ອີງຕາມສິດ ແລະ ໜ້າທີ່ຂອງສານປະຊາຊົນຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 2009.

ໄດ້ຄົ້ນຄວ້າສຳນວນຄະດີເລື່ອງນີ້ໃນທີ່ປະຊຸມສານແລ້ວ; ໄດ້ຟັງຄຳຖະແຫຼງຂອງໄອຍະການປະຊົນສູງສຸດໃນທີ່ປະຊຸມສານແລ້ວ.

## ເນື້ອຄະດີ

ເຫັນຕາມຄຳຖະແຫຼງຂອງໄອຍະການປະຊາຊົນໄດ້ຖະແຫຼງວ່າ:...........................
ໄອຍະການປະຊາຊົນນະຄອນຫຼວງວຽງຈັນໄດ້ສັ່ງຟ້ອງຂຶ້ນສານວ່າ: ທ້າວ/ນາງ............
ເປັນຜູ້ກະທຳຜິດໃນສະຖານ...........ຊຶ່ງກຳນົດໄວ້ໃນມາດຕາ ......ວັກ, ຂອງກົດໝາຍອາຍາສະບັບປີ 2005 ຕາມຄຳສັ່ງຟ້ອງຂຶ້ນສານ ສະບັບເລກທີ ..........ລົງວັນທີ ......

## ຮູບຄະດີ

ເຫັນຄຳຕັດສີນຄະດີອາຍາ ສະບັບເລກທີ.........ລົງວັນທີ ........ຂອງສານປະຊາຊົນເຂດ/ແຂວງ...... ໄດ້ຕັດສີນເປັນຂັ້ນຕົ້ນໂດຍຊ້ອງໜ້າໂຈດ ແລະ ຈຳເລີຍ ຫຼື ໂຈດທາງແພ່ງ, ບາງຄັ້ງກໍລັບຫຼັງຈຳເລີຍ.

ອີງຕາມການເຂົ້າຮ່ວມຂອງຄູ່ຄວາມບອກວ່າອີງໃສ່ຄຳຕັດສີນຂອງສານຂັ້ນຕົ້ນ.

ເຫັນໃບຮັບການຈອງຂໍອຸທອນ ສະບັບເລກທີ....ລົງວັນທີ .....ຂອງທ້າວ/ນາງ.........
ເຫັນຄຳຖະແຫຼງສະບັບເລກທີ ....ລົງວັນທີ........ຂອງໄອຍະການປະຊາຊົນຂັ້ນອຸທອນພາກ. ໄດ້ຖະແຫຼງວ່າອີງໃສ່ຜົນການຖະແຫຼງຂອງໄອຍະການ..................................

ເຫັນຄຳພິພາກສາ ສະບັບເລກທີ ..........ລົງວັນທີ ........ ຂອງສານອຸທອນພາກໄດ້ພິພາກສາໂດຍຊ້ອງໜ້າໂຈດ........ບອກວ່າ ອີງໃສ່ຄຳພິພາກສາຂອງສານຂັ້ນອຸທອນ
ເຫັນບົດບັນທຶກຮັບຊາບຄຳພິພາກສາ ສະບັບເລກທີ ........ລົງວັນທີ ..........................
ເຫັນໃບຂໍລົບລ້າງ ສະບັບເລກທີ .....ລົງວັນທີ......ຂອງທ້າວ/ນາງ............................
ເຫັນຄຳຮ້ອງຂໍລົບລ້າງ ສະບັບລົງວັນທີ .............ຂອງທ້າວ/ນາງ ..........................
ໂດຍອ້າງວ່າການທີ່ສານຕັດສີນໃຫ້ ທ້າວ/ນາງ............ມີຄວາມຜິດໃນສະຖານ.........ແມ່ນຖືກຕ້ອງ ຫຼື ບໍ່ຖືກຕ້ອງຢູ່ບ່ອນນີ້ ສານຕ້ອງມີທັດສະນະທີ່ຊັດເຈນພ້ອມດ້ວຍເຫດຜົນໃນການພິຈາລະນາລົງຄຳພິພາກສາເຫັນຄຳຖະແຫຼງ ສະບັບເລກທີ ..........ລົງວັນທີ ..............ຂອງໄອຍະການປະຊາຊົນສູງສຸດໄດ້ຖະແຫຼງວ່າ ອີງຕາມຄຳເຫັນຂອງໄອຍະການປະຊາຊົນສູງສຸດ.

## ວິນິດໄສ

ໃນພາກວິນິດໄສນີ້ ສານຕ້ອງຊີ້ແຈງເຫດຜົນທາງດ້ານກົດໝາຍໂດຍສົມທຽບໃສ່ເຫດການຂອງຄະດີກ່ອນຈະລົງຄຳພິພາກສາແຕ່ບໍ່ໝາຍຄວາມວ່າສານຈະພິຈາລະນາເນື້ອຄະດີ.

**ຕົວຢ່າງ:** ເມື່ອໄດ້ພິຈາລະນາບັນດາເອກະສານຕ່າງໆ ໃນສຳນວນຄະດີເລື່ອງນີ້ ໃນທີ່ປະຊຸມສານຢ່າງລະອຽດຖີ່ຖ້ວນແລ້ວ.

ເຫັນວ່າຄຳຮ້ອງຂໍລົບລ້າງຂອງທ້າວ ຊາດຊາຍ ຜູ້ຕາງໜ້າ ນາງ ອ່ອນສີ (ຈຳເລີຍ) ໄດ້ປະຕິບັດຖືກຕ້ອງຕາມກຳນົດເວລາທີ່ໄດ້ກຳນົດໄວ້ ໃນມາດຕາ 96 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປີ 2004 ຈຶ່ງນຳມາພິຈາລະນາ.

ການທີ່ທ້າວ ຊາດຊາຍ ຜູ້ຕາງໜ້າ ນາງ ອ່ອນສີ (ຈຳເລີຍ) ອ້າງວ່າການທີ່ສານໄດ້ຕັດສິນໃຫ້ ນາງ ອ່ອນສີ ມີຄວາມຜິດໃນສະຖານສໍ້ໂກງແມ່ນບໍ່ຖືກຕ້ອງ ເພາະວ່າ ພວກໂຈດທາງແພ່ງຮ້ອງຟ້ອງ ນາງ ວັນດີ ທັງທີ່ ນາງ ອ່ອນສີ ຍັງແລ່ນເອກະສານຢູ່ຈຶ່ງເຮັດໃຫ້ວຽກຢຸດສະງັກ, ສ້າງຄວາມເສັຍຫາຍ. ສະນັ້ນ, ສະເໜີໃຫ້ຄົ້ນຄວ້າເອກະສານຄືນໃໝ່ ເພື່ອໃຫ້ຄວາມເປັນທຳແກ່ ນາງ ອ່ອນສີ ແລະ ໃຫ້ຜູ້ກ່ຽວພົ້ນຂໍ້ກ່າວຫານັ້ນ ສານຂັ້ນລົບລ້າງເຫັນວ່າບໍ່ມີເຫດຜົນດ້ວຍວ່າ ນາງ ອ່ອນສີ ກໍບໍ່ມີເອກະສານ ຫຼື ຫຼັກຖານອັນໃດມາຢັ້ງຢືນພໍໃຫ້ເປັນການເຊື່ອຖືໄດ້ ແລະ ຈຳເລີຍເອງກໍຮູ້ດີວ່າໃບແຈ້ງການ ສະບັບເລກທີ 1792/ຫສນຍ.ລຂ, ລົງວັນທີ 22 ທັນວາ 2003 ຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີກ່ຽວກັບການອະນຸຍາດໂກຕ້າໄມ້ ບໍ່ແມ່ນຂອງຈຳເລີຍ ແຕ່ຈຳເລີຍໄດ້ໃຊ້ເລ້ຫຼ່ຽມຕົວະຍົວະຫຼອກລວງ ດ້ວຍວິທີອ້າງວ່າ ໂກຕ້າໄມ້ແມ່ນຂອງຈຳເລີຍຕ້ອງ ໄດ້ຈ່າຍເງິນກ່ອນແລ້ວພາຍໃນກຳນົດ14 ວັນຈະໄດ້ໃບອະນຸຍາດຂຸດຄົ້ນ ເພື່ອໃຫ້ ຜູ້ອື່ນກໍຄືພວກໂຈດທາງແພ່ງເອົາຊັບກໍຄື ເງິນຈຳນວນ 27.000 ໂດລາສະຫະລັດ ໃຫ້ຈຳເລີຍ ກໍຖືວ່າຈຳເລີຍ ສໍ້ໂກງຊັບຂອງພົນລະເມືອງ ທີ່ຜິດຕໍ່ກົດໝາຍອາຍາ ມາດຕາ 111 ວັກ 2 ກົດໝາຍອາຍາ ປີ 2001 ແລະ ມາດຕາ 120 ວັກ 2 ກົດໝາຍອາຍາ ປີ 2005 ແມ່ນໄດ້ກຳນົດໂທດເທົ່າກັນ. ພ້ອມນັ້ນ ສານປະຊາຊົນນະຄອນຫຼວງວຽງຈັນ ແລະ ສານອຸທອນພາກກາງກໍໄດ້ວິນິດໄສ, ຊີ້ແຈງຢ່າງຈະແຈ້ງສະນັ້ນ, ຈຶ່ງບໍ່ສາມາດພິຈາລະນາໃຫ້ຕາມການກ່າວອ້າງຂອງຜູ້ຕາງໜ້າຂອງຈຳເລີຍໄດ້ ແລະ ທາງດ້ານກົດໝາຍກໍຖືກຕ້ອງແລ້ວ.

ການທີ່ໄອຍະການປະຊາຊົນສູງສຸດຖະແຫຼງວ່າຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນ ແລະ ຄຳພິພາກສາຂອງສານປະຊາຊົນຂັ້ນອຸທອນພາກກາງ ແມ່ນຖືກຕ້ອງແລະ ສອດຄ່ອງກັບກົດໝາຍແລ້ວນັ້ນ ສານຂັ້ນລົບລ້າງເຫັນວ່າເປັນຄຳຖະແຫຼງທີ່ມີເຫດຜົນ.

ຈາກເຫດຜົນທີ່ກ່າວມາເທິງນີ້ສານຂັ້ນລົບລ້າງເຫັນວ່າຄຳພິພາກສາຂອງສານອຸທອນພາກກາງເປັນຄຳພິພາກສາທີ່ຖືກຕ້ອງຕາມຄວາມເປັນຈິງຂອງຄະດີ ແລະ ສອດຄ່ອງກັບລະບຽບກົດໝາຍແລ້ວ. ດັ່ງນັ້ນ, ຈຶ່ງຢັ້ງຢືນເອົາຕາມຄຳພິພາກສາຂອງສານອຸທອນພາກກາງທັງໝົດ. ເຫັນວ່າທ້າວ ຊາດຊາຍ ຜູ້ຕາງໜ້າຂອງ ນາງ ອ່ອນສີ (ຈຳເລີຍ)ໄດ້ຂໍລົບລ້າງຈຶ່ງໃຫ້ເສັຍຄ່າຂໍລົບລ້າງຈຳນວນ 40.000 ກີບ;

ເຫັນຕາມມາດຕາ 111 ວັກ 2 ກອຍ 2001; ມາດຕາ 95, 96, 98, 99 ແລະ 101 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປີ 2004; ມາດຕາ 34 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານສະບັບປີ 2006.

ເມື່ອໄດ້ວິນິດໄສ ຫຼື ໃຫ້ຄຳເຫັນຕໍ່ບັນຫາຕ່າງໆຄົບຖ້ວນແລ້ວສານຈຶ່ງລົງຄຳພິພາກສາ:

## ດ້ວຍເຫດນີ້

ຈຶ່ງພິພາກສາຄະດີນີ້ ເປັນຂັ້ນລົບລ້າງ ແລະ ຂັ້ນສຸດທ້າຍທາງດ້ານກົດໝາຍ.

ຕາມຮູບຄະດີ: ຮັບເອົາຄຳຮ້ອງຂໍລົບລ້າງຂອງທ້າວ/ນາງ ..................ມາພິຈາລະນາ.

ຕາມກົດໝາຍ: ຄຳຮ້ອງຂໍລົບລ້າງຂອງທ້າວ/ນາງ............................ມີເຫດຜົນ ຫຼື ບໍ່ມີເຫດຜົນກໍຕ້ອງໃຫ້ຮູ້ທັດສະນະທີ່ຊັດເຈນຂອງສານ.

ພິພາກສາ: ຢັ້ງຢືນ ຫຼື ຍົກເລີກຄຳຮ້ອງຂໍລົບລ້າງຂອງທ້າວ/ນາງ.......... ແລ້ວພິພາກສາ ..........................................................................ໃຫ້ຊຽນການພິພາກສາຂອງສານ.

ຄຳພິພາກສາສະບັບນີ້ ມີຜົນບັງຄັບປະຕິບັດນັບແຕ່ວັນນີ້ເປັນຕົ້ນໄປ.

**ປະທານຄະນະສານ** **ຈ່າສານ**

(ເຊັນ)

(ເຊັນ ແລະ ປະທັບຕາ)

### 6.4. ການພິຈາລະນາຄະດີຄືນໃໝ່ຂອງສານຂັ້ນອຸທອນ

ໃນການພິຈາລະນາຄະດີອາຍາ ສານຂັ້ນລົບລ້າງມີສິດພິພາກສາລົບລ້າງຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາຂອງສານຂັ້ນອຸທອນບາງສ່ວນ ຫຼື ທັງໝົດກໍຕາມ ແຕ່ກໍບໍ່ມີອຳນາດໃນການພິຈາລະນາພິພາກສາບັນຫາທີ່ສານອຸທອນຄະນະເກົ່າບໍ່ທັນໄດ້ພິຈາລະນາຄຳຮ້ອງຂໍໃດໜຶ່ງ ຫຼື ມີການລະເມີດກົດໝາຍ. ໃນກໍລະນີນີ້ສານຂັ້ນລົບລ້າງຕ້ອງສົ່ງຄະດີໄປຍັງສານຂັ້ນອຸທອນຄະນະໃໝ່ ຫຼື ຄະນະເກົ່າພິຈາລະນາ. ພາຍຫຼັງສານຂັ້ນລົບລ້າງໄດ້ລົບລ້າງຄຳພິພາກສາແລ້ວສົ່ງໃຫ້ສານຂັ້ນອຸທອນພິພາກສາຄືນໃໝ່ນັ້ນ ການພິຈາລະນາຄະດີໃຫ້ປະຕິບັດຕາມລະບຽບການພິຈາລະນາຄະດີຢູ່ສານຂັ້ນອຸທອນດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 219 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາໃນກໍລະນີທີ່ສານຂັ້ນອຸທອນຄະນະໃໝ່ຫາກໄດ້ລົງຄຳພິພາກສາບໍ່ກົງກັບຄຳພິພາກສາຂອງສານຂັ້ນລົບລ້າງນັ້ນ ຖ້າວ່າຈຳເລີຍຫາກບໍ່ໄດ້ຂໍລົບລ້າງແລ້ວ ຫົວໜ້າອົງການໄອຍະການກໍມີສິດສະເໜີ ຄັດຄ້ານໂດຍໜ້າທີ່ຂຶ້ນຫາສານຂັ້ນລົບລ້າງ.

ໃນການພິຈາລະນາຄະດີຄືນໃໝ່ນັ້ນຖ້າຫາກສານຂັ້ນລົບລ້າງໄດ້ພິພາກສາຄືເກົ່າ ແລະ ສົ່ງຄະດີຄືນໃຫ້ສານຂັ້ນອຸທອນເປັນເທື່ອທີສອງແລ້ວ ສານຂັ້ນອຸທອນຄະນະໃໝ່ຕ້ອງໄດ້ປະຕິບັດຕາມຄຳພິພາກສາຂອງສານຂັ້ນລົບລ້າງຢ່າງເດັດຂາດ.

**7. ຄວາມໝາຍຂອງສານຂັ້ນລົບລ້າງພິພາກສາແຕ່ທາງດ້ານກົດໝາຍ**

ເພື່ອໃຫ້ມີຄວາມກະຈ່າງແຈ້ງຂຶ້ນຕື່ມກ່ຽວກັບຄວາມໝາຍທີ່ວ່າສານຂັ້ນລົບລ້າງພິພາກສາແຕ່ທາງດ້ານກົດໝາຍນັ້ນ ຈຶ່ງຂໍຍົກໃຫ້ເຫັນຂະບວນການ ຫຼື ເຫດການທາງດ້ານກົດໝາຍທີ່ກ່ຽວຂ້ອງກັບການພິຈາລະນາຂອງສານຂັ້ນລົບລ້າງຄື:

– ກວດກາທາງດ້ານກົດໝາຍກ່ຽວກັບການລະເມີດລະບຽບການໃນການດຳເນີນຄະດີອາຍາ;

– ສານຂັ້ນລົບລ້າງພິພາກສາກວດກາທາງດ້ານກົດໝາຍຢູ່ໃນຂອບເຂດທີ່ກຳນົດໄວ້ໃນກົດໝາຍ;

– ກວດກາທາງດ້ານກົດໝາຍໃນການນຳໃຊ້ມາດຕາກົດໝາຍຕໍ່ເນື້ອໃນເຫດການຂອງຄະດີ.

**7.1. ກວດກາທາງດ້ານກົດໝາຍກ່ຽວກັບການລະເມີດລະບຽບການ ໃນການດຳເນີນຄະດີອາຍາ**

ການກວດກາທາງດ້ານກົດໝາຍກ່ຽວກັບ ການລະເມີດລະບຽບການໃນການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ອົງການໄອຍະການ ແລະ ສານຂັ້ນລຸ່ມວ່າມີການລະເມີດລະບຽບການດຳເນີນຄະດີ ຫຼື ບໍ່ນັ້ນ ແມ່ນສິດ ແລະ ໜ້າທີ່ຂອງສານຂັ້ນລົບລ້າງ ເຊັ່ນ ລະບຽບການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ລະບຽບການເຄື່ອນໄຫວຕິດຕາມກວດກາ ຂອງຫົວໜ້າອົງການໄອຍະການ ຕໍ່ເຈົ້າໜ້າທີ່ສືບສວນ-ສອບສວນໃນການດຳເນີນຄະດີ ແລະ ລະບຽບການເຄື່ອນໄຫວຂອງສານໃນການພິຈາລະນາໄຕ່ສວນຄະດີໃນທີ່ປະຊຸມສານ, ການປະກາດຄຳຕັດສິນຂອງສານ, ການຂໍອຸທອນ, ລະບຽບການອື່ນໆຂອງສານຂັ້ນຕົ້ນ ແລະ ສານອຸທອນຈົນຮອດການຍື່ນຄຳຮ້ອງເຖິງສານຂັ້ນລົບລ້າງ ຊຶ່ງທັງໝົດນັ້ນກໍເພື່ອຮັບປະກັນສິດຂອງຜູ່ຖືກດຳເນີນຄະດີ ແລະ ຜູ່ດຳເນີນຄະດີຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍເຊັ່ນ ການລະເມີດລະບຽບການປະກອບຄະນະສານ, ການລະເມີດລະບຽບການບໍ່ພິຈາລະນາຄຳຮ້ອງໃຫ້ໝົດ, ການລະເມີດລະບຽບການໃນການວາງໂທດ ແລະ ອື່ນໆ.

**ຕົວຢ່າງ 1: ການລະເມີດລະບຽບການປະກອບຄະນະສານ**

ລະບຽບການປະກອບຄະນະສານໄດ້ກຳນົດແຈ້ງຢູ່ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຊຶ່ງຄະນະສານຕ້ອງປະກອບດ້ວຍຜູ່ພິພາກສາສາມທ່ານ, ໃນນັ້ນຜູ່ໜຶ່ງເປັນ

ປະທານ ແລະ ອີກສອງທ່ານເປັນຄະນະ (ມ18 ກດຍ). ຄວາມໝາຍຂອງລະບຽບການປະກອບຄະນະສານນີ້ ບໍ່ແມ່ນວ່າຈະມີຄວາມໝາຍສະເພາະແຕ່ວ່າຄະນະສານທີ່ປະກອບຕ້ອງມີຜູ້ພິພາກສາສາມທ່ານເທົ່ານັ້ນ ແຕ່ມີຄວາມໝາຍເລິກໄປອີກວ່າຜູ້ພິພາກສາທີ່ມາປະກອບເປັນຄະນະນັ້ນຕ້ອງແມ່ນຜູ້ພິພາກສາທີ່ໄດ້ຮັບການແຕ່ງຕັ້ງຢ່າງຖືກຕ້ອງຕາມກົດໝາຍເທົ່ານັ້ນ (ມ 45 ກປຊ 2009) ຈະເອົາພະນັກງານວິຊາການ ຫຼື ຜູ້ບໍ່ໄດ້ຮັບການແຕ່ງຕັ້ງໄປນັ່ງເພື່ອໃຫ້ຄົບຄະນະແມ່ນບໍ່ໄດ້. ນອກນັ້ນຍັງມີຄວາມໝາຍກວມລວມເຖິງຄະນະສານທີ່ປະກອບນັ້ນຕ້ອງບໍ່ເຄີຍພົວພັນ ຫຼື ເຄີຍດຳເນີນການຕັດສີນ ແລະ ພິພາກສາຄະດີມາກ່ອນ ຫຼື ຄະນະສານມີສ່ວນໄດ້ສ່ວນເສຍກັບຄະດີ ຫຼື ຄະນະສານເປັນຍາດໃກ້ຊິດກັບຄູ່ຄວາມຄະດີ ອັນພາໃຫ້ການປະກອບຄະນະສານບໍ່ຖືກຕ້ອງເຊັ່ນ ທ້າວ ກ ເປັນຜູ້ພິພາກສາຢູ່ສານປະຊາຊົນພາກໃຕ້ຜ່ານມາ ຜູ່ກ່ຽວເຄີຍໄດ້ເຂົ້າຮ່ວມນັ່ງປະກອບເປັນຄະນະສານພິພາກສາຄະດີທ້າວ ຂ ມາແລ້ວ ຊຶ່ງເປັນສານຂັ້ນອຸທອນຂອງສານປະຊາຊົນພາກ ແລະ ສານຂັ້ນນັ້ນ ກໍໄດ້ພິພາກສາລົບລ້າງຄຳຕັດສິນຂັ້ນຕົ້ນບາງສ່ວນແລ້ວສົ່ງສຳນວນຄະດີໃຫ້ສານຂັ້ນຕົ້ນຄະນະໃໝ່ພິຈາລະນາຄືນໃໝ່ຕາມກົດໝາຍ, ເມື່ອສານປະຊາຊົນຂັ້ນຕົ້ນດັ່ງກ່າວໄດ້ຕັດສິນຕາມກົດໝາຍແລ້ວ ທ້າວ ຂ ຍັງບໍ່ພໍໃຈຈິ່ງໄດ້ຂໍອຸທອນມາຍັງສານອຸທອນອີກ ທ້າວ ກ ຜູ້ພິພາກສາຢູ່ສານປະຊາຊົນພາກດັ່ງກ່າວໄດ້ເຂົ້າຮ່ວມນັ່ງປະກອບເປັນຄະນະສານຂັ້ນອຸທອນເປັນຄັ້ງທີສອງອີກເມື່ອພິພາກສາສຳເລັດແລ້ວ ທ້າວ ຂ ຍັງບໍ່ພໍໃຈອີກຈຶ່ງຂໍລົບລ້າງມາຍັງສານຂັ້ນລົບລ້າງຂອງສານປະຊາຊົນສູງສຸດ, ສານຂັ້ນລົບລ້າງຂອງສານປະຊາຊົນສູງສຸດໄດ້ຄົ້ນຄ້ວາກວດກາເຫັນວ່າເປັນການລະເມີດການປະກອບຄະນະສານຂອງສານອຸທອນຂັ້ນດັ່ງກ່າວ ຈຶ່ງໄດ້ພິພາກສາລົບລ້າງຄຳພິພາກສາທັງໝົດຖິ້ມແລ້ວສົ່ງສຳນວນຄະດີຄືນໃຫ້ສານອຸທອນພາກໃຕ້ຄະນະໃໝ່ພິຈາລະນາຄືນໃໝ່ຕາມກົດໝາຍ ສິ່ງດັ່ງກ່າວນີ້ເປັນການຢັ້ງຢືນໃຫ້ເຫັນວ່າມີຄວາມໝາຍກວ້າງຂວາງ ແລະ ເລິກເຊິ່ງທີ່ສຸດຊຶ່ງສານຂັ້ນລົບລ້າງຈຳເປັນຕ້ອງໄດ້ຮູ້, ເຂົ້າໃຈຫຼັກການຢ່າງເລິກເຊິ່ງ, ຈະແຈ້ງຈຶ່ງສາມາດອະທິບາຍ ແລະ ວາງເປັນຫຼັກການໃນຄຳພິພາກສາຂອງສານຂັ້ນລົບລ້າງໄດ້;

**ຕົວຢ່າງ 2: ການລະເມີດລະບຽບການພິຈາລະນາຄະດີຢ່າງຄົບຖ້ວນ**

ລະບຽບການພິຈາລະນາຂອງສານໄດ້ກຳນົດໃຫ້ສານຂັ້ນຕົ້ນ ຕ້ອງພິຈາລະນາຄຳຮ້ອງຂໍຄ່າເສັຍຫາຍທາງແພ່ງຂອງໂຈດທາງແພ່ງ ແລະ ຄຳຮ້ອງຂອງຈຳເລີຍໃຫ້ໝົດ ແຕ່ກົງກັນຂ້າມສານຂັ້ນຕົ້ນຍັງບໍ່ໄດ້ພິຈາລະນາໃຫ້ໝົດຕໍ່ບັນຫາທີ່ໂຈດທາງແພ່ງ ແລະ ຈຳເລີຍຍົກມາເຊັ່ນ ການຮັບສິນບົນ ແລະ ການໃຫ້ສິນບົນ ຊຶ່ງ ທ້າວ ກ ເປັນຕຳຫຼວດຊັ້ນຮ້ອຍຕີ ສັງກັດຢູ່ອົງການສືບສວນ-ສອບສວນ ເມືອງຈັນທະບູລີ, ນະຄອນຫຼວງວຽງຈັນ ໄດ້ຮັບສິນບົນຈາກທ້າວ ຂ ຈຳນວນ 200.000 ບາດ ຍ້ອນການປ່ອຍຕົວ ທ້າວ ຄ ຜູ້ຖືກຫາຄະດີຢາ

ເສບຕິດ(ຢາບ້າ 100 ກະຣາມ), ຕໍ່ມາການຈັດຕັ້ງໄດ້ສືບຮູ້ຈຶ່ງໄດ້ກັກຕົວທ້າວ ກ ມາດຳເນີນຄະດີ ຜ່ານການສືບສວນ-ສອບສວນ ທ້າວ ກ ແມ່ນໄດ້ຮັບສາລະພາບຕາມຂໍ້ກ່າວຫາແທ້. ສ່ວນເງິນທີ່ໄດ້ຈາກການຮັບສິນບົນກໍມອບເຂົ້າການຈັດຕັ້ງແລ້ວຄົບຕາມຈຳນວນ ຕໍ່ເຫດການດັ່ງກ່າວ ສານປະຊາຊົນຂັ້ນຕົ້ນໄດ້ຕັດສິນລົງໂທດທ້າວ ກ ຕາມມາດຕາ157 ຂອງກົດໝາຍອາຍາແລ້ວ, ແຕ່ສານຂັ້ນຕົ້ນບໍ່ໄດ້ຕັດສິນຮິບເງິນທີ່ເປັນຂອງກາງຄະດີເຂົ້າເປັນຂອງລັດ, ຫົວໜ້າອົງການໄອຍະການປະຊາຊົນຂັ້ນດັ່ງກ່າວ ບໍ່ພໍໃຈຕໍ່ຄຳຕັດສິນຂອງສານ ຈຶ່ງໄດ້ສະເໜີຄັດຄ້ານຕໍ່ສານຂັ້ນອຸທອນເພື່ອໃຫ້ພິຈາລະນາຄືນໃໝ່ ໂດຍອ້າງວ່າຄວນຮິບເງິນທີ່ເປັນຂອງກາງຄະດີນັ້ນເຂົ້າເປັນຂອງລັດ, ໄອຍະການປະຊາຊົນຂັ້ນອຸທອນກໍເຫັນດີຕາມໄອຍະການຂັ້ນຕົ້ນໄດ້ຄັດຄ້ານນັ້ນ. ຕໍ່ມາ ສານຂັ້ນອຸທອນໄດ້ພິພາກສາປ່ຽນແປງຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນບາງສ່ວນຄື ໃຫ້ຮິບເງິນທີ່ເປັນຂອງກາງຄະດີເຂົ້າເປັນຂອງລັດ. ນອກຈາກນັ້ນ ຍັງຢືນຕາມຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນ ແຕ່ຈຳເລີຍພັດບໍ່ພໍໃຈຕໍ່ຄຳພິພາກສາຂອງສານຂັ້ນອຸທອນ ຈຶ່ງໄດ້ຂໍລົບລ້າງມາຍັງສານຂັ້ນລົບລ້າງຂອງສານປະຊາຊົນສູງສຸດ ໂດຍອ້າງວ່າເງິນຂອງກາງຄະດີທີ່ຮິບເຂົ້າເປັນຂອງລັດນັ້ນເຫັນວ່າຍັງບໍ່ທັນຖືກຕ້ອງ ຄວນນຳມາໃຊ້ແທນເປັນຄ່າປັບໃໝຕື່ມຕາມຄຳຕັດສິນຂອງສານຈຶ່ງເປັນການຖືກຕ້ອງ. ຕໍ່ກັບຄຳຮ້ອງຂໍຂອງຈຳເລີຍນັ້ນ ສານຂັ້ນລົບລ້າງເຫັນວ່າການພິພາກສາຂອງສານອຸທອນໄດ້ພິພາກສາໄປນັ້ນເປັນການຖືກຕ້ອງແລ້ວ. ຈາກເຫດການນີ້ ຈຶ່ງຖືວ່າສານປະຊາຊົນຂັ້ນຕົ້ນ ລະເມີດລະບຽບການພິຈາລະນາຄະດີຕາມທີ່ກຳນົດໄວ້ ໃນມາດຕາ 167 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ຕົວຢ່າງ 3: ການລະເມີດລະບຽບການໃນການວາງໂທດ**

ຕາມຫຼັກການກົດໝາຍວ່າດ້ວຍການດຳເນີນຄະດີອາຍາແລ້ວ ສານປະຊາຊົນເປັນຜູ່ວາງໂທດໃນຂອບເຂດມາດຕາກົດໝາຍ ທີ່ໄດ້ກຳນົດໂທດໃສ່ການກະທຳຜິດໃນການວາງໂທດນັ້ນ ສານຕ້ອງອີງຕາມລັກສະນະ ແລະ ລະດັບຄວາມເປັນອັນຕະລາຍຕໍ່ສັງຄົມຂອງການກະທຳຜິດ, ບຸກຄະລິກກະພາບຂອງຜູ່ກະທຳຜິດ ແລະ ສາເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ການເພີ່ມຄວາມຮັບຜິດຊອບທາງອາຍາ (ມ 37 ກອຍ 2005) ເຊັ່ນ ຄະດີຍັກຍອກຊັບຂອງລັດ ຫຼື ລວມໝູ່ຢູ່ນະຄອນຫຼວງວຽງຈັນ ຊຶ່ງສານປະຊາຊົນຂັ້ນຕົ້ນນະຄອນຫຼວງວຽງຈັນໄດ້ຕັດສິນລົງໂທດຈຳເລີຍ ຕາມມາດຕາ 110 ວັກ 2 ຂອງກົດໝາຍອາຍາວາງໂທດໃສ່ຈຳເລີຍໃນຂອບຂອງກົດໝາຍແລ້ວ ແຕ່ຈຳເລີຍບໍ່ພໍໃຈຕໍ່ຄຳຕັດສິນຈຶ່ງໄດ້ຂໍອຸທອນຄະດີຂຶ້ນຫາສານຂັ້ນອຸທອນຂອງສານປະຊາຊົນພາກກາງ, ຈາກນັ້ນ ສານຂັ້ນອຸທອນຂອງສານປະຊາຊົນພາກກາງໄດ້ພິພາກສາ ຕາມມາດຕາ 110 ວັກ 2 ກົດໝາຍອາຍາເຊັ່ນດຽວກັນກັບສານປະຊາຊົນຂັ້ນຕົ້ນ ແຕ່ໃນທີ່ນີ້ໄດ້ປ່ຽນແປງຄຳຕັດສິນຂອງສານປະຊາຊົນຂັ້ນ

ຕົ້ນບາງສ່ວນຄື ໂທດນັ້ນໃຫ້ພາກໄວ້ ນອກນັ້ນແມ່ນຢັ້ງຢືນຕາມຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນ. ຕໍ່ຄຳພິພາກສາຂອງໄອຍະການປະຊາຊົນພາກ ບໍ່ພໍໃຈຈຶ່ງໄດ້ສະເໜີຄັດຄ້ານອ້າງວ່າ ສານວາງໂທດໃສ່ຈຳເລີຍຍັງບໍ່ທັນສອດຄ່ອງຕາມກົດໝາຍ ເນື່ອງຈາກວ່າ ວັກ 2 ຂອງມາດຕາດັ່ງກ່າວ ໄດ້ກຳນົດໂທດ ແຕ່ 3 ປີ ຫາ 7 ປີ ຊຶ່ງບໍ່ນອນໃນເງື່ອນໄຂ ມາດຕາ 47 ກົດໝາຍອາຍາ. ຕໍ່ກັບຄຳສະເໜີຄັດຄ້ານຂອງໄອຍະການປະຊາຊົນ ສານຂັ້ນລົບລ້າງ ເຫັນວ່າສານຂັ້ນອຸທອນຂອງສານປະຊາຊົນພາກ ໄດ້ລະເມີດລະບຽບການໃນການວາງໂທດໃນຂໍ້ຄວາມທີ່ວ່າກົດໝາຍໄດ້ກຳນົດໂທດຕ່ຳກ່ວາສາມປີລົງມາ ແລະ ສານກໍຕ້ອງວາງໂທດຢູ່ໃນຂອບດັ່ງກ່າວຈຶ່ງຈະພາກໂທດໄດ້ (ມ 47 ກອຍ).

### 7.2. ກວດກາທາງດ້ານກົດໝາຍຢູ່ໃນຂອບເຂດທີ່ກຳນົດໄວ້ໃນກົດໝາຍ

ການກຳນົດເຫດການຂອງຄະດີ ກໍເປັນບັນຫາໜຶ່ງທີ່ສຳຄັນຕົ້ນຕໍໃນການພິຈາລະນາຄະດີເປັນຂັ້ນລົບລ້າງທາງດ້ານກົດໝາຍທີ່ນຳໄປສູ່ການຕັດສິນພິພາກສາຢ່າງຖືກຕ້ອງຕາມຄວາມຈິງ ແລະ ກົດໝາຍ, ນອກນັ້ນຍັງຈະເຮັດໃຫ້ກົດໝາຍມີຄວາມສັກສິດອີກດ້ວຍ. ກົງກັນຂ້າມຖ້າພວກເຮົາຍັງບໍ່ທັນກຳນົດໄດ້ວ່າຄະດີດັ່ງກ່າວເກີດຂຶ້ນແນວໃດ ການນຳໃຊ້ກົດໝາຍໃນການແກ້ໄຂຄະດີດັ່ງກ່າວກໍອາດເກີດມີຂໍ້ຜິດພາດຕາມມາ. ສະນັ້ນ, ຈຶ່ງມີຄວາມຈຳເປັນຢ່າງທີ່ຜູ້ພິພາກສາຈະຕ້ອງກຳນົດ ແລະ ຕີຄວາມໝາຍເຫດການຂອງຄະດີໃຫ້ໄດ້ຢ່າງຖືກຕ້ອງ ແລະ ຊັດເຈນກ່ອນການຕັດສິນ ຫຼື ພິພາກສາຄະດີ, ການກຳນົດ ແລະ ຕີຄວາມໝາຍເຫດການບໍ່ຖືກຕ້ອງ ແລະ ບໍ່ແຈ້ງຂາວສະແດງອອກຄື:

#### 7.2.1. ການບໍ່ສາມາດແຍກປະເພດຄະດີ

ກົດໝາຍໄດ້ກຳນົດປະເພດຄະດີໄວ້ຊັດເຈນຈະແຈ້ງແລ້ວ ແລະ ໃຫ້ສິດອຳນາດຂອງແຕ່ລະຄະນະສານ ເປັນຜູ້ມີສິດອຳນາດໃນການຕັດສິນຄະດີແຕ່ລະປະເພດ. ສະນັ້ນ, ຖ້າຫາກມີການນຳເອົາຄະດີທີ່ບໍ່ນອນຢູ່ໃນຂອບເຂດສິດອຳນາດ ຂອງຄະນະສານຕົນ ມາພິຈາລະນາຈະຖືວ່າເປັນການກຳນົດເຫດການຄະດີບໍ່ຈະແຈ້ງຈຶ່ງບໍ່ສາມາດແຍກປະເພດຄະດີໄດ້; ນອກນັ້ນ ເຫດການທີ່ເປັນການລະເມີດທາງແພ່ງ ແຕ່ນຳມາດຳເນີນເປັນຄະດີອາຍາ, ເຫດການທີ່ເປັນການກະທຳຜິດທາງອາຍາແຕ່ດຳເນີນເປັນຄະດີແພ່ງ ກໍຖືວ່າເປັນການແຍກປະເພດຄະດີບໍ່ຖືກຕ້ອງເຊັ່ນ:

**ຕົວຢ່າງ 1:** ເລື່ອງໜີ້ສິນ ທີ່ມີການເອົາເງິນກັນໄປ ແລ້ວບໍ່ມາໃຊ້ແທນນັ້ນ ມັກຈະກຳນົດເຫດການວ່າ ເປັນການກະທຳຜິດທາງອາຍາ ຊຶ່ງບັນຫາດັ່ງກ່າວພວກເຮົາຕ້ອງກຳໃຫ້ໄດ້ວ່າອົງປະກອບການກະທຳຜິດທາງອາຍາມີອັນໃດ ກວມເອົາປະເດັນໃດ ແລະ ເຫດການນີ້ຕົກຢູ່ໃນອົງປະກອບຂອງການກະທຳຜິດທາງອາຍາບໍ່, ຖ້າບໍ່ມີກໍຕ້ອງໄດ້ນຳມາຕັດສິນເປັນຄະດີແພ່ງ ຊຶ່ງສານຂັ້ນລົບລ້າງ ຕ້ອງໄດ້ພິພາກສາ ແລະ ຕີຄວາມໝາຍເຫດການ ທີ່ສານ

ຂັ້ນຕົ້ນໄດ້ກຳນົດ ແລະ ຕີຄວາມໝາຍຂອງເຫດການນັ້ນ ວ່າແມ່ນຄະດີແພ່ງ ຫຼື ເປັນຄະດີອາຍາ ແລ້ວວາງຫຼັກການໃຫ້ເປັນປະເພນີສານ.

**ຕົວຢ່າງ 2:** ຄະດີກ່ຽວກັບການກະທຳຜິດຂອງເດັກກັບຜູ່ໃຫຍ່ ມັກຈະນຳມາດຳເນີນຢູ່ຄະນະສານອາຍາທົ່ວໄປ. ສະນັ້ນ, ຕ້ອງຕີຄວາມໝາຍຢ່າງເລິກເຊິ່ງວ່າແມ່ນຄະດີເດັກ ທີ່ຕ້ອງດຳເນີນຢູ່ຄະນະສານເດັກ ຫຼື ບໍ່ ຫຼື ຄະດີ ກ່ຽວກັບການກໍ່ຄວາມເສັຍຫາຍຂອງເດັກກັບເດັກມັກຈະດຳເນີນໃນຄະນະສານອາຍາ ຫຼື ຂາດອົງປະກອບການກະທຳຜິດທາງອາຍາມັກຈະດຳເນີນໃນຄະນະແພ່ງ. ກໍລະນີນີ້ກໍຕ້ອງຕີຄວາມໝາຍໃຫ້ໄດ້ວ່າ ແມ່ນສິດອຳນາດຂອງຄະນະສານອາຍາ, ຄະນະສານແພ່ງ ຫຼື ຄະນະສານເດັກ, ຊຶ່ງສານຂັ້ນລົບລ້າງຕ້ອງໄດ້ວິນິດໄສເປັນຫຼັກການ ເພື່ອເປັນບ່ອນອີງໃຫ້ສານຂັ້ນລຸ່ມສາມາດແຍກປະເພດຄະດີໄດ້.

**7.2.2. ການກຳນົດເຫດການຂອງຄະດີບໍ່ຈະແຈ້ງ**

ໃນການຕັດສິນຄະດີຂອງສານ ຖ້າຍັງບໍ່ສາມາດກຳນົດເຫດການຂອງຄະດີໃຫ້ແຈ້ງຂາວ ຫຼື ຍັງຄຸມເຄືອຢູ່ ກໍຈະເຮັດໃຫ້ການຕັດສິນມີຄວາມຜິດພາດ ຍ້ອນເອົາເຫດການ ທີ່ບໍ່ແມ່ນຄວາມຈິງມາພິຈາລະນາຕັດສິນ. ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ສານຂັ້ນລົບລ້າງຕ້ອງໄດ້ເອົາໃຈໃສ່ ໃນການກວດກາ ການຕັດສິນຂອງສານຂັ້ນຕົ້ນ ແລະ ຂັ້ນອຸທອນວ່າໄດ້ກຳນົດເຫດການຄະດີດັ່ງກ່າວຈະແຈ້ງແລ້ວບໍ່, ຖ້າຫາກເຫັນວ່າ ການກຳນົດເຫດການຂອງຄະດີຍັງບໍ່ທັນແຈ້ງຂາວ ແຕ່ກໍຍັງດຳເນີນການຕັດສິນ ແນ່ນອນກໍຈະພາໃຫ້ການຕັດສິນບໍ່ຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ. ສະນັ້ນ, ຕໍ່ບັນຫາດັ່ງກ່າວສານຂັ້ນລົບລ້າງຕ້ອງວິນິດໄສວ່າເຫດການທີ່ເປັນຂໍ້ເທັດຈິງແມ່ນແນວໃດ ຖ້າເຫັນວ່າເຫດການບໍ່ສອດຄ່ອງກັບການກຳນົດຂອງສານຂັ້ນລຸ່ມ ສານຂັ້ນລົບລ້າງຕ້ອງໄດ້ພິພາກສາໃຫ້ດຳເນີນຄືນໃໝ່ບົນພື້ນຖານເຫດການທີ່ແຈ້ງຂາວ ແລະ ເປັນຈິງນັ້ນ.

ການກຳນົດເຫດການຂອງຄະດີບໍ່ແຈ້ງຂາວ ຖືເປັນປະເດັນກວ້າງຂວາງທີ່ສຸດຊຶ່ງກວມເອົາບັນດາກົດໝາຍ ທີ່ດັດປັບສາຍພົວພັນສັງຄົມ (ກົດໝາຍເນື້ອຄະດີ) ເຊັ່ນ ກົດໝາຍອາຍາ ແລະ ກົດໝາຍອື່ນໆຂອງ ສປປ ລາວ ທີ່ໄດ້ກຳນົດໂທດທາງອາຍາ, ກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາກຳນົດການໃຊ້ແທນຄ່າເສັຍຫາຍ, ກົດໝາຍວ່າດ້ວຍທີ່ດິນ ກຳນົດເຫດການຂອງການຄຸ້ມຄອງ, ນຳໃຊ້ ແລະ ຊື້ຂາດກ່ຽວກັບທີ່ດິນ, ກົດໝາຍວ່າດ້ວຍກຳມະສິດກຳນົດກ່ຽວກັບການຄອບຄອງຊັບສົມບັດ ແລະ ອື່ນໆ. ຊຶ່ງບັນດາກົດໝາຍເຫຼົ່ານັ້ນ ໄດ້ກຳນົດເຫດການຂອງຄະດີແຕ່ລະປະເພດໄວ້ ເຖິງຢ່າງໃດກໍຕາມມາດຕາ ກົດໝາຍເຫຼົ່ານັ້ນໄດ້ກຳນົດພຽງແຕ່ເປັນຫຼັກການ ແລະ ບໍ່ສາມາດກວມເອົາທັງໝົດເຫດການທີ່ເກີດຂຶ້ນໃນສັງຄົມ ເພາະວ່າໃນຕົວຈິງເຫດການທີ່ເກີດຂຶ້ນໃນສັງຄົມມີຫຼາຍບັນຫາຕ່າງໆນາໆ ຊຶ່ງກົດໝາຍເຫຼົ່ານັ້ນບໍ່ສາມາດກຳນົດທັງໝົດເຫດການໄວ້ຢ່າງຊັດເຈນ

ຊຶ່ງມີບາງເຫດການກໍມີລັກສະນະຂ້າງຄຽງ. ສະນັ້ນ, ສານຂັ້ນລົບລ້າງໃນຖານະເປັນສານທີ່ພິຈາລະນາທາງດ້ານກົດໝາຍ ຈຶ່ງຕ້ອງໄດ້ອະທິບາຍ, ຕີຄວາມໝາຍຂອງເຫດການນັ້ນວ່າແມ່ນເຫດການອັນໃດສອດຄ່ອງກັບມາດຕາໃດຂອງກົດໝາຍ ຫຼື ຍັງບໍ່ທັນມີກົດໝາຍໃດກໍານົດໄວ້ ຊຶ່ງສານຂັ້ນລົບລ້າງຕ້ອງໄດ້ໃຫ້ເຫດຜົນ ແລະ ວາງເປັນຫຼັກການເພື່ອໃຫ້ເປັນປະເພນີສານ ໃຫ້ສານຂັ້ນລຸ່ມໄດ້ປະຕິບັດຕາມ. ການກໍານົດເຫດການຂອງຄະດີບໍ່ແຈ້ງຂາວໝາຍເຖິງເຫດການນັ້ນມີການພົວພັນກັບຄະດີອື່ນພົວພັນກັບບຸກຄົນທີສາມ ຫຼື ເຫດການຂອງຄະດີນັ້ນ ບໍ່ມີຂໍ້ມູນຫຼັກຖານອັນໃດມາອ້າງອີງ ຫຼື ຢັ້ງຢືນ ພຽງແຕ່ເປັນການອ້າງຂຶ້ນຂອງຝ່າຍໃດໜຶ່ງເທົ່ານັ້ນເຊັ່ນ ການກູ້ຢືມ ແຕ່ສານຂັ້ນລຸ່ມໄດ້ກໍານົດເຫດການດັ່ງກ່າວວ່າເປັນການສໍ້ໂກງໂດຍຂາດຂໍ້ມູນຫຼັກຖານມາຢັ້ງຢືນ, ການທໍາຮ້າຍຮ່າງກາຍ ແຕ່ສານຂັ້ນລຸ່ມກໍານົດເຫດການເປັນເຫດເຮັດໃຫ້ຜູ້ອື່ນເສຍຊີວິດດ້ວຍຄວາມບໍ່ລະມັດລະວັງ, ການປອມແປງເອກະສານແຕ່ສານຂັ້ນລຸ່ມກໍານົດເຫດການເປັນການນໍາໃຊ້ເອກະສານປອມ, ຄະດີໄມ້ຫວງຫ້າມຍັງມີການໃຊ້ມາດຕາລະເມີດລະບອບພາສີອາກອນ, ການສົມຮູ້ຮ່ວມຄິດແຕ່ສານຂັ້ນລຸ່ມກໍານົດເຫດການເປັນການປິດບັງການກະທໍາຜິດ.

ຈາກບາງຕົວຢ່າງທີ່ກ່າວມາຂ້າງເທິງນັ້ນຈະເຫັນໄດ້ວ່າຖ້າຫາກກໍານົດເຫດການຂອງຄະດີບໍ່ຖືກຕ້ອງແລ້ວການນໍາໃຊ້ມາດຕາກົດໝາຍເພື່ອແກ້ໄຂບັນຫາ ຫຼື ການຕັດສິນຂອງສານຕໍ່ບັນຫາດັ່ງກ່າວກໍຈະບໍ່ຖືກຕ້ອງ ແລະ ຍຸຕິທໍາ.

### 7.3. ກວດກາທາງດ້ານກົດໝາຍໃນການນໍາໃຊ້ມາດຕາກົດໝາຍຕໍ່ເນື້ອໃນເຫດການຂອງຄະດີ

ການນໍາໃຊ້ມາດຕາ, ກົດໝາຍຕໍ່ເນື້ອໃນເຫດການຂອງຄະດີບໍ່ຖືກຕ້ອງ ແມ່ນພົວພັນກັບການກໍານົດເຫດການຂອງຄະດີ, ຖ້າຫາກກໍານົດເຫດການຂອງຄະດີໄດ້ຢ່າງຈະແຈ້ງການຕີຄວາມໝາຍຂອງມາດຕາກົດໝາຍ ກໍມີຄວາມສໍາຄັນ ໂດຍສະເພາະມາດຕາກົດໝາຍທີ່ນໍາມາແກ້ໄຂເຫດການຄະດີດັ່ງກ່າວແມ່ນມາດຕາໃດ ສອດຄ່ອງກັບເຫດການຂອງຄະດີແນວໃດ ຊຶ່ງຜ່ານມາພວກເຮົາບໍ່ມັກໃຊ້ຂໍ້ກໍານົດເນື້ອໃນທີ່ເປັນກົດໝາຍ ແກ້ໄຂບັນຫາທີ່ເປັນປະເດັນຂໍ້ຂັດແຍ່ງໃນຄະດີ, ສ່ວນຫຼາຍຈະມັກໃຊ້ຂໍ້ມູນຫຼັກຖານເປັນບ່ອນອີງໃນການແກ້ໄຂບັນຫາ ຊຶ່ງພວກເຮົາກໍຮັບຮູ້ກັນແລ້ວວ່າ ສະຕິຕໍ່ກົດໝາຍຂອງພົນລະເມືອງຍັງຕໍ່າ ຈຶ່ງເຮັດໃຫ້ສະພາບຂອງຂໍ້ມູນຫຼັກຖານໃນປັດຈຸບັນມີການປອມແປງ ແລະ ສ້າງຂຶ້ນໃໝ່ໄດ້ງ່າຍດັ່ງນັ້ນ, ການນໍາໃຊ້ຫຼັກຖານໃນການແກ້ໄຂບັນຫາ ຈຶ່ງບໍ່ໄດ້ຮັບປະກັນຄວາມຖືກຕ້ອງ ແລະ ຄວາມຍຸຕິທໍາ; ແຕ່ການ ນໍາໃຊ້ເນື້ອໃນມາດຕາຂອງກົດໝາຍແກ້ໄຂບັນຫານັ້ນ ໃນດ້ານຫຼັກການຈະມີຄວາມຖືກຕ້ອງ ເນື່ອງຈາກວ່າມາດຕາຂອງກົດໝາຍຈະມີຂອບເຂດ ແລະ ເນື້ອໃນທີ່ຊັດເຈນ ຖ້າຫາກບໍ່ຊັດເຈນ ສານຂັ້ນລົບລ້າງກໍສາມາດຕີຂອບໃຫ້ເປັນປະເພນີສານ.

ສະນັ້ນ, ເມື່ອມີເຫດການເກີດຂຶ້ນກົງກັບເນື້ອໃນຂອງມາດຕາກົດໝາຍໃດ ກໍແກ້ໄຂຕາມຈຸດປະສົງ ແລະ ເນື້ອໃນຂອງມາດຕາກົດໝາຍທີ່ກ່ຽວຂ້ອງຈະມີຄວາມຖືກຕ້ອງທີ່ສຸດ. ການນຳໃຊ້ມາດຕາກົດໝາຍຕໍ່ເນື້ອໃນເຫດການຂອງຄະດີ ມີຫຼາຍກໍລະນີຊຶ່ງພວກເຮົາຕ້ອງໄດ້ຮັບຮູ້ເຂົ້າໃຈກົດໝາຍຢ່າງລະອຽດ ແລະ ຄົບຖ້ວນ ວ່າບັນຫານີ້ພົວພັນກັບມາດຕາກົດໝາຍໃດແດ່, ນອກນັ້ນຍັງຕ້ອງເຂົ້າໃຈຢ່າງຈະແຈ້ງເນື້ອໃນຂອງມາດຕາກົດໝາຍດັ່ງກ່າວອີກດ້ວຍ.

ສະຫຼຸບລວມແລ້ວ ວິທີການໃນການກວດກາທາງດ້ານກົດໝາຍຂອງສານຂັ້ນລົບລ້າງ ຜູ່ຄົ້ນຄວ້າຄະດີຕ້ອງໄດ້ກວດກາຄືນ ສະເພາະບັນຫາທີ່ມີໃນສຳນວນຄະດີ ຊຶ່ງສານຂັ້ນອຸທອນໄດ້ດຳເນີນ ແລະ ນຳໃຊ້ກົດໝາຍຕ່າງໆ ແກ້ໄຂຄະດີໃນຜ່ານມາ ໂດຍກວດເບິ່ງຄຳພິພາກສາຂອງສານອຸທອນ. ພ້ອມນັ້ນ ກໍກວດກາຕາມປະເດັນທີ່ຄູ່ຄວາມຂໍລົບລ້າງມາວ່າມີຄວາມຈິງແນວໃດ, ຖ້າການຂໍລົບລ້າງໃດທີ່ເປັນບັນຫາເນື້ອຄະດີກໍບໍ່ຕ້ອງລົງເລິກໃນການພິຈາລະນາ ເພາະສານຂັ້ນລົບລ້າງບໍ່ມີສິດອຳນາດໃນການພິຈາລະນາ.

# ພາກທີ VIII
# ການປະຕິບັດຄຳຕັດສິນຂອງສານ

## 1. ຄວາມຮູ້ກ່ຽວກັບການປະຕິບັດຄຳຕັດສິນຂອງສານ

### 1.1 ຄວາມໝາຍ

ການຈັດຕັ້ງປະຕິບັດຄຳຕັດສິນຂອງສານກ່ຽວກັບຄະດີອາຍາ ແມ່ນຂັ້ນຕອນສຸດທ້າຍຂອງການດຳເນີນຄະດີ ຊຶ່ງໝາຍເຖິງການນຳເອົາຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ແລະ ນິຕິກຳອື່ນໆ ຂອງສານມາຈັດຕັ້ງປະຕິບັດໂດຍອີງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນເພື່ອປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງລັດ, ລວມໝູ່ ແລະ ຂອງພົນລະເມືອງ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມຍຸຕິທຳທັງເປັນການ ເພີ່ມທະວີຄວາມສັກສິດຂອງອຳນາດລັດ ແລະ ກົດໝາຍ.

ເພື່ອບັນລຸຜົນທີ່ກ່າວມາຂ້າງເທິງນັ້ນ ພະນັກງານປະບັດຄຳຕັດສິນຂອງສານ ແລະ ເຈົ້າໜ້າທີ່ຄ້າຍຄຸມຂັງຕ້ອງປະຕິບັດຢ່າງເຂັ້ມງວດ, ພາວະວິໄສ ແລະ ຖືກຕ້ອງຕາມຄຳຕັດສິນຂອງສານ.

ການຈັດຕັ້ງປະຕິບັດຄຳຕັດສິນຂອງສານກ່ຽວກັບຄະດີອາຍານັ້ນ ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານໄດ້ກຳນົດກ່ຽວກັບການໃຊ້ແທນຄ່າເສັຍຫາຍທາງແພ່ງ, ຄ່າປັບໃໝ, ການຮິບຊັບ ແລະ ຮິບວັດຖຸສິ່ງຂອງ (ມ 36 ຫາ 39 ກປສ). ສ່ວນການປະຕິບັດໂທດທາງອາຍານັ້ນແມ່ນໄດ້ກຳນົດລະອຽດຢູ່ໃນ ພາກທີ XI, ໝວດທີ 1 ຫາ 5, ມາດຕາ 235 ຫາ 256 ກດຍ ຊຶ່ງຄຳຕັດສິນຂອງສານທີ່ຈະນຳມາຈັດຕັ້ງປະຕິບັດມີດັ່ງນີ້:

1) ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳຕັດສິນ ຂອງສານຂັ້ນຕົ້ນ ທີ່ໃຊ້ໄດ້ຢ່າງເດັດຂາດ;

2) ຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ ທີ່ຕ້ອງປະຕິບັດພາງ;

3) ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາ ຂອງສານຂັ້ນອຸທອນ ທີ່ໃຊ້ໄດ້ຢ່າງເດັດຂາດ;

4) ຄຳສັ່ງ, ຄຳຊີ້ຂາດ ແລະ ຄຳພິພາກສາ ຂອງສານຂັ້ນລົບລ້າງ;

➢ ເພື່ອຄວາມເຂົ້າໃຈເຖິງຄວາມໝາຍຂອງຄຳຕັດສິນຕ່າງໆ ຂອງສານຈຶ່ງຂໍສະເໜີບັນດາຄຳນິຍາມຂອງຄຳສັບ (ມ 3 ກດຍ) ດັ່ງນີ້:

1) ຄຳສັ່ງຂອງສານ ໝາຍເຖິງ ຄຳຕັດສິນປະເພດໜຶ່ງຂອງສານ ກ່ຽວກັບການດຳເນີນຄະດີ ເຊັ່ນ ຄຳສັ່ງຍຶດຊັບ ຫຼື ອາຍັດຊັບ, ຄຳສັ່ງຊັດມ້ຽນຄະດີ, ຄຳສັ່ງຈັບຕົວ ແລະ ອື່ນໆ;

2) ຄຳຊີ້ຂາດຂອງສານ ໝາຍເຖິງ ຄຳຕົກລົງປະເພດໜຶ່ງຂອງສານກ່ຽວກັບການຊີ້ຂາດສິດອຳນາດຂອງສານ, ຂອງຄະນະສານ, ການບໍ່ຮັບເອົາຄະດີມາພິຈາລະ ນາ, ຄຳຕັດສິນປະຫານຊີວິດ ແລະ ອື່ນໆ;

3) ຄຳຕັດສິນຂອງສານ ໝາຍເຖິງ ຄຳຕັດສິນຂອງສານຂັ້ນຕົ້ນ;

4) ຄຳພິພາກສາ ໝາຍເຖິງ ຄຳຕັດສິນຂອງສານຂັ້ນອຸທອນ ແລະ ຂັ້ນລົບລ້າງ;

ໃນມາດຕາ 3 ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານກໍໄດ້ໃຫ້ນິຍາມຕໍ່ກັບຄຳສັບເຫຼົ່ານັ້ນເຊັ່ນດຽວກັນແຕ່ມັນຕິດພັນກັບກົດໝາຍແພ່ງ.

### 1.2. ຄວາມສຳຄັນ

ຄືດັ່ງທີ່ພວກເຮົາຮັບຮູ້ນຳກັນແຈ້ງແລ້ວວ່າ ການຈັດຕັ້ງປະຕິບັດຄຳຕົກລົງຂອງສານແມ່ນການທວງໃຫ້ຜູ້ກໍ່ຄວາມເສັຍຫາຍໄດ້ທົດແທນຄືນ ຫຼື ເພື່ອຟື້ນຟູຄືນສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງບົນພື້ນຖານອີງໃສ່ຄຳຕົກລົງຕ່າງໆຂອງສານ.

ໃນທາງກົງກັນຂ້າມຖ້າສິດ ແລະ ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ພົນລະເມືອງທີ່ຖືກລະເມີດຫາກບໍ່ໄດ້ຮັບການຕອບແທນຄືນຢ່າງເໝາະສົມຈະເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ ແລະ ບໍ່ມີຄວາມຍຸຕິທຳ ແລະ ການຮ້ອງຂໍຄວາມເປັນທຳອາດຈະບໍ່ມີວັນສິ້ນສຸດ.

**ຕົວຢ່າງ:** ໃນປັດຈຸບັນພວກເຮົາເຫັນນຳກັນແລ້ວວ່າຄຳຮ້ອງຟ້ອງຂໍຄວາມເປັນທຳ ຫຼື ຄຳສະເໜີແມ່ນຍື່ນໄປທຸກອົງການ ເຊັ່ນ ສະພາແຫ່ງຊາດ, ອົງການກວດກາລັດຖະບານ ຫຼື ຫ້ອງວ່າການລັດຖະບານ ທັງທີ່ວ່າຂະບວນການຍຸຕິທຳໄດ້ພິຈາລະນາສິ້ນສຸດແລ້ວຄື ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງເທົ່ານັ້ນ.

## 2. ອົງການຄຸ້ມຄອງ ແລະ ຈັດຕັ້ງປະຕິບັດ

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ໄດ້ກຳນົດວ່າອົງການຈັດຕັ້ງປະຕິບັດຄຳຕົກລົງຂອງສານປະກອບມີຄ້າຍດັດສ້າງ, ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານທະຫານ, ອົງການປົກຄອງບ້ານ, ອົງການຈັດຕັ້ງບ່ອນຜູ້ກ່ຽວສັງກັດຢູ່ ຫຼື ບ່ອນເຮັດວຽກ ແລະ ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ (ມາດຕາ 237 ກດຍ).

1) ຄ້າຍດັດສ້າງຂອງກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ ແລະ ກົມຕຳຫຼວດຄຸມຂັງ-ດັດສ້າງ ທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບປະຕິບັດຄຳຕັດສິນຂອງສານກ່ຽວກັບໂທດຕັດອິດສະລະພາບ;

2) ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານທະຫານປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທະຫານ ທີ່ໃຊ້ໄດ້ຢ່າງເດັດຂາດ;

3) ອົງການປົກຄອງບ້ານປະຕິບັດໜ້າທີ່ຕິດຕາມ, ສຶກສາອົບຮົມບຸກຄົນ ຊຶ່ງປະຕິບັດໂທດຈຳກັດທີ່ຢູ່ ຫຼື ໂທດທີ່ພາກໄວ້;

4) ຫ້ອງການ ຈັດຕັ້ງປະຕິບັດຄຳຕັດສິນຂອງສານ ພະແນກຍຸຕິທຳແຂວງ, ນະຄອນ ແລະ ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຂອງຫ້ອງການຍຸຕິທຳເມືອງ, ເທດສະບານກ່ຽວກັບການໃຊ້ແທນຄ່າເສັຍຫາຍ, ການປັບໃໝ, ການຮິບຊັບ ແລະ ໂທດດັດສ້າງໂດຍບໍ່ຕັດອິດສະລະພາບໃນຄະດີອາຍາ.

### 3. ຂັ້ນຕອນການຈັດຕັ້ງປະຕິບັດ

ພາຍໃນກຳນົດເວລາເຈັດວັນ ນັບແຕ່ວັນໄດ້ຮັບຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ. ປະທານຄະນະສານທີ່ພິຈາລະນາຄະດີເປັນຂັ້ນຕົ້ນຕ້ອງອອກຄຳສັ່ງໃຫ້ປະຕິບັດຄຳຕັດສິນ ຫຼື ຄຳພິພາກສາຂອງສານ ຫຼື ມອບໝາຍໃຫ້ສານອື່ນ ໃນຂັ້ນດຽວກັນອອກຄຳສັ່ງໃຫ້ປະຕິບັດຄຳຕັດສິນ ຫຼື ຄຳພິພາກສາຂອງສານ.

ຄຳສັ່ງໃຫ້ປະຕິບັດຄຳຕັດສິນຂອງສານ ຕ້ອງບອກ ຊື່ ແລະ ນາມສະກຸນ, ຕຳແໜ່ງ ແລະ ໜ້າທີ່ຂອງຜູ້ອອກຄຳສັ່ງ, ຊື່ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ; ຊື່ ແລະ ນາມສະກຸນ, ວັນເກີດ ແລະ ທີ່ຢູ່ຂອງນັກໂທດ; ຄຳຕັດສິນ ຫຼື ຄຳພິພາກສາ ທີ່ນັກໂທດຕ້ອງໄດ້ປະຕິບັດ.

ສຳເນົາຄຳສັ່ງໃຫ້ປະຕິບັດຄຳຕັດສິນ ແລະ ຄຳຕັດສິນຂອງສານຕ້ອງສົ່ງໃຫ້ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ນັກໂທດ ແລະ ອົງການໄອຍະການໃນຂັ້ນດຽວກັນກັບອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ໃນກໍລະນີທີ່ນັກໂທດຖືກປ່ອຍຕົວພາງ, ຄຳສັ່ງໃຫ້ປະຕິບັດຄຳຕັດສິນຕ້ອງບອກແຈ້ງວ່າໃຫ້ປະຕິບັດພາຍໃນກຳນົດເຈັດວັນນັບແຕ່ວັນໄດ້ຮັບຄຳສັ່ງເປັນຕົ້ນໄປ ແລະ ນັກໂທດນັ້ນຕ້ອງເຂົ້າສະເໜີຕົວຕໍ່ຫ້ອງການຂອງເຈົ້າໜ້າທີ່ຕຳຫຼວດຄຸມຂັງ-ດັດສ້າງ ເພື່ອປະຕິບັດຄຳຕັດສິນຂອງສານ.

ໃນກໍລະນີທີ່ນັກໂທດຊຶ່ງຖືກປ່ອຍຕົວພາງຫາກບໍ່ມາສະເໜີຕົວ ຫຼື ເອົາຕົວຫຼົບໜີພາຍຫຼັງສານໄດ້ຕັດສິນລົງໂທດຜູ້ກ່ຽວແລ້ວ ສານຕ້ອງອອກຄຳສັ່ງຈັບຕົວນັກໂທດແລ້ວໃຫ້ອົງການສືບສວນ-ສອບສວນຂັ້ນດຽວກັນປະຕິບັດ(ມ 236 ກດຍ). ຄຽງຄູ່ກັນນັ້ນ, ມາດຕາ 173 ຂອງກົດໝາຍອາຍາສະບັບປັບປຸງປີ 2005 ຍັງໄດ້ກຳນົດເພີ່ມເຕີມເພື່ອໃຊ້ມາດຕະການຕໍ່ຈຳເລີຍ ຫຼື ນັກໂທດ ໃນກໍລະນີການບໍ່ປະຕິບັດຄຳຕັດສິນ ຫຼື ຄຳສັ່ງຂອງສານດັ່ງນີ້ ບຸກຄົນຜູ້ໃດຫາກບໍ່ປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ຫຼື ໝາຍຮຽກຂອງສານຈະຖືກລົງໂທດຕັດອິດສະລະພາບແຕ່ ສາມເດືອນ ຫາ ໜຶ່ງປີ ແລະ ຈະຖືກປັບໃໝແຕ່ 100.000 ກີບ ຫາ 5.000.000 ກີບ.

## ແຜນວາດ 1: ການປະຕິບັດຄຳຕັດສິນຂອງສານ




- ແຜນວາດ ຂ້າງເທິງນີ້ຈະຊ່ວຍໃຫ້ເຮົາເຫັນໄດ້ຂັ້ນຕອນ ຫຼື ຂະບວນການຂອງການປະຕິບັດຄຳຕັດສິນຂອງສານກ່ຽວກັບການປະຕິບັດໂທດທາງອາຍາ ນັບແຕ່ມື້ສານອອກຄຳສັ່ງໃຫ້ປະຕິບັດເປັນຕົ້ນໄປ.

ຄຳຕັດສິນຕ່າງໆ ຂອງສານທີ່ຈະນຳມາຈັດຕັ້ງປະຕິບັດປະກອບມີຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງໄດ້ກຳນົດໂທດຕາມສະຖານໜັກ ຫຼື ເບົາ ໂດຍອີງຕາມການວິນິດໄສຂອງສານ ແລະ ການວາງໂທດໃສ່ຈຳເລີຍ. ໂທດທີ່ວາງໃສ່ຈຳເລີຍ ສາມາດຈຳແນກອອກເປັນ 2 ປະເພດຄື ໂທດເພີ່ມ ແລະ ໂທດຕົ້ນຕໍ ລາຍລະອຽດດັ່ງລຸ່ມນີ້:

ກ.) ໂທດຕົ້ນຕໍ:

1. ຕຳນິວິຈານຕໍ່ໜ້າມະຫາຊົນ;
2. ດັດສ້າງໂດຍບໍ່ຕັດອິດສະລະພາບ;
3. ຕັດອິດສະລະພາບ;
4. ປະຫານຊີວິດ.

ຂ.) ໂທດເພີ່ມ

1. ປັບໃໝ (ໃນບາງກໍລະນີ ອາດຈະເປັນໂທດຕົ້ນຕໍ);
2. ຣິບວັດຖຸສິ່ງຂອງ;
3. ຣິບຊັບ;
4. ປົດສິດເລືອກຕັ້ງ ແລະ ສະໝັກຮັບເລືອກຕັ້ງ;
5. ຈຳກັດທີ່ຢູ່.

ການປະຕິບັດໂທດຕຳນິວິຈານຕໍ່ໜ້າມະຫາຊົນ ກ່ອນອື່ນຕ້ອງເຂົ້າໃຈວ່າ ໂທດຕຳນິວິຈານຕໍ່ໜ້າມະຫາຊົນ ແມ່ນການຕຳນິວິຈານຜູ້ກະທຳຜິດໃນທີ່ປະຊຸມສານ. ໃນກໍລະນີຈຳເປັນກໍອາດຈະເອົາຄຳຕັດສິນຂອງສານລົງໃນໜ້າໜັງສືພິມ ຫຼື ດ້ວຍວິທີການອື່ນໆກໍໄດ້ (ມ 29 ກອຍ).

ການປະຕິບັດໂທດຕຳນິວິຈານຕໍ່ໜ້າມະຫາຊົນ ແມ່ນໂທດອາຍາປະເພດໜຶ່ງທີ່ເບົາກວ່າໝູ່ໃນບັນດາໂທດຕົ້ນຕໍແຕ່ມັນກະທົບໂດຍກົງຕໍ່ແນວຄິດ, ຈິດໃຈ ແລະ ຄວາມຮູ້ສຶກຂອງຜູ້ຖືກລົງໂທດ. ດັ່ງນັ້ນ, ພະນັກງານປະຕິບັດຄຳຕັດສິນຂອງສານຕ້ອງໄດ້ປະຕິບັດຢ່າງຮັບປະກັນ ແລະ ຮອບຄອບພໍສົມຄວນ ເພາະວ່າເຈດຕະນາລົມຂອງກົດໝາຍຈຸດປະສົງຂອງການລົງໂທດບໍ່ພຽງແຕ່ ມີຈຸດປະສົງລົງໂທດຜູ້ກະທຳຜິດເທົ່ານັ້ນ ແຕ່ຫາກຍັງມີຈຸດປະສົງເພື່ອດັດສ້າງ ແລະ ສຶກສາອົບຮົມຜູ້ຖືກລົງໂທດໃຫ້ມີຈິດໃຈບໍລິສຸດຕໍ່ການອອກແຮງງານ, ໃຫ້ປະຕິບັດກົດໝາຍຢ່າງຖືກຕ້ອງ ແລະ ເຄັ່ງຄັດ, ໃຫ້ເຄົາລົບລະບຽບການດຳລົງຊີວິດຂອງສັງຄົມພ້ອມທັງເປັນການປ້ອງກັນບໍ່ໃຫ້ການກະທຳຜິດເທື່ອໃໝ່ເກີດຂຶ້ນ ສຳລັບຜູ້ຖືກລົງໂທດ ແລະສຳລັບບຸກຄົນອື່ນອີກດ້ວຍ. ການລົງໂທດແມ່ນ ບໍ່ມີຈຸດປະສົງຈະກໍ່ຄວາມທຸກທໍລະມານແກ່ຮ່າງກາຍ ຫຼື ຢຽບຢ່ຳກຽດສັກສີຂອງມະນຸດ (ມ 27 ກອຍ).

ໃນໄລຍະຜ່ານມາໂທດດັ່ງກ່າວແມ່ນບໍ່ຄ່ອຍຈະຖືກນຳໃຊ້ ແຕ່ຂໍ້ສັງເກດໃນການປະຕິບັດໂທດດັ່ງກ່າວນີ້ຕ້ອງເບິ່ງຄວາມເໝາະສົມເຊັ່ນວ່າ ຈະເອົາລົງໜັງສືພິມຈັກມື້ ລົງໜັງສືພິມຈັກສະບັບ.

### 3.1. ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ

ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ແມ່ນໂທດທີ່ຈະລົງໃສ່ຜູ້ກະທຳຜິດດ້ວຍການປະໃຫ້ຜູ້ກ່ຽວສືບຕໍ່ອອກແຮງງານຢູ່ບ່ອນເຮັດວຽກເດີມ ຫຼື ຢູ່ບ່ອນອື່ນ ໂດຍຫັກເອົາເງິນແຕ່ຫ້າຫາຊາວສ່ວນຮ້ອຍ ຂອງເງິນຄ່າແຮງງານທັງໝົດຂອງຜູ້ກະທຳຜິດ ເຂົ້າເປັນລາຍໄດ້ຂອງລັດຕາມຄຳຕັດສິນຂອງສານ. ໂທດດັດສ້າງ ໂດຍບໍ່ຕັດອິດສະລະພາບ ທີ່ຈະລົງໃສ່ຜູ້ກະທຳຜິດນັ້ນແມ່ນບໍ່ໃຫ້ເກີນໜຶ່ງປີ (ມ 30 ກອຍ).

ການປະຕິບັດໂທດດັ່ງກ່າວນີ້ ພະນັກງານປະຕິບັດຄຳຕັດສິນຂອງສານຈະໄດ້ຮຽກຜູ້ກ່ຽວມາປຶກສາ ແລະ ຕົກລົງກ່ຽວກັບການຊຳລະ ຖ້າຫາກຜູ້ທີ່ຖືກປະຕິບັດໂທດດັ່ງກ່າວນີ້ບໍ່ຈິງໃຈຊຳລະ, ຖ້າແມ່ນພະນັກງານສັງກັດລັດ ໃຫ້ເອົາໃຈໃສ່ເພາະວ່າເງິນເດືອນພື້ນຖານຂອງພະນັກງານຂັບລົດແມ່ນບໍ່ກ່ຽວຂ້ອງກັບເງິນອຸດໜູນປະເພດຕ່າງໆ.

### 3.2. ໂທດຕັດອິດສະລະພາບ

ໂທດຕັດອິດສະລະພາບແມ່ນໂທດທີ່ລົງໃສ່ຜູ້ກະທຳຜິດ ໂດຍໃຫ້ຜູ້ກ່ຽວປະຕິບັດໂທດ, ໃນເວລາຢູ່ຄ້າຍຄຸມຂັງນັ້ນຕ້ອງປະຕິບັດຕາມລະບຽບຂອງຄ້າຍຄຸມຂັງຢ່າງເຂັ້ມງວດພ້ອມກັນນັ້ນນັກໂທດຍັງຈະໄດ້ມີການອອກແຮງງານ, ຝຶກວິຊາຊີບຫັດຖະກຳ ແລະ ຮັບຟັງການເຜີຍແຜ່ກົດໝາຍ ແລະ ເອກະສານຕ່າງໆເພື່ອໃຫ້ເຂົາເຈົ້າມີການປ່ຽນແປງແນວຄິດຈິດໃຈກ່ອນການຖືກປ່ອຍຕົວ ພາຍຫຼັງປະຕິບັດໂທດສຳເລັດ. ເຈົ້າໜ້າທີ່ຄ້າຍຄຸມຂັງຈະເປັນຜູ້ຕິດຕາມ ແລະ ບັນທຶກການເຄື່ອນໄຫວການໃນການປະຕິບັດລະບຽບຄ້າຍຄຸມຂັງ ແລະ ການເຄື່ອນໄຫວກິດຈະກຳຕ່າງໆ, ເພື່ອເປັນບ່ອນອີງສະເໜີໃຫ້ຂັ້ນເທິງປະຕິບັດນະໂຍບາຍຕ່າງໆ ເຊັ່ນໃຫ້ອະໄພຍະໂທດ ແລະ ອື່ນໆ. ກຳນົດໂທດຕັດອິດສະລະພາບແມ່ນມີກຳນົດແຕ່ສາມເດືອນຫາຊາວປີ ຫຼື ຕະຫຼອດຊີວິດ. ສຳລັບໂທດຕັດອິດສະລະພາບຕະຫຼອດຊີວິດນັ້ນແມ່ນຫ້າມລົງໃສ່ຜູ້ກະທຳຜິດທີ່ມີອາຍຸຕ່ຳກ່ວາສິບແປດປີ ແລະ ຜູ້ຍິງທີ່ຖືພາ ໃນເວລາກະທຳຜິດ (ມ 31 ກອຍ). ກຳນົດເວລາການກັກຂັງພາງທັງໝົດຕ້ອງຄິດໄລ່ເຂົ້າໃນການປະຕິບັດໂທດຕັດອິດສະລະພາບ ຫຼື ໂທດດັດສ້າງໂດຍບໍ່ຕັດອິດສະລະພາບ. ການກັກຂັງພາງໜຶ່ງວັນແມ່ນເທົ່າກັນກັບໂທດຕັດອິດສະລະພາບໜຶ່ງວັນ ຫຼື ເທົ່າກັນກັບໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ສາມວັນ, ນັກໂທດທີ່ຖືກສານຕັດສິນລົງໂທດຕັດອິດສະລະພາບນັບທັງຜູ້ຖືກປ່ອຍຕົວພາງ ຫຼື ບໍ່ຖືກກັກຂັງພາງ ຕ້ອງໄດ້ນຳຕົວມາປະຕິບັດໂທດຕັດອິດສະລະພາບຢູ່ຄ້າຍດັດສ້າງ, ຫົວໜ້າສະຖານທີ່ກັກຂັງ ຫຼື ຄ້າຍດັດສ້າງຕ້ອງແຈ້ງໃຫ້ຄອບຄົວນັກໂທດຊາບກ່ຽວກັບສະຖານທີ່ບ່ອນນັກໂທດປະຕິບັດໂທດ ພາຍໃນກຳນົດເວລາສິບຫ້າວັນນັບ ແຕ່ວັນໄດ້ຮັບນັກໂທດເປັນຕົ້ນໄປ. ໃນກໍລະນີທີ່ນັກໂທດຫາກຖືກກັກຂັງ ເຈົ້າໜ້າທີ່ສະຖານທີ່ກັກຂັງ ຫຼື ເຈົ້າໜ້າທີ່ຄ້າຍ

ດັດສ້າງຕ້ອງອະນຸຍາດໃຫ້ນັກໂທດພົບ ກັບຍາດພີ່ນ້ອງຂອງຜູ້ກ່ຽວຕາມຄໍາຮ້ອງຂໍກ່ອນຈະນໍາຕົວຜູ້ກ່ຽວໄປປະຕິບັດໂທດ.

### 3.3. ການໂຈະການປະຕິບັດໂທດຕັດອິດສະລະພາບ

ຜູ້ຖືກສານຕັດສິນລົງໂທດຕັດອິດສະລະພາບ ແຕ່ຍັງບໍ່ທັນໄດ້ຖືກກັກຂັງມີສິດຂໍໂຈະການປະຕິບັດໂທດຕັດອິດສະລະພາບນັ້ນ ໂດຍໃຫ້ຜູ້ກ່ຽວສະເໜີຕໍ່ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ ຫຼື ຫົວໜ້າກົມຕໍາຫຼວດຄຸມຂັງ-ດັດສ້າງທີ່ຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ. ພາຍໃນກໍານົດເວລາສິບວັນ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍດັ່ງກ່າວເຈົ້າໜ້າທີ່ ທີ່ກ່ຽວຂ້ອງຕ້ອງພິຈາລະນາ (ມ 241 ກດຍ).

ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ມາດຕາ 242 ໄດ້ກໍານົດສາເຫດທີ່ພາໃຫ້ມີການໂຈະການປະຕິບັດໂທດຕັດອິດສະລະພາບມີດັ່ງນີ້ :

1) ນັກໂທດ ທີ່ເຈັບເປັນຢ່າງໜັກໜ່ວງ ໂດຍມີການຢັ້ງຢືນຈາກຄະນະແພດພາຍຫຼັງທີ່ໄດ້ຮັບການປິ່ນປົວດີແລ້ວ ໃຫ້ນໍາມາປະຕິບັດໂທດ;

2) ແມ່ຍິງຖືພາ ຫຼື ມີລູກນ້ອຍທີ່ມີອາຍຸຕໍ່າກວ່າ ໜຶ່ງປີ ຈົນກວ່າລູກມີອາຍຸແຕ່ໜຶ່ງປີ ຂຶ້ນໄປ;

3) ໃນກໍລະນີນັກໂທດຖືກລົງໂທດຕັດອິດສະລະພາບ ຕໍ່າກວ່າ ສາມປີ ແລະ ເປັນແຮງງານຕົ້ນຕໍຂອງຄອບຄົວ ຖ້າຫາກນໍາໄປປະຕິບັດໂທດຈະມີຜົນກະທົບຢ່າງໜັກໜ່ວງຕໍ່ຄອບຄົວຜູ້ກ່ຽວມີສິດຂໍໂຈະໄດ້ໜຶ່ງປີ;

4) ກໍລະນີມີຄວາມຈໍາເປັນຕ້ອງປະຕິບັດໜ້າທີ່ທາງລັດຖະການ ໂດຍໄດ້ຮັບການຢັ້ງຢືນຈາກອົງການຈັດຕັ້ງຂອງຜູ້ກ່ຽວ ຍົກເວັ້ນການກະທໍາຜິດທີ່ເປັນອັນຕະລາຍຮ້າຍແຮງຕໍ່ສັງຄົມ ແລະ ຄວາມໝັ້ນຄົງຂອງຊາດຜູ້ກ່ຽວຈະມີສິດຂໍໂຈະໄດ້ໜຶ່ງປີ.

ໄລຍະເວລາການໂຈະການປະຕິບັດໂທດຕັດອິດສະລະພາບ ໃນກໍລະນີທີ່ກ່າວມາເທິງນີ້ຈະບໍ່ນັບເຂົ້າໃນການປະຕິບັດໂທດ.

ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ ຫຼື ຫົວໜ້າກົມຕໍາຫຼວດຄຸມຂັງ-ດັດສ້າງ ຕ້ອງອອກຄໍາສັ່ງໂຈະການປະຕິບັດໂທດຕັດອິດສະລະພາບແລ້ວສົ່ງຄໍາສັ່ງດັ່ງກ່າວ ໃຫ້ຜູ້ທີ່ຖືກຕັດສິນລົງໂທດ ແລະ ລາຍງານໃຫ້ຫົວໜ້າອົງການໄອຍະການເພື່ອຕິດຕາມກວດກາ.

ຖ້າຫາກໝົດກໍານົດການໂຈະ ພາຍໃນ ສິບວັນ ແລະ ຜູ້ກ່ຽວຍັງບໍ່ໄດ້ໄປສະເໜີຕົວ ຕໍ່ເຈົ້າໜ້າທີ່ຕໍາຫຼວດ ເພື່ອປະຕິບັດໂທດ ແລະ ບໍ່ມີເຫດຜົນພຽງພໍ ເຈົ້າໜ້າທີ່ຕໍາຫຼວດ ຕ້ອງພາຕົວຜູ້ກ່ຽວມາປະຕິບັດໂທດໃນທັນທີ.

### 3.4. ໂທດປະຫານຊີວິດ

ໂທດປະຫານຊີວິດແມ່ນມາດຕະການພິເສດຂອງການລົງໂທດ ທີ່ຈະລົງໃສ່ຜູ້ກະທຳຜິດໃນສະຖານໜັກເປັນພິເສດຊຶ່ງໄດ້ບົ່ງໄວ້ໃນພາກສະເພາະຂອງກົດໝາຍອາຍາສະບັບນີ້.

ສຳລັບຢູ່ ສປປ ລາວ ການປະຫານຊີວິດແມ່ນປະຕິບັດດ້ວຍການຍິງເປົ້າ.

#### 3.4.1. ຂັ້ນຕອນ ແລະ ລະບຽບການຈັດຕັ້ງປະຕິບັດໂທດປະຫານຊີວິດ

ພາຍຫຼັງຄຳຕັດສິນ ຫຼື ຄຳພິພາກສາ ປະຫານຊີວິດໃຊ້ໄດ້ຢ່າງເດັດຂາດແລ້ວ ສານນັ້ນຕ້ອງສົ່ງຄຳຕັດສິນ ຫຼື ຄຳພິພາກສາດັ່ງກ່າວພ້ອມດ້ວຍສຳນວນຄະດີໃຫ້ປະທານສານປະຊາຊົນສູງສຸດ ແລະ ໃຫ້ຫົວໜ້າອົງການໄອຍະການປະຊາຊົນສູງສຸດໃນທັນໃດ (ມ 255 ກດຍ).

ພາຍໃນກຳນົດ ທີກສິບວັນ ນັບແຕ່ວັນໄດ້ຮັບສຳນວນຄະດີ, ຄຳຕັດສິນ ຫຼື ຄຳພິພາກສາ ປະທານສານປະຊາຊົນສູງສຸດ ພ້ອມດ້ວຍຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕ້ອງກວດກາສຳນວນຄະດີຮ່ວມກັນກ່ຽວກັບຄວາມຖືກຕ້ອງຂອງຄຳຕັດສິນ ຫຼື ຄຳພິພາກສາປະຫານຊີວິດຕາມເຫດການຕົວຈິງຂອງຄະດີ ແລະ ທາງດ້ານກົດໝາຍ. ຖ້າຫາກເຫັນວ່າຖືກຕ້ອງແລ້ວ ປະທານສານປະຊາຊົນສູງສຸດກໍຈະອອກຄຳຊີ້ຂາດຢັ້ງຢືນຄວາມຖືກຕ້ອງຂອງຄຳຕັດສິນ ຫຼື ຄຳພິພາກສາປະຫານຊີວິດນັ້ນ. ໃນກໍລະນີທີ່ເຫັນວ່າບໍ່ຖືກຕ້ອງຫົວໜ້າອົງການໄອຍະການປະຊາຊົນສູງສຸດກໍຈະສະເໜີຄັດຄ້ານຄຳຕັດສິນ ຫຼື ຄຳພິພາກສາປະຫານຊີວິດນັ້ນຕາມລະບຽບການຮື້ຟື້ນຄະດີ.

ຄຳຕັດສິນ ຫຼື ຄຳພິພາກສາປະຫານຊີວິດຈະຖືກນຳໄປຈັດຕັ້ງປະຕິບັດໄດ້ກໍຕໍ່ເມື່ອມີຄຳຊີ້ຂາດຂອງປະທານສານປະຊາຊົນສູງສຸດ ຫຼື ບໍ່ຖືກສະເໜີຄັດຄ້ານຈາກຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ບໍ່ມີການໃຫ້ອະໄພຍະໂທດຂອງປະທານປະເທດ.

ນັກໂທດທີ່ຖືກສານຕັດສິນປະຫານຊີວິດ ມີສິດຂໍອະໄພຍະໂທດຕໍ່ປະທານປະເທດພາຍໃນກຳນົດສາມສິບວັນ ນັບແຕ່ວັນໄດ້ຮັບຊາບຄຳຊີ້ຂາດຂອງປະທານສານປະຊາຊົນສູງສຸດທີ່ຢັ້ງ ຢືນເອົາຄຳຕັດສິນ ຫຼື ຄຳພິພາກສາປະຫານຊີວິດເປັນຕົ້ນໄປ.

ການຈັດຕັ້ງປະຕິບັດໂທດປະຫານຊີວິດ ຈະດຳເນີນໄດ້ພາຍຫຼັງ ໜຶ່ງປີ ນັບແຕ່ວັນປະທານປະເທດອອກຄຳຕົກລົງບໍ່ໃຫ້ອະໄພຍະໂທດ ຫຼື ນັບແຕ່ວັນສານປະຊາຊົນສູງສຸດອອກຄຳຊີ້ຂາດເປັນຕົ້ນໄປໃນກໍລະນີທີ່ບໍ່ມີການຂໍອະໄພຍະໂທດ.

#### 3.4.2. ຂໍ້ຫ້າມ

ສຳລັບໂທດປະຫານຊີວິດນີ້ ແມ່ນຫ້າມລົງໃສ່ຜູ້ກະທຳຜິດທີ່ມີອາຍຸຕ່ຳກ່ວາສິບແປດປີໃນເວລາກະທຳຜິດ ແລະ ຜູ້ຍິງທີ່ຖືພາໃນເວລາກະທຳຜິດ ຫຼື ໃນເວລາຕັດສິນ ຫຼື ໃນເວລາປະຕິບັດໂທດ (ມ 32 ວັກ 3 ກອຍ).

### 3.5. ການປະຕິບັດໂທດປັບໃໝ

ໂທດປັບໃໝ ແມ່ນໂທດທາງດ້ານການເງິນ ຊຶ່ງແມ່ນສານເປັນຜູ້ວາງຕາມກໍລະນີ ແລະ ຂອບເຂດທີ່ກົດໝາຍໄດ້ກໍານົດໄວ້. ຈໍານວນເງິນທີ່ຈະປັບໃໝນັ້ນ ຕ້ອງກໍານົດຕາມຄວາມຮ້າຍແຮງຂອງການກະທໍາຜິດ ໂດຍອີງໃສ່ສະພາບເສດຖະກິດຂອງຜູ້ກະທໍາຜິດ. ໃນກໍລະນີທີ່ຜູ້ກ່ຽວຫາກບໍ່ສາມາດຈະເສັຍຄ່າປັບໃໝໄດ້ໃນເວລານັ້ນ ສານກໍສາມາດປ່ຽນໂທດປັບໃໝມາເປັນໂທດດັດສ້າງໂດຍບໍ່ຕັດອິດສະລະພາບ ແຕ່ຫ້າມເອົາໂທດປັບໃໝປ່ຽນມາເປັນໂທດຕັດອິດສະລະພາບ ແລະ ຫ້າມເອົາໂທດຕັດອິດສະລະພາບປ່ຽນມາເປັນໂທດປັບໃໝ (ມ 33 ກອຍ).

ການປະຕິບັດໂທດປັບໃໝ ພາຍຫຼັງຄໍາຕັດສິນ ຫຼື ຄໍາພິພາກສາໃຊ້ໄດ້ຢ່າງເດັດຂາດແລ້ວ ເຈົ້າໜ້າທີ່ຄ້າຍຄຸມຂັງຈະນໍາຕົວນັກໂທດເພື່ອໄປປະຕິບັດໂທດຢູ່ຄ້າຍຄຸ້ມຂັງຕາມທີ່ກໍານົດໄວ້. ສໍາລັບການປະຕິບັດໂທດປັບໃໝນີ້ ໜ່ວຍງານຈັດຕັ້ງປະຕິບັດຄໍາຕັດສິນຂອງສານຂອງຫ້ອງການຍຸຕິທໍາເມືອງ ຫຼື ຫ້ອງການຈັດຕັ້ງປະຕິບັດຄໍາຕັດສິນຂອງສານຂອງພະແນກຍຸຕິທໍາແຂວງ ແລະ ນະຄອນຈະຮຽກຜູ້ກ່ຽວ (ນັກໂທດ) ເຂົ້າມາພົບ ເພື່ອຕົກລົງກ່ຽວກັບການຊໍາລະຄ່າປັບໃໝອາດຈະເປັນເດືອນ, ເປັນງວດ ຫຼື ຈ່າຍເທື່ອດຽວຂຶ້ນກັບຄວາມສາມາດຂອງຜູ້ປະຕິບັດໂທດ.

**ຕົວຢ່າງ**: ຄະດີຄ້າຂາຍຢາເສບຕິດສານຕັດສິນ ລົງໂທດຕັດອິດສະລະພາບຈໍາເລີຍສາມ ປີ ແລະ ປັບໃໝ 5.000.000 ກີບ.

ສໍາລັບຄ່າປັບໃໝ 5.000.000 ກີບ ແມ່ນໜ້າທີ່ຂອງພະນັກງານປະຕິບັດຄໍາຕັດສິນຂອງສານ ຕ້ອງນໍາໄປຈັດຕັ້ງປະຕິບັດໃຫ້ສໍາເລັດ ອາດຈະປະຕິບັດໃນໄລຍະປະຕິບັດໂທດຢູ່ ຫຼື ປະຕິບັດພາຍຫຼັງນັກໂທດປະຕິບັດໂທດສໍາເລັດແລ້ວ, ແຕ່ໃນກໍລະນີຄະດີຄ້າຂາຍຢາເສບຕິດນີ້ ແມ່ນໃຫ້ເອົາໃຈໃສ່ ໃນກໍລະນີມີການຍຶດ ຫຼື ຮິບຊັບຕ່າງໆຂອງຈໍາເລີຍ ທີ່ໄດ້ມາຈາກການຄ້າຂາຍຢາເສບຕິດດັ່ງກ່າວເພື່ອເອົາເປັນຂອງລັດ.

### 3.6. ໂທດຮິບຊັບ ແລະ ໂທດຮິບວັດຖຸສິ່ງຂອງ

ໂທດຮິບຊັບ ແມ່ນການເອົາຊັບທັງໝົດ ຫຼື ສ່ວນໃດສ່ວນໜຶ່ງທີ່ເປັນກໍາມະສິດຂອງຜູ້ກະທໍາຜິດມາເປັນຂອງລັດ ໂດຍບໍ່ມີການໃຊ້ແທນ. ໂທດຮິບຊັບຈະລົງໃສ່ໄດ້ແຕ່ການກະທໍາຜິດທີ່ເປັນອັນຕະລາຍຮ້າຍແຮງ ຊຶ່ງໄດ້ກໍານົດໄວ້ຢູ່ໃນພາກສະເພາະຂອງກົດໝາຍອາຍາເທົ່ານັ້ນ.

ໃນກໍລະນີ ທີ່ໄດ້ຕົກລົງຮິບຊັບທັງໝົດ ຕ້ອງໄດ້ຍົກເວັ້ນຊັບທີ່ຈໍາເປັນສໍາລັບການດໍາລົງຊີວິດຂອງຜູ້ກະທໍາຜິດ ແລະ ຄອບຄົວຕາມບັນຊີທີ່ໄດ້ຄັດຕິດນໍາກົດໝາຍອາຍາ. ໃນກໍລະນີທີ່ໄດ້ຕົກລົງຮິບຊັບສ່ວນໃດສ່ວນໜຶ່ງ ສານຕ້ອງກໍານົດຊັບທີ່ຈະຖືກຮິບນັ້ນໃຫ້ຈະແຈ້ງ.

ໂທດຮິບວັດຖຸສິ່ງຂອງ ແມ່ນການຮິບວັດຖຸສິ່ງຂອງທີ່ໃຊ້ໃນການກະທຳຜິດ ຫຼື ສຳລັບໃຊ້ໃນການກະທຳຜິດ ຫຼື ໄດ້ມາຈາກການກະທຳຜິດໂດຍເຈດຕະນາມາເປັນຂອງລັດ. ວັດຖຸສິ່ງຂອງຂອງບຸກຄົນອື່ນ ທີ່ຮັບໃຊ້ການກະທຳຜິດນັ້ນ ຈະຖືກຮິບເປັນຂອງລັດໄດ້ ກໍຕໍ່ເມື່ອເຈົ້າຂອງຜູ້ທີ່ໃຫ້ຢືມຫາກບໍ່ມີຄວາມບໍລິສຸດໃຈ ຫຼື ເຫັນວ່າການຮິບວັດຖຸສິ່ງຂອງນັ້ນ ມີຄວາມຈຳເປັນເພື່ອປົກປັກຮັກສາສັງຄົມ.

ຖ້າວັດຖຸສິ່ງຂອງທີ່ນຳໃຊ້ເຂົ້າໃນການກະທຳຜິດ ຫາກເປັນກຳມະສິດຂອງລັດ ແລະ ລວມໝູ່ນັ້ນ ແມ່ນຈະບໍ່ຖືກຮິບ ແຕ່ຫາກຍັງຕ້ອງສົ່ງຄືນໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງ.

**ໝາຍເຫດ: ຊັບສິ່ງຂອງທີ່ບໍ່ໃຫ້ຮິບ**

ຊັບສິ່ງຂອງທີ່ຈຳເປັນສຳລັບຜູ້ຖືກຕັດສິນ ແລະ ບຸກຄົນ ຊຶ່ງຢູ່ພາຍໃຕ້ການດູແລລ້ຽງດູຂອງຜູ້ຖືກຕັດສິນ ທີ່ຈະບໍ່ຖືກຮິບມີດັ່ງນີ້:

1) ເຮືອນຢູ່ປະຈຳຂອງຜູ້ຖືກຕັດສິນ ແລະ ຄອບຄົວຂອງຜູ້ກ່ຽວ;

2) ງົວ, ຄວາຍ, ຊ້າງ, ມ້າ, ແບ້, ແກະ, ໝູ ຖ້າຫາກມີປະເພດລະໂຕ, ສັດລ້ຽງທີ່ມີປີກສຳລັບບຸກຄົນທີ່ຖືເອົາການປູກຝັງ ຫຼື ການລ້ຽງສັດເປັນອາຊີບ;

3) ອາຫານສຳລັບລ້ຽງສັດ ຖ້າຫາກວ່າສັດນັ້ນບໍ່ຖືກຮິບ;

4) ແນວປູກ, ອຸປະກອນການຜະລິດ ສຳລັບບຸກຄົນທີ່ຖືເອົາການປູກຝັງເປັນອາຊີບ;

5) ວັດຖຸສິ່ງຂອງທີ່ໃຊ້ເປັນປະຈຳຂອງຜູ້ຖືກຕັດສິນ ແລະ ຂອງຄົນຊຶ່ງຢູ່ພາຍໃຕ້ການດູແລລ້ຽງດູຂອງຜູ້ຖືກຕັດສິນ:

- ເຄື່ອງນຸ່ງ;
- ເຄື່ອງນອນ;
- ເຄື່ອງໃຊ້ສຳລັບຄົວກິນ;
- ເຄື່ອງເຮືອນ (ຕຽງ ແລະ ຕັ່ງນັ່ງສຳລັບແຕ່ລະຄົນ, ໂຕະ, ຕູ້ໃສ່ເຄື່ອງ ແລະ ຫີບ ສຳລັບຄອບຄົວ);
- ເຄື່ອງຫຼິ້ນເດັກນ້ອຍທຸກປະເພດ;

6) ເຄື່ອງກິນ;

7) ວັດຖຸສິ່ງຂອງທີ່ຈຳເປັນໃນການປະກອບອາຊີບຂອງຜູ້ຖືກຕັດສິນ ເວັ້ນເສຍແຕ່ ໃນກໍລະນີທີ່ສານໄດ້ຕັດສິນຫ້າມຜູ້ກ່ຽວປະກອບອາຊີບນັ້ນຕໍ່ໄປ ຫຼື ວັດຖຸສິ່ງຂອງທີ່ຜູ້ຖືກຕັດສິນໃຊ້ປະກອບອາຊີບທີ່ບໍ່ຖືກຕ້ອງຕາມກົດໝາຍ.

## 4. ການປ່ອຍຕົວນັກໂທດ.

### 4.1. ການປ່ອຍຕົວນັກໂທດ

ເມື່ອນັກໂທດ ໄດ້ປະຕິບັດໂທດຕັດອິດສະລະພາບ ຄົບຕາມກຳນົດທີ່ສານຕັດສິນແລ້ວ ເຈົ້າໜ້າທີ່ຄ້າຍດັດສ້າງ ຕ້ອງລາຍງານ ໃຫ້ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ທ້ອງຖິ່ນທີ່ກ່ຽວຂ້ອງ ຫຼື ຫົວໜ້າກົມຕຳຫຼວດຄຸມຂັງ-ດັດສ້າງ ກ່ຽວກັບການປ່ອຍຕົວນັກໂທດ ພ້ອມທັງລາຍງານໃຫ້ຫົວໜ້າອົງການໄອຍະການຊາບ, ຖ້າຫາກຜູ້ກ່ຽວຍັງບໍ່ທັນໄດ້ຖືກປ່ອຍ ຕົວນັ້ນ ຫົວໜ້າອົງການໄອຍະການຕ້ອງອອກຄຳສັ່ງປ່ອຍຕົວໃນທັນໃດ.

ການປ່ອຍຕົວນັກໂທດກ່ອນກຳນົດໂດຍມີເງື່ອນໄຂ ແມ່ນໃຫ້ປະຕິບັດຕາມກົດໝາຍອາຍາ.

ການປ່ອຍຕົວນັກໂທດ ດ້ວຍການໃຫ້ອະໄພຍະໂທດຂອງປະທານປະເທດ ເນື່ອງໃນ ວັນສຳຄັນຕ່າງໆຂອງຊາດນັ້ນໃຫ້ປະຕິບັດຕາມນິຕິກຳກ່ຽວກັບການໃຫ້ອະໄພຍະໂທດ.

ການປ່ອຍຕົວນັກໂທດດ້ວຍການໃຫ້ນິລະໂທດກຳ ໃຫ້ປະຕິບັດຕາມມະຕິຕົກລົງ ຂອງ ສະພາແຫ່ງຊາດ.

ການປ່ອຍຕົວນັກໂທດ ຕາມກໍລະນີຕ່າງໆທີ່ກ່າວມາເທິງນັ້ນ ຕ້ອງປະຕິບັດໃນທັນໃດ ເຖິງວ່າໂຈດທາງແພ່ງຈະຂໍອຸທອນ, ຂໍລົບລ້າງ ຫຼື ນັກໂທດ ຍັງບໍ່ທັນໄດ້ໃຊ້ແທນຄ່າເສັຍຫາຍ ຫຼື ໂທດປັບໃໝກໍຕາມ. ສຳລັບການໃຊ້ແທນຄ່າເສັຍຫາຍ ຫຼື ໂທດປັບໃໝນັ້ນມອບ ໃຫ້ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານເປັນຜູ້ປະຕິບັດ.

### 4.2. ວິທີການຈັດຕັ້ງປະຕິບັດການປ່ອຍຕົວນັກໂທດ

**ການປ່ອຍຕົວນັກໂທດໃຫ້ປະຕິບັດດັ່ງນີ້:**

1) ພາຍຫຼັງທີ່ນັກໂທດ ໄດ້ປະຕິບັດໂທດຄົບຕາມກຳນົດທີ່ສານຕັດສິນ, ໄດ້ຮັບການ ປ່ອຍຕົວກ່ອນກຳນົດ, ໄດ້ຮັບການອະໄພຍະໂທດດ້ວຍການປ່ອຍຕົວ ຫຼື ໄດ້ຮັບການປ່ອຍ ຕົວຕາມຄຳສັ່ງຂອງຫົວໜ້າອົງການໄອຍະການແລ້ວ ຫົວໜ້າຄ້າຍດັດສ້າງຕ້ອງກະກຽມ ແລະ ນຳເອົາບຸກຄົນທີ່ຈະຖືກປ່ອຍຕົວນັ້ນມາສຶກສາອົບຮົມ ພ້ອມທັງຂຽນໃບປະຕິຍານຕົນ. ໃນເວລາປ່ອຍຕົວນັ້ນ ໃຫ້ເຊີນອົງການປົກຄອງບ້ານ ແລະ ແຈ້ງໃຫ້ຄອບຄົວ ຫຼື ຍາດພີ່ ນ້ອງຂອງຜູ້ກ່ຽວເຂົ້າຮ່ວມນຳ ແລະ ມອບໃຫ້ອົງການປົກຄອງບ້ານສືບຕໍ່ສຶກສາອົບຮົມ;

2) ເຈົ້າໜ້າທີ່ຜູ້ຮັບຜິດຊອບຮັກສາວັດຖຸສິ່ງຂອງຕິດຕົວ ທີ່ຖືກຕ້ອງຕາມກົດໝາຍ ຂອງຜູ້ຖືກປ່ອຍຕົວ ຕ້ອງໄດ້ມອບວັດຖຸສິ່ງຂອງດັ່ງກ່າວຄືນໃຫ້ຜູ້ກ່ຽວຢ່າງຄົບຖ້ວນ ແລະ ຢູ່ໃນສະພາບເດີມ ໂດຍໃຫ້ເຮັດບົດບັນທຶກມອບຮັບຢ່າງຄັກແນ່. ໃນກໍລະນີ ທີ່ການສິ່ງວັດຖຸ ສິ່ງຂອງນັ້ນຫາກບໍ່ຄົບຖ້ວນ ແລະ ບໍ່ຢູ່ໃນສະພາບເດີມ ໂດຍບໍ່ມີເຫດຜົນແລ້ວ ເຈົ້າໜ້າທີ່

ຜູ້ຮັກສາຕ້ອງມີຄວາມຮັບຜິດຊອບ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 141 ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012.

3) ໃນການປ່ອຍຕົວນັ້ນ ຫົວໜ້າຄ້າຍດັດສ້າງຕ້ອງເຮັດບົດບັນທຶກການປ່ອຍຕົວຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

4) ໃນກໍລະນີ ນັກໂທດທີ່ຖືກປ່ອຍຕົວນັ້ນ ຫາກບໍ່ມີຄອບຄົວ ຫຼື ຍາດພີ່ນ້ອງມາຮັບເອົາ ຫຼື ບໍ່ມີເງື່ອນໄຂຈະກັບບ້ານດ້ວຍຕົນເອງໄດ້ ຫົວໜ້າຄ້າຍດັດສ້າງ ຕ້ອງຄິດໄລ່ຄ່າກິນ ແລະ ຄ່າເດີນທາງຕາມເງື່ອນໄຂຕົວຈິງ ພ້ອມທັງເອກະສານຕ່າງໆ ໃຫ້ຜູ້ກ່ຽວ ເພື່ອມອບໃຫ້ອົງການປົກຄອງບ້ານ.

5) ໃນກໍລະນີ ການປ່ອຍຕົວນັກໂທດ ຊຶ່ງເປັນຄົນຕ່າງປະເທດ ທີ່ຍັງບໍ່ທັນໄດ້ໃຊ້ແທນຄ່າເສັຍຫາຍນັ້ນ ກ່ອນຈະອະນຸຍາດໃຫ້ອອກຈາກ ສປປ ລາວ ຜູ້ກ່ຽວຕ້ອງໄດ້ໃຊ້ແທນຄ່າ ເສັຍຫາຍຢ່າງຄົບຖ້ວນ ຕາມຄຳຕັດສິນຂອງສານ.

**ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ**

ນັກໂທດ ທີ່ຈະໄດ້ຮັບການພິຈາລະນາປ່ອຍຕົວກ່ອນກຳນົດຕ້ອງແມ່ນນັກໂທດ ຊຶ່ງໄດ້ປະຕິບັດໂທດສ່ວນໃດສ່ວນໜຶ່ງມາແລ້ວ, ມີຄວາມກ້າວໜ້າ, ໄດ້ຝຶກຝົນຫຼໍ່ຫຼອມຕົນເອງ, ເປັນແບບຢ່າງໃນການປະຕິບັດລະບຽບຂອງຄ້າຍດັດສ້າງ ແລະ ການອອກແຮງງານ, ໄດ້ມີການປ່ຽນແປງທາງດ້ານທັດສະນະແນວຄິດ ແລະ ໄດ້ມີຄວາມຮູ້ສຶກກິນແໜງຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຕົນໃນໄລຍະຜ່ານມາ ແລະ ຕ້ອງມີເງື່ອນໄຂຕ່າງໆດັ່ງນີ້:

1) ປະຕິບັດໂທດໄດ້ເຄິ່ງໜຶ່ງສຳລັບຜູ້ກະທຳຜິດທີ່ມີອາຍຸຕ່ຳກວ່າສິບແປດປີໃນເວລາກະທຳຜິດ;

2) ປະຕິບັດໂທດໄດ້ສອງສ່ວນສາມສຳລັບຜູ້ກະທຳຜິດທີ່ມີອາຍຸແຕ່ສິບແປດປີຂຶ້ນໄປ;

3) ປະຕິບັດໂທດໄດ້ສິບຫ້າປີ ສຳລັບຜູ້ກະທຳຜິດ ທີ່ປະຕິບັດໂທດຕັດອິດສະລະພາບຕະຫຼອດຊີວິດ;

4) ສຳລັບ ຜູ້ກະທຳຜິດ ທີ່ບໍ່ເຂັດຫຼາບ ແລະ ຜູ້ຖືກລົງໂທດປະຫານຊີວິດ ແລ້ວປ່ຽນມາເປັນໂທດຕັດອິດສະລະພາບນັ້ນ ແມ່ນບໍ່ອະນຸຍາດໃຫ້ປ່ອຍຕົວກ່ອນກຳນົດ (ມ 253 ກດຍ).

ສານປະຊາຊົນ ແຂວງ, ນະຄອນ ຫຼື ສານທະຫານ ບ່ອນນັກໂທດພວມປະຕິບັດໂທດເປັນຜູ້ພິຈາລະນາການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ ແລະ ວາງເງື່ອນໄຂໃຫ້ຜູ້ໄດ້ຮັບການປ່ອຍຕົວປະຕິບັດ. ຖ້າວ່າພາຍໃນກຳນົດ ຫ້າປີ ຜູ້ຖືກປ່ອຍຕົວກ່ອນກຳນົດຫາກໄດ້ປະຕິບັດຖືກຕ້ອງຕາມເງື່ອນໄຂ ແລະ ບໍ່ໄດ້ກະທຳຜິດໃໝ່ໂທດທີ່ເຫຼືອນັ້ນກໍຈະຕົກໄປ. ໃນກໍລະນີທີ່ບໍ່ໄດ້ປະຕິບັດຕາມເງື່ອນໄຂພາຍໃນກຳນົດດັ່ງກ່າວ ຜູ້ຖືກປ່ອຍຕົວກ່ອນກຳນົດຈະໄດ້ປະຕິ

ບັດໂທດທີ່ຍັງເຫຼືອ, ໃນກໍລະນີທີ່ໄດ້ກະທຳຜິດໃໝ່ພາຍໃນກຳນົດດັ່ງກ່າວ ຜູ້ຖືກປ່ອຍຕົວກ່ອນກຳນົດຈະຕ້ອງປະຕິບັດໂທດໃໝ່ ລວມທັງໂທດເກົ່າທີ່ຍັງເຫຼືອອີກດ້ວຍ (ມ 254 ວັກ 4 ກຄຍ).

**ແຜນວາດ 2 . ການປ່ອຍຕົວກ່ອນກຳນົດໂດຍມີເງື່ອນໄຂ (ມ 254 ກຄຍ ສະບັບປັບປຸງ ປີ 2012 ແລະ ມ 52 ກອຍ ສະບັບປບປຸງ ປີ 2005)**



## 5. ການໂຈະ, ການປ່ຽນແປງ, ການຍົກເລີກ ແລະ ການລົບລ້າງການຈັດຕັ້ງປະຕິບັດຄຳຕົກລົງຂອງສານ

### 5.1. ການໂຈະການຈັດຕັ້ງປະຕິບັດຄຳຕົກລົງຂອງສານ

ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານນັ້ນ ຜູ້ຖືກປະຕິບັດໂທດ ( ນັກໂທດ ) ຕາມການຕົກລົງຂອງສານອາດຈະຖືກໂຈະການປະຕິບັດ ຖ້າຫາກມີສາເຫດດັ່ງນີ້:

1) ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເປັນຄົນບ້າເສັຍຈິດ ຫຼື ຕົກຢູ່ໃນສະພາບຈຳເປັນ ເຊັ່ນ ເຈັບປ່ວຍໜັກ ໂດຍມີການຢັ້ງຢືນຈາກຄະນະແພດຂັ້ນເມືອງຂຶ້ນໄປ;

2) ມີການຮື້ຟື້ນຄະດີ ຕາມກຳນົດເວລາທີ່ໄດ້ກຳນົດໄວ້ໃນກົດໝາຍໂດຍການສະເໜີໂຈະຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ;

3) ຜູ້ຖືກປະຕິບັດຄຳຕັດສິນຂອງສານໄດ້ອອກຈາກທ້ອງຖິ່ນ ສະຖານທີ່ຢູ່ອາໄສໄປກ່ອນ ແລ້ວ ໂດຍບໍ່ຮູ້ບ່ອນຢູ່ທີ່ແນ່ນອນ ຊຶ່ງມີການຢັ້ງຢືນຢ່າງຖືກຕ້ອງ;

4) ຜູ້ຖືກປະຕິບັດຄຳຕັດສິນຂອງສານ ໄດ້ເສັຍຊີວິດ ແຕ່ຜູ້ກ່ຽວຍັງມີຜູ້ສືບທອດຢູ່;

5) ມີການສະເໜີໃຫ້ໂຈະຂອງໄອຍະການປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 49 (ໃໝ່) ຂໍ້ 4 ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ;

6) ຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດຊຶ່ງບໍ່ກົງກັບຕົວຈິງເຮັດໃຫ້ບໍ່ສາມາດຈັດຕັ້ງປະຕິບັດໄດ້.

7) ເມື່ອສາເຫດທີ່ພາໃຫ້ໂຈະການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ກ່າວມາຂ້າງເທິງນີ້ຫາກໝົດໄປແລ້ວແມ່ນໃຫ້ສືບຕໍ່ຈັດຕັ້ງປະຕິບັດ.

### 5.2. ການປ່ຽນແປງ, ຍົກເລີກ ຫຼື ລົບລ້າງການຈັດຕັ້ງປະຕິບັດຄຳຕົກລົງຂອງສານ

ສາເຫດທີ່ພາໃຫ້ມີການປ່ຽນແປງ, ຍົກເລີກ ຫຼື ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານມີດັ່ງນີ້:

1) ປະຕິບັດບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ;

2) ລະເມີດວິທີການ ຫຼື ຂັ້ນຕອນການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ຫຼື ລະເມີດລະບຽບກົດໝາຍອື່ນ;

ໃນກໍລະນີທີ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຫາກຖືກປ່ຽນແປງ, ຍົກເລີກ ຫຼື ລົບລ້າງ ແລ້ວສິ່ງທີ່ໄດ້ປະຕິບັດຕໍ່ກັນແລ້ວນັ້ນ ຕ້ອງໄດ້ສົ່ງຄືນ, ຟື້ນຟູ, ໃຊ້ແທນ ຫຼື ແກ້ໄຂຄືນໃຫ້ຖືກຕ້ອງຕາມສະພາບຄວາມເປັນຈິງ ກ່ອນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

### 5.3. ວິທີການໂຈະ, ການປ່ຽນແປງ, ການຍົກເລີກ ແລະ ການລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ເມື່ອກະຊວງຍຸຕິທຳ ຫຼື ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານໄດ້ຮັບຄຳຮ້ອງກ່ຽວກັບການໂຈະ, ການປ່ຽນແປງ, ການຍົກເລີກ ຫຼື ການລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແລ້ວ ຕ້ອງໄດ້ພິຈາລະນາ ແລະ ຄົ້ນຄວ້າ; ຖ້າເຫັນວ່າມີເຫດຜົນຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 41 ແລະ 42 ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕົກລົງຂອງສານ. ກະຊວງຍຸຕິທຳ ຫຼື ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ກໍຕ້ອງອອກຄຳສັ່ງໂຈະ, ປ່ຽນແປງ, ຍົກເລີກ ຫຼື ລົບລ້າງການຈັດຕັ້ງປະຕິບັດຄຳຕັດສິນຂອງສານແລ້ວແຈ້ງໃຫ້ຂັ້ນລຸ່ມຂອງຕົນ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ຄູ່ຄວາມຊາບພາຍໃນກຳນົດ ສາມສິບວັນນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.

ໃນກໍລະນີທີ່ເຫັນວ່າຄຳຮ້ອງນັ້ນ ບໍ່ມີເຫດຜົນຕາມທີ່ໄດ້ກຳນົດໄວ້ໃນມາດຕາ 41(ໃໝ່) ແລະ 42 ຂອງກົດໝາຍແລ້ວ ກະຊວງຍຸຕິທຳ ຫຼື ຫ້ອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ້ອງແຈ້ງໃຫ້ຂັ້ນລຸ່ມຂອງຕົນ, ຫົວໜ້າອົງການໄອຍະການປະຊາຊົນ ແລະ ຄູ່ຄວາມຊາບພາຍໃນກຳນົດ ສາມສິບວັນ ເຊັ່ນດຽວກັນ ແລະ ໃຫ້ສືບຕໍ່ຈັດຕັ້ງປະຕິບັດຄຳຕັດສິນດັ່ງກ່າວ.

ອົງການຈັດຕັ້ງຂອງພັກ, ຂອງລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ຫຼື ບຸກຄົນນັ້ນ ບໍ່ມີສິດສັ່ງໃຫ້ປ່ຽນແປງ, ໂຈະ, ຍົກເລີກ, ລົບລ້າງ ຫຼື ຂັດຂວາງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານຕ້ອງປະຕິບັດໜ້າທີ່ດ້ວຍຄວາມເອົາໃຈໃສ່ ໃນການປະຕິບັດໜ້າທີ່ວຽກງານໃຫ້ມີຄວາມໂປ່ງໃສ, ຖືກກົດໝາຍ, ຖືກຫຼັກການ ແລະ ມີຈັນຍາບັນທາງດ້ານວິຊາການຂອງຕົນ.

ເພື່ອບັນລຸຈຸດນັ້ນ, ມາດຕາ 50 ຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈຶ່ງໄດ້ກຳນົດຂໍ້ຫ້າມສຳລັບພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານດັ່ງນີ້:

1) ຫ້າມກົດໜ່ວງຖ່ວງດຶງ, ເຂົ້າຂ້າງອອກຂາ, ເລືອກຈັດຕັ້ງປະຕິບັດຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

2) ຫ້າມເມີນເສີຍ, ລະເລີຍ ແລະ ຂາດຄວາມຮັບຜິດຊອບໃນການປະຕິບັດໜ້າທີ່ວຽກງານ;

3) ຫ້າມໃຊ້ທ່າທີບໍ່ເໝາະສົມໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານ;

4) ຫ້າມສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ເພື່ອຫາຜົນປະໂຫຍດສ່ວນຕົວ;

5) ຫ້າມຮັບສິນບົນ.

## 6. ມາດຕະການປິ່ນປົວ

ມາດຕະການປິ່ນປົວ ແມ່ນການປະຕິບັດນະໂຍບາຍມະນຸດສະທຳ ຕໍ່ຜູ້ຖືກກັກຕົວ, ຜູ້ຖືກຫາ, ຈຳເລີຍ ແລະ ນັກໂທດທີ່ຢູ່ໃນຄ້າຍຄຸມຂັງ-ດັດສ້າງ ເມື່ອເປັນບ້າ, ເສັຍຈິດ, ມີການເຈັບປ່ວຍ, ເປັນພະຍາດຕິດແປດ ແລະ ອື່ນໆອອກໄປທຳການປິ່ນປົວຢູ່ສະຖານທີ່ປິ່ນປົວໃດໜຶ່ງຕາມລະບຽບການ (ມ 265 ກດຍ).

### 6.1. ການນຳໃຊ້ມາດຕະການປິ່ນປົວ

ໃນເວລາດຳເນີນການສືບສວນ-ສອບສວນ ຫຼື ໃນເວລາດຳເນີນຄະດີຢູ່ສານ, ຫົວໜ້າອົງການໄອຍະການ ຫຼື ປະທານສານ ມີສິດນຳໃຊ້ມາດຕະການປິ່ນປົວ ຕໍ່ຜູ້ຖືກກັກຂັງພາງທີ່ເປັນບ້າເສັຍຈິດ, ເຈັບປ່ວຍໜັກ, ເປັນພະຍາດຕິດແປດ, ຕິດເຫຼົ້າ ຫຼື ຢາເສບຕິດໂດຍມີການຢັ້ງຢືນຈາກຄະນະແພດ ດ້ວຍການສົ່ງໄປປິ່ນປົວທີ່ໂຮງໝໍລັດ ຫຼື ສະຖານທີ່ປິ່ນປົວສະເພາະ. ພາຍຫຼັງທີ່ໄດ້ປິ່ນປົວດີແລ້ວ ຕ້ອງນຳເອົາຜູ້ກ່ຽວມາດຳເນີນຄະດີ ຫຼື ນຳມາສືບຕໍ່ປະຕິບັດໂທດ ຖ້າຫາກວ່າຍັງບໍ່ທັນໝົດອາຍຸຄວາມໃນການຮ້ອງຟ້ອງ ຫຼື ຍັງບໍ່ທັນໝົດກຳນົດເວລາໃນການປະຕິບັດໂທດ. ໃນກໍລະນີປະຕິບັດໂທດ ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ, ຫຼື ກົມຕຳຫຼວດຄຸມຂັງ-ດັດສ້າງ ມີສິດນຳໃຊ້ມາດຕະການປິ່ນປົວຕໍ່ຜູ້ຖືກປະຕິບັດໂທດ ແຕ່ຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການ ພາຍໃນກຳນົດ ຊາວສີ່ຊົ່ວໂມງ ເພື່ອຕິດຕາມກວດກາກຳນົດເວລາການປິ່ນປົວໃຫ້ນັບເຂົ້າໃນກຳນົດເວລາການປະຕິບັດໂທດ (ມ 266 ກດຍ).

ໃນການປິ່ນປົວນັ້ນກົດໝາຍໄດ້ກຳນົດມາດຕະການອັນຈຳເປັນຈຳນວນໜຶ່ງດັ່ງນີ້ (ມ 267 ກດຍ)

- ການປິ່ນປົວໃນກໍລະນີຮີບດ່ວນ;
- ການຄຸ້ມຄອງ ປ້ອງກັນ ຜູ້ຖືກປິ່ນປົວ.

ໃນກໍລະນີ ຜູ້ຖືກກັກຕົວ, ຜູ້ຖືກຫາ, ຈຳເລີຍ ແລະ ນັກໂທດ ທີ່ຢູ່ໃນຄ້າຍຄຸມຂັງ-ດັດສ້າງ ຫາກເຈັບເປັນຢ່າງກະທັນຫັນ ແລະ ແພດປະຈຳຄ້າຍຄຸມຂັງ-ດັດສ້າງ ບໍ່ສາມາດປິ່ນປົວໄດ້ ຫົວໜ້າຄ້າຍຄຸມຂັງ-ດັດສ້າງ ຕ້ອງນຳຜູ້ເຈັບເປັນ ໄປປິ່ນປົວທີ່ໂຮງໝໍຂອງລັດ ແລ້ວລາຍງານໃຫ້ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບເມືອງ, ເທດສະບານ ຫຼື ຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ, ນະຄອນ ຫຼື ຫົວໜ້າກົມຕຳຫຼວດຄຸມຂັງ-ດັດສ້າງ, ຫົວໜ້າອົງການໄອຍະການ ຫຼື ປະທານສານ ພາຍໃນກຳນົດເວລາ ຊາວສີ່ຊົ່ວໂມງ.

### 6.2. ການຄຸ້ມຄອງປ້ອງກັນຜູ້ຖືກປິ່ນປົວ

ຜູ້ຖືກກັກຕົວ, ຜູ້ຖືກຫາ, ຈຳເລີຍ ແລະ ນັກໂທດ ທີ່ຢູ່ໃນຄ້າຍຄຸມຂັງ-ດັດສ້າງ ຕ້ອງຖືກນຳໄປປິ່ນປົວຢູ່ໂຮງໝໍ ຫຼື ສະຖານທີ່ປິ່ນປົວສະເພາະຂອງລັດເທົ່ານັ້ນ.

ການຄຸ້ມຄອງ ປ້ອງກັນ ຜູ້ຖືກປິ່ນປົວ ແມ່ນຄວາມຮັບຜິດຊອບຂອງເຈົ້າໜ້າທີ່ຕຳຫຼວດ. ຖ້າເຈົ້າໜ້າທີ່ຕຳຫຼວດ ຫາກເຮັດໃຫ້ຜູ້ຖືກກັກຕົວ, ຜູ້ຖືກຫາ, ຈຳເລີຍ ແລະ ນັກໂທດດັ່ງກ່າວ ທີ່ເອົາໄປປິ່ນປົວນັ້ນໂຕນໜີ ຈະມີຄວາມຮັບຜິດຊອບທາງອາຍາ (ມ 172 ກອຍ) ລະບຸໄວ້ວ່າ ການເຮັດໃຫ້ຜູ້ຖືກຫາ ຫຼື ນັກໂທດໂຕນໜີ ບຸກຄົນຜູ້ໃດດ້ວຍຄວາມປະໝາດ, ຄວາມເລີ່ນເລີ້ ຫາກໄດ້ເຮັດໃຫ້ຜູ້ຖືກຫາ ຫຼື ນັກໂທດໂຕນໜີໃນເວລາຮັກສາ, ປ້ອງກັນ ຫຼື ໃນເວລາໂຍກຍ້າຍຜູ້ຖືກຫາ ຫຼື ນັກໂທດ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມເດືອນ ຫາ ສອງປີ ແລະ ຈະຖືກປັບໃໝ ແຕ່ 100.000 ກີບ ຫາ 1.000.000 ກີບ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກໄດ້ເຮັດໃຫ້ຜູ້ຖືກຫາ ຫຼື ນັກໂທດໂຕນໜີໂດຍເຈດຕະນາ ຈະຖືກລົງໂທດຕັດອິດສະລະພາບ ແຕ່ ສາມປີ ຫາ ເຈັດປີ ແລະ ຈະຖືກປັບໃໝແຕ່ 500.000 ກີບ ຫາ 10.000.000 ກີບ.

## 7. ການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

### 7.1. ອົງການທີ່ມີສິດອຳນາດໃນການຕິດຕາມກວດກາ

ໃນການຕິດຕາມກວດກາການຈັດຕັ້ງປະຕິບັດຄຳຕັດສິນຂອງສານນັ້ນ ແມ່ນສິດ ແລະ ໜ້າທີ່ຂອງອົງການໄອຍະການແຕ່ລະຂັ້ນ (ມ 258 ກດຍ) ເພື່ອເຮັດໃຫ້ການປະຕິບັດທາງແພ່ງຖືກຕ້ອງ, ຜູ້ຖືກເສຍຫາຍໄດ້ຮັບການໃຊ້ແທນຢ່າງພາວະວິໄສ. ສິດຂອງອົງການໄອຍະການໃນການຕິດຕາມກວດກາການປະຕິບັດໂທດທາງແພ່ງມີດັ່ງນີ້:

1) ສະເໜີໃຫ້ ພະນັກງານປະຕິບັດຄຳຕັດສິນຂອງສານລາຍງານສະພາບການປະຕິບັດຄຳຕັດສິນຂອງສານ, ປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຊຶ່ງຍັງບໍ່ທັນໄດ້ຮັບການປະຕິບັດ;

2) ກວດກາຄວາມຖືກຕ້ອງ ຂອງການຈັດຕັ້ງປະຕິບັດຄຳຕັດສິນຂອງສານເປັນຕົ້ນ ການປະຕິບັດກົດໝາຍ, ການໃຊ້ແທນຄ່າເສຍຫາຍ, ການເກັບ ແລະ ການມອບຄ່າທຳນຽມສານ, ຄ່າອາກອນຂອງລັດ ແລະ ຄ່າປັບໃໝເຂົ້າງົບປະມານ, ການຮິບຊັບ ແລະ ການຮິບວັດຖຸສິ່ງຂອງ ເຂົ້າເປັນຂອງລັດ, ການປະຕິບັດໂທດທາງອາຍາ;

3) ສະເໜີປັບປຸງແປງ, ລົບລ້າງ ຫຼື ໂຈະການປະຕິບັດທີ່ບໍ່ຖືກຕ້ອງຕາມຄຳຕັດສິນຂອງສານ. ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງຈັດຕັ້ງປະຕິບັດທຸກຄຳສະເໜີຂອງອົງການໄອຍະການພາຍໃນສາມສິບວັນນັບແຕ່ວັນໄດ້ຮັບຄຳສະເໜີເປັນຕົ້ນໄປ.

**7.2. ການຕິດຕາມກວດກາການປະຕິບັດໂທດທາງອາຍາ (ການຕິດຕາມກວດກາຄ້າຍຄຸມຂັງ)**

ເພື່ອເຮັດໃຫ້ການປະຕິບັດໂທດຢູ່ຄ້າຍຄຸມຂັງມີຄວາມຖືກຕ້ອງ, ຍຸຕິທຳ ແລະ ເຄົາລົບຫຼັກການສິດທິມະນຸດ ອົງການໄອຍະການມີສິດໃນການຕິດຕາມກວດກາການປະຕິບັດກົດໝາຍຢູ່ຄ້າຍຄຸມຂັງ-ດັດສ້າງຕາມຂັ້ນຂອງຕົນ (ມ 257 ກດຍ), ສິດ ແລະ ໜ້າທີ່ຂອງອົງການໄອຍະການ ມີລະອຽດດັ່ງນີ້:

1) ຊອກຮູ້ວ່າ ການໂຍກຍ້າຍ, ການອອກໄປປິ່ນປົວ ແລະ ການປ່ອຍຕົວນັກໂທດໄດ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ຫຼື ບໍ່, ຖ້າເຫັນວ່າບໍ່ຖືກຕ້ອງ ກໍອອກມາດຕະການເພື່ອແກ້ໄຂໃຫ້ທັນການ;

2) ລົງກວດກາ ຄ້າຍຄຸມຂັງ-ດັດສ້າງ ແລະ ສະຖານທີ່ປະຕິບັດມາດຕະການອື່ນຂອງສານຢ່າງເປັນລະບົບ ຫຼື ໃນເວລາໃດກໍໄດ້ ຕາມທີ່ກົດໝາຍໄດ້ກຳນົດໄວ້;

3) ກວດກາເອກະສານ ກ່ຽວກັບການປ່ອຍຕົວ, ການດັດສ້າງ ແລະ ການນຳໃຊ້ມາດຕະການອື່ນຂອງສານ;

4) ກວດກາການຄຸ້ມຄອງ ຜູ້ຖືກດັດສ້າງ ແລະ ການນຳໃຊ້ມາດຕະການອື່ນຂອງສານພ້ອມທັງສອບຖາມບຸກຄົນດັ່ງກ່າວ;

5) ກວດກາການກະທຳ ຂອງເຈົ້າໜ້າທີ່ ຕໍ່ບຸກຄົນທີ່ຖືກດັດສ້າງ ແລະ ການນຳໃຊ້ມາດຕະການອື່ນຂອງສານ. ໃນກໍລະນີທີ່ພົບເຫັນການກະທຳຂອງເຈົ້າໜ້າທີ່ເປັນການລະເມີດລະບຽບກົດໝາຍຕ້ອງຕັກເຕືອນ. ຖ້າຫາກເປັນການກະທຳຜິດທາງອາຍາ ກໍຕ້ອງດຳເນີນຄະດີຕາມກົດໝາຍ;

6) ສັ່ງໃຫ້ປ່ອຍຕົວໃນທັນໃດ ບຸກຄົນທີ່ຖືກດັດສ້າງ ຫຼື ຖືກປະຕິບັດມາດຕະການອື່ນຂອງສານທີ່ບໍ່ຖືກຕ້ອງຕາມກົດໝາຍ;

7) ເຂົ້າຮ່ວມ, ຄົ້ນຄວ້າ, ພິຈາລະນາ, ຄັດເລືອກ, ຈັດແບ່ງປະເພດ ແລະ ເຮັດບັນຊີນັກໂທດທີ່ມີເງື່ອນໄຂ ໄດ້ຮັບການອະໄພຍະໂທດ ແລະ ກວດກາການຈັດຕັ້ງປະຕິບັດການໃຫ້ອະໄພຍະໂທດຕາມລັດຖະດຳລັດຂອງປະທານປະເທດ;

8) ກວດບັນຊີລາຍຊື່ ຜູ້ຖືກດັດສ້າງ ຫຼື ນັກໂທດ ໃນຄ້າຍດັດສ້າງ, ຜູ້ທີ່ໄດ້ຮັບອະນຸຍາດໄປປິ່ນປົວ ຫຼື ນັກໂທດ ທີ່ໄດ້ຮັບອະນຸຍາດໃຫ້ໂຍກຍ້າຍ;

9) ກວດກາຄຳສັ່ງ ແລະ ລະບຽບການຕ່າງໆ ຂອງຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ໃຫ້ຄະນະຮັບຜິດຊອບດັ່ງກ່າວ ອະທິບາຍເຫດຜົນຂອງການລະເມີດກົດໝາຍ. ຄະນະຮັບຜິດຊອບຄ້າຍຄຸມຂັງ-ດັດສ້າງ ຕ້ອງປະຕິບັດຕາມຄຳ

ສັ່ງຂອງ ຫົວໜ້າອົງການໄອຍະການກ່ຽວກັບການເຄົາລົບລະບຽບການຄຸມຂັງ-ດັດສ້າງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ IX
# ການຮື້ຟື້ນຄະດີອາຍາ

## 1. ຄວາມໝາຍຂອງການຮື້ຟື້ນຄະດີອາຍາ

ການຮື້ຟື້ນຄະດີອາຍາ ແມ່ນຂັ້ນຕອນໜຶ່ງໃນຂັ້ນຕອນຂອງຂະບວນການຍຸຕິທຳທາງອາຍາ ທີ່ມີຂຶ້ນພາຍຫຼັງໄດ້ມີຄຳຕັດສິນ ຫຼື ຄຳພິພາກສາທີ່ໃຊ້ໄດ້ຢ່າງເດັດຂາດຂອງສານໃຫ້ບຸກຄົນ ຕ້ອງຮັບໂທດທາງອາຍາແລ້ວ ຫຼັງຈາກນັ້ນຈຶ່ງມີພຶດຕິກຳ ຫຼື ຂໍ້ເທັດຈິງບາງຢ່າງທີ່ອາດມີເນື້ອໃນສຳຄັນ ຕໍ່ການປ່ຽນແປງຄຳຕັດສິນດັ່ງກ່າວ. ກົດໝາຍອາຍາມີຈຸດປະສົງທີ່ຈະລົງໂທດບຸກຄົນທີ່ໄດ້ກະທຳຜິດຈິງ ແຕ່ຂະບວນການພິຈາລະນາໄຕ່ສວນໃນສານອາດ ມີຄວາມຜິດພາດເກີດຂຶ້ນໄດ້ ເຖິງວ່າສານຈະໄດ້ໃຊ້ເຫດຜົນໃນການຮັບຟັງພະຍານ ຫຼື ຫຼັກຖານຢ່າງຮອບຄອບແລ້ວກໍຕາມ. ດ້ວຍເຫດນີ້ ກົດໝາຍຈຶ່ງໄດ້ກຳນົດໃຫ້ມີການຮື້ຟື້ນຄະດີນັ້ນຂຶ້ນພິຈາລະນາໃໝ່ໄດ້ ໂດຍໄດ້ກຳນົດເງື່ອນໄຂຕ່າງໆໄວ້ໃນກົດໝາຍ ເພື່ອບໍ່ໃຫ້ກະທົບຕໍ່ປະສິດທິພາບຂອງຂະບວນການຍຸຕິທຳທາງອາຍາ.

ການຮື້ຟື້ນຄະດີອາຍາ ແມ່ນການຮື້ຟື້ນຄະດີທີ່ມີຄຳຕັດສິນ ຫຼື ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ບົນພື້ນຖານຂໍ້ມູນ ຫຼື ຫຼັກຖານໃໝ່ເທົ່ານັ້ນ ຕາມຄຳຮ້ອງຂໍຂອງຄູ່ຄວາມ ຫຼື ໂດຍໜ້າທີ່ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ (ມ 259 ກດຍ) ຊຶ່ງເປັນບາດກ້າວພິເສດຂອງການດຳເນີນຄະດີອາຍາຄືນໃໝ່ ໃນກໍລະນີທີ່ໄດ້ພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່ໃນຄະດີ ທີ່ໄດ້ພິຈາລະນາຕາມຂັ້ນຕອນຂອງກົດໝາຍມາແລ້ວແຕ່ໄດ້ນຳເອົາຄະດີມາດຳເນີນຄືນໃໝ່ທີ່ກ່ຽວກັບຄະດີເກົ່າ ເນື່ອງຈາກວ່າໄດ້ມີສະພາບການ ຫຼື ຂໍ້ມູນຫຼັກຖານໃໝ່ທີ່ມີຄວາມສຳຄັນ ແລະ ພົວພັນກັບຄະດີທີ່ໄດ້ດຳເນີນສຳເລັດມາແລ້ວ ຊຶ່ງເປັນສິດອຳນາດໂດຍເດັດຂາດຂອງອົງການໄອຍະການປະຊາຊົນສູງສຸດເທົ່ານັ້ນ ທີ່ມີສິດສະເໜີຮື້ຟື້ນໄປຍັງສານປະຊາຊົນສູງສຸດ ເພື່ອພິຈາລະນາຄະດີເປັນຂັ້ນຮື້ຟື້ນ.

## 2. ຄວາມຈຳເປັນໃນການຮື້ຟື້ນ

ການຮື້ຟື້ນຄະດີແມ່ນມີຄວາມຈຳເປັນທີ່ສຸດເພາະການຮື້ຟື້ນຄະດີ ແມ່ນຂັ້ນຕອນພິເສດເພື່ອຮັບປະກັນຄວາມຖືກຕ້ອງ, ຊັດເຈນ ແລະ ມີຄວາມໂປ່ງໃສເຮັດໃຫ້ສັງຄົມມີຄວາມສະຫງົບ ແລະ ບຸກຄົນທີ່ຖືກສານຕັດສິນ ຫຼື ພິພາກສາຕັດອິດສະລະພາບໄດ້ຮັບຄວາມຍຸຕິທຳ. ສະນັ້ນ, ຈຶ່ງເວົ້າໄດ້ວ່າການຮື້ຟື້ນຄະດີກໍເພື່ອຊອກໃຫ້ເຫັນຄວາມເປັນຈິງ ເຫັນໄດ້ຄວາມບໍລິສຸດ ແລະ ທຸກການກະທຳທີ່ເປັນອັນຕະລາຍທີ່ເກີດຂຶ້ນໃນເບື້ອງຕົ້ນ ແລະ ໄດ້ຜ່ານຂະບວນການຍຸຕິທຳມາແລ້ວ. ຕາມຫຼັກການຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ

ຊຶ່ງກຳນົດໄວ້ວ່າການດຳເນີນຄະດີອາຍາ ມີຈຸດປະສົງເພື່ອນຳເອົາຜູ້ກະທຳຜິດມາດຳເນີນຄະດີ ແລະ ຮັບປະກັນການປະຕິບັດກົດໝາຍຢ່າງຖືກຕ້ອງ, ຍຸຕິທຳ, ຜູ້ກະທຳຜິດຕ້ອງຖືກລົງໂທດຕາມກົດໝາຍ, ຜູ້ບໍ່ໄດ້ກະທຳຜິດຈະບໍ່ຖືກລົງໂທດ.

ການພິຈາລະນາຮື້ຟື້ນຄະດີອາຍາແມ່ນສິດ ແລະ ໜ້າທີ່ຂອງສານປະຊາຊົນສູງສຸດຕາມການສະເໜີຂໍຮື້ຟື້ນຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ (ມ 259 ວັກ 2 ແລະ 3 ກດຍ).

ໃນປັດຈຸບັນກົດໝາຍຂອງຫຼາຍປະເທດ ກໍຍັງໄດ້ກຳນົດໃຫ້ມີການພິຈາລະນາຂໍຮື້ຟື້ນຄະດີໄດ້ເຊັ່ນ ສສ ຫວຽດນາມ, ຣາຊະອານາຈັກໄທ ລວມທັງ ສປປ ລາວ ແລະ ປະເທດອື່ນໆ.

**3. ເງື່ອນໄຂການຂໍຮື້ຟື້ນ**

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ 2012 ໄດ້ກຳນົດເນື້ອໃນທີ່ສຳຄັນ ຊຶ່ງໄດ້ກຳນົດການຮື້ຟື້ນຄະດີປະກອບດ້ວຍ 2 ເງື່ອນໄຂຄື:

**3.1. ສາເຫດຂອງການຂໍຮື້ຟື້ນ**

ການຂໍຮື້ຟື້ນຄະດີສາມາດດຳເນີນໄດ້ ເມື່ອມີສາເຫດໃດໜຶ່ງດັ່ງນີ້:

**3.1.1.** ພະຍານໃນຄະດີໄດ້ໃຫ້ການເທັດ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ໄດ້ໃຫ້ຄຳເຫັນເທັດ, ມີການແປພາສາເທັດ ຫຼື ການໃຊ້ຫຼັກຖານປອມ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ (ມ 260 ກດຍ)

ພາຍຫຼັງທີ່ຄະດີໄດ້ມີຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຖ້າຫາກໄດ້ຮູ້ ຫຼື ມີຫຼັກຖານໜັກແໜ້ນ ຢັ້ງຢືນວ່າພະຍານ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານໄດ້ໃຫ້ຄຳເຫັນເທັດ, ມີການແປພາສາເທັດ ຫຼື ການໃຊ້ຫຼັກຖານປອມເຂົ້າໃນການດຳເນີນຄະດີ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດບຸກຄົນດັ່ງກ່າວມານີ້ ຈະຖືກດຳເນີນຄະດີອາຍາຕາມມາດຕາ 164 ໃນສະຖານການໃຫ້ການເທັດ ຫຼື ມາດຕາ 161 ການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ ພາຍຫຼັງທີ່ສານຕັດສິນວ່າພວກກ່ຽວມີຄວາມຜິດຕາມມາດຕາ 164 ແລະ/ຫຼື ມາດຕາ 161 ກົດໝາຍອາຍາ ຫຼັກຖານໃໝ່ທີ່ໄດ້ມາຈາກການຕັດສິນຄະດີຄັ້ງນີ້ ຈຶ່ງສາມາດເປັນເງື່ອນໄຂ ໃນການຂໍຮື້ຟື້ນຄະດີທີ່ກ່ຽວຂ້ອງໄດ້.

ໃນກໍລະນີທີ່ພະຍານ, ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານໄດ້ໃຫ້ຄຳເຫັນເທັດ, ມີການແປພາສາເທັດ ຫຼື ການໃຊ້ຫຼັກຖານປອມ ຫາກພວກກ່ຽວໄດ້ເອົາຕົວຫຼົບໜີ, ລີ້ຊ່ອນໃນເວລາຖືກດຳເນີນຄະດີອົງການໄອຍະການປະຊາຊົນສູງສຸດ ຕ້ອງໄດ້ພິຈາລະນາຄຳຮ້ອງຂໍຮື້ຟື້ນຄະດີນັ້ນໄດ້ ຊຶ່ງບໍ່ຈຳເປັນຕ້ອງລໍຖ້າມີຄຳຕັດສິນຂອງສານເພື່ອຢັ້ງຢືນວ່າຄວາມຜິດຂອງພວກກ່ຽວກໍໄດ້.

**3.1.2.** ຜູ້ພິພາກສາ, ຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ຫຼື ຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ໄດ້ສະຫຼຸບຄະດີບໍ່ຖືກຕ້ອງ ຫຼື ໄດ້ເຂົ້າຂ້າງອອກຂາ ຊຶ່ງພາໃຫ້ການຕັດສິນຄະດີ ມີຄວາມຜິດພາດ (ມ 260 ກດຍ)

ໃນການດຳເນີນຄະດີອາຍາ ຖ້າຫາກໄດ້ຮູ້ ຫຼື ມີຫຼັກຖານໜັກແໜ້ນຢັ້ງຢືນວ່າ ຜູ້ພິພາກສາ, ຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ຫຼື ຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນໄດ້ສະຫຼຸບຄະດີບໍ່ຖືກຕ້ອງ ຫຼື ໄດ້ເຂົ້າຂ້າງອອກຂາຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ, ບຸກຄົນທີ່ກ່າວມາຂ້າງເທິງນີ້ຈະມີຄວາມຮັບຜິດຊອບຕາມກົດໝາຍອາຍາໃນສະຖານການປອມແປງເອກະສານ ຫຼື ການໃຊ້ເອກະສານປອມ (ມ 161 ກອຍ), ການທຳລາຍຫຼັກຖານ (ມ 167 ກອຍ) ພາຍຫຼັງທີ່ສານຕັດສິນວ່າພວກກ່ຽວມີຄວາມຜິດແທ້, ຫຼັກຖານໃໝ່ທີ່ໄດ້ມາຈາກການຕັດສິນຄະດີຄັ້ງນີ້ ຈຶ່ງສາມາດເປັນເງື່ອນໄຂໃນການຂໍຮື້ຟື້ນຄະດີທີ່ກ່ຽວຂ້ອງໄດ້.

**3.1.3.** ເຫດການອື່ນທີ່ຊີ້ບອກເຖິງຄວາມບໍລິສຸດຂອງຜູ້ຖືກຕັດສິນ ຊຶ່ງສານບໍ່ໄດ້ຮູ້ໃນເວລາລົງຄຳຕັດສິນ ຫຼື ຄຳພິພາກສານັ້ນ (ມ 260 ກດຍ)

**ຕົວຢ່າງ:** ທ້າວ ກ ໄດ້ຖືກສານຕັດສິນລົງໂທດເປັນເວລາ 3 ປີ, ໃນຂໍ້ຫາລະເມີດກົດຈະລາຈອນທີ່ພາໃຫ້ເກີດອຸບປະຕິເຫດ ຈຶ່ງເຮັດໃຫ້ມີຜູ້ເສຍຊີວິດແຕ່ໃນເວລາດຳເນີນຄະດີຂອງສານຂັ້ນຕົ້ນແມ່ນຍັງບໍ່ທັນຮັບຮູ້ໄດ້ເຖິງຄວາມເປັນຈິງຂອງເລື່ອງ ກໍຄືຄວາມບໍລິສຸດຂອງທ້າວ ກ ເພາະໃນເວລາເກີດເຫດທ້າວ ກ ແມ່ນເປັນຜູ້ທີ່ບໍ່ໄດ້ຂັບລົດຄັນດັ່ງກ່າວ ແຕ່ແມ່ນທ້າວ ຂ ຊຶ່ງເປັນຫົວໜ້າຂອງທ້າວ ກ ເປັນຜູ້ຂັບລົດຕຳຄົນຕາຍໃນເວລານັ້ນ. ແຕ່ທ້າວ ຂ ຜູ້ເປັນຫົວໜ້າໄດ້ໃຫ້ທ້າວ ກ ເປັນຜູ້ຮັບສາລະພາບແທນຕົນວ່າເປັນຜູ້ຂັບລົດຕຳຄົນຕາຍແທ້. ແຕ່ມາເຖິງໄລຍະໜຶ່ງຈຶ່ງສືບຮູ້ ແລະ ມີຂໍ້ມູນຫຼັກຖານໃໝ່ທີ່ເປັນປະໂຫຍດໃຫ້ແກ່ຮູບຄະດີ ແລະ ສາມາດພິສູດໄດ້ວ່າທ້າວ ກ ບໍ່ໄດ້ເປັນຜູ້ຂັບລົດຄັນນັ້ນແທ້ ແຕ່ແມ່ນທ້າວ ຂ ເປັນຜູ້ຂັບລົດຄັນດັ່ງກ່າວ. ດັ່ງນັ້ນ, ຈຶ່ງເປັນສາເຫດທີ່ພາໃຫ້ມີການຮື້ຟື້ນຄະດີຄືນໃໝ່.

**3.1.4.** ລະບຽບການດຳເນີນຄະດີອາຍາຖືກລະເມີດ ຫຼື ການນຳໃຊ້ກົດໝາຍບໍ່ຖືກຕ້ອງ (ມ 260 ກດຍ)

ການດຳເນີນຄະດີອາຍາ ຖ້າຜູ້ພິພາກສາ, ຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ຫຼື ຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ຫາກໄດ້ລະເມີດລະບຽບການດຳເນີນຄະດີອາຍາ ຫຼື ນຳໃຊ້ກົດໝາຍບໍ່ຖືກຕ້ອງພວກກ່ຽວຈະມີຄວາມຮັບຜິດຊອບຕາມກົດໝາຍອາຍາ.

**ຕົວຢ່າງ:** ໃນການດຳເນີນຄະດີອາຍາ ຜູ້ພິພາກສາ, ຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ຫຼື ຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ

ຕ້ອງນຳໃຊ້ມາດຕະການຕ່າງໆ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເພື່ອເຮັດໃຫ້ການດຳເນີນຄະດີເປັນໄປຢ່າງຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ແນໃສ່ຊອກຫາ ແລະ ຊອກໃຫ້ເຫັນຫຼັກຖານຜູກມັດ ແລະ ຫຼັກຖານແກ້ມັດ ເພື່ອຢັ້ງຢືນຄວາມບໍລິສຸດຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ ແລະ ຄົ້ນຄວ້າຫາສາເຫດທີ່ພາໃຫ້ມີການຫຼຸດຜ່ອນ ຫຼື ການເພີ່ມຄວາມຮັບຜິດຊອບທາງອາຍາ.

ຜູ້ພິພາກສາ, ຫົວໜ້າອົງການໄອຍະການ, ພະນັກງານໄອຍະການ ຫຼື ຫົວໜ້າອົງການສືບສວນ-ສອບສວນ, ເຈົ້າໜ້າທີ່ສືບສວນ-ສອບສວນ ບໍ່ປະຕິບັດຕາມຂັ້ນຕອນທີ່ກົດໝາຍກຳນົດໄວ້ໂດຍເຈດຕະນາເຊັ່ນ ຊອກຫາແຕ່ຫຼັກຖານຜູກມັດ ຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ ແລະ ບໍ່ຄົ້ນຄວ້າຫາສາເຫດທີ່ພາໃຫ້ມີການຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ, ການເອົາຄຳໃຫ້ການ ຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍ ແລະ ບຸກຄົນທີ່ເຂົ້າຮ່ວມໃນຄະດີນັ້ນ ໄດ້ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່, ທຸບຕີ, ທໍລະມານ ຫຼື ນຳໃຊ້ມາດຕະການອື່ນທີ່ບໍ່ຖືກຕ້ອງຕາມກົດໝາຍ. ຂໍ້ມູນ, ຫຼັກຖານ ທີ່ເກັບໂຮມມາໄດ້ນັ້ນ ຍັງບໍ່ໄດ້ທຳການກວດກາ ແລະ ຊັ່ງຊາ ຕີລາຄາ ກ່ຽວກັບຄວາມຖືກຕ້ອງທາງດ້ານກົດໝາຍ, ຄວາມຈິງ, ຄວາມຄົບຖ້ວນ, ການພົວພັນກັບຄະດີ ແລະ ສາມາດເປັນບ່ອນອີງໃຫ້ແກ່ການພິຈາລະນາແກ້ໄຂ ຫຼື ຕັດສິນຄະດີອາຍາ. ໂດຍເນັ້ນໜັກເອົາຄຳຮັບສາລະພາບ ຂອງຜູ້ຖືກສົງໄສ, ຜູ້ຖືກຫາ ຫຼື ຈຳເລີຍເປັນຕົ້ນຕໍ, ກໍລະນີທີ່ ບໍ່ມີຄວາມໝັ້ນໃຈ ກ່ຽວກັບຜົນຂອງການພິສູດນັ້ນ ກໍບໍ່ໃຫ້ເຫດຜົນຂອງຕົນຢ່າງລະອຽດ ແລະ ໃນກໍລະນີ ທີ່ຄຳເຫັນຂອງ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານນັ້ນ ຫາກບໍ່ຈະແຈ້ງ ຫຼື ບໍ່ຄົບຖ້ວນ ກໍບໍ່ສາມາດສະເໜີໃຫ້ທຳການພິສູດຄືນໃໝ່ ແລະ ໂດຍເຈດຕະນາສະຫຼຸບຄະດີບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ມີການເຂົ້າຂ້າງອອກຂາ ຊຶ່ງພາໃຫ້ການຕັດສິນຄະດີມີຄວາມຜິດພາດ.

### 3.2. ກຳນົດເວລາຂໍຮື້ຟື້ນ

ການດຳເນີນການຮື້ຟື້ນຄະດີ ສາມາດດຳເນີນໄດ້ ເມື່ອພົບເຫັນຂໍ້ມູນ ແລະ ຫຼັກຖານໃໝ່, ຊຶ່ງໄດ້ກຳນົດໄວ້ມີ 2 ກໍລະນີຄື:

#### 3.2.1. ກໍລະນີທີໜຶ່ງ

ການຮື້ຟື້ນຄະດີໃນກໍລະນີທີ່ໄດ້ພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່ ຊຶ່ງມີຈຸດປະສົງເຮັດໃຫ້ຄວາມຮັບຜິດຊອບທາງອາຍາຂອງຜູ້ຖືກຕັດສິນໜັກຂຶ້ນນັ້ນ ຈະດຳເນີນໄດ້ແຕ່ພາຍໃນກຳນົດໜຶ່ງປີເທົ່ານັ້ນ ນັບແຕ່ວັນຄຳຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດເປັນຕົ້ນໄປ (ມ 261 ວັກ 1 ກດຍ).

**ຕົວຢ່າງ**: ສານໄດ້ຕັດສິນ ຫຼື ພິພາກສາ ລົງໂທດຕັດອິດສະລະພາບ ທ້າວ ກ ເປັນເວລາ 20 ປີ ໃນຂໍ້ຫາຄ້າຂາຍຢາເສບຕິດ (ຢາບ້າ) ແຕ່ທ້າວ ກ ທີ່ກຳລັງປະຕິບັດໂທດຢູ່ນັ້ນ

ໄດ້ປະມານ 10 ເດືອນ ຫຼັງຈາກນັ້ນໄອຍະການ ຫຼື ສານ ກໍໄດ້ພົບເຫັນຂໍ້ມູນຫຼັກຖານໃໝ່ ຈຶ່ງເປັນສາເຫດໃນການຮື້ຟື້ນຄະດີຄືນໃໝ່ໄດ້ ຍ້ອນວ່າກໍານົດເວລາ ຍັງບໍ່ເຖິງໜຶ່ງປີ ທີ່ກົດໝາຍໄດ້ກໍານົດໄວ້ ແລະ ສານກໍຈະພິຈາລະນາຕັດສິນເພີ່ມໂທດ ໃສ່ທ້າວ ກ ຕື່ມອີກກໍໄດ້. ແຕ່ຖ້າກາຍກໍານົດເວລາ ໜຶ່ງປີ ຖືວ່າບໍ່ສາມາດນໍາເອົາຄະດີມາຮື້ຟື້ນໄດ້. ຍົກເວັ້ນທີ່ສານ ພິພາກສາເປັນໂທດປະຫານຊີວິດ.

### 3.2.2. ກໍລະນີທີສອງ

ການຮື້ຟື້ນຄະດີ ເພື່ອເຮັດໃຫ້ຄວາມຮັບຜິດຊອບທາງອາຍາ ຂອງຜູ້ຖືກຕັດສິນເບົາ ລົງ ຫຼື ຕົກໄປນັ້ນຈະດໍາເນີນໄດ້ໂດຍບໍ່ມີກໍານົດເວລາ (ມ 261 ວັກ 1 ກດຍ).

**ຕົວຢ່າງ**: ທ້າວ ກ ໄດ້ຖືກສານຕັດສິນລົງໂທດຕັດອິດສະລະພາບ 15 ປີ ແຕ່ການດໍາເນີນຄະດີຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງມີຄວາມຜິດພາດ ຈຶ່ງເປັນສາເຫດໃນການຕັດສິນຄືນໃໝ່ນັ້ນ ເພື່ອໃຫ້ຜູ້ກ່ຽວໄດ້ຮັບໂທດເບົາລົງ ຫຼື ຕົກໄປນັ້ນຈະບໍ່ມີກໍານົດເວລາ ເຖິງວ່າກໍານົດເວລາຈະກາຍມາຫຼາຍປີກໍຕາມ ແຕ່ສານກໍສາມາດນໍາເອົາຄະດີມາ ຮື້ຟື້ນຄືນໃໝ່ໄດ້ທຸກເວລາ ກໍຍ້ອນວ່າ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາກໍານົດໄວ້ໂດຍບໍ່ມີກໍານົດເວລາ.

ການເສຍຊີວິດຂອງຜູ້ຖືກຕັດສິນ ຈະບໍ່ເປັນອຸປະສັກໃຫ້ແກ່ການຮື້ຟື້ນຄະດີ ເພື່ອຈຸດປະສົງຊອກຫາຄວາມຈິງກ່ຽວກັບການກ່າວຫາໃສ່ຜູ້ກ່ຽວ (ມ 261 ວັກ 2 ກດຍ).

**ຕົວຢ່າງ:** ທ້າວ ກ ໄດ້ຖືກສານຕັດສິນລົງໂທດປະຫານຊີວິດ ໃນຂໍ້ຫາຄ້າຂາຍຢາເສບຕິດ, ແຕ່ໃນເວລາປະຕິບັດໂທດຢູ່ນັ້ນ ທ້າວ ກ ໄດ້ເສຍຊີວິດ ແຕ່ການຮື້ຟື້ນກໍສາມາດເຮັດໄດ້ເຖິງວ່າຜູ້ກ່ຽວຈະເສຍຊີວິດກໍຕາມ. ຈຸດປະສົງກໍເພື່ອພິສູດໃນການຊອກຫາຄວາມຈິງວ່າຂໍ້ກ່າວຫາທີ່ສານໄດ້ຕັດສິນໄປນັ້ນແມ່ນມີຄວາມຖືກຕ້ອງ ຫຼື ມີຄວາມຍຸຕິທໍາ ຫຼື ບໍ່, ຖ້າຫາກການດໍາເນີນຄະດີຄືນໃໝ່ນັ້ນຫາກມີຂໍ້ມູນທີ່ຄົບຖ້ວນ ແລະ ພິສູດຄວາມຈິງວ່າຜູ້ກ່ຽວບໍ່ໄດ້ຄ້າຂາຍຢາເສບຕິດ ສານກໍຈະຕັດສິນໃຫ້ຜູ້ກ່ຽວພົ້ນຈາກຂໍ້ກ່າວຫາ (ເຖິງວ່າຜູ້ກ່ຽວຈະເສຍຊີວິດກໍຕາມ ນີ້ກໍຖືວ່າເປັນການລົບລ້າງມົນທິນໃຫ້ຜູ້ກ່ຽວກໍຄືຄອບຄົວ ແລະ ຍາດພີ່ນ້ອງ ແລະ ປະກາດໃຫ້ສັງຄົມຮັບຊາບເຖິງຄວາມບໍລິສຸດ).

ສໍາລັບຜູ້ທີ່ຈະສະເໜີຮື້ຟື້ນ ອາດຈະແມ່ນຄົນໃນຄອບຄົວ, ຍາດພີ່ນ້ອງ, ອົງການຈັດຕັ້ງ ຫຼື ການສະເໜີໂດຍໜ້າທີ່ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

## 4. ຜູ້ມີສິດສະເໜີຂໍຮື້ຟື້ນ

ການຮື້ຟື້ນຄະດີ ແມ່ນດໍາເນີນຕາມຄໍາຮ້ອງຂໍຂອງຄູ່ຄວາມ ຫຼື ໂດຍໜ້າທີ່ຂອງຫົວໜ້າອົງການໄອຍະການປະຊາຊົນສູງສູດ, ການຮື້ຟື້ນຄະດີໂດຍໜ້າທີ່ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແມ່ນເພື່ອຄວາມຖືກຕ້ອງຕາມກົດໝາຍ (ມ 259 ວັກ 3 ກດຍ).

ການສະເໜີຂໍຮື້ຟື້ນຄະດີອາຍາ ສາມາດດຳເນີນໄດ້ກໍຕໍ່ເມື່ອມີບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່ກ່ຽວກັບຄະດີ ຊຶ່ງມີຄຳຊີ້ຂາດ, ຄຳຕັດສິນ ຫຼື ຄຳພິພາກສາ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວນັ້ນ ຕ້ອງຍື່ນຄຳຮ້ອງຂໍຮື້ຟື້ນຂອງຕົນຕໍ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ (ມ 262 ກດຍ).

## 5. ອົງການພິຈາລະນາ ແລະ ລະບຽບການ

### 5.1. ອົງການພິຈາລະນາການຂໍຮື້ຟື້ນຂອງອົງການໄອຍະການປະຊາຊົນສູງສຸດ

ເມື່ອຫົວໜ້າອົງການໄອຍະການປະຊາຊົນສູງສຸດ ໄດ້ຮັບຄຳຮ້ອງຂໍຮື້ຟື້ນຂອງບຸກຄົນ ຫຼື ການຈັດຕັ້ງ ຫຼື ຫົວໜ້າອົງການໄອຍະການປະຊາຊົນສູງສຸດຈະຄົ້ນຄ້ວາ ພິຈາລະນາຕາມຄຳຮ້ອງຂໍຮື້ຟື້ນທີ່ບຸກຄົນ ຫຼື ການຈັດຕັ້ງໄດ້ຍື່ນຄຳຮ້ອງຂໍຕໍ່ຄວາມບໍ່ພໍໃຈ, ຕໍ່ຄຳຕັດສິນຂອງສານປະຊາຊົນ ຊຶ່ງອາດຈະເຮັດໃຫ້ບຸກຄົນໄດ້ຮັບຄວາມອັບປະໂຫຍດ, ຫົວໜ້າອົງການໄອຍະການ ຕ້ອງໄດ້ຄົ້ນຄ້ວາພິຈາລະນາຄຳຮ້ອງຂໍທີ່ໄດ້ນຳສະເໜີຂໍ້ມູນ ຫຼື ຫຼັກຖານໃໝ່ ໃຫ້ຢ່າງລະອຽດ, ຖ້າເຫັນວ່າຄຳຮ້ອງຂໍຮື້ຟື້ນຫາກມີສາເຫດໃດໜຶ່ງທີ່ເປັນພື້ນຖານໃຫ້ແກ່ການຂໍຮື້ຟື້ນ (ມ 260 ກດຍ), ຊຶ່ງໄດ້ກຳນົດໄວ້ສາເຫດຂອງການຮື້ຟື້ນຂໍ້ 3.1.1; 3.1.2 ແລະ 3.1.3 ທີ່ໄດ້ອະທິບາຍໄວ້ຂ້າງເທິງນັ້ນ.

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕ້ອງສົ່ງຄຳຮ້ອງຂໍຮື້ຟື້ນໄປຍັງຫົວໜ້າອົງການໄອຍະການບ່ອນດຳເນີນຄະດີເປັນຂັ້ນຕົ້ນ ເພື່ອອອກຄຳສັ່ງເປີດການສືບສວນ-ສອບສວນ ກ່ຽວກັບການພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່. ພາຍຫຼັງການສືບສວນ-ສອບສວນຄະດີໄດ້ສິ້ນສຸດແລ້ວ ຖ້າເຫັນວ່າມີສາເຫດໃນການຮື້ຟື້ນຄະດີນັ້ນ ຫົວໜ້າອົງການໄອຍະການ ທີ່ດຳເນີນຄະດີເປັນຂັ້ນຕົ້ນ ຕ້ອງສົ່ງສຳນວນຄະດີ ພ້ອມດ້ວຍເອກະສານຕ່າງໆ ຂອງການສືບສວນ-ສອບສວນ ແລະ ຄຳເຫັນຂອງຕົນໃຫ້ຫົວໜ້າອົງການໄອຍະການປະຊາຊົນສູງສຸດເພື່ອສະເໜີຮື້ຟື້ນຄະດີຕໍ່ສານປະຊາຊົນສູງສຸດ. ແຕ່ຖ້າເຫັນວ່າບໍ່ມີສາເຫດໃນການຮື້ຟື້ນຄະດີແລ້ວຫົວໜ້າອົງການໄອຍະການທີ່ກ່ຽວຂ້ອງ ຕ້ອງລາຍງານຕໍ່ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອຕົກລົງບໍ່ຮື້ຟື້ນຄະດີ (ມ 263 ກດຍ), ແລ້ວແຈ້ງໃຫ້ບຸກຄົນ ຫຼື ອົງການຈັດຕັ້ງທີ່ກ່ຽວຂ້ອງຊາບ (ມ 262 ວັກທ້າຍ ກດຍ).

ໃນກໍລະນີທີ່ມີສາເຫດຕາມ ຂໍ້ 3.1.4 ທີ່ໄດ້ອະທິບາຍໄປແລ້ວນັ້ນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕ້ອງອອກຄຳຕົກລົງສະເໜີຮື້ຟື້ນຄະດີຕາມຄຳຮ້ອງຂໍ ຫຼື ໂດຍໜ້າທີ່ (ມ 262 ກດຍ).

### 5.2. ການພິຈາລະນາຂອງສານປະຊາຊົນສູງສຸດ

ໃນການພິຈາລະນາກ່ຽວກັບການຮື້ຟື້ນຄະດີສານປະຊາຊົນສູງສຸດ ມີສິດອຳນາດດັ່ງນີ້:

1) ຍົກເລີກການສະເໜີຮື້ຟື້ນຄະດີ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ເມື່ອສານປະຊາຊົນສູງສຸດ ໄດ້ພິຈາລະນາຄໍາຮ້ອງຄໍາສະເໜີ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຢ່າງຮອບຄອບ, ພາວະວິໄສຢ່າງລະອຽດແລ້ວ ຖ້າເຫັນວ່າບໍ່ມີຂໍ້ມູນ ຫຼື ຫຼັກຖານໃໝ່ທີ່ສໍາຄັນ ແລະ ບໍ່ມີເຫດຜົນຕໍ່ກັບຄໍາສະເໜີດັ່ງກ່າວ ສານປະຊາຊົນສູງສຸດ ຂັ້ນຮື້ຟື້ນຈະພິພາກສາບໍ່ເຫັນດີຕາມຄໍາສະເໜີຮື້ຟື້ນ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

2) ລົບລ້າງຄໍາຕັດສິນ ຫຼື ຄໍາພິພາກສາແລ້ວໃຫ້ຈໍາເລີຍພົ້ນຂໍ້ກ່າວຫາ.

ໃນກໍລະນີທີ່ມີການຂໍລົບລ້າງ ຫຼື ຮື້ຟື້ນຄະດີຄືນໃໝ່ນັ້ນ ຫາກເຫັນວ່າ ມີຂໍ້ມູນ, ຫຼັກຖານອັນໃໝ່ທີ່ໜັກແໜ້ນ ຊຶ່ງເປັນຫຼັກຖານທີ່ເຊື່ອຖືໄດ້ທາງດ້ານກົດໝາຍ ແລະ ຊີ້ບອກວ່າຈໍາເລີຍບໍ່ມີຄວາມຜິດ. ຫົວໜ້າອົງການໄອຍະການປະຊາຊົນສູງສຸດຕ້ອງອອກຄໍາຕົກລົງໃຫ້ຮື້ຟື້ນຄະດີຄືນໃໝ່ແລ້ວສະເໜີຕໍ່ສານປະຊາຊົນສູງສຸດ ພິພາກສາຄືນໃໝ່ໂດຍ ໃຫ້ຈໍາເລີຍພົ້ນຂໍ້ກ່າວຫາ.

3) ລົບລ້າງຄໍາຕັດສິນ ຫຼື ຄໍາພິພາກສາ ແລ້ວສົ່ງສໍານວນຄະດີຄືນໃຫ້ ສານຂັ້ນຕົ້ນຄະນະໃໝ່ພິຈາລະນາ.

ການພິຈາລະນາຄະດີ ຢູ່ສານຂັ້ນຕົ້ນຄະນະໃໝ່ ໃຫ້ປະຕິບັດຕາມລະບຽບການທົ່ວໄປຂອງການດໍາເນີນຄະດີຢູ່ສານຂັ້ນຕົ້ນ (ມ 264 ວັກ 2 ກດຍ).

### 5.3. ລະບຽບການຂໍຮື້ຟື້ນຄະດີອາຍາ

ໃນການພິຈາລະນາຄໍາຮ້ອງຂໍຮື້ຟື້ນຄະດີ ເມື່ອມີສາເຫດໃດໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 260 ຂໍ້ 1, 2 ແລະ 3 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012 ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຕ້ອງສົ່ງຄໍາຮ້ອງຂໍຮື້ຟື້ນໄປຍັງຫົວໜ້າອົງການໄອຍະການ ບ່ອນດໍາເນີນຄະດີເປັນຂັ້ນຕົ້ນ ເພື່ອອອກຄໍາສັ່ງເປີດການສືບສວນ-ສອບສວນ ກ່ຽວກັບການພົບເຫັນຂໍ້ມູນ ຫຼື ຫຼັກຖານໃໝ່.

ໃນກໍລະນີທີ່ມີສາເຫດຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 260 ຂໍ້ 4 ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງ ປີ 2012 ຫົວໜ້າອົງການໄອຍະການປະຊາຊົນສູງສຸດຕ້ອງອອກຄໍາຕົກລົງສະເໜີຮື້ຟື້ນຄະດີຕາມຄໍາຮ້ອງຂໍ ຫຼື ໂດຍໜ້າທີ່ (ມ 262 ກດຍ).

**ຕົວຢ່າງ: ແບບພິມໃບຄຳຮ້ອງຂໍຮື້ຟື້ນຄະດີອາຍາ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ໃບຄຳຮ້ອງ**

**ຂໍຮື້ຟື້ນຄະດີອາຍາຄືນໃໝ່**

**ຮຽນ : ທ່ານ ຫົວໜ້າອົງການ ໄອຍະການ ປະຊາຊົນສູງສຸດ**

**ເລື່ອງ : ຂໍຮື້ຟື້ນຄະດີຄືນໃໝ່**

ຂ້າພະເຈົ້າທ້າວ ຫຼື ນາງ......................................ອາຍຸ...........ປີ, ອາຊີບ.................. ສັນຊາດ.............ສາດສະໜາ...................ປັດຈຸບັນຢູ່ບ້ານ.........................ໜ່ວຍ............... ເມືອງ......................ແຂວງ......................ໂທລະສັບ021....................;020.....................

**ຂຽນຄຳຮ້ອງໃນຖານະ** ໂຈດທາງແພ່ງ ຜູ່ຕ່າງໜ້າ

ຈຳເລີຍ ທະນາຍຄວາມ

ບຸກຄົນທີສາມ

ຂໍສະເໜີມາຍັງຫົວໜ້າອົງການໄອຍະການປະຊາຊົນສູງສຸດເພື່ອໃຫ້ທ່ານຮື້ຟື້ນຄະດີຄືນໃໝ່ ກ່ຽວກັບຄຳຕັດສິນຄຳພິພາກສາສະບັບເລກທີ.............ລົງວັນທີ........./........./.........ທີ່ໃຊ້ໄດ້ຢ່າງເດັດຂາດໃນສຳນວນຄະດີອາຍາສະບັບ ເລກທີ.........ລົງວັນທີ....../........./...........

**ລະຫວ່າງ**

- ໄອຍະການປະຊາຊົນ....................................................................................ໂຈດ
- ທ້າວ ຫຼື ນາງ....................................ອາຍຸ...........ປີ, ອາຊີບ..............ສັນຊາດ................ ສາດສະໜາ....................ປັດຈຸບັນຢູ່ບ້ານ................ໜ່ວຍ................ເມືອງ...................... ແຂວງ/ນະຄອນ..................ໂຈດທາງແພ່ງ......................................................
- ທ້າວ ຫຼື ນາງ..........................................ອາຍຸ...........ປີ, ອາຊີບ................ສັນຊາດ........ ສາດສະໜາ............ປັດຈຸບັນຢູ່ບ້ານ........................ໜ່ວຍ................ເມືອງ....................... ແຂວງ............................ຈຳເລີຍຖືກກ່າວຫາ.................................................................

I. **ເນື້ອຄະດີ (ເລົ່າປະຫວັດຄວາມເປັນມາຂອງເລື່ອງໂດຍຫຍໍ້) ຫຼີກເວັ້ນການເລົ່າເຫດການທີ່ບໍ່ຈຳເປັນ**.........................................................................................................

## II. ການພິຈາລະນາຕັດສິນຂອງສານແຕ່ລະຂັ້ນ

### 1. ສານຂັ້ນຕົ້ນ

- ຄຳຕັດສິນຂອງສານຂັ້ນຕົ້ນຂອງສານເຂດ, ສານປະຊາຊົນຂັ້ນແຂວງ, ນະຄອນຫຼວງໄດ້ຕົກລົງຄຳຕັດສິນ ສະບັບເລກທີ................ລົງວັນທີ............ບອກວ່າ...................

### 2. ຄຳພິພາກສາຂອງສານອຸທອນ, ສານແຂວງ, ນະຄອນ ຫຼື ສານພາກ

ໄດ້ຕົກລົງຄຳພິພາກສາ ສະບັບເລກທີ................................ລົງວັນທີ................ ບອກວ່າ........................................................................................................

### 3. ຄຳພິພາກສາຂອງສານຂັ້ນລົບລ້າງຂອງສານພາກ ຫຼື ສານປະຊາຊົນສູງສຸດ

ສະບັບເລກທີ..........................ລົງວັນທີ..........................ບອກວ່າ................ .............................................................................................................

**ບັນຫາທີ່ຮື້ຟື້ນຄືນໃໝ່**

1) ...........................................................................................................
2) ...........................................................................................................
3) ...........................................................................................................

## III. ຫຼັກຖານໃໝ່

1) ...........................................................................................................
2) ...........................................................................................................
3) ...........................................................................................................

ຫວັງຢ່າງຍິ່ງວ່າຈະໄດ້ຮັບການຄົ້ນຄວ້າພິຈາລະນາຕາມທາງທີ່ຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບຢ່າງສູງ.

ທີ່..........................ວັນທີ....../......./.........

ນາຍບ້ານ ຜູ່ຮ້ອງຂໍ

ວັນທີ................/................./................

**ເອກະສານຂັດຕິດ:**

| | | |
|---|---|---|
| 1. | ໃບຢັ້ງຢືນທີ່ຢູ່ | 1 ສະບັບ |
| 2. | ໃບຢັ້ງຢືນມອບສິດ(ຖ້າມີຜູ່ຕ່າງໜ້າ) | 1 ສະບັບ |
| 3. | ຄຳຕັດສິນຂອງສານຂັ້ນຕົ້ນ | 1 ສະບັບ |
| 4. | ຄຳພິພາກສາຂັ້ນອຸທອນ | 1 ສະບັບ |
| 5. | ຄຳພິພາກສາ ຂອງສານປະຊາຊົນສູງສຸດ ເອກະສານອື່ນໆທີ່ກ່ຽວກັບຄະດີເລື່ອງນີ້ ແລະ ຫຼັກຖານໃໝ່ທີ່ຢາກສະເໜີ. | |

## ຕົວຢ່າງ: ຄຳຕັດສິນບໍ່ຮື້ຟື້ນ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການໄອຍະການປະຊາຊົນສູງສຸດ ເລກທີ...............

ນະຄອນຫຼວງວຽງຈັນ, ວັນທີ...............

**ຄຳຕັດສິນ**

**ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

**ບໍ່ຮື້ຟື້ນຄະດີອາຍາ ເລກທີ..............., ລົງວັນທີ..................**

- ອີງຕາມ ຄຳຮ້ອງຂໍຮື້ຟື້ນຄະດີອາຍາຂອງນາງ..........ສະບັບເລກທີ.............ລົງວັນທີ.....
- ອີງຕາມ ສຳນວນຄະດີອາຍາ ສະບັບເລກທີ......................... ລົງວັນທີ....................

**ລະຫວ່າງ**

- ຫົວໜ້າອົງການໄອຍະການປະຊາຊົນນະຄອນຫຼວງວຽງຈັນ.....................ໂຈດ
- ນາງ ກ ອາຍຸ.........ປີ, ສັນຊາດ............, ອາຊີບ....................., ຢູ່ບ້ານ......................., ໜ່ວຍ......, ເມືອງ......................, ນະຄອນຫຼວງວຽງຈັນ..............................ຈຳເລີຍ 1.
- ນາງ ຂ ອາຍຸ......... ປີ, ສັນຊາດ..........., ອາຊີບ....................., ຢູ່ບ້ານ....................., ໜ່ວຍ......., ເມືອງ......................., ນະຄອນຫຼວງວຽງຈັນ.............................ຈຳເລີຍ 2.
- ນາງ ຄ ອາຍຸ.........ປີ, ສັນຊາດ..............., ອາຊີບ...................ຢູ່ບ້ານ....................., ໜ່ວຍ..........., ເມືອງ....................., ນະຄອນຫຼວງວຽງຈັນ...........................ຈຳເລີຍ 3.

ຖືກຫາວ່າ:...................................

ຖືກກັກຕົວ:.................................

ສະຖານທີ່ກັກຂັງ:.........................

**ເນື້ອຄະດີ**

ນາງ ກ ຜູ່ກ່ຽວໄດ້ໃຫ້ການຮັບສາລະພາບວ່າ ໄດ້ເລີ່ມຄ້າ-ຂາຍຢາບ້າ ຢູ່ທີ່ເຮືອນ ຂອງ ນາງ ຄ ຢູ່ບ້ານ.............., ເມືອງ..................., ນະຄອນຫຼວງວຽງຈັນ ມາຕັ້ງແຕ່ຕົ້ນເດືອນ 5 ປີ 2009 ໃນການຂາຍຢາບ້າຜູ່ຊື້ມາແມ່ນໄດ້ໂທລະສັບມາກ່ອນແລ້ວຈຶ່ງມາເອົາ, ບາງຄັ້ງ ຜູ່ກ່ຽວກໍໄດ້ອອກໄປສົ່ງໃຫ້ຢູ່ເດີ່ນທາດຫຼວງ ໂດຍໄດ້ຮັບຢາບ້າຈາກນາງ ຄ ໃນລາຄາ ເມັດ 15.000

ກີບ (ສິບຫ້າພັນກີບ) ແລ້ວນຳໄປຂາຍເມັດລະ 20.000 ກີບ (ຊາວພັນກີບ) ພາຍຫຼັງຂາຍໄດ້ແລ້ວຈຶ່ງໄດ້ເອົາເງິນສົ່ງໃຫ້ ນາງ ຄ ແລະ ຕົກມາຮອດວັນທີ 9 ກໍລະກົດ 2010 ຜູ້ກ່ຽວຖືກເຈົ້າໜ້າທີ່ຈັບຕົວພ້ອມຂອງກາງຢາບ້າ 69 ເມັດ, ນ້ຳໜັກ 7,6 ກຣາມ ມາດຳເນີນຄະດີ ແລະ ນອກຈາກນີ້ ນາງ ກ ຍັງໄດ້ໃຫ້ການຮັບສາລະພາບວ່າ ຜູ້ກ່ຽວກັບນາງ ຄ ບໍ່ແມ່ນຍາດພີ່ນ້ອງກັນ, ຜູ້ກ່ຽວເປັນພຽງຄົນອາໄສຢູ່ເຮືອນນຳນາງ ຄ ແລະ ຜູ້ກ່ຽວ ໄດ້ເຂົ້າມາຢູ່ເຮືອນຂອງ ນາງ ຄ ໃນປີ 2008 ມາເຮັດວຽກໃຫ້ຜູ້ກ່ຽວໂດຍບໍ່ມີເງິນເດືອນ, ແຕ່ ນາງ ຄ ກໍໃຫ້ບ່ອນຢູ່ອາໄສ ແລະ ຮັບລ້ຽງ.

ນາງ ຂ ໄດ້ໃຫ້ການຮັບສາລະພາບວ່າ ໃນເດືອນ 5 ປີ 2009 ຜູ້ກ່ຽວເຄີຍໄດ້ຊື້ຢາບ້າ ຈາກນາງ ກ ມາແລ້ວ 4-5 ຄັ້ງ, ຊື້ຄັ້ງລະ 5-10 ເມັດ, ໃນລາຄາເມັດລະ 15.000 ກີບ (ສິບຫ້າພັນກີບ) ແລ້ວເອົາໄປຂາຍຕໍ່ເມັດລະ 17.000 ກີບ (ສິບເຈັດພັນກີບ) ຊຶ່ງຜູ້ກ່ຽວໄດ້ຊື້ຢາບ້າແຕ່ລະຄັ້ງ ແມ່ນໄປເອົານຳນາງ ກ ຢູ່ທີ່ເຮືອນຂອງນາງ ຄ ຕົກ ມາຮອດວັນທີ 9 ກໍລະ ກົດ 2010 ຈຶ່ງຖືກເຈົ້າໜ້າທີ່ກັກຕົວມາດຳເນີນຄະດີ ແລະ ນອກຈາກນີ້ ນາງ ຂ ຍັງໄດ້ໃຫ້ ການຮັບສາລະພາບອີກວ່າ ໃນວັນທີ 23 ກຸມພາ 2009 ຜູ້ກ່ຽວໄດ້ຖືກເຈົ້າໜ້າທີ່ ປກສ ເມືອງ ....................ຈັບຕົວມາດຳເນີນຄະດີໃນຂໍ້ຫາຄ້າ-ຂາຍຢາເສບຕິດ ແລະ ໄດ້ຖືກກັກ ຂັງເປັນເວລາ 9 ເດືອນ.

ສ່ວນ ນາງ ຄ ໄດ້ໃຫ້ການວ່າ ໃນວັນທີ 9 ກໍລະກົດ 2010 ທາງເຈົ້າໜ້າທີ່ໄດ້ເຂົ້າກວດຄົ້ນເຮືອນຜູ້ກ່ຽວນັ້ນແມ່ນໄດ້ພົບຢາເສບຕິດ ຈຳນວນ 10 ເມັດ ແລະ ຖົງຢາງສີຟ້າສຳລັບໃສ່ຢາບ້າ ຈຳນວນ 02 ຖົງ ທີ່ເຈົ້າໜ້າທີ່ຍຶດໄດ້ນັ້ນ, ແມ່ນກວດຄົ້ນພົບເຫັນຢູ່ເຮືອນ ຂອງຕົນເອງແທ້, ຊຶ່ງຢາບ້າຈຳນວນດັ່ງກ່າວແມ່ນພົບເຫັນຢູ່ໃນຫ້ອງນອນຂອງ ນາງ ກ ສ່ວນຖົງຢາງສີຟ້າຈຳນວນ 02 ຖົງນັ້ນ ແມ່ນພົບເຫັນຢູ່ໃນຫ້ອງນ້ຳໃນເຮືອນຂອງຕົນເອງ, ຫຼັງຈາກນັ້ນຈຶ່ງຖືກເຈົ້າໜ້າທີ່ຈັບຕົວ ມາດຳເນີນຄະດີ ແລະ ນອກຈາກນີ້ ຜູ້ກ່ຽວຍັງໄດ້ໃຫ້ການຮັບສາລະພາບອີກວ່າ ນາງ ກ ແມ່ນເປັນພີ່ນ້ອງ ຂອງຜົວເກົ່າທີ່ໄດ້ຮ້າງປະກັນມາໄດ້ຫຼາຍປີແລ້ວ, ສ່ວນ ນາງ ກ ແມ່ນໄດ້ມາຂໍຢູ່ນຳຜູ້ກ່ຽວໃນປີ 2008 ເປັນຄົນເອົາລູກ ແລະ ເບິ່ງວຽກເຮືອນໂດຍບໍ່ໄດ້ເງິນເດືອນ ແລະ ຄ່າຕອບແທນແຕ່ຢ່າງໃດ, ແຕ່ ນາງ ຄ ກໍໃຫ້ທີ່ຢູ່ອາໄສແກ່ ນາງ ກ ຕະຫຼອດມາ, ຈາກຜົນການສືບສວນ-ສອບສວນຂອງເຈົ້າໜ້າທີ່ ນາງ ຄ ໄດ້ໃຫ້ການປະຕິເສດວ່າຕົນບໍ່ໄດ້ມີສ່ວນພົວພັນ ແລະ ຮູ້ເຫັນຕໍ່ການຊື້-ຂາຍຢາເສບຕິດຂອງ ນາງ ກ ຊຶ່ງຕົນເປັນຜູ້ບໍລິສຸດ.

**ຮູບຄະດີ**

ສານປະຊາຊົນຂັ້ນຕົ້ນນະຄອນຫຼວງວຽງຈັນໄດ້ຕັດສິນຄະດີອາຍາ ສະບັບເລກທີ, ລົງວັນທີ......

ບອກວ່າ: ນາງ ກ, ນາງ ຂ ແລະ ນາງ ຄ (ພວກຈຳເລີຍ) ມີຄວາມຜິດທາງອາຍາໃນສະຖານຄ້າຂາຍຢາເສບຕິດ (ຢາບ້າ).

- ລົງໂທດຕັດອິດສະລະພາບພວກຈຳເລີຍ ຜູ້ລະ 5 ປີ, ປັບໃໝ ຜູ້ລະ 10.000.000 ກີບ.

- ຮິບຢາບ້າ ຈຳນວນ 69 ເມັດ, ນ້ຳໜັກ 6,21 ກຣາມ ແລ້ວມອບໃຫ້ພາກສ່ວນທີ່ກ່ຽວຂ້ອງນຳໄປທຳລາຍຖິ້ມ.

- ໃຫ້ຮິບຊັບຂອງນາງ ກ (ຈຳເລີຍ1) ຄື: ລົດຈັກຍີ່ຫໍ້ຮອນດ້າຄິກໄອ ສີດຳ ຄັນໝາຍເລກທະບຽນ ກຕ 0001, ເງິນຈຳນວນ 1.340 ບາດ, 10 ໂດລະສະຫະລັດ, 1.400.000 ກີບ, ສາຍຄໍຄຳຝຣັ່ງ

ພ້ອມກີ້ 1 ເສັ້ນ, ສາຍແຂນສີເຫຼືອງຄ້າຍຄືຄໍາ 1 ເສັ້ນ ນໍ້າໜັກ 3 ກຣາມ, ໂທລະສັບມືຖືໂນເກຍ 1 ໜ່ວຍ ເຂົ້າເປັນຂອງລັດ.

- ໃຫ້ຮິບຊັບຂອງນາງ ຂ (ຈໍາເລີຍ2) ຄື: ໂທລະສັບມືຖືຍີ່ຫໍ້ໂນເກຍ 1 ໜ່ວຍ ພ້ອມເງິນ 1.000.000 ກີບ ເຂົ້າເປັນຂອງລັດ.

ຕໍ່ຄໍາຕັດສິນດັ່ງກ່າວ ນາງ ຄ (ຈໍາເລີຍ3) ໄດ້ຂຽນຄໍາຮ້ອງຂໍຮື້ຟື້ນຄະດີຄືນໃໝ່ ສະບັບເລກທີ..........., ລົງວັນທີ...............ໂດຍອ້າງເຫດຜົນວ່າ: ໃຫ້ອົງການໄອຍະການປະຊາຊົນຄົ້ນຄວ້າພິຈາລະນາຄືນໃໝ່ ເນື່ອງຈາກວ່າ ຄໍາຕັດສິນຍັງບໍ່ທັນຖືກຕ້ອງ ແລະ ສອດຄ່ອງຕາມຄວາມເປັນຈິງເທື່ອ.

## ຄໍາເຫັນ

ຜ່ານການຄົ້ນຄວ້າບັນດາຂໍ້ມູນຫຼັກຖານ ແລະ ເອກະສານຕ່າງໆໃນສໍານວນຄະດີແລ້ວ.

ເຫັນວ່າ: ນາງ ຄ (ຈໍາເລີຍ3) ໄດ້ຍື່ນຄໍາຮ້ອງຂໍຮື້ຟື້ນຄະດີອາຍາຄືນໃໝ່ ສະບັບຂາເຂົ້າເລກທີ............, ລົງວັນທີ...............ແມ່ນປະຕິບັດຖືກຕ້ອງຕາມ ມາດຕາ..........ຂອງກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ ສະບັບປັບປຸງປີ.................

ເຫັນວ່າ: ຄໍາຕັດສິນຂອງສານປະຊາຊົນຂັ້ນຕົ້ນນະຄອນຫຼວງວຽງຈັນ ສະບັບເລກທີ..........., ລົງວັນທີ................... ແມ່ນຖືກຕ້ອງ ແລະ ສອດຄ່ອງຕາມຂໍ້ມູນຫຼັກຖານຕົວຈິງໃນສໍານວນຄະດີແລ້ວ ເນື່ອງຈາກວ່າ: ຢູ່ໃນຄໍາວິນິດໄສຂອງສານກໍໄດ້ເວົ້າ ຈະແຈ້ງວ່າ: ໃນວັນທີ 9 ກໍລະກົດ 2010 ເຈົ້າໜ້າທີ່ໄດ້ເຂົ້າກວດຄົ້ນເຮືອນຂອງຜູ້ກ່ຽວ ພົບ ຢາບ້າ ຈໍານວນ 10 ເມັດ, ຢູ່ໃນຫ້ອງຂອງນາງ ກ (ຈໍາເລີຍ1) ແລະ ຖົງ ຢາງສີຟ້າ ທີ່ເອົາ ໃສ່ຢາບ້າ ຈໍານວນ 02 ຖົງແມ່ນພົບເຫັນຢູ່ຫ້ອງນໍ້າເຮືອນຂອງຜູ້ກ່ຽວ ຊຶ່ງບໍ່ໄດ້ເວົ້າວ່າພົບເຫັນຢູ່ຫ້ອງນອນຂອງ ຜູ້ກ່ຽວແຕ່ຢ່າງໃດ ແລະ ອີກຢ່າງໜຶ່ງການທີ່ນາງ ຄ (ຈໍາເລີຍ3) ໄດ້ອ້າງວ່າການຊັດທອດ ຂອງ ນາງ ກ (ຈໍາເລີຍ1), ແລະ ການຢັ້ງຢືນຕໍາຫຼວດກຸ່ມ............, ສະບັບເລກທີ..........., ລົງວັນທີ................ແລະ ໃບລາຍງານຂອງອໍານາດການປົກຄອງບ້ານ..................ສະບັບ ເລກທີ..............., ລົງວັນທີ...............ແລ້ວສານນໍາມາຕັດສິນບອກວ່າ: ຜູ້ກ່ຽວມີຄວາມຜິດທາງອາຍາໃນສະຖານຄ້າ-ຂາຍຢາເສບຕິດ (ຢາບ້າ) ແມ່ນບໍ່ມີເຫດຜົນນັ້ນເຫັນວ່າການທີ່ ນາງ ກ (ຈໍາເລີຍ1) ໄດ້ລາຍງານ ເຖິງທ່ານປະທານສານປະຊາຊົນພາກກາງ ຕາມສະບັບລົງວັນທີ............. ແລະ ເຫັນຕາມການຢັ້ງຢືນຂອງຕໍາຫຼວດກຸ່ມ...............ແລະ ບ້ານ ........ ກໍໄດ້ຢັ້ງຢືນຄວາມບໍລິສຸດຂອງຜູ້ກ່ຽວຕາມສະບັບລົງວັນທີ.................ນັ້ນແມ່ນບໍ່ສາມາດນໍາມາເປັນຫຼັກຖານໃໝ່ໄດ້ຕໍ່ບັນຫາດັ່ງກ່າວສານກໍໄດ້ພິຈາລະນາໄປແລ້ວ.

ເຫັນວ່າ: ຄໍາຮ້ອງຂໍຮື້ຟື້ນຄະດີອາຍາໃໝ່ຂອງນາງ ຄ (ຈໍາເລີຍ3) ທີ່ຜູ້ກ່ຽວບໍ່ພໍໃຈຕໍ່ຄໍາຕັດສິນຂອງສານປະຊາຊົນນະຄອນຫຼວງວຽງຈັນ ໂດຍອ້າງຂໍ້ມູນຫຼັກຖານໃໝ່ຄື: 1/ ການທີ່ສານວິນິດໄສບອກວ່າ ກວດຄົ້ນເຮືອນຂອງ ນາງ ຄ (ຈໍາເລີຍ3) ພົບເຫັນຢາບ້າຈໍານວນ 10 ເມັດ ແລະ ຖົງຢາງຫຸ້ມຫໍ່ຢາບ້າ ຈໍານວນ 02 ຖົງ, ຢູ່ຫ້ອງນອນຂອງຜູ້ກ່ຽວນັ້ນບໍ່ແມ່ນຄວາມ ຈິງ, 2/ ການຊັດທອດຂອງ ນາງ ກ (ຈໍາເລີຍ1) ການຢັ້ງຢືນຕໍາຫຼວດກຸ່ມ.............ສະບັບເລກທີ........., ລົງວັນທີ.................. ແລະ ໃບລາຍງານຂອງອໍານາດການປົກຄອງບ້ານ................. ສະບັບເລກທີ..............., ລົງວັນທີ......... ແລ້ວສານນໍາມາຕັດສິນບອກວ່າ: ຜູ້ກ່ຽວມີຄວາມຜິດທາງອາຍາໃນສະຖານຄ້າ-ຂາຍຢາເສບຕິດ (ຢາ

ບ້າ) ແມ່ນບໍ່ມີເຫດ ຜົນເນື່ອງຈາກວ່າປະຈຸບັນທາງຕຳຫຼວດກຸ່ມ............ ແລະ ບ້ານ............., ກໍຢັ້ງຢືນຄວາມບໍລິສຸດຂອງຜູ່ກ່ຽວຕາມສະບັບລົງວັນທີ................. ຕໍ່ກັບຫຼັກຖານດັ່ງກ່າວແລ້ວ ເຫັນວ່າ: ເປັນຂໍ້ມູນທີ່ບໍ່ສາມາດນຳມາເປັນຂໍ້ມູນຫຼັກຖານໃໝ່ ເພື່ອໃຫ້ຮື້ຟື້ນຄະດີຄືນໃໝ່ໄດ້, ເນື່ອງຈາກວ່າຄຳວິນິດໄສຂອງສານຕາມຄຳຕັດສິນຄະດີອາຍາ ສະບັບເລກທີ.........., ລົງວັນທີ................... ຂອງສານປະຊາຊົນນະຄອນຫຼວງວຽງຈັນ ແມ່ນບໍ່ໄດ້ເວົ້າເຖິງວ່າການກວດຄົ້ນພົບເຫັນຢາບ້າ ຢູ່ຫ້ອງນອນຂອງ ນາງ ຄ (ຈຳເລີຍ3) ແຕ່ຢ່າງໃດ.

ຈາກເຫດການທີ່ກ່າວມາຂ້າງເທິງນີ້ ຈຶ່ງເຫັນໄດ້ແຈ້ງວ່າຄຳຮ້ອງຂໍຮື້ຟື້ນຄະດີຄືນໃໝ່ຂອງ ນາງ ຄ (ຈຳເລີຍ3) ສະບັບເລກທີ..........., ລົງວັນທີ................ ຕາມຂາເຂົ້າເລກທີ............., ລົງວັນທີ.................... ແມ່ນບໍ່ມີສາເຫດທີ່ພາໃຫ້ການຮື້ຟື້ນຄະດີຄືນໃໝ່ມາດຕາ......... ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ.................

ເຫັນຕາມມາດຕາ.........ຂອງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ມາດຕາ...... ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງປີ................

**ດ້ວຍເຫດນີ້**

ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ຈຶ່ງຕົກລົງບໍ່ຮື້ຟື້ນຄະດີອາຍາສະບັບເລກທີ......, ລົງວັນທີ....................

**ຫົວໜ້າອົງການໄອຍະການປະຊາຊົນສູງສຸດ**

**ຕົວຢ່າງ: ຄຳພິພາກສາຂັ້ນຮື້ຟື້ນຂອງສານປະຊາຊົນສູງສຸດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສານປະຊາຊົນສູງສຸດ

ຄະນະສານອາຍາ ເລກທີ.............

ຂັ້ນຮື້ຟື້ນ ລົງວັນທີ.....................

**ຄຳພິພາກສາ**

**ຄະນະສານອາຍາຂັ້ນຮື້ຟື້ນ ຂອງສານປະຊາຊົນສູງສຸດ ຊຶ່ງປະກອບດ້ວຍ**

ທ່ານ............................................................................ ປະທານ

ທ່ານ..............................................................................ຄະນະ

ທ່ານ..............................................................................ຄະນະ

ພ້ອມດ້ວຍ ທ່ານ.......................................................................................ຈ່າສານ

ຊ້ອງໜ້າ ທ່ານ....................................................ໄອຍະການປະຊາຊົນສູງສຸດ

ໄດ້ເປີດປະຊຸມສານຂຶ້ນໃນວັນທີ.............ເວລາ........ໂມງ........ນາທີ, ຢູ່ທີ່ ຫ້ອງປະຊຸມສານຂອງສານປະຊາຊົນສູງສຸດ ເພື່ອພິຈາລະນາຄະດີອາຍາ ເລກທີ.............. ລົງວັນທີ....................

**ລະຫວ່າງ**

ໄອຍະການປະຊາຊົນແຂວງ/ນະຄອນ...............................................................ໂຈດ

1. ທ້າວ ກ ອາຍຸ.......ປີ, ສັນຊາດ.........., ອາຊີບ............., ຢູ່ບ້ານ................, ເມືອງ....................., ແຂວງ/ນະຄອນ...........................................
2. ນາງ ຂ ອາຍຸ.........ປີ, ສັນຊາດ........, ອາຊີບ............, ຢູ່ບ້ານ..................., ເມືອງ....................., ແຂວງ/ນະຄອນ..............
3. ທ້າວ ຄ ອາຍຸ.........ປີ, ສັນຊາດ........., ອາຊີບ............, ຢູ່ບ້ານ.................., ເມືອງ....................., ແຂວງ/ນະຄອນ............................................ພວກຈຳເລີຍ.

**ຖືກຫາວ່າ: ຄ້າຂາຍຢາເສບຕິດ ແລະ ມີຢາເສບຕິດໄວ້ໃນຄອບຄອງ (ເຮໂລອີນ)**

**ຖືກກັກຂັງ: ວັນທີ...................................**

**ສະຖານທີ່ກັກຂັງ:....................................**

**ປ່ອຍຕົວພາງ:.......................................**

**ສານ**

ໃນນາມ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;

ອີງຕາມ ສິດ ແລະ ໜ້າທີ່ ຂອງສານປະຊາຊົນ ຕາມກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງ ປີ.................

ໄດ້ຄົ້ນຄວ້າສຳນວນຄະດີອາຍາເລື່ອງນີ້ ໃນທີ່ປະຊຸມສານແລ້ວ;

ໄດ້ຮັບຟັງຄຳຖະແຫຼງ ຂອງໄອຍະການປະຊາຊົນສູງສຸດ ໃນທີ່ປະຊຸມສານແລ້ວ;

**ເນື້ອຄະດີ**

ເຫັນຕາມຄຳຖະແຫຼງ ສະບັບເລກທີ........ລົງວັນທີ...........ໄດ້ຖະແຫຼງວ່າ ໃນວັນທີ........... ທ້າວ ກ, ນາງ ຂ, ທ້າວ ຄ ແລະ ນາງ ງ (ຫຼານສາວຂອງນາງ ຂ) ໄດ້ເດີນທາງເຂົ້າມາ ສປປ ລາວ ແລ້ວມາພັກຢູ່ບ້ານພັກລີສອດ............., ເມືອງ............., ແຂວງ/ນະຄອນ................ ເປັນເວລາໜຶ່ງຄືນພ້ອມດ້ວຍຄົນລາວອີກສອງຄົນ. ຈາກນັ້ນໃນຕອນເຊົ້າຂອງວັນທີ.......... ນາງ ຂ ແລະ ທ້າວ ຄ ໄດ້ເຂົ້າໄປໃນຫ້ອງນອນຂອງລາວແລ້ວຈົກເອົາເຮໂຣອີນ ຈຳນວນ 12 ປ່ຽງ ອອກຈາກກະເປົາເພື່ອກວດເບິ່ງ ແລະ ເອົາມ້ຽນໄວ້ບ່ອນເກົ່າ. ຈົນຮອດເວລາ.........ໂມງ ຂອງວັນ ດຽວກັນ ນາງ ຂ ແລະ ທ້າວ ກ ຈຶ່ງບອກ ທ້າວ ຄ ໃຫ້ໄປຫິ້ວເອົາກະເປົາເຮໂຣອີນອອກໄປໃສ່ເຮືອ ເພື່ອເອົາກັບຄືນປະເທດມຽນມ້າ ແຕ່ຖືກເຈົ້າໜ້າທີ່ຕຳຫຼວດກວດພົບ ຈຶ່ງຈັບຕົວພວກກ່ຽວທັງສາມ ພ້ອມທັງ ນາງ ງ ມາດຳເນີນຄະດີຕາມກົດໝາຍ. ໃນໄລຍະພວມດຳເນີນຄະດີຢູ່ນັ້ນ ເຈົ້າໜ້າທີ່ໄດ້ປ່ອຍຕົວ ນາງ ຂ ແລະ ທ້າວ ກ

ໂດຍວາງເງິນຄໍ້າປະກັນໄວ້ຈຳນວນ 250.000 ບາດ, ສ່ວນນາງ ງ ກໍ ປ່ອຍຕົວເຊັ່ນດຽວກັນ ເນື່ອງຈາກວ່າບໍ່ມີສ່ວນກ່ຽວຂ້ອງນຳການກະທຳຜິດຄັ້ງນີ້.

ອົງການໄອຍະການປະຊາຊົນແຂວງ/ນະຄອນ...................... ໄດ້ສັ່ງຟ້ອງຂຶ້ນສານ ຕາມຄຳສັ່ງຟ້ອງ ສະບັບເລກທີ.........ລົງວັນທີ..........ວ່າ ທ້າວ ກ, ນາງ ຂ ແລະ ທ້າວ ຄ ເປັນຜູ້ກະທຳຜິດໃນສະຖານຄ້າຂາຍຢາເສບຕິດ ແລະ ມີຢາເສບຕິດໄວ້ຄອບຄອງຕາມມາດຕາ........ຂອງກົດໝາຍອາຍາ ສະບັບປັບປຸງ ປີ ............

**ຮູບຄະດີ**

ເຫັນຄຳຕັດສິນຄະດີອາຍາສະບັບເລກທີ..............ລົງວັນທີ...............ຂອງສານປະຊາຊົນແຂວງ/ນະຄອນ............. ໄດ້ຕັດສິນເປັນຂັ້ນຕົ້ນໂດຍຊ້ອງໜ້າໂຈດ ແລະ ທ້າວ ຄ (ຈຳເລີຍ) ແຕ່ລັບຫຼັງ ນາງ ຂ ແລະ ທ້າວ ກ (ພວກຈຳເລີຍ) ມີຄວາມຜິດໃນສະ ຖານຄ້າຂາຍຢາເສບຕິດ (ເຮໂຣອິນ) ທ້າວ ຄ (ຈຳເລີຍ) ມີຄວາມຜິດສະຖານມີ ຢາເສບຕິດໄວ້ໃນຄອບຄອງ (ເຮໂຣອິນ) ລົງໂທດປະຫານຊີວິດພວກຈຳເລີຍທັງສາມ; ຮິບເຮໂຣອິນ ຈຳນວນ 18 ປ່ຽງມີນໍ້າໜັກ 6.300 ກຣາມ ເພື່ອທຳລາຍຖິ້ມ; ຮິບເງິນຈຳນວນ 250.000 ບາດ ເຂົ້າເປັນຂອງລັດ.

ເຫັນຄຳຮ້ອງຂໍລົບລ້າງ ສະບັບລົງວັນທີ.......................ຂອງທ້າວ ຄ (ຈຳເລີຍ) ແລະ ໄດ້ຍື່ນຂາເຂົ້າເລກທີ........ລົງວັນທີ............ຂອງສານປະຊາຊົນແຂວງ/ນະຄອນ...........ໂດຍອ້າງວ່າ: ການທີ່ເຈົ້າໜ້າທີ່ປ່ອຍຕົວນາງ ຂ ແລະ ທ້າວ ກ ນັ້ນແມ່ນບໍ່ຖືກຕ້ອງ ເພາະທັງສອງແມ່ນເປັນຕົວການ.

ຄຳຖະແຫຼງສະບັບເລກທີ.........ລົງວັນທີ...............ຂອງອົງການໄອຍະການປະຊາຊົນສູງສຸດໄດ້ຖະແຫຼງວ່າຄຳຕັດສິນຂອງສານປະຊາຊົນຂັ້ນຕົ້ນ ແຂວງ/ນະຄອນ .................ເປັນຄຳຕັດສິນທີ່ຖືກຕ້ອງ ແລະ ສອດຄ່ອງຕາມ ມາດຕາ ................ ຂອງ ກົດໝາຍອາຍາແລ້ວ.

ເຫັນຄຳພິພາກສາສະບັບເລກທີ...........ລົງວັນທີ..................ຂອງສານປະຊາຊົນສູງສູດໄດ້ພິພາກສາເປັນຂັ້ນລົບລ້າງບອກວ່າ: ຢັ້ງຢືນເອົາຄຳຕັດສິນ ສະບັບເລກທີ........... ລົງວັນທີ............ ຂອງສານປະຊາຊົນຂັ້ນຕົ້ນແຂວງ/ນະຄອນ...........ທຸກຂໍ້ຄວມ.

ເຫັນຄຳຕົກລົງບໍ່ຄັດຄ້ານສະບັບເລກທີ............ລົງວັນທີ................ຂອງອົງການໄອຍະການປະຊາຊົນສູງສຸດ ໄດ້ຕົກລົງວ່າຕົກລົງບໍ່ຄັດຄ້ານຄຳພິພາກສາ ສະບັບເລກທີ...........ລົງວັນທີ............ ຂອງສານປະຊາຊົນສູງສຸດ.

ເຫັນຄຳສະເໜີຮື້ຟື້ນສະບັບເລກທີ........ລົງວັນທີ..........ຂອງອົງການໄອຍະການປະຊາຊົນສູງສຸດມາຍັງສານປະຊາຊົນສູງສຸດ
ໂດຍສະເໜີຮື້ຟື້ນວ່າສານຂັ້ນຕົ້ນແຂວງ/ນະຄອນ............ໄດ້ຕັດສິນ
ລົງໂທດປະຫານຊີວິດພວກຈຳເລີຍ ແລະ ສານປະຊາຊົນສູງສຸດຂັ້ນລົບລ້າງໄດ້ພິພາກສາ ຢັ້ງຢືນເອົານັ້ນແມ່ນຍັງບໍ່ທັນຖືກຕ້ອງຄົບຖ້ວນຕາມກົດໝາຍເທື່ອ ເນື່ອງຈາກວ່າບໍ່ມີຜູ້ປົກປ້ອງເຂົ້າຮ່ວມ. ສະນັ້ນ, ອົງການໄອຍະການປະຊາຊົນສູງສຸດຈຶ່ງໄດ້ສະເໜີຮື້ຟື້ນໂດຍໜ້າທີ່ຕາມກົດໝາຍ.

**ວິນິດໄສ**

ເມື່ອຄະນະສານອາຍາຂັ້ນຮື້ຟື້ນ ໄດ້ຄົ້ນຄ້ວາພິຈາລະນາບັນດາເອກະສານ ຂໍ້ມູນຫຼັກຖານຕ່າງໆໃນສຳນວນຄະດີອາຍາເລື່ອງນີ້ ໃນທີ່ປະຊຸມສານຢ່າງລະອຽດຖີ່ຖ້ວນແລ້ວ.

ເຫັນວ່າ ຄຳສະເໜີຮື້ຟື້ນຄະດີ ສະບັບເລກທີ......... ລົງວັນທີ........... ຂອງອົງການໄອຍະການປະຊາຊົນສູງສຸດ ໄດ້ປະຕິບັດຖືກຕ້ອງຕາມກຳນົດເວລາທີ່ກຳນົດໄວ້ໃນມາດຕາ ......... ຂອງກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ............. ຈຶ່ງນຳມາພິຈາລະນາ.

ການທີ່ອົງການໄອຍະການປະຊາຊົນສູງສຸດ ໄດ້ສະເໜີຮື້ຟື້ນຄະດີ ມາຍັງສານປະຊາຊົນສູງສຸດ ໂດຍສະເໜີຮື້ຟື້ນວ່າສານຂັ້ນຕົ້ນແຂວງ/ນະຄອນ....................ໄດ້ຕັດສິນລົງໂທດປະຫານຊີວິດພວກຈຳເລີຍ ແລະ ສານປະຊາຊົນສູງສຸດຂັ້ນລົບລ້າງ ໄດ້ພິພາກສາ ຢັ້ງຢືນເອົານັ້ນ ແມ່ນຍັງບໍ່ທັນຖືກຕ້ອງຄົບຖ້ວນຕາມກົດໝາຍເທື່ອ ເນື່ອງຈາກວ່າບໍ່ມີຜູ່ປົກປ້ອງເຂົ້າຮ່ວມນັ້ນ ເມື່ອສານພິຈາລະນາແລ້ວເຫັນວ່າມີເຫດຜົນດ້ວຍວ່າການ ທີ່ສານປະຊາ ຊົນຂັ້ນຕົ້ນແຂວງ/ນະຄອນ.......... ແລະ ສານປະຊາຊົນສູງສຸດ ຂັ້ນລົບລ້າງໄດ້ຕັດສິນ ແລະ ພິພາກສາ ວ່າພວກຈຳເລີຍມີຄວາມຜິດຕາມການສັ່ງຟ້ອງຂອງອົງການໄອຍະການປະຊາຊົນ ນັ້ນແມ່ນຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍແລ້ວ, ແຕ່ເຫັນວ່າການດຳເນີນຄະດີຂອງສານທັງສອງຂັ້ນ ບໍ່ມີຜູ່ປົກປ້ອງເຂົ້າຮ່ວມ ຊຶ່ງເປັນການລະເມີດລະບຽບການໃນການດຳເນີນຄະດີຕາມມາດຕາ........ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງ ປີ.........ຈາກເຫດຜົນທີ່ກ່າວມາຂ້າງເທິງນີ້ ຄະນະສານອາຍາຂັ້ນຮື້ຟື້ນຂອງສານປະຊາຊົນສູງສຸດ ເຫັນວ່າຄຳພິພາກສາ ສະບັບເລກທີ..........., ລົງວັນທີ................ຂອງສານປະຊາຊົນສູງສຸດຂັ້ນລົບລ້າງເປັນຄຳພິພາກສາ ທີ່ຍັງບໍ່ຖືກຕ້ອງຕາມກົດໝາຍເທື່ອ. ດັ່ງນັ້ນ, ຈຶ່ງພິພາກສາລົບລ້າງຄຳພິພາກສາຂອງສານຂັ້ນລົບລ້າງທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ສົ່ງສຳນວນຄະດີຄືນໃຫ້ສານຂັ້ນຕົ້ນຄະນະໃໝ່ພິຈາລະນາ.

ເຫັນຕາມ ມາດຕາ.........ຂອງກົດໝາຍອາຍາ ສະບັບປັບປຸງ ປີ.............

ເຫັນຕາມ ມາດຕາ.....ຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ, ສະບັບປັບປຸງ ປີ........

**ດ້ວຍເຫດນີ້**

ຈຶ່ງພິພາກສາຄະດີນີ້ ເປັນຂັ້ນຮື້ຟື້ນ

**ຕາມຮູບຄະດີ:** ຮັບເອົາຄຳສະເໜີຮື້ຟື້ນຄະດີ ສະບັບເລກທີ........ລົງວັນທີ............. ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ມາພິຈາລະນາ.

**ຕາມກົດໝາຍ:** ຄຳສະເໜີຮື້ຟື້ນຄະດີ ຂອງອົງການໄອຍະການປະຊາຊົນສູງສຸດ ມີ ເຫດຜົນ.

**ພິພາກສາ:** ລົບລ້າງຄຳພິພາກສາ ສະບັບເລກທີ..............., ລົງວັນທີ.............. ຂອງສານຂັ້ນລົບລ້າງທີ່ໃຊ້ໄດ້ຢ່າງເດັດຂາດ ແລ້ວສົ່ງສຳນວນຄະດີຄືນໃຫ້ສານຂັ້ນຕົ້ນຄະນະ ໃໝ່ພິຈາລະນາ.

ຄຳພິພາກສາສະບັບນີ້ມີຜົນບັງຄັບປະຕິບັດ ນັບແຕ່ວັນນີ້ເປັນຕົ້ນໄປ.

**ປະທານຄະນະສານ** **ຈ່າສານ**

## ແຜນວາດການຮື້ຟື້ນຄະດີອາຍາ




ໝາຍເຫດ: ຂໍ້ 1, 2, 3 ທີ່ມີການຈ້ຳໆເປັນເສັ້ນຍາວ ແມ່ນໄດ້ເອົາເນື້ອໃນແຕ່ລະຂໍ້ໃສ່ດ້ານລຸ່ມຂອງຮ່າງແຜນວາດ.

1. ຍົກເລີກການສະເໜີຮື້ຟື້ນຄະດີ ຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ.
2. ລົບລ້າງຄຳຕັດສິນ ຫຼື ຄຳພິພາກສາ ແລ້ວໃຫ້ຈຳເລີຍ ພົ້ນຂໍ້ກ່າວຫາ.
3. ລົບລ້າງຄຳຕັດສິນ ຫຼື ຄຳພິພາກສາ ແລ້ວສົ່ງສຳນວນຄະດີຄືນໃຫ້ສານຂັ້ນຕົ້ນ ຄະນະໃໝ່ພິຈາລະນາ.

## ແຜນວາດການດຳເນີນຄະດີອາຍາຢູ່ ສປປ ລາວ

ການດຳເນີນຄະດີອາຍາໃນຂັ້ນຕອນຂອງເຈົ້າໜ້າທີ່ ສ$^{4}$

**ມີສາເຫດທີ່ພາໃຫ້ເປີດການ ສ$^{4}$ (ມ 86 ກດຍ)**

- ມີຄຳຮ້ອງຟ້ອງ ຫຼື ແຈ້ງຄວາມ (ມ 87 ກດຍ)
- ເຂົ້າມອບຕົວຂອງຜູ້ກະທຳຜິດ (ມ 88 ກດຍ)
- ພົບເຫັນຮ່ອງຮອຍຂອງການກະທຳຜິດ (ມ 89 ກດຍ), ຖ້າວ່າຄຳຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນຫາກບໍ່ຢູ່ໃນສິດອຳນາດກໍຕ້ອງສົ່ງຄຳຮ້ອງຟ້ອງ ຫຼື ແຈ້ງຄວາມ ນັ້ນໄປໃຫ້ອົງການທີ່ມີສິດ ແລະ ໜ້າທີ່ກ່ຽວຂ້ອງພິຈາລະນາ (ມ 90 ວັກ1 ຂໍ້3 ກດຍ) ຖ້າຈຳເປັນອາດພາຕົວ (ມ 137 ກດຍ) ກັກຕົວ (ມ 138 ກດຍ) ຫຼື ຈັບຕົວ (ມ 140 ກດຍ) ຖ້າມີພື້ນຖານທີ່ໜັກແໜ້ນກ່ຽວກັບການກະທຳຜິດຕ້ອງລາຍງານໃຫ້ ອົງການໄອຍະການພາຍໃນ 24 ຊົ່ວໂມງ (ມ 95 ວັກ1 ກດຍ) ມີສິດມີທະນາຍຄວາມ (ມ 14 ວັກ1 ກດຍ)

**ອອກຄຳສັ່ງເປີດການ ສ$^{4}$ (ມ 84 ແລະ 91 ກດຍ)**

- ມີຂໍ້ມູນໜັກແໜ້ນ (ມ 91 ວັກ1 ກດຍ)
- ໃນກໍລະນີຫົວໜ້າອົງການ ສ$^{4}$ ອອກຄຳສັ່ງຕ້ອງລາຍງານໃຫ້ຫົວໜ້າອົງການໄອຍະການຊາບ (ມ 91 ວັກ2 ຫຼື 95 ວັກ2 ກດຍ)

**ອອກຄຳສັ່ງບໍ່ເປີດການ ສ$^{4}$ (ມ 93 ກດຍ)**

- ມີສາເຫດທີ່ບໍ່ພາໃຫ້ເປີດການ ສ$^{4}$ (ມ 92 ກດຍ)
- ແຈ້ງໃຫ້ຜູ້ຮ້ອງຟ້ອງ ຫຼື ຜູ້ແຈ້ງຄວາມຊາບ, ຂໍອຸທອນໄດ້ ພາຍໃນ 7 ວັນ (ມ 93 ກດຍ)

**ດຳເນີນການ ສ$^{4}$ (ມ 95 ວັກ3 ກດຍ)**

- ນຳໃຊ້ວິທີການ ສ$^{4}$ (ມ113 - 134 ກດຍ) ແລະ ມາດຕະການສະກັດກັ້ນ (ມ 135 -145 ກດຍ) (ຍົກເວັ້ນການກັກຕົວ (ມ 138 ກດຍ))
- ສະຖານໂທສານຸໂທດຕ້ອງສຳເລັດພາຍໃນ 2 ເດືອນ, ຂໍຕໍ່ໄດ້ເທື່ອລະ 2 ເດືອນ ແຕ່ບໍ່ເກີນ 6 ເດືອນ ແລະ ສະຖານຄະຣຸໂທດ 3 ເດືອນ, ຂໍຕໍ່ໄດ້ເທື່ອລະ 3 ເດືອນ ແຕ່ບໍ່ເກີນ 1 ປີ ນັບແຕ່ມື້ອອກຄຳສັ່ງເປີດການ ສ$^{4}$ ເປັນຕົ້ນໄປ (ມ 110 ກດຍ)
- ແຈ້ງສິດ ແລະ ພັນທະໃນການຕໍ່ສູ້ຄະດີ (ມ 116 ກດຍ)
- ທະນາຍຄວາມເຂົ້າຮ່ວມຟັງການ ສ$^{4}$ (ມ 71 ວັກ3 ຂໍ້2 ກດຍ ແລະ ມ 19 ຂໍ້2 ກທຄ)

**ໂຈະການດຳເນີນຄະດີ (ມ 146 ກດຍ)**

- ຜູ້ຖືກຫາລີ້ຊ່ອນ, ຫຼົບຫຼີກ, ບໍ່ຮູ້ທີ່ຢູ່, ບໍ່ຮູ້ຜູ້ກະທຳຜິດ
- ຜູ້ຖືກຫາເຈັບປ່ວຍໜັກ ຫຼື ເປັນບ້າເສັຍຈິດ
- ລາຍງານຫົວໜ້າອົງການໄອຍະການພາຍໃນ 24 ຊົ່ວໂມງ
- ສາມາດສືບຕໍ່ໄດ້ (ມ 147 ກດຍ)

**ຊັດມ້ຽນຄະດີ (ມ 148 ກດຍ)**

- ມີສາເຫດຕາມ (ມ 6 ກດຍ), ບໍ່ມີຫຼັກຖານພຽງພໍ
- ລາຍງານຕໍ່ອົງການໄອຍະການ (ມ 150 ວັກທ້າຍ ກດຍ)
- ປ່ອຍຕົວຜູ້ຖືກຫາທັນໃດ, ສົ່ງສິ່ງຂອງຕິດຕົວທີ່ຖືກກົດໝາຍ ແລະ ຂອງກາງ ທີ່ເປັນກຳມະສິດຄືນແກ່ຜູ້ກ່ຽວ
- ສາມາດສືບຕໍ່ໄດ້ (ມ 149 ວັກ3 ກດຍ) (ຍົກເວັ້ນຊັດມ້ຽນທາງກົດໝາຍ)

**ສະຫຼຸບການ ສ$^{4}$ ສົ່ງອົງການໄອຍະການ (ມ 150 ກດຍ)**

- ມີຫຼັກຖານຢັ້ງຢືນວ່າຜູ້ຖືກຫາໄດ້ກະທຳຜິດ
- ສົ່ງປຶດສະຫຼຸບພ້ອມດ້ວຍສຳນວນຄະດີ ແລະ ຂອງກາງສົ່ງໃຫ້ອົງການໄອຍະການພາຍໃນ 3 ວັນ

**ການດຳເນີນຄະດີໃນຂັ້ນຕອນຂອງໄອຍະການ**

**ຫົວໜ້າອົງການໄອຍະການຄົ້ນຄວ້າຄະດີ (ມ 152 ກດຍ)**

- ຄົ້ນຄວ້າຢ່າງຊ້າບໍ່ໃຫ້ເກີນ 15 ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ.

**ປ່ຽນແປງ, ເພີ່ມເຕີມ, ຍົກເລີກ ຫຼື ລຶບລ້າງມາດຕະການສະກັດກັ້ນ (ມ 152 ວັກ1 ຂໍ້4 ກດຍ)**

**ສົ່ງສຳນວນຄືນໃຫ້ອົງການ ສ$^4$ (ມ 152 ວັກ1 ຂໍ້1 ກດຍ)**
- ການ ສ$^4$ ບໍ່ຄົບຖ້ວນເພື່ອໃຫ້ ສ$^4$ ເພີ່ມເຕີມ.

**ໂຈະການດຳເນີນຄະດີ (ມ 152 ວັກ1 ຂໍ້2 ກດຍ)**
- ຢຸດເຊົາການ ສ$^4$ ໄວ້ຊົ່ວຄາວເມື່ອມີສາເຫດໃດໜຶ່ງຕາມ ມ 146 ກດຍ

**ຊັດມ້ຽນຄະດີ (ມ 152 ວັກ1 ຂໍ້3 ກດຍ)**
- ຢຸດເຊົາການດຳເນີນຄະດີດ້ວຍສາເຫດໃດໜຶ່ງຕາມ ມ 6 ແລະ 148 ກດຍ

**ບໍ່ສົ່ງໃຫ້ສານ (ມ 155 ກດຍ)**
- ເດັກກະທຳຜິດທີ່ກົດໝາຍກຳນົດໂທດຕັດອິດສະລະພາບຕ່ຳກວ່າ 3 ປີລົງມາ
- ສົ່ງໃຫ້ອົງການອື່ນແກ້ໄຂ (ມ 52 ກປດ, ມ 53 ວັກ2 ກອຍ) ກໍລະນີໂທດຕ່ຳກວ່າ 3 ປີ.

**ສັ່ງຟ້ອງຂຶ້ນສານ (ມ 152 ວັກ1 ຂໍ້5 ແລະ 154 ກດຍ)**

- ກ່ອນສົ່ງໃຫ້ສານຕ້ອງແຈ້ງຄຳສັ່ງຟ້ອງໃຫ້ຜູ້ຖືກຫາ ຫຼື ທະນາຍຄວາມລົງລາຍເຊັນຮັບຮູ້ພາຍໃນ 3 ວັນລັດຖະການ, ຖ້າບໍ່ລົງລາຍເຊັນໃຫ້ບັນທຶກໄວ້ (ມ 154 ວັກ3 ກດຍ)
- ສົ່ງທັງສຳນວນຄະດີ ແລະ ຂອງກາງໃຫ້ສານ (ມ 154 ວັກທ້າຍ ກດຍ)
- ຖ້າສັ່ງຟ້ອງຂຶ້ນສານໂດຍກົງຕ້ອງສັ່ງຟ້ອງພາຍໃນ 48 ຊົ່ວໂມງ ຫຼື 7 ວັນໃນເຂດຫ່າງໄກ (ມ 157-159 ກດຍ)

**ການດຳເນີນຄະດີຢູ່ສານຂັ້ນຕົ້ນ**

**ຮັບເອົາສຳນວນຄະດີມາພິຈາລະນາ (ມ 164 ກດຍ)**

- ຕ້ອງມີຄຳສັ່ງຟ້ອງຂອງຫົວໜ້າອົງການໄອຍະການ
- ພິຈາລະນາຕັດສີນພາຍໃນ 30 ວັນ ນັບຕັ້ງແຕ່ໄດ້ຮັບຄຳສັ່ງຟ້ອງ (ມ 165 ວັກ1 ກດຍ)
- ຖ້າສັ່ງຟ້ອງຂຶ້ນສານໂດຍກົງພິຈາລະນາຕັດສີນພາຍໃນ 48 ຊົ່ວໂມງ ນັບແຕ່ໄດ້ຮັບຄຳສັ່ງຟ້ອງ (ມ 165 ວັກ2 ກດຍ)

**ຄົ້ນຄວ້າສຳນວນຄະດີ (ມ 167 ກດຍ)**
- ຜູ້ພິພາກສາຄົ້ນຄວ້າຕາມການມອບໝາຍຂອງປະທານສານ
- ນຳສະເໜີປະທານສານຄືນເພື່ອພິຈາລະນາຕໍ່ໄປ

**ສົ່ງໃຫ້ອົງການໄອຍະການ ສ$^4$ ຫຼື ສັ່ງຟ້ອງເພີ່ມເຕີມ (ມ 167 ວັກ1 ຂໍ້1, 2 ກດຍ)**
- ສ$^4$ ເພີ່ມເຕີມ, ຖ້າການ ສ$^4$ ບໍ່ຄົບຖ້ວນ ຫຼື ຂາດຫຼັກຖານທີ່ສຳຄັນ (ມ 168 ກດຍ)
- ສັ່ງຟ້ອງເພີ່ມເຕີມຖ້າຍັງມີການກະທຳຜິດອື່ນ ຫຼື ຜູ້ກະທຳຜິດອື່ນ ໃນຄະດີດຽວກັນ

**ຕົກລົງເວລາ ແລະ ກຳນົດຄະດີອອກພິຈາລະນາ (ມ 167 ວັກ1 ຂໍ້3 ແລະ169 ກດຍ)**
- ປະທານສານອອກຄຳສັ່ງໃຫ້ນຳເອົາຄະດີອອກພິຈາລະນາໃນທີ່ປະຊຸມສານ (ມ 169 ກດຍ)
- ຈ່າສານອອກໝາຍຮຽກ, ໝາຍເຊີນ, ກະກຽມປະຊຸມສານ (ມ 44 ກປຊ)

**ການຄົ້ນຄວ້າ ແລະ ການພິຈາລະນາຕັດສິນຄະດີອາຍາຢູ່ສານຂັ້ນຕົ້ນ**

**ເປີດປະຊຸມສານ (ມ 185 - 188 ກດຍ)**

- ຈ່າສານແຈ້ງລະບຽບ (ມ 185 ກດຍ)
- ປະທານສານແຈ້ງຄະດີອອກພິຈາລະນາ (ມ 186 ກດຍ)
- ປະທານສານແຈ້ງຊື່ຄະນະສານ (ມ 187 ກດຍ); ສິດຄັດຄ້ານຕົວ (ມ 188 ກດຍ)

**ໄຕ່ສວນຄະດີໃນທີ່ປະຊຸມສານ (ມ 192 - 199 ກດຍ)** - - - → **ໂຈະ ຫຼື ເລື່ອນການໄຕ່ສວນ (ມ 181 ກດຍ)**

- ຢຸດເຊົາການປະຊຸມສານຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງ
- ຕົກລົງເອົາຄະດີໄປໄຕ່ສວນ ໃນວັນຂ້າງໜ້າ ການເລື່ອນ ແຕ່ລະຄັ້ງສູງສຸດບໍ່ໃຫ້ ເກີນ 7 ວັນ (ມ 182 ກດຍ)

- ຫົວໜ້າອົງການໄອຍະການອ່ານຄຳສັ່ງຟ້ອງ (ມ 193 ກດຍ)
- ປະທານຄະນະສານໄຕ່ສວນຜູ້ເຂົ້າຮ່ວມ (ມ 195 - 197 ກດຍ)
- ຜູ້ຊ່ຽວຊານ, ຜູ້ຊຳນານງານມີຄຳເຫັນ (ມ 198 ກດຍ)
- ສະແດງຫຼັກຖານ (ມ 199 ກດຍ)
- ທຸກສະພາບການຂອງຄະດີໄດ້ນຳມາໄຕ່ສວນໃນທີ່ປະຊຸມສານຢ່າງຄົບຖ້ວນແລ້ວ (ມ 200 ວັກ1 ກດຍ)
- ບໍ່ມີການສະເໜີ ຫຼື ຖາມຕື່ມ (ມ 200 ວັກທ້າຍ ກດຍ)

**ໂຕ້ຖຽງໃນທີ່ປະຊຸມສານ (ມ 202 ກດຍ)**

- ຫົວໜ້າອົງການໄອຍະການຊີ້ແຈງກ່ຽວກັບຫຼັກຖານຜູກມັດ ແລະ ຄວາມຮັບຜິດຊອບຂອງຈຳເລີຍ (ມ 201 ວັກ2 ກດຍ)
- ຈຳເລີຍມີຄຳເຫັນປົກປ້ອງຕົນເອງ (ມ 201 ວັກ3 ກດຍ), ຈຳເລີຍ, ທະນາຍຄວາມ ຫຼື ຜູ້ປົກປ້ອງໃຫ້ຄຳເຫັນກ່ຽວກັບຂໍ້ກ່າວຫາ (ມ 202 ວັກ1 ກດຍ)
- ຫົວໜ້າອົງການໄອຍະການຖະແຫຼງ (ມ 202 ວັກທ້າຍ ກດຍ)
- ຈຳເລີຍມີຄຳເຫັນ (ມ 203 ວັກ1 ກດຍ)
- ປິດປະຊຸມສານຊົ່ວຄາວ

**ພິຈາລະນາຄະດີໃນຫ້ອງປະຊຸມລັບ (ມ 204 ກດຍ)**

- ອີງໃສ່ຜົນຂອງການໄຕ່ສວນ (ມ 204 ວັກ1 ກດຍ)
- ຄຳຊີ້ຂາດຕ້ອງຖືເອົາຕາມສຽງສ່ວນຫຼາຍ (ມ 204 ວັກ2 ກດຍ)
- ລົງລາຍເຊັນໃສ່ຮ່າງຄຳຕັດສິນ (ມ 204 ວັກທ້າຍ ກດຍ)

**ອ່ານຄຳຕັດສິນໃນທີ່ປະຊຸມສານ (ມ 206 - 209 ກດຍ)**

- ຕັດສິນວ່າຜິດ ແລະ ລົງໂທດ (ມ 208 ວັກ1 ຂໍ້1 ກດຍ) ຫຼື ຕັດສິນວ່າບໍ່ຜິດໃຫ້ພົ້ນຂໍ້ກ່າວຫາ (ມ 208 ວັກ1 ຂໍ້2 ກດຍ)
- ມີສິດຂໍອຸທອນ ຫຼື ຄັດຄ້ານພາຍໃນ 20 ວັນ, ຖ້າຂໍອຸທອນ ຫຼື ຄັດຄ້ານຕ້ອງສົ່ງໃຫ້ສານຂັ້ນອຸທອນພິຈາລະນາຕໍ່ໄປ
- ຄຳຕັດສິນທີ່ໃຊ້ໄດ້ຢ່າງເດັດຂາດຕ້ອງນຳໄປຈັດຕັ້ງປະຕິບັດ (ມ 235 ກດຍ)

**ການດຳເນີນຄະດີຢູ່ສານຂັ້ນອຸທອນ ແລະ ຂັ້ນລົບລ້າງ**

**ຂໍອຸທອນ ຫຼື ສະເໜີຄັດຄ້ານ (ມ 214 ກດຍ)**

- ມີສິດຂໍອຸທອນ ຫຼື ສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນຕົ້ນພາຍໃນກຳນົດ 7 ວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ, ສຳລັບຄຳຕັດສິນກຳນົດເວລາ 20 ວັນ ນັບແຕ່ວັນໄດ້ອ່ານ ຫຼື ຮັບຊາບຄຳຕັດສິນເປັນຕົ້ນໄປ (ມ 214 ວັກ2 ກດຍ)

**ດຳເນີນຄະດີຢູ່ສານຂັ້ນອຸທອນ (ມ 211 - 224 ກດຍ)**

- ຕ້ອງພິຈາລະນາພາຍໃນກຳນົດ 45 ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ (ມ 216 ກດຍ)
- ດຳເນີນຄືກັນກັບສານຂັ້ນຕົ້ນ (ມ 167, 170 - 207 ກດຍ)
- ໃຫ້ຜູ້ຂໍອຸທອນ ຫຼື ຫົວໜ້າອົງການໄອຍະການຂັ້ນອຸທອນສະເໜີເຫດຜົນກ່ຽວກັບການຂໍອຸທອນ ຫຼື ສະເໜີຄັດຄ້ານ (ມ 219 ວັກ2 ກດຍ)

**ພິພາກສາເປັນຂັ້ນອຸທອນ (ມ 222 ກດຍ)**

- ພິພາກສາຢັ້ງຢືນຕາມສານຂັ້ນຕົ້ນ ຫຼື ປ່ຽນແປງແລ້ວພິພາກສາຄືນໃໝ່ ຫຼື ລົບລ້າງແລ້ວສົ່ງໄປໃຫ້ສານຂັ້ນຕົ້ນພິຈາລະນາຄືນໃໝ່ ຫຼື ລົບລ້າງຄຳຕັດສິນຂອງສານຂັ້ນຕົ້ນແລ້ວພິພາກສາໃຫ້ຈຳເລີຍພົ້ນຂໍ້ກ່າວຫາ (ມ 222 ວັກ1 ກດຍ)

**ຂໍລົບລ້າງ ຫຼືສະເໜີຄັດຄ້ານ (ມ 226 ກດຍ)**

- ມີສິດຂໍລົບລ້າງ ຫຼືສະເໜີຄັດຄ້ານຄຳສັ່ງ, ຄຳຊີ້ຂາດຂອງສານຂັ້ນອຸທອນພາຍໃນກຳນົດ 7 ວັນ ນັບແຕ່ວັນຮັບຊາບເປັນຕົ້ນໄປ, ສຳລັບຄຳພິພາກສາກຳນົດເວລາ 45 ວັນ ນັບແຕ່ວັນ ໄດ້ອ່ານ ຫຼື ຮັບຊາບຄຳພິພາກສາເປັນຕົ້ນໄປ (ມ 226 ວັກ3 ກດຍ)

**ດຳເນີນຄະດີຢູ່ສານຂັ້ນລົບລ້າງ (ມ 225 - 234 ກດຍ)**

- ຕ້ອງພິຈາລະນາພິພາກສາຄະດີພາຍໃນກຳນົດ 30 ວັນ ນັບແຕ່ວັນໄດ້ຮັບສຳນວນຄະດີເປັນຕົ້ນໄປ (ມ 228 ກດຍ)
- ປະທານຄະນະສານລາຍງານສະພາບຄະດີ, ລາຍງານກ່ຽວກັບຄຳສັ່ງ, ຄຳຊີ້ຂາດ ຫຼື ຄຳພິພາກສາ, ຄຳຮ້ອງຂໍລົບລ້າງ ຫຼື ຄຳສະເໜີຄັດຄ້ານພ້ອມທັງຄວາມເຫັນຂອງຕົນກ່ຽວກັບຄະດີ, ຫົວໜ້າອົງການ ໄອຍະການມີສິດຖາມຜູ້ຮັບຜິດຊອບຄະດີ, ມີຄຳເຫັນຕໍ່ປະຊຸມສານ (ມ 229 ວັກ3 ກດຍ)

**ພິພາກສາເປັນຂັ້ນລົບລ້າງ (ມ 231 ກດຍ)**

- ພິພາກສາບໍ່ຮັບເອົາຄຳຮ້ອງຂໍລົບລ້າງ ຫຼື ສະເໜີຄັດຄ້ານມາພິຈາລະນາ ຫຼື ພິພາກສາຍົກເລີກຄຳຮ້ອງຂໍລົບລ້າງ ຫຼື ສະເໜີຄັດຄ້ານແລ້ວພິພາກສາຢັ້ງຢືນຕາມສານຂັ້ນອຸທອນ ຫຼື ລົບລ້າງຄຳພິພາກສາສານຂັ້ນອຸທອນແລ້ວໃຫ້ຈຳເລີຍພົ້ນຂໍ້ກ່າວຫາ ຫຼື ພິພາກສາລົບລ້າງຄຳພິພາກສາສານຂັ້ນອຸທອນທັງໝົດ ຫຼື ບາງສ່ວນແລ້ວສົ່ງຄະດີໃຫ້ສານຂັ້ນອຸທອນຄະນະໃໝ່ ຫຼື ຄະນະເກົ່າ ພິຈາລະນາຄືນໃໝ່ (ມ 231 ກດອ)

ປຶ້ມຄູ່ມືການດຳເນີນຄະດີອາຍາ ຫົວນີ້
ໄດ້ຮັບການຊ່ວຍເຫຼືອ ທາງດ້ານວິຊາການ ແລະ
ການພິມ ຈາກ ອົງການຮ່ວມມືສາກົນປະເທດຍີ່ປຸ່ນ(ໄຈກາ)

**ສຳລັບແຈກຢາຍ ຫ້າມ ຊື້ - ຂາຍ**

ພິມຄັ້ງ ທີ 2

3,000 ຫົວ ທີ່ໂຮງພິມເທບປັນຍາ ນະຄອນຫຼວງວຽງຈັນ, ທັນວາ2015

**JICA Project for Human Resource Development in the Legal sector**
Tel: 021-254307 Fax: 021-254308

**Japan International Cooperation Agency (JICA) Laos Office**
2nd Floor, Sacombank Building, 044 Haengboun Rd,
Ban Haisok, Chanthabouly District
P.O.Box 3933, Vientiane, Lao PDR
Tel: 021-241100 Fax: 021-241101